ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

# ສະຫຼຸບການຈັດຕັ້ງປະຕິບັດ
# ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ
# ກາງສະໄໝ 5 ປີ ຄັ້ງທີ IX (2021-2025)

ນະຄອນຫຼວງວຽງຈັນ

# ພາກທີ I
# ສະຫຼຸບຕີລາຄາການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ກາງສະໄໝ 5 ປີ ຄັ້ງທີ IX (2021-2025)

## I. ສະພາບການລວມ

### 1. ສະພາບແວດລ້ອມພາກພື້ນ ແລະ ສາກົນ

ໃນໄລຍະເຄິ່ງສະໄໝ ຂອງການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ແມ່ນໄດ້ດຳເນີນໃນສະພາບແວດລ້ອມຂອງພາກພື້ນ ແລະ ສາກົນ ມີການຜັນແປຢ່າງໄວວາ ແລະ ປະເຊີນກັບສິ່ງທ້າທ້າຍຫຼາຍຢ່າງ ເປັນຕົ້ນ: ໃນປີ 2021 ສະພາບການລະບາດຂອງພະຍາດໂຄວິດ-19 ຍັງສືບຕໍ່ເພີ່ມຂຶ້ນຢ່າງຕໍ່ເນື່ອງ ຍ້ອນມີການກາຍພັນຂອງພະຍາດໂຄວິດ-19 ມາເປັນສາຍພັນໂອມິຄອນ ທີ່ມີການລະບາດໄວກວ່າສາຍພັນເດລຕ້າ ເຮັດໃຫ້ຜູ້ຕິດເຊື້ອລາຍໃໝ່ເພີ່ມຂຶ້ນຢ່າງໄວວາ ສົ່ງຜົນໃຫ້ບາງປະເທດກັບມາດຳເນີນມາດຕະການຄວບຄຸມການແຜ່ລະບາດ ແລະ ຈຳກັດການເດີນທາງລະຫວ່າງປະເທດອີກຄັ້ງ ເຊັ່ນ: ປະເທດຍີ່ປຸ່ນ, ໂຮນລັງ ແລະ ເຢຍລະມັນ ຊຶ່ງມີການຍົກລະດັບມາດຕະການແກ່ຜູ້ເດີນທາງມາຈາກເຂດທີ່ມີການລະບາດສູງ, ແຕ່ເນື່ອງດ້ວຍການສັກວັກຊີນຂອງແຕ່ປະເທດມີຄວາມຄືບໜ້າດີ ຈຶ່ງໄດ້ມີການຜ່ອນຄາຍບັນດາມາດຕະການປ້ອງກັນ ແລະ ສະກັດກັ້ນການລະບາດໂຄວິດ-19 ເພື່ອຫຼຸດຜ່ອນຜົນກະທົບທາງດ້ານເສດຖະກິດ ບວກກັບການປະຕິບັດບັນດານະໂຍບາຍ ແລະ ມາດຕະການ ເພື່ອຟື້ນຟູເສດຖະກິດຂອງບັນດາປະເທດຕ່າງໆ ເຊັ່ນ: ປະເທດສະຫະລັດອາເມລິກາ, ສະຫະພາບເອີລົບ, ອັງກິດ ແລະ ອີກຫຼາຍປະເທດ ຈຶ່ງໄດ້ເຮັດໃຫ້ກິດຈະກຳທາງດ້ານເສດຖະກິດ-ສັງຄົມຄ່ອຍໆຟື້ນຕົວດີຂຶ້ນຈາກສະພາບຫົດຖອຍໃນປີ 2020 ຄຽງຄູ່ກັບການຟື້ນຕົວຂອງເສດຖະກິດແຕ່ລາຄາສິນຄ້າຕ່າງໆ ແລະ ລາຄາພະລັງງານໃນຕະຫຼາດໂລກກໍໄດ້ເພີ່ມຂຶ້ນເຊັ່ນກັນ, ຊຶ່ງໄດ້ສ້າງແຮງກົດດັນໃຫ້ອັດຕາເງິນເຟີ້ເພີ່ມຂຶ້ນສູງກວ່າເປົ້າໝາຍທາງດ້ານເງິນຕາຂອງຫຼາຍປະເທດທີ່ໄດ້ກຳນົດໄວ້ ຊຶ່ງໄດ້ເຮັດໃຫ້ທະນາຄານກາງຂອງປະເທດອາເມລິກາ ແລະ ກຸ່ມປະເທດເອີລົບ ໄດ້ຜ່ອນຄາຍນະໂຍບາຍການເງິນ ແລະ ທະນາຄານກາງຂອງຫຼາຍປະເທດແມ່ນໄດ້ມີການປັບອັດຕາດອກເບ້ຍຂຶ້ນເພື່ອຫຼຸດແຮງກົດດັນຂອງເງິນເຟີ້.

ໃນປີ 2022 ແມ່ນໄດ້ດຳເນີນຢູ່ໃນເງື່ອນໄຂທີ່ສະພາບການຂອງໂລກ ແລະ ພາກພື້ນ ຍັງສືບຕໍ່ຜັນແປຢ່າງສັບສົນ, ໃນນີ້ລວມທັງສະພາບການແຜ່ລະບາດຂອງພະຍາດໂຄວິດ-19; ໄພພິບັດທຳມະຊາດທີ່ເກີດຂຶ້ນ; ຄວາມຂັດແຍ້ງດ້ານການເມືອງ ແລະ ເສດຖະກິດຂອງບາງປະເທດ, ຊຶ່ງໄດ້ເຮັດໃຫ້ເສດຖະກິດໂລກມີຄວາມຫຍຸ້ງຍາກ ແລະ ຖົດຖອຍລົງຈາກລະດັບ 6,0% ໃນປີ 2021 ລົງມາຢູ່ໃນລະດັບ 3,2% ໃນປີ 2022 (ຫຼຸດຈາກ 3,6% ທີ່ຄາດຄະເນໃນເດືອນເມສາ 2022) ຊຶ່ງຂໍ້ມູນຈາກບາງປະເທດສະແດງອອກ ຄື: ສ.ອາເມລິກາ ເສດຖະກິດຖົດຖອຍລົງມາຢູ່ໃນລະດັບ 1,6% (ປີ 2021: 5,7%), ສະຫະພາບເອີລົບ 3,1% (ປີ 2021: 5,2%), ສປ ຈີນ 3,2% (ປີ 2021: 8,1%) ແລະ ປະເທດອື່ນໆອີກ. ພ້ອມດຽວກັນນັ້ນ, ຫຼາຍປະເທດໄດ້ປະເຊີນກັບບັນຫາອັດຕາເງິນເຟີ້ເພີ່ມຂຶ້ນ ເປັນຕົ້ນ: ປະເທດໄທ ອັດຕາເງິນເຟີ້ເພີ່ມຂຶ້ນ 6,41%, ປະເທດກູບາ 34,3%, ສີລັງກາ 69,8%, ອາເຈນຕິນາ 83% ແລະ ປະເທດອື່ນໆ; ນອກຈາກນັ້ນ, ລາຄານ້ຳມັນເຊື້ອໄຟກໍເພີ່ມຂຶ້ນເຊັ່ນກັນ ເຊັ່ນ: ປະເທດນິວຊີແລນ ຢູ່ໃນລະດັບ 2,2 ໂດລາຕໍ່ລິດ, ຮົງກົງ 2,94 ໂດລາຕໍ່ລິດ ແລະ ເຢຍລະມັນ 1,9 ໂດລາຕໍ່ລິດ ແລະ ປະເທດອື່ນໆ[1].

[1] ຂໍ້ມູນອັດຕາເງິນເຟີ້ ແລະ ລາຄານ້ຳມັນເຊື້ອໄຟແມ່ນຂໍ້ມູນຂອງເດືອນກັນຍາ ປີ 2022

ໃນ 6 ເດືອນຕົ້ນປີ 2023, ສະພາບການຂອງໂລກຍັງສືບຕໍ່ຜັນແປໄວວາ ແລະ ສັບສົນ ສົ່ງຜົນກະທົບຕໍ່ເກືອບທຸກປະເທດໃນໂລກ ໂດຍສະເພາະແມ່ນຄວາມຂັດແຍ້ງທາງດ້ານການເມືອງ, ການທະຫານ, ການຂັດແຍ່ງຍຸດທະສາດລະຫວ່າງບັນດາປະເທດໃຫຍ່ນັບມື້ດຸເດືອດ, ຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ, ບັນຫາສິ່ງທ້າທາຍກ່ຽວກັບການປ່ຽນແປງດິນຟ້າອາກາດ, ໄພທຳມະຊາດ, ໂລກລະບາດ, ຄວາມໝັ້ນຄົງດ້ານສະບຽງອາຫານ, ທັນຍາຫານ, ໄພອຶດຫິວນັບມື້ສູງຂຶ້ນ ແລະ ອື່ນໆ. ບັນດາສິ່ງທ້າທາຍຫຼາຍດ້ານເຫຼົ່ານີ້ ໄດ້ສົ່ງຜົນກະທົບໃຫ້ເສດຖະກິດຂອງຫຼາຍປະເທດມີການຂະຫຍາຍຕົວຊ້າລົງ ໃນປີ 2023 ເປັນຕົ້ນ: ອາເມລິກາ ເສດຖະກິດຈະຂະຫຍາຍຕົວ 1,6% (ປີ 2022: 2,1%), ສະຫະພາບເອີລົບຂະຫຍາຍຕົວ 0,8% (ປີ 2022: 3,5%), ແຕ່ກໍມີບາງປະເທດເຫັນວ່າ ເສດຖະກິດມີທ່າອ່ຽງຟື້ນຕົວ ເປັນຕົ້ນ: ສປ ຈີນ ຄາດວ່າຈະຂະຫຍາຍຕົວ 5,2% (ປີ 2022: 3%), ສສ ຫວຽດນາມ ຄາດວ່າຈະຂະຫຍາຍຕົວ 5,8% (ປີ 2022: 8%) ແລະ ໄທ ຄາດວ່າຈະຂະຫຍາຍຕົວ 3,4% (ປີ 2022: 2,6%), ຊຶ່ງສັງລວມແລ້ວເສດຖະກິດໂລກ ໃນປີ 2023 ຄາດວ່າຈະຂະຫຍາຍຕົວຊ້າລົງທຽບໃສ່ປີຜ່ານມາ ຫຼຸດລົງຈາກ 3,4% ໃນປີ 2022 ມາຢູ່ໃນລະດັບ 2,8% ໃນປີ 2023.

## 2. ສະພາບພາຍໃນ

ການປະຕິບັດແຜນການໃນໄລຍະ 2 ປີເຄິ່ງຜ່ານມາ ແມ່ນໃນເງື່ອນໄຂສະພາບພາກພື້ນ ແລະ ສາກົນ ສືບຕໍ່ຜັນແປຢ່າງສັບສົນ, ພົ້ນເດັ່ນແມ່ນສະພາບການແຜ່ລະບາດຂອງພະຍາດໂຄວິດ-19 ທີ່ສືບຕໍ່ແກ່ຍາວເວລາສົມຄວນ ບວກກັບເກີດມີຂໍ້ຂັດແຍ່ງທາງດ້ານການເມືອງ; ເສດຖະກິດ-ການເງິນ; ການປ່ຽນແປງຂອງດິນຟ້າອາກາດ; ລາຄາພະລັງງານ ແລະ ລາຄາສະບຽງອາຫານເພີ່ມຂຶ້ນ ແລະ ອື່ນໆ ຊຶ່ງໄດ້ສົ່ງຜົນກະທົບຕໍ່ແຕ່ລະປະເທດໃນໂລກໃນລະດັບຕ່າງກັນ. ສຳລັບສະພາບພາຍໃນປະເທດ ກໍປະເຊີນກັບຄວາມຫຍຸ້ງຍາກດ້ານຕ່າງໆ ເຊັ່ນ: ຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ-19 ຢ່າງໜັກໜ່ວງ ແລະ ແກ່ຍາວເວລາອັນສົມຄວນ, ພ້ອມທັງປະເຊີນກັບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນທີ່ໄດ້ຮັບຜົນກະທົບຈາກພາຍນອກ ມີທັງໄພພິບັດທາງທຳມະຊາດເກີດຂຶ້ນຢ່າງຕໍ່ເນື່ອງ. ແຕ່ພາຍໃຕ້ການນຳພາ-ຊີ້ນຳຂອງກົມການເມືອງສູນກາງພັກ ກໍຄື ການຕິດຕາມຂອງສະພາແຫ່ງຊາດນັ້ນ, ລັດຖະບານໄດ້ຫັນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ແລະ 2 ວາລະແຫ່ງຊາດເປັນແຜນງານ, ໂຄງການອັນລະອຽດ ພ້ອມທັງກຳນົດກົນໄກ ແລະ ມາດຕະການຈັດຕັ້ງປະຕິບັດໃນແຕ່ລະໄລຍະ, ເຊິ່ງຜົນຂອງການຈັດຕັ້ງປະຕິບັດໄດ້ສະແດງອອກ ດັ່ງນີ້:

# II. ໝາກຜົນສຳເລັດການຈັດຕັ້ງປະຕິບັດເປົ້າໝາຍ, ແຜນວຽກຈຸດສຸມຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025)

## 1. ເປົ້າໝາຍທີ 1: ເສດຖະກິດແຫ່ງຊາດຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄຸນນະພາບ, ໝັ້ນທ່ຽງ ແລະ ຍືນຍົງ

### 1.1 ແຜນວຽກຈຸດສຸມທີ 1: ການເຕີບໂຕເສດຖະກິດທີ່ມີຄຸນນະພາບ ແລະ ຍືນຍົງ

#### 1.1.1 ດ້ານການເຕີບໂຕເສດຖະກິດ (GDP)

– **ອັດຕາການຂະຫຍາຍຕົວຂອງ GDP[2]:** ໃນໄລຍະ 2 ປີເຄິ່ງຜ່ານມາ (2021-2023) ເສດຖະກິດໄດ້ຂະຫຍາຍຕົວສະເລ່ຍໃນລະດັບ 4,03% (ແຜນການ 5ປີ: ສະເລ່ຍໃນລະດັບ 4% ຂຶ້ນໄປ), ໃນນີ້: ປີ 2021 ຂະຫຍາຍຕົວ 3,5%, ປີ 2022 ບັນລຸໄດ້ 4,4% ແລະ ປີ 2023 ຄາດວ່າຈະບັນລຸໄດ້ 4,5%. ລວມຍອດຜະລິດຕະພັນພາຍໃນ (GDP) ຕາມລາຄາ

[2] ມະຕິສະພາແຫ່ງຊາດ ເລກທີ 118/ສພຊ, ລົງວັນທີ 21 ພະຈິກ 2023 ວ່າດ້ວຍການຮັບຮອງບົດລາຍງານຂອງລັດຖະບານ ກ່ຽວກັບ ການສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ກາງສະໄໝ 5ປີ ຄັ້ງທີ IX (2021-2025), ທິດທາງແຜນການທ້າຍສະໄໝຮອດປີ 2025; ການຈັດຕັ້ງປະຕິບັດແຜນການ ປະຈຳປີ 2023 ແລະ ແຜນການ ປະຈຳປີ 2024.

ໃນປີ: ໃນໄລຍະ 3 ປີ ຄາດວ່າຈະປະຕິບັດໄດ້ 658.063,30 ຕື້ກີບ ເທົ່າກັບ 49,12% ຂອງແຜນການ (ແຜນການ 5ປີ: 1.056.692 ຕື້ກີບ), ໃນນີ້: ປີ 2021 ເທົ່າກັບ 184.982 ຕື້ກີບ, ປີ 2022 ເທົ່າກັບ 215.609,30 ຕື້ກີບ, ໃນ 6 ເດືອນຕົ້ນປີ 2023 ເທົ່າກັບ 118.467 ຕື້ກີບ ແລະ ຄາດວ່າໝົດປີ 2023 ຈະປະຕິບັດໄດ້ 257.472 ຕື້ກີບ. ເຖິງຢ່າງໃດກໍຕາມ, ຍ້ອນການອ່ອນຄ່າຂອງເງິນກີບເຮັດໃຫ້ລວມຍອດຜະລິດຕະພັນພາຍໃນ (GDP) ຕໍ່ຫົວຄົນ ມີທ່າອ່ຽງຫຼຸດລົງ ຄື: ປີ 2021 ປະຕິບັດໄດ້ 2.595 ໂດລາສະຫະລັດ, ປີ 2022 ປະຕິບັດໄດ້ 2.022 ໂດລາສະຫະລັດ ແລະ ປີ 2023 ຄາດວ່າຈະໄດ້ 1.824 ໂດລາສະຫະລັດ (ແຜນການ 5ປີ: ໃຫ້ໄດ້ 2.880 ໂດລາສະຫະລັດ); ລາຍໄດ້ຕໍ່ຫົວຄົນ (GNI) ປີ 2021 ປະຕິບັດໄດ້ 2.452 ໂດລາສະຫະລັດ, ປີ 2022 ປະຕິບັດໄດ້ 1.901 ໂດລາສະຫະລັດ ແລະ ປີ 2023 ຄາດວ່າຈະໄດ້ 1.712 ໂດລາສະຫະລັດ (ແຜນການ 5ປີ: ໃຫ້ໄດ້ 2.280 ໂດລາສະຫະລັດ). ໃນນີ້, ຜົນໄດ້ຮັບໃນແຕ່ລະໂຄງປະກອບສະແດງອອກດັ່ງນີ້:

- ຂະແໜງກະສິກຳ: ຂະຫຍາຍຕົວສະເລ່ຍເພີ່ມຂຶ້ນໃນລະດັບ 3,10% (ແຜນການ 5ປີ: ສະເລ່ຍເພີ່ມຂຶ້ນ 2,50%), ໃນນີ້: ປີ 2021 ຂະຫຍາຍຕົວ 2,50%, ປີ 2022 ຂະຫຍາຍຕົວ 3,40% ແລະ ປີ 2023 ຄາດວ່າຈະຂະຫຍາຍຕົວໃນລະດັບ 3,40%;
- ຂະແໜງອຸດສາຫະກຳ: ຂະຫຍາຍຕົວສະເລ່ຍເພີ່ມຂຶ້ນໃນລະດັບ 4,50% (ແຜນການ 5ປີ: ສະເລ່ຍເພີ່ມຂຶ້ນ 4,10%), ໃນນີ້: ປີ 2021 ຂະຫຍາຍຕົວ 6,10%, ປີ 2022 ຂະຫຍາຍຕົວ 4,40% ແລະ ປີ 2023 ຄາດວ່າຈະຂະຫຍາຍຕົວໃນລະດັບ 3,10%;
- ຂະແໜງບໍລິການ: ຂະຫຍາຍຕົວສະເລ່ຍ 4,0% (ແຜນການ 5ປີ: ສະເລ່ຍເພີ່ມຂຶ້ນ 6%), ໃນນີ້: ປີ 2021 ຂະຫຍາຍຕົວ 1,40%, ປີ 2022 ຂະຫຍາຍຕົວ 5% ແລະ ປີ 2023 ຄາດວ່າຈະຂະຫຍາຍຕົວ 5,60%;
- ພາສີ-ອາກອນຜະລິດຕະພັນ: ຂະຫຍາຍຕົວສະເລ່ຍເພີ່ມຂຶ້ນໃນລະດັບ 3,40% (ແຜນການ 5ປີ: 5,80%), ໃນປີ 2021 ຂະຫຍາຍຕົວ 3,10%, ປີ 2022 ຂະຫຍາຍຕົວ 3,90% ແລະ ປີ 2023 ຄາດວ່າຈະຂະຫຍາຍຕົວ 3,80%.

– **ໂຄງປະກອບເສດຖະກິດ:**

- ຂະແໜງກະສິກຳ: ສະເລ່ຍກວມເອົາ 18,4% ຂອງ GDP; ໃນປີ 2021 ກວມເອົາ 16,0% ຂອງ GDP, ປີ 2022 ກວມເອົາ 17,80% ຂອງ GDP ແລະ ຄາດວ່າປີ 2023 ກວມເອົາ 21,40% ຂອງ GDP (ແຜນການ 5ປີ: ຮອດປີ 2025 ໃຫ້ກວມເອົາ 15,3% ຂອງ GDP);
- ຂະແໜງອຸດສາຫະກຳ: ສະເລ່ຍກວມເອົາ 33,4% ຂອງ GDP; ໃນປີ 2021 ກວມເອົາ 34,0% ຂອງ GDP, ປີ 2022 ກວມເອົາ 34,0% ຂອງ GDP ແລະ ປີ 2023 ຄາດວ່າກວມເອົາ 32,20% ຂອງ GDP (ແຜນການ 5ປີ: ຮອດປີ 2025 ໃຫ້ກວມເອົາ 32,3% ຂອງ GDP);
- ຂະແໜງບໍລິການ: ສະເລ່ຍກວມເອົາ 37,0% ຂອງ GDP; ໃນປີ 2021 ກວມເອົາ 38,10% ຂອງ GDP, ປີ 2022 ກວມເອົາ 37,0% ຂອງ GDP ແລະ ປີ 2023 ຄາດວ່າກວມເອົາ 35,90% ຂອງ GDP (ແຜນການ 5ປີ: ຮອດປີ 2025 ໃຫ້ກວມເອົາ 40,7% ຂອງ GDP) ແລະ
- ພາສີ-ອາກອນຜະລິດຕະພັນ: ສະເລ່ຍກວມເອົາ 11,3% ຂອງ GDP; ໃນປີ 2021 ກວມເອົາ 12,0% ຂອງ GDP, ປີ 2022 ກວມເອົາ 11,10% ຂອງ GDP ແລະ ປີ 2023 ຄາດວ່າກວມເອົາ 11% ຂອງ GDP (ແຜນການ 5ປີ: ຮອດປີ 2025 ໃຫ້ກວມເອົາ 11,7% ຂອງ GDP).

ປັດໄຈທີ່ຊຸກຍູ້ໃຫ້ເສດຖະກິດສືບຕໍ່ຂະຫຍາຍຕົວ ໃນໄລຍະ 2 ປີເຄິ່ງຜ່ານມາ ແມ່ນຂະແໜງການພະລັງງານໄຟຟ້າ-ບໍ່ແຮ່, ການກໍ່ສ້າງ, ຂະແໜງອຸດສາຫະກຳປຸງແຕ່ງ, ຂະແໜງການຜະລິດກະສິກຳ ແລະ ການສື່ສານ; ແຕ່ພາຍຫຼັງໄດ້ມີການຜ່ອນຄາຍມາດຕະການໂຄວິດ-19 ແລະ ໄດ້ເປີດປະເທດຢ່າງເປັນທາງການ ໃນກາງປີ 2022 ໄດ້ເຮັດໃຫ້ກິດຈະກຳທາງດ້ານເສດຖະກິດ-ສັງຄົມ ໂດຍສະເພາະບັນດາກິດຈະກຳທີ່ຕິດພັນກັບການທ່ອງທ່ຽວ ແລະ ການຂົນສົ່ງ ມີທ່າອ່ຽງເພີ່ມຂຶ້ນຫຼາຍສົມຄວນທຽບໃສ່ປີ 2020.

ສັງລວມແລ້ວ, ເຖິງວ່າຈະມີຄວາມຫຍຸ້ງຍາກດ້ານຕ່າງໆ ແຕ່ດ້ວຍຄວາມພະຍາຍາມຂອງພັກ ແລະ ລັດຖະບານ ໃນການອອກບັນດາມາດຕະການເພື່ອຊຸກຍູ້ການຜະລິດ ແລະ ການບໍລິການ ໃຫ້ສືບຕໍ່ຂະຫຍາຍຕົວ ເປັນຕົ້ນ: ການເປີດປະເທດຄືນໃໝ່, ການຊຸກຍູ້ການຜະລິດພາຍໃນເພື່ອທົດແທນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກ, ການຈັດຕັ້ງປະຕິບັດໂຄງການທົດລອງແຮ່ທາດ ລວມທັງໂຄງການຂະໜາດໃຫຍ່ຈຳນວນໜຶ່ງ ແລະ ການຊຸກຍູ້ການທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ, ການສະໜອງສິນເຊື່ອເພື່ອຟື້ນຟູເສດຖະກິດ ແລະ ອື່ນໆ ຈຶ່ງໄດ້ເຮັດໃຫ້ເສດຖະກິດສາມາດສືບຕໍ່ຂະຫຍາຍຕົວຢູ່ໃນກອບຂອງແຜນການ 5 ປີ ກຳນົດໄວ້ (4% ຂຶ້ນໄປ), ຄຽງຄູ່ກັບຜົນສຳເລັດທີ່ຍາດມາໄດ້ ກໍເຫັນວ່າໃນປີ 2021 ອັດຕາການເຕີບໂຕແມ່ນບໍ່ສາມາດບັນລຸຕາມຄາດໝາຍຂອງແຜນການປີ ຍ້ອນໄດ້ຮັບຜົນກະທົບໜັກໜ່ວງຈາກການແຜ່ລະບາດພະຍາດໂຄວິດ-19 ໂດຍສະເພາະມາດຕະການສະກັດກັ້ນ ແລະ ປ້ອງກັນຢ່າງເຄັ່ງຄັດທັງພາຍໃນ ແລະ ພາຍນອກ ເຮັດໃຫ້ພາກທຸລະກິດບໍ່ສາມາດດຳເນີນການເຄື່ອນໄຫວໄດ້ຢ່າງປົກກະຕິ; ນອກຈາກນີ້, ຍັງເຫັນວ່າການເຕີບໂຕຍັງບໍ່ທັນມີຄຸນນະພາບເທົ່າທີ່ຄວນ ເນື່ອງຈາກຂະແໜງທີ່ຊຸກຍູ້ການເຕີບໂຕແມ່ນມາຈາກຂະແໜງທີ່ນຳໃຊ້ຊັບພະຍາກອນ ທຳມະຊາດ ເປັນຕົ້ນ: ຂະແໜງໄຟຟ້າ, ຂະແໜງບໍ່ແຮ່ ແລະ ຂະແໜງກໍ່ສ້າງ ແມ່ນການລົງທຶນຂອງຕ່າງປະເທດເປັນສ່ວນໃຫຍ່ ແຕ່ຂະແໜງດັ່ງກ່າວ ບໍ່ສະໜອງໂອກາດສ້າງວຽກເຮັດງານທຳໃຫ້ແຮງງານພາຍໃນຫຼາຍເທົ່າທີ່ຄວນ ແລະ ເປັນໜີ້ສິນຕ່າງປະເທດ ຊຶ່ງມີບາງກິດຈະການແມ່ນໄດ້ສົ່ງຜົນກະທົບຕໍ່ສະພາບແວດລ້ອມທາງທຳມະຊາດ ແລະ ສັງຄົມ; ການຜະລິດສິນຄ້າຍັງບໍ່ມີຄວາມຫຼາກຫຼາຍ ແລະ ຄຸນນະພາບຍັງຕໍ່າ ສ່ວນຫຼາຍການຜະລິດແມ່ນເປັນວັດຖຸດິບ ແລະ ເຄິ່ງສຳເລັດຮູບທີ່ສ້າງມູນຄ່າເພີ່ມບໍ່ສູງ; ເຖິງແມ່ນວ່າເສດຖະກິດຍັງສືບຕໍ່ຂະຫຍາຍຕົວ ແຕ່ລາຍຮັບຕົວຈິງຂອງປະຊາຊົນແມ່ນມີທ່າອ່ຽງຫຼຸດລົງ ເນື່ອງຈາກການອ່ອນຄ່າຂອງເງິນກີບ ບວກກັບ ລາຄາສິນຄ້າເພີ່ມສູງຂຶ້ນ ເຊິ່ງສົ່ງຜົນກະທົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນຫຼາຍພໍສົມຄວນ.

**1.1.2 ການພັດທະນາຂະແໜງກະສິກຳ-ປ່າໄມ້**

+ **ດ້ານການປູກຝັງ:**

– ການຜະລິດເຂົ້າລວມ: ໃນໄລຍະ 2 ປີເຄິ່ງຜ່ານມາ ຜົນຜະລິດເຂົ້າເປືອກລວມ ຄາດຄະເນຈະສາມາດປະຕິບັດໄດ້ສະເລ່ຍ 3,78 ລ້ານກວ່າໂຕນຕໍ່ປີ ເຫັນວ່າຢູ່ໃນລະດັບຄາດໝາຍຂອງແຜນການວາງໄວ້ (ແຜນການ 5 ປີ: 3,5-4 ລ້ານໂຕນຕໍ່ປີ); ໃນນີ້: ປີ 2021 ປະຕິບັດໄດ້ 3,66 ລ້ານກວ່າໂຕນ, ປີ 2022 ປະຕິບັດໄດ້ 3,78 ລ້ານກວ່າໂຕນ ແລະ ປີ 2023 ຄາດວ່າຈະປະຕິບັດໄດ້ 3,90 ລ້ານກວ່າໂຕນ. ສາເຫດທີ່ການຜະລິດເຂົ້າລວມໄດ້ຕາມແຜນການ ຍ້ອນວ່າລາຄາເຂົ້າສູງຂຶ້ນ ເຮັດໃຫ້ຊາວກະສິກອນມີຄວາມກະຕືລືລົ້ນດຳເນີນການຜະລິດ ບວກກັບ ການຊຸກຍູ້, ຕິດຕາມ ແລະ ສະໜັບສະໜູນຂອງການຈັດຕັ້ງທຸກພາກສ່ວນແຕ່ສູນກາງຮອດທ້ອງຖິ່ນ.

**ການຜະລິດເຂົ້າ**

| ລ/ດ | ປະເພດເຂົ້າ | 2021 | | 2022 | | 2023 | |
|---|---|---|---|---|---|---|---|
| | | ເນື້ອທີ່ເກັບກ່ຽວ (ເຮັກຕາ) | ຜົນຜະລິດ (ໂຕນ) | ເນື້ອທີ່ເກັບກ່ຽວ (ເຮັກຕາ) | ຜົນຜະລິດ (ໂຕນ) | ເນື້ອທີ່ເກັບກ່ຽວ (ເຮັກຕາ) | ຄາດຄະເນຜົນຜະລິດ (ໂຕນ) |
| 1 | ເຂົ້ານາປີ | 771.329 | 3.102.323 | 769.544 | 3.156.800 | 796.224 | 3.252.800 |
| 2 | ເຂົ້ານາແຊງ | 86.960 | 392.490 | 95.480 | 438.000 | 96.543 | 442.000 |
| 3 | ເຂົ້າໄຮ່ | 81.373 | 165.187 | 92.605 | 187.780 | 100.905 | 205.400 |
| ເຂົ້າລວມ | | 936.662 | 3.660.000 | 957.629 | 3.782.580 | 945.963 | 3.900.200 |

– ການຜະລິດພືດສະບຽງອາຫານ: ໄດ້ສຸມໃສ່ການຜະລິດພືດສະບຽງອາຫານ ເພື່ອສະໜອງການບໍລິໂພກພາຍໃນໃຫ້ພຽງພໍ, ຮັບປະກັນດ້ານໂພຊະນາການ ແລະ ເປັນວັດຖຸດິບປ້ອນໂຮງງານປຸງແຕ່ງແປຮູບຜົນຜະລິດກະສິກຳເປັນສິນຄ້າ, ເຊິ່ງໃນໄລຍະ 2 ປີເຄິ່ງຜ່ານມາ ສາມາດປະຕິບັດໄດ້ ສະເລ່ຍ 2,63 ລ້ານກວ່າໂຕນຕໍ່ປີ, ລື່ນຄາດໝາຍ 24% (ແຜນການ 5ປີ: 2,12 ລ້ານໂຕນຕໍ່ປີ); ໃນນີ້: ປີ 2021 ປະຕິບັດໄດ້ 3,13 ລ້ານກວ່າໂຕນ, ປີ 2022 ປະຕິບັດໄດ້ 2,36 ລ້ານກວ່າໂຕນ ແລະ ປີ 2023 ຄາດວ່າຈະປະຕິບັດໄດ້ 2,42 ລ້ານກວ່າໂຕນ. ພືດສະບຽງທີ່ມີການຜະລິດພົ້ນເດັ່ນກວ່າໝູ່ແມ່ນສາລີຫວານ, ພືດຜັກ ແລະ ໝາກໄມ້ ເນື່ອງຈາກຄວາມຕ້ອງການບໍລິໂພກພາຍໃນ ແລະ ການປຸງແຕ່ງຜົນຜະລິດກະສິກຳເພີ່ມຂຶ້ນ.

| **ການປູກພືດສະບຽງອາຫານ** | | | | | |
|---|---|---|---|---|---|
| **ລ/ດ** | **ປະເພດປູກຝັງ** | **ຄາດໝາຍ 5ປີ (ໂຕນ)** | **ຜົນຜະລິດ ປີ 2021 (ໂຕນ)** | **ຜົນຜະລິດ ປີ 2022 (ໂຕນ)** | **ຄາດຄະເນຜົນຜະລິດ ປີ 2023 (ໂຕນ)** |
| 1 | ສາລີຫວານ | 223.720 | 211.300 | 170.930 | 161.740 |
| 2 | ເຜືອກມັນ | 134.340 | 214.584 | 214.350 | 205.343 |
| 3 | ພືດຜັກ | 1.462.000 | 1.437.781 | 1.492.950 | 1.422.000 |
| 4 | ໝາກໄມ້ | 307.900 | 1.310.378 | 491.350 | 630.000 |

– ການຜະລິດພືດເປັນສິນຄ້າ: ໄດ້ສົ່ງເສີມບັນດາແຂວງ ຜະລິດກະສິກຳເປັນສິນຄ້າຕາມທ່າແຮງຂອງແຕ່ລະທ້ອງຖິ່ນ ໂດຍສະເພາະແມ່ນສຸມໃສ່ບັນດາພືດ ແລະ ສັດ ທີ່ໄດ້ຮັບການເຈລະຈາເຕັກນິກເປີດຕະຫຼາດແລ້ວ, ເຊິ່ງໃນໄລຍະ 2 ປີເຄິ່ງຜ່ານມາ ສາມາດປະຕິບັດໄດ້ 7,89 ລ້ານກວ່າໂຕນຕໍ່ປີ, ບັນລຸຕາມແຜນການທີ່ວາງໄວ້ (ແຜນການ 5ປີ: 7,4 ລ້ານໂຕນຕໍ່ປີ); ໃນນີ້: ປີ 2021 ປະຕິບັດໄດ້ 5,78 ລ້ານກວ່າໂຕນ, ປີ 2022 ປະຕິບັດໄດ້ 8,17 ລ້ານກວ່າໂຕນ ແລະ ປີ 2023 ຄາດວ່າຈະປະຕິບັດໄດ້ 9,73 ລ້ານກວ່າໂຕນ. ພືດທີ່ພົ້ນເດັ່ນແມ່ນການຜະລິດກາເຟ ເພີ່ມຂຶ້ນ 8%, ອ້ອຍ ເພີ່ມຂຶ້ນ 26%, ມັນຕົ້ນ ເພີ່ມຂຶ້ນ 31% ແລະ ພືດຊະນິດອື່ນໆ.

| **ການປູກພືດເປັນສິນຄ້າ** | | | | | |
|---|---|---|---|---|---|
| **ລ/ດ** | **ປະເພດປູກຝັງ** | **ຄາດໝາຍ 5ປີ** | **ຜົນຜະລິດ ປີ 2021 (ໂຕນ)** | **ຜົນຜະລິດ ປີ 2022 (ໂຕນ)** | **ຄາດຄະເນ ຜົນຜະລິດ ປີ 2023 (ໂຕນ)** |
| 1 | ກາເຟ | 175.500 ໂຕນ | 161.200 | 171.000 | 183.000 |
| 2 | ສາລີອາຫານສັດ | 636.900 ໂຕນ | 535.237 | 462.810 | 458.000 |
| 3 | ມັນຕົ້ນ | 3,6 ລ້ານໂຕນ | 3.710.000 | 4.863.400 | 6.255.000 |
| 4 | ອ້ອຍ | 1,6 ລ້ານໂຕນ | 1.141.200 | 1.502.272 | 1.653.000 |
| 5 | ກ້ວຍ | 735.500 ໂຕນ | 907.303 | 737.740 | 861.000 |

– ການຜະລິດຊີ້ນ, ໄຂ່ ແລະ ປາ: ໃນໄລຍະ 2 ປີເຄິ່ງຜ່ານມາ ສາມາດຕອບສະໜອງການບໍລິໂພກພາຍໃນໄດ້ໂດຍພື້ນຖານ ສະເລ່ຍ 507.880 ໂຕນ, ເທົ່າກັບ 88,02% ຂອງແຜນການ (ແຜນການ 5ປີ: 577.000 ໂຕນຕໍ່ປີ); ໃນນີ້: ປີ 2021 ປະຕິບັດໄດ້ 485.480 ໂຕນ, ປີ 2022 ປະຕິບັດໄດ້ 507.644 ໂຕນ ແລະ ປີ 2023 ຄາດວ່າຈະປະຕິບັດໄດ້ 530.517 ໂຕນ ຊຶ່ງເຮັດໃຫ້ອັດຕາການບໍລິໂພກ ສະເລ່ຍ 68,2 ກິໂລ/ຄົນ/ປີ (ແຜນການ 5ປີ: 73 ກິໂລ/ຄົນ/ປີ).

| ການຜະລິດຊີ້ນ, ໄຂ່ ແລະ ປາ | | | | | |
|---|---|---|---|---|---|
| ລ/ດ | ປະເພດຜະລິດຕະພັນ | ຄາດໝາຍ 5ປີ (ໂຕນ) | ຜົນຜະລິດ ປີ 2021 (ໂຕນ) | ຜົນຜະລິດ ປີ 2022 (ໂຕນ) | ຄາດຄະເນຜົນຜະລິດ ປີ 2023 (ໂຕນ) |
| 1 | ຊີ້ນ | 285.000 | 237.130 | 244.781 | 257.145 |
| 2 | ໄຂ່ | 55.000 | 42.350 | 47.263 | 50.272 |
| 3 | ປາ | 237.000 | 206.000 | 215.600 | 223.100 |
| ຜົນຜະລິດລວມ | | 577.000 | 485.480 | 507.644 | 530.517 |

+ **ດ້ານລ້ຽງສັດ ແລະ ການປະມົງ:**

ການຂະຫຍາຍຕົວຂອງຝູງສັດ ສະເລ່ຍ 3,36% ຕໍ່ປີ ເຫັນວ່າຢູ່ໃນລະດັບຄາດໝາຍຂອງແຜນການວາງໄວ້ (ແຜນການ 5ປີ: 3-4% ຕໍ່ປີ); ໃນນີ້: ປີ 2021 ຂະຫຍາຍຕົວຢູ່ລະດັບ 2,70% ຕໍ່ປີ, ປີ 2022 ຢູ່ລະດັບ 3,88% ຕໍ່ປີ ແລະ ປີ 2023 ຈະຂະຫຍາຍຕົວ ຢູ່ໃນລະດັບ 3,50% ຕໍ່ປີ. ປັດຈຸບັນ, ໃນທົ່ວປະເທດມີຟາມລ້ຽງສັດທັງໝົດ 2.261 ຟາມ ມີສັດລ້ຽງປະມານ 6,50 ລ້ານກວ່າໂຕ; ໃນນີ້: ໄລຍະ 2 ປີເຄິ່ງຜ່ານມາ ຟາມລ້ຽງງົວ ເພີ່ມຂຶ້ນ 271 ຟາມ, ຟາມລ້ຽງໝູ ເພີ່ມຂຶ້ນ 261 ຟາມ ແລະ ຟາມລ້ຽງໄກ່ພັນໄຂ່ ເພີ່ມຂຶ້ນ 73 ຟາມ. ຊຶ່ງສາມາດສະໜອງຜົນຜະລິດທາດຊີ້ນຈາກການລ້ຽງສັດ ສະເລ່ຍຢູ່ໃນລະດັບ 41% ຂອງຜົນຜະລິດຊີ້ນທັງໝົດ.

+ **ການສົ່ງອອກຜະລິດຕະພັນກະສິກຳ ແລະ ປ່າໄມ້:**

– ການເຈລະຈາເຕັກນິກເປີດຕະຫຼາດ: ໄດ້ເຊັນສັນຍາ ແລະ ສາມາດສົ່ງອອກເປັນທາງການ ກັບ ປະເທດຄູ່ຄ້າແລ້ວ 64 ລາຍການ ທຽບໃສ່ປີ 2020 ເພີ່ມຂຶ້ນ 27 ລາຍການ. ໃນນັ້ນ, ສປ ຈີນ ມີ 33 ລາຍການ (30 ລາຍການພືດ ແລະ 3 ລາຍການສັດ, ເພີ່ມຂຶ້ນ 27 ລາຍການ); ສສ ຫວຽດນາມ ມີ 16 ລາຍການພືດ; ປະເທດໄທ ມີ 15 ລາຍການພືດ; ສະເພາະສົ່ງອອກໄປສະຫະພາບເອີລົບ (EU) ແມ່ນເປີດຮັບທຸກປະເພດສິນຄ້າ ແຕ່ຕ້ອງໄດ້ປະຕິບັດຕາມເງື່ອນໄຂການນຳເຂົ້າຂອງສະຫະພາບເອີລົບ.

– ການສົ່ງອອກຜົນຜະລິດກະສິກຳ: ໃນໄລຍະ 2 ປີເຄິ່ງຜ່ານມາ ປະຕິບັດໄດ້ສະເລ່ຍ 1.425,09 ລ້ານກວ່າໂດລາສະຫະລັດ ຕໍ່ປີ, ລື່ນແຜນການ 11,13% (ແຜນການ 5ປີ: 1.200 ລ້ານໂດລາສະຫະລັດ ຕໍ່ປີ); ໃນນີ້, ປີ 2021 ປະຕິບັດໄດ້ 1.100 ລ້ານໂດລາສະຫະລັດ, ປີ 2022 ປະຕິບັດໄດ້ 1.733,11 ລ້ານໂດລາສະຫະລັດ ແລະ ຄາດຄະເນໝົດປີ 2023 ຈະສາມາດປະຕິບັດໄດ້ 1.442,17 ລ້ານໂດລາສະຫະລັດ.

ສຳລັບແນວພັນທີ່ພາຍໃນສາມາດຜະລິດກຸ້ມຕົນເອງໄດ້ 100% ແມ່ນແນວພັນເຂົ້າ, ໃນນີ້: ຄົ້ນຄວ້າໃໝ່ ຈຳນວນ 8 ແນວພັນ ພ້ອມທັງໄດ້ກຳນົດບັນຊີລາຍການສິນຄ້າສົ່ງເສີມການຜະລິດພາຍໃນ ປະເພດພືດ 9 ຊະນິດ ແລະ ປະເພດສັດ 3 ບັນຊີ; ໄດ້ເຈລະຈາດ້ານສຸຂະອະນາໄມ ແລະ ສຸຂະອະນາໄມພືດ (SPS) ເພື່ອເປີດຕະຫຼາດສົ່ງອອກໄດ້ 48 ລາຍການກັບປະເທດເພື່ອນບ້ານ; ໃນນີ້, ມີ 10 ລາຍການແມ່ນຈັດຕັ້ງປະຕິບັດໃນໄລຍະອາລະແຫ່ງຊາດ.

ສິ່ງທ້າທາຍ: ການຜະລິດກະສິກຳຫັນເປັນອຸດສາຫະກຳ ແລະ ທັນສະໄໝ ຍັງບໍ່ທັນເຂັ້ມແຂງ ແລະ ການນຳໃຊ້ຜົນສຳເລັດດ້ານວິທະຍາສາດ-ເຕັກນິກນະວັດຕະກຳໃໝ່ ຍັງຈຳກັດ; ຂະບວນການຜະລິດ, ການປຸງແຕ່ງສິນຄ້າກະສິກຳ ຍັງບໍ່ທັນຂະຫຍາຍຕົວຢ່າງແຂງແຮງ ຖ້າທຽບໃສ່ທ່າແຮງທີ່ມີຂອງປະເທດ; ປະລິມານ ແລະ ຄຸນນະພາບຂອງສິນຄ້າ ຍັງບໍ່ທັນໄດ້ຕາມມາດຕະຖານຂອງປະເທດຄູ່ຄ້າ; ການເຂົ້າເຖິງແຫຼ່ງທຶນດອກເບ້ຍທີ່ເໝາະສົມ ຍັງພົບຄວາມຫຍຸ້ງຍາກ, ຕົ້ນທຶນການຜະລິດຂ້ອນຂ້າງສູງ ບໍ່ສາມາດແຂ່ງຂັນກັບຕະຫຼາດພາຍໃນ, ພາກພື້ນ ແລະ ສາກົນ; ຂອດການດຸ່ນດ່ຽງ ແລະ ການຈໍລະຈອນສິນຄ້າຍັງພົບກັບຄວາມຫຍຸ້ງຍາກ ຈຶ່ງມີການນຳເຂົ້າສິນຄ້າທີ່ຍັງບໍ່ສາມາດຜະລິດຢູ່ພາຍໃນ. ສະພາບການພັດທະນາຂະແໜງກະສິກຳໃນໄລຍະຜ່ານມາ ເຫັນວ່າມີຫຼາຍປັດໄຈທີ່ກະທົບຕໍ່ການຜະລິດ ໂດຍສະເພາະແມ່ນສະພາບເສດຖະກິດ ມີການປ່ຽນແປງ, ລາຄາປັດໄຈການຜະລິດທີ່ນຳເຂົ້າຈາກຕ່າງປະເທດມີລາຄາສູງ, ຜົນກະທົບຈາກການປ່ຽນແປງດິນຟ້າອາກາດ, ສັດຕູພືດ ແລະ ໄພພິບັດທຳມະຊາດອື່ນໆ ເຮັດໃຫ້ລາຍຮັບຂອງຊາວກະສິກອນ ມີຄວາມສ່ຽງຕໍ່ປັດໄຈພາຍນອກທີ່ເກີດຂຶ້ນ.

**1.1.3 ການພັດທະນາຂະແໜງອຸດສາຫະກຳ**

\+ **ດ້ານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ:** ໃນໄລຍະ 2 ປີເຄິ່ງຜ່ານມາ ມູນຄ່າການຜະລິດອຸດສາຫະກຳປຸງແຕ່ງສາມາດປະຕິບັດໄດ້ 32.067,23 ຕື້ກີບ, ເທົ່າກັບ 38,60% ຂອງແຜນການ (ແຜນການ 5ປີ: 83.079,83 ຕື້ກີບ), ເພີ່ມຂຶ້ນສະເລ່ຍຕໍ່ປີ 4,79% (ແຜນການ 5ປີ: ຂະຫຍາຍຕົວຢູ່ລະດັບ 8-10%); ໃນນີ້, ປີ 2021 ປະຕິບັດໄດ້ 11.878,86 ຕື້ກີບ, ປີ 2022 ປະຕິບັດໄດ້ 13.210 ຕື້ກີບ ແລະ 6 ເດືອນຕົ້ນປີ 2023 ປະຕິບັດໄດ້ 6.978,34 ຕື້ກີບ. ອັດຕາສ່ວນຂອງໂຄງປະກອບລວມຍອດມູນຄ່າການຜະລິດອຸດສາຫະກຳປຸງແຕ່ງທີ່ສຳຄັນປະກອບ ມີ: ການຜະລິດສະບຽງອາຫານ ກວມເອົາ 24,01% (ຊາ, ກາເຟ, ເຂົ້າໜົມເຂົ້າຈີ່ສຳເລັດຮູບ, ເສັ້ນໝີ່ສຳເລັດຮູບ, ເສັ້ນເຂົ້າປຸ້ນ, ເສັ້ນເຝີ, ອາຫານກະປ໋ອງ, ໝາກໄມ້ອົບແຫ້ງ, ນ້ຳຊອດ, ລູກຊີ້ນ ແລະ ອື່ນໆ); ການຜະລິດເຄື່ອງດື່ມ ກວມເອົາ 16,75% (ນ້ຳຫວານອັດລົມ, ເບຍ, ເຫຼົ້າ ແລະ ອື່ນໆ); ການຜະລິດເຄື່ອງນຸ່ງຫົ່ມ ກວມເອົາ 12,21%; ການຜະລິດເຈ້ຍ ແລະ ຜະລິດຕະພັນເຈ້ຍ ກວມເອົາ 9,43% (ເຫຍື່ອເຈ້ຍ, ປະເພດເຈ້ຍແຂງ, ເຈ້ຍແກັດ ແລະ ອື່ນໆ); ການຜະລິດເຄື່ອງໃຊ້ໄຟຟ້າ ແລະ ເຄື່ອງເອເລັກໂຕຣນິກ ກວມເອົາ 6,24% (ຊິ້ນສ່ວນກ້ອງຖ່າຍຮູບ, ໝໍ້ຫຸງເຂົ້າ, ພັດລົມ, ສາຍໄຟຟ້າ ແລະ ອື່ນໆ); ການຜະລິດແຮ່ທາດອື່ນໆທີ່ບໍ່ແມ່ນໂລຫະ ກວມເອົາ 5,76% (ຊີມັງ, ດິນຈີ່, ດິນປູ໋ອກ ແລະ ອື່ນໆ); ການຜະລິດຢາງ ແລະ ຜະລິດຕະພັນຢາງປລາສຕິກ ກວມເອົາ 4,21% (ເຄື່ອງເຟີນີເຈີຢາງ, ຖົງຢາງ ແລະ ທໍ່ຢາງ ເປັນຕົ້ນ).

ສິ່ງທ້າທາຍ: ເຖິງແມ່ນວ່າການຜະລິດອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ຈະມີທ່າອ່ຽງຂະຫຍາຍຕົວເພີ່ມຂຶ້ນແຕ່ກໍຍັງຂະຫຍາຍຕົວໃນລັກສະນະທີ່ຊ້າບໍ່ໜັກແໜ້ນເທົ່າທີ່ຄວນ ແລະ ຍັງບໍ່ທັນມີທ່າກ້າວກະໂດດໄດ້ເທື່ອ ຕາມທ່າອ່ຽງຂອງການພັດທະນາເສດຖະກິດການຄ້າໃນລະດັບພາກພື້ນ ແລະ ສາກົນ; ອຸດສາຫະກຳປຸງແຕ່ງສ່ວນໃຫຍ່ ຍັງບໍ່ທັນໄດ້ຮັບການພັດທະນາຕາມທ່າແຮງຢ່າງສົມຄູ່ກັບວັດຖຸດິບທີ່ສະໜອງໄດ້ພາຍໃນປະເທດ ບັນຫາຕົ້ນຕໍຍ້ອນນະໂຍບາຍສົ່ງເສີມການຜະລິດສິນຄ້າຍັງບໍ່ທັນຊັດເຈນ, ຍັງຂາດລະບົບພື້ນຖານໂຄງລ່າງທີ່ຊ່ວຍໜູນທີ່ເໝາະສົມ, ຍັງຂາດຖານຂໍ້ມູນການຜະລິດ/ການສະໜອງທີ່ເປັນລະບົບ ແລະ ການນຳໃຊ້ເຕັກນິກ-ເຕັກໂນໂລຊີເຂົ້າໃນການຜະລິດຍັງຢູ່ໃນລະດັບຕ່ຳ.

\+ **ດ້ານພະລັງງານ ແລະ ບໍ່ແຮ່** ໃນໄລຍະ 2 ປີເຄິ່ງຜ່ານມາ ສາມາດປະຕິບັດໄດ້ດັ່ງນີ້:

\+ ດ້ານພະລັງງານ:

– ການຜະລິດກະແສໄຟຟ້າ ສາມາດປະຕິບັດໄດ້ 120.263 ລ້ານກິໂລວັດໂມງ, ເທົ່າກັບ 43,56% ຂອງແຜນການ (ແຜນການ 5ປີ: 276.096 ລ້ານກິໂລວັດໂມງ) ທຽບໃສ່ກາງສະໄໝຂອງແຜນການ 5 ປີ ຄັ້ງທີ VIII ເພີ່ມຂຶ້ນ 67,86% (ແຜນການ 5ປີ: ເພີ່ມຂຶ້ນ 70%) ຫຼຸດແຜນການທີ່ວາງໄວ້ 2,14%; ໃນນີ້: ປີ 2021 ປະຕິບັດໄດ້ 44.915 ລ້ານກິໂລວັດໂມງ, ປີ 2022 ປະຕິບັດໄດ້ 51.031 ລ້ານກິໂລວັດໂມງ ແລະ 6 ເດືອນຕົ້ນປີ 2023 ປະຕິບັດໄດ້ 24.316 ລ້ານກິໂລວັດໂມງ; ຄິດເປັນມູນຄ່າການຜະລິດກະແສໄຟຟ້າ ສາມາດປະຕິບັດໄດ້ 93.849 ຕື້ກີບ, ເທົ່າກັບ 66,62% ຂອງແຜນການ (ແຜນການ 5ປີ: 140.879 ຕື້ກີບ) ທຽບໃສ່ກາງສະໄໝຂອງແຜນການ 5 ປີ ຄັ້ງທີ VIII ເພີ່ມຂຶ້ນ 186,42% (ແຜນການ 5ປີ: ເພີ່ມຂຶ້ນ 79%) ລື່ນແຜນການທີ່ວາງໄວ້ 107,42% ສາເຫດຍ້ອນອັດຕາແລກປ່ຽນເງິນກີບທຽບເງິນໂດລາ

ອ່ອນຄ່າຫຼາຍ ໃນໄລຍະກາງປີ 2022 ເປັນຕົ້ນມາ, ໃນນີ້: ປີ 2021 ປະຕິບັດໄດ້ 26.813 ຕື້ກີບ, ປີ 2022 ປະຕິບັດໄດ້ 45.070 ຕື້ກີບ ແລະ 6 ເດືອນຕົ້ນປີ 2023 ປະຕິບັດໄດ້ 21.965 ຕື້ກີບ; ໃນນີ້:

- ການຈຳໜ່າຍກະແສໄຟຟ້າໄປຕ່າງປະເທດ: ປະຕິບັດໄດ້ 95.616 ລ້ານກິໂລວັດໂມງ, ຄິດເປັນມູນຄ່າ 5.719 ລ້ານໂດລາສະຫະລັດ, ທຽບຕົວເລກການຜະລິດໃສ່ໄລຍະກາງສະໄໝຂອງແຜນການ 5 ປີ ຄັ້ງທີ VIII ເພີ່ມຂຶ້ນ 65,66%.
- ການຈຳໜ່າຍກະແສໄຟຟ້າພາຍໃນປະເທດ: ປະຕິບັດໄດ້ 22.789 ລ້ານກິໂລວັດໂມງ, ຄິດເປັນມູນຄ່າ 1.456 ລ້ານໂດລາສະຫະລັດ, ທຽບຕົວເລກການຜະລິດໃສ່ໄລຍະກາງສະໄໝຂອງແຜນການ 5 ປີ ຄັ້ງທີ VIII ເພີ່ມຂຶ້ນ 83,60%.

– ການນຳເຂົ້າກະແສໄຟຟ້າຈາກຕ່າງປະເທດ ປະຕິບັດໄດ້ 2.781 ລ້ານກິໂລວັດໂມງ, ຄິດເປັນມູນຄ່າ 156 ລ້ານໂດລາສະຫະລັດ, ທຽບຕົວເລກການຜະລິດໃສ່ໄລຍະກາງສະໄໝຂອງແຜນການ 5 ປີ ຄັ້ງທີ VIII ເພີ່ມຂຶ້ນ 81,64%.

– ການສົ່ງອອກພະລັງງານໄຟຟ້າໃນກອບການຮ່ວມມືກັບຕ່າງປະເທດ ສາມາດປະຕິບັດໄດ້ 655 ເມກາວັດ (ໄທ 520 MW, ສິງກະໂປ 100 MW ແລະ ມຽນມາ 35 MW), ເທົ່າກັບ 13,10% ຂອງແຜນການ (ແຜນການ 5ປີ: ໃຫ້ໄດ້ 5.000 ເມກາວັດ). ມາຮອດປັດຈຸບັນລວມຕົວເລກການສົ່ງອອກພະລັງງານໄຟຟ້າ ສະສົມໄດ້ທັງໝົດຫຼາຍກວ່າ 7.000 ເມກາວັດ.

– ມາຮອດປັດຈຸບັນແຫຼ່ງຜະລິດພະລັງງານໄຟຟ້າທີ່ມີກຳລັງຕິດຕັ້ງແຕ່ 1MW ຂຶ້ນໄປ ມີຈຳນວນທັງໝົດ 94 ແຫ່ງ, ລວມກຳລັງຕິດຕັ້ງ 11.661,14 MW, ຄວາມອາດສາມາດຜະລິດພະລັງງານໄຟຟ້າ 58.813,42 GWh/ປີ; ໃນນີ້: ໂຄງການພະລັງງານນໍ້າ 81 ແຫ່ງ, ແສງຕາເວັນ 8 ແຫ່ງ, ຊີວະມວນ 4 ແຫ່ງ ແລະ ຄວາມຮ້ອນຖ່ານຫີນ 1 ແຫ່ງ. ໃນໄລຍະ 2 ປີເຄິ່ງຜ່ານມາ ໄດ້ສຳເລັດການກໍ່ສ້າງແຫຼ່ງຜະລິດໄຟຟ້າ ທັງໝົດ 10 ໂຄງການ, ລວມກຳລັງຕິດຕັ້ງ 1.501,50 MW, ຄວາມອາດສາມາດຜະລິດພະລັງງານໄຟຟ້າ 5.881,47 GWh/ປີ, ເທົ່າກັບ 22,22% ຂອງແຜນການ (ແຜນການ 5ປີ: 45 ແຫ່ງ) ຄື: ປີ 2021 ສຳເລັດ 4 ແຫ່ງ ມີ ນໍ້າຫີນບູນ-ຕອນລຸ່ມ (15 MW), ນໍ້າອູ 7 (210 MW), ນໍ້າກົງ 1 (160 MW) ແລະ ນໍ້າກົງ 3 (54 MW); ປີ 2022 ສຳເລັດ 2 ແຫ່ງ ມີ ຫ້ວຍລຳພັນ-ຕອນລຸ່ມ (15 MW) ແລະ ນໍ້າເທີນ 1 (650 MW); ໃນ 6 ເດືອນຕົ້ນປີ 2023 ສຳເລັດ 4 ແຫ່ງ ມີ ນໍ້າອີ່ມູນ (131,50 MW), ນໍ້າຊຳ 3 (156 MW), ນໍ້າຊຳ 1A (50 MW) ແລະ ຫ້ວຍລະແງ (60 MW).

+ ດ້ານບໍ່ແຮ່:

– ການຜະລິດແຮ່ທາດ ສາມາດປະຕິບັດໄດ້ 5.024 ລ້ານໂດລາສະຫະລັດ ຫຼື ເທົ່າກັບ 61.039 ຕື້ກີບ, ເທົ່າກັບ 64,15% ຂອງແຜນການ (ແຜນການ 5ປີ: 7.832,10 ລ້ານໂດລາສະຫະລັດ) ທຽບໃສ່ກາງສະໄໝຂອງແຜນການ 5 ປີ ຄັ້ງທີ VIII ເພີ່ມຂຶ້ນ 64,14% (ແຜນການ 5ປີ: ເພີ່ມຂຶ້ນ 4%) ລື່ນແຜນການທີ່ວາງໄວ້ 60,14%; ໃນນີ້: ປີ 2021 ປະຕິບັດໄດ້ 1.678 ລ້ານໂດລາສະຫະລັດ, ປີ 2022 ປະຕິບັດໄດ້ 2.133 ລ້ານໂດລາສະຫະລັດ ແລະ 6 ເດືອນຕົ້ນປີ 2023 ປະຕິບັດໄດ້ 1.213 ລ້ານໂດລາສະຫະລັດ.

– ການຈຳໜ່າຍແຮ່ທາດ ປະຕິບັດໄດ້ 5.278 ລ້ານໂດລາສະຫະລັດ, ເທົ່າກັບ 63,31% ຂອງແຜນການ (ແຜນການ 5ປີ: 8.336,40 ລ້ານໂດລາສະຫະລັດ); ໃນນັ້ນ:

- ການຈຳໜ່າຍແຮ່ທາດໄປຕ່າງປະເທດ ປະຕິບັດໄດ້ 4.525 ລ້ານໂດລາສະຫະລັດ, ເທົ່າກັບ 71,12% ຂອງແຜນການ (ແຜນການ 5ປີ: 6.362,40 ລ້ານໂດລາສະຫະລັດ).
- ການຈຳໜ່າຍແຮ່ທາດພາຍໃນ ປະຕິບັດໄດ້ 753 ລ້ານໂດລາສະຫະລັດ, ເທົ່າກັບ 38,14% ຂອງແຜນການ (ແຜນການ 5ປີ: 1.974 ລ້ານໂດລາສະຫະລັດ).

– ໄດ້ສຳເລັດການມອບ-ຮັບໂຄງການສຳຫຼວດສ້າງແຜນທີ່ທໍລະນີສາດ-ແຮ່ທາດພື້ນຖານ ມາດຕາສ່ວນ 1/200.000 ໃນເນື້ອທີ່ 162.104 ກມ$^2$ ເທົ່າກັບ 68,04% ຂອງເນື້ອທີ່ທົ່ວປະເທດ, ແຕ່ຍ້ອນໄລຍະຜ່ານມາອີງໃສ່ສະພາບເງື່ອນໄຂ

ຄວາມຫຍຸ້ງຍາກດ້ານເສດຖະກິດ ແລະ ການເງິນ, ວຽກງານດັ່ງກ່າວ ສະເພາະເນື້ອທີ່ 74.696 ກມ$^2$ ກວມເອົາ 31,5% ຂອງເນື້ອທີ່ທົ່ວປະເທດ ທີ່ຍັງບໍ່ໄດ້ຈັດຕັ້ງປະຕິບັດນັ້ນ, ຄາດວ່າຮອດປີ 2025 ຈະສາມາດປະຕິບັດໄດ້ ປະມານ 7.469 ກມ$^2$, ເທົ່າກັບ 10% ໃນເຂດທີ່ຍັງບໍ່ໄດ້ປະຕິບັດ ມີ: ແຂວງໄຊສົມບູນ, ບໍລິຄຳໄຊ, ເຊກອງ, ຈຳປາສັກ ແລະ ອັດຕະປື.

| **ການຜະລິດພະລັງງານ ແລະ ແຮ່ທາດ** | | | | | | | |
|---|---|---|---|---|---|---|---|
| **ລ/ດ** | **ປະເພດການຜະລິດ** | **ຫົວໜ່ວຍ** | **ຄາດໝາຍ 5ປີ** | **ປີ 2021** | **ປີ 2022** | **ປີ 2023** | |
| | | | | | | **6 ເດືອນຕົ້ນ ປີ 2023** | **ສະເລ່ຍ 2 ປີເຄິ່ງ** |
| **I** | **ດ້ານພະລັງງານ** | | | | | | |
| 1 | ການຜະລິດໄຟຟ້າ | ລ້ານ Kwh | 276.096 | 44.915 | 51.031 | 24.316 | 120.263 |
| 2 | ມູນຄ່າການຜະລິດໄຟຟ້າ | ຕື້ກີບ | 140.879 | 26.813 | 45.070 | 21.965 | 93.849 |
| 3 | ການສົ່ງອອກໄຟຟ້າ | ເມກາວັດ | 5.000 | 0 | 655 | 0 | 655 |
| 4 | ການຈຳໜ່າຍໄຟຟ້າໄປຕ່າງປະເທດ | ລ້ານ Kwh | | 36.617 | 39.965 | 19.033 | 95.616 |
| 5 | ການຈຳໜ່າຍໄຟຟ້າພາຍໃນ | ລ້ານ Kwh | | 8.011 | 9.704 | 5.073 | 22.789 |
| **II** | **ດ້ານແຮ່ທາດ** | | | | | | |
| 1 | ການຜະລິດແຮ່ທາດ | ລ້ານ ດຫລ | 7.832,10 | 1.678 | 2.133 | 1.213 | 5.024 |
| | | ຕື້ກີບ | | 16.613 | 25.847 | 10.805 | 61.039 |
| 2 | ການສົ່ງອອກຕ່າງປະເທດ | ລ້ານ ດຫລ | 8.336,40 | 1.630 | 1.808 | 805 | 4.525 |
| 3 | ການຈຳໜ່າຍພາຍໃນ | ລ້ານ ດຫລ | | 283 | 322 | 156 | 753 |

\+ ການຈັດຕັ້ງປະຕິບັດວາລະແຫ່ງຊາດມາຮອດເດືອນພຶດສະພາ 2023, ໄດ້ເຊັນສັນຍາສຳປະທານບໍ່ແຮ່ໃນຮູບແບບທົດລອງ ມີທັງໝົດ 89 ບໍລິສັດ (ແຮ່ເຫຼັກ 38, ແຮ່ຄຳເຄົ້າ 8, ຫີນມາໂບ 2, ແຮ່ຄຳຕົກຂ້ອນ 31 ແລະ ແຮ່ຫາຍາກ 10 ບໍລິສັດ) ໃນເນື້ອທີ່ 36.450,11 ເຮັກຕາ ຫຼື ເທົ່າກັບ 0,13% ຂອງເນື້ອທີ່ທົ່ວປະເທດ ແຕ່ໃນການປະຕິບັດພັນທະດ້ານການເງິນຂອງໂຄງການທົດລອງໃຫ້ລັດຖະບານ ທີ່ໄດ້ມອບເໝົາລ່ວງໜ້າ ແລະ ພັນທະຄ່າຊື້ລິຂະສິດ ມີທັງໝົດ 109 ບໍລິສັດ (89 ບໍລິສັດທີ່ໄດ້ເຊັນສັນຍາສຳປະທານ, 8 ບໍລິສັດທີ່ຍັງບໍ່ທັນໄດ້ເຊັນສັນຍາສຳປະທານ ແລະ 12 ບໍລິສັດໃນໂຄງການສຳຫຼວດແຮ່ຫາຍາກ) ລວມມູນຄ່າທັງໝົດ ປະມານ 959,68 ຕື້ກີບ ແລະ 177,17 ລ້ານໂດລາສະຫະລັດ.

- ໂຄງການແຮ່ເຫຼັກ: ມີທັງໝົດ 38 ໂຄງການ, ໃນນັ້ນ ມອບເງິນຄ້ຳປະກັນລ່ວງໜ້າ 21,38 ລ້ານໂດລາສະຫະລັດ ແລະ 280,6 ຕື້ກີບ, ມອບພັນທະມອບເໝົາ 75.557.000 ໂດລາສະຫະລັດ ແລະ 6,9 ຕື້ກີບ.
- ໂຄງການແຮ່ຫາຍາກ: ມີທັງໝົດ 20 ໂຄງການ, ໃນນັ້ນ ໂຄງການຂຸດຄົ້ນ 13 ໂຄງການ ຊຶ່ງມອບຄ່າຊັບພະຍາກອນລ່ວງໜ້າ ທັງໝົດ 20,5 ລ້ານໂດລາສະຫະລັດ ແລະ 92,1 ຕື້ກີບ, ຄ້າງມອບພັນທະ ມີ 3 ໂຄງການ ເປັນມູນຄ່າ 2,5 ລ້ານໂດລາສະຫະລັດ; ມອບສິດຊື້ສຳປະທານ ໄດ້ 37,49 ລ້ານໂດລາສະຫະລັດ ແລະ 456,37 ຕື້ກີບ, ຄ້າງມອບພັນທະ ມີ 7 ໂຄງການ ເປັນມູນຄ່າ 19,5 ລ້ານໂດລາສະຫະລັດ.
- ແຮ່ຄຳຕົກຂ້ອນ: ມີທັງໝົດ 39 ໂຄງການ, ມອບເງິນຊື້ສິດສຳປະທານ ໄດ້ 1,495 ລ້ານໂດລາສະຫະລັດ ແລະ 75,94 ຕື້ກີບ ແລະ ພັນທະມອບເໝົາ ໄດ້ 89.069 ໂດລາສະຫະລັດ.
- ແຮ່ຫາຍາກ: ໄດ້ສຳຫຼວດທັງໝົດ 20 ໂຄງການ, ມອບເງິນຊື້ສິດສຳປະທານ ໄດ້ 37,49 ລ້ານໂດລາສະຫະລັດ ແລະ 456,37 ຕື້ກີບ, ຄ້າງມອບພັນທະ ມີ 10 ໂຄງການ ເປັນມູນຄ່າ 22 ລ້ານໂດລາສະຫະລັດ; ຂຸດຄົ້ນ ມີ 13 ໂຄງການ, ມອບຄ່າຊັບພະຍາກອນລ່ວງໜ້າ ໄດ້ 20,5 ລ້ານໂດລາສະຫະລັດ ແລະ 92,1 ຕື້ກີບ.
- ແຮ່ຄຳເຄົ້າ: ມີທັງໝົດ 9 ໂຄງການ, ມອບເງິນຄ້ຳປະກັນ ໄດ້ 15,06 ລ້ານໂດລາສະຫະລັດ ແລະ 120,61 ຕື້ກີບ.
- ຫີນມາໂບ້: ມີທັງໝົດ 2 ໂຄງການ, ມອບເງິນຄ້ຳປະກັນ ໄດ້ 600.000 ໂດລາສະຫະລັດ.

**1.1.4 ການພັດທະນາຂະແໜງບໍລິການ**

\+ **ການຄ້າພາຍໃນ (ຂາຍຍົກ-ຂາຍຍ່ອຍ ແລະ ຄ່າບໍລິການສ້ອມແປງ)** ມູນຄ່າການຈໍລະຈອນສິນຄ້າ ໃນໄລຍະ 2 ປີ ເຄິ່ງຜ່ານມາ ປະຕິບັດໄດ້ 171.347,70 ຕື້ກີບ, ເທົ່າກັບ 40,39% ຂອງແຜນການ (ແຜນການ 5ປີ: 424.247,50 ຕື້ກີບ), ເພີ່ມຂຶ້ນສະເລ່ຍຕໍ່ປີ 6,79% (ແຜນການ 5ປີ: ຂະຫຍາຍຕົວຢູ່ລະດັບ 8-10%); ໃນນີ້: ປີ 2021 ປະຕິບັດໄດ້ 61.092,71 ຕື້ກີບ, ປີ 2022 ປະຕິບັດໄດ້ 72.622,05 ຕື້ກີບ ແລະ ໃນ 6 ເດືອນຕົ້ນປີ 2023 ປະຕິບັດໄດ້ 37.632,93 ຕື້ກີບ. ໂຄງປະກອບຂອງມູນຄ່າການຈໍລະຈອນສິນຄ້າ ທີ່ມີອັດຕາສ່ວນສູງກວ່າໝູ່ແມ່ນໝວດສະບຽງອາຫານ ກວມເອົາ 16,21%; ໝວດເຄື່ອງກໍ່ສ້າງ ກວມເອົາ 15,66%; ໝວດນໍ້າມັນເຊື້ອໄຟ ແລະ ອາຍແກັສ ກວມເອົາ 11,47%; ໝວດສິນຄ້າຮັບໃຊ້ການຜະລິດກະສິກໍາ ກວມເອົາ 10,40%; ໝວດເຄື່ອງຫັດຖະກໍາ ແລະ ຈັກສານ ກວມເອົາ 10,12%; ໝວດພາຫະນະ ແລະ ຊິ້ນສ່ວນອາໄຫຼ່ ກວມເອົາ 7,95%; ໝວດເຄື່ອງດື່ມ, ເຫຼົ້າ ແລະ ຢາສູບ ກວມເອົາ 4,12% ແລະ ໝວດເຄື່ອງໃຊ້ສອຍປະຈໍາວັນ ແລະ ເຄື່ອງສໍາອາງ ກວມເອົາ 1,67%.

<u>ສິ່ງທ້າທາຍ</u>: ການຈັດຕັ້ງປະຕິບັດວຽກງານການຄ້າພາຍໃນໄລຍະຜ່ານມາ ເຫັນວ່າຍັງຈັດຕັ້ງປະຕິບັດບໍ່ທັນໄດ້ດີເທົ່າທີ່ຄວນ ໂດຍສະເພາະການຄວບຄຸມ ແລະ ຄຸ້ມຄອງລາຄາສິນຄ້າ ເຖິງແມ່ນວ່າມີນະໂຍບາຍ ແລະ ມາດຕະການຕ່າງໆທີ່ເປັນບ່ອນອີງໃນການປະຕິບັດກໍຕາມ, ແຕ່ຜົນກະທົບຈາກຫຼາຍປັດໄຈພາຍນອກ ໃນກາງປີ 2022 ເປັນຕົ້ນມາ ໄດ້ເຮັດໃຫ້ລາຄາສິນຄ້າສູງຂຶ້ນຫຼາຍຕາມການເພີ່ມຂຶ້ນຂອງອັດຕາເງິນເຟີ້ ບວກກັບ ຄ່າເງິນກີບອ່ອນຄ່າ ແລະ ລາຄານໍ້າມັນເຊື້ອໄຟ ເຊິ່ງສົ່ງຜົນກະທົບໂດຍກົງຕໍ່ຊີວິດການເປັນຢູ່ຂອງປະຊາຊົນ.

\+ **ດ້ານການທ່ອງທ່ຽວ:**

ສໍາເລັດການສ້າງແຜນພັດທະນາການທ່ອງທ່ຽວເຊັ່ນ: ແຜນຟື້ນຟູການທ່ອງທ່ຽວໄລຍະການແຜ່ລະບາດຂອງພະຍາດໂຄວິດ-19 ສໍາລັບປີ 2021-2025, ແຜນພັດທະນາການທ່ອງທ່ຽວເມືອງເຟືອງ ສໍາລັບປີ 2023-2030, ແຜນຕ້ອນຮັບນັກທ່ອງທ່ຽວຈີນ ສໍາລັບປີ 2023-2025, ບົດຄົ້ນຄວ້າການທ່ອງທ່ຽວແບບກະສິກໍາຂອງ ສປປ ລາວ ແລະ ສໍາເລັດການຮ່າງປື້ມບັນຊີແຫຼ່ງທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ແລະ ເຮືອນພັກແຮມ ຂອງ ສປປ ລາວ ແລະ ດໍາເນີນການປັບປຸງແຜນແມ່ບົດພັດທະນາ ແລະ ຄຸ້ມຄອງຕົວເມືອງທ່ອງທ່ຽວເມືອງວັງວຽງ, ແຂວງວຽງຈັນ ສໍາລັບປີ 2023-2033; ປັບປຸງ ແລະ ສ້າງໂຄງລ່າງພື້ນຖານ ແລະ ສິ່ງອໍານວຍຄວາມສະດວກດ້ານການທ່ອງທ່ຽວ ຄື: (1) ແຂວງຈໍາປາສັກ: ສໍາເລັດການປັບປຸງຫ້ອງນໍ້າສະອາດໄດ້ຕາມມາດຕະຖານອາຊຽນຢູ່ນໍ້າຕົກຕາດຟານ ແລະ ດໍາເນີນການກໍ່ສ້າງເສັ້ນທາງເບຕົງຢູ່ດອນເດດ-ດອນຄອນ, ເມືອງໂຂງ. (2) ແຂວງວຽງຈັນ: ກໍາລັງປັບປຸງເສັ້ນທາງເຂົ້າອ່າງນໍ້າງື່ມ 1 ແລະ ປັບປຸງສິ່ງອໍານວຍຄວາມສະດວກດ້ານການທ່ອງທ່ຽວບໍລິເວນໜ້າອ່າງນໍ້າງື່ມ 1 ເຊັ່ນ: ທ່າເຮືອ, ລານຈອດລົດ, ຮ້ານຂາຍເຄື່ອງ, ຮ້ານອາຫານ, ບ່ອນນັ່ງຫຼິ້ນ ແລະ ອື່ນໆ; ເມືອງວັງວຽງ, ແຂວງວຽງຈັນ: ກໍາລັງປັບປຸງເສັ້ນທາງເບຕົງເຂົ້າເຖິງນໍ້າຕົກຕາດແກ້ງຍຸຍ ຄວາມຍາວ 6 ກມ ແລະ ສ້າງສິ່ງອໍານວຍຄວາມສະດວກດ້ານການທ່ອງທ່ຽວຢູ່ບໍລິເວນຕາດແກ້ງຍຸຍ; ປັບປຸງເສັ້ນທາງວົງແຫວນເບື້ອງຕາເວັນຕົກຂອງສາຍນໍ້າຊອງ ຄວາມຍາວ 26 ກມ ເປັນທາງປູຢາງ 2 ຊັ້ນ, ສ້າງຂົວຂ້າມນໍ້າຊອງ ຄວາມຍາວ 80 ແມັດ, ກວ້າງ 11 ແມັດ; ກໍາລັງປັບປຸງສະໜາມເກັບມ້ຽນຂີ້ເຫຍື້ອເມືອງວັງວຽງ, ແຂວງວຽງຈັນ. ນອກນັ້ນ, ສໍາເລັດການສໍາຫຼວດເກັບກໍາຂໍ້ມູນເພື່ອປັບປຸງສິ່ງອໍານວຍຄວາມສະດວກ ແລະ ຜະລິດຕະພັນການທ່ອງທ່ຽວເຊື່ອມຕໍ່ເສັ້ນທາງອະນຸພາກພື້ນແມ່ນໍ້າຂອງ (ເສັ້ນທາງລົດໄຟລາວ-ຈີນ); ໄດ້ເຂົ້າຮ່ວມງານວາງສະແດງທ່ອງທ່ຽວ ITE-HCMC 2022 ທີ່ນະຄອນໂຮ່ຈິມິນ, ປະເທດຫວຽດນາມ; ງານວາງສະແດງທ່ອງທ່ຽວອາຊຽນ ATF 2022 ທີ່ເມືອງສີຫານຸວິວ, ປະເທດກໍາປູເຈຍ; ງານວາງສະແດງທ່ອງທ່ຽວ ITB Asia 2022 ທີ່ປະເທດສິງກະໂປ; ເຂົ້າຮ່ວມກອງປະຊຸມລັດຖະມົນຕີທ່ອງທ່ຽວອາຊຽນ; ກອງປະຊຸມປິ່ນອ້ອມ ແລະ ງານວາງສະແດງການທ່ອງທ່ຽວອາຊຽນ ATF 2023 ທີ່ໂຢຢາກາຕ້າ, ປະເທດອິນໂດເນເຊຍ ແລະ ງານວາງສະແດງທ່ອງທ່ຽວ BITE Beijing 2023 ທີ່ປະເທດຈີນ.

ພ້ອມດຽວກັນນັ້ນ, ໄດ້ສ້າງບຸກຄະລາກອນເປັນຜູ້ປະເມີນມາດຕະຖານ LaoSafe ຈຳນວນທັງໝົດ 15 ທ່ານ ແລະ ສຳເລັດການປະເມີນ ແລະ ອອກໃບຢັ້ງຢືນມາດຕະຖານ LaoSafe ໃຫ້ແກ່ພາກທຸລະກິດທີ່ຕິດພັນກັບການທ່ອງທ່ຽວທັງໝົດ 1.140 ພາກສ່ວນ, ໃນນີ້: ຂະແໜງໂຮງແຮມ ມີ 107 ແຫ່ງ, ຮ້ານອາຫານ ແລະ ເຄື່ອງດື່ມ ມີ 106 ແຫ່ງ, ພະນັກງານນຳທ່ຽວ ມີ 670 ທ່ານ, ພະນັກງານຂັບລົດ ມີ 255 ທ່ານ ແລະ ສາຍການບິນ 2 ແຫ່ງ (ສາຍການບິນລາວ ແລະ ສາຍການບິນລາວເດີນອາກາດ); ສຳເລັດການລົງປະເມີນ ແລະ ຢັ້ງຢືນມາດຕະຖານ LaoSafe ໃຫ້ແກ່ຫົວໜ່ວຍທຸລະກິດບໍລິການໃນຂະແໜງການທ່ອງທ່ຽວ ຈຳນວນ 767 ຫົວໜ່ວຍ; ໃນນັ້ນ, ເຄີຍໄດ້ຮັບການຢັ້ງຢືນມາດຕະຖານ LaoSafe ຈຳນວນ 594 ຫົວໜ່ວຍ, ສຳເລັດການສ້າງເວັບໄຊ www.laosafe.gov.la ແລະ ເຟສບຸກ LaoSafe ເພື່ອໂຄສະນາ ແລະ ສະໜອງຂໍ້ມູນໃຫ້ທຸກພາກສ່ວນ. ນອກຈາກນັ້ນ, ສປປ ລາວ ແມ່ນໄດ້ຮັບລາງວັນມາດຕະຖານການທ່ອງທ່ຽວອາຊຽນ ປະຈຳປີ 2022 ຈຳນວນ 17 ລາງວັນ, ໃນນີ້: ລາງວັນມາດຕະຖານໂຮງແຮມສີຂຽວອາຊຽນ ຈຳນວນ 5 ລາງວັນ, ເມືອງທ່ອງທ່ຽວສະອາດອາຊຽນ ຈຳນວນ 3 ລາງວັນ, ມາດຕະຖານສະຖານທີ່ຈັດງານອາຊຽນ ຈຳນວນ 7 ລາງວັນ ແລະ ລາງວັນການທ່ອງທ່ຽວແບບຍືນຍົງ ຈຳນວນ 2 ລາງວັນ. ສຳລັບປີ 2023 ສປປ ລາວ ແມ່ນໄດ້ຮັບ 35 ລາງວັນ, ໃນນີ້: ລາງວັນມາດຕະຖານເຮືອນພັກແຮມປະຊາຊົນອາຊຽນ ຈຳນວນ 5 ລາງວັນ, ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ຈຳນວນ 5 ລາງວັນ, ມາດຕະຖານບໍລິການສະປາອາຊຽນ ຈຳນວນ 7 ລາງວັນ ແລະ ມາດຕະຖານຫ້ອງນ້ຳສາທາລະນະອາຊຽນ ຈຳນວນ 18 ລາງວັນ, ຊຶ່ງຜ່ານການຈັດຕັ້ງປະຕິບັດຫຼາຍວຽກຈຸດສຸມໄດ້ມີໝາກຜົນສຳເລັດ ດັ່ງນີ້:

ໃນໄລຍະ 2 ປີເຄິ່ງຜ່ານມາ ມີນັກທ່ອງທ່ຽວພາຍໃນ ຈຳນວນ 3.171.559 ເທື່ອຄົນ, ສ້າງລາຍຮັບໄດ້ ຈຳນວນ 478.142.582 ໂດລາສະຫະລັດ ແລະ ມີນັກທ່ອງທ່ຽວສາກົນ ຈຳນວນ 2.968.801 ເທື່ອຄົນ ຫຼື ເທົ່າກັບ 19,63% ຂອງແຜນການ (ແຜນການ 5ປີ: 15 ລ້ານເທື່ອຄົນ); ສ້າງລາຍຮັບໄດ້ ຈຳນວນ 572.373.427 ໂດລາສະຫະລັດ ຫຼື ເທົ່າກັບ 15% ຂອງແຜນການ (ແຜນການ 5ປີ: 3.813 ລ້ານໂດລາສະຫະລັດ), ສະເລ່ຍໄລຍະການພັກເຊົາແມ່ນ 7 ວັນ/ຄົນ. ສ້າງລາຍຮັບລວມຈາກນັກທ່ອງທ່ຽວພາຍໃນ ແລະ ນັກທ່ອງທ່ຽວຈາກຕ່າງປະເທດ ໄດ້ຈຳນວນ 1.050 ລ້ານໂດລາສະຫະລັດ.

<u>ສິ່ງທ້າທາຍ</u>: ດ້ານໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກການທ່ອງທ່ຽວຈຳນວນໜຶ່ງ ຍັງບໍ່ໄດ້ຮັບການພັດທະນາເທົ່າທີ່ຄວນ; ການຄຸ້ມຄອງ ແລະ ບໍລິຫານສະຖານທີ່ທ່ອງທ່ຽວ ຍັງບໍ່ທັນເປັນລະບົບ; ກິດຈະກຳການທ່ອງທ່ຽວຍັງບໍ່ທັນຫຼາກຫຼາຍ, ຄຸນນະພາບ ແລະ ມາດຕະຖານຂອງການບໍລິການຍັງຕໍ່າ; ຜູ້ປະກອບການທີ່ເປັນມືອາຊີບ ຍັງມີຈຳນວນໜ້ອຍ; ການຈັດລະດັບມາດຕະຖານແຫຼ່ງທ່ອງທ່ຽວ ຍັງຊັກຊ້າ; ການພັດທະນາແຫຼ່ງທ່ອງທ່ຽວທີ່ໄດ້ກຳນົດຢູ່ໃນແຜນການຍັງບໍ່ທັນໄດ້ຮັບການຈັດຕັ້ງປະຕິບັດຕາມຄາດໝາຍ; ການແບ່ງຂັ້ນຄຸ້ມຄອງລະຫວ່າງສູນກາງກັບທ້ອງຖິ່ນ ຍັງບໍ່ທັນສອດຄ່ອງກັບສະພາບຄວາມເປັນຈິງ ແລະ ການລົງທຶນຢູ່ໃນຂະແໜງການທ່ອງທ່ຽວ ຍັງບໍ່ທັນສົມຄູ່ກັບການຂະຫຍາຍຕົວຂອງວຽກງານດັ່ງກ່າວ.

+ **ດ້ານການຂົນສົ່ງ:**

ໄດ້ເອົາໃຈໃສ່ສ້ອມແປງ, ຍົກລະດັບ ແລະ ກໍ່ສ້າງໂຄງລ່າງພື້ນຖານເພື່ອເຊື່ອມຈອດ-ເຊື່ອມໂຍງພາຍໃນ, ພາກພື້ນ ແລະ ສາກົນ ເປັນຕົ້ນ: ສຳເລັດການກໍ່ສ້າງທາງລົດໄຟລາວ-ຈີນ, ທາງດ່ວນນະຄອນຫຼວງວຽງຈັນ-ວັງວຽງ, ປັບປຸງ, ຍົກລະດັບ ແລະ ສ້ອມແປງທາງຫຼວງແຫ່ງຊາດ ແລະ ສະໜາມບິນສາກົນ. ຄຽງຄູ່ກັນນັ້ນ, ກໍໄດ້ເອົາໃຈໃສ່ໃນການສ້າງ ແລະ ປັບປຸງບັນດາກົດໝາຍ, ນິຕິກຳ ແລະ ລະບຽບການ ເພື່ອອຳນວຍຄວາມສະດວກໃຫ້ແກ່ວຽກງານຂົນສົ່ງ ເຊັ່ນ: ກົດໝາຍວ່າດ້ວຍ ການຂົນສົ່ງຍານພາຫະນະທາງບົກ, ດຳລັດວ່າດ້ວຍທ່າບົກ ແລະ ປັບປຸງສັນຍາຂົນສົ່ງກັບບັນດາປະເທດອ້ອມຂ້າງ. ແຕ່ເນື່ອງຈາກການແຜ່ລະບາດຂອງພະຍາດໂຄວິດ-19 ໃນທ້າຍປີ 2019 ໄດ້ແກ່ຍາວມາເຖິງກາງປີ 2022 ເຮັດໃຫ້ມີຜົນກະທົບໂດຍກົງຕໍ່ກັບວຽກງານຂົນສົ່ງສິນຄ້າ ແລະ ໂດຍສານ ເປັນສາເຫດໃຫ້ບາງຮູບແບບການຂົນສົ່ງ ບໍ່ສາມາດບັນລຸໄດ້

ຕາມຄາດໝາຍທີ່ວາງໄວ້. ໃນທ້າຍປີ 2021 ໄດ້ມີການເປີດໃຫ້ບໍລິການເສັ້ນທາງລົດໄຟລາວ-ຈີນ ຊຶ່ງເລີ່ມແຕ່ມື້ເປີດໃຫ້ບໍລິການຮອດປັດຈຸບັນ ມີຜູ້ໂດຍສານ ຈໍານວນ 2.521.598 ເທື່ອຄົນ ແລະ ການຂົນສົ່ງສິນຄ້າ ຈໍານວນ 4.036.500 ໂຕນ; ປະເພດສິນຄ້າຕົ້ນຕໍແມ່ນ ແຮ່ເຫຼັກ, ເຫຼັກກ້າ, ແປ້ງມັນຕົ້ນ ແລະ ປຸ໋ຍເຄມີ; ສິນຄ້າຈາກ ສປ ຈີນ ມາ ສປປ ລາວ ຈໍານວນ 641.000 ໂຕນ ແລະ ຈາກ ສປປ ລາວ ໄປ ສປ ຈີນ ຈໍານວນ 330.859 ໂຕນ; ນອກຈາກນີ້, ໄດ້ຊຸກຍູ້ການບໍລິການຂອງບັນດາທ່າບົກທີ່ເປີດນໍາໃຊ້ບໍລິການແລ້ວ ຄື: ທ່າບົກສະຫວັນນະເຂດ, ທ່າບົກຈໍາປາສັກ ແລະ ທ່າບົກທ່ານາແລ້ງ, ນະຄອນຫຼວງວຽງຈັນ ຊຶ່ງໃນປີ 2022 ສາມາດສ້າງລາຍຮັບງົບປະມານ ໄດ້ 109,82 ຕື້ກີບ. ພ້ອມດຽວກັນນັ້ນ, ກໍໄດ້ຊຸກຍູ້ການກໍ່ສ້າງທ່າບົກທ່າແຂກ, ແຂວງຄໍາມ່ວນ ໃຫ້ສໍາເລັດ ແລະ ສາມາດເປີດບໍລິການໄດ້ ໃນປີ 2023 (ປັດຈຸບັນມີຄວາມຄືບໜ້າ ປະມານ 15%). ປະລິມານການຂົນສົ່ງ ແຕ່ປີ 2020-2022 ສໍາລັບການຂົນສົ່ງໂດຍສານສະເລ່ຍ ເພີ່ມຂຶ້ນ 1,59% ຕໍ່ປີ ແລະ ຂົນສົ່ງສິນຄ້າ ສະເລ່ຍເພີ່ມຂຶ້ນ 23,04% ຕໍ່ປີ. ລາຍລະອຽດບໍລິມານການຂົນສົ່ງ ດັ່ງຕາຕະລາງລຸ່ມນີ້:

**ບໍລິມາດການຂົນສົ່ງສິນຄ້າ ແລະ ໂດຍສານ**

| ລ/ດ | ປະເພດການຂົນສົ່ງ | ປີ 2021 | ປີ 2022 | ປີ 2023 | |
|---|---|---|---|---|---|
| | | | | 6 ເດືອນຕົ້ນປີ 2023 | ຄາດຄະເນໝົດປີ 2023 |
| I | **ຂົນສົ່ງສິນຄ້າ** (ພັນໂຕນ) | **7.253,8** | **10.029,9** | **6.070,5** | **12.754,0** |
| 1 | ທາງບົກ | 6.931,0 | 7.463,0 | 3.855,8 | 7.520,0 |
| 2 | ທາງນໍ້າ | 268,5 | 325,8 | 114,4 | 380,0 |
| 3 | ທາງອາກາດ | 0,6 | 2,1 | 1,4 | 4,0 |
| 4 | ທາງລາງ (ລົດໄຟ) | 53,7 | 2.239,0 | 2.098,9 | 4.850,0 |
| II | **ຂົນສົ່ງໂດຍສານ** (ພັນເທື່ອຄົນ) | **84.466,0** | **84.567,2** | **44.683,5** | **95.864,0** |
| 1 | ທາງບົກ | 83.217,0 | 81.033,0 | 41.934,6 | 87.500,0 |
| 2 | ທາງນໍ້າ | 978,5 | 1.376,3 | 705,0 | 2.112,0 |
| 3 | ທາງອາກາດ | 229,0 | 758,0 | 676,4 | 2.302,0 |
| 4 | ທາງລາງ (ລົດໄຟ) | 41,5 | 1.399,9 | 1.367,5 | 3.950,0 |

## 1.2 ແຜນວຽກຈຸດສຸມທີ 2: ເສດຖະກິດມະຫາພາກມີຄວາມເຂັ້ມແຂງ ແລະ ໝັ້ນທ່ຽງ

### 1.2.1 ດ້ານການເງິນ

\+ ດ້ານລາຍຮັບ: ໄດ້ສຸມໃສ່ຈັດຕັ້ງປະຕິບັດມາດຕະການຕ່າງໆຕາມ ຄໍາສັ່ງ ເລກທີ 18/ນຍ ວ່າດ້ວຍ ການເພີ້ມທະວີການຄຸ້ມຄອງລາຍຮັບ ແລະ ຕ້ານການຮົ່ວໄຫຼຂອງລາຍຮັບງົບປະມານແຫ່ງລັດ ເປັນຕົ້ນ: (1) ການຫັນເປັນທັນສະໄໝແບບດິຈິຕອນໃນການປັບປຸງຍົກລະດັບວຽກງານລາຍຮັບພາສີ ອັນພົ້ນເດັ່ນແມ່ນການຍົກລະດັບລະບົບ (Lao National Single Windows/ ASYCUDA) ມາເປັນລະບົບດຽວກັບ NSWA+ (ລະບົບແຈ້ງພາສີປະຕູດຽວແຫ່ງຊາດ ອາຊີກູດາພລັສ) ເຊິ່ງໄດ້ເປີດນໍາໃຊ້ເປັນທາງການຢູ່ດ່ານທ່າບົກທ່ານາແລ້ງ; ໄດ້ປັບປຸງວຽກງານຄຸ້ມຄອງລາຍຮັບສ່ວຍສາອາກອນໂດຍຂະຫຍາຍລະບົບ TaxRIS ສໍາເລັດ 100% ກວມເອົາ 17 ແຂວງ ແລະ ນະຄອນຫຼວງວຽງຈັນ, 145 ເມືອງ, 3 ນະຄອນ ແລະ 6 ເຂດເສດຖະກິດພິເສດ; ສໍາເລັດການພັດທະນາລະບົບຄຸ້ມຄອງຈັດເກັບພາສີທີ່ດິນແບບໃໝ່ ຊຶ່ງທົດລອງນໍາໃຊ້ຢູ່ 3 ທະນາຄານ (ທະນາຄານພັດທະນາລາວ, ທະນາຄານຮ່ວມພັດທະນາ ແລະ ທະນາຄານສົ່ງເສີມກະສິກໍາ) ແລະ ກໍາລັງທົດລອງນໍາໃຊ້ ຢູ່ 5 ບ້ານຂອງເມືອງໄຊທານີ; ໄດ້ປັບຫຼຸດຂັ້ນຕອນການແຈ້ງພາສີຂາເຂົ້າຈາກ 4 ຂັ້ນຕອນ ມາເປັນ 3 ຂັ້ນຕອນ ແລະ ສໍາລັບພາສີຂາອອກ ໄດ້ປັບຫຼຸດຈາກ 3 ຂັ້ນຕອນ ມາເປັນ 2 ຂັ້ນຕອນ. (2) ສຸມໃສ່

ວຽກຕ້ານການຮົ່ວໄຫຼລາຍຮັບງົບປະມານແຫ່ງລັດ ໂດຍດັດສົມຜູ້ບໍລິການແຈ້ງພາສີ ແລະ ຜູ້ແຈ້ງພາສີທົ່ວໄປດ້ວຍຫຼາຍຮູບແບບ, ປັບປຸງກົນໄກການເກັບລາຍຮັບ ແລະ ຄຸ້ມຄອງການນໍາເຂົ້າ, ສາງ ແລະ ບັນທຶກການຊື້-ຂາຍນໍ້າມັນເຊື້ອໄຟເຊື່ອມໂຍງກັບລະບົບການຄຸ້ມຄອງເກັບລາຍຮັບສ່ວຍສາອາກອນ TaxRIS. (3) ໄດ້ສະສາງຄະດີທີ່ຜິດກົດໝາຍຕ່າງໆສາມາດເກັບລາຍຮັບໄດ້ 143,69 ຕື້ກີບ (ໄລຍະປີ 2022 ຫາ ເດືອນມີນາ 2023) ແລະ ໄດ້ຈັດຕັ້ງຜັນຂະຫຍາຍຄໍາສັ່ງເລກທີ 20/ນຍ ໃນການແກ້ໄຂລົດນໍາເຂົ້າບໍ່ຖືກຕ້ອງ ຊຶ່ງສາມາດເກັບລາຍຮັບງົບປະມານ ໄດ້ທັງໝົດ 361,36 ຕື້ກີບໃນຈໍານວນທີ່ແກ້ໄຂສໍາເລັດແລ້ວ 22.230 ຄັນ, ຍັງຄ້າງການແກ້ໄຂ ຈໍານວນ 8.245 ຄັນ ໂດຍຈະໄດ້ສືບຕໍ່ຈັດຕັ້ງປະຕິບັດການຂຶ້ນທະບຽນພາຫະນະຕາມຕົວເລກດັ່ງກ່າວ (ຂໍ້ມູນແຕ່ທ້າຍເດືອນຕຸລາ 2021 ຫາ ທ້າຍເດືອນສິງຫາ 2022). (4) ການເກັບລາຍຮັບ (ຖານລາຍຮັບໃໝ່) ຈາກໂຄງການທົດລອງດໍາເນີນທຸລະກິດຊັບສິນດິຈິຕອນ ທັງໝົດ 17 ບໍລິສັດ, ມາຮອດປັດຈຸບັນສາມາດເກັບພັນທະຄ່າລິຂະສິດ ໄດ້ 5,5 ລ້ານໂດລາ (11 ບໍລິສັດ) ແລະ ຄ່າລິຂະສິດເປີດສູນແລກປ່ຽນຊື້ຂາຍ ໄດ້ 2 ລ້ານໂດລາ ແລະພັນທະມອບເໝົາ ໄດ້ 24 ລ້ານໂດລາ. (5) ໄດ້ຂະຫຍາຍຖານລາຍຮັບອາກອນມູນຄ່າເພີ່ມ (ອມພ) ເພີ່ມຂຶ້ນ 25,5%, ອາກອນກໍາໄລ ເພີ່ມຂຶ້ນ 94,4%, ອາກອນລາຍໄດ້ ເພີ່ມຂຶ້ນ 66,4%, ອາກອນຊົມໃຊ້ ເພີ່ມຂຶ້ນ 14,3% ແລະ ຖານອາກອນລາຍໄດ້ອື່ນໆ ເພີ່ມຂຶ້ນ 193,2% (ຕົວເລກແມ່ນທຽບໃສ່ໄລຍະດຽວກັນ). (6) ໃນປີ 2023 ໄດ້ຊຸກຍູ້ ແລະ ຈັດຕັ້ງປະຕິບັດທົດລອງມອບຫົວໜ່ວຍວິສາຫະກິດທີ່ສູນກາງຄຸ້ມຄອງ ຈໍານວນ 101 ຫົວໜ່ວຍ ໃຫ້ແຂວງຄຸ້ມຄອງເອງ ທັງໝົດ 9 ແຂວງ ເປັນມູນຄ່າ 2.420 ຕື້ກີບ ຊຶ່ງມີ 5 ແຂວງທີ່ສາມາດເກີນດຸນ (ຫຼວງພະບາງ, ບໍລິຄໍາໄຊ, ສະຫວັນນະເຂດ, ຄໍາມ່ວນ ແລະ ອັດຕະປື) ແລະ ໄດ້ມອບລາຍຮັບແລ້ວ ເປັນມູນຄ່າ 3.064 ຕື້ກີບ, ເພີ່ມຂຶ້ນ 30,3% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ 2022. (7) ໄດ້ຊຸກຍູ້ການຖືບັນຊີ ໃຫ້ 6.266 ຫົວໜ່ວຍທຸລະກິດ, ເທົ່າກັບ 44% (14.283 ຫົວໜ່ວຍ).

ຜ່ານການຈັດຕັ້ງປະຕິບັດບັນດາມາດຕະການດັ່ງກ່າວ ສາມາດເກັບລາຍຮັບງົບປະມານເພີ່ມຂຶ້ນ ແລະ ລື່ນຄາດໝາຍໃນແຕ່ລະປີ ເຊິ່ງສະແດງອອກດັ່ງນີ້: ປີ 2021 ປະຕິບັດໄດ້ 28.905,03 ຕື້ກີບ, ເທົ່າກັບ 104,62% ຂອງແຜນການປີ; ປີ 2022 ປະຕິບັດໄດ້ 32.540,50 ຕື້ກີບ, ເທົ່າກັບ 103% ຂອງແຜນການປີ ແລະ 06 ເດືອນຕົ້ນປີ 2023 ສາມາດປະຕິບັດໄດ້ 19.258,43 ຕື້ກີບ, ເທົ່າກັບ 50,09% ຂອງແຜນການປີ. ສັງລວມແລ້ວ, ໃນໄລຍະ 2 ປີເຄິ່ງຜ່ານມາ ສາມາດຈັດເກັບລາຍຮັບງົບປະມານ ໄດ້ທັງໝົດ 80.704 ຕື້ກີບ, ເທົ່າກັບ 44,96% ຂອງແຜນການ 5 ປີ ຫຼື ເທົ່າກັບ 16% ຂອງ GDP (ແຜນການ 5ປີ: ໃຫ້ໄດ້ບໍ່ຫຼຸດ 179.500 ຕື້ກີບ ຫຼື ເທົ່າກັບ 17% ຂອງ GDP). ໃນນີ້, ລາຍຮັບພາຍໃນ ປະຕິບັດໄດ້ 52.023 ຕື້ກີບ, ເທົ່າກັບ 31,2% ຂອງແຜນການ 5 ປີ ຫຼື ເທົ່າກັບ 8% ຂອງ GDP (ແຜນການ 5ປີ: ໃຫ້ໄດ້ 166.753 ຕື້ກີບ ຫຼື ເທົ່າກັບ 15,8% ຂອງ GDP).

+ ດ້ານລາຍຈ່າຍ: ໄດ້ສຸມໃສ່ຈັດຕັ້ງປະຕິບັດລາຍຈ່າຍເຂົ້າໃນວຽກງານບູລິມະສິດຂອງລັດຖະບານ ພ້ອມທັງມີການຄຸ້ມຄອງລາຍຈ່າຍຢ່າງຮັດກຸມ ແລະ ປະຢັດມັດທະຍັດ ໂດຍໃຫ້ລາຍຮັບພາຍໃນກຸ້ມລາຍຈ່າຍພາຍໃນ ແລະ ຮັກສາການຂາດດຸນໃຫ້ຢູ່ໃນລະດັບສາມາດຄວບຄຸມໄດ້, ເຊິ່ງສະແດງອອກ ຄື: ປີ 2021 ປະຕິບັດໄດ້ 29.507,44 ຕື້ກີບ, ເທົ່າກັບ 93,43% ຂອງແຜນການປີ; ປີ 2022 ປະຕິບັດໄດ້ 32.281 ຕື້ກີບ, ເທົ່າກັບ 91,19 % ຂອງແຜນການປີ ແລະ 06 ເດືອນຕົ້ນປີ 2023 ປະຕິບັດໄດ້ 13.957,82 ຕື້ກີບ, ເທົ່າກັບ 32,09% ຂອງແຜນການປີ. ສັງລວມແລ້ວ, ໃນໄລຍະ 2 ປີເຄິ່ງຜ່ານມາ ສາມາດປະຕິບັດລາຍຈ່າຍ ໄດ້ທັງໝົດ 75.746 ຕື້ກີບ, ເທົ່າກັບ 39,9% ຂອງແຜນການ 5 ປີ ຫຼື ເທົ່າກັບ 15% ຂອງ GDP (ແຜນການ 5ປີ: ບໍ່ໃຫ້ເກີນ 190.000 ຕື້ກີບ ຫຼື ເທົ່າກັບ 18% ຂອງ GDP).

ນອກຈາກນີ້, ຍັງສຸມໃສ່ການຈັດຕັ້ງປະຕິບັດມາດຕະການປະຢັດ ແລະ ຕ້ານການຟູມເຟືອຍ ຕາມທີ່ໄດ້ກຳນົດໄວ້ໃນວາລະແຫ່ງຊາດ ໂດຍປັບປຸງກົນໄກການປະຕິບັດລາຍຈ່າຍດ້ວຍການເຮັດທົດລອງມອບຄວາມຮັບຜິດຊອບໃຫ້ຜູ້ສັ່ງການຫຼາຍຂຶ້ນ, ຊຶ່ງກະຊວງການເງິນຈະຫັນໄປຄຸ້ມຄອງວຽກງານມະຫາພາກ ເພື່ອຫຼຸດຜ່ອນຂັ້ນຕອນອະນຸມັດ ແລະ ລົງເລິກກວດກາຫຼັງຈ່າຍ; ພ້ອມກັນນັ້ນ, ໄດ້ຫຼຸດການອະນຸມັດລາຍຈ່າຍເງິນເດືອນ, ເງິນນະໂຍບາຍພະນັກງານ-ລັດຖະກອນຈາກຈ່າຍເປັນງວດມາເປັນອະນຸມັດໝົດປີ ແລະ ໄດ້ຈັດຕັ້ງປະຕິບັດແລ້ວ 39 ຂະແໜງການຂັ້ນສູນກາງ; ໄດ້ຈັດຕັ້ງຜັນຂະຫຍາຍດຳລັດວ່າດ້ວຍລົດຂອງລັດ ສະບັບເລກທີ 599/ລບ ໂດຍກວດກາຄືນບັນຊີສະຖິຕິລົດຂອງລັດໃນຂອບເຂດທົ່ວປະເທດ ເຊິ່ງມີລົດທັງໝົດ 39.754 ຄັນ ແລະ ເກັບກຳກວດກາຄືນບັນດາບັນຊີສະຖິຕິລົດຂອງລັດຢູ່ຂັ້ນສູນກາງ ໄດ້ 40 ພາກສ່ວນ ແລະ ໄດ້ປ້ອນຂໍ້ມູນສະຖິຕິລົດຂອງລັດເຂົ້າໃນລະບົບຄຸ້ມຄອງຂໍ້ມູນຊັບສິນແຫ່ງລັດ (AMIS) ສຳເລັດ 39 ພາກສ່ວນ ແລະ ໄດ້ຕິດແຜ່ນກາໝາຍການນຳໃຊ້ລົດຂອງລັດ ແລະ QR code ສຳເລັດ 38 ພາກສ່ວນ ຈຳນວນ 5.987 ຄັນ, ເທົ່າກັບ 93% ຂອງພາຫະນະທັງໝົດຂອງບັນດາກະຊວງຂັ້ນສູງກາງ (ໃນນີ້, ບໍ່ໄດ້ລວມລົດພະນັກງານບຳນານ), ສຳລັບຂັ້ນທ້ອງຖິ່ນໄດ້ສຳເລັດຢູ່ແຂວງວຽງຈັນ ສ່ວນອີກ 16 ແຂວງ ແລະ ນະຄອນຫຼວງວຽງຈັນ ກຳລັງສືບຕໍ່ຈັດຕັ້ງປະຕິບັດການຕິດກາໝາຍ ແລະ ຈະໃຫ້ສຳເລັດໃນທ້າຍປີ 2023; ນອກນັ້ນ, ໄດ້ຈັດຕັ້ງປະຕິບັດປະມູນລົດເກົ່າທີ່ບໍ່ສາມາດນຳໃຊ້ໄດ້ແລ້ວ ມີຈຳນວນ 154 ຄັນ (ລົດໃຫຍ່ 124 ຄັນ).

ສຳລັບການຄຸ້ມຄອງ ແລະ ແກ້ໄຂໜີ້ສິນໂຄງການລົງທຶນລັດ (ໜີ້ສິນພາຍໃນ) ແມ່ນສຸມໃສ່ການແກ້ໄຂໜີ້ສິນໂດຍຈັດສັນໃນຮ່ວງປົກກະຕິໃນແຕ່ລະປີ ແລະ ດ້ວຍການຊຳລະໜີ້ສິນຮູບແບບອ່າຍໜີ້ສາມແຈ, ດ້ວຍການອອກພັນທະບັດລັດຖະບານໃນແຕ່ລະໄລຍະ. ໃນປີ 2021 ໄດ້ແກ້ໄຂໜີ້ສິນລົງທຶນຂອງລັດດ້ວຍງົບປະມານປົກກະຕິ ຈຳນວນ 148,65 ຕື້ກີບ. ໃນປີ 2022 ແມ່ນໄດ້ແກ້ໄຂໜີ້ສິນໂຄງການລົງທຶນຂອງລັດ ດ້ວຍງົບປະມານປົກກະຕິ ຈຳນວນ 532,65 ຕື້ກີບ, ໃນນີ້: ໄດ້ສຸມໃສ່ແກ້ໄຂໜີ້ສິນທີ່ມີມູນຄ່າຄ້າງຊຳລະ ຈຳນວນ 300 ລ້ານກີບລົງມາ. ໃນປີ 2023 ໄດ້ແກ້ໄຂໜີ້ສິນໂຄງການລົງທຶນຂອງລັດ ດ້ວຍງົບປະມານປົກກະຕິ ຈຳນວນ 890,82 ຕື້ກີບ; ໄດ້ແກ້ໄຂໜີ້ສິນໂຄງການລົງທຶນຂອງລັດດ້ວຍຮູບແບບອ່າຍໜີ້ 3 ແຈ ເຊິ່ງປີ 2021 ແລະ ປີ 2022 ຈຳນວນທັງໝົດ 10.000 ຕື້ກີບ ແລະ ປີ 2023 ໄດ້ຄົ້ນຄວ້າສະເໜີສະພາແຫ່ງຊາດພິຈາລະນາແກ້ໄຂເພີ່ມຕື່ມ ຈຳນວນ 8.000 ຕື້ກີບ, ຊຶ່ງປັດຈຸບັນແມ່ນກຳລັງຢູ່ໃນຂັ້ນຕອນການກວດກາຄວາມຖືກຕ້ອງຂອງເອກະສານຕາມການສະເໜີຂອງບັນດາຂະແໜງການ ແລະ ທ້ອງຖິ່ນ; ໄດ້ຄົ້ນຄວ້ານະໂຍບາຍການແກ້ໄຂໜີ້ສິນໂຄງການລົງທຶນຂອງລັດດ້ວຍຮູບແບບຕ່າງໆ ເຊັ່ນ: ການຊຳລະໜີ້ໂຄງການລົງທຶນຂອງລັດ ດ້ວຍຮູບແບບການຫັນໜີ້ເປັນທຶນ ຊຶ່ງປັດຈຸບັນສຳເລັດຮ່າງຄົ້ນຄວ້າເບື້ອງຕົ້ນ ແລະ ປະຊຸມປຶກສາລືກັບພາກສ່ວນກ່ຽວຂ້ອງ.

\+ <u>ດຸນງົບປະມານ</u>: ການຂາດດຸນງົບປະມານ ໄດ້ຫຼຸດລົງເທື່ອລະກ້າວ ຊຶ່ງໃນປີ 2021 ຂາດດຸນຢູ່ໃນລະດັບ 602,41 ຕື້ກີບ ຫຼື ເທົ່າກັບ -0,33% ຂອງ GDP; ປີ 2022 ເກີນດຸນຢູ່ໃນລະດັບ 260 ຕື້ກີບ ຫຼື ເທົ່າກັບ 0,12% ຂອງ GDP ແລະ 06 ເດືອນຕົ້ນປີ 2023 ເກີນດຸນ 5.300,61 ຕື້ກີບ ຫຼື ເທົ່າກັບ 0,02% ຂອງ GDP. ສັງລວມແລ້ວ, ໃນໄລຍະ 2 ປີເຄິ່ງດຸນງົບປະມານ ເກີນດຸນ 4.958 ຕື້ກີບ ຫຼື ເທົ່າກັບ 0,46% ຂອງ GDP (ແຜນການ 5ປີ: ຂາດດຸນສະເລ່ຍ 10.500 ຕື້ກີບ, ເທົ່າກັບ 1% ຂອງ GDP ຫຼື ສູງສຸດບໍ່ໃຫ້ເກີນ 2% ຂອງ GDP).

<u>ສິ່ງທ້າທາຍ</u>: ໃນໄລຍະ 2 ປີເຄິ່ງຜ່ານມາ ລັດຖະບານໄດ້ສຸມໃສ່ປັບປຸງກົນໄກການຄຸ້ມຄອງງົບປະມານໃຫ້ມີປະສິດທິພາບສູງຂຶ້ນກວ່າເກົ່າ ເຊິ່ງເຮັດໃຫ້ການຂາດດຸນງົບປະມານມີທ່າອ່ຽງຫຼຸດລົງ ແລະ ໃນປີ 2022 ແມ່ນສາມາດເກີນດຸນງົບປະມານ ເຮັດສາມາດມີສ່ວນແຮໄວ້ ແລະ ມີທຶນຮອນໄປໃຊ້ຈ່າຍໃສ່ວຽກງານບູລິມະສິດຂອງລັດຖະບານ. ແຕ່ເຖິງແນວໃດກໍຕາມ, ຍັງມີບາງວຽກງານທີ່ເປັນສິ່ງທ້າທາຍທີ່ຈະຕ້ອງໄດ້ສືບຕໍ່ແກ້ໄຂໃນຕໍ່ໜ້າ ໂດຍສະເພາະການຫັນເປັນທັນສະໄໝຍັງມີຄວາມຊັກຊ້າ, ການເກັບລາຍຮັບຍັງບໍ່ທັນສົມຄູ່ກັບທ່າແຮງທີ່ມີ ແລະ ການປະຕິບັດວິໄນແຜນການ ແລະ ການເງິນຍັງບໍ່ທັນເຂັ້ມງວດ.

**1.2.2 ດ້ານເງິນຕາ**[3]

ໃນໄລຍະເຄິ່ງສະໄໝຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ທ່າມກາງສະຖານະພາບເສດຖະກິດຂອງໂລກທີ່ມີການປ່ຽນແປງ, ເສດຖະກິດ ສປປ ລາວ ກໍປະເຊີນກັບສິ່ງທ້າທາຍຫຼາຍດ້ານເປັນຕົ້ນ: ຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19, ຂໍ້ຂັດແຍ່ງດ້ານການເມືອງ ແລະ ບັນຫາການເພີ່ມຂຶ້ນຂອງອັດຕາເງິນເຟີ້ທັງພາຍໃນ ແລະ ສາກົນ; ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດຕັ້ງປະຕິບັດນະໂຍບາຍເງິນຕາແບບປະສົມປະສານ ບາງໄລຍະຜ່ອນຄາຍ ແລະ ບາງໄລຍະກໍຮັດກຸມ ເພື່ອຮັກສາສະຖຽນລະພາບດ້ານເງິນຕາໃຫ້ໝັ້ນທ່ຽງ ສະແດງອອກຄື: ① <u>ໄລຍະທີ 1</u>: ນັບແຕ່ຕົ້ນປີ 2021 ຮອດກາງປີ 2022 ຊ່ວງໄລຍະການລະບາດຂອງພະຍາດໂຄວິດ-19 ທີ່ມີການປິດປະເທດ ແລະ ກິດຈະກຳເສດຖະກິດແມ່ນຢຸດນິ້ງ, ທຫລ ໄດ້ດຳເນີນນະໂຍບາຍເງິນຕາແບບຜ່ອນຄາຍ ດ້ວຍການສືບຕໍ່ຮັກສາອັດຕາດອກເບ້ຍພື້ນຖານ ໃນລະດັບ 3%; ປັບຫຼຸດອັດຕາສ່ວນເງິນແຮຝາກບັງຄັບ ຈາກ 4% ໃນປີ 2020 ມາເປັນ 3% ໃນປີ 2021 ສຳລັບເງິນກີບ ແລະ 8% ໃນປີ 2020 ມາເປັນ 5% ໃນປີ 2021 ສຳລັບເງິນຕາຕ່າງປະເທດ, ລວມທັງໄດ້ສືບຕໍ່ຊຸກຍູ້ ແລະ ພັດທະນາຕະຫຼາດເປີດໃຫ້ເຄື່ອນໄຫວແຂງແຮງຂຶ້ນ. ຄຽງຄູ່ກັນນັ້ນ, ໄດ້ປະກອບສ່ວນປະຕິບັດການແກ້ໄຂບັນຫາໜີ້ໂຄງການລົງທຶນຂອງລັດ ດ້ວຍຮູບການອ່າຍໜີ້ 3 ແຈ ໂດຍໄດ້ຮັບຊື້ພັນທະບັດບ້ວງອ່າຍໜີ້ 3 ແຈ ຈຳນວນໜຶ່ງ ເພື່ອຊ່ວຍເພີ່ມສະພາບຄ່ອງໃຫ້ແກ່ທະນາຄານທຸລະກິດ ແລະ ສ້າງເງື່ອນໄຂໃຫ້ທະນາຄານທຸລະກິດ ສາມາດສະໜອງສິນເຊື່ອໃຫ້ພາກສ່ວນເສດຖະກິດໄດ້ຫຼາຍຂຶ້ນ; ໄດ້ອອກນະໂຍບາຍສິນເຊື່ອເພື່ອຊ່ວຍບັນເທົາຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ກະຕຸ້ນການຟື້ນຕົວຂອງເສດຖະກິດ; ພ້ອມນັ້ນ, ກໍໄດ້ສືບຕໍ່ປະຕິບັດນະໂຍບາຍອັດຕາແລກປ່ຽນຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດໃນທິດທາງຢືດຢຸ່ນຂຶ້ນ ໂດຍຂະຫຍາຍຂອບການກຳນົດອັດຕາແລກປ່ຽນທຽບກັບອັດຕາແລກປ່ຽນອ້າງອີງຂອງ ທຫລ ຈາກລະດັບ ±0,25% ມາເປັນ ±1,5%; ແລະ ② <u>ໄລຍະທີ 2</u>: ເລີ່ມໄລຍະກາງປີ 2022 ເປັນຕົ້ນມາ ພາຍຫຼັງການແຜ່ລະບາດພະຍາດໂຄວິດ-19 ຜ່ອນຄາຍລົງ, ທຫລ ຈຶ່ງໄດ້ຫັນທິດທາງການດຳເນີນນະໂຍບາຍເງິນຕາຈາກຜ່ອນຄາຍມາເປັນຮັດກຸມ ໂດຍໄດ້ປັບເພີ່ມອັດຕາດອກເບ້ຍພື້ນຖານຂອງ ທຫລ ສະກຸນເງິນກີບ ໄລຍະສັ້ນບໍ່ເກີນ 7 ວັນ ຈຳນວນ 3 ຄັ້ງ ຈາກ 3%/ປີ ເປັນ 7,5%/ປີ; ປັບເພີ່ມອັດຕາສ່ວນເງິນແຮຝາກບັງຄັບ 3 ຄັ້ງ ຄື: ຈາກ 3% ເປັນ 8% ສຳລັບສະກຸນເງິນກີບ ແລະ ຈາກ 5% ມາເປັນ 10% ສຳລັບສະກຸນເງິນຕາຕ່າງປະເທດ; ໄດ້ສືບຕໍ່ຊຸກຍູ້ ແລະ ພັດທະນາຕະຫຼາດເປີດໃຫ້ເຄື່ອນໄຫວແຂງແຮງຂຶ້ນ ໂດຍອອກ ແລະ ຈຳໜ່າຍພັນທະບັດ ທຫລ ແລະ ພັນທະບັດກະຊວງການເງິນ; ຄຽງຄູ່ກັບການອອກ ແລະ ຈຳໜ່າຍພັນທະບັດ ທຫລ ໄລຍະສັ້ນ ໃຫ້ກັບມວນຊົນ ຈຳນວນທັງໝົດ 9.000 ຕື້ກີບ; ພ້ອມນັ້ນ, ກໍໄດ້ສືບຕໍ່ປະຕິບັດນະໂຍບາຍອັດຕາແລກປ່ຽນຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດໃນທິດທາງຢືດຢຸ່ນຂຶ້ນກວ່າເກົ່າ ໂດຍໄດ້ຂະຫຍາຍຂອບການກຳນົດອັດຕາແລກປ່ຽນທຽບກັບອັດຕາແລກປ່ຽນອ້າງອີງຂອງ ທຫລ ຈາກລະດັບ ±1,5% ມາເປັນ ±7,5%; ຄຽງຄູ່ກັນນັ້ນ, ເພື່ອຫຼຸດຜ່ອນແຮງກົດດັນການຜັນຜວນຂອງອັດຕາແລກປ່ຽນ ແລະ ສ້າງຄວາມສົມດຸນເງິນຕາຕ່າງປະເທດໃນລະບົບເສດຖະກິດພາຍໃນ, ທຫລ ໄດ້ປັບປຸງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 15/ສພຊ ແລະ ໄດ້ຜັນຂະຫຍາຍອອກເປັນນິຕິກຳໃຕ້ກົດໝາຍ, ສ້າງຕັ້ງກົມຄຸ້ມຄອງເງິນຕາຕ່າງປະເທດ, ສ້າງຕັ້ງຫ້ອງການຕົວແທນ ທຫລ ປະຈຳເຂດເສດຖະກິດພິເສດບໍ່ເຕ່ນ ແລະ ສາມຫຼ່ຽມຄຳ ເພື່ອຈັດຕັ້ງປະຕິບັດວຽກງານຄຸ້ມຄອງເງິນຕາຕ່າງປະເທດ; ຊຸກຍູ້ສົ່ງເສີມການນຳໃຊ້ເງິນກີບ, ການຄຸ້ມຄອງກະແສເງິນເຂົ້າ-ອອກປະເທດຈາກການຄ້າ, ການບໍລິການ ແລະ ການລົງທຶນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ. ນອກຈາກນີ້, ກໍໄດ້ຄົ້ນຄວ້າ ແລະ

---

[3] ມະຕິສະພາແຫ່ງຊາດ ເລກທີ 119/ສພຊ, ລົງວັນທີ 21 ພະຈິກ 2023 ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ກາງສະໄໝ (2021-2025) ແລະ ທິດທາງແຜນການທ້າຍສະໄໝ ຮອດປີ 2025; ການສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານ ປະຈຳປີ 2022, ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ປະຈຳປີ 2023 ແລະ ແຜນເງິນຕາ ປະຈຳປີ 2024.

ປະຕິບັດນະໂຍບາຍສະເພາະຂອງລັດຖະບານ ເປັນຕົ້ນ: ນະໂຍບາຍສິນເຊື່ອເພື່ອກະຕຸ້ນເສດຖະກິດ, ນະໂຍບາຍສິນເຊື່ອເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ ແລະ ນະໂຍບາຍສິນເຊື່ອສົ່ງເສີມ SMEs ໃນອັດຕາດອກເບ້ຍຕໍ່າ ແລະ ໄດ້ປະຕິບັດຕາມນະໂຍບາຍແກ້ໄຂຄວາມທຸກຍາກຂອງປະຊາຊົນຢູ່ເຂດຊົນນະບົດ ໂດຍການປ່ອຍສິນເຊື່ອຜ່ານທະນາຄານນະໂຍບາຍ ແລະໄດ້ສືບຕໍ່ສົ່ງເສີມ ແລະ ພັດທະນາສະຖາບັນການເງິນ ສາມາດສະໜອງການບໍລິການທາງການເງິນ-ທະນາຄານໃຫ້ທັນສະໄໝ, ມີຄວາມຫຼາກຫຼາຍ, ທັນສະພາບ ແລະ ຕອບສະໜອງໄດ້ຄວາມຕ້ອງການຂອງສັງຄົມ. ນອກຈາກນີ້, ໄດ້ສົມທົບກັບພາກສ່ວນກ່ຽວຂ້ອງເອົາໃຈໃສ່ຕິດຕາມ ແລະ ຄຸ້ມຄອງລາຄາສິນຄ້າຕາມທ້ອງຕະຫຼາດ ເພື່ອບໍ່ໃຫ້ພໍ່ຄ້າຂຶ້ນລາຄາຕາມລໍາພັງໃຈ ຜ່ານການຈັດຕັ້ງປະຕິບັດມາດຕະການຕ່າງໆທີ່ກ່າວມາຂ້າງເທິງນັ້ນແມ່ນມີຜົນໄດ້ຮັບ ດັ່ງນີ້:

+ ການຄວບຄຸມປະລິມານເງິນ M2: ໃນໄລຍະ 2 ປີເຄິ່ງ ຂະຫຍາຍຕົວສະເລ່ຍຢູ່ໃນລະດັບ 27,58%; ໃນນີ້: ປີ 2021 ເພີ່ມຂຶ້ນ 23,98% ທຽບໃສ່ປີຜ່ານມາ, ປີ 2022 ເພີ່ມຂຶ້ນ 36,85% ເມື່ອທຽບໃສ່ປີຜ່ານມາ ແລະ 6 ເດືອນ 2023 ຢູ່ໃນລະດັບ 27,46% ທຽບ 6 ເດືອນຕົ້ນປີ 2022 (ແຜນການ 5 ປີ: ຂະຫຍາຍຕົວບໍ່ເກີນ 20% ຕໍ່ປີ).

+ ອັດຕາແລກປ່ຽນທົ່ວລະບົບທະນາຄານທຸລະກິດ: ໃນໄລຍະ 2 ປີເຄິ່ງ ເງິນກີບທຽບກັບເງິນໂດລາສະຫະລັດ ອ່ອນຄ່າສະເລ່ຍ 18,32% ແລະ ເງິນກີບທຽບເງິນບາດ ອ່ອນຄ່າສະເລ່ຍ 15,44%; ໃນນີ້: ປີ 2021 ເງິນກີບທຽບກັບເງິນໂດລາສະຫະລັດ ອ່ອນຄ່າສະເລ່ຍ 7,09% ແລະ ເງິນກີບທຽບເງິນບາດ ອ່ອນຄ່າສະເລ່ຍ 8% ເມື່ອທຽບກັບເງິນບາດ; ປີ 2022 ເງິນກີບທຽບກັບເງິນໂດລາສະຫະລັດ ອ່ອນຄ່າສະເລ່ຍ 31,98% ແລະ ເງິນກີບທຽບເງິນບາດ ອ່ອນຄ່າສະເລ່ຍ 21,97% ແລະ 6 ເດືອນຕົ້ນປີ 2023 ເງິນກີບທຽບກັບເງິນໂດລາສະຫະລັດ ອ່ອນຄ່າສະເລ່ຍ 17,28% ແລະ ເງິນກີບທຽບເງິນບາດ ອ່ອນຄ່າສະເລ່ຍ 16,04% (ແຜນການ 5ປີ: ເໜັງຕີງໃນຂອບ ±5%) ເຫັນວ່າເງິນກີບທຽບໃສ່ສະກຸນເງິນຫຼັກມີທ່າອ່ຽງອ່ອນຄ່າລົງ ສາເຫດສ່ວນໜຶ່ງແມ່ນຍ້ອນການແຂງຄ່າຂອງເງິນສະກຸນຫຼັກຢູ່ຕະຫຼາດສາກົນ ແລະ ສະພາບຄວາມຕ້ອງການເງິນຕາຕ່າງປະເທດຢູ່ພາຍໃນທີ່ຍັງມີສູງ ໃນຂະນະທີ່ແຫຼ່ງລາຍຮັບທີ່ເປັນເງິນຕາຕ່າງປະເທດແມ່ນຍັງມີຢ່າງຈໍາກັດ ເຮັດໃຫ້ເກີດຄວາມບໍ່ສົມດຸນຂອງເງິນຕາຕ່າງປະເທດ.

+ ອັດຕາເງິນເຟີ້: ໃນໄລຍະ 2 ປີເຄິ່ງ ສະເລ່ຍຢູ່ໃນລະດັບ 18,25% (ມະຕິສະພາ: ສະເລ່ຍບໍ່ເກີນ 6%) ສູງກວ່າຂອບແຜນກໍານົດໄວ້; ໃນນີ້: ປີ 2021 ສະເລ່ຍເພີ່ມຂຶ້ນ 3,75%, ໃນປີ 2022 ສະເລ່ຍເພີ່ມຂຶ້ນ 22,96% ແລະ ໃນ 6 ເດືອນຕົ້ນປີ 2023 ສະເລ່ຍເພີ່ມຂຶ້ນ 38,06%, ຊຶ່ງເຫັນວ່າອັດຕາເງິນເຟີ້ໃນແຕ່ລະປີ ມີທ່າອ່ຽງເພີ່ມຂຶ້ນ. ໝວດລາຄາສິນຄ້າທີ່ເພີ່ມຂຶ້ນສູງກວ່າໝູ່ແມ່ນ ໝວດຄົມມະນາຄົມ ແລະ ການຂົນສົ່ງ ສະເລ່ຍຢູ່ໃນລະດັບ 26,89%, ໝວດອາຫານ ແລະ ເຄື່ອງດື່ມບໍ່ມີທາດເຫຼົ້າ ສະເລ່ຍຢູ່ໃນລະດັບ 24,70% ແລະ ໝວດຮັກສາສຸຂະພາບ ແລະ ຢາ ສະເລ່ຍຢູ່ໃນລະດັບ 23,53%. ສາເຫດທີ່ເຮັດໃຫ້ເງິນເຟີ້ເພີ່ມຂຶ້ນສູງແມ່ນມາຈາກທັງປັດໄຈພາຍນອກ ແລະ ພາຍໃນ ເປັນຕົ້ນ: ການເພີ່ມຂຶ້ນສູງຂອງລາຄາປັດໄຈການຜະລິດ ໂດຍສະເພາະສິນຄ້າກຸ່ມພະລັງງານເຮັດໃຫ້ເກີດພາວະອັດຕາເງິນເຟີ້ຢູ່ປະເທດຄູ່ຄ້າສໍາຄັນ ບວກກັບ ຫຼາຍປະເທດດໍາເນີນນະໂຍບາຍເງິນຕາແບບຮັດກຸມສົ່ງຜົນໃຫ້ຕະຫຼາດເງິນຕາຕ່າງປະເທດໃນສາກົນຜັນຜວນ ແລະ ກະທົບຕໍ່ອັດຕາແລກປ່ຽນເງິນກີບຢ່າງຫຼີກລ່ຽງບໍ່ໄດ້ ສົມທົບກັບສະພາບພາຍໃນທີ່ຍັງບໍ່ມີຄວາມສົມດຸນຂອງຄວາມຕ້ອງການ ແລະການສະໜອງເງິນຕາຕ່າງປະເທດ, ຄັງສໍາຮອງເງິນຕາຕ່າງປະເທດຍັງຢູ່ໃນລະດັບຈໍາກັດ, ການຜະລິດພາຍໃນຍັງບໍ່ເຂັ້ມແຂງ ແລະ ການຄຸ້ມຄອງເງິນຕາຕ່າງປະເທດຍັງບໍ່ທັນຮັດກຸມເທົ່າທີ່ຄວນ.

| ລ/ດ | ໝວດສິນຄ້າ | 2021 | 2022 | 6 ເດືອນຕົ້ນປີ 2023 | ສະເລ່ຍ |
|---|---|---|---|---|---|
| 1 | ໝວດອາຫານ ແລະ ເຄື່ອງດື່ມບໍ່ມີທາດເຫຼົ້າ | 3,01 | 22,02 | 49,07 | 24,70 |
| 2 | ໝວດເຫຼົ້າ ແລະ ຢາສູບ | 4,46 | 14,21 | 25,53 | 14,73 |
| 3 | ໝວດເຄື່ອງນຸ່ງຫົ່ມ ແລະ ເກີບ | 3,86 | 16,26 | 25,12 | 15,08 |
| 4 | ໝວດທີ່ພັກອາໄສ, ນໍ້າປະປາ, ໄຟຟ້າ ແລະ ເຊື້ອເພີງຫຸງຕົ້ມ | 3,03 | 16,44 | 24,83 | 14,77 |
| 5 | ໝວດເຄື່ອງໃຊ້ໃນເຮືອນ | 3,78 | 18,66 | 32,86 | 18,43 |
| 6 | ໝວດຮັກສາສຸຂະພາບ ແລະ ຢາ | 4,19 | 27,63 | 38,77 | 23,53 |
| 7 | ໝວດຄົມມະນາຄົມ ແລະ ການຂົນສົ່ງ | 6,42 | 41,28 | 32,97 | 26,89 |
| 8 | ໝວດໄປສະນີ ແລະ ໂທລະຄົມມະນາຄົມ | 4,23 | 7,69 | 12,93 | 8,28 |
| 9 | ໝວດການບັນເທີງ ແລະ ການພັກຜ່ອນ | 1,18 | 10,73 | 20,89 | 10,93 |
| 10 | ໝວດການສຶກສາ | 0,52 | 6,45 | 12,07 | 6,35 |
| 11 | ໝວດຮ້ານອາຫານ ແລະ ໂຮງແຮມ | 3,15 | 18,82 | 35,21 | 19,06 |
| 12 | ໝວດສິນຄ້າ ແລະ ການບໍລິການອື່ນໆ | 8,08 | 21,28 | 20,78 | 16,71 |
| **ດັດຊະນີລາຄາການຊົມໃຊ້ລວມ** | | **3,75** | **22,96** | **38,06** | **18,25** |

+ ຄັງສຳຮອງເງິນຕາຕ່າງປະເທດ: ໃນໄລຍະ 2 ປີເຄິ່ງ ສາມາດກຸ້ມການນຳເຂົ້າໄດ້ 3,67 ເດືອນ; ໃນນີ້: ປີ 2021 ສາມາດກຸ້ມການນຳເຂົ້າໄດ້ 5,32 ເດືອນ; ປີ 2022 ສາມາດກຸ້ມການນຳເຂົ້າໄດ້ 4,14 ເດືອນ ແລະ ໃນໄລຍະ 6 ເດືອນຕົ້ນປີ 2023 ສາມາດກຸ້ມການນຳເຂົ້າໄດ້ 5,33 ເດືອນ (ແຜນການ 5ປີ: ໃຫ້ສາມາດກຸ້ມການນຳເຂົ້າໄດ້ຢ່າງໜ້ອຍ 3 ເດືອນ).

+ ຍອດເຫຼືອເງິນຝາກຂອງທະນາຄານທຸລະກິດ: ໃນໄລຍະ 2 ປີເຄິ່ງ ກວມເອົາ 89,21% ຂອງ GDP; ໃນນີ້: ປີ 2021 ໄດ້ເພີ່ມຂຶ້ນ 25,2% ທຽບໄລຍະດຽວກັນຂອງປີຜ່ານມາ ຫຼື ກວມເອົາ 75,5% ຂອງ GDP, ປີ 2022 ເພີ່ມຂຶ້ນ 40,63% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ຫຼື ກວມເອົາ 91,08% ຂອງ GDP ແລະ ໃນໄລຍະ 6 ເດືອນຕົ້ນປີ 2023 ກວມເອົາ 85,58% ຂອງ GDP (ແຜນການ 5ປີ: ໃຫ້ຢູ່ໃນລະດັບ 60% ຂອງ GDP).

+ ຍອດເຫຼືອສິນເຊື່ອຂອງທະນາຄານທຸລະກິດ: ໃນໄລຍະ 2 ປີເຄິ່ງ ກວມເອົາ 60,44% ຂອງ GDP; ໃນນີ້: ປີ 2021 ໄດ້ເພີ່ມຂຶ້ນ 11,51% ທຽບໄລຍະດຽວກັນຂອງປີຜ່ານມາ ຫຼື ກວມເອົາ 50,93% ຂອງ GDP, ໃນປີ 2022 ເພີ່ມຂຶ້ນ 45,63% ທຽບໃສ່ປີຜ່ານມາ ຫຼື ກວມເອົາ 63,63% ຂອງ GDP ແລະ ໃນໄລຍະ 6 ເດືອນຕົ້ນປີ 2023 ກວມເອົາ 57,98% ຂອງ GDP (ແຜນການ 5ປີ: ໃຫ້ຢູ່ໃນລະດັບ 49% ຂອງ GDP).

+ ການຄວບຄຸມອັດຕາສ່ວນໜີ້ບໍ່ເກີດດອກອອກຜົນ (NPLs) ຂອງທົ່ວລະບົບທະນາຄານ: ໃນໄລຍະ 2 ປີເຄິ່ງ ຢູ່ໃນລະດັບ 1,91%; ໃນນີ້: ປີ 2021 ຢູ່ໃນລະດັບ 2,18%, ໃນປີ 2022 ຢູ່ໃນລະດັບ 2,16% ແລະ ໃນໄລຍະ 6 ເດືອນຕົ້ນປີ 2023 ຢູ່ໃນລະດັບ 1,91% (ແຜນການ 5ປີ: ສະເລ່ຍຢູ່ໃນລະດັບບໍ່ເກີນ 3% ຂອງຍອດສິນເຊື່ອທັງໝົດ).

<u>ສິ່ງທ້າທາຍ</u>: ເຖິງແມ່ນວ່າໄດ້ມີຄວາມພະຍາຍາມແກ້ໄຂບັນຫາຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແຕ່ເສດຖະກິດມະຫາພາກຍັງບໍ່ມີຄວາມສະຖຽນລະພາບ ເນື່ອງຈາກຫຼາຍປັດໄຈພາຍນອກກະທົບ ເປັນຕົ້ນ: ອັດຕາເງິນເຟີ້ທີ່ມີທ່າອ່ຽງເພີ່ມຂຶ້ນ, ອັດຕາແລກປ່ຽນມີການເໜັງຕີງສູງເກີນຂອບແຜນການກຳນົດ, ເງິນກີບອ່ອນຄ່າ ແລະ ການສະສົມໜີ້ສາທາລະນະສູງ ແລະ ການເກັບລາຍຮັບງົບປະມານຕໍ່າໄດ້ສ້າງຄວາມບໍ່ສົມດຸນໃຫ້ເສດຖະກິດມະຫາພາກຢ່າງຕໍ່ເນື່ອງ ເຊິ່ງໄດ້ເປັນສິ່ງທ້າທາຍໃນການຄຸ້ມຄອງເສດຖະກິດມະຫາພາກ ລວມທັງສິ່ງຜົນກະທົບຕໍ່ກັບຊີວິດການເປັນຢູ່ຂອງປະຊາຊົນ ໂດຍສະເພາະຄ່າຄອງຊີບທີ່ສູງຂຶ້ນ, ລາຍຮັບຄົວເຮືອນຫຼຸດລົງ ແລະ ຜູ້ບໍລິໂພກມີກຳລັງຊື້ຫຼຸດລົງ[4]. ໂດຍລວມເຫັນວ່າການ

[4] Restoring Macroeconomic Stability and Accelerating Growth (Revenue and Spending): Public Finance Review, World Bank, September 2023. The report covers: (i) macroeconomic performance; (ii) revenue mobilization; (iii) public expenditure; (iv) state-owned enterprises; and (v) public-private partnerships.

ເກັບລາຍຮັບງົບປະມານທຽບໃສ່ GDP ແມ່ນຍັງຕໍ່າ ຖ້າທຽບໃສ່ບັນດາປະເທດທີ່ມີລະດັບເສດຖະກິດໃກ້ຄຽງກັນ; ການເກັບລາຍຮັບສ່ວນໃຫຍ່ ແມ່ນອີງໃສ່ອາກອນທາງອ້ອມ ສ່ວນການເກັບອາກອນລາຍໄດ້ບຸກຄົນແມ່ນຍັງໜ້ອຍ. ອັດຕາການເກັບອາກອນທີ່ຕໍ່າ ແລະ ການຍົກເວັ້ນອາກອນ ໄດ້ສົ່ງຜົນກະທົບຕໍ່ລາຍຮັບລວມໃນໄລຍະ 10 ປີຜ່ານມາ (ຊ່ອງຫວ່າງອາກອນລາຍໄດ້ຂອງພາກທຸລະກິດ ຄາດວ່າ 90%); ໃນປີ 2022 ໄລຍະການແຜ່ລະບາດຂອງພະຍາດໂຄວິດ-19 ໄດ້ດໍາເນີນນະໂຍບາຍປັບຫຼຸດອາກອນມູນຄ່າເພີ່ມ ຈາກອັດຕາ 10% ມາເປັນ 7% ແລະ ຍົກເວັ້ນອາກອນນໍ້າມັນເຊື້ອໄຟ ຊຶ່ງສົ່ງຜົນກະທົບຫຼາຍຕໍ່ລາຍຮັບງົບປະມານລວມຫຼຸດລົງ ເຖິງແມ່ນວ່າລາຄາສິນຄ້າ ແລະ ບໍລິການຈະສູງຂຶ້ນ; ການປັບຫຼຸດອາກອນມູນຄ່າເພີ່ມ ໄດ້ເຮັດໃຫ້ລັດຖະບານສູນເສຍລາຍຮັບງົບປະມານ ປະມານ 1% ຂອງ GDP ໃນປີ 2022 ແຕ່ກໍສາມາດເພີ່ມຖານອາກອນມູນຄ່າເພີ່ມຂຶ້ນຫຼາຍສົມຄວນ; ການໃຫ້ນະໂຍບາຍອາກອນນໍ້າມັນເຊື້ອໄຟ ເພື່ອຫຼຸດຜ່ອນພາລະໃຊ້ຈ່າຍໃຫ້ກັບປະຊາຊົນ ໄດ້ສົ່ງຜົນກະທົບໃສ່ລາຍຮັບທີ່ເປັນເງິນຕາຕ່າງປະເທດຢ່າງຫຼວງຫຼາຍ (ຄາດຄະເນ 160 ລ້ານໂດລາສະຫະລັດໃນລະຫວ່າງປີ 2022 ຫາ 2023). ສະນັ້ນ ຄວນມີການປັບປຸງນະໂຍບາຍການເກັບອາກອນ ແລະ ການປະຕິຮູບການຄຸ້ມຄອງການເກັບອາກອນ; ການໃຊ້ຈ່າຍສາທາລະນະແມ່ນຫຼຸດລົງ ເມື່ອທຽບໃສ່ GDP ແລະ ເປັນອັດຕາທີ່ຕໍ່າກວ່າມາດຖານສາກົນ ເນື່ອງມາຈາກການເກັບລາຍຮັບຫຼຸດລົງ. ລັດຖະບານໄດ້ມີການຫຼຸດຜ່ອນລາຍຈ່າຍໃນຫຼາຍຂົງເຂດ ເພື່ອຄວບຄຸມການຂາດດຸນງົບປະມານ ອັນເຮັດໃຫ້ການບໍລິການສາທາລະນະຂອງພາກລັດ ທັງດ້ານປະລິມານ ແລະ ຄຸນນະພາບ ບໍ່ທົ່ວເຖິງ.

### 1.2.3 ດ້ານການສົ່ງອອກ-ນໍາເຂົ້າສິນຄ້າ

ໃນໄລຍະ 2 ປີເຄິ່ງຜ່ານມາ, ມູນຄ່າການຄ້າຕ່າງປະເທດ ບັນລຸໄດ້ 35.828,51 ລ້ານໂດລາສະຫະລັດ; ໃນນີ້, ມູນຄ່າການສົ່ງອອກ ປະຕິບັດໄດ້ 19.885,35 ລ້ານໂດລາສະຫະລັດ ຫຼື ເທົ່າກັບ 52,27% ຂອງແຜນການ (ແຜນການ 5ປີ: 38.043,5 ລ້ານໂດລາສະຫະລັດ), ມູນຄ່າການນໍາເຂົ້າ ປະຕິບັດໄດ້ 15.943,16 ລ້ານໂດລາສະຫະລັດ ຫຼື ເທົ່າກັບ 48,42% ຂອງແຜນການ (ແຜນການ 5ປີ: 32.927,3 ລ້ານໂດລາສະຫະລັດ), ເກີນດຸນການຄ້າ 3.942,20 ລ້ານໂດລາສະຫະລັດ (ແຜນການ 5ປີ: 5.116,20 ລ້ານໂດລາສະຫະລັດ). ສິນຄ້າສົ່ງອອກຕົ້ນຕໍຂອງ ສປປ ລາວ ແມ່ນ: ໄຟຟ້າ, ຄໍາປະສົມ, ຄໍາແທ່ງ, ມັນຕົ້ນ, ເກືອກາລີ, ແຮ່ທອງ, ເຈ້ຍ, ເຄື່ອງທີ່ເຮັດດ້ວຍເຈ້ຍ ແລະ ສິນຄ້ານໍາເຂົ້າສ່ວນໃຫຍ່ແມ່ນ: ນໍ້າມັນກາຊວນ, ພາຫະນະ, ອຸປະກອນກົນຈັກ, ເຫຼັກ, ເຄື່ອງທີ່ເຮັດດ້ວຍເຫຼັກ, ເຄື່ອງໄຟຟ້າ ແລະ ອື່ນໆ, ໃນນີ້:

+ ປີ 2021 ມູນຄ່າການຄ້າ ປະຕິບັດໄດ້ 13.514,25 ລ້ານໂດລາສະຫະລັດ ທຽບໃສ່ໄລຍະດຽວກັນປີຜ່ານມາ ເພີ່ມຂຶ້ນ 20,59%. ໃນນີ້: ມູນຄ່າການສົ່ງອອກ ປະຕິບັດໄດ້ 7.626,92 ລ້ານໂດລາສະຫະລັດ ທຽບໃສ່ໄລຍະດຽວກັນປີຜ່ານມາ ເພີ່ມຂຶ້ນ 23,65%; ມູນຄ່າການນໍາເຂົ້າ ປະຕິບັດໄດ້ 5.887,33 ລ້ານໂດລາສະຫະລັດ ທຽບໃສ່ໄລຍະດຽວກັນປີຜ່ານມາ ເພີ່ມຂຶ້ນ 16,85%. ການຄ້າເກີນດຸນ 1.739,59 ລ້ານໂດລາສະຫະລັດ.
+ ປີ 2022 ມູນຄ່າການຄ້າ ສາມາດປະຕິບັດໄດ້ 15.005,95 ລ້ານໂດລາສະຫະລັດ ທຽບໃສ່ໄລຍະດຽວກັນປີຜ່ານມາ ເພີ່ມຂຶ້ນ 11,04%. ໃນນີ້: ມູນຄ່າການສົ່ງອອກ ປະຕິບັດໄດ້ 8.197,91 ລ້ານໂດລາສະຫະລັດ ທຽບໃສ່ໄລຍະດຽວກັນປີຜ່ານມາ ເພີ່ມຂຶ້ນ 7,49%, ມູນຄ່າການນໍາເຂົ້າ ປະຕິບັດໄດ້ 6.808,05 ລ້ານໂດລາສະຫະລັດ ທຽບໃສ່ໄລຍະດຽວກັນປີຜ່ານມາ ເພີ່ມຂຶ້ນ 15,64%, ເກີນດຸນການຄ້າ 1.389,86 ລ້ານໂດລາສະຫະລັດ.
+ ໃນ 6 ເດືອນຕົ້ນປີ 2023 ປະຕິບັດໄດ້ 7.308,31 ລ້ານໂດລາສະຫະລັດ ເທົ່າກັບ 47,69% ຂອງແຜນການປີ 2023 (ມູນຄ່າ 15.325 ລ້ານໂດລາສະຫະລັດ). ໃນນີ້: ມູນຄ່າການສົ່ງອອກ ປະຕິບັດໄດ້ 4.060,53 ລ້ານໂດລາສະຫະລັດ, ເທົ່າກັບ 49,37% ຂອງແຜນການປີ, ມູນຄ່າການນໍາເຂົ້າ ປະຕິບັດໄດ້ 3.247,78 ລ້ານໂດລາສະຫະລັດ, ເທົ່າກັບ 45,84% ຂອງແຜນການປີ, ເກີນດຸນການຄ້າ 812,75 ລ້ານໂດລາສະຫະລັດ.

ສິ່ງທ້າທາຍ: ເຖິງແມ່ນວ່າໃນແຕ່ລະປີ ສປປ ລາວຈະມີມູນຄ່າການສົ່ງອອກສິນຄ້າຫຼາຍຂຶ້ນ ຈົນສາມາດເຮັດໃຫ້ມີການເກີນດຸນການຄ້າ ກໍຕາມ, ແຕ່ຍັງເຫັນວ່າກະແສເງິນຕາທີ່ນຳເຂົ້າມາຜ່ານລະບົບທະນາຄານ ຍັງບໍ່ທັນສົມຄູ່ກັບມູນຄ່າຂອງການສົ່ງອອກສິນຄ້າທັງໝົດ; ເນື່ອງຈາກຜູ້ປະກອບການລົງທຶນຈາກຕ່າງປະເທດຈຳນວນໜຶ່ງ ໂດຍສະເພາະກິດຈະການເຂື່ອນໄຟຟ້າ ແລະ ແຮ່ທາດ ທີ່ບໍ່ໄດ້ຊຳລະເງິນຜ່ານລະບົບທະນາຄານຢູ່ ສປປ ລາວ ຫຼື ມີການຊຳລະໜີ້ເງິນກູ້ຕ່າງປະເທດກ່ອນນຳເງິນຕາເຂົ້າມາປະເທດ.

## 1.3 ແຜນວຽກຈຸດສຸມທີ 3: ຍົກສູງການລົງທຶນໃຫ້ມີຄຸນນະພາບ ແລະ ມີປະສິດທິຜົນສູງ

ໃນໄລຍະ 2 ປີເຄິ່ງຜ່ານມາ ສາມາດລະດົມທຶນຈາກທົ່ວສັງຄົມເຂົ້າໃສ່ການພັດທະນາເສດຖະກິດ-ສັງຄົມ ໄດ້ທັງໝົດປະມານ 154.058 ຕື້ກີບ, ເທົ່າກັບ 75% ຂອງແຜນການ (ແຜນການ 5ປີ: 204.599 ຕື້ກີບ), ໃນນີ້:

### 1.3.1 ການລົງທຶນຈາກງົບປະມານລັດ

ສາມາດປະຕິບັດໄດ້ 7.975,28 ຕື້ກີບ, ເທົ່າກັບ 34,75% ຂອງແຜນການ (ແຜນການ 5ປີ: 22.950 ຕື້ກີບ); ໃນນີ້: ປີ 2021 ປະຕິບັດໄດ້ 3.549,21 ຕື້ກີບ, ປີ 2022 ປະຕິບັດໄດ້ 3.950 ຕື້ກີບ ແລະ ໃນ 6 ເດືອນຕົ້ນປີ 2023 ປະຕິບັດໄດ້ 476,07 ຕື້ກີບ.

### 1.3.2 ການລົງທຶນຈາກການຊ່ວຍເຫຼືອທາງການເພື່ອການພັດທະນາ (ODA)

ສາມາດປະຕິບັດໄດ້ 22.424,42 ຕື້ກີບ, ເທົ່າກັບ 60% ຂອງແຜນການ (ແຜນການ 5ປີ: 37.344 ຕື້ກີບ); ໃນນີ້: ປີ 2021 ປະຕິບັດໄດ້ 9.035,52 ຕື້ກີບ, ປີ 2022 ປະຕິບັດໄດ້ 8.282,89 ຕື້ກີບ ແລະ ໃນ 6 ເດືອນຕົ້ນປີ 2023 ປະຕິບັດໄດ້ 5.106 ຕື້ກີບ.

### 1.3.3 ການລົງທຶນເອກະຊົນພາຍໃນ ແລະ ການລົງທຶນໂດຍກົງຈາກຕ່າງປະເທດ (FDI)

ສາມາດປະຕິບັດໄດ້ 123.658,69 ຕື້ກີບ, ເທົ່າກັບ 124% ຂອງແຜນການ (ແຜນການ 5ປີ: 100.000 ຕື້ກີບ); ໃນນີ້: ປີ 2021 ປະຕິບັດໄດ້ 43.381,14 ຕື້ກີບ, ປີ 2022 ປະຕິບັດໄດ້ 56.771,38 ຕື້ກີບ ແລະ ໃນ 6 ເດືອນຕົ້ນປີ 2023 ປະຕິບັດໄດ້ 23.506,17 ຕື້ກີບ.

ສິ່ງທ້າທາຍ: ໃນໄລຍະ 2 ປີເຄິ່ງຜ່ານມາ ການລະດົມແຫຼ່ງທຶນລວມແມ່ນມີຄວາມທ້າທາຍຫຼາຍພໍສົມຄວນ ໂດຍສະເພາະຄວາມຈຳກັດຂອງແຫຼ່ງທຶນສາກົນ ແລະ ຄວາມຫຍຸ້ງຍາກດ້ານງົບປະມານພາຍໃນ; ການໃຊ້ຈ່າຍໃສ່ຂົງເຂດສຶກສາ ແລະ ສາທາລະນະສຸກ ແມ່ນຫຼຸດລົງຈາກ 4,4% ຂອງ GDP ໃນປີ 2016 ມາເປັນ 3,1% ຂອງ GDP ໃນປີ 2021 ຍ້ອນມີພັນທະໃນການຊຳລະດອກເບ້ຍເງິນກູ້ຕ່າງປະເທດ ຊຶ່ງຕ້ອງໄດ້ມີການດຸ່ນດ່ຽງການຄຸ້ມຄອງບໍລິຫານໜີ້ສິນ ແລະ ການໃຊ້ຈ່າຍທີ່ສົມເຫດສົມຜົນເພື່ອການເຕີບໂຕຂອງເສດຖະກິດໃນໄລຍະຍາວ; ແຫຼ່ງທຶນຈາກພາກເອກະຊົນພາຍໃນ ແມ່ນທ່າແຮງບໍ່ມຊ້ອນໃນການປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດວຽກງານບູລິມະສິດໃນການພັດທະນາປະເທດຊາດ[5].

## 1.4 ແຜນວຽກຈຸດສຸມທີ 4: ການພັດທະນາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ມີຄວາມເຂັ້ມແຂງ ແລະ ສາມາດແຂ່ງຂັນກັບພາກພື້ນ ແລະ ສາກົນ

ການສົ່ງເສີມ ແລະ ພັດທະນາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (ຈນກ) ແມ່ນໄດ້ສຳເລັດການປັບປຸງກົດໝາຍວ່າດ້ວຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ສະບັບເລກທີ 11/ສພຊ, ລົງວັນທີ 21 ທັນວາ 2011 ເປັນກົດໝາຍວ່າດ້ວຍການສົ່ງເສີມ ຈນກ ສະບັບເລກທີ 16/ສພຊ, ລົງວັນທີ 07 ກໍລະກົດ 2022; ປັບປຸງດຳລັດວ່າດ້ວຍການຈັດແບ່ງຂະໜາດວິສາຫະກິດຂະໜາດນ້ອຍ ແລະ ກາງ ສະບັບເລກທີ 25/ລບ, ລົງວັນທີ 16 ມັງກອນ 2017 ມາເປັນ ດຳລັດວ່າດ້ວຍການກຳນົດຂະໜາດ ຈນກ ສະບັບເລກທີ 04/ລບ, ລົງວັນທີ 12 ມັງກອນ 2023;

[5] UN Common Country Analysis for the UN Sustainable Development Cooperation Framework 2022-2026 and 2030 Agenda, Lao PDR, United Nations, 2021

ແລະ ປັບປຸງດຳລັດວ່າດ້ວຍກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ສະບັບເລກທີ 299/ລບ, ລົງວັນທີ 04 ກັນຍາ 2019 ມາເປັນ ດຳລັດວ່າດ້ວຍກອງທຶນສົ່ງເສີມ ຈນກ ສະບັບເລກທີ 05/ລບ, ລົງວັນທີ 12 ມັງກອນ 2023 ເພື່ອໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍການສົ່ງເສີມ ຈນກ ສະບັບເລກທີ 16/ສພຊ, ລົງວັນທີ 07 ກໍລະກົດ 2022.

ການສົ່ງເສີມ ຈນກ ໄດ້ສຸມໃສ່ຈັດຕັ້ງປະຕິບັດບັນດາວຽກຈຸດສຸມທີ່ສຳຄັນ ເພື່ອຊຸກຍູ້ສົ່ງເສີມ ແລະ ພັດທະນາ ຈນກ ໃຫ້ມີຄວາມເຂັ້ມແຂງ ໂດຍຜ່ານ 7 ນະໂຍບາຍ ຄື:

**1. ການເຂົ້າຫາແຫຼ່ງທຶນ ຂອງ ຈນກ**: ການປັບປຸງການເຂົ້າຫາແຫຼ່ງທຶນຂອງ ຈນກ ແມ່ນຈັດຕັ້ງປະຕິບັດນະໂຍບາຍການເຂົ້າເຖິງແຫຼ່ງທຶນ ຜ່ານກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ (ທສວ), ຊຶ່ງມາຮອດປັດຈຸບັນ ທສວ ໄດ້ຮັບທຶນຈາກ 5 ບ້ວງ ຄື: ❶ ບ້ວງເງິນສ້າງຕັ້ງ ທສວ ຈຳນວນ 32 ຕື້ກີບ; ❷ ບ້ວງເງິນຊ່ວຍເຫຼືອລ້າ ແລະ ກູ້ຢືມຈາກທະນາຄານໂລກ ຈຳນວນ 111,68 ຕື້ກີບ; ❸ ບ້ວງເງິນປະກອບທຶນຂອງລັດຖະບານທີ່ກຳນົດອັດຕາດອກເບ້ຍ 3% ຕໍ່ປີ ຈຳນວນ 474 ຕື້ກີບ; ❹ ບ້ວງເງິນສະສົມຂອງ ທສວ ທີ່ໄດ້ຈາກດອກເບ້ຍ ຈຳນວນ 17,66 ຕື້ກີບ ແລະ ❺ ບ້ວງເງິນກູ້ຢືມຈາກທະນາຄານໂລກ ພາຍໃຕ້ໂຄງການເຂົ້າເຖິງແຫຼ່ງທຶນຂອງ MSME ເພື່ອຮັບມືກັບຜົນກະທົບ ແລະ ຟື້ນຟູຈາກໂຄວິດ-19 ຈຳນວນ 34 ລ້ານໂດລາສະຫະລັດ ໂດຍຜ່ານທະນາຄານທຸລະກິດ ຈຳນວນ 8 ທະນາຄານ ແລະ 11 ສະຖາບັນການເງິນຈຸລະພາກ ແລະ 2 ກອງທຶນ. ໃນໄລຍະແຕ່ປີ 2021 ເຖິງປັດຈຸບັນ ສາມາດສະໜອງສິນເຊື່ອ ໄດ້ຈຳນວນ 1.648 ຫົວໜ່ວຍ, 1.733 ສັນຍາ, ລວມມູນຄ່າ 550,69 ຕື້ກີບ. ນອກນັ້ນ, ຍັງໄດ້ສະໜອງທຶນສະໜັບສະໜູນໂຄງການວິຊາການໄດ້ທັງໝົດ 123 ໂຄງການ ມີມູນຄ່າ ທັງໝົດ 10,5 ຕື້ກີບ.

**2. ສ້າງ ແລະ ພັດທະນາຜູ້ປະກອບກິດຈະການໃໝ່**: (1) ໄດ້ເຊັນບົດບັນທຶກຮ່ວມກັບ ອົງການ KOICA ສ.ເກົາຫຼີ ຈັດຕັ້ງປະຕິບັດໂຄງການພັດທະນາຊັບພະຍາກອນມະນຸດ ດ້ານນະວັດຕະກຳທາງດ້ານດິຈິຕອນ ສຳລັບ ຈນກ ໃນ ສປປ ລາວ ທີ່ລັດຖະບານ ສ.ເກົາຫຼີ ໃຫ້ທຶນຊ່ວຍເຫຼືອລ້າ ມູນຄ່າ 5 ລ້ານໂດລາສະຫະລັດ ໄລຍະຈັດຕັ້ງປະຕິບັດໂຄງການ 5 ປີ (2022-2026); (2) ຈັດງານແຂ່ງຂັນ Startup ECOTHON ຈຳນວນ 2 ຄັ້ງ (ປະຈຳປີ 2021 ແລະ 2022) ຊຶ່ງມີທີມທີ່ສະໝັກເຂົ້າຮ່ວມແຂ່ງຂັນ ທັງໝົດ 54 ທີມ ແລະ ໄດ້ນຳສົ່ງທີມຊະນະເລີດເຂົ້າຮ່ວມງານ ECOTHON ASEAN-ROK Startup ທີ່ ສ.ເກົາຫຼີ ໂດຍພາຍໃຕ້ການສະໜັບໜູນທຶນຈາກກະຊວງ SME ແລະ Startup ສ.ເກົາຫຼີ; (3) ຈັດງານເທດສະການ Startup ລາວ ຈຳນວນ 2 ຄັ້ງ (ປະຈຳປີ 2021 ແລະ 2022) ທີ່ນະຄອນຫຼວງວຽງຈັນ; (4) ຈັດຝຶກອົບຮົມສ້າງຜູ້ປະກອບກິດຈະການໃໝ່ ເພື່ອຊຸກຍູ້ສົ່ງເສີມໃຫ້ໄວໜຸ່ມ, ນັກຮຽນ ແລະ ນັກສຶກສາ ເພື່ອສ້າງແນວຄວາມຄິດໃນການເປັນຜູ້ປະກອບກິດຈະການ ໃຫ້ຫຼາຍຂຶ້ນ ໄດ້ຈຳນວນ 1 ຄັ້ງ.

**3. ສົ່ງເສີມການເພີ່ມຜະລິດຕະພາບ, ເຕັກໂນໂລຊີ-ນະວັດຕະກຳ ເພື່ອຍົກລະດັບຄຸນນະພາບ ແລະ ມາດຕະຖານຜະລິດຕະພັນ ແລະ ການບໍລິການ ຈນກ:** (1) ໄດ້ຄົ້ນຄວ້າສ້າງແຜນແມ່ບົດຜະລິດຕະພາບແຫ່ງຊາດຮອດປີ 2030 ໂດຍໄດ້ສຳເລັດການສ້າງຮ່າງ, ຜ່ານຂັ້ນຕອນການລະດົມຄຳຄິດເຫັນ ແລະ ກຳລັງກະກຽມສະເໜີແຜນເຂົ້າກອງປະຊຸມລັດຖະບານພິຈາລະນາ ໃນໄຕມາດ 3 ຂອງປີ 2023; (2) ຈັດງານສະເຫຼີມສະຫຼອງ ສປປ ລາວ ເຂົ້າເປັນສະມາຊິກອົງການຜະລິດຕະພາບແຫ່ງຊາດລາວ (Asian Productivity Organization ຫຼື APO) ຄົບຮອບ 20 ປີ ທີ່ນະຄອນຫຼວງວຽງຈັນ ໂດຍມີຜູ້ເຂົ້າຮ່ວມງານ ຫຼາຍກວ່າ 200 ທ່ານ; (3) ສະໜອງເຮືອນຮົ່ມໃຫ້ຜູ້ປະກອບການຜະລິດກະສິກຳ ທັງໝົດຈຳນວນ 36 ຫຼັງ ຈາກບ້ວງເງິນຊ່ວຍເຫຼືອລ້າ ຈາກ APO ຈຳນວນ 130.000 ໂດລາສະຫະລັດ ເພື່ອເປັນສູນການຮຽນຮູ້ ຫຼື ສູນສາທິດ ໃຫ້ບັນດາຜູ້ປະກອບກິດຈະການໃນຂະແໜງກະສິກຳ; (3) ຈັດຕັ້ງປະຕິບັດໂຄງການຍົກລະດັບການແຂ່ງຂັນຂອງຂະແໜງທຸລະກິດກະສິກຳ ໂດຍຜ່ານການຢັ້ງຢືນການຜະລິດທີ່ດີ, ລະບົບວິເຄາະ ແລະ ຄວບຄຸມຈຸດວິກິດ (GMP and HACCP) ໃຫ້ຫົວໜ່ວຍທຸລະກິດການຜະລິດ ຢູ່ 3 ແຂວງ ຄື: ຫຼວງນໍ້າທາ, ສາລະວັນ ແລະ ຈຳປາສັກ, ຊຶ່ງມີ 7 ໂຮງງານ ຈະໄດ້ຮັບໃບຢັ້ງຢືນ GMP and HACCP ດັ່ງກ່າວ; (4) ຈັດຝຶກອົບຮົມ ແລະ ໃຫ້ຄຳປຶກສາ ພາຍໃຕ້ໂຄງການຜະລິດກະສິກຳເປັນສິນຄ້າ ຢູ່ ສປປ ລາວ (LACP) ໃຫ້ແກ່ພະນັກງານພາກລັດ ແລະ ພາກທຸລະກິດໂຮງສີເຂົ້າກ່ຽວກັບຂໍ້ກຳນົດ GHP & HACCP ມີຜູ້ເຂົ້າຮ່ວມຫຼາຍກວ່າ 300 ເທື່ອຄົນ.

**4. ສົ່ງເສີມການເຂົ້າເຖິງການບໍລິການໃຫ້ຄຳປຶກສາພັດທະນາທຸລະກິດ:** (1) ສົມທົບກັບສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ສ້າງຕັ້ງສູນບໍລິການວິສາຫະກິດຂະໜາດນ້ອຍ ແລະ ກາງ ເພີ່ມຕື່ມອີກ 2 ສູນ ຄື: ແຂວງອຸດົມໄຊ ແລະ ບໍລິຄຳໄຊ; ໄລຍະຜ່ານມາ ແມ່ນມີແລ້ວ 4 ສູນ ຄື: ນະຄອນຫຼວງວຽງຈັນ, ສະຫວັນນະເຂດ, ຈຳປາສັກ ແລະ ຫຼວງພະບາງ. (2) ຈັດຝຶກອົບຮົມໃຫ້ກາຍເປັນຄູຝຶກ ໃນຫົວຂໍ້ "ການວາງແຜນທຸລະກິດ, ການວາງແຜນການເງິນ ແລະ ການບັນຊີເງິນສົດ" ທັງໝົດ 3 ຄັ້ງ ຊຶ່ງມີຜູ້ເຂົ້າຮ່ວມທັງໝົດ 99 ທ່ານ. (3) ຈັດຝຶກອົບຮົມໃຫ້ ຈນກ ໃນຫົວຂໍ້ "ການວາງແຜນທຸລະກິດ, ການວາງແຜນການເງິນ ແລະ ການບັນຊີເງິນສົດ" ຈຳນວນ 52 ຄັ້ງ, ມີຜູ້ເຂົ້າຮ່ວມທັງໝົດ 1.172 ທ່ານ.

**5. ສົ່ງເສີມການເຂົ້າເຖິງ ແລະ ການຂະຫຍາຍຕະຫຼາດ:** (1) ຈັດກອງປະຊຸມເຜີຍແຜ່ແນະນຳການນຳໃຊ້ເວັບໄຊ ASEAN Access ໃຫ້ບັນດາສະມາຄົມ, ກຸ່ມ ແລະ ຜູ້ປະກອບກິດຈະການທີ່ກ່ຽວຂ້ອງ ຢູ່ 4 ແຂວງ ຄື: ແຂວງຫຼວງພະບາງ, ອຸດົມໄຊ, ສະຫວັນນະເຂດ ແລະ ບໍລິຄຳໄຊ ໂດຍມີຜູ້ເຂົ້າຮ່ວມທັງໝົດ 178 ທ່ານ ເພື່ອສົ່ງເສີມການເຂົ້າເຖິງຕະຫຼາດຂໍ້ມູນ-ຂ່າວສານໃນພາກພື້ນ, ໂຄສະນາເຜີຍແຜ່ຜະລິດຕະພັນ ແລະ ການບໍລິການຂອງຕົນ ແລະ ຮູບແບບກົນໄກການຈັບຄູ່ທຸລະກິດ; (2) ໄດ້ຜັນຂະຫຍາຍມາດຕະການຊຸກຍູ້ສົ່ງເສີມການຮ່ວມກຸ່ມທຸລະກິດ ໂດຍການຈັດຝຶກອົບຮົມ "ການສ້າງຄວາມເຂັ້ມແຂງການຮ່ວມກຸ່ມທຸລະກິດ" ພາຍໃຕ້ໂຄງການຜະລິດກະສິກຳເປັນສິນຄ້າ ແລະ ໂຄງການສ້າງຕັ້ງການຮ່ວມກຸ່ມທຸລະກິດ ໄດ້ຈຳນວນ 15 ຄັ້ງ, ມີຜູ້ເຂົ້າຮ່ວມທັງໝົດ 602 ທ່ານ.

**6. ສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການສ້າງຕັ້ງ-ດຳເນີນທຸລະກິດ:** (1) ໄດ້ສຸມໃສ່ປັບປຸງລະບົບການຂຶ້ນທະບຽນວິສາຫະກິດ ແລະ ລະບົບການອອກໃບອະນຸຍາດ; (2) ສ້າງ ແລະ ພັດທະນາ ເວທີປຶກສາຫາລື ລະຫວ່າງ ພາກລັດ ແລະ ພາກທຸລະກິດໃນລະດັບຕ່າງໆ ພາຍໃຕ້ຂອບກອງປະຊຸມທຸລະກິດລາວ; (3) ສຳເລັດການປັບປຸງກົດໝາຍວ່າດ້ວຍວິສາຫະກິດ; (4) ເປີດໂຕເວັບໄຊຖານຂໍ້ມູນໃບອະນຸຍາດດຳເນີນທຸລະກິດ; (5) ສ້າງລະບົບການຂຶ້ນທະບຽນວິສາຫະກິດແບບເອເລັກໂຕຣນິກໃໝ່, ນິຕິກຳ, ລະບຽບການ ເພື່ອຮອງຮັບ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດການຂຶ້ນທະບຽນແບບເອເລັກໂຕຣນິກໃໝ່ (ຂຶ້ນທະບຽນວິສາຫະກິດແບບ online), ອັນພົ້ນເດັ່ນແມ່ນໄດ້ຫຼຸດຜ່ອນຂັ້ນຕອນການເລີ່ມຕົ້ນທຸລະກິດ ຈາກ 173 ວັນ ມາເປັນ 5 ວັນ; ພ້ອມທັງ ສ້າງ ແລະ ປັບປຸງນິຕິກຳທີ່ຕິດພັນກັບການອອກອະນຸຍາດດຳເນີນທຸລະກິດສຳເລັດ 7 ໃບອະນຸຍາດ. ນອກນັ້ນ, ກໍໄດ້ສ້າງບັນຊີກິດຈະການທີ່ຕ້ອງຂໍອະນຸຍາດດຳເນີນທຸລະກິດ ໂດຍການສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອສັງລວມບັນຊີດັ່ງກ່າວ ໄດ້ທັງຫມົດ 15 ກະຊວງ ຄື: ກະຊວງໂຍທາທິການ ແລະ ຂົນສົ່ງ; ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ; ກະຊວງສຶກສາທິການ ແລະ ກິລາ; ກະຊວງພະລັງງານ ແລະ ບໍ່ແຮ່; ກະຊວງກະສິກຳ ແລະ ປ່າໄມ້; ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ; ກະຊວງເຕັກໂນໂລຊີ ແລະ ການສື່ສານ; ກະຊວງແຮງງານ ແລະ ສະຫວັດດີການສັງຄົມ; ທະນາຄານແຫ່ງ ສປປ ລາວ; ກະຊວງສາທາລະນະສຸກ; ກະຊວງປ້ອງກັນຄວາມສະຫງົບ; ກະຊວງປ້ອງກັນປະເທດ; ກະຊວງພາຍໃນ; ກະຊວງການເງິນ ແລະ ກະຊວງຍຸຕິທຳ.

**7. ພາສີອາກອນ ແລະ ດ້ານການເງິນທີ່ເໝາະສົມ:** (1) ຊຸກຍູ້ໃຫ້ ຈນກ ທີ່ໄດ້ຮັບສິນເຊື່ອບ້ວງທຶນປະກອບຂອງລັດຖະບານ ໃຫ້ສາມາດຖືບັນຊີໄດ້ຖືກຕ້ອງຕາມລະບຽບກົດຫມາຍ ຮ່ວມກັບ ກົມຄຸ້ມຄອງການບັນຊີ, ກະຊວງການເງິນ ໂດຍການແຕ່ງຕັ້ງຄະນະຮັບຜິດຊອບຄົ້ນຄວ້າສ້າງ ແລະ ປັບປຸງກົນໄກການຊຸກຍູ້ ແລະ ສົ່ງເສີມການຖືບັນຊີຂອງ ຈນກ; (2) ໄດ້ປະກອບສ່ວນຊຸກຍູ້ຂະແໜງການກ່ຽວຂ້ອງໃນການຄົ້ນຄວ້າສ້າງ ແລະ ປັບປຸງນະໂຍບາຍ ພ້ອມດ້ວຍນິຕິກຳກ່ຽວກັບການປະຕິບັດນະໂຍບາຍຕໍ່ ຈນກ.

<u>ສິ່ງທ້າທາຍ</u>: ການດຳເນີນທຸລະກິດຂອງເອກະຊົນພາຍໃນ ຍັງຢູ່ໃນສະພາບແວດລ້ອມທາງທຸລະກິດທີ່ບໍ່ເອື້ອຍອຳນວຍ ແລະ ຍັງຂາດແຄນທຶນຮອນ ໂດຍສະເພາະການການແຂ່ງຂັນຍັງບໍ່ສູງ, ສິນຄ້າຍັງບໍ່ມີຄວາມຫຼາກຫຼາຍ ແລະ ຍັງມີຄຸນນະພາບຕ່ຳ, ການຜະລິດຍັງບໍ່ທັນເປັນລະບົບຕ່ອງໂສ້ ແລະ ບໍ່ມີການຈັດຕັ້ງເປັນກຸ່ມຜະລິດແບບລວມສູນ, ຈນກ ຍັງບໍ່ທັນເຂົ້າໃຈໜັກແໜ້ນກ່ຽວກັບມາດຖານການຜະລິດ ແລະ ກ້າວເຂົ້າສູ່ມາດຖານການຕອບສະໜອງຕໍ່ຕະຫຼາດທີ່ມີຄວາມຮຽກຮ້ອງຕ້ອງການສູງ. ສິນຄ້າສ່ວນໃຫຍ່ແມ່ນສົ່ງອອກເປັນວັດຖຸດິບ ແລະ ສິນຄ້າເຄິ່ງສຳເລັດຮູບທີ່ບໍ່ສ້າງມູນຄ່າເພີ່ມສູງ. ເຖິງວ່າເສດຖະກິດຍັງສາມາດສືບຕໍ່ເຕີບໂຕໄດ້ ແຕ່ໃນຂະນະດຽວກັນລາຍຮັບຕົວຈິງຂອງຄົວເຮືອນຫຼຸດລົງ ຕາມ

ການອ່ອນຄ່າຂອງເງິນກີບ ບວກກັບລາຄາສິນຄ້າອຸປະໂພກ-ບໍລິໂພກເພີ່ມຂຶ້ນ; ຈນກ ຈຳນວນຫຼາຍຫົວໜ່ວຍທຸລະກິດ ບໍ່ສາມາດເຂົ້າເຖິງແຫຼ່ງທຶນໄດ້ ຍ້ອນຫົວໜ່ວຍ ຈນກ ຍັງບໍ່ທັນມີຄວາມເຂັ້ມແຂງດ້ານການດຳເນີນທຸລະກິດ ແລະ ແຜນການປະກອບການ, ຜະລິດສິນຄ້າ ແລະ ບໍລິການ ຍັງບໍ່ທັນຕອບສະໜອງໄດ້ທັນກະແສຂອງການພັດທະນາ ກໍຄື ຄວາມຕ້ອງການຂອງຕະຫຼາດທັງພາຍໃນ, ລະດັບພາກພື້ນ ແລະ ສາກົນ.

## 1.5 ແຜນວຽກຈຸດສຸມທີ 5: ການພັດທະນາວິສາຫະກິດຂອງລັດ ແລະ ເສດຖະກິດຮ່ວມໝູ່ຂອງປະຊາຊົນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ

### 1.5.1 ການພັດທະນາວິສາຫະກິດຂອງລັດ

ສືບຕໍ່ປະຕິຮູບລັດວິສາຫະກິດ ໃນຈຳນວນ 19 ຫົວໜ່ວຍ; ໃນນີ້: 14 ຫົວໜ່ວຍຈະຮັກສາການຖືຮຸ້ນ 100% ຫຼື ຖືຮຸ້ນໃນອັດຕາສ່ວນໃຫຍ່, 1 ຫົວໜ່ວຍຈະຂາຍຮຸ້ນອອກ ແລະ 4 ຫົວໜ່ວຍຈະຍຸບເລີກ. ສຳລັບການປະຕິຮູບ 5 ລັດວິສາຫະກິດຍຸດທະສາດແມ່ນມີຄວາມຄືບໜ້າດີ ຄື: (1) ວິສາຫະກິດໄຟຟ້າລາວ (ຟຟລ) ໄດ້ປັບປຸງກົດລະບຽບຂອງລັດວິສາຫະກິດ ຟຟລ ເຊິ່ງຢູ່ໃນຂັ້ນຕອນການປະກອບຄຳເຫັນຂອງຄະນະປະຕິຮູບ ເພື່ອສະເໜີສະພາບໍລິຫານຮັບຮອງ; ຄົ້ນຄວ້າຮ່າງລັດຖະດຳລັດຂອງປະທານປະເທດວ່າດ້ວຍພາລະບົດບາດ ຄະນະກຳມະການດັດສົມພະລັງງານໄຟຟ້າລາວ ແລະ ກອງທຶນຄວາມໝັ້ນຄົງທາງດ້ານພະລັງງານໄຟຟ້າ; ທົບທວນຄືນບັນດານິຕິກຳທີ່ຕິດພັນກັບການດຳເນີນທຸລະກິດຂອງ ຟຟລ ແລະ ການຄຸ້ມຄອງບຸກຄະລາກອນຂອງ ຟຟລ ເພື່ອໃຫ້ກົງຈັກມີຄວາມກະທັດຮັດ; ສ້າງລະບົບຄຸ້ມຄອງຊັບສິນບັດ, ປັບປຸງໂຄງສ້າງລາຄາໄຟຟ້າພາກຈຳໜ່າຍພາຍໃນ, ພ້ອມທັງປັບໂຄງສ້າງການຖືຮຸ້ນຂອງ ຟຟລ ໃນບໍລິສັດໄຟຟ້າມະຫາຊົນ; ແຍກໜີ້ສິນການລົງທຶນ ແລະ ປະເມີນຄືນບັນດາໂຄງການລົງທຶນ ເພື່ອສ້າງແຜນການບໍລິຫານໜີ້ສິນຈາກບັນດາຜູ້ຜະລິດໂດຍສະເພາະໜີ້ຄ້າງຈ່າຍໃນໄລຍະຜ່ານມາ ແລະ ໄດ້ເຈລະຈາກັບບັນດາເຈົ້າໜີ້ ເພື່ອເລື່ອນການຊຳລະໜີ້ໄປເປັນ 3-5 ປີ; ວ່າຈ້າງທີ່ປຶກສາບັນຊີມາກວດຄືນການລົງບັນຊີການສະຫຼຸບບັນຊີໃຫ້ຖືກຕ້ອງຕາມລະບຽບການ. (2) ບໍລິສັດຜະລິດ-ໄຟຟ້າລາວ ມະຫາຊົນ ຍັງສືບຕໍ່ຮັກສາຮູບແບບປັດຈຸບັນ ແລະ ດຳເນີນການປັບປຸງຮອບດ້ານຕາມການຕົກລົງຂອງສະພາບໍລິຫານຊຸດໃໝ່ ເພື່ອໃຫ້ສາມາດດຳເນີນການບໍລິຫານບໍລິສັດຕາມລະບຽບຂອງບໍລິສັດມະຫາຊົນ ທີ່ຈົດທະບຽນໃນຕະຫຼາດຫຼັກຊັບ ແລະ ໄດ້ແຍກໃຫ້ຂາດຕົວອອກຈາກລັດວິສາຫະກິດໄຟຟ້າລາວ ທີ່ມີບັນຫາຄຸມເຄືອທາງດ້ານໜີ້ສິນໃນປັດຈຸບັນ. (3) ລັດວິສາຫະກິດການບິນລາວ (ກບລ) ໄດ້ສຳເລັດແຜນປະຕິຮູບ ແລະ ໄດ້ເຮັດວຽກຮ່ວມກັບທະນາຄານ ແຫ່ງ ສປປ ລາວ ແລະ ທະນາຄານການຄ້າຕ່າງປະເທດ ທີ່ເປັນເຈົ້າໜີ້ລາຍໃຫຍ່ ເຊິ່ງສາມາດຢັ້ງຢືນຕົວເລກສຸດທ້າຍຂອງໜີ້ສິນທັງຕົ້ນທຶນ ແລະ ດອກເບ້ຍ ເພື່ອປັບໂຄງສ້າງໜີ້ ແລະ ລາຍງານລັດຖະບານ ອອກພັນທະບັດລ້າງໜີ້ ເພື່ອເຮັດໃຫ້ຖານະການເງິນຂອງລັດວິສາຫະກິດການບິນລາວດີຂຶ້ນ ເພື່ອສາມາດດຶງດູດຄູ່ຮ່ວມທຶນທີ່ມີເງື່ອນໄຂຄົບຖ້ວນມາຮ່ວມລົງທຶນ. (4) ລັດວິສາຫະກິດນ້ຳມັນເຊື້ອໄຟລາວ (ລນລ) ໄດ້ສຳເລັດແຜນປະຕິຮູບ ແລະ ລາຍງານລັດຖະບານ, ປັດຈຸບັນໄດ້ຄົ້ນຄ້ວາປັບປຸງກົດລະບຽບຂອງ ລນລ; ປັບປຸງນະໂຍບາຍສະຫວັດດີການພາຍໃນ ແລະ ກຳນົດສິດໜ້າທີ່-ພາລະບົດຂອງ 9 ພະແນກ ແລະ 4 ສາຂາຕ່າງແຂວງ; ໄດ້ສຳເລັດການຈັດຊື້-ຈັດຈ້າງບໍລິສັດທີ່ປຶກສາ ໃນການທົບທວນສະພາບທຸລະກິດຂອງ ລນລ; ໄດ້ວິເຄາະການດຳເນີນທຸລະກິດ ແລະ ສະພາບແວດລ້ອມທີ່ເປັນປັດໄຈກະທົບຕໍ່ວິສາຫະກິດ (ນຳໃຊ້ວິທີວິເຄາະແບບ SWOT Analysis) ເພື່ອເປັນພື້ນຖານໃນການກຳນົດທຸລະກິດຫຼັກ ແລະ ທຸລະກິດສຳຮອງ, ພ້ອມທັງກຳນົດແນວທາງປັບປຸງ ແລະ ພັດທະນາປ້ຳນ້ຳມັນຕົວແບບໃຫ້ທັນສະໄໝ ແລະ ມີການບໍລິການຄົບວົງຈອນ ເພື່ອຍົກລະດັບການບໍລິການໃຫ້ມີຄຸນນະພາບ. (5) ລັດວິສາຫະກິດພັດທະນາກະສິກຳ, ອຸດສາຫະກຳ ແລະ ການບໍລິການ ຂາອອກ-ຂາເຂົ້າ (ພກອ) ໄດ້ເກັບກຳຂໍ້ມູນເພື່ອສ້າງແຜນປະຕິຮູບ, ໃນນີ້: ສຳເລັດການເກັບກຳຂໍ້ມູນສະພາບການເຄື່ອນໄຫວທຸລະກິດ

ຢູ່ບັນດາສາຂາ ແລະ ສຳເລັດການປັບປຸງໂຄງສ້າງການຈັດຕັ້ງບຸກຄະລາກອນ ພ້ອມທັງສັງລວມ, ຄົ້ນຄ້ວານິຕິກຳ ແລະ ບັນດາຂໍ້ມູນທາງການເງິນ.

#### 1.5.2 ການພັດທະນາວິສາຫະກິດລວມໝູ່ຂອງປະຊາຊົນ (ສະຫະກອນ ຫຼື ກຸ່ມການຜະລິດຂອງຊຸມຊົນ)

ການສ້າງສະຫະກອນການຜະລິດ ປະຕິບັດໄດ້ 1 ສະຫະກອນ, ເທົ່າກັບ 1,47% ຂອງແຜນການ (ແຜນການ 5ປີ: ໃຫ້ໄດ້ 18 ສະຫະກອນ). ມາຮອດປັດຈຸບັນມີສະຫະກອນການຜະລິດ ທັງໝົດ 28 ສະຫະກອນ. ການຂະຫຍາຍເຄືອຂ່າຍກຸ່ມການຜະລິດຂອງຊາວກະສິກອນ ປະຕິບັດໄດ້ 8 ກຸ່ມການຜະລິດ, ເທົ່າກັບ 33,33% ຂອງແຜນການ (ແຜນການ 5ປີ: ໃຫ້ໄດ້ 24 ກຸ່ມການຜະລິດ). ມາຮອດປັດຈຸບັນມີກຸ່ມການຜະລິດຂອງຊຸມຊົນ ທັງໝົດ 66 ກຸ່ມການຜະລິດ.

ການຈັດຕັ້ງກຸ່ມຜະລິດ, ກຸ່ມສະຫະກອນທີ່ເປັນພື້ນຖານ ແລະ ເປັນທ່າແຮງຍັງບໍ່ທັນເຂັ້ມແຂງ ໃນການຜະລິດເປັນສິນຄ້າ, ເປັນກຳລັງແຮງໃນການຕໍ່ລອງ ແລະ ເຮັດໃຫ້ມີຕະຫຼາດທີ່ໝັ້ນຄົງ.

## 2. ເປົ້າໝາຍທີ 2 ຊັບພະຍາກອນມະນຸດມີຄຸນນະພາບສູງຂຶ້ນ ສາມາດຕອບສະໜອງຄວາມຕ້ອງການຂອງການພັດທະນາ, ມີຄວາມສາມາດຄົ້ນຄວ້າ ແລະ ນຳໃຊ້ວິທະນາສາດ-ເຕັກໂນໂລຊີ ເພື່ອຍົກສູງປະສິດທິພາບ ແລະ ສ້າງມູນຄ່າເພີ່ມການຜະລິດ ແລະ ການບໍລິການ

### 2.1 ແຜນວຽກຈຸດສຸມທີ 1: ການປັບປຸງການບໍລິການດ້ານສາທາລະນະສຸກ ແລະ ໂພສະນາການຢ່າງທົ່ວເຖິງ ແລະ ມີຄຸນນະພາບສູງຂຶ້ນ

#### 2.1.1 ວຽກງານສາທາລະນະສຸກ

– ລະບົບຕາໜ່າງສາທາລະນະສຸກ ກໍຄື ການບໍລິການປິ່ນປົວສຸຂະພາບ ແມ່ນມີການພັດທະນາ ແລະ ມີຄຸນນະພາບດີຂຶ້ນເທື່ອລະກ້າວ ສາມາດຄວບຄຸມການລະບາດຂອງພະຍາດໂຄວິດ-19 ໄດ້ເປັນຢ່າງດີ ເຮັດໃຫ້ອັດຕາການເສຍຊີວິດຍ້ອນພະຍາດໂຄວິດ-19 ແມ່ນຕໍ່າຫຼາຍເມື່ອທຽບໃສ່ບັນດາປະເທດໃນອາຊີ; ພ້ອມກັນນັ້ນກໍ່ໄດ້ສຸມໃສ່ການໃຫ້ວັກຊີນກັນພະຍາດໂຄວິດ-19 ທີ່ສາມາດປະຕິບັດໄດ້ເຖິງ 86% ຂອງປະຊາກອນທັງໝົດ (ເຂັມທີ 1); ປັບປຸງຄຸນນະພາບການບໍລິການໂດຍການຈັດຕັ້ງປະຕິບັດນະໂຍບາຍ 5 ດີ 1 ພໍໃຈ ຢູ່ສະຖານທີ່ບໍລິການຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ ສຳລັບຂັ້ນໂຮງໝໍນ້ອຍແມ່ນໄດ້ຍົກລະດັບຄຸນນະພາບການບໍລິການດ້ວຍການປະເມີນຄຸນນະພາບ QPS;

– ໄດ້ເອົາໃຈໃສ່ການຄວບຄຸມພະຍາດຕິດຕໍ່ອື່ນໆທີ່ເປັນບັນຫາດ້ານສາທາລະນະສຸກ ໂດຍໃນປີ 2023, ສາມາດລົບລ້າງພະຍາດຂາຊ້າງໄດ້ຕາມແຜນການທີ່ວາງໄວ້; ປະຕິບັດຍຸດທະສາດການຄວບຄຸມ ແລະ ກຳຈັດພະຍາດໄຂ້ມາລາເລຍ, ໃນໄລຍະ 2 ປີ ກວ່າທີ່ຜ່ານມາເຫັນໄດ້ວ່າກໍລະນີພົບເຊື້ອຫຼຸດລົງຈາກ 3.926 ຄົນ ໃນປີ 2021 ເຫຼືອ 2338 ຄົນ ໃນປີ 2022 (ຫຼຸດລົງ 40%); ພ້ອມທັງປະຕິບັດມາດຕະການໃນການຄວບຄຸມພະຍາດໄຂ້ຍຸງລາຍໄດ້ໃນລະດັບດີ ໂດຍການຄວບຄຸມພາຫະນຳເຊື້ອກໍຄືການທຳລາຍແຫຼ່ງເພາະພັນຍຸງ, ໃຫ້ສຸຂະສຶກສາ ແລະ ປຸກລະດົມການມີສ່ວນຮ່ວມຂອງຊຸມຊົນ; ຂະຫຍາຍການເຂົ້າເຖິງການບໍລິການກວດເລືອດ, ປິ່ນປົວ ແລະ ດູແລເບິ່ງແຍງສຳລັບຜູ້ຕິດເຊື້ອເຮສໄອວີ/ເອດສ ແລະ ມີຢາສະໜອງຢ່າງພຽງພໍ; ຕາໜ່າງການຄວບຄຸມພະຍາດວັນນະໂລກໄດ້ຂະຫຍາຍລົງຮອດຂັ້ນເມືອງ ບັນລຸ 100% (148 ເມືອງ) ແລະ 98% ຂອງໂຮງໝໍນ້ອຍທົ່ວປະເທດ;

– ໄດ້ສືບຕໍ່ສ້າງ ແລະ ປັບປຸງບັນດາກົດໝາຍ-ນິຕິກຳລຸ່ມກົດໝາຍຕ່າງໆເພື່ອການຄຸ້ມຄອງວຽກງານສາທາລະນະສຸກເປັນຕົ້ນເຊັ່ນ: ກົດໝາຍສາທາລະນະສຸກ, ປັບປຸງກົດໝາຍວ່າດ້ວຍການກັນ ແລະ ຄວບຄຸມພະຍາດຕິດຕໍ່, ກົດໝາຍວ່າດ້ວຍການຄວບຄຸມຢາສູບ, ສ້າງກົດໝາຍວ່າດ້ວຍການຮັກສາສຸຂະພາບຂັ້ນຕົ້ນ;

– ໄດ້ດຳເນີນການກໍ່ສ້າງ ແລະ ຍົກລະດັບພື້ນຖານໂຄງລ່າງສາທາລະນະສຸກ ທັງຢູ່ສູນກາງ ແລະ ທ້ອງຖິ່ນຫຼາຍແຫ່ງ ເປັນຕົ້ນ: ໂຮງໝໍເຊດຖາທິຣາດ, ໂຮງໝໍມະໂຫສົດ, ກໍ່ສ້າງລະບົບບຳບັດນ້ຳເສຍຂອງໂຮງໝໍເດັກ, ໂຮງໝໍແຂວງຫົວພັນ, ໂຮງໝໍແຂວງໄຊສົມບູນ, ໂຮງໝໍຊຸມຊົນນາໝໍ້ (ແຂວງອຸດົມໄຊ), ໂຮງໝໍຊຸມຊົນຍອດອູ (ແຂວງຜົ້ງສາລີ), ໂຮງໝໍຊຸມຊົນໜອງແຮດ (ແຂວງຊຽງຂວາງ), ໂຮງໝໍຊຸມຊົນເມືອງພຽງ ແລະ ແກ່ນທ້າວ (ແຂວງໄຊຍະບູລີ), ໂຮງໝໍຊຸມຊົນດາກຈຶງ (ແຂວງເຊກອງ), ໂຮງໝໍຊຸມຊົນສະໜາມໄຊ (ແຂວງອັດຕະປື) ແລະ ໂຮງໝໍນ້ອຍ ຈຳນວນ 9 ແຫ່ງ; ຕຶກແຍກປ່ຽວຢູ່ 3 ແຂວງພາກໃຕ້ (ຈຳປາສັກ, ອັດຕະປື ແລະ ເຊກອງ).

– ວຽກງານຕິດພັນກັບ 2 ວາລະແຫ່ງຊາດ ໄດ້ເປີດບໍລິການໃຫ້ຄຳປຶກສາ ແລະ ປິ່ນປົວຜູ້ຕິດສິ່ງເສບຕິດຢູ່ 34 ໂຮງໝໍຊຸມຊົນໃນ 6 ແຂວງ (ນະຄອນຫຼວງວຽງຈັນ, ວຽງຈັນ, ຫົວພັນ, ບໍລິຄຳໄຊ, ໄຊຍະບູລີ ແລະ ສະຫວັນນະເຂດ) ເຊິ່ງປັດຈຸບັນມີຄົນເຈັບມາຮັບບໍລິການ 1.518 ຄົນ, ພໍ່ແມ່ມາຮັບຄຳປຶກສາ 2.389 ເທື່ອຄົນ.

– ໄດ້ເອົາໃຈໃສ່ຕິດຕາມ, ກວດກາອາຫານ, ຢາ ແລະ ຜະລິດຕະພັນການແພດ ທີ່ຈໍລະຈອນຈຳໜ່າຍຢູ່ທ້ອງຕະຫຼາດ; ກວດກາການນຳເຂົ້າຢູ່ດ່ານໃນຂອບເຂດທົ່ວປະເທດ ແລະ ຕິດຕາມກວດກາການນຳໃຊ້ຢາຢູ່ບັນດາໂຮງໝໍ ຊຶ່ງສາມາດຮັບປະກັນຄຸນນະພາບ ແລະ ຄວາມປອດໄພໄດ້ໃນຂັ້ນພື້ນຖານ, ການສົ່ງເສີມການຜະລິດພາຍໃນເປັນຮູບປະທຳຫຼາຍຂຶ້ນ, ໂຮງງານຜະລິດພາຍໃນສາມາດຜະລິດຢາປິ່ນປົວພະຍາດໂຄວິດ-19 (ຢາຕ້ານໄວຣັດ Monulpiravir) ເພື່ອນຳໃຊ້ຕ້ານການລະບາດຢ່າງທັນກັບສະພາບການ ແລະ ພ້ອມກັນນັ້ນກໍໄດ້ສູ້ຊົນຜະລິດຢາຈຳເປັນພື້ນຖານສະໜອງຕາງໜ່າງສາທາລະນະສຸກຢ່າງພຽງພໍ; ໄດ້ຄຸ້ມຄອງກ່ຽວກັບວຽກງານຢາເສບຕິດ, ວັດຖຸອອກລິດຕໍ່ຈິດປະສາດ, ສານເຄມີຄວບຄຸມໂດຍຄົ້ນຄວ້າສັງລວມແຜນຄວາມຕ້ອງການສານເສບຕິດ, ສານອອກລິດຕໍ່ປະສາດ, ເຄມີຄວບຄຸມ ພ້ອມທັງຕິດຕາມ ແລະ ລາຍງານການນຳເຂົ້າ-ນຳໃຊ້ໃຫ້ແກ່ອົງການຄຸ້ມຄອງຢາເສບຕິດສາກົນ; ກວດ, ວິໄຈ ແລະ ຢັ້ງຢືນຕົວຢ່າງສິ່ງໃສ່ກ່ຽວກັບສານເສບຕິດທີ່ມາຈາກຂະແໜງການກ່ຽວຂ້ອງ ຈຳນວນ 792 ຕົວຢ່າງ.

ຜ່ານການຈັດຕັ້ງປະຕິບັດວຽກງານຈຸດສຸມທີ່ກ່າວມາຂ້າງເທິງ ສາມາດສະຫຼຸບຕີລາຄາຜົນສຳເລັດ ມາຮອດເດືອນມິຖຸນາປີ 2023 ແມ່ນມີທັງໝົດ 8 ຕົວຊີ້ບອກທີ່ມີຄວາມຄືບໜ້າດີ ແລະ ມີທ່າອ່ຽງຈະສາມາດບັນລຸຄາດໝາຍ ແລະ ມີຈຳນວນ 3 ຕົວຊີ້ບອກ ທີ່ຍັງມີຄວາມທ້າທາຍ ແລະ ມີທ່າອ່ຽງບໍ່ສາມາດບັນລຸໄດ້ ຊຶ່ງມີລາຍລະອຽດລຸ່ມນີ້:

➢ **ມີ 8 ຕົວຊີ້ບອກ ທີ່ມີຄວາມຄືບໜ້າດີ ແລະ ມີທ່າອ່ຽງຈະສາມາດບັນລຸຄາດໝາຍ ຄື:**

1. ອັດຕາການຕາຍຂອງເດັກນ້ອຍລຸ່ມ 1 ປີ: ຕົວເລກລາຍງານຈາກລະບົບຂໍ້ມູນດ້ານສຸຂະພາບ DHIS 2 ເຫັນວ່າຈຳນວນເດັກນ້ອຍລຸ່ມ 1 ປີ ທີ່ເສຍຊີວິດ ໃນປີ 2021 ມີ 2.027 ຄົນ, ເທົ່າກັບ 12,8/1.000 ຄົນຕໍ່ເດັກເກີດມີຊີວິດ; ໃນປີ 2022 ມີ 2.022 ຄົນ, ເທົ່າກັບ 13/1.000 ຄົນຕໍ່ເດັກເກີດມີຊີວິດ ແລະ ແລະ ໃນປີ 2023 ແມ່ນ 11,8/1.000 ຄົນຕໍ່ເດັກເກີດມີຊີວິດ ເຫັນວ່າຈະສາມາດບັນລຸຄາດໝາຍໄດ້ (ຄາດໝາຍ: 20/1.000 ຄົນ).
2. ອັດຕາການຕາຍຂອງເດັກນ້ອຍລຸ່ມ 5 ປີ: ຕົວເລກລາຍງານຈາກລະບົບຂໍ້ມູນດ້ານສຸຂະພາບ DHIS 2 ມີຈຳນວນເດັກນ້ອຍລຸ່ມ 5 ປີ ທີ່ເສຍຊີວິດ ໃນປີ 2021 ມີ 2.253 ຄົນ, ເທົ່າກັບ 14,3/1.000 ຄົນຕໍ່ເດັກເກີດມີຊີວິດ; ໃນປີ 2022 ມີ 2.312 ຄົນ, ເທົ່າກັບ 14/1.000 ຄົນຕໍ່ເດັກເກີດມີຊີວິດ ແລະ ໃນປີ 2023 ແມ່ນ 13,4/1.000 ຄົນຕໍ່ເດັກເກີດມີຊີວິດ ເຫັນວ່າມີທ່າອ່ຽງຈະສາມາດບັນລຸຄາດໝາຍໄດ້ (ຄາດໝາຍ: 30/1.000 ຄົນ).
3. ອັດຕາສ່ວນການຕາຍຂອງແມ່: ຕົວເລກລາຍງານຈາກລະບົບຂໍ້ມູນ DHIS 2 ຈຳນວນແມ່ທີ່ເສຍຊີວິດ ໃນປີ 2021 ມີ 96 ຄົນ, ເທົ່າກັບ 60,8/100.000 ຄົນຕໍ່ເດັກເກີດມີຊີວິດ; ປີ 2022 ມີ 100 ຄົນ, ເທົ່າກັບ 64,1/100.000 ຄົນຕໍ່ເດັກເກີດມີຊີວິດ ແລະ ໃນປີ 2023 ແມ່ນ 42,2/100.000 ຄົນຕໍ່ເດັກເກີດມີຊີວິດ ເຫັນວ່າມີທ່າອ່ຽງຈະສາມາດບັນລຸຄາດໝາຍໄດ້ (ຄາດໝາຍ: 110/100.000 ຄົນ).

4. ອັດຕາການເກີດລູກມີແພດຊ່ວຍ: ໃນປີ 2021 ສາມາດປະຕິບັດໄດ້ 79,1% ຂອງປະຊາກອນເປົ້າໝາຍ; ປີ 2022 ແມ່ນ 80,5% ແລະ ໃນປີ 2023 ແມ່ນ 85,1% ຂອງປະຊາກອນເປົ້າໝາຍ ເຫັນວ່າມີທ່າອ່ຽງຈະສາມາດບັນລຸຄາດໝາຍໄດ້ (ຄາດໝາຍ: 85%).
5. ອັດຕາການໃຫ້ວັກຊີນກັນພະຍາດ: ໃນປີ 2021 ສາມາດປະຕິບັດໄດ້ 86,6% ຂອງປະຊາກອນເປົ້າໝາຍ; ປີ 2022 ແມ່ນ 92% ແລະ ໃນປີ 2023 ແມ່ນ 96,2% ເຫັນວ່າມີທ່າອ່ຽງຈະສາມາດບັນລຸຄາດໝາຍໄດ້ (ຄາດໝາຍ: 95%).
6. ອັດຕາການຊົມໃຊ້ນໍ້າສະອາດ: ໃນປີ 2021 ສາມາດປະຕິບັດໄດ້ 90,1% ຂອງປະຊາກອນທັງໝົດ; ປີ 2022 ແມ່ນ 92,1% ແລະ ໃນປີ 2023 ແມ່ນ 93,3% ເຫັນວ່າມີທ່າອ່ຽງຈະສາມາດບັນລຸຄາດໝາຍໄດ້ (ຄາດໝາຍ: 95%).
7. ອັດຕາການຊົມໃຊ້ວິດຖ່າຍຄອບຄົວ: ໃນປີ 2021 ສາມາດປະຕິບັດໄດ້ 81,05% ຂອງຄອບຄົວທັງໝົດ; ປີ 2022 ແມ່ນ 83,2% ແລະ ໃນປີ 2023 ແມ່ນ 84,6% ເຫັນວ່າມີທ່າອ່ຽງຈະສາມາດບັນລຸຄາດໝາຍໄດ້ (ຄາດໝາຍ: 85%).
8. ອັດຕາການປະກາດ ແລະ ຮັບຮອງເປັນບ້ານສາທາລະນະສຸກແບບຢ່າງ: ໃນປີ 2021 ສາມາດປະຕິບັດໄດ້ 83% ຂອງຈໍານວນບ້ານທັງໝົດໃນທົ່ວປະເທດ; ປີ 2022 ປະຕິບັດໄດ້ 86,87% ແລະ ໃນປີ 2023 ປະຕິບັດໄດ້ 89,4% ເຫັນວ່າສາມາດບັນລຸຄາດໝາຍໄດ້ແລ້ວ (ຄາດໝາຍ: 85%).

- **ມີ 3 ຕົວຊີ້ບອກ ທີ່ທ້າທາຍ ແລະ ມີທ່າອ່ຽງຈະບໍ່ສາມາດບັນລຸຄາດໝາຍ ຄື:**

1. ອັດຕາສ່ວນເດັກນ້ອຍລຸ່ມ 5 ປີ ທີ່ມີນໍ້າໜັກຕໍ່າກວ່າມາດຕະຖານ: ອີງຕາມຜົນການສໍາຫຼວດດັດຊະນີໝາຍສັງຄົມລາວ (LSIS) ໃນປີ 2023 ແມ່ນ 24,3% ເຫັນວ່າມີທ່າອ່ຽງບໍ່ສາມາດບັນລຸຄາດໝາຍ (ຄາດໝາຍ: 15%).
2. ອັດຕາສ່ວນເດັກນ້ອຍລຸ່ມ 5 ປີ ທີ່ມີລວງສູງຕໍ່າກວ່າມາດຕະຖານ (ຂາດສານອາຫານຊໍາເຮື້ອ): ອີງຕາມຜົນການສໍາຫຼວດດັດຊະນີໝາຍສັງຄົມລາວ (LSIS) ໃນປີ 2023 ແມ່ນ 32,8% ເຫັນວ່າມີທ່າອ່ຽງບໍ່ສາມາດບັນລຸຄາດໝາຍ (ຄາດໝາຍ: 27%).
3. ອັດຕາການປົກຄຸມປະກັນສຸຂະພາບ: ໃນປີ 2021 ສາມາດປະຕິບັດໄດ້ 94% ຂອງປະຊາກອນເປົ້າໝາຍ ແລະ ນັບແຕ່ປີ 2022 ມາຮອດປີ 2023 ແມ່ນ 94,5% ເຫັນວ່າມີທ່າອ່ຽງຈະບໍ່ສາມາດບັນລຸຄາດໝາຍໄດ້ (ຄາດໝາຍ: 95%).

ນອກນີ້, ອາຍຸຍືນສະເລ່ຍລວມ ເຊິ່ງຄາດຄະເນຈາກຜົນຂອງການສໍາຫຼວດພົນລະເມືອງ ແລະ ທີ່ຢູ່ອາໃສ ປີ 2015 ຂອງສູນສະຖິຕິແຫ່ງຊາດ ເຫັນວ່າໃນປີ 2021 ແລະ ປີ 2022 ອາຍຸຍືນສະເລ່ຍລວມແມ່ນ 67 ປີ.

<u>ສິ່ງທ້າທາຍ</u>: ນອກຈາກຜົນສໍາເລັດພົ້ນເດັ່ນທີ່ສາມາດຍາດມາໄດ້ນັ້ນ, ການຈັດຕັ້ງປະຕິບັດວຽກງານຈຸດສຸມສາທາລະນະສຸກ ຍັງພົບກັບຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍຫຼາຍດ້ານເຊັ່ນກັນ ເປັນຕົ້ນ:

1. ພື້ນຖານໂຄງລ່າງດ້ານສາທາລະນະສຸກ ແລະ ອຸປະກອນການແພດຢູ່ຫຼາຍທ້ອງຖິ່ນ ໂດຍສະເພາະຂັ້ນໂຮງໝໍຊຸມຊົນ ແລະ ໂຮງໝໍນ້ອຍແມ່ນເກົ່າເປ່ເພ ແລະ ບໍ່ໄດ້ມາດຕະຖານ ເຮັດໃຫ້ການບໍລິການສຸຂະພາບ ບໍ່ໄດ້ດີເທົ່າທີ່ຄວນ;
2. ພະນັກງານແພດໝໍຢູ່ບັນດາໂຮງໝໍແຫ່ງຕ່າງໆ ໂດຍສະເພາະໂຮງໝໍນ້ອຍຍັງບໍ່ພຽງພໍ ທັງທາງດ້ານປະລິມານ ແລະ ຄຸນນະພາບ, ຍັງມີຫາງສຽງຈົ່ມວ່າຂອງສັງຄົມຍ້ອນລະບົບການບໍລິການບໍ່ສະດວກ ເປັນທີ່ໄວ້ວາງໃຈ ແລະ ທ່າທີຮັບໃຊ້ຂອງແພດໝໍ ບໍ່ທັນປະຕິບັດໄດ້ດີເທົ່າທີ່ຄວນ;

3. ຫຼາຍໂຮງໝໍມີບັນຫາດ້ານການເງິນ ຍ້ອນການທົດແທນຄືນຄ່າບໍລິການທີ່ຕິດພັນກັບກອງທຶນປະກັນສຸຂະພາບ, ປະກັນສັງຄົມ ແລະ ຄ່າໃຊ້ຈ່າຍຕ່າງໆທີ່ນຳໃຊ້ເຂົ້າໃນການຕອບໂຕ້ການລະບາດຂອງພະຍາດໂຄວິດ-19 ມີຄວາມຊັກຊ້າ ແລະ ບໍ່ທັນກັບສະພາບການ;

4. ການແຈກຢາຍ ແລະ ອຸປະກອນການແພດ ເພື່ອປະກອບໃຫ້ບັນດາໂຮງໝໍມີຄວາມຊັກຊ້າ, ລາຄາຢາມີການປ່ຽນແປງໄປຕາມການເໜັງຕີງຂອງອັດຕາແລກປ່ຽນ ຊຶ່ງບໍ່ເປັນໄປຕາມການສັນຍາ ເຮັດໃຫ້ຫຼາຍໂຮງໝໍມີຄວາມສ່ຽງຕໍ່ຄວາມຍືນຍົງ;

5. ຍັງມີບາງຕົວຊີ້ບອກໃນຈຳນວນ 11 ຕົວຊີ້ບອກ ແມ່ນບໍ່ທັນສາມາດບັນລຸໄດ້ ເປັນຕົ້ນແມ່ນ ການເກີດລູກມີແພດຊ່ວຍ, ການໃຫ້ວັກຊີນ Penta 3, ອັດຕາຊົມໃຊ້ນ້ຳສະອາດ, ອັດຕາປົກຄຸມດ້ວຍປະກັນສຸຂະພາບ; ພ້ອມດຽວກັນນັ້ນ, ບາງຄາດໝາຍຂອງບາງພະຍາດທີ່ມີລັກສະນະແຜ່ຫຼາຍ ເຊັ່ນ: ພະຍາດເອດສ໌, ວັນນະໂລກ, ໄຂ້ເລືອດອອກ ແລະ ພະຍາດຕິດຕໍ່ ແລະ ບໍ່ຕິດຕໍ່ຕ່າງໆ ທີ່ກຳລັງເຝົ້າລະວັງ ກໍມີຄວາມຈຳເປັນຈະຕ້ອງສືບຕໍ່ຕິດຕາມ ແລະ ມີມາດຕະການໃນການຄວບຄຸມເພື່ອບໍ່ໃຫ້ກາຍເປັນບັນຫາໃຫຍ່ດ້ານສາທາລະນະສຸກ;

6. ການຄຸ້ມຄອງໂຮງໝໍ ແລະ ຫ້ອງກວດພະຍາດເອກະຊົນ ບໍ່ທັນໄດ້ດີເທົ່າທີ່ຄວນ, ມີປະກົດການຫຍໍ້ທໍ້ເກີດຂຶ້ນຫຼາຍຢ່າງ ແລະ ມີຫາງສຽງຈົ່ມວ່າຕໍ່ພາລະບົດບາດການຄຸ້ມຄອງຂອງຂະແໜງສາທາລະນະສຸກ; ພ້ອມດຽວກັນ, ເລີ່ມມີປະກົດການດ້ານລົບໃນການຄຸ້ມຄອງພະນັກງານຜູ້ທີ່ມີຄວາມຮູ້ ແລະ ຄວາມຊຳນານງານດ້ານວິຊາການ;

7. ການປະຕິບັດບັນດາກົດໝາຍທີ່ປະກາດໃຊ້ ຍັງບໍ່ທັນໄດ້ຮັບຜົນດີເທົ່າທີ່ຄວນ ເປັນຕົ້ນ: ກົດໝາຍວ່າດ້ວຍເຄື່ອງດື່ມທີ່ມີທາດເຫຼົ້າ, ຢາສູບ, ການຄວບຄຸມພະຍາດຕິດຕໍ່, ກົດໝາຍວ່າດ້ວຍການປິ່ນປົວ ແລະ ອື່ນໆ.

### 2.1.2 ວຽກງານໂພຊະນາການ

ໄດ້ສຳເລັດການເຜີຍແຜ່ ແລະ ຈັດຕັ້ງປະຕິບັດດຳລັດວ່າດ້ວຍຜະລິດຕະພັນອາຫານ ແລະ ອຸປະກອນ ກ່ຽວກັບອາຫານສຳລັບເດັກອ່ອນ ແລະ ເດັກນ້ອຍ; ສຳເລັດການກໍ່ສ້າງສູນໂພຊະນາການແຫ່ງຊາດ ແລະ ການສ້າງຍຸດທະສາດແຫ່ງຊາດດ້ານໂພຊະນາການ; ສິ່ງເສີມຈຸລະສານອາຫານ ແລະ ຢາຂ້າແມ່ທ້ອງໃນກຸ່ມເປົ້າໝາຍເດັກ 6-11 ເດືອນ ເຊິ່ງສາມາດແຈກຢາຍ ວິຕາມິນອາ ໄດ້ຫຼາຍກວ່າ 70% ແລະ ແມ່ຫຼັງເກີດໄດ້ຮັບທາດເຫຼັກ 100%; ສຳເລັດການສ້າງແຫັບແຜນທີ່ 3Ws; ພ້ອມທັງ ສຳເລັດການອອກແບບເວບໄຊ້ເວີຊັ່ນ ທີ 2 ແລະ ກຳລັງຢູ່ໃນຂະບວນການພັດທະນາເວບໄຊ້; ສຳເລັດບົດລາຍງານ ແລະ ບົດສະເໜີນະໂຍບາຍໂດຍສັງເຂບ “ການປະເມີນຄຸນນະພາບປັດໄຈພາວະການຂາດສານອາຫານ” ແລະ “ວິທີການ ແລະ ການປະສານງານແບບຫຼາຍຂະແໜງການ ກ່ຽວກັບ ກຸ່ມກິດຈະກຳດ້ານໂພຊະນາການ” (ກໍລະນີສຶກສາຂອງແຂວງຜົ້ງສາລີ, ບໍ່ແກ້ວ, ຫົວພັນ ແລະ ສາລະວັນ); ສຳເລັດຮ່າງບົດຄົ້ນຄວ້າໃນ 5 ຫົວຂໍ້: (1) ອາຫານທີ່ຍອມຮັບໄດ້ (ການບໍລິໂພກຖືກຫຼັກໂພຊະນາການ) ແລະ ສະຖານະພາບໂພຊະນາການຂອງເດັກ 6-23 ເດືອນ ໃນ ສປປ ລາວ; (2) ຄວາມສຳພັນຂອງການບໍລິໂພກອາຫານທີ່ຫຼາກຫຼາຍຂອງແມ່ ແລະ ພາວະລວງສູງບໍ່ໄດ້ມາດຕະຖານຂອງເດັກນ້ອຍອາຍຸລຸ່ມ 5 ປີ ໃນ ສປປ ລາວ; (3) ປະເມີນຕົ້ນທຶນຄວາມຫຼາກຫຼາຍຂອງອາຫານໃນ ສປປ ລາວ; (4) ສາຍພົວພັນລະຫວ່າງສຸຂາພິບານ ແລະ ສຸຂະອະນາໄມ (WASH) ຕໍ່ກັບການຂາດສານອາຫານໃນເດັກລຸ່ມ 5 ປີ ແລະ (5) ສຳເລັດຮ່າງບົດຄົ້ນຄວ້າຜົນກະທົບຂອງການຝາກທ້ອງຕໍ່ກັບການຂາດສານອາຫານໃນເດັກລຸ່ມ 2 ປີ (ກໍລະນີສຶກສາຂອງແຂວງຜົ້ງສາລີ, ບໍ່ແກ້ວ, ຫົວພັນ ແລະ ສາລະວັນ). ການຈັດຕັ້ງປະຕິບັດໂຄງການສ້າງຖານຂໍ້ມູນແຫ່ງຊາດດ້ານໂພຊະນາການ (NIPN) ໄລຍະ 2 ແມ່ນຈະໄດ້ຂະຫຍາຍວຽກງານລົງສູ່ທ້ອງຖິ່ນຫຼາຍຂຶ້ນ ໂດຍໄດ້ກຳນົດເອົາ 6 ແຂວງເປົ້າໝາຍຄື: ແຂວງຜົ້ງສາລີ, ອຸດົມໄຊ, ຄຳມ່ວນ, ສະຫວັນນະເຂດ, ສາລະວັນ ແລະ ເຊກອງ ເພື່ອສ້າງຄວາມເຂັ້ມແຂງດ້ານການສ້າງຂໍ້ມູນ-ຂ່າວສານ ທີ່ຕິດພັນກັບວຽກງານໂພຊະນາການພາຍໃນແຂວງເປົ້າໝາຍດັ່ງກ່າວ.

ສິ່ງທ້າທາຍ: ການຂາດສານອາຫານແມ່ນຍັງເປັນສິ່ງທ້າທາຍໃນການພັດທະນາຢູ່ ສປປ ລາວ, ຊຶ່ງອັດຕາສ່ວນ (33,1% ໃນປີ 2017) ຍັງສືບຕໍ່ສູງຫຼາຍ ຖ້າທຽບໃສ່ອັດຕາສ່ວນຂອງປະເທດພາກພື້ນ ແລະ ຍັງມີອັດຕາສ່ວນທີ່ບໍ່ເທົ່າທຽມກັນ ທັງໃນຂັ້ນແຂວງ ແລະ ລະຫວ່າງກຸ່ມຄົນຮັ່ງມີ ແລະ ຊົນເຜົ່າທີ່ແຕກຕ່າງກັນ. ເດັກນ້ອຍປະມານ 73.000 ຄົນ ປະເຊີນກັບການຂາດສານອາຫານ ເປັນສາເຫດກໍໃຫ້ເກີດພະຍາດໃນໄວເດັກ ເຊັ່ນ: ພະຍາດປອດບວມ. ສະຖິຕິໃນເດືອນກັນຍາ ປີ 2022 ເຫັນວ່າ: 14% ຂອງຄົວເຮືອນແມ່ນຂາດແຄນສະບຽງອາຫານໃນລະດັບປານກາງ ຫຼື ຮ້າຍແຮງ, ສໍາລັບຢູ່ໃນເຂດຊົນນະບົດແມ່ນຫຼາຍກວ່າ 17% ແລະ 20% ຂອງຄົວເຮືອນແມ່ນເພດຍິງທີ່ເປັນຫົວໜ້າຄົວເຮືອນ, ປະມານ 25% ຂອງຄົວເຮືອນແມ່ນບໍ່ສາມາດສະໜອງຄວາມຕ້ອງການດ້ານອາຫານ ແລະ ໂພສະນາການ ເນື່ອງຈາກລາຍໄດ້ຫຼຸດລົງ, 15% ຂອງຄົວເຮືອນມີອາຫານພຽງພໍ, 12% ການບໍລິໂພກອາຫານຕາມເສັ້ນມາດຖານ ແລະ 3% ການບໍລິໂພກອາຫານທີ່ບໍ່ຄົບໂພຊະນາການ.

## 2.2 ແຜນວຽກຈຸດສຸມທີ 2: ປັບປຸງຄຸນນະພາບການສຶກສາໃນທຸກລະດັບໃຫ້ສູງຂຶ້ນ ພ້ອມທັງສ້າງເງື່ອນໄຂການເຂົ້າເຖິງການສຶກສາເພື່ອໃຫ້ມີຄວາມພ້ອມໃນການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ທັງເປັນການຮອງຮັບອຸດສາຫະກໍາຍຸກ 4.0

ນັບແຕ່ປີ 2020 ເປັນຕົ້ນມາ ສປປ ລາວ ກໍໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ-19 ເຮັດໃຫ້ສະພາບເສດຖະກິດ ແລະ ການເງິນຂອງປະເທດເຮົາພົບຄວາມຫຍຸ້ງຍາກ ແລະ ສະພາບການເປັນຢູ່ຂອງປະຊາຊົນບັນດາເຜົ່າມີຄວາມຝືດເຄືອງ, ຄ່ານໍ້າມັນເຊື້ອໄຟ ແລະ ຄ່າຄອງຊີບແພງຂຶ້ນ ຊຶ່ງມີຜົນກະທົບທາງລົບ ທັງທາງກົງ ແລະ ທາງອ້ອມຕໍ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ກໍຄື ແຜນພັດທະນາຂະແໜງການສຶກສາ ແລະ ກິລາ ໃນໄລຍະ 2 ປີເຄິ່ງຜ່ານມາ; ຈາກສະພາບດັ່ງກ່າວບວກກັບການສະໜອງໂກຕ້າລັດຖະກອນຄູໃໝ່ຂອງລັດຖະບານທີ່ມີຈໍາກັດ ໄດ້ສົ່ງຜົນກະທົບທາງລົບຕໍ່ການເຂົ້າຮຽນຂອງນັກຮຽນ ແລະ ການປະລະການຮຽນຂອງນັກຮຽນໃນທຸກລະດັບ. ເຖິງແນວໃດກໍຕາມ, ຂະແໜງສຶກສາທິການ ແລະ ກິລາ ກໍຍັງສືບຕໍ່ສຸມທຸກຊັບພະຍາກອນທີ່ມີຈໍາກັດ ເຂົ້າໃສ່ການພັດທະນາການສຶກສາ, ວິທະຍາສາດ ແລະ ກິລາ ເປັນຕົ້ນ: ຮ່ວມມືຢ່າງໃກ້ຊິດລະຫວ່າງຂະແໜງການສຶກສາ ແລະ ສາທາລະນະສຸກ ເຮັດໃຫ້ໂຮງຮຽນທັງໝົດໃນທົ່ວປະເທດສາມາດເປີດການຮຽນຄືນໄດ້ຢ່າງປອດໄພ ໂດຍມີການໂຄສະນາການກັບຄືນສູ່ໂຮງຮຽນ ຜ່ານທາງໂທລະພາບ, ຊ່ອງທາງວິທະຍຸ ແລະ ເວທີສື່ສັງຄົມອອນລາຍຕ່າງໆ ຊຶ່ງສາມາດເຂົ້າເຖິງປະຊາກອນຈໍານວນຢ່າງຫຼວງຫຼາຍ; ໄດ້ສ້າງຖານຂໍ້ມູນການຮຽນຮູ້ “ຄັງປັນຍາລາວ” ແລະ ພັດທະນາສື່ການສອນຮູບແບບດິຈິຕອນລວມທັງໄດ້ສ້າງວີດີໂອການສອນເພື່ອຮັບໃຊ້ໃນການຝຶກອົບຮົມຄູ ແລະ ອອກລາຍການໂທລະພາບຊ່ອງສຶກສາ ແລະ ກິລາ; ໄດ້ມີການສິດສອນເພີ່ມເຕີມ ໃຫ້ແກ່ເດັກນ້ອຍໃນ ຂັ້ນ ປ.1 ແລະ ປ.2 ໃນເມືອງທີ່ດ້ອຍໂອກາດ; ໄດ້ສົ່ງເສີມຄວາມສາມາດດ້ານສຸຂະພາບຈິດ ແລະ ຊ່ວຍເຫຼືອທາງດ້ານຈິດໃຈ ໃຫ້ແກ່ຄູ-ອາຈານ ແລະ ອໍານວຍການໂຮງຮຽນ ໂດຍໄດ້ຝຶກອົບຮົມກ່ຽວກັບການຊ່ວຍເຫຼືອດ້ານຈິດຕະວິທະຍາ (Psychosocial First aid) ເພື່ອສະໜອງການຊ່ວຍເຫຼືອດ້ານສຸຂະພາບຈິດໃຫ້ແກ່ຄູ-ອາຈານ ແລະ ນັກຮຽນ ແລະ ໄດ້ຄັດຈ້ອນຫຼັກສູດໃຫ້ສັ້ນເຂົ້າ ໂດຍເນັ້ນໃສ່ແຕ່ເນື້ອໃນທີ່ສໍາຄັນ ເພື່ອມາສິດສອນນັກຮຽນ, ເຊິ່ງຜົນສໍາເລັດວຽກງານຈຸດສຸມແຕ່ລະດ້ານ ມີດັ່ງນີ້:

- **ຂະແໜງການຍ່ອຍການສຶກສາກ່ອນໄວຮຽນ:** ໃນໄລຍະ 2 ປີເຄິ່ງຜ່ານມາ, ການຂະຫຍາຍຕາໜ່າງການສຶກສາກ່ອນໄວຮຽນ ແມ່ນເນັ້ນໃສ່ການຂະຫຍາຍຫ້ອງກຽມປະຖົມ, ສ້າງຕັ້ງກຸ່ມພັດທະນາເດັກໃນຊຸມຊົນ ແລະ ການສອນຄວບອາຍຸພ້ອມທັງໄດ້ສົ່ງເສີມໃຫ້ພາກສ່ວນເອກະຊົນ ມີສ່ວນຮ່ວມໃນການພັດທະນາການສຶກສາກ່ອນໄວຮຽນ. ຄຽງຄູ່ກັບການສະໜອງການສຶກສາກ່ອນໄວຮຽນໃນຮູບແບບດັ່ງກ່າວແລ້ວ; ກຸ່ມຮຽນຜ່ານການຫຼິ້ນ ກໍໄດ້ສືບຕໍ່ສະໜອງໃນເຂດທີ່ບໍ່ມີເງື່ອນໄຂໃນການຂະຫຍາຍຫ້ອງກຽມ ແລະ ໂຮງຮຽນອະນຸບານ ໄປພ້ອມກັບການຂະຫຍາຍໂອກາດການເຂົ້າເຖິງການສຶກສາກ່ອນໄວຮຽນ. ນອກນັ້ນ, ຍັງໄດ້ມີການພັດທະນາ ແລະ ປັບປຸງຫຼັກສູດ, ຍົກລະດັບຜູ້ດູແລເດັກ ແລະ ຄູສອນໄດ້ຈໍານວນບໍ່ໜ້ອຍ, ດໍາເນີນການປະເມີນການປະຕິບັດໜ້າທີ່ຂອງຜູ້ອໍານວຍການໂຮງຮຽນ ເພື່ອແນໃສ່ການປັບປຸງການບໍລິຫານ

ແລະ ຄຸ້ມຄອງໂຮງຮຽນ, ສະໜອງອຸປະກອນຮັບໃຊ້ການຮຽນການສອນ, ສະໜອງສິ່ງອໍານວຍຄວາມສະດວກດ້ານສຸຂະອະນາໄມ ແລະ ສະໜອງອາຫານທ່ຽງໃນໂຮງຮຽນ ໃຫ້ແກ່ນັກຮຽນຈາກຄອບຄົວທຸກຍາກ ໂດຍສະເພາະຢູ່ເຂດຫ່າງໄກສອກຫຼີກ.

- **ຂະແໜງການຍ່ອຍຊັ້ນປະຖົມສຶກສາ:** ຊັ້ນປະຖົມສຶກສາ ຍັງເປັນຂະແໜງການຍ່ອຍທີ່ສຳຄັນໃນການສະໜອງທັກສະການອ່ານ, ການຂຽນພາສາລາວ ແລະ ທັກສະດ້ານຄະນິດສາດພື້ນຖານ; ໄດ້ເອົາໃຈໃສ່ເປັນພິເສດໃນການພັດທະນາ ແລະ ປັບປຸງຫຼັກສູດການຮຽນການສອນຄືນໃໝ່, ພິມປຶ້ມແບບຮຽນ ແລະ ຄູ່ມືຄູ, ສະໜອງອຸປະກອນຮັບໃຊ້ການຮຽນການສອນໃຫ້ໂຮງຮຽນປະຖົມໃນທົ່ວປະເທດ ພ້ອມທັງໄດ້ຝຶກອົບຮົມຄູສອນໃນການນໍາໃຊ້ຫຼັກສູດໃໝ່ດັ່ງກ່າວ. ມາຮອດປັດຈຸບັນ ຫຼັກສູດໃໝ່ແມ່ນໄດ້ພັດທະນາສຳເລັດຮອດ ຂັ້ນ ປ.5 ແລະ ກຳລັງກະກຽມການຝຶກອົບຮົມຄູໃນການນຳໃຊ້ຫຼັກສູດດັ່ງກ່າວ. ນອກຈາກນັ້ນ, ໄດ້ມີການປັບປຸງການສ້າງຕັ້ງກຸ່ມໂຮງຮຽນ ເພື່ອແນໃສ່ການນຳໃຊ້ຄູ ແລະ ຊັບພະຍາກອນຮ່ວມກັນພາຍໃນກຸ່ມ; ການປັບປຸງພື້ນຖານໂຄງລ່າງດ້ານການສຶກສາ ໄດ້ສົມທົບກັບພະແນກສຶກສາທິການ ແລະ ກິລານະຄອນຫຼວງ/ແຂວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ/ນະຄອນ ແລະ ອົງການປົກຄອງຂັ້ນທ້ອງຖິ່ນ ຍາດແຍ່ງທຶນຈາກທັງພາຍໃນ ແລະ ຕ່າງປະເທດ ເພື່ອມາປຸກສ້າງ ແລະ ສ້ອມແປງໂຮງຮຽນ; ໄດ້ສະໜອງສິ່ງອຳນວຍຄວາມສະດວກດ້ານສຸຂະອະນາໄມ, ສະໜອງອາຫານທ່ຽງໃນໂຮງຮຽນ ແລະ ທັງສະໜອງທຶນການສຶກສາໃຫ້ແກ່ເດັກນັກຮຽນຈາກຄອບຄົວທຸກຍາກ ອັນເຮັດໃຫ້ອັດຕາປະລະການຮຽນຂອງນັກຮຽນ ປ.1 ຫຼຸດລົງຈາກ 6,4% ໃນສົກຮຽນ 2019-2020 ເປັນ 4,8% ໃນສົກຮຽນ 2022-2023 ແລະ ອັດຕາຈົບຊັ້ນປະຖົມສຶກສາເພີ່ມຂຶ້ນຈາກ 92,6% ໃນສົກຮຽນ 2019-2020 ເປັນ 93,1% ໃນສົກຮຽນ 2022-2023.

- **ຂະແໜງການຍ່ອຍຊັ້ນມັດທະຍົມສຶກສາ (ລວມທັງມັດທະຍົມຕອນຕົ້ນ ແລະ ຕອນປາຍ):** ໄດ້ເອົາໃຈໃສ່ປັບປຸງຫຼັກສູດການຮຽນການສອນ, ສະໜອງສື່ການຮຽນການສອນຕ່າງໆ ແລະ ຝຶກອົບຮົມຄູໃນການນຳໃຊ້ຫຼັກສູດ ລວມທັງຝຶກອົບຮົມຄູປະຈຳການໃນຫົວຂໍ້ຕ່າງໆ. ຄຽງຄູ່ກັນນັ້ນ, ກໍໄດ້ປັບປຸງພື້ນຖານໂຄງລ່າງໃຫ້ບັນດາໂຮງຮຽນມັດທະຍົມຈຳນວນໜຶ່ງໃນທົ່ວປະເທດ ໂດຍນຳໃຊ້ງົບປະມານຈາກລັດຖະບານ ກໍຄື ງົບປະມານການຊ່ວຍເຫຼືອຈາກຄູ່ຮ່ວມພັດທະນາ. ນອກນັ້ນ, ຍັງໄດ້ສະໜອງເບ້ຍລ້ຽງໃຫ້ແກ່ນັກຮຽນທີ່ດ້ອຍໂອກາດ ແລະ ນັກຮຽນຈາກຄອບຄົວທຸກຍາກຈຳນວນໜຶ່ງ; ປັບປຸງ ແລະ ພັດທະນານິຕິກຳຈຳນວນໜຶ່ງທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດ ແລະ ຄຸ້ມຄອງການຮຽນການສອນໃນຊັ້ນມັດທະຍົມສຶກສາ. ພ້ອມກັນນັ້ນ, ກໍໄດ້ຂະຫຍາຍການສະໜອງຫຼັກສູດ ແລະ ຈັດຕັ້ງການຮຽນການສອນສາມັນວິຊາຊີບໃນໂຮງຮຽນສາມັນກິນນອນຊົນເຜົ່າ ໃນທົ່ວປະເທດ.

- **ຂະແໜງການຍ່ອຍການສຶກສານອກໂຮງຮຽນ:** ເຖິງວ່າໄດ້ປະກາດລຶບລ້າງຄວາມບໍ່ຮູ້ໜັງສືໃນທົ່ວປະເທດໃນທົດສະວັດທີ່ຜ່ານມາແລ້ວ, ແຕ່ລັດຖະບານ ກໍຍັງຖືເອົາວຽກງານການຈັດຕັ້ງການຮຽນ-ການສອນລຶບລ້າງຄວາມບໍ່ຮູ້ໜັງສື ແລະ ບຳລຸງຍົກລະດັບການສຶກສາຊັ້ນປະຖົມ ແລະ ຊັ້ນມັດທະຍົມ ເປັນວຽກທີ່ສຳຄັນຈະຕ້ອງສືບຕໍ່ຈັດຕັ້ງປະຕິບັດໃນຂອບເຂດທົ່ວປະເທດ ເພື່ອຮັບມືກັບຈຳນວນນັກຮຽນທີ່ປະລະການຮຽນໃນສາຍສາມັນສຶກສາໃນແຕ່ລະປີ. ພິເສດໃນໄລຍະ 2 ປີ ເຄິ່ງຜ່ານມາ ໄດ້ສຳເລັດການປະກາດເປັນເມືອງຈົບຊັ້ນມັດທະຍົມຕອນຕົ້ນບຳລຸງໃນທົ່ວປະເທດ; ໄດ້ຈັດຕັ້ງການຮຽນ-ການສອນບຳລຸງຍົກລະດັບການສຶກສາ ແລະ ຝຶກອົບຮົມວິຊາຊີບຂັ້ນພື້ນຖານໃຫ້ແກ່ປະຊາກອນໜຸ່ມ, ຜູ້ບໍ່ຮູ້ໜັງສື ແລະ ຜູ້ປະລະການຮຽນ ຕາມໂຄງການຫຼັກສູດການສຶກສານອກໂຮງຮຽນກຳນົດໄວ້ ເຊິ່ງໄດ້ມີຜູ້ຮຽນຈົບທັງໝົດຈຳນວນ 112.559 ຄົນ; ພິເສດແມ່ນໄດ້ພັດທະນາຂອບວຸດທິການສຶກສາທີ່ສາມາດເຊື່ອມຕໍ່ກັນລະຫວ່າງການສຶກສາໃນ ແລະ ນອກໂຮງຮຽນ.

- **ຂະແໜງການຍ່ອຍການສຶກສາຄູ:** ບຸກຄະລະກອນຄູ ຖືວ່າເປັນປັດໄຈນຳເຂົ້າເພື່ອປັບປຸງຄຸນນະພາບການຮຽນ-ການສອນທີ່ສຳຄັນ; ສະນັ້ນ, ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ແມ່ນເປັນບູລິມະສິດທີ່ໄດ້ສຸມໃສ່ໃນໄລຍະຜ່ານມາ, ຊຶ່ງໄດ້ປັບປຸງຫຼັກສູດການກໍ່ສ້າງຄູ ເພື່ອໃຫ້ສອດຄ່ອງກັບຫຼັກສູດສາມັນສຶກສາ; ຝຶກອົບຮົມ ແລະ ຍົກລະດັບຄູສອນໃນສະຖາບັນສ້າງຄູ. ນອກຈາກນີ້, ກໍໄດ້ປັບປຸງລະບົບການສຶກສານິເທດ, ສຳເລັດການພັດທະນາຂໍ້ຕົກລົງວ່າດ້ວຍການ

ພັດທະນາວິຊາຊີບຄູແບບຕໍ່ເນື່ອງ, ພັດທະນາມາດຕະຖານສະມັດຖະພາບດ້ານໄອຊີທີຂອງຄູໃນລາວ ແລະ ພັດທະນານະໂຍບາຍຄູແຫ່ງຊາດ; ພິເສດໄດ້ຍາດແຍ່ງການຊ່ວຍເຫຼືອຈາກຄູ່ຮ່ວມພັດທະນາ ເພື່ອມາສ້າງໂຮງຮຽນສາທິດ ໄດ້ຈຳນວນ 8 ແຫ່ງໃນທົ່ວປະເທດ.

- **ຂະແໜງການຍ່ອຍອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ:** ໄດ້ປັບປຸງການເຂົ້າເຖິງອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ໂດຍການປັບປຸງໂຄງລ່າງພື້ນຖານ, ສະໜອງອຸປະກອນເຕັກນິກ, ສະໜອງເບ້ຍລ້ຽງ ແລະ ສະໜອງການຝຶກອົບຮົມໄລຍະສັ້ນທີ່ມີຫຼາກຫຼາຍລະດັບປະກາດສະນິຍະບັດວິຊາຊີບທີ່ແຕກຕ່າງກັນ; ສົ່ງເສີມການຮ່ວມມືກັບບັນດາສະຖານປະກອບການໃນການສ້າງສີມືແຮງງານໃຫ້ມີຄຸນນະພາບ ແລະ ມີຄວາມສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານ ພ້ອມທັງຂະຫຍາຍສະຖານອາຊີວະສຶກສາ. ພິເສດໄດ້ສຳເລັດການສ້າງຕັ້ງວິທະຍາໄລເຕັກນິກວິຊາຊີບການລົດໄຟລາວ; ໄດ້ທົບທວນ, ປັບປຸງ ແລະ ພັດທະນາຫຼັກສູດການຮຽນ-ການສອນ ໂດຍສະເພາະໄດ້ສ້າງ ແລະ ພັດທະນາຫຼັກສູດວິຊາຊີບໃໝ່ຈຳນວນໜຶ່ງ; ສຳເລັດການປັງປຸງຄູ່ມືການຈັດການຮຽນ-ການສອນແບບຄວບຄູ່ ໄດ້ຈຳນວນ 13 ຫຼັກສູດ, ພັດທະນາຫຼັກສູດການຝຶກອົບຮົມແບບເນັ້ນໃສ່ສະມັດຖະພາບ ຈຳນວນ 34 ຫຼັກສູດ ແລະ ພັດທະນາມາດຕະຖານອາຊີບ ຈຳນວນ 14 ວິຊາຊີບ; ສຳເລັດການພັດທະນາດຳລັດວ່າດ້ວຍກອງທຶນອາຊີວະສຶກສາ; ໄດ້ແນະແນວວິຊາຊີບໃຫ້ແກ່ນັກຮຽນທີ່ຈົບຈາກຊັ້ນມັດທະຍົມສຶກສາຢ່າງກວ້າງຂວາງ ຈຶ່ງເຮັດໃຫ້ມີນັກສຶກສາສະໝັກເຂົ້າຮຽນໃນສະຖານອາຊີວະສຶກສາ ຈຳນວນທັງໝົດ 34.221 ຄົນ, ໃນຂະນະທີ່ຜູ້ທີ່ຈົບຈາກສະຖານອາຊີວະສຶກສາທັງພາກລັດ ແລະ ເອກະຊົນ ມີຈຳນວນທັງໝົດ 37.582 ຄົນ.

- **ຂະແໜງການຍ່ອຍການສຶກສາຊັ້ນສູງ:** ກະຊວງສຶກສາທິການ ແລະ ກິລາ ຮ່ວມກັບບັນດາສະຖາບັນການສຶກສາຊັ້ນສູງ ໄດ້ສືບຕໍ່ເອົາໃຈໃສ່ປັບປຸງ ແລະ ພັດທະນາຄຸນນະພາບການຮຽນ-ການສອນໃນບັນດາມະຫາວິທະຍາໄລຕ່າງໆ ເປັນຕົ້ນ: ສ້າງ ແລະ ປັບປຸງຫຼັກສູດການຮຽນ-ການສອນ ເພື່ອໃຫ້ແທດເໝາະກັບການຫັນປ່ຽນການສຶກສາໃນໄລຍະໃໝ່ ຈຳນວນທັງໝົດ 25 ຫຼັກສູດຄື: ລະດັບປະລິນຍາຕີ 21 ຫຼັກສູດ (ໃນນັ້ນ, ຫຼັກສູດຕໍ່ເນື່ອງ 4 ຫຼັກສູດ) ແລະ ລະດັບປະລິນຍາໂທ 4 ຫຼັກສູດ; ໄດ້ຮັບຮອງຕຳແໜ່ງວິຊາການຄູ ຈຳນວນ 251 ຄົນ, ເປັນຍິງ 98 ຄົນຄື: ຜູ້ຊ່ວຍອາຈານ 149 ຄົນ, ເປັນຍິງ 75 ຄົນ; ອາຈານ 81 ຄົນ, ເປັນຍິງ 18 ຄົນ, ຮອງສາດສະດາຈານ 16 ຄົນ, ເປັນຍິງ 3 ຄົນ ແລະ ສາດສະດາຈານ 5 ຄົນ, ເປັນຍິງ 2 ຄົນ. ໃນໄລຍະ 2 ສົກຮຽນຜ່ານມາ (2020-2021 ແລະ 2021-2022) ໄດ້ຮັບນັກສຶກສາເຂົ້າຮຽນໃໝ່ໃນບັນດາສະຖານການສຶກສາຊັ້ນສູງຕ່າງໆ ທັງພາກລັດ ແລະ ເອກະຊົນ ຈຳນວນ 28 ພັນກວ່າຄົນ, ໃນຂະນະທີ່ຜູ້ທີ່ຮຽນຈົບອອກຈາກສະຖາບັນການສຶກສາຊັ້ນສູງພາຍໃນປະເທດ ມີຈຳນວນ 20.700 ກວ່າຄົນ; ສຳເລັດການຄົ້ນຄວ້າວິທະຍາສາດ ຈຳນວນ 375 ຫົວຂໍ້. ນອກຈາກການສະໜອງການສຶກສາພາຍໃນປະເທດແລ້ວ ແຕ່ຊ່ວງປີ 2020-2022 ໄດ້ບໍລິການນັກຮຽນ-ນັກສຶກສາ ໄປສຶກສາຢູ່ຕ່າງປະເທດ ໄດ້ຈຳນວນ 8.630 ຄົນ, ເປັນຍິງ 4.297 ຄົນ ແລະ ກັບຈາກຕ່າງປະເທດ 7.187 ຄົນ, ເປັນຍິງ 3.601 ຄົນ.

- **ຂະແໜງການຍ່ອຍກິລາ-ກາຍຍະກຳ:** ເປັນຂະແໜງການຍ່ອຍໜຶ່ງ ເຮັດໜ້າທີ່ໃນການສົ່ງເສີມການອອກກຳລັງກາຍຂອງທົ່ວປວງຊົນລາວ ລວມທັງເຮັດໜ້າທີ່ສົ່ງເສີມກິລາອາຊີບ, ໃນໄລຍະຜ່ານມາໄດ້ຈັດຕັ້ງຂະບວນການອອກກຳລັງກາຍໃນວັນສຳຄັນຕ່າງໆ ໂດຍໄດ້ສົມທົບກັບສະຫະພັນກິລາແຫ່ງຊາດ, ສະຫະພັນກິລາຄົນພິການ ແລະ ສະຫະພັນກິລານັກຮຽນສາມັນ ຈັດການແຂ່ງຂັນກິລາລະດັບນາໆຊາດ, ແຂ່ງຂັນກິລາປະຈຳປີ, ຊີງຂັນຜູ້ນຳພັກ-ລັດ ແລະ ສະຫຼອງວັນສຳຄັນຂອງຊາດ ເປັນຕົ້ນ: ສຳເລັດການຊຸກຍູ້, ສົ່ງເສີມບັນດາແຂວງ/ນະຄອນຫຼວງ ຈັດການແຂ່ງຂັນກິລາ-ກາຍຍະກຳມວນຊົນປະຈຳປີ; ສຳເລັດການຈັດງານແຂ່ງຂັນກິລາຄົນພິການແຫ່ງຊາດ ຄັ້ງທີ III ທີ່ແຂວງຊຽງຂວາງເປັນເຈົ້າພາບ; ເຂົ້າຮ່ວມແຂ່ງຂັນກິລາຄົນພິການອາຊຽນພາຣາເກມ ຄັ້ງທີ 11 ແລະ ຄັ້ງທີ 12; ເຂົ້າຮ່ວມແຂ່ງຂັນຊີງແຊມໂລກ ປະເພດກິລາຍົກນ້ຳໜັກ; ເຂົ້າຮ່ວມແຂ່ງຂັນຊີງແຊມອາຊີ-ປາຊີຟິກ. ນອກຈາກນັ້ນ, ຍັງໄດ້ຍົກລະດັບຜູ້ບໍລິຫານ-ຄຸ້ມຄອງ, ກຳມະການຕັດສິນ, ຄູຝຶກກິລາ-ກາຍຍະກຳມວນຊົນຂັ້ນແຂວງ/ນະຄອນຫຼວງ ທັງໝົດໄດ້ຈຳນວນ 1.191 ຄົນ, ເປັນຍິງ 371 ຄົນ ໃນຈຳນວນ 10 ປະເພດກິລາ ແລະ ໃນລະດັບສາກົນ ໄດ້ 2 ຄົນ ແລະ ພັດທະນາບຸກຄະລາກອນກິລາຄົນພິການ ໄດ້ຈຳນວນ 2.155 ຄົນ, ເປັນຍິງ

528 ຄົນ. ນອກນັ້ນ, ສ້າງຕັ້ງສະຫະພັນກິລາແຫ່ງຊາດໃໝ່ ໄດ້ຈຳນວນ 5 ສະຫະພັນຄື : ຍິມນາສະຕິກ, ເບສບອນ ແລະ ຊອຟບອນ, ກິລາເຕັ້ນ, ກຸນບິກກະຕຳ ແລະ ຈູຈິດຊູ; ສ້າງຕັ້ງສະໂມສອນ ໄດ້ 1 ສະໂມສອນ ແລະ ໄດ້ປັບປຸງສະຫະພັນກິລາແຫ່ງຊາດ ຈຳນວນ 10 ສະຫະພັນ.

ຜ່ານການຈັດຕັ້ງປະຕິບັດວຽກງານຈຸດສຸມຕົວຈິງ ເພື່ອສະໜັບສະໜູນບັນດາຄາດໝາຍໃນຂະແໜງການສຶກສາ ແລະ ກິລາ ໃນຈຳນວນທັງໝົດ 15 ຄາດໝາຍ ເຫັນວ່າມີ 7 ຄາດໝາຍທີ່ມີຄວາມຄືບໜ້າດີ ແລະ 8 ຄາດໝາຍທີ່ມີລັກສະນະຖົດຖອຍ, ຊຶ່ງມີລາຍລະອຽດດັ່ງນີ້:

- **ມີ 7 ຕົວຊີ້ບອກ ທີ່ມີຄວາມຄືບໜ້າດີ ແລະ ມີທ່າອ່ຽງຈະສາມາດບັນລຸຄາດໝາຍ ຄື:**

1) ອັດຕາປະລະການຮຽນຂອງນັກຮຽນ ປ.1 ຫຼຸດລົງຈາກ 6,4% ໃນສົກຮຽນ 2019-2020 ເປັນ 4,8% ໃນສົກຮຽນ 2022-2023 (ຄາດໝາຍ: 4%).
2) ອັດຕາຈົບຊັ້ນປະຖົມສຶກສາ ເພີ່ມຂຶ້ນຈາກ 92,6% ໃນສົກຮຽນ 2019-2020 ເປັນ 93,1% ໃນສົກຮຽນ 2022-2023 (ຄາດໝາຍ: 95%).
3) ດັດຊະນີຄວາມສະເໝີພາບຍິງ-ຊາຍອັດຕາເລື່ອນຊັ້ນ ປ.5 ຂຶ້ນ ມ.1 ບັນລຸໄດ້ລະຫວ່າງ 0.99 (ຄາດໝາຍຢູ່ໃນລະຫວ່າງ: 0,97-1,03).
4) ປະຊາກອນໜຸ່ມ, ຜູ້ປະລະການຮຽນໃຫ້ໄດ້ບຳລຸງຜ່ານການສຶກສານອກໂຮງຮຽນ ແລະ ຝຶກອົບຮົມວິຊາຊີບ ສາມາດປະຕິບັດໄດ້ 112.559 ຄົນ, ເທົ່າກັບ 75,04% ຂອງແຜນການ (ຄາດໝາຍ 5ປີ: ໃຫ້ໄດ້ 150.000 ຄົນ).
5) ຄູຊັ້ນປະຖົມ ແລະ ມັດທະຍົມສຶກສາໃຫ້ໄດ້ຮັບການຝຶກອົບຮົມແຕ່ລະປີ ມີສູງກວ່າ 10% (ຄາດໝາຍ: ປີລະ 10% ທຽບໃສ່ຈຳນວນຄູສອນທັງໝົດ).
6) ສົ່ງເສີມໃຫ້ນັກສຶກສາທີ່ສະໝັກເຂົ້າຮຽນລະດັບມະຫາວິທະຍາໄລ ໄດ້ເຂົ້າຮຽນໃນສາຍວິທະຍາສາດທຳມະຊາດ, ເຕັກໂນໂລຊີ, ວິສະວະກຳ ແລະ ຄະນິດສາດ ໄດ້ຫຼາຍກວ່າ 2.500 ຄົນໃນແຕ່ລະປີ (ຄາດໝາຍ: ໃຫ້ໄດ້ປີລະ 2.500 ຄົນ).
7) ສົ່ງເສີມມວນຊົນທຸກເພດທຸກໄວ ເຂົ້າຮ່ວມການຫັດກາຍຍະບໍລິຫານ, ການອອກກຳລັງກາຍ ແລະ ການຫຼິ້ນກິລາກາຍຍະກຳ ບັນລຸໄດ້ 40,39% ຂອງພົນລະເມືອງລາວ (ຄາດໝາຍ: 50% ຂອງພົນລະເມືອງທັງໝົດ).

- **ມີ 8 ຄາດໝາຍທີ່ມີລັກສະນະຖົດຖອຍ ຄື:**

1) ອັດຕາເຂົ້າຮຽນຂອງເດັກ 5 ປີ ສະເລ່ຍທົ່ວປະເທດ ຫຼຸດລົງຈາກ 82,7% ໃນສົກຮຽນ 2019-2020 ເປັນ 81,9% ໃນສົກຮຽນ 2022-2023 (ຄາດໝາຍ: 86%).
2) ອັດຕານັກຮຽນເຂົ້າໃໝ່ ປ.1 ທຽບໃສ່ເດັກ 6 ປີ ຫຼຸດລົງເລັກໜ້ອຍຈາກ 98,5% ໃນສົກຮຽນ 2019-2020 ເປັນ 98,3% ໃນສົກຮຽນ 2022-2023 (ຄາດໝາຍ: 98%).
3) ອັດຕາເຂົ້າຮຽນໃໝ່ລວມ ປ.5 ຫຼຸດລົງຈາກ 100,4% ໃນສົກຮຽນ 2019-2020 ເປັນ 96,2% ໃນສົກຮຽນ 2022-2023 (ຄາດໝາຍ: 99%).
4) ອັດຕາປະລະການຮຽນຂອງນັກຮຽນຊັ້ນປະຖົມ ເພີ່ມຂຶ້ນຈາກ 4,3% ໃນສົກຮຽນ 2019-2020 ເປັນ 4,4% ໃນສົກຮຽນ 2022-2023 (ຄາດໝາຍ: 2%).
5) ອັດຕາເລື່ອນຊັ້ນ ປ.5 ຂຶ້ນ ມ.1 ຫຼຸດລົງຈາກ 85,1% ໃນສົກຮຽນ 2019-2020 ເປັນ 84,5% ໃນສົກຮຽນ 2022-2023 (ຄາດໝາຍ: 85%).
6) ອັດຕາປະລະການຮຽນຂອງນັກຮຽນຊັ້ນມັດທະຍົມຕອນຕົ້ນ ເພີ່ມຂຶ້ນຈາກ 10,3% ໃນສົກຮຽນ 2019-2020 ເປັນ 11,2% ໃນສົກຮຽນ 2022-2023 (ຄາດໝາຍ: 8%).

7) ອັດຕາເຂົ້າຮຽນໃໝ່ລວມ ຂັ້ນ ມ.4 ຫຼຸດລົງຈາກ 71,6% ໃນສົກຮຽນ 2019-2020 ເປັນ 65,3% ໃນສົກຮຽນ 2022-2023 (ຄາດໝາຍ: 74%).

8) ອັດຕາສ່ວນນັກຮຽນທີ່ຮຽນຈົບຊັ້ນມັດທະຍົມຕອນຕົ້ນໄດ້ເຂົ້າຮຽນຕໍ່ໃນສາຍອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ຫຼຸດຈາກ 3,8% ໃນສົກຮຽນ 2019-2020 ເປັນ 1,4% ໃນສົກຮຽນ 2022-2023 (ຄາດໝາຍ: ໃຫ້ໄດ້ 5%).

<u>ສິ່ງທ້າທາຍ</u>: ໃນໄລຍະ 2 ປີເຄິ່ງຜ່ານມາ ຂະແໜງການສຶກສາແມ່ນຂະແໜງການໜຶ່ງ ທີ່ໄດ້ຮັບຜົນກະທົບໂດຍກົງຈາກການລະບາດຂອງພະຍາດໂຄວິດ-19 ບວກກັບ ສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ເຮັດໃຫ້ພໍ່ແມ່ຜູ້ປົກຄອງຈຳນວນໜຶ່ງຍັງບໍ່ທັນເອົາໃຈໃສ່ຊຸກຍູ້ໃຫ້ລູກຫຼານເຂົ້າຮຽນເທົ່າທີ່ຄວນ ເຮັດໃຫ້ການຂະຫຍາຍການສຶກສາກ່ອນໄວຮຽນມີລັກສະນະຖົດຖອຍ ເປັນຕົ້ນ: ການຫຼຸດລົງຂອງອັດຕາເຂົ້າຮຽນຂອງເດັກ 5 ປີ, ອັດຕານັກຮຽນເຂົ້າຮຽນໃໝ່ສຸດທິ ແລະ ອັດຕາເຂົ້າຮຽນລວມຊັ້ນມັດທະຍົມຕອນປາຍ, ໃນຂະນະດຽວກັນອັດຕາປະລະການຮຽນຂອງນັກຮຽນຊັ້ນປະຖົມ, ມັດທະຍົມຕອນຕົ້ນ ແລະ ຕອນປາຍ ພັດເພີ່ມຂຶ້ນ, ຊຶ່ງສາມາດສັງລວມຕີລາຄາສາເຫດຕົ້ນຕໍ ໄດ້ດັ່ງນີ້:

1. ບັນຫາການຮຽນຈົບແລ້ວບໍ່ມີວຽກເຮັດງານທຳ ແລະ ການຫຼຸດລົງຂອງໂກຕ້າລັດຖະກອນ ກໍເປັນສາເຫດໜຶ່ງທີ່ເຮັດໃຫ້ນັກຮຽນບໍ່ຢາກຮຽນຕໍ່;

2. ໂຮງຮຽນຊັ້ນມັດທະຍົມຕັ້ງຢູ່ຫ່າງໄກຈາກກຸ່ມບ້ານ ເຮັດໃຫ້ນັກຮຽນຢູ່ໃນຄອບຄົວທຸກຍາກ ບໍ່ສາມາດໄປຮຽນໄດ້ຍ້ອນຂາດຫໍພັກ ແລະ ຂາດທຶນການສຶກສາ;

3. ຕົວເລກລັດຖະກອນຄູ ທີ່ໄດ້ຮັບໃນແຕ່ລະປີມີຈຳນວນໜ້ອຍ ຖ້າທຽບໃສ່ຕົວເລກການສູນເສຍຂອງຄູ; ສະນັ້ນ, ຈຶ່ງເຮັດໃຫ້ບໍ່ສາມາດຂະຫຍາຍຕາໜ່າງການສຶກສາໄດ້ ແລະ ເກີດມີການສິດສອນຫ້ອງຄວບເພີ່ມຂຶ້ນ ໂດຍສະເພາະຢູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ;

4. ງົບປະມານທີ່ໄດ້ຮັບການຈັດສັນໃຫ້ຂະແໜງການສຶກສາ, ວິທະຍາສາດ ແລະ ກິລາ ເພື່ອມາຮັບໃຊ້ການປັບປຸງຄຸນນະພາບການສຶກສາ, ວິທະຍາສາດ ແລະ ກິລາ ມີຈຳກັດ;

5. ຍັງມີນິຕິກຳຈຳນວນໜຶ່ງມີເນື້ອໃນທີ່ຍັງບໍ່ສອດຄ່ອງກັນ ແລະ ຈຳນວນໜຶ່ງມີເນື້ອໃນທັບຊ້ອນກັນ ເຮັດໃຫ້ການຈັດຕັ້ງປະຕິບັດຢູ່ຂັ້ນທ້ອງຖິ່ນ ມີຄວາມຫຍຸ້ງຍາກ ແລະ ບໍ່ມີຄວາມເປັນເອກະພາບ;

6. ໂອກາດທາງດ້ານເສດຖະກິດເປັນສິ່ງຈູງໃຈໜຶ່ງ ທີ່ພາໃຫ້ນັກຮຽນປະລະການຮຽນ ໂດຍສະເພາະຢູ່ຊັ້ນມັດທະຍົມສຶກສາ ເພື່ອໄປເຮັດວຽກຫາເງິນສ້າງລາຍໄດ້ໃຫ້ແກ່ຄອບຄົວ;

7. ການເຮັດການຜະລິດແບບເລື່ອນລອຍ ແລະ ການດຳລົງຊີວິດແບບກະແຈກກະຈາຍ ຍັງເປັນອຸປະສັກໃຫ້ແກ່ການສະໜອງການສຶກສາຊັ້ນປະຖົມຢ່າງທົ່ວເຖິງ;

8. ການແນະແນວວິຊາຊີບຕໍ່ນັກຮຽນໃນຊັ້ນມັດທະຍົມສຶກສາ ແມ່ນເປັນວຽກງານໜຶ່ງທີ່ສຳຄັນທີ່ຕ້ອງໄດ້ເອົາໃຈໃສ່ເພື່ອໃຫ້ນັກຮຽນໄດ້ຮັບຂໍ້ມູນທີ່ຫຼາກຫຼາຍກ່ຽວກັບທາງເລືອກໃນການຮຽນຂອງເຂົາເຈົ້າ;

9. ການມີສ່ວນຮ່ວມຂອງຜູ້ປະກອບການ ແລະ ຂະແໜງການທີ່ກ່ຽວຂ້ອງ ໃນການພັດທະນາກຳລັງແຮງງານຍັງບໍ່ທັນກວ້າງຂວາງ ເຮັດໃຫ້ນັກຮຽນທີ່ຮຽນຈົບອອກມາບໍ່ມີຄຸນນະພາບ, ໃນຂະນະດຽວກໍຂາດຕະຫຼາດແຮງງານ ເພື່ອຮອງຮັບນັກຮຽນທີ່ຮຽນຈົບຈາກສາຍອາຊີວະສຶກສາ;

10. ພື້ນຖານໂຄງລ່າງ, ສິ່ງອຳນວຍຄວາມສະດວກ, ປຶ້ມແບບຮຽນ, ຄູ່ມືຄູ, ສື່ການຮຽນ-ການສອນ, ເຄື່ອງທົດລອງ ແລະ ອຸປະກອນຮັບໃຊ້ການຮຽນ-ການສອນ ໃນທຸກຊັ້ນທຸກສາຍຍັງບໍ່ທັນພຽງພໍ.

**2.3 ແຜນວຽກຈຸດສຸມທີ 3: ກໍາລັງແຮງງານໄດ້ຮັບການພັດທະນາດ້ານສີມື, ຄວາມຊໍານານງານ ແລະ ມີລະບຽບວິໄນສູງຂຶ້ນ ທັງມີຄວາມຫຼາກຫຼາຍວິຊາຊີບ ແລະ ມີວຽກເຮັດງານທໍາທີ່ໝັ້ນຄົງ ແລະ ມີລາຍໄດ້ສູງຂຶ້ນ, ສາມາດຕອບສະໜອງຕາມຄວາມຕ້ອງການພັດທະນາເສດຖະກິດ-ສັງຄົມ.**

ໃນໄລຍະ 2 ປີເຄິ່ງຜ່ານມາ ໄດ້ເອົາໃຈໃສ່ສົ່ງເສີມພາກລັດ ແລະ ເອກະຊົນ ໃນການພັດທະນາສີມືແຮງງານໃຫ້ຜູ້ບໍ່ມີວິຊາຊີບ, ຜູ້ຕ້ອງການປ່ຽນອາຊີບ, ຜູ້ວ່າງງານ ແລະ ຜູ້ທີ່ຈະເຂົ້າສູ່ຕໍາແໜ່ງງານໃໝ່ ໃນລະດັບຕ່າງໆຕາມມາດຕະຖານສີມືແຮງງານແຫ່ງຊາດ ຈໍານວນ 37 ສາຂາອາຊີບຢູ່ບັນດາສະຖາບັນ, ສູນພັດທະນາສີມືແຮງງານ ແລະ ຝຶກເຄື່ອນທີ່ຕາມສາຂາອາຊີບຕ່າງໆ; ຊຸກຍູ້ສົ່ງເສີມບັນດາຫົວໜ່ວຍແຮງງານພັດທະນາສີມືແຮງງານຕາມສາຂາອາຊີບຕ່າງໆ; ສ້າງ ແລະ ປັບປຸງຫຼັກສູດພັດທະນາສີມືແຮງງານ ໄດ້ 20 ຫຼັກສູດ, ໃນນີ້: ສ້າງຫຼັກສູດໃໝ່ 5 ຫຼັກສູດ ແລະ ປັບປຸງຫຼັກສູດທີ່ມີແລ້ວໃຫ້ສອດຄ່ອງ ແລະ ສາມາດຕອບສະໜອງແຮງງານຕາມຕະຫຼາດແຮງງານ 15 ຫຼັກສູດ, ພ້ອມທັງສະໜອງອຸປະກອນ ແລະ ເຄື່ອງຈັກ ເພື່ອຮັບໃຊ້ການຝຶກສີມືຢູ່ສະຖາບັນພັດທະນາສີມືແຮງງານ, ສູນພັດທະນາສີມືແຮງງານນະຄອນຫຼວງວຽງຈັນ ແລະ ແຂວງອັດຕະປື; ສໍາເລັດການກໍ່ສ້າງຫໍພັກນັກຝຶກອົບຮົມ ແລະ ກໍາລັງສໍາຫຼວດ-ອອກແບບກໍ່ສ້າງ ແລະ ປັບປຸງພື້ນຖານໂຄງລ່າງການພັດທະນາສີມືແຮງງານຢູ່ນະຄອນຫຼວງວຽງຈັນ ແລະ ແຂວງອຸດົມໄຊ. ພ້ອມນັ້ນ, ຍັງໄດ້ປັບປຸງ ແລະ ຂະຫຍາຍຕາໜ່າງຈຸດບໍລິການຈັດຫາງານຂັ້ນແຂວງ ໄດ້ 2 ແຂວງ ແລະ ຂັ້ນເມືອງ ໄດ້ 33 ເມືອງ ພາຍໃນ 6 ແຂວງ, ເທົ່າກັບ 91,66% ຂອງແຜນການ (ແຜນການ 5ປີ: 36 ເມືອງ) ຊຶ່ງມາຮອດປັດຈຸບັນ ມີຈຸດບໍລິການຈັດຫາງງານຢູ່ທັງໝົດ 18 ແຂວງ ແລະ ຫ້ອງການ ຮສສ ເມືອງ ຈໍານວນ 36 ເມືອງ. ນອກຈາກນັ້ນ, ຍັງມີວິສາຫະກິດບໍລິການຈັດຫາງານທັງພາຍໃນ ແລະ ຕ່າງປະເທດ ຈໍານວນ 46 ບໍລິສັດ ທີ່ເຮັດໜ້າທີ່ບໍລິການຈັດຫາງານແບບຊຶ່ງໜ້າ ແລະ ອອນລາຍ ແລະ ໄດ້ປັບປຸງກົນໄກການບໍລິການຈັດຫາງານໄປສູ່ທັນສະໄໝເທື່ອລະກ້າວ ໂດຍໄດ້ອອກແຈ້ງການເຖິງບັນດາຫົວໜ່ວຍແຮງງານ, ຫົວໜ່ວຍການບໍລິການ, ໂຄງການລົງທຶນພາຍໃນ ແລະ ຕ່າງປະເທດ ແລະ ເຂດເສດຖະກິດພິເສດ ກ່ຽວກັບການຂຶ້ນທະບຽນແຮງງານລາວ ແລະ ແຮງງານຕ່າງປະເທດ; ພັດທະນາລະບົບໂປຣແກມ, ສະໜອງອຸປະກອນ ແລະ ສ້າງຄວາມເຂັ້ມແຂງໃຫ້ບຸກຄະລາກອນຢູ່ຕາມຈຸດບໍລິການຈັດຫາງານໃນຂັ້ນແຂວງ ແລະ ເມືອງ ໃຫ້ສາມາດນໍາໃຊ້ການເຊື່ອມຕໍ່ (Link) ເຂົ້າສູ່ລະບົບໂປຣແກມທີ່ສາມາດເຊື່ອມເຂົ້າກັນໃນຂອບເຂດທົ່ວປະເທດ ເຊື່ອມຕໍ່ກັບລະບົບຖານຂໍ້ມູນ-ຂ່າວສານຕະຫຼາດແຮງງານ LMIS (Labour Market Information System) ຊຶ່ງເປັນລະບົບທີ່ເກັບກໍາຄັງແຮງງານ ແລະ ຕໍາແໜ່ງງານວ່າງ; ເປີດໃຫ້ມີການສະໝັກງານ, ສໍາພາດ, ຄັດເລືອກ ແລະ ບັນຈຸໃສ່ຕໍາແໜ່ງວ່າງທາງອອນລາຍ ຊຶ່ງລະບົບຂໍ້ມູນ-ຂ່າວສານຕະຫຼາດແຮງງານຍັງໄດ້ກາຍເປັນຈຸດເຊື່ອມຕໍ່ລະຫວ່າງຖານຂໍ້ມູນແຮງງານລາວ, ແຮງງານຕ່າງປະເທດ ແລະ ເງິນເດືອນພື້ນຖານຂອງແຮງງານເຂົ້າກັບລະບົບ TaxRis ຂອງກະຊວງການເງິນ. ພ້ອມນັ້ນ, ຍັງໄດ້ປະສານສົມທົບກັບຫົວໜ່ວຍແຮງງານ, ອົງການປົກຄອງທ້ອງຖິ່ນ ແລະ ຄູ່ຮ່ວມພັດທະນາ ຈັດງານຕະຫຼາດນັດແຮງງານ, ຊຶ່ງສາມາດເກັບກໍາຂໍ້ມູນຄວາມຕ້ອງການແຮງງານ ໄດ້ 78.168 ຕໍາແໜ່ງ.

ຜ່ານການຈັດຕັ້ງປະຕິບັດວຽກງານຈຸດສຸມຂອງຂະແໜງແຮງງານ ແລະ ສະຫວັດດີການສັງຄົມ ເຫັນວ່າບັນດາຄາດໝາຍທີ່ໄດ້ກໍານົດໄວ້ ແມ່ນມີຄວາມຄືບໜ້າດີສົມຄວນ, ຊຶ່ງມີລາຍລະອຽດດັ່ງນີ້:

1. ພັດທະນາສີມືແຮງງານ ຢູ່ສະຖາບັນ, ບັນດາສູນພັດທະນາສີມືແຮງງານ ຕາມມາດຕະຖານສີມືແຮງງານແຫ່ງຊາດ ແລະ ຝຶກເຄື່ອນທີ່ຕາມສາຂາອາຊີບຕ່າງໆ ໄດ້ທັງໝົດ 8.942 ຄົນ, ຍິງ 3.523 ຄົນ, ເທົ່າກັບ 59,61% ຂອງແຜນການ (ແຜນການ 5ປີ: 40.000 ຄົນ); ໃນນີ້: ກະສິກໍາ 1.564 ຄົນ, ຍິງ 642 ຄົນ; ອຸດສາຫະກໍາ 5.659 ຄົນ, ຍິງ 1.859 ຄົນ ແລະ ບໍລິການ 1.719 ຄົນ, ຍິງ 1.022 ຄົນ.

2. ຊຸກຍູ້ສົ່ງເສີມບັນດາຫົວໜ່ວຍແຮງງານພັດທະນາສີມືແຮງງານຕາມສາຂາອາຊີບຕ່າງໆ ໄດ້ທັງໝົດ 26.819 ຄົນ, ຍິງ 13.113 ຄົນ, ລື່ນແຜນການ 7,28% (ແຜນການ 5ປີ: 25.000 ຄົນ); ໃນນີ້: ກະສິກຳ 8.684 ຄົນ, ຍິງ 4.683 ຄົນ; ອຸດສາຫະກຳ 12.596 ຄົນ, ຍິງ 5.578 ຄົນ ແລະ ບໍລິການ 5.539 ຄົນ, ຍິງ 2.852 ຄົນ.
3. ເຮັດການທົດສອບມາດຕະຖານສີມືແຮງງານຕາມມາດຕະຖານສີມືແຮງງານແຫ່ງຊາດ ແລະ ສາຂາອາຊີບຕ່າງໆ ໄດ້ 2.735 ຄົນ, ຍິງ 1.085 ຄົນ, ເທົ່າກັບ 73,92% ຂອງແຜນການ (ແຜນການ 5ປີ: 3.700 ຄົນ); ໃນນີ້: ກະສິກຳ 436 ຄົນ, ຍິງ 141 ຄົນ; ອຸດສາຫະກຳ 1.537 ຄົນ, ຍິງ 476 ຄົນ ແລະ ບໍລິການ 762 ຄົນ, ຍິງ 468 ຄົນ.
4. ພັດທະນາມາດຕະຖານສີມືແຮງງານຂອງຫົວໜ່ວຍແຮງງານ ເປັນມາດຕະຖານສີມືແຮງງານແຫ່ງຊາດ ໄດ້ຈຳນວນ 13 ສາຂາອາຊີບ, ລື່ນແຜນການ 30% (ແຜນການ 5ປີ: ໃຫ້ໄດ້ 10 ສາຂາອາຊີບ).
5. ສົ່ງເສີມການຈັດຫາວຽກເຮັດງານທຳເຂົ້າສູ່ຕະຫຼາດແຮງງານພາຍໃນ ແລະ ຕ່າງປະເທດ ໄດ້ທັງໝົດ 159.872 ຄົນ, ຍິງ 80.731 ຄົນ, ເທົ່າກັບ 40,76% ຂອງແຜນການ (ແຜນການ 5ປີ: 392.197 ຄົນ), ຊຶ່ງໄດ້ຈັດຫາວຽກເຮັດງານທຳພາຍໃນ ໄດ້ 69.066 ຄົນ, ຍິງ 30.417 ຄົນ, ເທົ່າກັບ 88,35% ຂອງຄວາມຕ້ອງການແຮງງານພາຍໃນ (ທັງໝົດ 78.168 ຕຳແໜ່ງ); ໃນນີ້: ກະສິກຳ 7.758 ຄົນ, ຍິງ 3.124 ຄົນ; ອຸດສາຫະກຳ 37.449 ຄົນ, ຍິງ 18.594 ຄົນ ແລະ ບໍລິການ 23.859 ຄົນ, ຍິງ 8.669 ຄົນ ແລະ ຈັດສົ່ງໄປອອກແຮງງານຢູ່ຕ່າງປະເທດໄດ້ 90.806 ຄົນ, ຍິງ 50.314 ຄົນ; ໃນນີ້: ກະສິກຳ 9.161 ຄົນ, ຍິງ 4.036 ຄົນ; ອຸດສາຫະກຳ 37.293 ຄົນ, ຍິງ 20.015 ຄົນ ແລະ ບໍລິການ 44.352 ຄົນ, ຍິງ 26.263 ຄົນ.
6. ໂຄງປະກອບກຳລັງແຮງງານແມ່ນໄດ້ອີງໃສ່ຜົນສຳຫຼວດກຳລັງແຮງງານ ປີ 2022 ຊີ້ໃຫ້ເຫັນວ່າ: ພົນລະເມືອງໃນເກນອອກແຮງງານທີ່ມີອາຍຸແຕ່ 15 ປີຂຶ້ນໄປ ມີປະມານ 5,3 ລ້ານຄົນ, ເປັນກຳລັງແຮງງານ ມີປະມານ 2,5 ລ້ານຄົນ, ເທົ່າກັບ 47,1% ຂອງພົນລະເມືອງໃນເກນອອກແຮງງານທີ່ມີອາຍຸ 15 ປີຂຶ້ນໄປ; ໃນນີ້: ຜູ້ມີວຽກເຮັດງານທຳ 2,47 ລ້ານຄົນ, ເທົ່າກັບ 97,6%. ໂຄງປະກອບກຳລັງແຮງງານທີ່ມີວຽກເຮັດງານທຳດັ່ງກ່າວ ໄດ້ແຍກຕາມໂຄງປະກອບເສດຖະກິດ ຄື: ຂະແໜງກະສິກຳ ກວມ 1,4 ລ້ານຄົນ, ເທົ່າກັບ 56,8%; ອຸດສາຫະກຳ ກວມ 252,4 ພັນຄົນ, ເທົ່າກັບ 10,2% ແລະ ບໍລິການ ກວມ 814,3 ພັນຄົນ, ເທົ່າກັບ 32,9% ແລະ ຜູ້ວ່າງງານປະມານ 61,2 ພັນຄົນ ເຮັດໃຫ້ອັດຕາວ່າງງານຢູ່ໃນລະດັບປະມານ 2,4% (ແຜນການ 5ປີ: 15% ໃນປີ 2025).
7. ໂຄສະນາເຜີຍແຜ່ ແລະ ກວດກາການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍແຮງງານໃນຫົວໜ່ວຍແຮງງານ ໄດ້ 5.036 ຄັ້ງ, ເທົ່າກັບ 40,29% ຂອງແຜນການ (ແຜນການ 5ປີ: 12.500 ຄັ້ງ), ຊຶ່ງມີຜູ້ອອກແຮງງານທັງໝົດ 161.251 ຄົນ, ຍິງ 63.718 ຄົນ; ຊຸກຍູ້ຫົວໜ່ວຍແຮງງານສ້າງ ແລະ ປັບປຸງກົດລະບຽບພາຍໃນ ໄດ້ 683 ແຫ່ງ, ລື່ນແຜນການ 36,60% (ແຜນການ 5ປີ: 500 ແຫ່ງ); ຊຸກຍູ້ຫົວໜ່ວຍແຮງງານໃຫ້ມີສັນຍາແຮງງານໄດ້ 292 ແຫ່ງ, ເທົ່າກັບ 58,40% ຂອງແຜນການ (ແຜນການ 5ປີ: 500 ແຫ່ງ).
8. ໄດ້ຮັບຄຳສະເໜີຂໍ້ຂັດແຍ່ງແຮງງານທັງໝົດ 316 ກໍລະນີ; ໃນນີ້: ໄດ້ຄົ້ນຄວ້າໄກ່ເກ່ຍ ສຳເລັດ 242 ກໍລະນີ, ເທົ່າກັບ 76,58% ຂອງຂໍ້ຂັດແຍ່ງທັງໝົດ (ແຜນການ 5ປີ: ໄກ່ເກ່ຍໃຫ້ໄດ້ 80% ຂອງຂໍ້ຂັດແຍ່ງໃນແຕ່ລະປີ) ແລະ ນຳຜົນປະໂຫຍດມາໃຫ້ຜູ້ອອກແຮງງານ ເປັນເງິນສົດ 7.956,34 ລ້ານກີບ, 38.000 ບາດ ແລະ 3.507,79 ໂດລາສະຫະລັດ; ກຳລັງໄກ່ເກ່ຍ 13 ກໍລະນີ ແລະ ສົ່ງໃຫ້ສານປະຊາຊົນສືບຕໍ່ພິຈາລະນາໄກເກ່ຍ 74 ກໍລະນີ ແລະ ຍົກເລີກ 1 ກໍລະນີ; ໃຫ້ຄຳປຶກສາດ້ານນິຕິກຳ ແລະ ລະບຽບການກ່ຽວກັບແຮງງານໃຫ້ແກ່ຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ ໄດ້ 3.000 ຄັ້ງ, ເທົ່າກັບ 60% ຂອງແຜນການ (ແຜນການ 5ປີ: 5.000 ຄັ້ງ).

ສິ່ງທ້າທາຍ: (1) ແຫຼ່ງຂໍ້ມູນໂຄງປະກອບກຳລັງແຮງງານຕາມຂະແໜງການເສດຖະກິດ ແລະ ຂໍ້ມູນຂ່າວສານຕະຫຼາດແຮງງານ ຍັງບໍ່ມີຄວາມຊັດເຈນ; ການດັດສົມລະຫວ່າງການສະໜອງ ແລະ ຄວາມຕ້ອງການໃນການພັດທະນາສີມືແຮງງານ ເຂົ້າສູ່ຕະຫຼາດແຮງງານພາຍໃນ ຍັງບໍ່ທັນກົມກຽວກັນ ແລະ ບໍ່ທັນມີການຮັບຮູ້ສີມືແຮງງານເຊິ່ງກັນ ແລະ ກັນ ລະຫວ່າງພາກສ່ວນພັດທະນາສີມືແຮງງານ ແລະ ຫົວໜ່ວຍແຮງງານ; ພື້ນຖານໂຄງລ່າງ, ເຄື່ອງຈັກ, ອຸປະກອນການພັດທະນາສີມືແຮງງານ ແລະ ມາດຕະຖານສີມືແຮງງານລະດັບຕ່າງໆ ຍັງມີຄວາມຈຳກັດ ແລະ ບໍ່ທັນຕອບສະໜອງກັບຄວາມຕ້ອງການຂອງຕະຫຼາດແຮງງານ. (2) ການສົ່ງເສີມການຈັດຫາງານ ແລະ ການເຂົ້າເຖິງການບໍລິການຈັດຫາງານໃນລະບົບຍັງບໍ່ທັນເຂັ້ມແຂງ; ແຮງງານເຮັດວຽກເພື່ອການຊົມໃຊ້ໃນຄົວເຮືອນທີ່ບໍ່ມີລາຍຮັບ ຫຼື ຜົນກຳໄລຍັງມີຫຼາຍ; ຜະລິດຕະພາບແຮງງານຍັງບໍ່ສູງ; ບັນຫາແຮງງານເຄື່ອນຍ້າຍຈາກຊົນນະບົດເຂົ້າສູ່ຕົວເມືອງ ແລະ ເຄື່ອນຍ້າຍໄປຕ່າງປະເທດເຮັດໃຫ້ເກີດມີການຂາດແຄນແຮງງານໃນທ້ອງຖິ່ນ ແລະ ໂຄງການລົງທຶນຢູ່ບາງບ່ອນ. (3) ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍຍັງບໍ່ທັນເປັນລະບົບຄົບຊຸດ; ການຈັດຕັ້ງຜັນຂະຫຍາຍນະໂຍບາຍ ແລະ ຍຸດທະສາດເຂົ້າໃນການວາງແຜນພັດທະນາແຮງງານ ແລະ ສະຫວັດດີການສັງຄົມ ລະຫວ່າງຂັ້ນກະຊວງ ແລະ ທ້ອງຖິ່ນ ຍັງບໍ່ທັນກົມກຽວ; ບັນດາໂຄງການລົງທຶນ ຍັງມີຈຳນວນຈຳກັດ ແລະ ບໍ່ສາມາດກະຕຸກຊຸກຍູ້ການບັນລຸຄາດໝາຍສູ້ຊົນຕ່າງໆ. ເຖິງແມ່ນວ່າ ລັດຖະບານໄດ້ມີຄວາມພະຍາຍາມຫຼຸດຜ່ອນຄ່າຄອງຊີບທີ່ເພີ່ມຂຶ້ນ ສຳລັບກຸ່ມແຮງງານທີ່ມີຄວາມບອບບາງ ໂດຍການເພີ່ມເງິນເດືອນຂັ້ນຕ່ຳຂອງ ສປປ ລາວ ຈາກ 1,1 ກີບ ຂຶ້ນເປັນ 1,2 ລ້ານກີບ ໃນປີ 2022 ແລະ ເປັນ 1,3 ລ້ານກີບ ໃນປີ 2023, ແຕ່ປຽບທຽບກັບຄ່າແຮງງານຂັ້ນຕ່ຳໃນປະເທດໃກ້ຄຽງ ແມ່ນຕ່ຳກວ່າເກືອບ 3 ເທົ່າຕົວ ແລະ ອັດຕາສ່ວນຄວາມແຕກຕ່າງ ທີ່ເພີ່ມຂຶ້ນໄວເນື່ອງຈາກເງິນກີບອ່ອນຄ່າ. ສະນັ້ນ, ຈຶ່ງເຮັດໃຫ້ແຮງງານເຄື່ອນຍ້າຍໄປເຮັດວຽກຢູ່ປະເທດໃກ້ຄຽງນັບມື້ນັບເພີ່ມຂຶ້ນໂດຍສະເພາະນັບແຕ່ການເປີດດ່ານຊາຍແດນປະເທດຄືນໃໝ່.

## 2.4 ແຜນວຽກຈຸດສຸມທີ 4: ສົ່ງເສີມການຄົ້ນຄ້ວາ ແລະ ນຳໃຊ້ຜົນການຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ, ເຕັກນິກວິຊາການ, ນະວັດຕະກຳໃໝ່ ແລະ ພູມປັນຍາ ເຂົ້າໃນການຊຸກຍູ້ການພັດທະນາເສດຖະກິດ-ສັງຄົມ

ການພັດທະນາວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳໃຫ້ກາຍເປັນກຳລັງແຮງພັດທະນາປະເທດ ຄຽງຄູ່ກັບການນຳໃຊ້ຜົນການຄົ້ນຄວ້າ, ເຕັກນິກ-ວິທະຍາສາດ, ເຕັກໂນໂລຊີ ແລະ ເສດຖະກິດ-ສັງຄົມ ພູມປັນຍາປະດິດ ກະທົບໃສ່ຂະບວນການຜະລິດ, ການບໍລິການ ເພື່ອສ້າງຄວາມຫຼາກຫຼາຍ ແລະ ສ້າງມູນຄ່າເພີ່ມຂອງສິນຄ້າ ເພື່ອຮອງຮັບການແຂ່ງຂັນກັບພາກພື້ນ ແລະ ສາກົນ ຕາມທິດຫັນເປັນເສດຖະກິດດິຈິຕອນ; ໃນໄລຍະ 2 ປີເຄິ່ງຜ່ານມາ ລັດຖະບານໄດ້ເອົາໃຈໃສ່ຄຸ້ມຄອງ, ສົ່ງເສີມການຄົ້ນຄວ້າວິທະຍາສາດ ແລະ ນະວັດຕະກຳອັນໃໝ່ໆ ພ້ອມທັງປັບປຸງຄຸນນະພາບຜົນການຄົ້ນຄວ້າວິທະຍາສາດ, ນະວັດຕະກຳ ແລະ ບໍລິການ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນຂຶ້ນກວ່າເກົ່າ ເປັນຕົ້ນ:

– ໄດ້ສຳເລັດການປັບປຸງກົດໝາຍວ່າດ້ວຍວິທະຍາສາດ ແລະ ເຕັກໂນໂລຊີ; ສ້າງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງການຄົ້ນຄວ້າວິທະຍາສາດຂອງກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ແລະ ຄຳແນະນຳ ຈຳນວນ 5 ສະບັບ; ປະກາດຮັບຫົວຂໍ້ຄົ້ນຄວ້າ, ສັງລວມຫົວຂໍ້ຄົ້ນຄວ້າປີ 2023 ໄດ້ທັງໝົດຈຳນວນ 194 ຫົວຂໍ້; ຄັດເລືອກຜູ້ຊ່ຽວຊານ ແລະ ຄະນະກຳມະການວິຊາການ ສຳລັບກັ່ນກອງ ແລະ ພິຈາລະນາຫົວຂໍ້ຄົ້ນຄວ້າວິທະຍາສາດ; ສຳເລັດການອອກໃບຢັ້ງຢືນຄວາມປອດໄພຈາກການນຳໃຊ້ເຄື່ອງກຳເນີດລັງສີໃຫ້ແກ່ໂຮງໝໍທັງພາກລັດ ແລະ ເອກະຊົນ ຈຳນວນ 75 ລາຍການ ແລະ ລົງຕິດຕັ້ງສະຖານີວັດແທກຄ່າປະລິມານລັງສີໃນສິ່ງແວດລ້ອມຢູ່ 4 ມະຫາວິທະຍາໄລໃນທົ່ວປະເທດ.

– ສຳເລັດການສ້າງ ແລະ ປະກາດໃຊ້ 2 ດຳລັດຄື: (1) ດຳລັດວ່າດ້ວຍການປັບໄໝ ແລະ ນຳໃຊ້ມາດຕະການຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການກ່ຽວກັບມາດຕະຖານ ແລະ (2) ດຳລັດວ່າດ້ວຍການປັບໄໝ ແລະ ນຳໃຊ້ມາດຕະການຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການກ່ຽວກັບການວັດແທກ; ໄດ້ເອົາໃຈໃສ່ຊຸກຍູ້ສົ່ງເສີມຜະລິດຕະພັນ

ພາຍໃນໃຫ້ໄດ້ຮັບມາດຕະຖານແຫ່ງຊາດ ຊຶ່ງສາມາດສ້າງ ແລະ ຮັບຮອງມາດຕະຖານແຫ່ງຊາດ ໄດ້ຈຳນວນ 283 ມາດຕະຖານ (ໃນນີ້: ດັດແກ້ 1 ມາດຕະຖານ, ສ້າງໃໝ່ 2 ມາດຕະຖານ, ຮັບຮອງມາດຕະຖານສາກົນເປັນມາດຕະຖານແຫ່ງຊາດ 280 ມາດຕະຖານ), ເທົ່າກັບ 31,44% ຂອງແຜນການ (ແຜນການ 5 ປີ: ໃຫ້ໄດ້ 900 ມາດຕະຖານ); ປັດຈຸບັນ ມີມາດຕະຖານແຫ່ງຊາດທີ່ໄດ້ປະກາດໃຊ້ ທັງໝົດຈຳນວນ 616 ມາດຕະຖານ.

– ກະກຽມການເປີດນຳໃຊ້ລະບົບ ການຍື່ນຄຳຮ້ອງຂໍຈົດທະບຽນຊັບສິນອຸດສາຫະກຳ, ພິດພັນໃໝ່, ແຈ້ງຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ, ຄຳສະເໜີຂໍແກ້ໄຂຂໍ້ຂັດແຍ່ງທາງດ້ານຊັບສິນທາງປັນຍາທາງດ້ານບໍລິຫານຜ່ານທາງເອເລັກໂຕຣນິກ (E-Filling System) ຮ່ວມກັບທະນາຄານ ແລະ ນຳໃຊ້ລະບົບການຄຸ້ມຄອງການຈົດທະບຽນຊັບສິນອຸດສາຫະກຳ Industrial Property Administration System (IPAS).

## 3. ເປົ້າໝາຍທີ 3 ຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນ ໄດ້ຮັບການຍົກລະດັບໃຫ້ດີຂຶ້ນເທື່ອລະກ້າວ

### 3.1 ແຜນວຽກຈຸດສຸມທີ 1: ເຂດຊົນນະບົດ ແລະ ເຂດຫ່າງໄກສອກຫຼີກທີ່ຍັງທຸກຍາກ ໄດ້ຮັບການພັດທະນາຊີວິດການເປັນຢູ່ຂອງປະຊາຊົນ, ຄຸນຄ່າດ້ານວັດທະນະທຳ ແລະ ວຽກງານສື່ມວນຊົນ ໄດ້ຮັບການປັບປຸງດີຂຶ້ນ

**1. ວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ:**

ການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໄດ້ສຸມໃສ່ຈັດຕັ້ງປະຕິບັດ ຄຳສັ່ງຂອງກົມການເມືອງສູນກາງພັກ ເລກທີ 097/ກມສພ, ລົງວັນທີ 18 ກຸມພາ 2020 ວ່າດ້ວຍການເພີ່ມທະວີການນຳພາ-ຊີ້ນຳ ຕໍ່ວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ ໂດຍການລົງຊຸກຍູ້ ແລະ ຕິດຕາມການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຕິດພັນກັບວຽກງານສ້າງແຜນພັດທະນາຈຸດສຸມພັດທະນາຊົນນະບົດໃໝ່ ໄລຍະ 2021-2025, ເຊິ່ງໃນທົ່ວປະເທດໄດ້ກຳນົດເອົາຈຸດສຸມພັດທະນາຊົນນະບົດໃໝ່ ເພື່ອສ້າງໃຫ້ເປັນຕົວແບບພັດທະນາ ມີທັງໝົດ 20 ຈຸດສຸມ ນອນໃນ 17 ແຂວງ ແລະ ນະຄອນຫຼວງວຽງຈັນ ກວມເອົາ 20 ເມືອງ 109 ບ້ານ ແລະ ຈຸດສຸມຈັດສັນພູມລຳເນົາ ແລະ ອາຊີບ ມີທັງໝົດ 25 ຈຸດ ນອນໃນ 17 ແຂວງ ກວມເອົາ 20 ເມືອງ 158 ບ້ານ ລວມທັງໝົດ 45 ຈຸດສຸມ.

ໃນໄລຍະ 2 ປີເຄິ່ງຜ່ານມາ ການຈັດຕັ້ງປະຕິບັດບັນດາຕົວເລກຄາດໝາຍພົ້ນທຸກ ແລະ ຄາດໝາຍການພັດທະນາຊົນນະບົດແມ່ນມີຄວາມຄືບໜ້າດີພໍສົມຄວນ ຊຶ່ງໄດ້ເຮັດໃຫ້ປະຊາຊົນຢູ່ເຂດຊົນນະບົດ, ເຂດຫ່າງໄກສອກຫຼີກ ແລະ ເຂດພື້ນຖານການປະຕິວັດເກົ່າ ສືບຕໍ່ພັດທະນາທີ່ດີຂຶ້ນ, ລະດັບຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ໄດ້ຮັບການປັບປຸງຍົກລະດັບດີຂຶ້ນເທື່ອລະກ້າວ; ຜ່ານການເກັບກຳຂໍ້ມູນຕາມມາດຕະຖານພົ້ນທຸກ ແລະ ມາດຕະຖານພັດທະນາ ທີ່ກຳນົດໄວ້ໃນດຳລັດ ເລກທີ 348/ລບ, ສາມາດຈັດຕັ້ງປະຕິບັດບັນດາຄາດໝາຍຕົ້ນຕໍໄດ້ດັ່ງນີ້:

– ສ້າງຄອບຄົວພົ້ນທຸກ ໄດ້ 48.067 ຄອບຄົວ, ເທົ່າກັບ 23,52% ຂອງແຜນການ (ແຜນການ 5ປີ: ໃຫ້ໄດ້ເພີ່ມ 204.360 ຄອບຄົວ ຫຼື ຮອດປີ 2025 ໃຫ້ໄດ້ທັງໝົດ 1.168.509 ຄອບຄົວ).

– ສ້າງບ້ານພົ້ນທຸກ ໄດ້ 482 ບ້ານ, ເທົ່າກັບ 15,53% ຂອງແຜນການ (ແຜນການ 5ປີ: ໃຫ້ໄດ້ 3.104 ບ້ານ ຫຼື ຮອດປີ 2025 ໃຫ້ໄດ້ທັງໝົດ 7.896 ບ້ານ).

– ສ້າງເມືອງພົ້ນທຸກ ໄດ້ 11 ເມືອງ, ເທົ່າກັບ 15,94% ຂອງແຜນການ (ແຜນການ 5ປີ: ໃຫ້ໄດ້ 69 ເມືອງ ຫຼື ຮອດປີ 2025 ໃຫ້ໄດ້ທັງໝົດ 122 ເມືອງ).

– ສ້າງຄອບຄົວພັດທະນາ ໄດ້ 50.076 ຄອບຄົວ, ເທົ່າກັບ 20,38% ຂອງແຜນການ (ແຜນການ 5ປີ: ໃຫ້ໄດ້ 245.754 ຄອບຄົວ ຫຼື ຮອດປີ 2025 ໃຫ້ໄດ້ທັງໝົດ 982.750 ຄອບຄົວ).

– ສ້າງບ້ານພັດທະນາ ໄດ້ 559 ບ້ານ, ເທົ່າກັບ 12,65% ຂອງແຜນການ (ແຜນການ 5ປີ: ໃຫ້ໄດ້ 4.420 ບ້ານ ຫຼື ຮອດປີ 2025 ໃຫ້ໄດ້ທັງໝົດ 5.167 ບ້ານ).

– ສ້າງຕົວແບບບ້ານໃຫຍ່ເປັນຕົວເມືອງໃນຊົນນະບົດ ໄດ້ 12 ບ້ານ, ລື່ນແຜນການ 20% (ແຜນການ 5ປີ: ໃຫ້ໄດ້ 10 ບ້ານ).

– ຈັດສັນພູມລໍາເນົາຄົງທີ່ ແລະ ອາຊີບໝັ້ນຄົງໃຫ້ປະຊາຊົນ ປະຕິບັດໄດ້ 4 ຈຸດສຸມ, ເທົ່າກັບ 16% ຂອງແຜນການ (ແຜນການ 5ປີ: ໃຫ້ໄດ້ 25 ຈຸດສຸມ).

– ສ້າງເມືອງເຂັ້ມແຂງຮອບດ້ານ ໄດ້ 1 ເມືອງ, ເທົ່າກັບ 20% ຂອງແຜນການ (ແຜນການ 5ປີ: ໃຫ້ໄດ້ 5 ເມືອງ).

ສັງລວມແລ້ວ, ມາຮອດປັດຈຸບັນ ຍັງມີຄອບຄົວທຸກຍາກ 257.670 ຄອບຄົວ, ບ້ານທຸກຍາກ 2.964 ບ້ານ ແລະ ເມືອງທຸກຍາກ 84 ເມືອງ.

<u>ສິ່ງທ້າທາຍ</u>: ການແກ້ໄຂຄວາມທຸກຍາກຂອງຄອບຄົວທຸກຍາກ, ບ້ານທຸກຍາກ ແລະ ເມືອງທຸກຍາກ ແມ່ນມີຄວາມສ່ຽງຈະບໍ່ບັນລຸຕາມຄາດໝາຍທີ່ວາງໄວ້; ການພັດທະນາຈຸດສຸມ, ການສ້າງບ້ານພັດທະນາ, ສ້າງບ້ານໃຫຍ່ກາຍເປັນຕົວເມືອງໃນຊົນນະບົດ ແມ່ນຈັດຕັ້ງປະຕິບັດໄດ້ແຕ່ປະລິມານ ຍັງບໍ່ທັນຮັບປະກັນດ້ານຄຸນນະພາບ; ການຈັດສັນພູມລໍາເນົາບ່ອນທໍາມາຫາກິນ ແລະ ອາຊີບໃຫ້ປະຊາຊົນ ຍັງບໍ່ທັນຮັບປະກັນຄວາມຍືນຍົງ ສ່ວນໃຫຍ່ຈັດສັນໄດ້ແຕ່ບ່ອນຕັ້ງພູມລໍາເນົາ (ບ່ອນຢູ່ອາໄສ); ການສົ່ງເສີມການຜະລິດ ແລະ ປັບປຸງຊີວິດການເປັນຢູ່ ຍັງບໍ່ທັນສົມຄູ່ກັບການພັດທະນາໂຄງລ່າງພື້ນຖານ; ການນໍາໃຊ້ທຶນພາຍໃນ, ທຶນຊ່ວຍເຫຼືອລ້າ-ກູ້ຢືມ ແລະ ສິນເຊື່ອທະນາຄານ ເຂົ້າໃສ່ວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຍັງປະຕິບັດບໍ່ໄດ້ດີເທົ່າທີ່ຄວນ ແລະ ການສຸມທຶນຮອນໃສ່ຈຸດສຸມຢູ່ແຕ່ລະທ້ອງຖິ່ນ ຍັງບໍ່ທັນປະຕິບັດໄປລວງດຽວກັນ. ໃນໄລຍະ 2 ປີເຄິ່ງຜ່ານມາ ຊ່ວງການແຜ່ລະບາດຂອງພະຍາດໂຄວິດ-19 ໄດ້ສົ່ງຜົນກະທົບຕໍ່ການຫຼຸດຜ່ອນຄວາມທຸກຍາກ, ໂອກາດການຈ້າງງານມີໜ້ອຍ ແລະ ການເສຍໂອກາດການໂອນເງິນຍ້ອນການເຄື່ອນຍ້າຍກັບຄືນພູມລໍາເນົາ ເຮັດໃຫ້ລາຍຮັບຄົວເຮືອນຫຼຸດລົງ; ໃນຂະນະທີ່ອັດຕາເງິນເຟີ້ເພີ່ມຂຶ້ນເຮັດໃຫ້ລາຄາສິນຄ້າສູງຂຶ້ນ ສົ່ງຜົນກະທົບຕໍ່ກໍາລັງການຊື້ຂອງຄົວເຮືອນຫຼຸດລົງ; ຊຶ່ງການເພີ່ມຂຶ້ນຂອງລາຄາສິນຄ້າອຸປະໂພກ-ບໍລິໂພກ ສົ່ງຜົນໃຫ້ຄົວເຮືອນຫຼຸດຜ່ອນການບໍລິໂພກອາຫານ ກວມເອົາ 34%, ຫັນປ່ຽນໄປທາງເລືອກອາຫານທີ່ລາຄາຖືກກວ່າ ຫຼື ການລ່າສັດ ແລະ ເກັບອາຫານປ່າ ກວມເອົາ 39% ແລະ ຫັນມາທໍາການຜະລິດເອງ ກວມເອົາ 47% ເຊິ່ງສະແດງໃຫ້ເຫັນວ່າ: ຜົນກະທົບການເພີ່ມຂຶ້ນຂອງລາຄາສະບຽງອາຫານທີ່ສູງ ແມ່ນບໍ່ສົມດຸນກັບຄົວເຮືອນມີລາຍຮັບຕໍ່າທີ່ອາໄສການຊື້ອາຫານບໍລິໂພກເປັນສ່ວນໃຫຍ່; ການເກັບລາຍຮັບຫຼຸດລົງ ແລະ ພາລະໜີ້ສິນທີ່ສູງ ແມ່ນຂໍ້ຈໍາກັດດ້ານງົບປະມານຂອງປະເທດ; ການສະໜອງງົບປະມານໃຫ້ລະບົບປະກັນສັງຄົມແຫ່ງຊາດທີ່ຈໍາກັດ ແມ່ນກະທົບຕໍ່ການເຂົ້າເຖິງຂອງກຸ່ມຄົນທີ່ມີຄວາມບອບບາງ. ຊຶ່ງຜົນກະທົບດັ່ງກ່າວ, ໄດ້ເຮັດໃຫ້ຄົວເຮືອນມີການຫຼຸດລາຍຈ່າຍໃນການສຶກສາ ແລະ ສາທາລະນະສຸກ ກວມ 65% ເພື່ອຮັບມືກັບໄພເງິນເຟີ້. ອັດຕາຄວາມ ທຸກຍາກໃນກຸ່ມຄົນລາຍຮັບປານກາງແມ່ນ 3,2 ໂດລາສະຫະລັດ ໃນປີ 2011 ແລະ ຄາດວ່າຈະເພີ່ມຂຶ້ນ 2,4% ໃນປີ 2021; ຄາດຄະເນຈະມີຄົນທຸກຍາກເພີ່ມຂຶ້ນອີກ ຈໍານວນ 170.000 ຄົນ ໃນປີ 2021 ແມ່ນກຸ່ມຄົນທີ່ບໍ່ຄາດວ່າຈະທຸກຍາກກ່ອນເກີດການແຜ່ລະບາດຂອງພະຍາດໂຄວິດ-19 ແຕ່ປັດຈຸບັນຄາດວ່າຈະກາຍເປັນກຸ່ມຄົນທຸກຍາກໃນປີ 2021.

**2. ວຽກງານຖະແຫຼງຂ່າວ ແລະ ວັດທະນະທໍາ:**

ວຽກງານຖະແຫຼງຂ່າວຕ້ອງຮັບປະກັນໃຫ້ການໂຄສະນາອອກຂ່າວສານ ຮັບໃຊ້ແນວທາງນະໂຍບາຍຂອງພັກ-ລັດໃນການພັດທະນາເສດຖະກິດ-ສັງຄົມ ໂດຍນໍາໃຊ້ສື່ພາຫະນະທາງໂທລະພາບ, ວິທະຍຸກະຈາຍສຽງ, ຂ່າວສານ, ສື່ສິ່ງພິມ, ສື່ເອເລັກໂຕຣນິກ ແລະ ສື່ແບບໃໝ່ຜ່ານທາງອອນລາຍໃນທົ່ວສັງຄົມ ເປັນຕົ້ນ: ເອົາໃຈໃສ່ຄຸ້ມຄອງ ແລະ ຕິດຕາມການສົ່ງສັນຍານວິທະຍຸແຫ່ງຊາດ ລະບົບ AM ແລະ FM, ສັນຍານໂທລະພາບແຫ່ງຊາດຜ່ານດາວທຽມຕະຫຼອດ 24 ຊົ່ວໂມງ

ຢ່າງເປັນປົກກະຕິ ໂດຍຜ່ານສື່ຕ່າງໆທີ່ມີໂດຍມີຈຸດສຸມ; ພື້ນຖານໂຄງລ່າງທາງດ້ານເຕັກນິກຂອງໂທລະພາບແຫ່ງຊາດລາວໄດ້ມີການຫັນປ່ຽນຈາກລະບົບອານາລ໋ອກເປັນລະບົບດີຈິຕອນເທື່ອລະກ້າວ; ສຸມໃສ່ເຜີຍແຜ່ຂ່າວສານໃນການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ໂດຍສະເພາະແມ່ນການໂຄສະນາແກ້ໄຂບັນຫາການຄ້າຂາຍຢາເສບຕິດຢູ່ແຕ່ລະທ້ອງຖິ່ນຢ່າງກວ້າງຂວາງ ແລະ ຕໍ່ເນື່ອງ. ສໍາເລັດວຽກງານຂຸດຄົ້ນ, ຟື້ນຟູ ແລະ ໂຄສະນາຄຸນຄ່າວັດທະນະທໍາອັນດີງາມຂອງບັນດາເຜົ່າຕາມຄາດໝາຍ ສາມາດຜະລິດລາຍການວິທະຍຸ ໄດ້ 144 ຄັ້ງ ຫຼື ບົດ, ບົດຄົ້ນຄວ້າ ແລະ ວິໄຈການສົ່ງເສີມ ແລະ ອະນຸລັກຄຸນຄ່າບຸນປະເພນີໄດ້ 9 ບົດ; ໄດ້ຈັດຕັ້ງເຄື່ອນໄຫວວຽກງານສູນວັດທະນະທໍາເດັກໃນຂອບເຂດທົ່ວປະເທດ ຊຶ່ງປະຕິບັດໂຄງການຝຶກອົບຮົມບຸກຄະລາກອນ ແລະ ໂຄງການແລກປ່ຽນກິດຈະກໍາສູນວັດທະນະທໍາເດັກຢູ່ບັນດາແຂວງ ແລະ ເມືອງ ຈໍານວນ 12 ຄັ້ງ, ປັດຈຸບັນມີສູນວັດທະນະທໍາເດັກ ທັງໝົດ 47 ແຫ່ງ; ສ້າງສາລະຄະດີໂຄສະນາວັດທະນະທໍາ, ຮີດຄອງປະເພນີ ແລະ ວິຖີຊີວິດ ສາມາດອອກອາກາດທາງວິທະຍຸກະຈາຍສຽງແຫ່ງຊາດ ດ້ວຍລາຍການຊອກຮູ້ວັດທະນະທໍາມະຫາຊົນ ຈໍານວນ 120 ຄັ້ງ ແລະ ລາຍການເຜີຍແຜ່ຊີວິດວັດທະນະທໍາທາງໂທລະພາບແຫ່ງຊາດ ຈໍານວນ 60 ຄັ້ງ. ສໍາເລັດການຄົ້ນຄວ້າ, ສ້າງ ແລະ ຮັບຮອງດໍາລັດວ່າດ້ວຍການສ້າງຄອບຄົວ ແລະ ບ້ານວັດທະນະທໍາ; ດໍາລັດວ່າດ້ວຍຊຸດເຄື່ອງນຸ່ງປະຈໍາຊາດ; ບົດແນະນໍາການຈັດຕັ້ງປະຕິບັດດໍາລັດວ່າດ້ວຍການສ້າງຄອບຄົວ ແລະ ບ້ານວັດທະນະທໍາ; ບົດແນະນໍາການຄັດເລືອກບຸກຄົນ, ຄອບຄົວ ແລະ ບ້ານວັດທະນະທໍາດີເດັ່ນ ພ້ອມທັງເຜີຍແຜ່ຢູ່ບັນດາແຂວງພາກເໜືອ. ນອກນັ້ນ, ໄດ້ປັບປຸງພື້ນຖານໂຄງລ່າງ ແລະ ອຸປະກອນທາງດ້ານວັດທະນະທໍາ ເປັນຕົ້ນ: ກາຍະສິນແຫ່ງຊາດ, ກອງສິລະປະກອນແຫ່ງຊາດ, ຫໍສະໝຸດ, ວິຈິດສິນ ແລະ ຫໍພິພິທະພັນ; ຊຶ່ງຜ່ານການຈັດຕັ້ງປະຕິບັດບັນດາວຽກຈຸດສຸມດັ່ງກ່າວ ໄດ້ມີໝາກຜົນສໍາເລັດຂອງບັນດາຄາດໝາຍຕົ້ນຕໍ ດັ່ງນີ້:

– ຂະຫຍາຍວິທະຍຸກະຈາຍສຽງຂັ້ນເມືອງ ແລະ ປະກອບອຸປະກອນເຕັກນິກຄົບຊຸດ ໄດ້ 4 ແຫ່ງຄື: ເມືອງນາກາຍ ແລະ ເມືອງມາຫາໄຊ, ແຂວງຄໍາມ່ວນ; ເມືອງຕະໂອ້ຍ, ແຂວງສາລະວັນ ແລະ ເມືອງຊ່ອນ, ແຂວງຫົວພັນ; ເທົ່າກັບ 11,11% ຂອງແຜນການ (ແຜນການ 5ປີ: 36 ຈຸດ).

– ຂະຫຍາຍລະບົບໂທລະໂຄ່ງຢູ່ຂັ້ນບ້ານ ໄດ້ 1.751 ຊຸດ/ບ້ານ, ເທົ່າກັບ 62,53% ຂອງແຜນການ (ແຜນການ 5ປີ: 2.800 ບ້ານ).

– ຂະຫຍາຍລະບົບເຕັກນິກໃຫ້ທັນສະໄໝ ຈາກລະບົບອານາລ໋ອກໄປສູ່ລະບົບດີຈິຕອນ ໄດ້ 1 ແຫ່ງ, ເທົ່າກັບ 4,5% ຂອງແຜນການ (ແຜນການ 5ປີ: 22 ຈຸດ).

– ສ້າງຄອບຄົວວັດທະນະທໍາ ໄດ້ 38.540 ຄອບຄົວ, ເທົ່າກັບ 29,65% ຂອງແຜນການ (ແຜນການ 5ປີ: 130.000 ຄອບຄົວ).

– ສ້າງບ້ານວັດທະນະທໍາ ໄດ້ 345 ບ້ານ, ເທົ່າກັບ 46% ຂອງແຜນການ (ແຜນການ 5ປີ: 750 ບ້ານ).

– ສໍາເລັດການກະກຽມເອກະສານຄໍາຮ້ອງນໍາສະເໜີເອົາອຸທິຍານແຫ່ງຊາດຫີນໜາມໜໍ່, ແຂວງຄໍາມ່ວນ ເຂົ້າເປັນມໍລະດົກໂລກທາງດ້ານທໍາມະຊາດແຫ່ງທໍາອິດຂອງ ສປປ ລາວ ແລະ ສໍາເລັດການກະກຽມເອກະສານຄໍາຮ້ອງກ່ຽວກັບຫົວຂໍ້: ພູມປັນຍາການຕໍ່າລາຍນາກຂອງຊຸມຊົນເຊື້ອຊາດລາວ ແລະ ການຟ້ອນລໍາວົງລາວ ເພື່ອດັດແກ້ຄືນຕາມຄໍາເຫັນຂອງອົງການອຸຍເນັສໂກ.

– ສໍາຫຼວດແຫຼ່ງບູຮານວິທະຍາ ໄດ້ 24 ແຫ່ງ, ເທົ່າກັບ 68% ຂອງແຜນການ (ແຜນການ 5ປີ: ໃຫ້ໄດ້ 35 ແຫ່ງ) ແລະ ຂຸດຄົ້ນທາງບູຮານວິທະຍາ ໄດ້ 3 ແຫ່ງ, ເທົ່າກັບ 60% ຂອງແຜນການ (ແຜນການ 5ປີ: ໃຫ້ໄດ້ 5 ແຫ່ງ).

– ຂຶ້ນທະບຽນບັນຊີວັດຖຸບູຮານ ແລະ ພຣະພຸດທະຮູບໃຫ້ທັນກັບການພົບເຫັນ ແລະ ລາຍງານໄດ້ 3 ແຫ່ງ, ເທົ່າກັບ 60% ຂອງແຜນການ (ແຜນການ 5ປີ: 5 ແຫ່ງ).

– ຂຶ້ນບັນຊີມໍລະດົກວັດທະນະທໍາ, ປະຫວັດສາດ ແລະ ທໍາມະຊາດ ຈາກລະດັບທ້ອງຖິ່ນໃຫ້ເປັນລະດັບຊາດ ໄດ້ 11 ແຫ່ງ, ເທົ່າກັບ 55% ຂອງແຜນການ (ແຜນການ 5ປີ: 20 ແຫ່ງ).

<u>ສິ່ງທ້າທາຍ</u>: ການຍົກລະດັບຄວາມຮູ້ທາງດ້ານວິຊາການດ້ານສື່ມວນຊົນຍັງບໍ່ທົ່ວເຖິງ; ການກຳນົດແຜນການ ລົງຊຸກຍູ້, ຕິດຕາມກວດກາ, ປະເມີນຜົນ, ປັບປຸງ ແລະ ແກ້ໄຂດ້ວຍມາດຕະການຕ່າງໆ ເພື່ອຍົກຄຸນນະພາບວຽກງານ ຖະແຫຼງຂ່າວ-ສື່ມວນຊົນ ຍັງບໍ່ທັນເປັນລະບົບຕໍ່ເນື່ອງ; ການພັດທະນາໂຄງລ່າງພື້ນຖານ, ອຸປະກອນເຕັກນິກ ແລະ ພາຫະນະສື່ມວນຊົນຍັງບໍ່ສົມຄູ່ກັບຄວາມຮຽກຮ້ອງຕ້ອງການຂອງວຽກງານ; ການລົງທຶນຂອງພາກລັດ ແລະ ພາກເອກະຊົນ ທັງພາຍໃນ ແລະ ຕ່າງປະເທດໃນຂະແໜງສື່ມວນຊົນຍັງມີຈຳນວນໜ້ອຍ; ການປະດິດຄິດແຕ່ງບົດປະພັນວັນນະຄະດີ, ບົດເພງ-ຂັບລຳ, ບົດລະຄອນ-ຮູບເງົາ ແລະ ລາຍການສະແດງຕ່າງໆຈຳນວນໜຶ່ງຍັງບໍ່ທັນສອດຄ່ອງກັບແນວທາງນະໂຍບາຍ; ຮູບການ ແລະ ເນື້ອໃນຍັງບໍ່ມີຄວາມອຸດົມສົມບູນ, ບໍ່ມີຄວາມຫຼາກຫຼາຍ ແລະ ບໍ່ທັນຕອບສະໜອງກັບຄວາມຮຽກຮ້ອງ ຕ້ອງການຂອງສັງຄົມ ແລະ ຍັງຂາດການກຳນົດແຜນການລົງຊຸກຍູ້, ຕິດຕາມກວດກາ ແລະ ປະເມີນຜົນດ້ວຍມາດຕະການ ຕ່າງໆ ເພື່ອປັບປຸງ, ແກ້ໄຂ ແລະ ຍົກລະດັບວຽກງານວັດທະນະທຳ.

## 3.2 ແຜນວຽກຈຸດສຸມທີ 2: ໂຄງລ່າງພື້ນຖານການບໍລິການດ້ານສາທາລະນຸປະໂພກ ໄດ້ຮັບການປັບປຸງ ແລະ ສະໜອງໃຫ້ປະຊາຊົນຢ່າງທົ່ວເຖິງ ເພື່ອຫຼຸດຜ່ອນຄວາມແຕກໂຕນດ້ານການເຂົ້າເຖິງໂຄງລ່າງພື້ນຖານ ແລະ ການບໍລິການຕ່າງໆ

ເພື່ອຫຼຸດຜ່ອນຄວາມແຕກໂຕນລະຫວ່າງຕົວເມືອງ ແລະ ຊົນນະບົດ, ດ້ານລາຍໄດ້ຂອງປະຊາຊົນ, ດ້ານການ ເຂົ້າເຖິງໂຄງລ່າງພື້ນຖານ ແລະ ການບໍລິການຕ່າງໆທີ່ຈຳເປັນ ໃຫ້ຫຼຸດລົງເທື່ອລະກ້າວ; ໃນໄລຍະຜ່ານມາ ລັດຖະບານໄດ້ ສຸມໃສ່ພັດທະນາ ແລະ ປັບປຸງບັນດາພື້ນຖານໂຄງລ່າງໃນບ່ອນທີ່ຈຳເປັນ ແລະ ຍັງຂາດເຂີນ ເປັນຕົ້ນ: ເສັ້ນທາງຊົນນະບົດ, ການເຂົ້າເຖິງການຊົມໃຊ້ໄຟຟ້າສູ່ຊົນນະບົດເຂດຫ່າງໄກສອກຫຼີກດ້ວຍຫຼາຍຮູບແບບ ໂດຍສະເພາະການຂະຫຍາຍໄຟຟ້າ ແສງຕາເວັນ ໃນເຂດທີ່ບໍ່ມີເງື່ອນໄຂຂະຫຍາຍຕາຂ່າຍສາຍສົ່ງໄປເຖິງ ແລະ ສ້າງແຫຼ່ງໄຟຟ້າພະລັງງານນ້ຳຂະໜາດນ້ອຍ, ສະໜອງລະບົບນ້ຳປະປາຊຸມຊົນ, ຂະຫຍາຍຕາຂ່າຍໂທລະຄົມມະນາຄົມ, ໂຮງຮຽນ ແລະ ໂຮງໝໍນ້ອຍ ເພື່ອສ້າງເງື່ອນໄຂ ໃຫ້ປະຊາຊົນມີຄວາມສະດວກໃນການດຳເນີນການຜະລິດ ແລະ ການບໍລິການ ພ້ອມທັງການເຂົ້າເຖິງການບໍລິການພາກລັດ ໄດ້ຢ່າງທົ່ວເຖິງ ແລະ ຫຼຸດຜ່ອນຄວາມແຕກໂຕນທາງດ້ານລາຍໄດ້. ຜ່ານການປະຕິບັດວຽກຈຸດສຸມຂອງລັດຖະບານ ເຮັດໃຫ້ບັນດາຄາດໝາຍຕົ້ນຕໍ ມີຄວາມຄືບໜ້າຫຼາຍສົມຄວນ ເຊັ່ນ:

- ການຂະຫຍາຍອັດຕາການຊົມໃຊ້ໄຟຟ້າຂອງຄົວເຮືອນ ມາຮອດປັດຈຸບັນປະຕິບັດໄດ້ 95,45% ຂອງຄົວເຮືອນ ທົ່ວປະເທດ (ແຜນການ 5ປີ: ໃຫ້ໄດ້ 98% ຂອງຄົວເຮືອນທົ່ວປະເທດ).
- ການຂະຫຍາຍລະບົບຕາຂ່າຍໄຟຟ້າ ໃຫ້ໄດ້ 2,26% (28.000 ຄອບຄົວ) ແລະ ໄຟຟ້ານອກລະບົບ 0,74% (9.000 ກວ່າຄອບຄົວ) ແມ່ນໄດ້ສຸມໃສ່ນຳໃຊ້ແຫຼ່ງທຶນຈາກການຮ່ວມມື (ເງິນຊ່ວຍເຫຼືອ ແລະ ເງິນກູ້ຢືມ) ເປັນຕົ້ນຕໍ ໂດຍສົມທົບກັບການລົງທຶນຂອງພາກລັດ.
- ການຂະຫຍາຍລະບົບຕາຂ່າຍໄຟຟ້າຢູ່ 3 ແຂວງ (ຜົ້ງສາລີ, ຫົວພັນ ແລະ ເຊກອງ) ທີ່ມີອັດຕາການຊົມໃຊ້ໄຟຟ້າຕ່ຳ ສຸດໃນຂອບເຂດທົ່ວປະເທດ ແມ່ນໄດ້ສຸມໃສ່ການສະໜອງແສງສະຫວ່າງໄຟຟ້າໃຫ້ປະຊາຊົນດ້ວຍລະບົບໄຟຟ້າ ແສງຕາເວັນ ແລະ ໂຄງການເຂື່ອນໄຟຟ້ານ້ຳຕົກຂະໜາດນ້ອຍ.
- ການຂະຫຍາຍລະບົບນ້ຳປະປາ ສາມາດໃຫ້ບໍລິການກວມເອົາ 117 ຕົວເມືອງ 1.480 ບ້ານ, ທຽບໃສ່ປະຊາກອນ ໃນຕົວເມືອງ ມີອັດຕາສ່ວນປົກຄຸມເທົ່າກັບ 77,56% (ຄາດໝາຍໃນປີ 2025: ໃຫ້ໄດ້ 85%).

## 3.3 ແຜນວຽກຈຸດສຸມທີ 3: ສົ່ງເສີມໃຫ້ແມ່ຍິງ ແລະ ເດັກ ໄດ້ເຂົ້າເຖິງການພັດທະນາ, ມີຄວາມສະເໝີພາບຍິງ-ຊາຍ ແລະ ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດຢ່າງເຕັມສ່ວນຈາກການພັດທະນາເສດຖະກິດ-ສັງຄົມ

– ສຳເລັດການສ້າງແຜນພັດທະນາແມ່ຍິງແຫ່ງຊາດ 5 ປີ ຄັ້ງທີ VII (2021-2025), ແຜນຍຸດທະສາດຮອດປີ 2030 ແລະ ວິໄສທັດພັດທະນາແມ່ຍິງລາວ ຮອດປີ 2035; ແຜນດຳເນີນງານແຫ່ງຊາດແລະ ປະກາດໃຊ້ ຈຳນວນ 3 ສະບັບຄື: ແຜນດຳເນີນງານແຫ່ງຊາດເພື່ອຄວາມສະເໝີພາບຍິງ-ຊາຍ 5 ປີ ຄັ້ງທີ IV (2021-2025); ແຜນດຳເນີນງານແຫ່ງຊາດວຽກແມ່ ແລະ ເດັກ 5 ປີ ຄັ້ງທີ III (2021-2025) ແລະ ແຜນດຳເນີນງານແຫ່ງຊາດເພື່ອປ້ອງກັນ ແລະ ລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ຄວາມຮຸນແຮງຕໍ່ເດັກ 5 ປີ ຄັ້ງທີ II (2021-2025). ໃນນັ້ນ: ມີ 9 ກະຊວງ, 17 ແຂວງ ແລະ ນະຄອນຫຼວງວຽງຈັນ ໄດ້ມີຮ່າງແຜນດຳເນີນງານເພື່ອຄວາມສະເໝີພາບຍິງ-ຊາຍ ແລະ ແຜນດຳເນີນງານເພື່ອປ້ອງກັນ ແລະ ລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ (2021-2025) ແລະ 12 ພາກສ່ວນທີ່ໄດ້ເຊື່ອມສານເຂົ້າແຜນພັດທະນາຂອງຂະແໜງການຕົນ. ນອກນັ້ນ, ໄດ້ປະກາດໃຊ້ແຜນດຳເນີນງານແຫ່ງຊາດສຳລັບການສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບປົກປ້ອງເດັກ (2021-2025); ຮ່າງແຜນດຳເນີນງານແຫ່ງຊາດເພື່ອລຶບລ້າງການໃຊ້ແຮງງານເດັກ ແລະ ສົ່ງເສີມວຽກທີ່ມີຄຸນຄ່າສຳລັບໄວໜຸ່ມຂອງ ສປປ ລາວ.

– ເຜີຍແຜ່ກົດໝາຍວ່າດ້ວຍຄວາມສະເໝີພາບຍິງ-ຊາຍ ແລະ ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ໃຫ້ການນຳ, ພະນັກງານ-ລັດຖະກອນຢູ່ບັນດາກະຊວງ, ອົງການ, ນະຄອນຫຼວງ, ແຂວງ, ສະພາແຫ່ງຊາດ ແລະ ອົງການຈັດຕັ້ງທາງສັງຄົມ ທັງໝົດຈຳນວນ 75 ຄັ້ງ, ມີຜູ້ເຂົ້າຮ່ວມ 9.814 ທ່ານ (ເປັນຍິງ 7.238 ທ່ານ).

– ສ້າງຄວາມເຂັ້ມແຂງ ແລະ ແນະນຳການສ້າງງົບປະມານ ແລະ ແຜນການລົງທຶນຂອງລັດທີ່ກວມເອົາບົດບາດຍິງ-ຊາຍໃຫ້ບັນດາກະຊວງ-ອົງການ ໄດ້ 2 ຄັ້ງ ມີ 17 ກະຊວງ, 2 ອົງການທຽບເທົ່າ ແລະ 9 ອົງການອ້ອມຂ້າງສູນກາງ.

– ສ້າງຄວາມເຂັ້ມແຂງໃຫ້ກົນໄກການໃຫ້ບໍລິການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ຈາກການໃຊ້ຄວາມຮຸນແຮງຕໍ່ແມ່ຍິງໂດຍການສ້າງຄູ່ມືມາດຕະຖານການດຳເນີນງານການປ້ອງກັນ ແລະ ການບໍລິການຊ່ວຍເຫຼືອອັນຈຳເປັນ ທາງດ້ານສັງຄົມແກ່ແມ່ຍິງ ແລະ ເດັກທີ່ຖືກຄວາມຮຸນແຮງ; ມາດຕະຖານການດຳເນີນງານວຽກງານຕອບສະໜອງການບໍລິການແກ່ຜູ້ທີ່ຖືກຄວາມຮຸນແຮງ ສຳລັບສະຖານທີ່ບໍລິການສຸຂະພາບ; ມາດຕະຖານການປະສານງານ, ການຄຸ້ມຄອງການປະສານງານ ແລະ ການສົ່ງຕໍ່; ມາດຕະຖານການດຳເນີນງານການຊ່ວຍເຫຼືອດ້ານຂະບວນການຍຸຕິທຳ ສຳລັບແມ່ຍິງ ແລະ ເດັກທີ່ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງໃນ ສປປ ລາວ, ພ້ອມທັງຝຶກອົບຮົມໃຫ້ບັນດາຂະແໜງການທີ່ກ່ຽວຂ້ອງທັງຂັ້ນສູນກາງ ແລະ ທ້ອງຖິ່ນ. ຂະຫຍາຍການສ້າງສູນໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ ໄດ້ 5 ສູນ ຄື: ແຂວງສະຫວັນນະເຂດ, ບໍ່ແກ້ວ, ອັດຕະປື, ຈຳປາສັກ ແລະ ບໍລິຄຳໄຊ ໂດຍໄດ້ຂົນຂວາຍແຫຼ່ງທຶນຈາກສາກົນ.

– ຈັດຝຶກອົບຮົມການທົດລອງນຳໃຊ້ຄູ່ມືການມີສ່ວນຮ່ວມຂອງຜູ້ຊາຍ ໃນການຕ້ານການໃຊ້ຄວາມຮຸນແຮງຢູ່ຊຸມຊົນ (ຈຳນວນ 27 ບ້ານ) ຂອງແຂວງສະຫວັນນະເຂດ, ອັດຕະປື, ບໍລິຄຳໄຊ, ບໍ່ແກ້ວ, ຈຳປາສັກ ແລະ ນະຄອນຫຼວງວຽງຈັນ; ການກຳນົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ການນຳໃຊ້ຄູ່ມືການປົກປ້ອງ, ຊ່ວຍເຫຼືອ ແລະ ການສົ່ງຕໍ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໃຫ້ແກ່ສະຫະພັນແມ່ຍິງເມືອງ ແລະ ແຂວງ ຈຳນວນ 3 ແຂວງເປົ້າໝາຍ ແລະ ຈັດຝຶກອົບຮົມຕົວແທນເດັກໃນການປະກອບຄຳເຫັນຕໍ່ການຈັດຕັ້ງປະຕິບັດສົນທິສັນຍາວ່າດ້ວຍສິດທິເດັກ ແລະ ອະນຸສັນຍາເພີ່ມເຕີມ ແລະ ລົງເກັບກຳຂໍ້ມູນຢູ່ບ້ານ, ຂຽນບົດລາຍງານແຫ່ງຊາດ ປະຈຳໄລຍະທີ 10 ກ່ຽວກັບການຈັດຕັ້ງປະຕິບັດສົນທິສັນຍາຊີດໍ.

– ໃນການສົ່ງເສີມຄວາມສະເໝີພາບຍິງ-ຊາຍ ແລະ ປ້ອງກັນ ແລະ ລຶບລ້າງຄວາມຮຸນແຮງ ແລະ ສິດທິເດັກ ໄດ້ສຳເລັດແຜນດຳເນີນງານແຫ່ງຊາດ ແລະ ຖືກຮັບຮອງ ແລະ ປະກາດໃຊ້ ຈຳນວນ 3 ສະບັບ ຄື: ແຜນດຳເນີນງານແຫ່ງຊາດເພື່ອຄວາມ

ສະເໝີພາບຍິງ-ຊາຍ 5 ປີ ຄັ້ງທີ IV (2021-2025), ແຜນດຳເນີນງານແຫ່ງຊາດວຽກແມ່ ແລະ ເດັກ 5 ປີ ຄັ້ງທີ III (2021-2025) ແລະ ແຜນດຳເນີນງານແຫ່ງຊາດເພື່ອປ້ອງກັນ ແລະ ລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ຄວາມຮຸນແຮງຕໍ່ເດັກ 5 ປີ ຄັ້ງທີ II (2021-2025).

– ປະຕິບັດພັນທະຂອງລັດຖະບານ ສປປ ລາວ ໃນການລາຍງານການປົກປ້ອງສິດທິຂອງແມ່ຍິງ ແລະ ເດັກ ໂດຍສຳເລັດບົດລາຍງານແຫ່ງຊາດ ປະຈຳໄລຍະທີ 10 ກ່ຽວກັບການຈັດຕັ້ງປະຕິບັດສົນທິສັນຍາວ່າດ້ວຍການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງຢູ່ ສປປ ລາວ ແລະ ສຳເລັດຮ່າງບົດລາຍງານແຫ່ງຊາດ ປະຈຳໄລຍະທີ 7 ໃນການຈັດຕັ້ງປະຕິບັດສົນທິສັນຍາວ່າດ້ວຍສິດທິເດັກ ແລະ ສອງອະນຸສັນຍາເພີ່ມເຕີມ.

– ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ພະນັກງານ-ລັດຖະກອນ ໄດ້ບັນຈຸເຂົ້າໃນຕຳແໜ່ງນຳພາ-ຄຸ້ມຄອງໂດຍຜ່ານແຜນກຳນົດພະນັກງານນຳພາ-ຄຸ້ມຄອງຮັບປະກັນໂຄງປະກອບເພດຍິງ, ປັດຈຸບັນການສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງຂັ້ນສູນກາງຄຸ້ມຄອງ ສຳເລັດ 36 ກະຊວງ-ອົງການ, 18 ແຂວງ-ນະຄອນຫຼວງ. ປັບປຸງສະຖານທີ່ບໍລິການຊ່ວຍເຫຼືອຜູ້ຖືກເຄາະຮ້າຍໃຫ້ກັບໂຮງໝໍສູນກາງ 2 ແຫ່ງ ຄື: ໂຮງໝໍມະໂຫສົດ ແລະ ໂຮງໝໍແມ່ ແລະ ເດັກ; ໃນນັ້ນ, ຍັງມີຈຸດບໍລິການປະຕູດຽວ (ການບໍລິການສຸຂະພາບ) ແຫ່ງທຳອິດຂອງລາວທີ່ໂຮງໝໍມະໂຫສົດ ແລະ ມີເບີສາຍດ່ວນ 1527.

– ສົ່ງເສີມການພັດທະນາເດັກ ແລະ ໄວໜຸ່ມ ດ້ວຍການສ້າງ ແລະ ພັດທະນາຄູ່ມືແຫ່ງຊາດ ຈຳນວນ 5 ສະບັບຄື: ຄູ່ມືແຫ່ງຊາດການມີສ່ວນຮ່ວມຂອງເດັກ ແລະ ໄວໜຸ່ມ ຂອງ ສປປ ລາວ; ຄູ່ມືພັດທະນາທັກສະຊີວິດ ສຳລັບເດັກ ແລະ ໄວໜຸ່ມໃນ ສປປ ລາວ; ຄູ່ມືຝຶກອົບຮົມກ່ຽວກັບການປ້ອງກັນ ແລະ ລົບລ້າງຄວາມຮຸນແຮງຕໍ່ເດັກ; ຄູ່ມືແຫ່ງຊາດເພື່ອປ້ອງກັນ ແລະ ແກ້ໄຂຄວາມຮຸນແຮງຕໍ່ເດັກໃນໂຮງຮຽນຊັ້ນມັດທະຍົມສຶກສາ ແລະ ຄູ່ມືແຫ່ງຊາດສຳລັບຄູຝຶກການກະກຽມຄວາມພ້ອມທາງດ້ານອາຊີບໃຫ້ເດັກ ແລະ ໄວໜຸ່ມໃນ ສປປ ລາວ ແລະ ໄດ້ເຊື່ອມໂຍງ 5 ຄູ່ມື ເຂົ້າໃນ 5 ສະຖາບັນ ຄື: ວິທະຍາຄານຕຳຫຼວດປະຊາຊົນ, ວິທະຍາຄານສັນຕິບານ, ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມວຽກງານໄອຍະການ, ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມສຳລັບຜູ້ພິພາກສາ ແລະ ສະຖາບັນຍຸຕິທຳແຫ່ງຊາດ.

– ສຳເລັດບົດສຶກສາການແຕ່ງດອງກ່ອນໄວອັນຄວນຂອງເດັກ ແລະ ການຖືພາຂອງໄວໜຸ່ມ ໃນ ສປປ ລາວ, ຊຶ່ງການເກັບກຳຂໍ້ມູນເນັ້ນໃສ່ຂົງເຂດທີ່ມີອັດຕາການຖືພາຂອງໄວໜຸ່ມສູງ ກວມເອົາ 9 ແຂວງ, 11 ເມືອງ ແລະ 30 ບ້ານ; ຜົນຈາກການສຶກສາໄດ້ສະແດງໃຫ້ເຫັນ 8 ປັດໄຈຫຼັກ ທີ່ຄົ້ນພົບຂອງການແຕ່ງດອງກ່ອນໄວອັນຄວນຂອງເດັກ ແລະ ການຖືພາຂອງໄວໜຸ່ມ ແລະ 7 ຄຳແນະນຳ ສຳລັບຂະແໜງການ; ເຜີຍແຜ່ຄູ່ມືແຫ່ງຊາດກ່ຽວກັບການປ້ອງກັນ ແລະ ແກ້ໄຂຄວາມຮຸນແຮງຕໍ່ເດັກໃນໂຮງຮຽນມັດທະຍົມສຶກສາ ແລະ ແນະນຳການສ້າງຕັ້ງຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນໂຮງຮຽນ ໃນ 8 ແຂວງມີ: ນະຄອນຫຼວງວຽງຈັນ, ໄຊຍະບູລີ, ຫົວພັນ, ຊຽງຂວາງ, ເຊກອງ, ຄຳມ່ວນ, ຫຼວງພະບາງ ແລະ ຜົ້ງສາລີ.

– ຂະຫຍາຍຄະນະກຳມະການປົກປ້ອງ ແລະ ຊ່ວຍເຫຼືອເດັກ ຂັ້ນເມືອງ ໄດ້ 23 ເມືອງ, ເທົ່າກັບ 65,71% ຂອງແຜນການ (ແຜນການ 5ປີ: 35 ເມືອງ) ແລະ ຂັ້ນບ້ານ ໄດ້ 684 ບ້ານ, ລື່ນແຜນການ 36,80% (ແຜນການ 5ປີ: 500 ຄົນ); ພ້ອມທັງ, ຈັດຝຶກອົບຮົມວຽກປົກປ້ອງ ແລະ ຊ່ວຍເຫຼືອເດັກ ໃຫ້ 1.554 ຄົນ; ສົມທົບທຶນໃນການເບິ່ງແຍງລ້ຽງດູເດັກນ້ອຍບ້ານເດັກເອັສໂອເອັສລາວ ຈຳນວນ 929 ຄົນ, ຍິງ 419 ຄົນ, ໃນມູນຄ່າ 1.630 ລ້ານກວ່າກີບ; ໃຫ້ການຊ່ວຍເຫຼືອເດັກນ້ອຍ ແລະ ແມ່ຍິງທີ່ຕ້ອງການປົກປ້ອງພິເສດ, ມີຄວາມສ່ຽງ ແລະ ຕົກເປັນເຫຍື່ອການຄ້າມະນຸດເດັກເລ່ລ່ອນດ້ອຍໂອກາດ ແລະ ຜູ້ໄດ້ຮັບຜົນກະທົບຈາກພະຍາດໂຄວິດ-19 ຈຳນວນ 10.918 ຄົນ, ຍິງ 4.014 ຄົນ, ເປັນເງິນ 6.516 ລ້ານກວ່າກີບ.

– ຮັບຄຳສະເໜີ ແລະ ບໍລິການໃຫ້ຄຳປຶກສາແມ່ຍິງ-ເດັກນ້ອຍທີ່ມີບັນຫາ, ຜູ້ຖືກເຄາະຮ້າຍທາງດ້ານກົດໝາຍ, ດ້ານສຸຂະພາບ ແລະ ດ້ານຈິດໃຈແບບເຊິ່ງໜ້າ ແລະ ທາງໂທລະສັບສາຍດ່ວນ 1362 ໂດຍບໍ່ເສຍຄ່າແກ່ແມ່ຍິງ ແລະ ເດັກນ້ອຍທີ່ມີບັນຫາ ຈຳນວນ 528 ຄົນ (ເປັນຊາຍ 176 ຄົນ).

– ສ້າງ ແລະ ປັບປຸງຄູ່ມືຝຶກອົບຮົມວຽກງານການໃຫ້ຄໍາປຶກສາ, ການປົກປ້ອງ ແລະ ຊ່ວຍເຫຼືອຜູ້ເຄາະຮ້າຍ, ການໂຄສະນາເຜີຍແຜ່ກົດໝາຍ ແລະ ສົນທິສັນຍາສາກົນທີ່ພົວພັນເຖິງສິດຜົນປະໂຫຍດອັນຊອບທໍາຂອງແມ່ຍິງ ແລະ ເດັກນ້ອຍ; ສ້າງຄູ່ມືການປົກປ້ອງ, ຊ່ວຍເຫຼືອ ແລະ ສົ່ງຕໍ່ຜູ້ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ໃນ ສປປ ລາວ.

ຜ່ານການຈັດຕັ້ງປະຕິບັດວຽກງານຈຸດສຸມບູລິມະສິດໃນສົ່ງເສີມໃຫ້ແມ່ຍິງ ແລະ ເດັກ ໄດ້ເຂົ້າເຖິງການພັດທະນາ, ມີຄວາມສະເໝີພາບຍິງ-ຊາຍ ໄດ້ມີໝາກຜົນສໍາເລັດຫຼາຍດ້ານດັ່ງນີ້:

1) ອັດຕາສ່ວນຂອງເດັກນ້ອຍທີ່ຂາດເຂີນໃນຫຼາຍມິຕິ (ຄວາມທຸກຍາກຂອງເດັກ) ໂດຍອີງໃສ່ນິຍາມແຫ່ງຊາດກ່ຽວກັບຄວາມຂາດເຂີນ ໃຫ້ເຫຼືອ 30% ໃນແຕ່ລະແຂວງໃນປີ 2025 ເປັນຂໍ້ມູນການສໍາຫຼວດທຸກໆ 5 ປີ.

2) ດັດຊະນີຄວາມບໍ່ສະເໝີພາບຍິງ-ຊາຍ ເທົ່າກັບ 0,478 (ແຜນການ: ໃຫ້ຫຼຸດລົງ 0,430 ໃນປີ 2025).

3) ດັດຊະນີການພັດທະນາຄວາມສະເໝີພາບຍິງ-ຊາຍ ປະເມີນໄດ້ 0,949 (ແຜນການ: ໃຫ້ເພີ່ມຂຶ້ນ 0,984 ໃນປີ 2025).

4) ດັດຊະນີການສ້າງຄວາມເຂັ້ມແຂງໃຫ້ແມ່ຍິງ ປະເມີນໄດ້ 0,582 ແລະ ດັດຊະນີການພັດທະນາແມ່ຍິງ ປະເມີນໄດ້ 0,591 (ແຜນການ: ໃຫ້ເພີ່ມຂຶ້ນ 0,675 ໃນປີ 2025).

5) ພະນັກງານສະຫະພັນແມ່ຍິງ ໄດ້ຮັບການຍົກລະດັບຄວາມຮູ້ຄວາມສາມາດກ່ຽວກັບວຽກງານໃຫ້ຄໍາປຶກສາແກ່ແມ່ຍິງ ແລະ ເດັກນ້ອຍ ທັງໝົດ 1.549 ຄົນ, ລື່ນແຜນການ 54,90% (ແຜນການ: 1.000 ຄົນ ຮອດປີ 2025).

6) ຮັບຄໍາສະເໜີ ແລະ ບໍລິການໃຫ້ຄໍາປຶກສາແກ່ຜູ້ຖືກເຄາະຮ້າຍ, ຜູ້ມາຂໍຄໍາປຶກສາ ແລະ ພັກເຊົາຢູ່ໃນສູນແບບເຊິ່ງໜ້າ ແລະ ທາງໂທລະສັບສາຍດ່ວນ 1362 ຕະຫຼອດ 24 ຊົ່ວໂມງ ໄດ້ທັງໝົດ 6.664 ຄົນ (ຍິງ 4.393 ຄົນ).

7) ຊ່ວຍເຫຼືອແມ່ຍິງ ແລະ ເດັກ ທີ່ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງ ໄດ້ 166 ຄົນ; ເຂົ້າຮ່ວມຟັງຄໍາຕັດສິນຄະດີເດັກຂອງສານປະຊາຊົນຂັ້ນແຂວງ ທີ່ພົວພັນເຖິງແມ່ຍິງ ແລະ ເດັກນ້ອຍ ຈໍານວນ 68 ຄັ້ງ.

8) ຈໍານວນເພດຍິງທີ່ໄດ້ກໍານົດເຂົ້າໃນແຜນການສ້າງພະນັກງານນໍາພາ-ຄຸ້ມຄອງເພດຍິງຂັ້ນສູນກາງ ມີຈໍານວນ 403 ທ່ານ, ກວມ 29,48% (ແຜນການ 5ປີ: ໃຫ້ກວມເອົາ 30% ຂຶ້ນໄປ).

9) ພະນັກງານເພດຍິງທີ່ໄດ້ກໍານົດເຂົ້າໃນແຜນການສ້າງພະນັກງານນໍາພາ-ຄຸ້ມຄອງເພດຍິງແຕ່ແຂວງ/ນະຄອນຫຼວງ ມີ 146 ທ່ານ, ກວມ 17,57% (ແຜນການ 5ປີ: ໃຫ້ກວມເອົາ 20% ຂຶ້ນໄປ).

10) ແມ່ຍິງໄດ້ບັນຈຸສັບຊ້ອນເຂົ້າເປັນສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ກວມເອົາ 28,35% ຂອງສະມາຊິກສະພາທັງໝົດ (ແຜນການ 5ປີ: ໃຫ້ກວມເອົາ 30%), ໃນນັ້ນ: ແມ່ຍິງທີ່ເປັນສະມາຊິກສະພາແຫ່ງຊາດ ກວມເອົາ 21,95% ແລະ ແມ່ຍິງທີ່ໄດ້ເປັນສະມາຊິກສະພາປະຊາຊົນຂັ້ນແຂວງ ກວມເອົາ 30,48%.

11) ຂະຫຍາຍສະມາຊິກ ແລະ ການຈັດຕັ້ງສະຫະພັນແມ່ຍິງໃນຂົງເຂດທຸລະກິດເອກະຊົນ (ຫົວໜ່ວຍທຸລະກິດທີ່ມີແມ່ຍິງກວມ 50% ຂຶ້ນໄປ) ຂອງແມ່ຍິງໃນເກນອາຍຸ 15 ປີຂຶ້ນໄປ ໄດ້ 18 ໜ່ວຍ ແລະ 24 ຮາກຖານ.

12) ແມ່ຍິງຜູ້ທຸກຍາກ ແລະ ດ້ອຍໂອກາດຢູ່ບັນດາແຂວງ ໄດ້ຮັບການຝຶກອົບຮົມວິຊາຊີບໄລຍະສັ້ນ ແລະ ໄລຍະຍາວໄດ້ທັງໝົດ 1.012 ຄົນ ກວມເອົາ 67,5 % (ແຜນການ 5ປີ: 1.500 ຄົນ).

<u>ສິ່ງທ້າທາຍ</u>:

– ຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ວິກິດການ 4F ໄດ້ສົ່ງຜົນກະທົບຕໍ່ແມ່ຍິງ ແລະ ເດັກຍິງ ໂດຍສະເພາະຄວາມຮຸນແຮງໃນຄອບຄົວ ແລະ ການຂູດຮີດ ແລະ ລ່ວງລະເມີດທາງເພດເພີ່ມຂຶ້ນ; ໃນຊ່ວງໄລຍະຜ່ານມາ ເຂດອາຊີຕາເວັນອອກສ່ຽງໃຕ້ແມ່ນມີການເພີ່ມຂຶ້ນຂອງການຄ້າມະນຸດ ເປັນຕົ້ນ: ການຫຼອກຫຼວງທາງອິນເຕີເນັດ, ຊຶ່ງ ສປປ ລາວ ກໍໄດ້ຮັບຜົນກະທົບດ້ານການເພີ່ມຂຶ້ນຂອງການຄ້າມະນຸດໃນພາກພື້ນເຊັ່ນກັນ. ສະນັ້ນ, ມັນຮຽກຮ້ອງຄວນເພີ້ມມາດຕະການສະກັດກັ້ນ ແລະ ຕໍ່ຕ້ານການຄ້າມະນຸດຢ່າງຮອບດ້ານ.

– ລະບົບການຕິດຕາມ, ການເກັບກໍາຂໍ້ມູນ ແລະ ການປະເມີນຜົນວິເຄາະວິໄຈຂໍ້ມູນ ຍັງບໍ່ທັນເຂັ້ມແຂງ, ບຸກຄະລາກອນທີ່ຮັບຜິດຊອບວຽກຄວາມສະເໝີພາບຍິງ-ຊາຍ ລວມທັງບຸກຄະລາກອນທີ່ເຮັດໜ້າທີ່ໃນການຕິດຕາມການເກັບກໍາ

ຂໍ້ມູນການລາຍງານ ຍັງບໍ່ທັນມີຄວາມເຂົ້າໃຈໃນການນໍາໃຊ້ສະຖິຕິປົດບາດຍິງ-ຊາຍເຂົ້າໃນວຽກງານຂອງຕົນ, ຖານຂໍ້ມູນຂອງແຕ່ລະຂະແໜງການ ລວມທັງໃບເກັບກໍາຂໍ້ມູນຍັງບໍ່ທັນນໍາໃຊ້ສະຖິຕິປົດບາດຍິງ-ຊາຍ ຈຶ່ງເຮັດໃຫ້ການຕີລາຄາ ຫຼື ການລາຍງານໃນວຽກງານນີ້ ບໍ່ທັນໄດ້ຂໍ້ມູນຄົບຖ້ວນ ບໍ່ສາມາດລາຍງານຕໍ່ລັດຖະບານ ແລະ ສາກົນໄດ້ຕາມແຜນການ.

– ແຕ່ລະຂະແໜງການ ແລະ ທ້ອງຖິ່ນ ຍັງຈໍາກັດໃນຄວາມເຂົ້າໃຈຕໍ່ກັບການສົ່ງເສີມຄວາມສະເໝີພາບຍິງ-ຊາຍ ແລະ ການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກໂດຍສະເພາະ ຍັງຈໍາກັດໃນການສ້າງຄວາມເຂັ້ມແຂງ, ການປູກຈິດສໍານຶກ, ການບໍ່ໃຫ້ມີການຈໍາແນກ, ການຮັບປະກັນຄວາມສະເໝີພາບຍິງ ແລະ ສິດ ແລະ ຜົນປະໂຫຍດຂອງເດັກ ລວມທັງການນໍາໃຊ້ສະຖິຕິປົດບາດຍິງ-ຊາຍ ຈຶ່ງເຮັດໃຫ້ວຽກງານດັ່ງກ່າວຍັງບໍ່ບັນລຸຜົນເທົ່າທີ່ຄວນ ແລະ ເຮັດໃຫ້ປະຊາຊົນບັນດາເຜົ່າ ລວມທັງເດັກ ຍັງຈໍາກັດໃນການຮັບຮູ້ ສິດ ແລະ ຜົນປະໂຫຍດຂອງຕົນເອງທີ່ຄວນຈະໄດ້ຮັບ.

– ບັນຫາການຈໍາແນກ, ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ຍັງແຜ່ລາມ ແລະ ຂະຫຍາຍຕົວ; ໃນນັ້ນ, ຜູ້ທີ່ຖືກຄວາມຮຸນແຮງຍັງບໍ່ກ້າຂໍຄວາມຊ່ວຍເຫຼືອ ຍ້ອນບາງກົດປະເພນີຍັງຄອບງໍາຢູ່, ຜູ້ທີ່ໃຫ້ການຊ່ວຍເຫຼືອກໍຍັງບໍ່ທັນເຂົ້າໃຈເລິກເຊິ່ງໂດຍສະເພາະການຊ່ວຍເຫຼືອທີ່ອີງໃສ່ຜູ້ຖືກເຄາະຮ້າຍເປັນໃຈກາງ ແລະ ບົນນິຕິກໍາກົດໝາຍທີ່ມີ ເຮັດໃຫ້ຜູ້ຖືກເຄາະຮ້າຍບໍ່ໄດ້ຮັບການຊ່ວຍເຫຼືອຢ່າງທັນການ ແລະ ແທດເໝາະກັບສະພາບ.

## 3.4 ແຜນວຽກຈຸດສຸມທີ 4: ສົ່ງເສີມ ແລະ ພັດທະນາຊັບພະຍາກອນໜຸ່ມໃຫ້ມີຄຸນນະພາບ ແລະ ມີວຽກເຮັດງານທໍາຫຼາຍຂຶ້ນ

– ສຸມໃສ່ການຝຶກວິຊາຊີບ ແລະ ສ້າງວຽກເຮັດງານທໍາໃຫ້ແກ່ປະຊາຊົນໃນໄວອອກແຮງງານໃຫ້ຫຼາຍຂຶ້ນ ໂດຍສະເພາະໄວໜຸ່ມທີ່ຢູ່ເຂດຫ່າງໄກສອກຫຼີກ, ຜູ້ທຸກຍາກ ແລະ ດ້ອຍໂອກາດ ໃຫ້ສາມາດພັດທະນາຊີວິດການເປັນຢູ່ໃຫ້ດີຂຶ້ນ. ພ້ອມດຽວກັນນີ້, ວຽກງານທີ່ສໍາຄັນຕົ້ນຕໍແມ່ນສຸມໃສ່ການສົ່ງເສີມ ແລະ ຍົກສູງວຽກງານຊາວໜຸ່ມດ້ານການໃຫ້ຄໍາປຶກສາແກ່ຊາວໜຸ່ມ-ເຍົາວະຊົນຜູ້ທີ່ມີຄວາມຜິດຫວັງ, ເສຍໃຈ, ຫາທາງອອກໃນຊີວິດ ແລະ ບັນຫາອື່ນໆ ເພື່ອເຮັດໃຫ້ວຽກງານພັດທະນາຊັບພະຍາກອນໜຸ່ມໄດ້ຮັບໝາກຜົນຫຼາຍຍິ່ງຂຶ້ນ ຊຶ່ງເນັ້ນໜັກໃສ່ການໂຄສະນາ.

– ລົງເຄື່ອນໄຫວຜັນຂະຫຍາຍກອງປະຊຸມໃຫຍ່ຂອງຜູ້ແທນຊາວໜຸ່ມໃນທົ່ວປະເທດ ຄັ້ງທີ VIII ແລະ ຜັນຂະຫຍາຍຍຸດທະສາດການພັດທະນາຊາວໜຸ່ມ ແລະ ເຍົາວະຊົນລາວ ປີ 2021-2030 ໄດ້ທັງໝົດ 15 ແຂວງ ແລະ ນະຄອນຫຼວງວຽງຈັນ, ຍັງເຫຼືອອີກ 2 ແຂວງ ຄື: ແຂວງເຊກອງ ແລະ ແຂວງໄຊສົມບູນ; ເປີດນໍາໃຊ້ສາຍດ່ວນ 1554 ເພື່ອໃຫ້ຄໍາປຶກສາແກ່ຊາວໜຸ່ມ-ເຍົາວະຊົນ ແລະ ກຸ່ມຄົນທົ່ວໄປ ເພື່ອເປັນການບັນເທົາຄວາມທຸກທາງດ້ານຈິດໃຈໃນຂັ້ນພື້ນຖານ. ສ້າງວີດີໂອສັ້ນກ່ຽວກັບການເຕືອນສະຕິໃຫ້ແກ່ປະຊາຊົນເຖິງວິທີປ້ອງກັນພະຍາດໂຄວິດ-19 ແລະ ໂຄສະນາຜ່ານລາຍການວິທະຍຸລາຍການ FM 90,00 ແລະ FM 103,7; Lao Youth Union ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ; Page: Noum Lao Mass Media ສື່ມວນຊົນໜຸ່ມລາວ ແລະ ເວັບໄຊ www.nit.gov.la.

– ຊາວໜຸ່ມຜູ້ດ້ອຍໂອກາດໄດ້ຮັບການຝຶກອົບຮົມວິຊາຊີບ ແລະ ສ້າງວຽກເຮັດງານທໍາໃຫ້ແກ່ຊາວໜຸ່ມ ໂດຍສະເພາະແມ່ນຊາວໜຸ່ມທີ່ຢູ່ເຂດຊົນນະບົດຫ່າງໄກສອກຫຼີກ, ຜູ້ທຸກຍາກ ແລະ ດ້ອຍໂອກາດ ໃນສາຂາວິຊາຊີບຕ່າງໆ ເຊັ່ນ: ຊ່າງສ້ອມແປງລົດຈັກ, ລົດໃຫຍ່, ຊ່າງໄຟຟ້າ, ຊ່າງເຊື່ອມໂລຫະ, ຊ່າງຕັດຫຍິບ, ເສີມສວຍ, ປູກຝັງ ແລະ ລ້ຽງສັດ ໃນໄລຍະ 2 ປີເຄິ່ງຜ່ານມາ ສາມາດປະຕິບັດໄດ້ທັງໝົດ ຈໍານວນ 2.539 ຄົນ.

– ໃຫ້ຄໍາປຶກສາແກ່ຊາວໜຸ່ມ-ເຍົາວະຊົນທີ່ຜິດຫວັງ, ເສຍໃຈ, ບໍ່ມີທາງອອກໃນຊີວິດ ແລະ ບັນຫາອື່ນໆ ໃນໄລຍະ 2 ປີເຄິ່ງຜ່ານມາ ມີທັງໝົດຈໍານວນ 4.091 ຄົນ, ເປັນຍິງ 2.471 ຄົນ.

– ໂຄສະນາເຜີຍແຜ່ກົດໝາຍ ແລະ ນະໂຍບາຍໃຫ້ແກ່ຊາວໜຸ່ມໃນຂອບເຂດທົ່ວປະເທດ ໃນໄລຍະ 2 ປີເຄິ່ງຜ່ານມາ ມີທັງໝົດ 14 ພາກສ່ວນເຂົ້າຮ່ວມ, ມີຜູ້ເຂົ້າຮ່ວມທັງໝົດ ຈໍານວນ 5.000 ກວ່າຄົນ.

– ຈັດໂຄສະນາປູກຈິດສຳນຶກໃນໂຮງຮຽນນັບແຕ່ຊັ້ນປະຖົມໃນຂອບເຂດທົ່ວປະເທດ ໃນຫົວຂໍ້: "ຜົນຮ້າຍຂອງຢາເສບຕິດ, ສິ່ງສິດພື້ນຖານຂອງເດັກ, ການຕ້ານການຄ້າມະນຸດ, ເຜີຍແຜ່ຂໍ້ບົດປອດໄພຕາມທ້ອງຖະໜົນເປັນຕົ້ນ" ໃນໄລຍະ 2 ປີເຄິ່ງຜ່ານມາ ໄດ້ທັງໝົດຈຳນວນ 6.264 ຄົນ, ເປັນຍິງ 3.467 ຄົນ.

– ຈັດຝຶກອົບຮົມວຽກງານວິຊາສະເພາະ ແລະ ວຽກງານຊາວໜຸ່ມໃຫ້ແກ່ພະນັກງານທີ່ເຮັດວຽກຊາວໜຸ່ມໃນຂອບເຂດທົ່ວປະເທດ ໃນໄລຍະ 2 ປີເຄິ່ງຜ່ານມາ ໄດ້ທັງໝົດ 3 ຊຸດ, ມີຈຳນວນ 160 ຄົນ.

– ຝຶກວິຊາຊີບສາຂາຕັດຫຍິບ, ເສີມສວຍ, ຕໍ່າຫູກ, ປຸງແຕ່ງອາຫານ, ເຂົ້າຮຽນອາຊີວະ-ວິຊາຊີບ ແລະ ອົບຮົມທາງດ້ານຈິດຕະສັງຄົມ ໃນໄລຍະ 2 ປີເຄິ່ງຜ່ານມາ ໄດ້ທັງໝົດ 3.724 ຄົນ, ເປັນຍິງ 1.888 ຄົນ.

<u>ສິ່ງທ້າທາຍ</u>: ການແຜ່ລະບາດຂອງພະຍາດໂຄວິດ-19 ສົ່ງຜົນໃຫ້ໄວໜຸ່ມເສຍໂອກາດດ້ານເສດຖະກິດ ແລະ ດ້ານວຽກເຮັດງານທຳ, ເຖິງແມ່ນວ່າລັດຖະບານຈະໃຫ້ຄຳໝັ້ນສັນຍາໃນການແກ້ໄຂບັນຫາດ້ານປະຊາກອນໜຸ່ມ ແຕ່ສະພາບເສດຖະກິດໃນປັດຈຸບັນທີ່ຖົດຖອຍລົງ ສົ່ງຜົນກະທົບໃສ່ການລົງທຶນໃນການພັດທະນາຊັບພະຍາກອນມະນຸດ ລວມທັງການຫຼຸດລາຍຈ່າຍໃສ່ຂະແໜງສັງຄົມ, ຊຶ່ງເຮັດໃຫ້ມີຄວາມສ່ຽງໃນການສູນເສຍຜົນປະໂຫຍດດ້ານປະຊາກອນ ອັນເຮັດໃຫ້ມີຄວາມສ່ຽງເພີ່ມຂຶ້ນ, ຄວາມທຸກຍາກເພີ່ມຂຶ້ນ ແລະ ການສູນເສຍດ້ານປະຊາກອນ ເຮັດໃຫ້ການພັດທະນາຫຼຸດໜ້ອຍຖອຍລົງ ແລະ ສປປ ລາວ ຍັງຄົງສະຖານະເປັນປະເທດກຳລັງພັດທະນາ.

### 3.5 ແຜນວຽກຈຸດສຸມທີ 5: ປະຊາຊົນ ແລະ ຜູ້ອອກແຮງງານພາກວິສາຫະກິດ, ຜູ້ປະກອບອາຊີບອິດສະຫຼະເຂົ້າເຖິງການບໍລິການປົກປ້ອງສັງຄົມທີ່ມີປະສິດທິພາບດີຂຶ້ນ

ໃນໄລນະຜ່ານມາ ລັດຖະບານໄດ້ມີຄວາມພະຍາຍາມສຸມໃສ່ການພັດທະນາລະບົບປະກັນສັງຄົມ ໃຫ້ມີຄວາມເຂັ້ມແຂງ ແລະ ມີປະສິດທິພາບ ໂດຍສະເພາະການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ຮອດປີ 2025 ເພື່ອຂະຫຍາຍການປົກຄຸມປະກັນສັງຄົມ ສຳລັບຜູ້ອອກແຮງງານໃຫ້ກວມເອົາກຸ່ມເປົ້າໝາຍຕ່າງໆຢ່າງກວ້າງຂວາງ ແລະສາມາດເຂົ້າເຖິງການບໍລິການປະກັນສັງຄົມດ້ວຍຫຼາຍຮູບການ. ຜ່ານການຈັດຕັ້ງປະຕິບັດບັນດາວຽກຈຸດສຸມ ແມ່ນເຮັດໃຫ້ສາມາດຂະຫຍາຍການບໍລິການປະກັນສັງຄົມໃຫ້ຄວບຄຸມຫຼາຍຂຶ້ນກວ່າເກົ່າ ແລະ ຫຼາຍຄາດໝາຍມີຄວາມຄືບໜ້າດີ ດັ່ງນີ້:

– ຂະຫຍາຍການຄຸ້ມຄອງຫົວໜ່ວຍວິສາຫະກິດທີ່ໄດ້ຮັບການຄຸ້ມຄອງຈາກປະກັນສັງຄົມເພີ່ມໃໝ່ ໄດ້ຈຳນວນ 811 ຫົວໜ່ວຍ, ເທົ່າກັບ 64,88% ຂອງແຜນການ (ແຜນການ 5ປີ: ໃຫ້ໄດ້ 1.275 ຫົວໜ່ວຍ).

– ຂະຫຍາຍການຂຶ້ນທະບຽນຜູ້ປະກັນຕົນໃໝ່ ແລະ ຈ່າຍເງິນສົມທົບ ໄດ້ຈຳນວນ 104.919 ຄົນ, ເປັນຍິງ 46.697 ຄົນ, ເທົ່າກັບ 66,62% ຂອງແຜນການ (ແຜນການ 5ປີ: ໃຫ້ໄດ້ 157.500 ຄົນ) ໃນນີ້: ພາກລັດ 6.864 ຄົນ, ເປັນຍິງ 2.860 ຄົນ, ເທົ່າກັບ 91,52% ຂອງແຜນການ (ແຜນການ 5ປີ: 7.500 ຄົນ); ພາກວິສາຫະກິດ 86.724 ຄົນ, ເປັນຍິງ 37.031 ຄົນ, ເທົ່າກັບ 64,24% ຂອງແຜນການ (ແຜນການ 5ປີ: 135.000 ຄົນ) ແລະ ຜູ້ສະໝັກໃຈ 11.331 ຄົນ, ເປັນຍິງ 6.806 ຄົນ, ເທົ່າກັບ 75,54% ຂອງແຜນການ (ແຜນການ 5ປີ: 15.000 ຄົນ).

– ນອກຈາກການຂະຫຍາຍອັດຕາການປົກຄຸມປະກັນສັງຄົມແລ້ວ ຍັງໄດ້ຕັ້ງໜ້າເຮັດໜ້າທີ່ຄຸ້ມຄອງລາຍຮັບ-ລາຍຈ່າຍການຄຸ້ມຄອງບໍລິຫານ ແລະ ອຸດໜູນປະກັນສັງຄົມປະເພດຕ່າງໆ ຕາມກົດໝາຍວ່າດ້ວຍປະກັນສັງຄົມ ຊຶ່ງສາມາດເກັບເງິນສົມທົບ ໄດ້ຈຳນວນ 4.265,82 ຕື້ກີບ, ເທົ່າກັບ 40,13% ຂອງແຜນການ (ແຜນການ 5ປີ: 10.630 ຕື້ກີບ) ໃນນີ້: ພາກລັດ 2.916,18 ຕື້ກີບ, ເທົ່າກັບ 36,90% ຂອງແຜນການ (ແຜນການ 5ປີ: 7.902 ຕື້ກີບ); ພາກວິສາຫະກິດ ແລະຜູ້ສະໝັກໃຈ 1.349,63 ຕື້ກີບ, ເທົ່າກັບ 49,47% ຂອງແຜນການ (ແຜນການ 5ປີ: 2.728 ຕື້ກີບ). ສຳລັບດ້ານລາຍຈ່າຍກໍໄດ້ເອົາໃຈໃສ່ປະຕິບັດລາຍຈ່າຍການອຸດໜູນ ແລະ ການບໍລິຫານໃຫ້ແກ່ຜູ້ປະກັນຕົນ ແລະ ຜູ້ເກີດສິດ ເປັນເງິນທັງໝົດ 3.504,85 ຕື້ກີບ, ເທົ່າກັບ 37,04% ຂອງແຜນການ (ແຜນການ 5ປີ: 9.461 ຕື້ກີບ) ໃນນີ້: ພາກລັດ 2.881,84 ຕື້ກີບ,

ເທົ່າກັບ 36,52% ຂອງແຜນການ (ແຜນການ 5ປີ: 7.891 ຕື້ກີບ); ພາກວິສາຫະກິດ ແລະ ຜູ້ສະໝັກໃຈ 623,01 ຕື້ກີບ, ເທົ່າກັບ 39,70% ຂອງແຜນການ (ແຜນການ 5ປີ: 1.569 ຕື້ກີບ).

– ເອົາໃຈໃສ່ຄົ້ນຄວ້າຈັດຕັ້ງປະຕິບັດນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ຄຸນງາມຄວາມດີໃນພາລະກິດປະຕິວັດຊາດປະຊາທິປະໄຕ ໃນ 5 ເປົ້າໝາຍບູລິມະສິດ ໄດ້ຈຳນວນ 1.771 ທ່ານ, ເປັນຍິງ 203 ທ່ານ, ເປັນເງິນທັງໝົດ 42.993,49 ລ້ານກີບ, ເທົ່າກັບ 11,07% ຂອງແຜນການ (ແຜນການ 5ປີ: 16.000 ທ່ານ) ໃນນີ້: ອຸດໜູນນາມມະຍົດວິລະຊົນແຫ່ງຊາດ 1 ທ່ານ, ເປັນເງິນ 20 ລ້ານກີບ; ນັກຮົບແຂ່ງຂັນ 4 ທ່ານ, ເປັນຍິງ 2 ທ່ານ, ເປັນເງິນ 40 ລ້ານກີບ; ເງິນປ່ຽນແທນໂກຕ້າລົດ 65 ທ່ານ, ເປັນຍິງ 10 ທ່ານ, ເປັນເງິນ 4,75 ຕື້ກີບ; ອຸດໜູນເທື່ອດຽວຜູ້ເສຍສະຫຼະຊີວິດ 893 ທ່ານ, ເປັນຍິງ 60 ທ່ານ, ເປັນເງິນ 19,9 ຕື້ກີບ ແລະ ອຸດໜູນເທື່ອດຽວຜູ້ຍັງມີຊີວິດ 644 ທ່ານ, ເປັນເງິນ 14,97 ຕື້ກີບ.

– ຄົ້ນຄວ້າ ແລະ ອະນຸມັດນະໂຍບາຍອຸດໜູນເສຍອົງຄະຍ້ອນການສູ້ຮົບ ແລະ ຮັບໃຊ້ສູ້ຮົບໃນພາລະກິດປະຕິວັດຊາດປະຊາທິປະໄຕໄດ້ຈຳນວນ 478 ທ່ານ ເປັນຍິງ 102 ທ່ານ, ເທົ່າກັບ 50,31% ຂອງແຜນການ (ແຜນການ 5ປີ: 950 ທ່ານ).

– ຂະຫຍາຍຄະນະກຳມະການປົກປ້ອງ ແລະ ຊ່ວຍເຫຼືອເດັກຂັ້ນເມືອງ ໄດ້ຈຳນວນ 23 ເມືອງ, ເທົ່າກັບ 65,71% ຂອງແຜນການ (ແຜນການ 5ປີ: 35 ເມືອງ) ແລະ ຂັ້ນບ້ານ ໄດ້ 684 ບ້ານ, ລື່ນແຜນການ 36,80% (ແຜນການ 5ປີ: 500 ບ້ານ) ພ້ອມທັງຈັດຝຶກອົບຮົມວຽກປົກປ້ອງ ແລະ ຊ່ວຍເຫຼືອເດັກ ໄດ້ 1.554 ຄົນ, ລື່ນແຜນການ 210,80% (ແຜນການ 5ປີ: ໃຫ້ໄດ້ຢ່າງໜ້ອຍ 500 ຄົນ, ສະເລ່ຍ 100 ຄົນຕໍ່ປີ).

– ສົມທົບທຶນໃນການເບິ່ງແຍງລ້ຽງດູເດັກນ້ອຍບ້ານເດັກເອັສໂອເອັສລາວ ໄດ້ຈຳນວນ 929 ຄົນ, ເປັນຍິງ 419 ຄົນ, ມີມູນຄ່າ 1.630 ລ້ານກວ່າກີບ.

– ໃຫ້ການຊ່ວຍເຫຼືອເດັກນ້ອຍ ແລະ ແມ່ຍິງທີ່ຕ້ອງການປົກປ້ອງພິເສດ, ມີຄວາມສ່ຽງ ແລະ ຕົກເປັນເຫຍື່ອການຄ້າມະນຸດ, ເດັກເລ່ລ່ອນດ້ອຍໂອກາດ ແລະ ຜູ້ໄດ້ຮັບຜົນກະທົບຈາກພະຍາດໂຄວິດ-19 ໄດ້ຈຳນວນ 10.918 ຄົນ, ເປັນຍິງ 4.014 ຄົນ, ເປັນເງິນ 6.516 ລ້ານກີບ.

– ໃຫ້ການຊ່ວຍເຫຼືອເຂົ້າກິນແກ່ຜູ້ປະສົບໄພພິບັດຢູ່ເມືອງສະໜາມໄຊ, ແຂວງອັດຕະປື ປະຕິບັດໄດ້ 33.681 ໂຕນ, ເປັນເງິນ 31.320 ລ້ານກີບ, ມີຜູ້ໄດ້ຮັບຜົນປະໂຫຍດ 4.678 ຄອບຄົວ; ຜູ້ປະສົບໄພພິບັດ, ຜູ້ທຸກຍາກ ແລະ ຜູ້ດ້ອຍໂອກາດໃນຂອບເຂດທົ່ວປະເທດ ປະຕິບັດໄດ້ 40.421,89 ໂຕນ, ເປັນເງິນ 36.321,72 ລ້ານກີບ, ມີຜູ້ໄດ້ຮັບຜົນໂຫຍດ 322.160 ຄົນ, ເປັນຍິງ 181.497 ຄົນ; ສະໜອງເຄື່ອງອຸປະໂພກ-ບໍລິໂພກປະເພດຕ່າງໆໃຫ້ແກ່ຜູ້ດ້ອຍໂອກາດໃນສັງຄົມ ໄດ້ຈຳນວນ 77.911 ຄົນ, ມີມູນຄ່າ 5.600 ລ້ານກີບ; ສົມທົບວັດຖຸອຸປະກອນເພື່ອປຸກສ້າງເຮືອນຢູ່ໃຫ້ແກ່ຜູ້ທີ່ໄດ້ຮັບກະທົບຈາກໄພພິບັດຕ່າງໆ ໄດ້ຈຳນວນ 2.928 ຄອບຄົວ, ເປັນເງິນ 1.316,02 ລ້ານກີບ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ເພື່ອຫຼຸດຜ່ອນຄວາມທຸກຍາກໃນເຂດຫ່າງໄກສອກຫຼີກ ແລະ ຊົນນະບົດ ໄດ້ຈຳນວນ 195 ຄອບຄົວ, ເປັນເງິນ 500 ລ້ານກີບ.

– ໄດ້ສຳເລັດການປັບປຸງສາງເກັບມ້ຽນເຄື່ອງອຸປະໂພກ-ບໍລິໂພກ ໄດ້ຈຳນວນ 2 ແຫ່ງ ຄື: ນະຄອນຫຼວງວຽງຈັນ 1 ແຫ່ງ ແລະ ແຂວງຈຳປາສັກ 1 ແຫ່ງ; ກຳລັງກໍ່ສ້າງຢູ່ແຂວງອຸດົມໄຊ 1 ແຫ່ງ.

<u>ສິ່ງທ້າທາຍ</u>: (1) ຕາໜ່າງການປົກປ້ອງທາງສັງຄົມຍັງມີຄວາມຈຳກັດ ແລະ ຂາດທຶນຮອນທີ່ພຽງພໍ, ງົບປະມານຂອງວຽກງານປະກັນສຸຂະພາບແມ່ນຫຼຸດລົງ ເຖິງວ່າຈະມີການຂຶ້ນທະບຽນເຂົ້າລະບົບປະກັນສັງຄົມເພີ່ມຂຶ້ນ. ພາກລັດຍັງບໍ່ສາມາດຮັບປະກັນໃນການສະໜອງທຶນຢ່າງຍືນຍົງ ເຂົ້າໃສ່ວຽກງານປະກັນສັງຄົມ ຍ້ອນຄວາມຈຳກັດຂອງງົບປະມານ; (2) ເງື່ອນໄຂດ້ານຄ່າແຮງງານ, ສະຫວັດດີການແຮງງານ ແລະ ສະພາບແວດລ້ອມໃນສະຖານທີ່ເຮັດວຽກກ່ຽວກັບຄວາມປອດໄພ ແລະ ສຸຂະພາບແຮງງານຍັງບໍ່ທັນໄດ້ຮັບການປັບປຸງໃຫ້ດີຂຶ້ນເທົ່າທີ່ຄວນ, ບໍ່ທັນສ້າງແຮງດຶງດູດເອົາກຳລັງແຮງງານ

ເຂົ້າໃນບາງຂະແໜງການເສດຖະກິດ ແລະ ບໍ່ເປັນແຮງຈູງໃຈໃຫ້ກໍາລັງແຮງງານພັດທະນາຕົນເອງ ທັງດ້ານສີມື ແລະ ທັດສະນະຄະຕິໃນການເຮັດວຽກ; ການສົ່ງເສີມສາຍພົວພັນແຮງງານຍັງບໍ່ທັນເຂັ້ມແຂງເທົ່າທີ່ຄວນ, ການປະຕິບັດມາດຕະຖານຫົວໜ່ວຍແຮງງານ ແລະ ລະບຽບການນໍາໃຊ້ແຮງງານຍັງບໍ່ທັນກວ້າງຂວາງ, ການປົກປ້ອງສິດຜົນປະໂຫຍດຂອງແຮງງານເດັກຍັງມີຊ່ອງຫວ່າງ; ການຄຸ້ມຄອງແຮງງານລາວທີ່ເຮັດວຽກຢູ່ຕ່າງປະເທດ ຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນ ແລະ ແຮງງານຕ່າງປະເທດທີ່ເຮັດວຽກຢູ່ລາວ ຍັງບໍ່ທັນໄດ້ຮັບການຄຸ້ມຄອງໃຫ້ເປັນລະບົບ ແລະ ບໍ່ທັນມີວິທີແກ້ໄຂໃຫ້ມີປະສິດທິຜົນ ຊຶ່ງໄດ້ສົ່ງຜົນກະທົບຕໍ່ການມີວຽກເຮັດງານທໍາຂອງແຮງງານລາວ ແລະ ມີກໍລະນີບໍ່ປະຕິບັດພັນທະຕໍ່ລັດ; (3) ການຂະຫຍາຍອັດຕາເຂົ້າປະກັນສັງຄົມຕາມລະບົບຫົວໜ່ວຍແຮງງານ ຍັງບໍ່ບັນລຸຕາມຄາດໝາຍທີ່ວາງໄວ້, ສັງຄົມຍັງບໍ່ທັນຮັບຮູ້ ແລະ ເຂົ້າໃຈຕໍ່ລະບົບປະກັນສັງຄົມຢ່າງເລິກເຊິ່ງ ແລະ ກວ້າງຂວາງ; ກອງທຶນປະກັນສັງຄົມພາກລັດຍັງບໍ່ສາມາດເປັນກອງທຶນທີ່ກຸ້ມຕົນເອງ ນອກຈາກລາຍຮັບຈາກເງິນສົມທົບຕາມກົດໝາຍ 8% ແລະ 8,5% ແລ້ວ, ໃນແຕ່ລະປີລັດຖະບານຍັງໄດ້ແບກຫາບ ໃນການສະໜອງງົບປະມານໃຫ້ພຽງພໍກັບລາຍຈ່າຍອຸດໜູນປະກັນສັງຄົມຕາມຄວາມຈໍາເປັນຕົວຈິງ ເນື່ອງຈາກຈໍານວນຜູ້ຮັບການອຸດໜູນປະກັນສັງຄົມໃນແຕ່ລະປີມີທ່າອ່ຽງເພີ່ມຂຶ້ນ. ໃນຂະນະດຽວກັນ, ຜູ້ຈ່າຍເງິນສົມທົບໂດຍສະເພາະພະນັກງານ-ລັດຖະກອນມີທ່າອ່ຽງຫຼຸດລົງ ຈຶ່ງເຮັດໃຫ້ລາຍຮັບເງິນສົມທົບຕາມພັນທະທີ່ໄດ້ກໍານົດໃນກົດໝາຍ ຍັງບໍ່ພຽງພໍກັບລາຍຈ່າຍການອຸດໜູນປະກັນສັງຄົມໃນແຕ່ລະປີ; ຂອດປະສານງານ ແລະ ການສະໜອງບໍລິການປິ່ນປົວສຸຂະພາບ ຍັງບໍ່ເປັນທີ່ເພິ່ງພໍໃຈຂອງຜູ້ປະກັນຕົນ ແລະ ຜູ້ເກີດສິດ; (4) ການປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານໃນພາລະກິດການປະຕິວັດຊາດປະຊາທິປະໄຕ ຍັງບໍ່ທັນບັນລຸໄດ້ຕາມຄາດໝາຍທີ່ກໍານົດໄວ້, ຂໍ້ມູນບາງກຸ່ມເປົ້າໝາຍຍັງບໍ່ຊັດເຈນ, ການສະໜອງງົບປະມານຍັງບໍ່ພຽງພໍກັບຄວາມຕ້ອງການ; ການພັດທະນາການຊ່ວຍເຫຼືອເດັກ, ຜູ້ພິການ ແລະ ຜູ້ອາຍຸສູງ ຍັງບໍ່ທັນເປັນລະບົບ; ການຄຸ້ມຄອງວຽກສັງຄົມສົງເຄາະ ແລະ ໄພພິບັດຕ່າງໆຍັງບໍ່ທັນເຂັ້ມແຂງ ແລະ ການສະໜອງການຊ່ວຍເຫຼືອສຸກເສີນໃຫ້ຜູ້ປະສົບໄພພິບັດຕ່າງໆ, ຜູ້ດ້ອຍໂອກາດ ແລະ ຜູ້ທຸກຍາກຍັງຊັກຊ້າ.

### 3.6 ແຜນວຽກຈຸດສຸມທີ 6: ການເກັບກູ້ລະເບີດບໍ່ທັນແຕກ ແລະ ຊີວິດຂອງປະຊາຊົນມີຄວາມປອດໄພຈາກລະເບີດບໍ່ທັນແຕກເພີ່ມຂຶ້ນ ເທື່ອລະກ້າວ

– ການກວດກູ້ລະເບີດບໍ່ທັນແຕກອອກຈາກເນື້ອທີ່ທໍາການຜະລິດ ແລະ ເຂດຊຸມຊົນ, ເຂດຈຸດສຸມທຸລະກິດ ສາມາດປະຕິບັດໄດ້ 11.879 ເຮັກຕາ, ເທົ່າກັບ 23,76% ຂອງແຜນການ (ແຜນການ 5ປີ: 50.000 ເຮັກຕາ).

– ອຸປະຕິເຫດລະເບີດບໍ່ທັນແຕກຕົກຄ້າງໄດ້ເກີດຂຶ້ນ ຈໍານວນ 52 ຄັ້ງ ເຮັດໃຫ້ມີຜູ້ໄດ້ຮັບເຄາະຮ້າຍຈາກອຸປະຕິເຫດດັ່ງກ່າວຈໍານວນ 98 ຄົນ, ໃນນີ້: ບາດເຈັບ 75 ຄົນ ແລະ ເສຍຊີວິດ 23 ຄົນ, ເທົ່າກັບ 49% ຂອງແຜນການ (ແຜນການ 5ປີ: ຜູ້ເຄາະຮ້າຍໃຫ້ຕໍ່າກວ່າ 40 ຄົນ/ປີ ຫຼື ຕໍ່າກວ່າ 200 ຄົນ ໃນ 5ປີ).

– ໂຄສະນາຜົນຮ້າຍ ແລະ ທີ່ມາຂອງລະເບີດບໍ່ທັນແຕກຕາມກຸ່ມບ້ານເປົ້າໝາຍ ໄດ້ຈໍານວນ 5.496 ເທື່ອບ້ານ, ລື່ນແຜນການ 83,20% (ແຜນການ 5ປີ: 3.000 ເທື່ອບ້ານ) ຊຶ່ງມີປະຊາຊົນເຂົ້າຮ່ວມຮັບຟັງທັງໝົດ 164.123 ເທື່ອຄົນ, ເປັນຍິງ 52.671 ເທື່ອຄົນ ແລະ ຢູ່ບັນດາໂຮງຮຽນສາມັນສຶກສາທັງໝົດ 9.740 ເທື່ອແຫ່ງ, ມີນັກຮຽນ ແລະ ພະນັກງານຄູເຂົ້າຮ່ວມ ຈໍານວນ 750.748 ເທື່ອຄົນ, ເປັນຍິງ 364.555 ເທື່ອຄົນ.

– ຈັດຕັ້ງການສໍາຫຼວດບໍ່ແມ່ນວິຊາການ ເພື່ອຊອກຫາຈຸດຫຼັກຖານລະເບີດບໍ່ທັນແຕກ ໄດ້ຈໍານວນ 594 ບ້ານ, ເທົ່າກັບ 21,40% ຂອງແຜນການ (ແຜນການ 5ປີ: 2.776 ບ້ານ); ສໍາຫຼວດແບບວິຊາການ ເພື່ອກໍານົດພື້ນທີ່ລະເບີດບໍ່ທັນແຕກຕົກຄ້າງ ໄດ້ຈໍານວນ 61.294,05 ເຮັກຕາ, ເທົ່າກັບ 24,52% ຂອງແຜນການ (ແຜນການ 5ປີ: 250.000 ເຮັກຕາ).

– ໃຫ້ການຊ່ວຍເຫຼືອຜູ້ປະສົບອຸປະຕິເຫດ ເພື່ອພັດທະນາຊີວິດການເປັນຢູ່ຂອງຜູ້ຖືກເຄາະຮ້າຍຈາກອຸປະຕິເຫດລະເບີດບໍ່ທັນແຕກຕົກຄ້າງ ໄດ້ຈຳນວນ 199 ຄົນ, ເທົ່າກັບ 3,46% ຂອງແຜນການ (ແຜນການ 5ປີ: 5.750 ຄົນ) ໃນນີ້: ປິ່ນປົວດ້ານການແພດ 70 ຄົນ, ຟື້ນຟູສຸຂະພາບຈິດ 42 ຄົນ, ຟື້ນຟູໜ້າທີ່ການ 52 ຄົນ ແລະ ປຸກສ້າງທີ່ຢູ່ອາໄສ 35 ຄົນ.

<u>ສິ່ງທ້າທາຍ</u>: ການຄຸ້ມຄອງບໍລິຫານວຽກເກັບກູ້ລະເບີດບໍ່ທັນແຕກທີ່ຕົກຄ້າງ ຍັງບໍ່ທັນຄ່ອງຕົວ ແລະ ການລະດົມແຫຼ່ງທຶນ ຍັງບໍ່ທັນພຽງພໍກັບຄວາມຕ້ອງການຂອງວຽກຕົວຈິງ.

## 4. ເປົ້າໝາຍທີ 4 ປົກປັກຮັກສາສິ່ງແວດລ້ອມໃຫ້ມີຄວາມສົມດຸນ ແລະ ຫຼຸດຜ່ອນຄວາມສ່ຽງໄພພິບັດຕ່າງໆ

### 4.1 ແຜນວຽກຈຸດສຸມທີ 1: ການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ ໃຫ້ມີຄວາມຍືນຍົງ

ໃນໄລຍະ 2 ປີເຄິ່ງຜ່ານມາ ໄດ້ສຸມໃສ່ການປະຕິບັດວຽກງານຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ ໂດຍສືບຕໍ່ສ້າງ ແລະ ປັບປຸງບັນດານິຕິກຳຕ່າງໆທີ່ຈຳເປັນໃຫ້ມີຄວາມຮັດກຸມ ເຮັດໃຫ້ບັນດາຕົວເລກຄາດໝາຍທີ່ໄດ້ກຳນົດໄວ້ໃນແຜນການ 5 ປີ ຄັ້ງທີ IX ສາມາດຈັດຕັ້ງປະຕິບັດມີຄວາມຄືບໜ້າ ດັ່ງນີ້:

- ການຂຶ້ນທະບຽນອອກໃບຕາດິນໃນຂອບເຂດທົ່ວປະເທດ ປະຕິບັດໄດ້ 395.350 ຕອນ, ເທົ່າກັບ 24,70% ຂອງແຜນການ (ແຜນການ 5ປີ: ຈຳນວນ 1,6 ລ້ານຕອນ).
- ໄດ້ສຳເລັດການສ້າງແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານຂັ້ນແຂວງ ໄດ້ 5 ແຂວງ. ມາຮອດປະຈຸບັນສຳເລັດ 17 ແຂວງ ແລະ ນະຄອນຫຼວງວຽງຈັນ, ບັນລຸແຜນການທີ່ວາງໄວ້ (ແຜນການ 5 ປີ: ຈຳນວນ 5 ແຂວງ). ພ້ອມດຽວກັນນີ້, ກໍໄດ້ຈັດຕັ້ງເຜີຍແຜ່ ແລະ ຊຸກຍູ້ຜັນຂະຫຍາຍການນຳໃຊ້ແຜນຈັດສັນດັ່ງກ່າວ ເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ແລະນະຄອນຫຼວງວຽງຈັນ.
- ສຳເລັດການສະເໜີລັດຖະບານອອກດຳລັດສ້າງຕັ້ງອຸທິຍານແຫ່ງຊາດ ຈຳນວນ 3 ແຫ່ງ ຄື: ໃນປີ 2021 ສຳເລັດຈຳນວນ 2 ແຫ່ງ (ອຸທິຍານແຫ່ງຊາດດົງຫົວສາວ ແລະ ອຸທິຍານແຫ່ງຊາດເຊປຽນ); ໃນປີ 2022 ສຳເລັດຈຳນວນ 1 ແຫ່ງ (ອຸທິຍານແຫ່ງຊາດພູເຂົາຄວາຍ), ເທົ່າກັບ 60% ຂອງແຜນການ (ແຜນການ 5ປີ: ຈຳນວນ 5 ແຫ່ງ).
- ການປູກປ່າ: ປັດຈຸບັນມີເນື້ອທີ່ປູກໄມ້ຕົວຈິງ ຈຳນວນ 65.600 ເຮັກຕາ, ເທົ່າກັບ 32,80% ຂອງແຜນການ (ແຜນການ 5ປີ: ຈຳນວນ 200.000 ເຮັກຕາ) ແລະ ການຟື້ນຟູປ່າໄມ້ ປະຕິບັດໄດ້ 61.450 ເຮັກຕາ, ເທົ່າກັບ 3,41% ຂອງແຜນການ (ແຜນການ 5ປີ: ຈຳນວນ 1.800.000 ເຮັກຕາ). ຊຶ່ງເຫັນວ່າການສົ່ງເສີມການປູກປ່າ ແລະ ການຟື້ນຟູປ່າ ຍັງບໍ່ສາມາດຈັດຕັ້ງປະຕິບັດຕາມແຜນການໄດ້ດີເທົ່າທີ່ຄວນ, ພ້ອມທັງຍັງມີການບຸກລຸກ-ຈັບຈອງທີ່ດິນປ່າໄມ້ ເພື່ອທຳການຜະລິດ ແລະ ການລົງທຶນຕ່າງໆ ບວກກັບ ຍັງເກີດມີສະພາບໄຟໄໝ້ລາມປ່າໃນຫຼາຍພື້ນທີ່ໃນໄລຍະຜ່ານມາ ຊຶ່ງມີຄວາມສ່ຽງຕໍ່ການບັນລຸຄາດໝາຍເນື້ອທີ່ປ່າປົກຫຸ້ມ ບໍ່ໃຫ້ຫຼຸດ 70% ຂອງເນື້ອທີ່ທົ່ວປະເທດ ໃນປີ 2025.
- ສ້າງ ແລະ ປັບປຸງການຕິດຕາມກວດກາຄຸນນະພາບສິ່ງແວດລ້ອມ ໂດຍການສ້າງສະຖານີວັດແທກຄຸນນະພາບອາກາດ ສາມາດປະຕິບັດໄດ້ 5 ສະຖານີ, ເທົ່າກັບ 55,56% ຂອງແຜນການ (ແຜນການ 5ປີ: ຢ່າງໜ້ອຍ ໃຫ້ໄດ້ 9 ແຫ່ງໃນຂອບເຂດທົ່ວປະເທດ).

- ສໍາເລັດການສ້າງແຜນຄຸ້ມຄອງອ່າງຮັບນໍ້າຂະໜາດໃຫຍ່ ໄດ້ຈໍານວນ 12 ອ່າງຮັບນໍ້າຄື: ນໍ້າອູ, ນໍ້າທາ, ນໍ້າຄານ, ນໍ້າງື່ມ, ນໍ້າເທີນ-ນໍ້າກະດິງ, ເຊບັ້ງໄຟ, ເຊບັ້ງຫຽງ, ນໍ້າຊໍາ, ນໍ້າເຊືອງ, ນໍ້າງຽບ, ເຊໂດນ ແລະ ເຊກອງ; ເທົ່າກັບ 86% ຂອງແຜນການ (ແຜນການ 5ປີ: ຈໍານວນ 14 ແຫ່ງ).

ນອກຈາກນັ້ນ, ໄດ້ສຸມໃສ່ຈັດຕັ້ງບັນດາໜ້າວຽກຈຸດສຸມທີ່ເປັນແຜນງານບູລິມະສິດ ເຊິ່ງມີຜົນສໍາເລັດຫຼາຍດ້ານດັ່ງນີ້:

\+ <u>ການຄຸ້ມຄອງ ແລະ ນໍາໃຊ້ທີ່ດິນ</u>: ໄດ້ດໍາເນີນວຽກງານການຄຸ້ມຄອງທີ່ດິນຫັນເປັນທັນສະໄໝ ໂດຍໄດ້ສ້າງຍຸດທະສາດການຫັນເປັນທັນສະໄໝ, ປະເມີນສະພາບລະບົບຄຸ້ມຄອງຖານຂໍ້ມູນທີ່ດິນ ແລະ ຄາດຄະເນແຜນການລົງທຶນການປັບປຸງຫັນເປັນທັນສະໄໝ; ປັບປຸງ ແລະ ສ້າງລະບົບໂຄງລ່າງພື້ນຖານຂອງ ICT ເພື່ອຄຸ້ມຄອງຂໍ້ມູນທີ່ດິນ ແລະ ໄດ້ຮ່ວມມືກັບບໍລິສັດເອກະຊົນ ແລະ ພາກສ່ວນກ່ຽວຂ້ອງ ເພື່ອສືບຕໍ່ພັດທະນາ ແລະ ຄຸ້ມຄອງລະບົບທະບຽນທີ່ດິນ Lao Land Reg ແລະ ເຊື່ອມຕໍ່ຂໍ້ມູນທີ່ດິນ ເພື່ອເກັບຄ່າທໍານຽມ ແລະ ຄ່າບໍລິການໃນການຄຸ້ມຄອງນໍາໃຊ້ທີ່ດິນ ແລະ ລາຍຮັບຈາກທີ່ດິນອື່ນໆ ຊຶ່ງໄດ້ເຮັດການທົດລອງຢູ່ເມືອງໄຊທານີ, ນະຄອນຫຼວງວຽງຈັນ (ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ). ນອກນັ້ນ, ໄດ້ດໍາເນີນການສະຫຼຸບຕີລາຄາການເຊົ່າ ແລະ ສໍາປະທານທີ່ດິນໃນທົ່ວປະເທດ ໂດຍໄດ້ກວດກາ ແລະ ປະເມີນຄືນການຈັດຕັ້ງປະຕິບັດຜົນການກວດກາ ຈໍານວນ 438 ໂຄງການເຊົ່າ ແລະ ສໍາປະທານທີ່ດິນ; ຊຶ່ງມາຮອດປັດຈຸບັນ ສາມາດອອກຂໍ້ຕົກລົງ/ແຈ້ງຍົກເລີກໂຄງການ ໄດ້ທັງໝົດ 101 ໂຄງການ, ເທົ່າກັບ 23% ຂອງໂຄງການເປົ້າໝາຍຍົກເລີກ. ພ້ອມນັ້ນ ກໍໄດ້ສະເໜີປັບປຸງ ດໍາລັດວ່າດ້ວຍການເອົາດິນຂອງລັດ ໃຫ້ເຊົ່າ ແລະ ສໍາປະທານ ແລະ ໄດ້ຊຸກຍູ້ໃຫ້ບັນດາກະຊວງ ຂຶ້ນບັນຊີດິນລັດ ເຊິ່ງຮອດປັດຈຸບັນສໍາເລັດໄດ້ 11 ກະຊວງ ເປັນຈໍານວນຕອນດິນ 17.207 ຕອນ. ໄດ້ສືບຕໍ່ຈັດຕັ້ງຜັນຂະຫຍາຍແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ເຊື່ອມສານເຂົ້າໃນແຜນພັດທະນາໃນຂັ້ນຕ່າງໆ ມາຮອດປັດຈຸບັດໄດ້ສ້າງແຜນຈັດສັນທີ່ດິນ ຂັ້ນເມືອງ ໄດ້ 45 ເມືອງ, ເທົ່າກັບ 30% ຂອງຈໍານວນເມືອງທົ່ວປະເທດ ແລະ ຂັ້ນບ້ານ ໄດ້ 3.200 ບ້ານ, ເທົ່າກັບ 36% ຂອງຈໍານວນບ້ານທົ່ວປະເທດ.

\+ <u>ການຄຸ້ມຄອງ ແລະ ນໍາໃຊ້ຊັບພະຍາກອນປ່າໄມ້</u>: ໄດ້ຊຸກຍູ້ ແລະ ສະໜັບສະໜູນພາກສ່ວນທີ່ກ່ຽວຂ້ອງໃນການຄຸ້ມຄອງ ແລະ ນໍາໃຊ້ຊັບພະຍາກອນປ່າໄມ້ໃຫ້ມີຄວາມຍືນຍົງ ໂດຍໄດ້ສະໜອງທຶນ ຈໍານວນ 18,5 ລ້ານໂດລາສະຫະລັດພາຍໃຕ້ໂຄງການສິ່ງແວດລ້ອມ ແລະ ສັງຄົມ ໄລຍະ 2 ໃຫ້ຂະແໜງກະສິກໍາ ແລະ ປ່າໄມ່ ຊຶ່ງສາມາດປະຕິບັດໄດ້ ຈໍານວນ 12 ແຫ່ງ ຄື: ນໍ້າແອັດ-ພູເລີຍ, ນໍ້າຊໍາ, ພູສະບົດ, ພູຈ້ອງ, ຕາດກວາງຊີ, ພູມິດ-ພູຊັນ, ນໍ້າມ່ອນ, ພູຈອມວອຍ, ນາກາຍ-ນໍ້າເທີນ, ນໍ້າອິນພູຫີນເຫຼັກໄຟ, ພູເຂົາຄວາຍ ແລະ ດົງນາຕາດ. ນອກນັ້ນ, ຍັງໄດ້ສະໜັບສະໜູນການພັດທະນາ ແລະ ອະນຸລັກສວນພຶກສາສາດ ເປັນຕົ້ນ: ການສ້າງຄວາມພ້ອມເພື່ອຮັບຮອງ ແລະ ປະກາດເອົາປ່າສະຫງວນ ນໍ້າແອັດ-ພູເລີຍ ແລະ ນາກາຍ-ນໍ້າເທີນ ເປັນສວນອຸທິຍານແຫ່ງຊາດ.

\+ <u>ການຄຸ້ມຄອງ ແລະ ນໍາໃຊ້ຊັບພະຍາກອນນໍ້າ</u>: ໄດ້ຊຸກຍູ້ໃຫ້ແຕ່ລະແຂວງ ສ້າງແຜນການຄຸ້ມຄອງອ່າງຮັບນໍ້າຂະໜາດກາງ ໂດຍໄດ້ມີການຮັບຮອງຈາກເຈົ້າແຂວງ ຈໍານວນ 3 ອ່າງຄື: ອ່າງຮັບນໍ້າ ນໍ້າຊັນ, ນໍ້າງື່ມ ແລະ ນໍ້າພູນ ຂອງແຂວງໄຊຍະບູລີ, ເທົ່າກັບ 16% ຂອງແຜນອ່າງຮັບນໍ້າຂະໜາດກາງ (ອ່າງຮັບນໍ້າຂະໜາດກາງ: 19 ແຫ່ງ); ໄດ້ສ້າງ ແລະ ປັບປຸງນິຕິກໍາທີ່ສໍາຄັນຈໍານວນໜຶ່ງ ເພື່ອເປັນພື້ນຖານໃຫ້ແກ່ການຄຸ້ມຄອງນໍ້າ ແລະ ຊັບພະຍາກອນນໍ້າ ແນໃສ່ຮັບປະກັນໃຫ້ນໍ້າມີຄຸນນະພາບດີ ແລະ ມີປະລິມານພຽງພໍ ເພື່ອຕອບສະໜອງໃຫ້ແກ່ການບໍລິໂພກ, ອຸປະໂພກ ແລະ ການພັດທະນາແບບຍືນຍົງ ພ້ອມນີ້ ກໍໄດ້ຮ່າງຍຸດທະສາດວ່າດ້ວຍການຄຸ້ມຄອງ, ການນໍາໃຊ້ນໍ້າ ແລະ ຊັບພະຍາກອນແຫຼ່ງນໍ້າ; ສ້າງກົນໄກການຫຼຸດຜ່ອນການປ່ອຍມົນລະພິດລົງສູ່ແຫຼ່ງນໍ້າ ໂດຍໄດ້ມີການອອກອະນຸຍາດການປ່ອຍນໍ້າເປື້ອນໃຫ້ບັນດາໂຄງການລົງທຶນ ແລະ ຜູ້ປະກອບການ, ການສ້າງແຜນຄຸ້ມຄອງນໍ້າໃຕ້ດິນຂັ້ນແຂວງ, ການສໍາຫຼວດດິນຖ່ານຕົມ ແລະ ການປັກຫຼັກເຂດດິນຖ່ານຕົມ. ນອກນັ້ນ, ຍັງໄດ້ດໍາເນີນການຕິດຕາມຄຸນນະພາບນໍ້າ ປະຕິບັດໄດ້ທັງໝົດ 202 ຈຸດ ໃນສາຍນໍ້າຕ່າງໆທົ່ວປະເທດ.

+ <u>ການຄຸ້ມຄອງສິ່ງແວດລ້ອມ</u>: ໄດ້ກໍ່ສ້າງ ແລະ ຕິດຕັ້ງສະຖານີວັດແທກຄຸນນະພາບອາກາດໃໝ່ ຈຳນວນ 5 ສະຖານີ ຢູ່ແຂວງອຸດົມໄຊ, ຫຼວງນໍ້າທາ, ບໍ່ແກ້ວ, ສະຫວັນນະເຂດ ແລະ ຄຳມ່ວນ ແລະ ໄດ້ລາຍງານສະພາບຄຸນນະພາບອາກາດ (ຝຸ່ນລະອອງ PM 2.5, PM 10, $NO_X$, $SO_X$) ໃຫ້ແກ່ສັງຄົມຮັບຊາບຢ່າງເປັນປົກກະຕິ ພ້ອມທັງການສຳຫຼວດແຫຼ່ງກຳເນີດ ມົນລະພິດຢູ່ແຂວງທີ່ມີໂຮງຈັກໂຮງງານ ແລະ ມີໂຄງການລົງທຶນຈຳນວນຫຼາຍ.ພ້ອມນີ້, ກໍສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ເພື່ອດຳເນີນມາດຕະການຫຼຸດຜ່ອນ, ສະກັດກັ້ນໄຟປ່າ ແລະ ແກ້ໄຂບັນຫາໝອກຄວັນ ຈາກການຈູດປ່າ-ເຮັດໄຮ່ ໂດຍໄດ້ສ້າງກົນໄກການລາຍງານສະພາບການເກີດໄຟໄໝ້ປ່າໃນພື້ນທີ່ຕ່າງໆ; ສ້າງແຜນດຳເນີນງານ ແລະ ແນວທາງການແກ້ໄຂມົນລະພິດໝອກຄວັນ ພ້ອມທັງສ້າງແຜນຈັດສັນທີ່ດິນຂັ້ນບ້ານ ໃນເຂດ 3 ປະເພດປ່າ ເພື່ອກຳນົດເຂດນຳໃຊ້ ແລະ ເຂດປ້ອງກັນການບຸກລຸກປ່າ. ນອກຈາກນັ້ນ, ຍັງໄດ້ສ້າງຄວາມເຂັ້ມແຂງໃນການຕິດຕາມກວດກາສິ່ງແວດລ້ອມ ໂດຍໄດ້ສ້າງ ແລະ ເຜີຍແຜ່ນິຕິກຳ, ບົດແນະນຳ ແລະ ຄູ່ມືວິຊາການ ທີ່ຕິດພັນກັບວຽກງານກວດກາຕິດຕາມການຄຸ້ມຄອງສິ່ງແວດລ້ອມ-ສັງຄົມ ຂອງໂຄງການລົງທຶນ ແລະ ກິດຈະການຕ່າງໆ; ສ້າງລະບົບຖານຂໍ້ມູນຕິດຕາມໂຄງການລົງທຶນ ແລະ ເຊື່ອມຕໍ່ຂໍ້ມູນກັບພາກສ່ວນທີ່ກ່ຽວຂ້ອງ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ ໃຫ້ສາມາດລາຍງານສະພາບການຄຸ້ມຄອງສິ່ງແວດລ້ອມໄດ້ຢ່າງເປັນປົກກະຕິ.

<u>ສິ່ງທ້າທາຍ</u>: ການຈັດຕັ້ງປະຕິບັດວຽກງານໃນຂົງເຂດທີ່ດິນ ຍັງມີຫຼາຍໜ້າວຽກບໍ່ສາມາດປະຕິບັດໄດ້ຕາມແຜນການທີ່ກຳນົດໄວ້ ແລະ ມີຄວາມທ້າທາຍ ໂດຍສະເພາະຄາດໝາຍການຂຶ້ນທະບຽນອອກໃບຕາດິນ ໃຫ້ໄດ້ 1,6 ລ້ານຕອນ ພາຍໃນປີ 2025 ແມ່ນມີຄວາມຊັກຊ້າ ແລະ ມີທ່າອ່ຽງຈະບໍ່ສາມາດບັນລຸຕາມຄາດໝາຍ; ການອະນຸຍາດໃຫ້ເຊົ່າ ແລະ ສຳປະທານດິນລັດ ຍັງບໍ່ທັນປະຕິບັດໄດ້ຢ່າງເຂັ້ມງວດ; ລະບົບນິເວດຍັງສືບຕໍ່ໄດ້ຮັບຄວາມສ່ຽງຈາກການຂະຫຍາຍຕົວຂອງຂະແໜງກະສິກຳ, ການນຳໃຊ້ຢາຂ້າແມງໄມ້ແບບບໍ່ຍືນຍົງ, ການພັດທະນາໂຄງລ່າງພື້ນຖານຂະໜາດໃຫຍ່, ກິດຈະກຳຂຸດຄົ້ນບໍ່ແຮ່ ແລະ ການທຳລາຍສິ່ງແວດລ້ອມແບບຜິດກົດໝາຍເຊັ່ນ: ການຕັດໄມ້ທຳລາຍປ່າຊະຊາຍ, ການສູນເສຍຊີວະນາໆພັນ, ການຄ້າຂາຍສັດປ່າ ແລະ ອື່ນໆ. ສິ່ງທ້າທາຍເຫຼົ່ານີ້, ໄດ້ເຮັດໃຫ້ການສ້າງຄວາມເຂັ້ມແຂງໃຫ້ແກ່ການວາງແຜນພັດທະນາທີ່ຍືນຍົງ, ການສ້າງຄວາມທົນທານຕໍ່ສະພາບການປ່ຽນແປງດິນຟ້າອາກາດ ແລະ ການປະຕິບັດລະບຽບຄຸ້ມຄອງສິ່ງແວດລ້ອມຂອງພາກລັດ ຈັດຕັ້ງປະຕິບັດບໍ່ມີປະສິດທິຜົນເທົ່າທີ່ຄວນ; ເຖິງແມ່ນວ່າລັດຖະບານໄດ້ມີການນຳໃຊ້ບາງມາດຕະການ ແລະ ລະບຽບການທີ່ຈຳເປັນ ເພື່ອໃຫ້ສ້າງຄວາມເຂົ້າໃຈ ແລະ ແກ້ໄຂຜົນກະທົບໃນການຈັດຕັ້ງປະຕິບັດບາງໂຄງການຂະໜາດໃຫຍ່, ສະກັດກັ້ນການຕັດໄມ້ທຳລາຍປ່າ ແລະ ການຄຸ້ມຄອງປ່າໄມ້ແບບຍືນຍົງ ແຕ່ການກວດກາຕິດຕາມການຈັດຕັ້ງປະຕິບັດ ຍັງບໍ່ທັນເຂັ້ມງວດເທົ່າທີ່ຄວນ ແລະ ອາດຈະສົ່ງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ການດຳລົງຊີວິດຂອງປະຊາຊົນ; ລະບຽບການສຳລັບການຄຸ້ມຄອງສິ່ງເສດເຫຼືອທີ່ມີປະສິດທິພາບ ຍັງມີຄວາມຈຳກັດ, ການຄຸ້ມຄອງສິ່ງເສດເຫຼືອ ຍັງບໍ່ທັນມີລະບົບການຈັດເກັບທີ່ດີ ແລະ ບໍ່ທັນມີກົນໄກຮັບຮອງທີ່ພຽງພໍ ໂດຍສະເພາະສິ່ງເສດເຫຼືອອັນຕະລາຍ ແລະ ມີການປົນເປື້ອນສານເຄມີ, ຍັງມີສະພາບຖິ້ມ ແລະ ຈູດຂີ້ເຫຍື້ອຊະຊາຍ ຊຶ່ງສົ່ງຜົນກະທົບດ້ານສຸຂະພາບທີ່ເກີດຈາກການຮົ່ວໄຫຼຂອງສານບາຫຼອດ ທີ່ຄາດວ່າຕົ້ນທຶນຜົນກະທົບຕໍ່ສຸຂະພາບ ສູງເຖິງ 2,5% ຂອງ GDP ໂດຍສະເພາະຄວາມສ່ຽງໃນກຸ່ມເດັກນ້ອຍ.

## 4.2 ແຜນວຽກຈຸດສຸມທີ 2: ການເຕີບໂຕສີຂຽວ ແລະ ການແກ້ໄຂບັນຫາຕໍ່ກັບການປ່ຽນແປງດິນຟ້າອາກາດ

ໃນໄລຍະ 2 ປີເຄິ່ງຜ່ານມາ ລັດຖະບານໄດ້ເລັ່ງໃສ່ຈັດຕັ້ງປະຕິບັດວຽກງານເຕີບໂຕສີຂຽວ ໂດຍການມີສ່ວນຮ່ວມຢ່າງກວ້າງຂວາງ ທັງພາກລັດ, ຄູ່ຮ່ວມພັດທະນາ, ພາກເອກະຊົນ ແລະ ທຸກພາກສ່ວນໃນສັງຄົມ ເພື່ອຈັດຕັ້ງປະຕິບັດຍຸດທະສາດການເຕີບໂຕສີຂຽວແຫ່ງຊາດ ຮອດປີ 2030 ແນໃສ່ສົ່ງເສີມການເຕີບໂຕເສດຖະກິດ ແລະ ຫຼຸດຜ່ອນຄວາມທຸກຍາກແບບຍືນຍົງ, ເພີ່ມປະສິດທິພາບ ແລະ ປະສິດທິຜົນການນຳໃຊ້ຊັບພະຍາກອນທຳມະຊາດ, ການຫຼຸດຜ່ອນມົນລະພິດ, ທາດອາຍເຮືອນແກ້ວ ແລະ ສິ່ງເສດເຫຼືອ ແລະ ເພີ່ມຄວາມສາມາດໃນການຮັບມືກັບການປ່ຽນແປງດິນຟ້າອາກາດ ແລະ ຄວາມບໍ່ແນ່ນອນທັງພາຍນອກ ແລະ ພາຍໃນ. ຜ່ານການຈັດຕັ້ງປະຕິບັດແຜນງານດັ່ງກ່າວ ໄດ້ເຮັດໃຫ້ບັນດາຄາດໝາຍວຽກງານການເຕີບໂຕສີຂຽວມີຜົນສຳເລັດ ແລະ ຄວາມຄືບໜ້າຫຼາຍດ້ານ ເປັນຕົ້ນ: ສຳເລັດການພັດທະນາໂຄງການ

ສິນເຊື່ອກາກບອນປ່າໄມ້ຢູ່ 6 ແຂວງພາກເໜືອ (ບໍ່ແກ້ວ, ຫຼວງນ້ຳທາ, ອຸດົມໄຊ, ຫົວພັນ, ຫຼວງພະບາງ ແລະ ໄຊຍະບູລີ) ໄລຍະ 2020-2025, ມີມູນຄ່າ 42 ລ້ານໂດລາສະຫະລັດ; ຄາດຄະເນປະລິມານສິນເຊື່ອກາກບອນ 8,4 ລ້ານໂຕນອາຍກາກໂບນິກ (ແຜນການ 5ປີ: ເພື່ອບັນລຸຄາດໝາຍໃນການຫຼຸດຜ່ອນທາດອາຍເຮືອນແກ້ວຈາກການທຳລາຍປ່າໄມ້ ໃຫ້ໄດ້ປະມານ 30 ລ້ານໂຕນອາຍກາກໂບນິກ (tC02e) ແລະ ຂາຍກາກບອນປ່າໄມ້ ບໍ່ໃຫ້ຫຼຸດ 95 ລ້ານໂດລາສະຫະລັດ).

### 4.2.1 ວຽກງານການເຕີບໂຕສີຂຽວ

ເພື່ອໃຫ້ສາມາດບັນລຸຄາດໝາຍສູ່ຊີ້ນການປ່ອຍທາດອາຍເຮືອນແກ້ວ ໃຫ້ເປັນສູນ Net Zero Emission Plan 2050 ແລະ ຄາດໝາຍອື່ນໆທີ່ກຳນົດໄວ້ໃນວຽກງານການເຕີບໂຕສີຂຽວ ໄດ້ສຸມໃສ່ຈັດຕັ້ງປະຕິບັດ 7 ໜ້າວຽກບູລິມະສິດຂອງຍຸດທະສາດການເຕີບໂຕສີຂຽວແຫ່ງຊາດ ຮອດປີ 2030, ເຊິ່ງມີຄວາມຄືບໜ້າດັ່ງນີ້:

**1. ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ:**

- ໄດ້ນຳສະເໜີບົດລາຍງານ National Adaptation Plan: NDC ສະບັບທີ 2 ໃນປີ 2021 ແລະ ໄດ້ສ້າງແຜນຈັດຕັ້ງປະຕິບັດ NDC ເພື່ອເພີ່ມທະວີຄວາມອາດສາມາດຂອງ ສປປ ລາວ ໃນການບັນລຸຄາດໝາຍສູ່ຊີ້ນຕ່າງໆ ໂດຍສະເພາະຄາດໝາຍໃນການປ່ອຍທາດອາຍເຮືອນແກ້ວໃຫ້ເປັນສູນ ຄຽງຄູ່ກັບເພີ່ມທະວີຄວາມສາມາດໃນການຈັດຕັ້ງປະຕິບັດມາດຕະການທີ່ຕິດພັນກັບຄວາມສາມາດໃນການຫຼຸດຜ່ອນ ແລະ ການປັບຕົວການປ່ຽນແປງດິນຟ້າອາກາດ.
- ຄົ້ນຄວ້າດັດຊະນີການເຕີບໂຕສີຂຽວແຫ່ງຊາດ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດ ແລະ ວັດແທກຄວາມຄືບໜ້າໃນການບັນລຸບັນດາຄາດໝາຍຂອງຍຸດທະສາດການເຕີບໂຕສີຂຽວແຫ່ງຊາດ ຮອດປີ 2030. ພ້ອມນີ້, ຍັງໄດ້ສ້າງແຜນປັບຕົວການປ່ຽນແປງດິນຟ້າອາກາດຂັ້ນທ້ອງຖິ່ນ.
- ໄດ້ເສີມສ້າງຂີດຄວາມສາມາດໃນການປັບປຸງລະບົບການຄຸ້ມຄອງຖານຂໍ້ມູນການປ່ອຍທາດອາຍເຮືອນແກ້ວ (GHG inventory management).
- ຮ່ວມມື ແລະ ປະສານສົມທົບກັບຫຼາຍພາກສ່ວນໃນຂົງເຂດສິນເຊື່ອກາກບອນ ເປັນຕົ້ນ: ກຳນົດລະບຽບການ ແລະ ນະໂຍບາຍໃນການຄຸ້ມຄອງໃຫ້ມີຄວາມສອດຄ່ອງກັບສະພາບປະຈຸບັນ.

**2. ຂະແໜງປ່າໄມ້:**

- ສຳເລັດການສ້າງຍຸດທະສາດຫຼຸດຜ່ອນທາດອາຍເຮືອນແກ້ວຈາກການທຳລາຍປ່າໄມ້, ລະດັບການປ່ອຍທາດອາຍເຮືອນ ແກ້ວທຽບຖານ (REL) ແລະ ລະບົບການຕິດຕາມ, ລາຍງານ ແລະ ພິສູດຢັ້ງຢືນ (MRV), ມາດຕະການປົກປ້ອງສັງຄົມ ແລະ ສິ່ງແວດລ້ອມ (Safeguard) ແລະ ນະໂຍບາຍການແບ່ງປັນຜົນປະໂຫຍດ; ສ້າງເງື່ອນໄຂການເຂົ້າເຖິງກອງທຶນກາກບອນໃນມູນຄ່າສັນຍາ 42 ລ້ານໂດລາສະຫະລັດ, ປະຕິບັດໄດ້ 44,21% (ແຜນການ 5ປີ: ບໍ່ໃຫ້ຫຼຸດ 95 ລ້ານໂດລາສະຫະລັດ).
- ຄົ້ນຄວ້າ ແລະ ສ້າງແຜນງານຄຸ້ມຄອງຕະຫຼາດສິນເຊື່ອກາກບອນ ພາຍໃຕ້ກອງທຶນການຮ່ວມມືກາກບອນຈາກປ່າໄມ້ (Carbon Forestry Partnership Facility) ເຊິ່ງຄາດວ່າຈະມີກາກບອນ ປະມານ 8 ລ້ານໂຕນ.

**3. ຂະແໜງອຸດສະຫະກຳ ແລະ ການຄ້າ:**

- ຈັດຕັ້ງປະຕິບັດໂຄງການອຸດສະຫະກຳສີຂຽວ, ສ້າງນະໂຍບາຍອຸດສະຫະກຳສີຂຽວ ແລະ ສ້າງກົນໄກການເຂົ້າເຖິງການເງິນ ເພື່ອຍົກລະດັບເຕັກໂນໂລຢີໃຫ້ມີປະສິດທິພາບດີຂຶ້ນກວ່າເກົ່າ.

**4. ຂະແໜງໂຍທາທິການ ແລະ ຂົນສົ່ງ:**

- ໄດ້ສົ່ງເສີມຢ່າງກວ້າງຂວາງກ່ຽວກັບພາຫະນະທີ່ແລ່ນດ້ວຍໄຟຟ້າ ແລະ ເຫັນວ່າມີການຂະຫຍາຍຕົວຢ່າງຕັ້ງໜ້າ ຊຶ່ງໃນປັດຈຸບັນ ມີລົດໄຟຟ້າ ຈຳນວນ 3.975 ຄັນ; ໃນນີ້: ລົດໄຟຟ້າທີ່ເປັນລົດໃຫຍ່ ມີ 2.202 ຄັນ ແລະ ລົດຈັກໄຟຟ້າ ມີ 1.773 ຄັນ (ຄາດວ່າຮອດປີ 2025 ຈະມີລົດໄຟຟ້າປະມານ 20.000 ຄັນ). ພ້ອມນີ້, ສຳເລັດການຕິດຕັ້ງສະຖານີສາກລົດໄຟຟ້າແບບສາທາລະນະ ຈຳນວນ 103 ຈຸດ ໃນຂອບເຂດທົ່ວປະເທດ ແລະ ມີ 18 ບໍລິສັດ ທີ່ເປັນຕົວແທນ

ຈຳໜ່າຍລົດນ້ຳມັນຫັນມາສິນໃຈ ແລະ ນຳເຂົ້າລົດໄຟຟ້າ ເພື່ອມາຈຳໜ່າຍພາຍໃນປະເທດ. ນອກນັ້ນ, ພາກເອກະຊົນຈຳນວນໜຶ່ງ ໄດ້ຫັນມານຳໃຊ້ລົດຂົນສົ່ງໄຟຟ້າຂະໜາດນ້ອຍ ແຕ່ 2 ໂຕນລົງມາ.

– ກຳລັງດຳເນີນສຶກສາເພື່ອກໍ່ສ້າງສະຖານີສາກລົດໄຟຟ້າ ສຳລັບພາກຂົນສົ່ງຂີ້ເຫຍື້ອໃນເຂດເທດສະບານນະຄອນຫຼວງວຽງຈັນ ແລະ ແຂວງຄຳມ່ວນ. ພ້ອມນີ້, ໄດ້ມີການສຶກສາຄວາມເປັນໄປໄດ້ໂຄງການລົດເມ ແລະ ໄດ້ມີການສະເໜີໃຫ້ນຳໃຊ້ລົດເມທີ່ແລ່ນດ້ວຍໄຟຟ້າ ແລະ ສຳເລັດສຶກສາຄວາມເປັນໄປໄດ້ລະບົບປ່ຽນຖ່າຍແບັດເຕີລີລົດສຳລັບລົດ ປະເພດ 2 ລໍ້. ເຊິ່ງມາຮອດປັດຈຸບັນມີ 23 ຈຸດສາກໃນຂອບເຂດທົ່ວປະເທດ, ເທົ່າກັບ 23% ຂອງແຜນການ (ຄາດໝາຍ: ສ້າງສະຖານີສາກລົດໄຟຟ້າ/ປ້ຳນ້ຳມັນຊີວະພາບ ໃຫ້ໄດ້ຫຼາຍກວ່າ 100 ສະຖານີໃນທົ່ວປະເທດ).

– ໄດ້ສົ່ງເສີມການສ້າງຕົວເມືອງສີຂຽວ ແລະ ສະອາດ ດ້ວຍຮູບການຮ່ວມມືກັບຄູ່ຮ່ວມພັດທະນາໃນການສ້າງຍຸດທະສາດສຸຂາພິບານຕົວເມືອງແຫ່ງຊາດ, ຍຸດທະສາດການຄຸ້ມຄອງນ້ຳເສຍ, ສ້າງລະບົບບຳບັດນ້ຳເສຍ ແລະ ອື່ນໆ ຄຽງຄູ່ກັບການລະດົມການມີສ່ວນຮ່ວມຂອງພາກເອກະຊົນໃຫ້ນັບມື້ນັບຫຼາຍຂຶ້ນ.

– ໄດ້ຈັດຕັ້ງປະຕິບັດໂຄງການທົດລອງການລີໄຊໂຄສິ່ງເສດເຫຼືອຢູ່ໂຮງຮຽນ ສາມາດປະຕິບັດໄດ້ຫຼາຍແຫ່ງພໍສົມຄວນ ແລະ ສາມາດເກັບສິ່ງເສດເຫຼືອລີໄຊໂຄໄດ້ ຈຳນວນ 26 ໂຕນ ແລະ ໄດ້ບຳບັດເປັນສິ່ງເສດເຫຼືອຊີວະພາບ (organic waste) ເພື່ອຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວຈາກສິ່ງເສດເຫຼືອ.

**5. ຂະແໜງພະລັງງານ ແລະ ບໍ່ແຮ່:**

– ໄດ້ຈັດການປະມູນພະລັງງານຕາເວັນຄັ້ງທຳອິດ ໃນປີ 2022 ເພື່ອສົ່ງເສີມການຜະລິດພະລັງງານສະອາດ.

– ໃນໄລຍະຈັດຕັ້ງປະຕິບັດວາລະແຫ່ງຊາດ ໄດ້ມີມະຕິຮັບຮອງ ແລະ ປະກາດໃຊ້ນະໂຍບາຍການນຳໃຊ້ລົດໄຟຟ້າ; ສຳເລັດຂໍ້ຕົກລົງ ວ່າດ້ວຍ ກິດຈະການສາກລົດໄຟຟ້າ ເພື່ອບໍລິການ ແລະ ອອກຂໍ້ກຳນົດມາດຕະຖານການຕິດຕັ້ງໄຟຟ້າສຳລັບສະຖານີສາກ-ທີ່ຢູ່ອາໄສ.

**6. ຂະແໜງວັດທະນະທຳ ແລະ ທ່ອງທ່ຽວ:**

– ເພີ່ມທະວີຄວາມສາມາດຂອງ SMEs ໃຫ້ມີສ່ວນຮ່ວມໃນການສົ່ງເສີມການທ່ອງທ່ຽວແບບຍືນຍົງ ເປັນຕົ້ນ: ໄດ້ຮ່ວມມືກັບຫົວໜ່ວຍທຸລະກິດໃນຂົງເຂດທ່ອງທ່ຽວໃນການໄຈ້ແຍກ ແລະ ເກັບສິ່ງເສດເຫຼືອໃຫ້ຖືກວິທີກວ່າເກົ່າ ຄຽງຄູ່ກັບ ການເພີ່ມທະວີຄວາມສາມາດເກາະກ່າຍຕ່ອງໂສ້ການຜະລິດ ແລະ ການບໍລິການ.

– ໄດ້ສ້າງແຜນປະຕິບັດງານຕົວເມືອງສີຂຽວ ສຳລັບນະຄອນຫຼວງວຽງຈັນ ແລະ ນະຄອນປາກເຊ.

**7. ຂະແໜງການເງິນ ແລະ ການວາງແຜນ:**

– ສຳເລັດການສ້າງຍຸດທະສາດການເງິນ ເພື່ອສະໜັບສະໜູນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ໂດຍໄດ້ກຳນົດເອົາວຽກງານການເງິນສີຂຽວ ແລະ ຍືນຍົງ ເປັນໜຶ່ງໃນວຽກບູລິມະສິດ ເຊິ່ງໄດ້ກຳນົດມາດຕະການຈັດຕັ້ງປະຕິບັດລະອຽດ ເພື່ອຮັບປະກັນແຫຼ່ງທຶນການບັນລຸວຽກງານເຕີບໂຕສີຂຽວ ທີ່ເປັນວຽກຈຸດສຸມບູລິມະສິດຂອງ ເປົ້າໝາຍໃຫຍ່ທີ 1 ແລະ ທີ 4 ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX.

– ສຳເລັດການປະເມີນລະດັບການປ່ອຍທາດອາຍເຮືອນແກ້ວໃນປັດຈຸບັນ ແລະ ຄາດຄະເນການປ່ອຍໃນອານາຄົດ ເພື່ອເປັນຂໍ້ມູນພື້ນຖານໃນການສ້າງຍຸດທະສາດໄລຍະຍາວ ວ່າດ້ວຍ ການພັດທະນາທີ່ປ່ອຍທາດອາຍເຮືອນແກ້ວຕ່ຳຂອງສປປ ລາວ (LT-LEDS).

– ສົ່ງເສີມເສດຖະກິດໝູນວຽນ ເພື່ອຫຼຸດຜ່ອນສິ່ງເສດເຫຼືອ ແລະ ມົນລະພິດທີ່ຕິດພັນກັບທຸກຂະແໜງການ ໂດຍສະເພາະຂະແໜງການທີ່ສາມາດເລີ່ມຕົ້ນຈັດຕັ້ງປະຕິບັດໄດ້ໄວ ເປັນຕົ້ນ: ການທ່ອງທ່ຽວທີ່ເປັນມິດກັບທຳມະຊາດ, ສົ່ງເສີມການລ້ຽງໄກ່ໃນອ່າງເກັບນ້ຳຂອງເຂື່ອນໄຟຟ້າ ເພື່ອຜະລິດນ້ຳມັນຊີວະພາບ, ນ້ຳມັນປາ, ປຸ໋ຍ ແລະ ອື່ນໆ; ກໍ່ສ້າງ ແລະ ປັບປຸງໂຄງລ່າງພື້ນຖານສະໜາມຂີ້ເຫຍື້ອທີ່ໄດ້ມາດຕະຖານ ໃນຂອບເຂດທົ່ວປະເທດ (ໃນນີ້: ຢ່າງໜ້ອຍໃຫ້ໄດ້ຈຳນວນ 5 ຈຸດໃນຕົວເມືອງໃຫຍ່). ປັດຈຸບັນໄດ້ມີແຜນປັບປຸງ ແລະ ກໍ່ສ້າງສະໜາມຂີ້ເຫຍື້ອຄືນໃໝ່ຢູ່ນະຄອນຫຼວງວຽງຈັນ 1 ຈຸດ ແລະ ສ້າງສະຖານີຄົ່ງຖ່າຍ 2 ຈຸດ, ຄາດວ່າຈະຖືກຮັບຮອງ ແລະ ເລີ່ມຈັດຕັ້ງປະຕິບັດໃນກາງປີ 2024.

– ໄດ້ມີການສຶກສາຄົ້ນຄວ້າ ກ່ຽວກັບ ພັນທະບັດສີຂຽວ, ການລົງທຶນສີຂຽວ ທີ່ຕິດພັນກັບ Taxonomy ເພື່ອປັບປຸງຂະບວນການຕິດຕາມການລົງທຶນສີຂຽວ ແລະ ຄວາມສາມາດໃນການອອກພັນທະບັດສີຂຽວ. ພ້ອມນີ້, ໄດ້ສຳເລັດການແຕ່ງຕັ້ງກອງທຶນປົກປັກຮັກສາສິ່ງແວດລ້ອມ ໃຫ້ເປັນຄູ່ຮ່ວມງານທາງການຂອງກອງທຶນປ່ຽນແປງດິນຟ້າອາກາດສາກົນ (Global Climate Fund: GCF) ແລະ ກຳລັງຄົ້ນຄວ້າໃນການສະໜັບສະໜູນໃຫ້ ທະນາຄານແຫ່ງ ສປປ ລາວ ເປັນອີກໜຶ່ງຄູ່ຮ່ວມງານຂອງ GCF.

**4.2.2 ວຽກງານການແກ້ໄຂບັນຫາຕໍ່ກັບການປ່ຽນແປງດິນຟ້າອາກາດ**

+ ໄດ້ເອົາໃຈໃສ່ລາຍງານແຜນການປະກອບສ່ວນການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ (Nationally Determined Contributions: NDC); ສ້າງແຜນງານແຫ່ງຊາດການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ (National Adaptation Plan: NAP) ໃຫ້ສຳເລັດພາຍໃນ ປີ 2023; ສ້າງແຜນຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວໃຫ້ຈົນຮອດລະດັບດຸ່ນດ່ຽງກັບຄວາມສາມາດໃນການດູດຊຶບຂອງແຫຼ່ງດູດຊຶບຕ່າງໆ (Net Zero Emission Plan 2050)

+ ສົ່ງເສີມກົນໄກຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ເປັນຕົ້ນ: ໂຄງການ REDD+ ເພື່ອປະກອບສ່ວນເຂົ້າໃນການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວຂອງສາກົນ.

+ ສຳເລັດການປັບປຸງ ຍຸດທະສາດແຫ່ງຊາດ ການປະກອບສ່ວນແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ຮອດປີ 2030 ແລະ ສຳເລັດການສ້າງແຜນງານແຫ່ງຊາດ ການປະກອບສ່ວນແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ National Adaptation Plan ສະບັບທີ 2 (2021-2025). ພ້ອມທັງໄດ້ເຊື່ອມສານວຽກງານດັ່ງກ່າວ ເຂົ້າໃນຍຸດທະສາດ ແລະ ແຜນງານຂອງຂະແໜງການ.

+ ສຳເລັດການປະເມີນລະດັບການປ່ອຍທາດອາຍເຮືອນແກ້ວໃນປັດຈຸບັນ ແລະ ຄາດຄະເນການປ່ອຍໃນອານາຄົດ ເພື່ອເປັນຂໍ້ມູນພື້ນຖານ ໃນການສ້າງຍຸດທະສາດການພັດທະນາທີ່ປ່ອຍທາດອາຍເຮືອນແກ້ວຕ່ຳ ຂອງ ສປປ ລາວ (LT-LEDs) ແນໃສ່ເພື່ອບັນລຸການຫຼຸດຜ່ອນການປ່ອຍ ແລະ ເພີ່ມການດູດຊຶບທາດອາຍແກ້ວໃຫ້ເປັນສູນ ໃນປີ 2050 (Net Zero Emission 2050).

<u>ສິ່ງທ້າທາຍ</u>: ວຽກງານການຄຸ້ມຄອງການປ່ຽນແປງດິນຟ້າອາກາດ ໄດ້ມີການກຳນົດຄາດໝາຍທີ່ສູງ ແລະ ຈະແຈ້ງໂດຍສະເພາະຄາດໝາຍການປ່ອຍທາດອາຍເຮືອນແກ້ວ ແລະ ເພີ່ມການດູດຊຶບທາດອາຍເຮືອນແກ້ວໃຫ້ເປັນສູນ ໃນປີ 2050 (Net Zero Emission Plan 2050) ແຕ່ການພັດທະນາຂອງຂະແໜງການຕ່າງໆ ຍັງມີຫຼາຍດ້ານບໍ່ທັນສະໜັບສະໜູນໃຫ້ແກ່ການຈັດຕັ້ງປະຕິບັດຄາດໝາຍດັ່ງກ່າວ; ການສົ່ງເສີມການຊື້-ຂາຍກາກບອນຈາກປ່າໄມ້ ຍັງເປັນສິ່ງທ້າທາຍເນື່ອງມາຈາກສະພາບການທຳລາຍປ່າໄມ້ ແລະ ໄຟໄໝ້ປ່າໃນເຂດປ່າສະຫງວນຫຼາຍແຫ່ງທີ່ເກີດຂຶ້ນໃນແຕ່ລະປີ; ການເຂົ້າເຖິງແຫຼ່ງກອງທຶນສີຂຽວ ຍັງຈຳກັດ. ນອກຈາກນີ້, ຄວາມກົດດັນໃນການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນໄດ້ນຳໄປສູ່ການອະນຸມັດສຳປະທານຂຸດຄົ້ນບໍ່ແຮ່ ແລະ ໂຄງການດ້ານພະລັງງານຈຳນວນຫຼາຍ ເຊິ່ງໄດ້ສ້າງຄວາມທ້າທາຍໃຫ້ແກ່ເປົ້າໝາຍຄວາມຍືນຍົງດ້ານສິ່ງແວດລ້ອມຂອງລາວ ລວມທັງແຜນງານແຫ່ງຊາດການປະກອບສ່ວນການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ (NDC) ພາຍໃຕ້ການປະຕິບັດສັນຍາປາຣີ; ການຂະຫຍາຍຕົວຂອງເສດຖະກິດໃນປັດຈຸບັນສ່ວນໃຫຍ່ແມ່ນເອື່ອອີງໃສ່ການຂຸດຄົ້ນຊັບພະຍາກອນທຳມະຊາດ ຊຶ່ງບໍ່ສອດຄ່ອງກັບເປົ້າໝາຍການພັດທະນາແບບຍືນຍົງທີ່ມີຕົ້ນທຶນຕໍ່ປີທີ່ເກີດຈາກການເຊື່ອມໂຊມຂອງຊັບພະຍາກອນທຳມະຊາດຂອງລາວ ຄາດວ່າຢູ່ທີ່ 19,3% ຂອງ GDP. Need Reference ໃນຊ່ວງໄລຍະປະຕິບັດວາລະແຫ່ງຊາດ ໄດ້ປັບປຸງບັນດານິຕິກຳໃຕ້ກົດໝາຍ ແລະ ຄູ່ມືແນະນຳວິຊາການຫຼາຍສະບັບ ເພື່ອອຳນວຍຄວາມສະດວກໃນການປະຕິບັດ ໂຄງການທົດລອງກິດຈະການບໍ່ແຮ່ ດ້ວຍການຍົກເວັ້ນ ແລະ ຫຼຸດຜ່ອນບາງຂັ້ນຕອນເງື່ອນໄຂການປະເມີນຜົນກະທົບສິ່ງແວດລ້ອມ ແລະ ສັງຄົມ, ເຊິ່ງອາດຈະສົ່ງຜົນກະທົບໃຫ້ການປະເມີນຜົນກະທົບດ້ານສິ່ງແວດລ້ອມ ບໍ່ມີຄວາມລະອຽດເທົ່າທີ່ຄວນ; ການຂະຫຍາຍເນື້ອທີ່ທຳການຜະລິດ

ກະສິກຳຂະໜາດໃຫຍ່ທີ່ບໍ່ເປັນມິດກັບສິ່ງແວດລ້ອມ ໄປບຸກລຸກພື້ນທີ່ປ່າໄມ້ ໄດ້ສົ່ງຜົນກະທົບດ້ານລົບຕໍ່ສິ່ງແວດລ້ອມ ເປັນຕົ້ນ: ການເຊື່ອມຄຸນນະພາບຂອງດິນ, ການເຊາະເຈື່ອນ, ການສູນເສຍຊີວະນາໆພັນ, ການປົນເປື້ອນສານເຄມີ, ການປ່ອຍທາດອາຍເຮືອນແກ້ວ ແລະ ຜົນກະທົບຕໍ່ສຸຂະພາບຂອງປະຊາຊົນ ແລະ ຜູ້ບໍລິໂພກ ພ້ອມທັງສົ່ງຜົນຕໍ່ການປ່ຽນແປງຂອງດິນຟ້າອາກາດ.

### 4.3 ແຜນວຽກຈຸດສຸມທີ 3: ການປ້ອງກັນ, ຄວບຄຸມ ແລະ ຟື້ນຟູຫຼັງໄພພິບັດຕ່າງໆ

ສປປ ລາວ ຍັງເປັນໜຶ່ງໃນບັນດາປະເທດກຳລັງພັດທະນາທີ່ມີຄວາມບອບບາງຕໍ່ການປ່ຽນແປງດິນຟ້າອາກາດ, ປະຊາຊົນຍັງປະເຊີນໜ້າກັບຄວາມສ່ຽງທີ່ເກີດຈາກການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດຕ່າງໆ, ຄວາມທຸກຍາກເພີ່ມຂຶ້ນ, ການຂາດສານອາຫານ ໂດຍສະເພາະໃນກຸ່ມຄົນທຸກຍາກ ແລະ ດ້ອຍໂອກາດ. ໃນແຕ່ລະປີຄາດວ່າຈະມີປະຊາກອນທີ່ມີຄວາມສ່ຽງໄດ້ຮັບຜົນກະທົບຈາກໄພນ້ຳຖ້ວມ ຈະເພີ່ມຂຶ້ນຫຼາຍກວ່າ 80.000 ຄົນ ພາຍໃນປີ 2030; ການປ່ຽນແປງຂອງອຸນຫະພູມຢ່າງໄວວາ, ປະລິມານນ້ຳຝົນ, ໄພແຫ້ງແລ້ງ, ໄພນ້ຳຖ້ວມ ແລະ ດິນເຊາະເຈື່ອນ ຊຶ່ງໄດ້ສ້າງຄວາມເສຍຫາຍອັນຫຼວງຫຼາຍໃຫ້ແກ່ຜົນຜະລິດກະສິກຳ ແລະ ການປ່ຽນແປງຂອງດິນຟ້າອາກາດ ອາດສົ່ງຜົນຕໍ່ການລະບາດພະຍາດລະດູການ ໂດຍສະເພາະພະຍາດໄຂ້ເລືອດອອກເພີ່ມຂຶ້ນ.

ໃນໄລຍະຜ່ານມາ ລັດຖະບານໄດ້ມີຄວາມພະຍາຍາມເພີ່ມທະວີການປ້ອງກັນ, ການຮັບມື ແລະ ການຟື້ນຟູຫຼັງໄພພິບັດ ໂດຍໄດ້ເຊື່ອມສານຍຸດທະສາດໄພພິບັດແຫ່ງຊາດເຂົ້າກັບແຜນງານຂອງຂະແໜງການ ເພື່ອສ້າງຄວາມເຂັ້ມແຂງ ແລະ ສ້າງຄວາມທົນທານໃນການຮັບມືກັບໄພພິບັດຕ່າງໆທີ່ເກີດຂຶ້ນ. ໂດຍສະເພາະສຸມໃສ່ການປັບປຸງລະບົບຂໍ້ມູນຂ່າວສານ ແລະ ການແຈ້ງເຕືອນລ່ວງໜ້າ ໃຫ້ມີຄວາມຊັດເຈນ ແລະ ທັນກັບສະພາບການ ເພື່ອຫຼຸດຜ່ອນຜົນກະທົບດ້ານຕ່າງໆ ແລະ ສາມາດເຝົ້າລະວັງ ແລະ ເຕືອນໄພໄດ້ຢ່າງທັນການ. ຜ່ານການປະຕິບັດວຽກຈຸດສຸມບູລິມະສິດດັ່ງກ່າວ ເຮັດໃຫ້ການຈັດຕັ້ງປະຕິບັດບັນດາຄາດໝາຍການຫຼຸດຜ່ອນຄວາມສ່ຽງໄພພິບັດ ມີຄວາມຄືບໜ້າ ແລະ ມີທ່າອ່ຽງຈະບັນລຸຕາມແຜນການທີ່ກຳນົດໄວ້ ດັ່ງນີ້:

\+ ສຳເລັດການປັບປຸງລະບົບຂໍ້ມູນ-ຂ່າວສານ ແລະ ການແຈ້ງເຕືອນລ່ວງໜ້າ ໃຫ້ມີຄວາມຊັດເຈນ ແລະ ທັນກັບສະພາບການ ໂດຍໄດ້ຂະຫຍາຍຕາໜ່າງສະຖານີອຸຕຸນິຍົມ ແລະ ອຸທົກກະສາດ ໃຫ້ຄວບຄຸມທຸກແຂວງໃນທົ່ວປະເທດໄດ້ທັງໝົດ 82 ສະຖານີ; ໃນນີ້: ສະຖານີອຸຕຸນິຍົມໃໝ່ ສຳເລັດ 15 ສະຖານີ, ເທົ່າກັບ 33% ຂອງແຜນການ (ແຜນການ 5ປີ: ໃຫ້ໄດ້ 45 ແຫ່ງ) ແລະ ສະຖານີອຸທົກກະສາດໃໝ່ ສຳເລັດ 67 ສະຖານີ, ເທົ່າກັບ 267% ຂອງແຜນການ (ແຜນການ 5ປີ: ໃຫ້ໄດ້ 25 ແຫ່ງ).

\+ ສ້າງກອງທຶນຄຸ້ມຄອງໄພພິບັດຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ ໃນນີ້: ຂັ້ນສູນກາງ ສຳເລັດ 1 ແຫ່ງ (ແຜນການ 5ປີ: 1 ແຫ່ງ); ຂັ້ນແຂວງ ແລະ ນະຄອນຫຼວງວຽງຈັນ ໄດ້ 9 ແຫ່ງ, ເທົ່າກັບ 50% ຂອງແຜນການ (ແຜນການ 5ປີ: 18 ແຫ່ງ) ແລະ ຂັ້ນເມືອງ ໄດ້ 43 ແຫ່ງ, ເທົ່າກັບ 76,79% ຂອງແຜນການ (ແຜນການ 5ປີ: 56 ແຫ່ງ).

\+ ຊຸກຍູ້ ແລະ ປັບປຸງຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນແຂວງ ໄດ້ 17 ແຂວງ ແລະ ນະຄອນຫຼວງວຽງຈັນ ສຳເລັດຕາມແຜນການ 5ປີທີ່ວາງໄວ້ (ແຜນການ 5ປີ: ໃຫ້ສຳເລັດ 17 ແຂວງ ແລະ 1 ນະຄອນຫຼວງ); ຂັ້ນເມືອງ ໄດ້ 177 ເມືອງ ແລະ ຂັ້ນບ້ານ ໄດ້ 2.139 ບ້ານ ພ້ອມທັງສ້າງຄວາມເຂັ້ມແຂງໃຫ້ຄະນະກຳມະການດັ່ງກ່າວ ໄດ້ 2.681 ເທື່ອຄົນ, ເປັນຍິງ 525 ເທື່ອຄົນ; ສ້າງຍຸດທະສາດຫຼຸດຜ່ອນຄວາມສ່ຽງໄພພິບັດຂັ້ນສູນກາງ ໄດ້ 1 ສະບັບ ແລະ ແຜນກຽມພ້ອມຕອບໂຕ້ໄພພິບັດ ໄດ້ 1 ສະບັບ.

\+ ຊຸກຍູ້ສ້າງຍຸດທະສາດຫຼຸດຜ່ອນຄວາມສ່ຽງໄພພິບັດຂັ້ນແຂວງ ໄດ້ 2 ແຂວງ ແລະ ແຜນກຽມພ້ອມ ແລະ ຕອບໂຕ້ໄພພິບັດ ໄດ້ 15 ແຂວງ, 93 ເມືອງ ແລະ 49 ບ້ານ (ແຜນການ 5ປີ: ໃຫ້ໄດ້ 10 ແຂວງ, 20 ເມືອງ ແລະ 80 ບ້ານ).

+ ຈັດຝຶກຊ້ອມການຕອບໂຕ້ຊ່ວຍເຫຼືອໄພພິບັດສຸກເສີນລະດັບຊາດ ໄດ້ 1 ຄັ້ງ, ເທົ່າກັບ 50% ຂອງແຜນການ (ແຜນການ 5ປີ: ລະດັບຊາດ 2 ຄັ້ງ).

+ ສ້າງທີມງານປະເມີນ ແລະ ຊ່ວຍເຫຼືອສຸກເສີນຂັ້ນສູນກາງ ໄດ້ 22 ຄົນ ແລະ ຂັ້ນແຂວງ ໄດ້ 75 ຄົນ (ແຜນການ 5ປີ: ຂັ້ນສູນກາງ 30 ຄົນ, ຂັ້ນແຂວງ 100 ຄົນ ແລະ ຂັ້ນເມືອງ 300 ຄົນ); ສົມທົບພາກສ່ວນທີ່ກ່ຽວຂ້ອງປະເມີນຄວາມເສຍຫາຍ ແລະ ຄວາມຕ້ອງການຟື້ນໄລຍະສັ້ນ ແລະ ໄລຍະຍາວ ຈາກຜົນກະທົບໄພພິບັດທຳມະຊາດຕ່າງໆຢູ່ 16 ແຂວງ, 65 ເມືອງ ແລະ 1.339 ບ້ານ, ຊຶ່ງມີຄວາມຕ້ອງການງົບປະມານທັງໝົດ 552 ຕື້ກວ່າກີບ.

## 5. ເປົ້າໝາຍທີ 5 ການສ້າງໂຄງລ່າງພື້ນຖານທີ່ມີຄວາມເຂັ້ມແຂງ, ນຳໃຊ້ທ່າແຮງ, ກາລະໂອກາດທີ່ຕັ້ງເຂົ້າຮ່ວມຂະບວນການຮ່ວມມື ແລະ ການເຊື່ອມໂຍງກັບພາກພື້ນ ແລະ ສາກົນຢ່າງເປັນເຈົ້າການ

### 5.1 ແຜນວຽກຈຸດສຸມທີ 1: ໂຄງລ່າງພື້ນຖານໄດ້ຮັບການພັດທະນາເພື່ອເຊື່ອມໂຍງ-ເຊື່ອມຈອດພາຍໃນ, ພາກພື້ນ ແລະ ສາກົນ

ໃນໄລຍະ 2 ປີເຄິ່ງຜ່ານມາ ສາມາດຈັດຕັ້ງປະຕິບັດ ແລະ ມີຄວາມຄືບໜ້າຫຼາຍດ້ານ ຊຶ່ງມີລາຍລະອຽດດັ່ງລຸ່ມນີ້:

**1. ວຽກງານການເຊື່ອມຈອດທາງບົກ, ທາງນ້ຳ, ທາງອາກາດ ແລະ ທາງລາງ**

**1) ກໍ່ສ້າງ-ຍົກລະດັບ-ຟື້ນຟູ ແລະ ບູລະນະສ້ອມແປງໂຄງລ່າງພື້ນຖານຄົມມະນາຄົມຂົນສົ່ງທາງບົກ ທີ່ເປັນຕາໜ່າງນອນໃນບັນດາແລວເສດຖະກິດຕາມມາດຕະຖານຂອງ ASEAN ໃຫ້ໄດ້ 2.800 ກມ:** ປັດຈຸບັນເສັ້ນທາງຄົມມະນາຄົມຂົນສົ່ງຂອງ ສປປ ລາວ ທີ່ໄດ້ມາດຕະຖານ ASEAN ລວມມີທັງໝົດ 1.147,90 ກມ ເຊິ່ງປະກອບມີ: ❶ ທາງດ່ວນ ແຕ່ນະຄອນຫຼວງວຽງຈັນ-ວັງວຽງ ຄວາມຍາວ 109 ກມ; ❷ ທາງຫຼວງແຫ່ງຊາດເລກ 3 ຊ່ວງແຕ່ແຍກ 13 ເໜືອ ບ.ນາເຕີຍ-ຫ້ວຍຊາຍ-ຂົວມິດຕະພາບ 4 ຊາຍແດນລາວ-ໄທ (ແຂວງບໍ່ແກ້ວ) ຄວາມຍາວ 200,70 ກມ; ❸ ທາງຫຼວງແຫ່ງຊາດ ເລກ 13 ເໜືອ ຊ່ວງແຕ່ບ້ານປາກມອງ (ແຂວງຫຼວງພະບາງ)-ອຸດົມໄຊ-ນາເຕີຍ-ບໍ່ເຕັນ (ຊາຍແດນລາວ-ຈີນ) ຄວາມຍາວ 183,2 ກມ; ❹ ທາງຫຼວງແຫ່ງຊາດ ເລກ 9 ຊ່ວງແຕ່ (ຊາຍແດນລາວ-ໄທ)-ສະຫວັນນະເຂດ-ເຊໂນ-ແດນສະຫວັນ (ຊາຍແດນລາວ-ຫວຽດນາມ) ຄວາມຍາວ 236,6 ກມ; ❺ ທາງຫຼວງແຫ່ງຊາດ ເລກ 11 ຊ່ວງແຕ່ສາມແຍກ 13 ເໜືອ ບ.ສີໄຄ-ຂົວປາກສັງ ຄວາມຍາວ 52,5 ກມ ແລະ ❻ ທາງເລກຫຼວງແຫ່ງຊາດ ເລກ 4 ແຕ່ແຍກທາງ 13 ເໜືອ ບ.ປາກແວດ -ບ້ານນາຄ່າ (ຊາຍແດນລາວ-ໄທ) ຄວາມຍາວ 365,90 ກມ. ນອກຈາກນີ້, ກຳລັງປັບປຸງຍົກລະດັບໃຫ້ໄດ້ມາດຕະຖານ ASEAN ເພີ່ມຕື່ມ ຈຳນວນ 3 ເສັ້ນທາງ ຄື: ❶ ທາງເລກທີ 13 ເໜືອ ຕອນທາງນະຄອນຫຼວງວຽງຈັນ (ສີເກີດ)-ໂພນໂຮງ ຄວາມຍາວ 58 ກມ ປະຕິບັດໄດ້ 99,98%; ❷ ທາງເລກທີ 13 ໃຕ້ ແຕ່ ກມ 71-ກມ 346 ຄວາມຍາວ 275 ກມ ປະຕິບັດໄດ້ 53,95%; ❸ ທາງເລກທີ 11 ຊ່ວງແຕ່ສິ້ນຂົວນ້ຳສັງ-ບ້ານໂນນສະຫວັນ-ບ້ານຄົກເຂົ້າດໍ ຄວາມຍາວ 104,89 ກມ ປະຕິບັດໄດ້ 94,63%. ພ້ອມດຽວກັນນັ້ນ, ກໍໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດການຍົກລະດັບບັນດາເສັ້ນທາງໃຫ້ໄດ້ມາດຕະຖານ ASEAN ເພີ່ມຕື່ມ ໃນປີ 2023 ຈຳນວນ 4 ເສັ້ນທາງ ຄື: ❶ ທາງເລກ 2E ຊ່ວງແຕ່ເມືອງໄຊ-ເມືອງຂວາ ຄວາມຍາວ 100 ກມ ແລະ ❷ ທາງເລກ 2W ຊ່ວງແຕ່ເມືອງໄຊ-ປາກແບ່ງ ຄວາມຍາວ 136 ກມ ພາຍໃຕ້ໂຄງການພັດທະນາຕາມແລວທາງເສດຖະກິດອາຊີຕາເວັນອອກສ່ຽງໃຕ້ ເພື່ອການເຊື່ອມຈອດ-ເຊື່ອມໂຍງ (Southeast Asia Regional Econamic Corridor and Connectivity Project: SEARECC) ຊຶ່ງໄດ້ກູ້ຢືມເງິນຈາກທະນາຄານໂລກ ເພື່ອຈັດຕັ້ງປະຕິບັດໂຄງການດັ່ງກ່າວ, ປັດຈຸບັນ ກຳລັງສຳຫຼວດອອກແບບເບື້ອງຕົ້ນ ແລະ ສຶກສາຄວາມເປັນໄປໄດ້ ແລະ ຜົນກະທົບສິ່ງແວດລ້ອມ-ສັງຄົມ ຄາດວ່າຈະສຳເລັດໃນທ້າຍເດືອນມິຖຸນາ 2023; ❸ ໂຄງການປັບປຸງ ແລະ ສ້ອມແປງທາງເລກ 13 ເໜືອ (ສີໄຄ-ສີເກີດ) ຄວາມຍາວ 6,5 ກມ ກຳລັງດຳເນີນຕີລາຄາການປະມູນເອົາຜູ້ຮັບເໝົາກໍ່ສ້າງ ແລະ ❹ ໂຄງການປັບປຸງ ແລະ ສ້ອມແປງທາງເລກ 13 ໃຕ້ ແຕ່ກມ 21-ກມ 71 ຄວາມຍາວ 50 ກມ ໄດ້ສະເໜີທາບທາມເງິນກູ້ຈາກທະນາຄານລົງທຶນພື້ນຖານໂຄງລ່າງອາຊີ (AIIB) ເພື່ອນຳມາກໍ່ສ້າງ ແລະ ໄດ້ເຊັນສັນຍາກັບບໍລິສັດທີ່ປຶກສາ ເພື່ອມາເຮັດບົດລາຍງານ

ຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ, ອອກແບບຄືນ, ວຽກຄວາມປອດໄພທາງຖະໜົນໃນການອອກແບບກໍ່ສ້າງສ້ອມແປງ ແລະ ປັດຈຸບັນກໍາລັງ ຈັດຊື້-ຈັດຈ້າງ ເອົາບໍລິສັດທີ່ປຶກສາຄວບຄຸມການກໍ່ສ້າງ.

**2) ພັດທະນາ, ຟື້ນຟູ ແລະ ບູລະນະສ້ອມແປງໂຄງລ່າງພື້ນຖານ ສິ່ງອໍານວຍຄວາມສະດວກທາງດ້ານການຂົນສົ່ງທາງນໍ້າຕາມລໍາແມ່ນໍ້າຂອງ ແລະ ແມ່ນໍ້າເຫືອງ ທີ່ເປັນຊາຍແດນທາງນໍ້າລະຫວ່າງປະເທດ ລວມມີ ທ່າເຮືອ, ຄອງເດີນເຮືອ ແລະ ການປ້ອງກັນຕາຝັ່ງເຈື່ອນ:**

\+ ໄດ້ສ້າງແຜນພັດທະນາ ແລະ ປັບປຸງບັນດາທ່າເຮືອ ຕິດພັນກັບ ການປັບປຸງຄອງເດີນເຮືອຕາມລໍາແມ່ນໍ້າຂອງໃຫ້ສາມາດຮອງຮັບເຮືອຂົນສົ່ງຂະໜາດ 300-500 ໂຕນ ປັດຈຸບັນ ສປປ ລາວ ມີທ່າເຮືອ (ລວມທັງທ່າບົກ) ຕາມລໍາແມ່ນໍ້າຂອງ ແລະ ແມ່ນໍ້າສາຂາ ທັງໝົດ 52 ແຫ່ງ ໂດຍໄດ້ແຍກອອກເປັນ 5 ປະເພດທ່າເຮືອ ດັ່ງນີ້: ❶ ທ່າເຮືອຂົນສົ່ງຜູ້ໂດຍສານ 30 ແຫ່ງ, ❷ ທ່າເຮືອຂົນສົ່ງສິນຄ້າ 13 ແຫ່ງ, ❸ ທ່າເຮືອບົກ 6 ແຫ່ງ, ❹ ທ່າເຮືອສະເພາະ 1 ແຫ່ງ (ທ່າເຮືອບ້ານຫວາຍ, ແຂວງບໍລິຄໍາໄຊ) ແລະ ❺ ທ່າເຮືອເຂດເສດຖະກິດພິເສດ 2 ແຫ່ງ (ສາມຫຼ່ຽມຄໍາ ແລະ ທ່ອງທ່ຽວດອກງິ້ວຄໍາ).

\+ ໄດ້ເອົາໃຈໃສ່ຕິດຕາມວຽກງານການກໍ່ສ້າງປ້ອງກັນຕາຝັ່ງຕາມແຄມແມ່ນໍ້າຂອງ ແລະ ນໍ້າເຫືອງ ທີ່ເປັນຊາຍແດນລະຫວ່າງປະເທດ ແລະ ແມ່ນໍ້າສາຂາ ທີ່ຕິດພັນກັບການປົກປັກຮັກສາເຂດນໍ້າແດນດິນ ແລະ ອະທິປະໄຕຂອງຊາດໃນໄລຍະ 2 ປີເຄິ່ງຜ່ານມາ ສາມາດສັງລວມຜົນງານອັນພົ້ນເດັ່ນ ດັ່ງນີ້:

– ສໍາເລັດການຈັດຕັ້ງປະຕິບັດກໍ່ສ້າງປ້ອງກັນຕາຝັ່ງເຈື່ອນ ຈໍານວນ 5 ໂຄງການ ຄວາມຍາວທັງໝົດ 3,38 ກມ ຄື: ❶ ສໍາເລັດໂຄງການກໍ່ສ້າງປ້ອງກັນຕາຝັ່ງເຈື່ອນເທດສະບານເມືອງປາກລາຍ, ແຂວງໄຊຍະບູລີ; ❷ ສໍາເລັດໂຄງການກໍ່ສ້າງປ້ອງກັນຕາຝັ່ງເຈື່ອນ (ຊ່ວງ 2) ບ້ານກ້ອນຄໍາ, ເມືອງໝື່ນ, ແຂວງວຽງຈັນ; ❸ ສໍາເລັດໂຄງການກໍ່ສ້າງປ້ອງກັນຕາຝັ່ງເຈື່ອນນໍ້າເຫືອງບ້ານເໜືອງໝໍ້, ເມືອງແກ່ນທ້າວ, ແຂວງໄຊຍະບູລີ; ❹ ສໍາເລັດໂຄງການກໍ່ສ້າງປ້ອງກັນຕາຝັ່ງເຈື່ອນບ້ານດອນປາແດກ, ເມືອງໜອງບົກ, ແຂວງຄໍາມ່ວນ ຄວາມຍາວ 500 ແມັດ ແລະ ❺ ສໍາເລັດໂຄງການກໍ່ສ້າງປ້ອງກັນຕາຝັ່ງເຈື່ອນບ້ານຈອມແກ້ວ, ເມືອງແກ່ນທ້າວ, ແຂວງໄຊຍະບູລີ (ຊ່ວງ 3).

– ສືບຕໍ່ຈັດຕັ້ງປະຕິບັດການກໍ່ສ້າງປ້ອງກັນຕາຝັ່ງເຈື່ອນ ຈໍານວນ 5 ໂຄງການ ເຊັ່ນ: ❶ ໂຄງການພັດທະນາແຄມຂອງແຂວງຈໍາປາສັກ ໄລຍະ 1 ປະຕິບັດໄດ້ 94,53%; ❷ ໂຄງການພັດທະນາແຄມຂອງນະຄອນຫຼວງວຽງຈັນໄລຍະ 2 ປະຕິບັດໄດ້ 17,50%; ❸ ໂຄງການພັດທະນາແຄມຂອງແຂວງຈໍາປາສັກ (ບ້ວງທຶນກູ້ຢືມດອກເບ້ຍຜ່ອນຜັນເພີ່ມເຕີມ) ປະຕິບັດໄດ້ 12,11%; ❹ ໂຄງການຄຸ້ມຄອງຄວາມສ່ຽງໄພພິບັດນໍ້າຖ້ວມເທດສະບານເມືອງໄຊ, ແຂວງອຸດົມໄຊ ແລະ ໂຄງການຄຸ້ມຄອງຄວາມສ່ຽງໄພພິບັດນໍ້າຖ້ວມຕົວເມືອງ ຢູ່ ສປປ ລາວ ປະຕິບັດໄດ້ 48,67% ແລະ ❺ ໂຄງການປ້ອງກັນຕາຝັ່ງເຈື່ອນປາກກະດິງເໜືອ, ເມືອງປາກກະດິງ, ແຂວງບໍລິຄໍາໄຊ ປະຕິບັດໄດ້ 26,24%.

\+ ນອກນັ້ນ, ຍັງສາມາດຈັດຕັ້ງປະຕິບັດບັນດາໂຄງການກໍ່ສ້າງປ້ອງກັນຕາຝັ່ງເຈື່ອນເພີ່ມເຕີມ ໃນປີ 2023 ຈໍານວນ 3 ໂຄງການ ຄວາມຍາວລວມ 7,74 ກມ ຄື: ❶ ໂຄງການກໍ່ສ້າງຕາຝັ່ງເຈື່ອນແມ່ນໍ້າຂອງດອນໝາກໂມ, ນະຄອນຫຼວງວຽງຈັນ ຄວາມຍາວ 6,53 ກມ; ❷ ໂຄງການຟື້ນຟູສ້ອມແປງ ແລະ ກໍ່ສ້າງປ້ອງກັນຕາຝັ່ງແຄມຂອງບ້ານຫ້ວຍສາຍພາຍ, ເມືອງທ່າພະບາດ, ແຂວງບໍລິຄໍາໄຊ ຄວາມຍາວ 300 ແມັດ ແລະ ❸ ໂຄງການຕາຝັ່ງເຈື່ອນແຄມຂອງບ້ານນາສະຫວ່າງ, ເທດສະບານເມືອງປາກລາຍ, ແຂວງໄຊຍະບູລີ (ໄລຍະ 2) ຄວາມຍາວ 910 ແມັດ.

**3) ສ້າງລະບົບຂົນສົ່ງທາງທະເລ ໃຫ້ມີປະສິດທິພາບ, ຮອບດ້ານ ແລະ ສາມາດແຂ່ງຂັນໃນລະດັບພາກພື້ນເຊິ່ງລວມມີການພັດທະນາທ່າເຮືອ ແລະ ປັບປຸງທ່າທຽບເຮືອ 1, 2 ແລະ 3 ທ່າເຮືອຫວຸ້ງອ່າງ ພ້ອມທັງສິ່ງອໍານວຍຄວາມສະດວກທີ່ກ່ຽວຂ້ອງກັບທ່າເຮືອຫວຸ້ງອ່າງ, ຍົກລະດັບການບໍລິຫານຄຸ້ມຄອງທ່າເຮືອຫວຸ້ງອ່າງ ໃຫ້ມີປະສິດທິພາບສູງຂຶ້ນ:**

\+ ໄດ້ສຸມໃສ່ສຶກສາສໍາຫຼວດ-ອອກແບບຄວາມເປັນໄປໄດ້ ໂຄງການຄຸ້ມຄອງ ແລະ ພັດທະນາວຽກງານເດີນທະເລເພື່ອສ້າງຕັ້ງຫ້ອງການໜ່ວຍງານຄຸ້ມຄອງຄວາມປອດໄພ ແລະ ຂຶ້ນທະບຽນເຮືອທາງທະເລ, ພ້ອມທັງດໍາເນີນ

ການດ້ານນິຕິກຳ ແລະ ຂັ້ນຕອນຕ່າງໆ ເພື່ອສະໝັກເຂົ້າເປັນສະມາຊິກຂອງ IMO (ໂຄງການ PPP); ສຳເລັດການນຳສົ່ງບົດລາຍງານຜົນສຳເລັດການສຶກສາຄວາມເປັນໄປໄດ້ຂອງ ໂຄງການພັດທະນາ ແລະ ຄຸ້ມຄອງວຽກງານການເດີນເຮືອທາງທະເລຂອງບໍລິສັດ Aryavart Ship Managmenet ໃຫ້ ກະຊວງແຜນການ ແລະ ການລົງທຶນ ເລກທີ 9411/ຫກ, ລົງວັນທີ 19 ເມສາ 2023.

+ ທັງ 2 ລັດຖະບານ ລາວ ແລະ ຫວຽດນາມ ໄດ້ເປັນເອກະພາບກັນໃນການໂອນຮຸ້ນທ່າເຮືອລາວ-ຫວຽດນາມ (ທ່າເຮືອຫວຸ້ງອ່າງ) ໃຫ້ຝ່າຍລາວ ຖືຫຸ້ນ 60%. ໃນໄລຍະຜ່ານມາໄດ້ເປັນເຈົ້າການປະສານສົມທົບຢ່າງໃກ້ສິດກັບທຸກພາກສ່ວນທີ່ກ່ຽວຂ້ອງ ເປັນຕົ້ນ: ກະຊວງການເງິນ (ກົມປະຕິຮູບລັດວິສາຫະກິດ ແລະ ປະກັນໄພ) ແລະ ກະຊວງແຜນການ ແລະ ການລົງທຶນ (ຄະນະກຳມະທິການຮ່ວມມືລາວ-ຫວຽດນາມ) ໃນການຄົ້ນຄວ້າ ແລະ ປຶກສາຫາລືກັບຝ່າຍຫວຽດນາມຢ່າງເປັນປະຈຳ ໂດຍສະເພາະແມ່ນການສ້າງຕັ້ງເປັນລັດວິສາຫະກິດ 100% ຕາງໜ້າໃຫ້ລັດຖະບານ ສປປ ລາວ ໄປຮ່ວມຮຸ້ນກັບ ບໍລິສັດຮຸ້ນສ່ວນທ່າເຮືອສາກົນລາວ-ຫວຽດນາມ ຂອງ ສສ.ຫວຽດນາມ ປັດຈຸບັນແມ່ນກຳລັງຄົ້ນຄວ້າລາຍງານ ແລະ ຂໍທິດຊີ້ນຳຈາກລັດຖະບານ. ພ້ອມດຽວກັນນັ້ນ, ກະຊວງ ຍທຂ ໄດ້ປະສານງານ ແລະ ຮ່ວມມືກັບ ກະຊວງຄົມມະນາຄົມຂົນສົ່ງ ສສ.ຫວຽດນາມ ໃນການຄຸ້ມຄອງ ແລະ ນຳໃຊ້ດ້ານໂຄງລ່າງພື້ນຖານຂອງທ່າເຮືອຫວຸ້ງອ່າງ ແລະ ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ສິນຄ້າຜ່ານແດນຂອງລາວ ຜ່ານທ່າເຮືອສາກົນລາວ-ຫວຽດນາມ.

**4) ສຶກສາຄວາມເປັນໄປໄດ້, ສຳຫຼວດ-ອອກແບບ, ກໍ່ສ້າງ, ຄຸ້ມຄອງ ແລະ ບຳລຸງຮັກສາເສັ້ນທາງລົດໄຟ ແລະ ສິ່ງອຳນວຍຄວາມສະດວກຕ່າງໆຂອງທາງລົດໄຟ ຕາມແຜນຍຸດທະສາດທີ່ລັດຖະບານຮັບຮອງ ເປັນຕົ້ນ ເສັ້ນທາງລົດໄຟລາວ-ຈີນ ແລະ ເສັ້ນທາງລົດໄຟລາວ-ໄທ. ສຳລັບເສັ້ນທາງລົດໄຟ ແຕ່ນະຄອນຫຼວງວຽງຈັນ-ທ່າແຂກ-ຫວຸ້ງອ່າງ ປັດຈຸບັນຢູ່ໃນຂັ້ນຕອນການກະກຽມສຳຫຼວດ-ອອກແບບລະອຽດ ເພື່ອກ້າວໄປເຖິງການກໍ່ສ້າງ ຊ່ວງທ່າແຂກ-ມຸຢ່າ (ຊາຍແດນລາວ-ຫວຽດນາມ):**

+ ໄດ້ສຳເລັດການກໍ່ສ້າງທາງລົດໄຟລາວ-ຈີນ ແລະ ເປີດການນຳໃຊ້ຢ່າງເປັນທາງການ ໃນວັນທີ 2 ທັນວາ 2021; ສຳເລັດການປະກອບສິ່ງອຳນວຍຄວາມສະດວກຕ່າງໆຢູ່ບັນດາສະຖານີ (ໂດຍສານ ແລະ ສະຖານີສິນຄ້າ) ແລະ ເປີດໃຫ້ບໍລິການຄົບທັງ 11 ສະຖານີແລ້ວ. ປັດຈຸບັນສາມາດເປີດບໍລິການຂົນສົ່ງໂດຍສານລະຫວ່າງປະເທດ ຄອນຫຼວງວຽງຈັນ-ຄຸນມິງໃຕ້ ໃນວັນທີ 13 ເມສາ 2023. ນັບແຕ່ມື້ເປີດຮອດປັດຈຸບັນສະຖິຕິການໃຫ້ບໍລິການຂອງລົດໄຟລາວ-ຈີນ ມີດັ່ງນີ້:

+ ການຂົນສົ່ງໂດຍສານພາຍໃນ ບັນລຸໄດ້ 2,52 ລ້ານເທື່ອຄົນ, ສະເລ່ຍ 4.567 ເທື່ອຄົນ/ມື້ ແລະ ຜູ້ໂດຍສານ 10.197 ເທື່ອຄົນ/ມື້. ການຂົນສົ່ງໂດຍສານລະຫວ່າງປະເທດ ບັນລຸໄດ້ 7.628 ເທື່ອຄົນ (ຜູ້ໂດຍສານຂາອອກ 3.885 ເທື່ອຄົນ ແລະ ຜູ້ໂດຍສານຂາເຂົ້າ 3.743 ເທື່ອຄົນ).

+ ການຂົນສົ່ງສິນຄ້າ ບັນລຸໄດ້ 4,03 ລ້ານໂຕນ, ສະເລ່ຍ 12.089 ໂຕນ/ມື້; ສິນຄ້າຈາກ ສປ ຈີນ ນຳເຂົ້າ ສປປ ລາວ ມີທັງໝົດ 0,64 ລ້ານໂຕນ ແລະ ສິນຄ້າຈາກ ສປປ ລາວ ນຳສົ່ງໄປ ສປ ຈີນ ມີທັງໝົດ 3,39 ລ້ານໂຕນ.

+ ໄດ້ເອົາໃຈໃສ່ບຳລຸງຮັກສາເສັ້ນທາງລົດໄຟລາວ-ໄທ (ຊ່ວງ 3,5 ກມ) ໂດຍໄດ້ປ່ຽນໝອນຮອງລາງລົດໄຟ ແລະ ມີການບຳລຸງຮັກສາ-ສ້ອມແປງລະບົບສັນຍານຢູ່ສະຖານີລົດໄຟທ່ານາແລ້ງ. ພ້ອມດຽວກັນນັ້ນ, ກໍໄດ້ສຳເລັດການກໍ່ສ້າງທາງລົດໄຟລາວ-ໄທ (ໄລຍະ 2) ຕອນທີ 2 ທ່ານາແລ້ງ-ຄຳສະຫວາດ ຄວາມຍາວ 7,5 ກມ ຊຶ່ງຕາມແຜນການມອບ-ຮັບ ແລະ ເປີດການນຳໃຊ້ ໃນປີ 2023. ໃນໄລຍະ 2 ປີເຄິ່ງຜ່ານມາ ສະຖິຕິການໃຫ້ບໍລິການຂອງລົດໄຟລາວ-ໄທ ມີດັ່ງນີ້:

+ ການຂົນສົ່ງໂດຍສານລະຫວ່າງປະເທດ ບັນລຸໄດ້ 10.816 ເທື່ອຄົນ (ຜູ້ໂດຍສານຂາເຂົ້າ 5.520 ເທື່ອຄົນ ແລະ ຜູ້ໂດຍສານຂາອອກ 5.296 ເທື່ອຄົນ), ສະເລ່ຍມີຜູ້ໂດຍສານຂາເຂົ້າ 25 ເທື່ອຄົນ/ມື້ ແລະ ຜູ້ໂດຍສານຂາອອກ ສະເລ່ຍ 28 ເທື່ອຄົນ/ມື້.

+ ການຂົນສົ່ງສິນຄ້າຜ່ານແດນ ແລະ ຂ້າມແດນ ບັນລຸໄດ້ 68.091,26 ໂຕນ, ສະເລ່ຍ 686,11 ໂຕນ/ມື້. ສິນຄ້າຈາກໄທ ນໍາເຂົ້າ ລາວ ມີທັງໝົດ 56.036,14 ໂຕນ, ສິນຄ້າຈາກ ລາວ ນໍາສົ່ງໄປ ໄທ ມີທັງໝົດ 3.004,21 ໂຕນ ແລະ ສິນຄ້າຜ່ານແດນລາວໄປໄທ ມີທັງໝົດ 5.770,96 ໂຕນ, ສິນຄ້າຜ່ານແດນລາວໄປຈີນ ມີທັງໝົດ 3.279,95 ໂຕນ.

+ ສໍາລັບເສັ້ນທາງລົດໄຟແຕ່ ນະຄອນຫຼວງວຽງຈັນ-ທ່າແຂກ-ຊາຍແດນລາວ-ຫວຽດນາມ ຄວາມຍາວ 452 ກມ, ແບ່ງອອກເປັນ 2 ຊ່ວງ ຄື : ❶ ຊ່ວງທີ 1 ແຕ່ເມືອງທ່າແຂກ, ແຂວງຄໍາມ່ວນ-ຊາຍແດນລາວ-ຫວຽດນາມ ຄວາມຍາວ 139,18 ກມ ແມ່ນໄດ້ຕິດຕາມບໍລິສັດ ຕໍ່ອາຍຸບົດບັນທຶກຄວາມເຂົ້າໃຈ (MOU) ເພື່ອສືບຕໍ່ຈັດຕັ້ງປະຕິບັດການສຶກສາ ສໍາຫຼວດ ແລະ ອອກແບບລະອຽດການທົບທວນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ, ເຕັກນິກ ແລະ ສິ່ງແວດລ້ອມ ປະຕິບັດສໍາເລັດ 100% ສໍາລັບວຽກທີ່ລະບຸໄວ້ໃນ MOU ປະຕິບັດໄດ້ 60%; ❷ ຊ່ວງທີ 2 ແຕ່ນະຄອນຫຼວງ ວຽງຈັນ-ເມືອງທ່າແຂກ, ແຂວງຄໍາມ່ວນ ຄວາມຍາວ 313 ກມ ແມ່ນໄດ້ຕິດຕາມການຈັດຕັ້ງປະຕິບັດການທົບທວນການ ສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ, ເຕັກນິກ ແລະ ສິ່ງແວດລ້ອມຂອງບໍລິສັດ Petroleum Trading Lao Public Company (PTL) ປັດຈຸບັນຢູ່ໃນຂັ້ນຕອນກະຊວງຄັດເລືອກເອົາບໍລິສັດທີ່ປຶກສາ.

**5) ກໍ່ສ້າງ, ປັບປຸງ, ຟື້ນຟູ, ຄຸ້ມຄອງ ແລະ ບໍາລຸງຮັກສາບັນດາສະໜາມບິນ ແລະ ສິ່ງອໍານວຍຄວາມສະດວກຕ່າງໆ ດ້ານການບິນ ໃຫ້ຮັບປະກັນຄວາມປອດໄພ ແລະ ການປ້ອງກັນຄວາມປອດໄພຕາມມາດຕະຖານສາກົນ ເຊິ່ງລວມມີ ສະໜາມບິນສາກົນ 4 ແຫ່ງ, ສະໜາມບິນພາຍໃນ ແລະ ລະບົບສື່ສານການບິນວຽກງານຄຸ້ມຄອງຈະລາຈອນທາງອາກາດ:**

+ ສະໜາມບິນສາກົນ: ສໍາເລັດການສຶກສາຄວາມເປັນໄປໄດ້ ການປັບປຸງສະໜາມບິນສາກົນຫຼວງພະບາງດ້ວຍຮູບ ແບບ PPP ຊຶ່ງຮ່ວມເຮັດວຽກຮ່ວມກັບບໍລິສັດລັດວິສາຫະກິດສະໜາມບິນເກົາຫຼີ Korea Airports Corporation (KSC); ສໍາເລັດການສຶກສາຄວາມເປັນໄປໄດ້ ການປັບປຸງ ແລະ ຍົກລະດັບສະໜາມບິນສາກົນວຽງຈັນ ທີ່ໄດ້ຮັບການ ຊ່ວຍເຫຼືອຈາກລັດຖະບານຍີ່ປຸ່ນ ໂດຍຜ່ານອົງການໄຈກ້າ ປະຈໍາລາວ; ສໍາເລັດການສຶກສາຂໍ້ມູນການສ້າງແຜນແມ່ບົດເພື່ອ ຂະຫຍາຍສະໜາມບິນສາກົນວັດໄຕ; ສຸມໃສ່ຕິດຕາມການກໍ່ສ້າງສະໜາມບິນຕົ້ນເຜີ້ງ, ແຂວງບໍ່ແກ້ວ ປະຕິບັດໄດ້ 93%; ຕິດຕາມການສຶກສາຄວາມເປັນໄປໄດ້ ໂຄງການກໍ່ສ້າງສະໜາມບິນສາກົນສີທັນດອນ.

+ ສະໜາມບິນພາຍໃນ: ສໍາເລັດການກໍ່ສ້າງສະໜາມບິນໜອງຄ້າງ, ແຂວງຫົວພັນ ແລະ ໄດ້ມອບ-ຮັບໂຄງການ ໃນວັນທີ 15 ພຶດສະພາ 2023; ປັບປຸງສະໜາມບິນຫ້ວຍຊາຍ, ແຂວງບໍ່ແກ້ວ ປະຕິບັດໄດ້ 58,88% ເຊິ່ງລັດຖະບານໄດ້ໂຈະ ໂຄງການຕາມແຈ້ງການສະບັບເລກທີ 1292/ຫສນຍ, ລົງວັນທີ 7 ກັນຍາ 2022; ພ້ອມດຽວກັນນັ້ນ, ສໍາເລັດການປະກອບ ເອກະສານບົດສະເໜີໂຄງການ ເພື່ອສະເໜີຂໍການພິຈາລະນາການສຶກສາ-ອອກແບບ ການປັບປຸງສະໜາມບິນອຸດົມໄຊ, ແຂວງ ອຸດົມໄຊ ແລະ ສະໜາມບິນບຸນເໜືອ, ແຂວງຜົ້ງສາລີ.

+ ວຽກມາດຕະຖານການບິນ: ສໍາເລັດວຽກງານມາດຕະຖານການບິນ ທີ່ຕິດພັນກັບການຄຸ້ມຄອງໃບອະນຸຍາດ ປະຕິບັດໜ້າທີ່ການບິນ, ການຄຸ້ມຄອງການປະຕິບັດການບິນ ແລະ ຄຸ້ມຄອງດ້ານເຕັກນິກສົມບູນເຮືອບິນຄື: ໄດ້ຕໍ່ໃບອະນຸຍາດປະຕິບັດໜ້າທີ່ການບິນໃຫ້ແກ່ບຸກຄະລາກອນການບິນ ປະກອບມີ: ນັກບິນ, ນາຍຊ່າງສ້ອມແປງເຮືອບິນ, ພະນັກງານອໍານວຍຄວາມສະດວກການບິນ ແລະ ນັກບັນຊາຈະລາຈອນທາງອາກາດ ຈໍານວນ 460 ເທື່ອ; ຮັບຮອງຄູ່ມື ຝຶກອົບຮົມສະບັບປັບປຸງໃໝ່ ຂອງສູນຝຶກນັກບິນໂຄງການ PACTEC; ປັບປຸງຂໍ້ກໍານົດການປະຕິບັດການບິນສະເພາະ Ops-Spec ໃຫ້ແກ່ບັນດາສາຍການບິນຂອງລາວ; ຮັບຮອງຄູ່ມື ວ່າດ້ວຍ ການຄຸ້ມຄອງການສ້ອມແປງເຮືອບິນ ແລະ ແຜນສ້ອມແປງເຮືອບິນ ຂອງບັນດາສາຍການບິນຂອງລາວ ຈໍານວນ 3 ສະບັບ; ສ້າງລະບຽບການວ່າດ້ວຍການອອກ ໃບອະນຸຍາດປະຕິບັດໜ້າທີ່ຈຸຫ້ອງໂດຍສານ (Cabin Crew License) ແລະ ອື່ນໆ.

**6) ພັດທະນາລະບົບການບໍລິການຂົນສົ່ງທີ່ທັນສະໄໝຄົບຊຸດ ເຂດໂລຈິດສຕິກ 9 ແຫ່ງ ເພື່ອໝູນໃຊ້ເສັ້ນທາງລົດໄຟລາວ-ຈີນ ໃຫ້ເຊື່ອມຈອດກັບຕາໜ່າງເສັ້ນທາງລົດໄຟອະນຸພາກພື້ນແມ່ນ້ຳຂອງ ແລະ ອາຊຽນ (SKRL), ພາກພື້ນ ແລະ ສາກົນ (Trans-Asian Railway) ແລະ ເຊື່ອມຕໍ່ໃສ່ຕາໜ່າງເສັ້ນທາງ, ທ່າເຮືອ ແລະ ສະໜາມບິນ ເພື່ອໃຫ້ກາຍເປັນລະບົບການຂົນສົ່ງທີ່ມີຄວາມສະດວກ, ວ່ອງໄວ, ທັນສະໄໝ, ປອດໄພ, ມີປະສິດທິຜົນສູງ ແລະ ລາຄາຄ່າຂົນສົ່ງຖືກລົງ:** ພັດທະນາການບໍລິການຂົນສົ່ງໂລຈິດສຕິກຂອງບັນດາທ່າບົກທີ່ໄດ້ໃຫ້ບໍລິການແລ້ວ ໃຫ້ມີຄວາມສະດວກ, ວ່ອງໄວ ແລະ ມີຄຸນນະພາບ ເຊັ່ນ: (1) ຕິດຕາມ, ຄຸ້ມຄອງ ແລະ ຄົ້ນຄວ້ານິຕິກຳກ່ຽວຂ້ອງໃນການຄຸ້ມຄອງ 3 ທ່າບົກ ຄື: ທ່າບົກສະຫວັນນະເຂດ, ທ່າບົກຈຳປາສັກ ແລະ ທ່າບົກທ່ານາແລ້ງ, ນະຄອນຫຼວງວຽງຈັນ; ແລະ (2) ຕິດຕາມບັນດາກິດຈະກຳ, ການສຶກສາຄວາມເປັນໄປໄດ້ ແລະ ໂຄງການພັດທະນາທ່າບົກ ເຊັ່ນ: ❶ ທ່າບົກນາເຕີຍ, ແຂວງຫຼວງນ້ຳທາ ໄດ້ກຳນົດຈຸດທີ່ຕັ້ງ ແລະ ໄດ້ຄັດເລືອກເອົາບໍລິສັດທາງລົດໄຟລາວ - ຈີນ ເປັນຫຼັກ, ບໍລິສັດອຳມະຕະຊິຕີ້ລາວຈຳກັດ ແລະ ບໍລິສັດຂົນສົ່ງສາກົນ ເປັນຜູ້ຮ່ວມພັດທະນາ; ❷ ທ່າບົກຫ້ວຍຊາຍ, ແຂວງບໍ່ແກ້ວ ໄດ້ມອບໃຫ້ ລັດວິສາຫະກິດບໍລິການສິນຄ້າຜ່ານແດນ ເຮັດບົດສຶກສາຄວາມເປັນໄປໄດ້; ❸ ທ່າບົກທ່າແຂກ, ແຂວງຄຳມ່ວນ ໄດ້ລົງມືດຳເນີນການກໍ່ສ້າງມີຄວາມຄືບໜ້າ 15%; ❹ ທ່າບົກຫຼັກຊາວ, ແຂວງບໍລິຄຳໄຊ ກຳລັງຄົ້ນຄ້ວາຜູ້ພັດທະນາ; ❺ ທ່າບົກຫຼວງພະບາງ ແລະ ❻ ທ່າບົກເມືອງໄຊ, ແຂວງອຸດົມໄຊ ມອບໃຫ້ ກະຊວງ ຍທຂ ເປັນເຈົ້າການໃນການສຶກສາຄວາມເປັນໄປໄດ້ ແລະ ກະກຽມເອກະສານປະມູນ ເພື່ອເປັນຕົວແບບການດຶງດູດການລົງທຶນໃນຮູບແບບ PPP ພາຍໃຕ້ໂຄງການພັດທະນາຕາມແລວທາງເສດຖະກິດອາຊີຕາເວັນອອກສ່ຽງໃຕ້ ເພື່ອການເຊື່ອມຈອດ-ເຊື່ອມໂຍງ (Southeast Asia Regional Economic Corridor and Connectivity Project-SEARECC). ຜ່ານການຕິດຕາມຄຸ້ມຄອງທັງ 3 ທ່າບົກທີ່ໄດ້ເປີດນຳໃຊ້ແລ້ວ ໃນໄລຍະ 2 ປີເຄິ່ງຜ່ານມາ ເຫັນວ່າສາມາດສ້າງລາຍຮັບເຂົ້າງົບປະມານໄດ້ ຈຳນວນ 231,86 ຕື້ກີບ (ປີ 2021 ຈຳນວນ 55,68 ຕື້ກີບ, ປີ 2022 ຈຳນວນ 109,82 ຕື້ກີບ ແລະ 6 ເດືອນຕົ້ນປີ 2023 ຈຳນວນ 28,02 ຕື້ກີບ).

**7) ສຸມໃສ່ກໍ່ສ້າງ ແລະ ຕິດຕັ້ງສະຖານີຊັ່ງນ້ຳໜັກ ແລະ ອຸປະກອນຊັ່ງຊັ່ງນ້ຳໜັກ ເພື່ອຄຸ້ມຄອງນ້ຳໜັກລົດບັນທຸກຕາມເສັ້ນທາງເຊື່ອມຈອດກັບບັນດາປະເທດໃນພາກພື້ນ ໃຫ້ມີປະສິດທິພາບສູງຂຶ້ນ; ປັບປຸງກົນໄກ ແລະ ນິຕິກຳຄຸ້ມຄອງນ້ຳໜັກລົດບັນທຸກໃຫ້ດີຂຶ້ນ:** ໄດ້ປັບປຸງລະບຽບການ, ກົນໄກການຄຸ້ມຄອງ, ກວດກາ, ຄວບຄຸມນ້ຳໜັກລົດບັນທຸກ ແລະ ລົດຂົນສົ່ງ ມາຮອດປັດຈຸບັນໄດ້ສຳເລັດ ❶ ການອອກຂໍ້ຕົກລົງວ່າດ້ວຍການອະນຸຍາດນ້ຳໜັກລວມສູງສຸດຂອງລົດບັນທຸກ ເລກທີ 9393/ຍທຂ, ລົງວັນທີ 13 ເມສາ 2023 ປ່ຽນແທນ ຂໍ້ກຳນົດເລກທີ 13848/ຍທຂ; ❷ ສຳເລັດການສ້າງພາລະບົດບາດຂອງໜ່ວຍງານສະຖານີຕິດຊັ່ງນ້ຳໜັກລົດບັນທຸກ ເລກທີ 09660/ຍທຂ ເພື່ອເປັນບ່ອນອີງໃນການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ແລະ ໄດ້ອອກແຈ້ງການຈັດຕັ້ງປະຕິບັດວຽກຄຸ້ມຄອງນ້ຳໜັກລົດບັນທຸກ ແລະ ມາດຕະການຕໍ່ຜູ້ລະເມີດ ເລກທີ 14861/ຍທຂ; ❸ ສຳເລັດການກໍ່ສ້າງສະຖານີຕິດຊັ່ງນ້ຳໜັກທັນສະໄໝ ຈຳນວນ 1 ແຫ່ງຢູ່ບ້ານນາຫຼວງ ທາງເລກ R3 ແຂວງບໍ່ແກ້ວ. ພ້ອມນີ້, ຈະໄດ້ສືບຕໍ່ການປະຕິບັດທັນສະຖານີຕິດຊັ່ງນ້ຳໜັກໃຫ້ເປັນທັນສະໄໝໃນຂອບເຂດທົ່ວປະເທດ.

**2. ການເຊື່ອມຈອດໂທລະຄົມມະນາຄົມ, ໄປສະນີ ແລະ ການສື່ສານ:**

\+ ໄດ້ຊຸກຍູ້ສົ່ງເສີມໃຫ້ຫຼາຍຂະແໜງການ ທັງພາກລັດ ແລະເອກະຊົນ ຫັນມານຳໃຊ້ສູນດິຈິຕອນ ໄດ້ທັງໝົດ 78 ພາກສ່ວນ ມາຮອດປັດຈຸບັນ ສູນດິຈິຕອນ ໄດ້ຖືກນຳໃຊ້ໄປຫຼາຍກ່ວາ 40%.

\+ ສຳເລັດການພັດທະນາ ແອັບພລິເຄຊັນ ແບບລວມສູນດິຈິຕອນ ເປັນຕົ້ນ: M-Money ແລະ U-Money ເປັນລະບົບຊຳລະເງິນຜ່ານລະບົບມືຖື ແລະ ອິນເຕີເນັດ ສາມາດເປີດບໍລິການນຳໃຊ້ໃຫ້ແກ່ສັງຄົມແລ້ວ.

\+ ລັດຖະບານໄດ້ອອກດຳລັດຮັບຮອງວິໄສທັດການພັດທະນາເສດຖະກິດດິຈິຕອນ ໄລຍະ 20 ປີ (2021-2040), ຍຸດທະສາດການພັດທະນາເສດຖະກິດດິຈິຕອນ ໄລຍະ 10 ປີ (2021-2030), ແຜນພັດທະນາເສດຖະກິດດິຈິຕອນ ໄລຍະ 5 ປີ (2021-2025) ແລະ ແຜນແມ່ບົດສົ່ງເສີມ ແລະ ພັດທະນາທຸລະກິດລິເລີ່ມ (Start Up) ໄລຍະກ້າວເຂົ້າສູ່ເສດຖະກິດດິຈິຕອນ.

\+ ສຳເລັດການສ້າງ ແລະ ຂະຫຍາຍລະບົບເຄືອຂ່າຍພາຍໃນຂອງພາກລັດ ເຊື່ອມໂຍງກັບ ບັນດາອົງການຈັດຕັ້ງລັດທັງຂັ້ນສູນກາງ ແລະ ທ້ອງຖິ່ນ ຈຳນວນ 36 ຫ້ອງການ, ເທົ່າກັບ 53% ຂອງແຜນການ (ແຜນການ 5ປີ: 68 ຫ້ອງການ) ໃນນີ້, ຂັ້ນສູນກາງ ຈຳນວນ 19 ຫ້ອງການ ແລະ ຂັ້ນທ້ອງຖິ່ນ ຈຳນວນ 17 ຫ້ອງການ ແລະ ສາມາດເຊື່ອມໂຍງເຂົ້າຫາລະບົບລັດຖະບານດີຈິຕອນ ເປັນຕົ້ນ: ລະບົບກອງປະຊຸມທາງໄກ, ລະບົບສູນຂໍ້ມູນພາກລັດ ແລະ ລະບົບຫ້ອງການທັນສະໄໝໄດ້ຢ່າງສະດວກ, ວ່ອງໄວ ແລະ ປອດໄພ.

\+ ໄດ້ຄົ້ນຄວ້າແຜນພັດທະນາລະບົບເຊື່ອມໂຍງຂໍ້ມູນພາກລັດ (Government Data Exchange) ເພື່ອແລກປ່ຽນ ແລະ ລວມສູນຂໍ້ມູນພາກລັດ, ລະບົບຂໍ້ມູນເປີດພາກລັດ (Open Government Data) ໃຫ້ທຸກພາກສ່ວນສາມາດນຳໃຊ້ ເພື່ອບໍລິການໃຫ້ປະຊາຊົນ ລວມທັງລະບົບ Dashboard ເພື່ອເປັນມາດຕະຖານໃນບໍລິຫານຂໍ້ມູນສະຖິຕິພາກລັດໃຫ້ເປັນເອກະພາບ.

\+ ສຳເລັດການຂະຫຍາຍການນຳໃຊ້ລະບົບກອງປະຊຸມທາງໄກ VC ໃຫ້ແກ່ຫ້ອງການລັດຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ຈຳນວນ 97 ພາກສ່ວນ, ລື່ນແຜນການ 43% (ແຜນການ 5ປີ: 68 ຫ້ອງການ); ສ້າງບັນຊີຜູ້ນຳໃຊ້ໄດ້ທັງໝົດ 739 ບັນຊີ, ເທົ່າກັບ 0,49% ຂອງແຜນການ (ແຜນການ 5ປີ: 150.000 ບັນຊີ).

\+ ສຳເລັດການຕິດຕັ້ງ, ຂະຫຍາຍລະບົບອີເມວ e-mail ແລະ ຂະຫຍາຍການນຳໃຊ້ລະບົບອີເມວໃຫ້ບັນດາຫ້ອງການລັດທັງຂັ້ນສູນກາງ ແລະ ທ້ອງຖິ່ນ ຈຳນວນ 41 ພາກສ່ວນ, 49 ໂດເມນ ແລະ ມີບັນຊີຜູ້ຊົມໃຊ້ທັງໝົດ ຈຳນວນ 4.403 ບັນຊີລາຍຊື່.

\+ ສຳເລັດການພັດທະນາ, ປັບປຸງ ແລະ ຂະຫຍາຍການນຳໃຊ້ລະບົບຫ້ອງການທັນສະໄໝ e-Office ໃຫ້ແກ່ 44 ຫ້ອງການ, ເທົ່າກັບ 97,77% ຂອງແຜນການ (ແຜນການ 5ປີ: 45 ຫ້ອງການ); ໃນນີ້, ຂັ້ນສູນກາງ ຈຳນວນ 27 ພາກສ່ວນ ແລະ ທ້ອງຖິ່ນ ຈຳນວນ 17 ຫ້ອງວ່າການແຂວງ.

\+ ສຳເລັດການພັດທະນາ ແລະ ຂະຫຍາຍບັນຊີລາຍຊື່ລະບົບສື່ສານພາກລັດ G-Chat ໃຫ້ຮອງຮັບໄດ້ທັງໝົດ 15.000 ລາຍຊື່; ຂະຫຍາຍການນຳໃຊ້ທັງໝົດ ຈຳນວນ 14.033 ລາຍຊື່ (ສູນກາງ 8.410 ລາຍຊື່ ແລະ ທ້ອງຖິ່ນ 5.623 ລາຍຊື່), ເທົ່າກັບ 50% ແລະ ຂະຫຍາຍການນຳໃຊ້ໃຫ້ບັນດາກະຊວງ, ອົງການຈັດຕັ້ງພັກ-ລັດຂັ້ນສູນກາງ ຈຳນວນ 38 ພາກສ່ວນ ແລະ ທ້ອງຖິ່ນ ໄດ້ 685 ພາກສ່ວນ.

\+ ພັດທະນາ ແລະ ຂະຫຍາຍການນຳລະບົບເວັບໄຊຂອງພາກລັດ G-Web Platform ໄດ້ 33 ພາກສ່ວນ, ເທົ່າກັບ 73,33% ຂອງແຜນການ 5ປີ (ສູນກາງ 11 ພາກສ່ວນ ແລະ ທ້ອງຖິ່ນ 22 ພາກສ່ວນ).

\+ ສຳເລັດການຕິດຕັ້ງ, ພັດທະນາ ແລະ ເປີດນຳໃຊ້ລະບົບຈັດເກັບ ແລະ ນຳໃຊ້ເອກະສານຮ່ວມກັນຂອງພາກລັດ G-Share/G-Drive ຢ່າງເປັນທາງການ ແລະ ຂະຫຍາຍການນຳໃຊ້ໃຫ້ບັນດາກະຊວງ ແລະ ອົງການຈັດຕັ້ງທຽບເທົ່າທັງສູນກາງ ແລະ ທ້ອງຖິ່ນ ຈຳນວນ 5.138 ລາຍຊື່ (ສູງກາງ 3.717 ລາຍຊື່ ແລະ ທ້ອງຖິ່ນ 1.422 ລາຍຊື່) ປັດຈຸບັນສາມາດຮອງຮັບ ໄດ້ທັງໝົດ 16.000 ລາຍຊື່.

\+ ສ້າງລະບົບແລກປ່ຽນ ແລະ ຢັ້ງຢືນຂໍ້ມູນພາກລັດ Information Sharing System, Lao KYC ປັດຈຸບັນມີຜູ້ນຳໃຊ້ລະບົບທັງໝົດ ຈຳນວນ 3.386.686 ບັນຊີ; ສົ່ງເສີມ ແລະ ຮ່ວມມືກັບພາກທຸລະກິດໃນການພັດທະນາລະບົບບໍລິການສັງຄົມຕ່າງໆ ໃຫ້ມີຄຸນນະພາບ, ມີຄວາມຍຸຕິທຳ ແລະ ປອດໄພ ເຊັ່ນ: ສຳເລັດການພັດທະນາຕໍ່ຍອດແອັບ Lao KYC ເປັນ Super App ປັດຈຸບັນໄດ້ເຊື່ອມຕໍ່ລະບົບປະກັນສັງຄົມ, ລະບົບຖານຂໍ້ມູນວິສາຫະກິດແຫ່ງຊາດ ແລະ ລະບົບຄັງປັນຍາລາວ.

\+ ສຳເລັດສ້າງສູນບໍລິການຂໍ້ມູນ-ຂ່າວສານແບບເອເລັກໂຕຣນິກຢູ່ຂັ້ນທ້ອງຖິ່ນໄດ້ ຈຳນວນ 1 ແຫ່ງ/ພາກ (ແຂວງສະຫວັນນະເຂດ), ເທົ່າກັບ 33,33% ຂອງແຜນການ (ແຜນການ 5ປີ: 3 ພາກ).

+ ປັບປຸງ ແລະ ຂະຫຍາຍລະບົບເຕັກນິກຄລາວ ເພີ່ມຂຶ້ນ 10% ຮັບຮອງການຕິດຕັ້ງພັດທະນາລະບົບບໍລິຫານລັດດ້ວຍເອເລັກໂຕຣນິກ ແລະ ລະບົບຊອບແວຕ່າງໆ ໃນການຫັນເປັນທັນສະໄໝ.

+ ສໍາເລັດອະນຸຍາດນໍາໃຊ້ເລກໝາຍໂທລະຄົມ ໄດ້ທັງໝົດ 23.450.000 ເລກໝາຍ (ໃນນີ້: ອອກອະນຸຍາດໃໝ່ຈໍານວນ 900.000 ເລກໝາຍ, ມີການນໍາໃຊ້ຕົວຈິງ ຈໍານວນທັງໝົດ 8.806.880 ເລກໝາຍ ແລະ ເລກໝາຍພິເສດ (3 ແລະ 4 ຕົວເລກ) ມີຈໍານວນທັງໝົດ 192 ເລກໝາຍ, ອອກອະນຸຍາດໃໝ່ ຈໍານວນ 26 ເລກໝາຍ); ມາຮອດປັດຈຸບັນສໍາເລັດການຂຶ້ນທະບຽນເລກໝາຍໂທລະສັບມືຖື ໄດ້ທັງໝົດ ຈໍານວນ 4.118.676 ເລກໝາຍ, ທຽບໃສ່ເລກໝາຍນໍາໃຊ້ຕົວຈິງ ເທົ່າກັບ 46,76 %.

+ ການພັດທະນາ ແລະ ຂະຫຍາຍພື້ນຖານໂຄງລ່າງໂທລະຄົມມະນາຄົມໄດ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງໃນຈັງຫວະທີ່ກ້າວກະໂດດ, ປັດຈຸບັນສະຖານີຮັບ-ສົ່ງສັນຍານໂທລະສັບມືຖື ມີຈໍານວນທັງໝົດ 8.904 ສະຖານີ, ສາມາດຄອບຄຸມໄດ້ 18 ແຂວງ, 148 ເມືອງ ແລະ 8.245 ບ້ານ ເຮັດໃຫ້ທົ່ວປະເທດມີສັນຍານມືຖື ແຍກຕາມລະບົບ 2G ຄອມຄຸມ 97%, ລະບົບ 3G ຄອມຄຸມ 85% ແລະ ລະບົບ 4G ຄອມຄຸມ 76% ຂອງບ້ານທັງໝົດ. ສ່ວນລະບົບ 5G ຄອມຄຸມ 3% ແມ່ນຢູ່ໃນການທົດລອງນໍາໃຊ້ເພື່ອກຽມຄວາມພ້ອມແກ່ການຫັນປ່ຽນສູ່ເສດຖະກິດດິຈິຕອນ ແລະ ອຸດສາຫະກໍາ 4.0 ຕາມທິດກ້າວໃຫ້ທັນ ແລະ ໝູນໃຊ້ໃຫ້ເໝາະສົມກັບລະດັບການເຕີບໂຕຂອງອຸດສາຫະກໍາການຜະລິດ ແລະ ການບໍລິການຂອງປະເທດ; ຂະຫຍາຍເຄືອຂ່າຍສາຍສົ່ງໂທລະຄົມມະນາຄົມສາຍໃຍແກ້ວ Optic Fiber ເຂົ້າເຖິງບັນດາແຂວງ, ເທດສະບານເມືອງ ໄດ້ 4.253 ກິໂລແມັດ, ເທົ່າກັບ 43% ຂອງແຜນການ, ປັດຈຸບັນລວມມີທັງໝົດ 97.153 ກິໂລແມັດ.

## 5.2 ແຜນວຽກຈຸດສຸມທີ 2: ການພົວພັນຮ່ວມມື, ການເຊື່ອມໂຍງການຄ້າ ແລະ ການລົງທຶນກັບພາກພື້ນ ແລະ ສາກົນ

**+ ວຽກເຈລະຈາການຄ້າສອງຝ່າຍ:**

ການເຈລະຈາ ແລະ ການຮ່ວມມືການຄ້າສອງຝ່າຍແມ່ນໄດ້ດໍາເນີນຕາມກົນໄກຕ່າງໆ ເຫັນວ່າມີຜົນສໍາເລັດດີພໍສົມຄວນ. ປັດຈຸບັນ ສປປ ລາວ ໄດ້ສໍາເລັດການລົງນາມເຊັນສັນຍາການຄ້າສອງຝ່າຍ ແລະ ສັນຍາການຄ້າຊາຍແດນລາວ-ຫວຽດນາມ. ນອກນັ້ນ, ຍັງໄດ້ເຊັນສັນຍາສອງຝ່າຍ ກ່ຽວກັບ ເສດຖະກິດ-ການຄ້າກັບປະເທດອື່ນໆ ເຊິ່ງເຫັນວ່າການຮ່ວມມືສອງຝ່າຍໃນໄລຍະຜ່ານມາໄດ້ມີບາດກ້າວຂະຫຍາຍການຮ່ວມມືກວ້າງເພີ່ມຂຶ້ນ ໂດຍສະເພາະແມ່ນກັບບັນດາປະເທດໃກ້ຄຽງໃນພາກພື້ນອາຊີ ເປັນຕົ້ນ: ການພົວພັນການຄ້າລາວ-ຫວຽດນາມ; ການພົວພັນການຄ້າລາວ-ຈີນ ແລະ ການພົວພັນການຄ້າລາວ-ໄທ. ຜົນປະໂຫຍດຈາກການຮ່ວມມືກັບປະເທດຄູ່ຄ້າຫຼັກ ຂອງ ສປປ ລາວ ທີ່ມີຊາຍແດນຕິດກັບ 5 ປະເທດ ໄດ້ເຮັດໃຫ້ຍອດມູນຄ່າດ້ານການຄ້າເພີ່ມຂຶ້ນຢ່າງຕໍ່ເນື່ອງ ໂດຍສະເພາະມູນຄ່າການຄ້າທີ່ເປັນອັນດັບໜຶ່ງແມ່ນ: ການຄ້າລາວ-ໄທ ມີມູນຄ່າລວມ 14.832 ລ້ານໂດລາສະຫະລັດ; ຮອງລົງມາແມ່ນ ການຄ້າລາວ-ຈີນ ມີມູນຄ່າລວມ 9.350 ລ້ານໂດລາສະຫະລັດ ແລະ ການຄ້າລາວ-ຫວຽດນາມ ມີມູນຄ່າລວມ 4.287 ລ້ານໂດລາສະຫະລັດ ຕາມລໍາດັບ. ສ່ວນການຄ້າລາວ-ກໍາປູເຈຍ ແລະ ລາວ-ມຽນມາ ຍັງບໍ່ມີການຄ້າຮ່ວມກັນຫຼາຍປານໃດ.

ການເຊື່ອມຈອດດ້ານເສດຖະກິດ, ການຄ້າຊາຍແດນ ແລະ ການເຊື່ອມໂຍງຂອງບັນດາຕົວເມືອງຕ່າງໆ ແມ່ນມີຄວາມສໍາຄັນໃນການຂັບເຄື່ອນການປ່ຽນແປງໂຄງສ້າງເສດຖະກິດ ແລະ ການຍົກສູງຄຸນນະພາບຊີວິດການເປັນຢູ່ຂອງປະຊາຊົນ. ສໍາລັບ ສປປ ລາວ ການຂະຫຍາຍຕົວຂອງຕົວເມືອງ ແລະ ການເຕີບໂຕຂອງເສດຖະກິດແມ່ນຍັງບໍ່ທັນສອດຄ່ອງກົມກຽວເຊິ່ງກັນ ແລະ ກັນ, ເຖິງຈະມີການກາຍເປັນຕົວເມືອງໃຫຍ່ຫຼາຍຂຶ້ນ ແຕ່ສ່ວນຫຼາຍຍັງເປັນຕົວເມືອງທີ່ມີປະຊາກອນໜ້ອຍກວ່າ 300.000 ຄົນ. ສະນັ້ນ, ການສ້າງບັນດາເສັ້ນທາງໃໝ່ແມ່ນຈະຊ່ວຍເພີ່ມການເຊື່ອມໂຍງລະຫວ່າງບັນດາຕົວເມືອງຕ່າງໆ ແລະ ແລວທາງເສດຖະກິດ ເຊິ່ງເປັນການເພີ່ມທ່າແຮງໃນການຂະຫຍາຍຕົວຂອງເສດຖະກິດ.

\+ **ວຽກເຈລະຈາການຄ້າຂອບພາກພື້ນອາຊຽນ ແລະ ອົງການການຄ້າໂລກ:**

– ການເຈລະຈາການຄ້າພາກພື້ນ ແລະ ອະນຸພາກພື້ນ ເປັນວຽກງານໜຶ່ງທີ່ສຳຄັນ ແລະ ມີຄວາມຄືບໜ້າເປັນຢ່າງດີ ໂດຍສະເພາະແມ່ນການແຕ່ງຕັ້ງຄະນະຈຸດປະສານງານໃໝ່ ໃນການເຈລະຈາສັນຍາການຄ້າດ້ານບໍລິການໃນກອບອາຊຽນ. ຄຽງຄູ່ກັນນັ້ນ, ໄດ້ເຂົ້າຮ່ວມກອງປະຊຸມຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າອາຊຽນ ຄັ້ງທີ 24 (24th ATF-JCC) ແລະ ກອງປະຊຸມອື່ນໆທີ່ກ່ຽວຂ້ອງ ອັນພົ້ນເດັ່ນແມ່ນໄດ້ເປັນເອກະພາບກັນລົບລ້າງອັດຕາພາສີສິນຄ້າ ເປັນ 0 ກວມເອົາ 98,6%; ພ້ອມກັນນັ້ນ, ຍັງໄດ້ຮັບຮອງເອົາບັນດາເອກະສານທີ່ສຳຄັນຕ່າງໆ ຄື: (1) ເອກະສານຄູ່ມື ດ້ານນະໂຍບາຍກ່ຽວກັບການສ້າງຄວາມເຂັ້ມແຂງໃຫ້ທຸລະກິດຍິງຢູ່ໃນນະໂຍບາຍແຫ່ງຊາດ ແລະ ແຜນດຳເນີນງານວ່າດ້ວຍ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ແລະ (2) ເອກະສານຫຼັກການພື້ນຖານສຳລັບການເຈລະຈາ ສັນຍາຂອບວຽກວ່າດ້ວຍການແຂ່ງຂັນ; ພ້ອມທັງສືບຕໍ່ຄົ້ນຄວ້າ ແລະ ສ້າງແຜນວຽກ, ກົນໄກການຕິດຕາມກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດດຳລັດວ່າດ້ວຍການຄ້າທາງເອເລັກໂຕຣນິກອາຊຽນຂອງ ສປປ ລາວ, ສັນຍາການຮ່ວມມື ເສດຖະກິດແບບຮອບດ້ານລະດັບພາກພື້ນ (RCEP) ແລະ ຂອບວຽກອື່ນໆທີ່ກ່ຽວຂ້ອງ.

– ການເຈລະຈາ ແລະ ປະຕິບັດພັນທະສັນຍາຂອງການຄ້າຫຼາຍຝ່າຍ ແມ່ນມີຜົນສຳເລັດຕາມກອບສັນຍາຂອງສາກົນ ທີ່ລາວເປັນພາຄີກັບອົງການຄ້າໂລກ ໂດຍສະເພາະແມ່ນສັນຍາວ່າດ້ວຍການອຳນວຍຄວາມສະດວກທາງດ້ານການຄ້າ ທີ່ຢູ່ພາຍໃຕ້ໝວດ C ຕາມມາດຕາ 16.2 (b) ແລະ ມາດຕາ 7.2 ການຊຳລະຜ່ານເອເລັກໂຕຣນິກ; ມາດຕາ 10.4 ການ ບໍລິການປະຕູດຽວ; ມາດຕາ 10.8 ການປະຕິເສດສິນຄ້າ ແລະ ມາດຕາ 12 ການຮ່ວມມືດ້ານພາສີ. ຈາກຜົນການຈັດຕັ້ງ ບັນດາກອບການຮ່ວມມືຕ່າງໆ ໃນໄລຍະ 2 ປີເຄິ່ງຜ່ານມາການພົວພັນຮ່ວມມື, ການເຊື່ອມໂຍງການຄ້າ ແລະ ການລົງທຶນ ກັບພາກພື້ນ ແລະ ສາກົນ ແມ່ນມີບົດບາດ ແລະ ມີທ່າກ້າວຂະຫຍາຍຕົວຂຶ້ນຢ່າງຕໍ່ເນື່ອງ ສະແດງອອກດັ່ງນີ້:

\+ ການສົ່ງອອກສິນຄ້າອຸດສາຫະກຳປຸງແຕ່ງ ຂະຫຍາຍຕົວສະເລ່ຍ 22,80% ຕໍ່ປີ.

\+ ມູນຄ່າສົ່ງອອກສິນຄ້າອຸດສາຫະກຳປຸງແຕ່ງ ກວມເອົາ 40% ຂອງມູນຄ່າການສົ່ງອອກທັງໝົດ.

\+ ສັດສ່ວນມູນຄ່າການສົ່ງອອກພາຍໃຕ້ສິດທິພິເສດທາງດ້ານການຄ້າ ໃນປີ 2021 ກວມເອົາ 36,68% ແລະ ໃນປີ 2022 ກວມເອົາ 41,96% ຂອງມູນຄ່າການສົ່ງອອກທັງໝົດ ຊຶ່ງເຫັນວ່າສາມາດບັນລຸລື່ນຄາດໝາຍ (ແຜນການ 5ປີ: ກຳນົດໄວ້ 25% ໃນປີ 2025).

– ສປປ ລາວ ແມ່ນໜຶ່ງໃນສະມາຊິກຂອງແຜນງານການຮ່ວມມືທາງດ້ານເສດຖະກິດໃນອະນຸພາກພື້ນແມ່ນ້ຳຂອງ ຊຶ່ງເປັນໂອກາດອັນດີໃນການນຳໃຊ້ທີ່ຕັ້ງຍຸດທະສາດໃນເຂດພາກພື້ນ ເພື່ອການເຕີບໂຕດ້ານເສດຖະກິດ, ການສົ່ງເສີມ ການຄ້າ, ການທ່ອງທ່ຽວ, ເພີ່ມຜົນຜະລິດກະສິກຳ ແລະ ເພີ່ມບົດບາດຂອງບັນດາຕົວເມືອງຕ່າງໆພາຍໃນປະເທດເພື່ອ ສົ່ງເສີມການຂະຫຍາຍຕົວແບບມີສ່ວນຮ່ວມ, ສະເໝີພາບ ແລະ ເພີ່ມຄວາມທົນທານຕໍ່ຜົນກະທົບຈາກປັດໄຈພາຍນອກ. ສະນັ້ນ, ສປປ ລາວ ຕ້ອງເພີ່ມຂີດຄວາມສາມາດດ້ານການແຂ່ງຂັນ, ການຮ່ວມມືເປັນປະຊາຄົມ ແລະ ການເຊື່ອມໂຍງກັບ ພາກພື້ນ ຊຶ່ງຈະສາມາດຊ່ວຍເພີ່ມລາຍໄດ້ແຫ່ງຊາດ ແລະ ຍົກສູງມາດຖານດ້ານຊີວິດການເປັນຢູ່ຂອງປະຊາຊົນ ໃຫ້ທຽບ ເທົ່າກັບບັນດາປະເທດຕ່າງໆໃນອະນຸພາກພື້ນແມ່ນ້ຳຂອງ ໂດຍສະເພາະການເພີ່ມມູນຄ່າຕ່ອງໂສ້ການຜະລິດ, ການສ້າງ ອຸດສາຫະກຳທີ່ມີຄວາມຫຼາກຫຼາຍ ແລະ ການເພີ້ມທະວີການຮ່ວມມືກັບພາກພື້ນ ແລະ ສາກົນ. ການພັດທະນາແລວທາງ ເສດຖະກິດ ລວມທັງການເຊື່ອມຈອດດ້ານຄົມມະນາຄົມ ແລະ ການຂົນສົ່ງສິນຄ້າທີ່ດີກັບພາກພື້ນ ຈະຊ່ວຍສົ່ງເສີມ ໃຫ້ການສົ່ງອອກສິນຄ້າມີຄວາມຫຼາກຫຼາຍ. ນອກຈາກນີ້, ການພັດທະນາແລວທາງເສດຖະກິດ ຍັງເປັນສ່ວນທີ່ສຳຄັນຂອງ ແຜນງານການຮ່ວມມືທາງດ້ານເສດຖະກິດໃນອະນຸພາກພື້ນແມ່ນ້ຳຂອງ ຊຶ່ງທີ່ຕັ້ງຍຸດທະສາດຂອງລາວໃນຂົງເຂດພາກພື້ນ ຈະເປັນໂອກາດອັນດີໃນການນຳໃຊ້ທ່າແຮງບົ່ມຊ້ອນທີ່ຍັງບໍ່ຖືກນຳໃຊ້ ເພື່ອຂະຫຍາຍເສດຖະກິດ ແລະ ເພີ່ມຄວາມຫຼາກ ຫຼາຍຂອງສິນຄ້າທີ່ເປີດການຄ້າລະຫວ່າງຂົງເຂດພາກພື້ນ ແລະ ສາກົນ. ທ່າແຮງໃນການພັດທະນາຄວາມຫຼາກຫຼາຍດ້ານ

ເສດຖະກິດຜ່ານຂະບວນການຜະລິດຮ່ວມກັນໃນພາກພື້ນ ຈະເພີ່ມຂີດຄວາມສາມາດໃນການສົ່ງອອກ ພາຍໃຕ້ກອບການຮ່ວມມືກັນທີ່ແໜ້ນແຟ້ນຂຶ້ນກວ່າເກົ່າ.

## 5.3 ແຜນວຽກຈຸດສຸມທີ 3: ການພັດທະນາເຂດແຄວ້ນ ແລະ ທ້ອງຖິ່ນໃຫ້ມີຄວາມເຂັ້ມແຂງ ແລະ ສອດຄ່ອງກັບທ່າແຮງບົ່ມຊ້ອນ

### (1). ເຂດພາກເໜືອ

ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງບັນດາແຂວງພາກເໜືອ ໃນໄລຍະ 2 ປີເຄິ່ງຜ່ານມາ ເຫັນວ່າຍັງພົບກັບຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍຫຼາຍດ້ານ ຊຶ່ງສົ່ງຜົນໃຫ້ການປະຕິບັດບັນດາຄາດໝາຍຕົ້ນຕໍຂອງເສດຖະກິດມະຫາພາກຂອງບັນດາແຂວງພາກເໜືອ ຫຼາຍຄາດໝາຍມີຄວາມຄືບໜ້າຊ້າ ແລະ ບາງຄາດໝາຍບໍ່ສາມາດບັນລຸຕາມແຜນການທີ່ວາງໄວ້ ສະແດງອອກຄື: ອັດຕາການເຕີບໂຕຂອງລວມຍອດຜະລິດຕະພັນພາຍໃນ GDP ບໍ່ສາມາດບັນລຸໄດ້ຕາມແຜນການ, ລາຍໄດ້ສະເລ່ຍຕໍ່ຫົວຄົນຫຼຸດລົງ ຍ້ອນຫຼາຍປັດໄຈກະທົບທັງພາຍໃນ ແລະ ພາຍນອກ ເປັນຕົ້ນ: ຜົນກະທົບຂອງການລະບາດພະຍາດໂຄວິດ-19 ທີ່ແກ່ຍາວ, ໄພເງິນເຟີ້, ການເພີ່ມຂຶ້ນຂອງລາຄານ້ຳມັນ ແລະ ລາຄາສິນຄ້າອຸປະໂພກ-ບໍລິໂພກອື່ນໆ ເຊິ່ງສົ່ງຜົນໃຫ້ລາຄາຕົ້ນທຶນການຜະລິດເພີ່ມສູງຂຶ້ນ ແລະ ກະທົບຕໍ່ການດຳລົງຊີວິດຂອງປະຊາຊົນ; ແຕ່ເຖິງຢ່າງໃດກໍຕາມ ພາຍໃຕ້ການນຳພາ-ຊີ້ນຳຂອງອົງການປົກຄອງທ້ອງຖິ່ນໃນທຸກຂັ້ນ ໄດ້ປຸກລະດົມ, ຊຸກຍູ້ສົ່ງເສີມໃຫ້ປະຊາຊົນ ແລະ ຫົວໜ່ວຍທຸລະກິດ ສືບຕໍ່ທຳການຜະລິດສິນຄ້າຕາມທ່າແຮງຂອງທ້ອງຖິ່ນ ແລະ ຄວາມຕ້ອງການຂອງຕະຫຼາດທີ່ໄດ້ເຈລະຈາເປີດເຕັກນິກຕະຫຼາດ ເຮັດໃຫ້ສະພາບເສດຖະກິດໂດຍລວມ ຍັງສືບຕໍ່ຂະຫຍາຍຕົວໄດ້ໃນຈັງຫວະຕໍ່ເນື່ອງ, ເຊິ່ງສະແດງອອກໃນແຕ່ລະດ້ານດັ່ງນີ້:

❖ <u>ເຂດການຜະລິດກະສິກຳ</u>:

– ການຜະລິດພືດສະບຽງອາຫານ: ໄດ້ເລັ່ງໃສ່ການປູກພືດສະບຽງທີ່ຈຳເປັນ ເພື່ອສະໜອງເປັນສິນຄ້າບໍລິໂພກໃຫ້ພຽງພໍໃນຕະຫຼາດພາຍໃນ ຫຼຸດຜ່ອນການນຳເຂົ້າຈາກຕ່າງປະເທດ ແລະ ເປັນສິນຄ້າສົ່ງອອກຈຳນວນໜຶ່ງ. ໃນໄລຍະຜ່ານມາທ່າແຮງການຜະລິດເຂົ້າລວມສະເລ່ຍຕໍ່ປີ ສາມາດປະຕິບັດໄດ້ປະມານ 204.116 ເຮັກຕາ, ຜົນຜະລິດ 663.815 ໂຕນ (ສະຖິຕິປີ 2022); ການປູກເຂົ້າທີ່ເປັນທ່າແຮງທີ່ສຸດໃນພາກເໜືອແມ່ນການປູກເຂົ້າໄຮ່ ກວມຫຼາຍກວ່າ 80% ຂອງຜົນຜະລິດເຂົ້າໄຮ່ລວມໃນທົ່ວປະເທດ. ແຂວງພົ້ນເດັ່ນໃນການປູກເຂົ້າລວມໃນເຂດພາກເໜືອແມ່ນ: ແຂວງໄຊຍະບູລີ, ຫຼວງພະບາງ ແລະ ຊຽງຂວາງ ຕາມລຳດັບ. ນອກຈາກນັ້ນ, ຍັງຜະລິດພືດສະບຽງອື່ນໆເຊັ່ນ: ການປູກເຜືອກມັນ, ພືດຜັກ ແລະ ໝາກໄມ້. ແຂວງທີ່ປູກຫຼາຍແມ່ນແຂວງອຸດົມໄຊ, ຫຼວງພະບາງ, ໄຊຍະບູລີ, ຫົວພັນ ແລະ ຊຽງຂວາງ ຕາມລຳດັບ.

– ການຜະລິດກະສິກຳເປັນສິນຄ້າ: ສົ່ງເສີມປະຊາຊົນ ແລະ ຫົວໜ່ວຍທຸລະກິດ ຜະລິດສິນຄ້າຕາມທ່າແຮງຂອງແຕ່ລະແຂວງ ແລະ ຕາມສັນຍາຊື້-ຂາຍທີ່ໄດ້ເຈລະຈາເປີດເຕັກນິກຕະຫຼາດ. ໃນໄລຍະຜ່ານມາ ທ່າແຮງການຜະລິດພືດເປັນສິນຄ້າພົ້ນເດັ່ນ ໄດ້ແກ່: ມັນຕົ້ນ ໄດ້ 1.589.280 ໂຕນ, ອ້ອຍ ໄດ້ 1.278.708 ໂຕນ, ສາລີແຂງ ໄດ້ 421.589 ໂຕນ, ໝາກກ້ວຍ ໄດ້ 400.744 ໂຕນ ແລະ ໝາກໂມ ໄດ້ 57.150 ໂຕນ (ສະຖິຕິປີ 2022); ແຂວງທີ່ປູກຫຼາຍກວ່າໝູ່ແມ່ນແຂວງໄຊຍະບູລີ, ອຸດົມໄຊ, ຫົວພັນ, ຫຼວງນ້ຳທາ ແລະ ຫຼວງພະບາງ ຕາມລຳດັບ. ພິເສດແມ່ນການປູກຊາຕົ້ມນ້ຳໃນເຂດພາກເໜືອ ກວມເຖິງ 90% ຂອງຜົນຜະລິດລວມຂອງຊາຕົ້ມນ້ຳ, ແຂວງທີ່ປູກຫຼາຍກວ່າໝູ່ແມ່ນແຂວງຜົ້ງສາລີ, ຫຼວງນ້ຳທາ, ອຸດົມໄຊ ແລະ ຊຽງຂວາງ ຕາມລຳດັບ.

– ການລ້ຽງສັດ: ໄດ້ຊຸກຍູ້ ແລະ ສົ່ງເສີມການລ້ຽງສັດໃຫຍ່, ການລ້ຽງສັດເປັນຟາມ ແລະ ປູກຫຍ້າລ້ຽງສັດຕາມເຂດທີ່ມີທ່າແຮງ; ແຂວງທີ່ພົ້ນເດັ່ນໃນການລ້ຽງສັດໃຫຍ່ເປັນອັບດັບຕົ້ນຂອງພາກເໜືອ ທີ່ເປັນສິນຄ້າພາຍໃນ ແລະ ສົ່ງອອກແມ່ນແຂວງໄຊຍະບູລີ, ຊຽງຂວາງ ແລະ ຫຼວງພະບາງ ຕາມລຳດັບ.

❖ <u>ເຂດອຸດສາຫະກຳ</u>:

ຂະແໜງການຜະລິດອຸດສາຫະກຳປຸງແຕ່ງ ຖືເປັນຂະແໜງການໜຶ່ງທີ່ໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ-19 ຢ່າງໜັກໜ່ວງສົມຄວນ, ແຕ່ກໍມີບາງອຸດສາຫະກຳປຸງແຕ່ງ ຍັງສາມາດສືບຕໍ່ທຳການຜະລິດ ເປັນຕົ້ນ:

ອຸດສາຫະກຳປຸງແຕ່ງອາຫານ ແລະ ເຄື່ອງດື່ມ ໂດຍສະເພາະການປຸງແຕ່ງຜະລິດຕະພັນຈາກຜົນຜະລິດກະສິກຳດ້ວຍການນຳໃຊ້ເຕັກໂນໂລຊີ ແລະ ກົນຈັກທີ່ທັນສະໄໝ ເຮັດໃຫ້ຜົນຜະລິດມີປະສິດທິພາບ ແລະ ສາມາດສ້າງມູນຄ່າເພີ່ມຂອງຜະລິດຕະພັນຈາກສິນຄ້າກະສິກຳ. ນອກນັ້ນ, ກໍມີອຸດສາຫະກຳປຸງແຕ່ງຈຳນວນໜຶ່ງ ທີ່ຍັງສືບຕໍ່ມີຈັງຫວະຄ່ອຍໆຟື້ນຕົວໃນທິດທາງດີຂຶ້ນ ເຊັ່ນ: ການຜະລິດຂອງຜະລິດຕະພັນແຮ່ທາດອື່ນໆທີ່ບໍ່ແມ່ນໂລຫະ, ການຜະລິດຢາງ ແລະ ຜະລິດຕະພັນປລາສຕິກ ແລະ ອື່ນໆ. ປັດຈຸບັນໃນເຂດພາກເໜືອ ມີໂຮງງານອຸດສາຫະກຳປຸງແຕ່ງທັງໝົດ 1.784 ແຫ່ງ ກວມເອົາ 20% ຂອງຈຳນວນໂຮງງານທັງໝົດໃນທົ່ວປະເທດ; ໃນພາກເໜືອແຂວງທີ່ມີທ່າແຮງດ້ານການຜະລິດອຸດສາຫະກຳປຸງແຕ່ງແມ່ນແຂວງຊຽງຂວາງ, ອຸດົມໄຊ, ຫຼວງນ້ຳທາ, ຫຼວງພະບາງ ແລະ ໄຊຍະບູລີ ຕາມລຳດັບ. ດ້ານພະລັງງານ ຖືວ່າເປັນເຂດທີ່ມີທ່າແຮງໃນການຜະລິດແຫຼ່ງພະລັງງານໄຟຟ້າຂະໜາດໃຫຍ່ ພົ້ນເດັ່ນແມ່ນການຜະລິດກະແສໄຟຟ້າຖ່ານຫີນຫົງສາລິກໄນ, ເຂື່ອນໄຟຟ້ານ້ຳຂອງໄຊຍະບູລີ; ສ່ວນໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳຂອງຫຼວງພະບາງ ແມ່ນກຳລັງດຳເນີນການກໍ່ສ້າງ, ໂຄງການເຂື່ອນໄຟຟ້ານ້ຳຂອງປາກແບ່ງ ແລະ ນ້ຳຂອງປາກລາຍ ປັດຈຸບັນກຳລັງລໍຖ້າອະນຸມັດເຊັນສັນຍາ CA ກັບລັດຖະບານ ແລະ ສຳເລັດການກໍ່ສ້າງໂຮງງານຜະລິດຊີມັງຫຼັງໃໝ່ຢູ່ແຂວງຫຼວງພະບາງ.

❖ <u>ເຂດການຄ້າ, ບໍລິການ ແລະ ການທ່ອງທ່ຽວ</u>:

ການຄ້າໂດຍລວມຂອງບັນດາແຂວງໃນເຂດພາກເໜືອ ແມ່ນມີທ່າອ່ຽງທີ່ດີຂຶ້ນໃນຊ່ວງທ້າຍປີ 2022 ຫຼັງຈາກສາມາດເປີດປະເທດຄືນໃໝ່ອີກຄັ້ງ ໂດຍສະເພາະແມ່ນເຂດການຄ້າຕາມຊາຍແດນ ແລະ ການຂົນສົ່ງສິນຄ້າ ເນື່ອງຈາກການຜ່ອນຜັນບັນດາມາດຕະການຕ່າງໆລົງຂອງບັນດາປະເທດຄູ່ຄ້າ ເຮັດໃຫ້ການຄ້າ ແລະ ການບໍລິການຂົນສົ່ງສິນຄ້າ-ຂົນສົ່ງໂດຍສານ ມີຂະບວນຟົດຟື້ນ ແລະ ມີທ່າຂະຫຍາຍຕົວໃນຈັງຫວະດີຂຶ້ນຫຼາຍທຽບໃສ່ຫຼາຍປີຜ່ານມາ ທີ່ໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ-19 ໂດຍສະເພາະການບໍລິການຂົນສົ່ງສິນຄ້າເຂດທ່າບົກທີ່ພັດທະນາສຳເລັດ ແລະເປີດໃຫ້ບໍລິການແລ້ວ ຄື: ທ່າບົກນາເຕີຍ, ແຂວງຫຼວງນ້ຳທາ; ນອກນັ້ນ, ໄດ້ເລັ່ງຊຸກຍູ້ໃຫ້ບັນດາທ່າບົກອື່ນໆ ດຳເນີນກໍ່ສ້າງໃຫ້ໄດ້ຕາມແຜນ ເຊັ່ນ: ທ່າບົກຫ້ວຍຊາຍ, ທ່າບົກຫຼວງພະບາງ ແລະ ທ່າບົກເມືອງໄຊ. ໃນພາກການບໍລິການ ແລະທ່ອງທ່ຽວໃນເຂດພາກເໜືອ ກໍມີຄວາມຄຶກຄື້ນຫຼາຍຂຶ້ນ ຍ້ອນການເຂົ້າມາທ່ອງທ່ຽວຂອງນັກທ່ອງທ່ຽວທັງພາຍໃນ ແລະສາກົນ ໂດຍສະເພາະແຫຼ່ງທ່ອງທ່ຽວມໍລະດົກໂລກ 2 ແຫ່ງຄື: ເມືອງຫຼວງພະບາງ, ແຂວງຫຼວງພະບາງ ທີ່ຍັງເປັນຈຸດໝາຍປາຍທາງການທ່ອງທ່ຽວ ທີ່ມີນັກທ່ອງທ່ຽວອັນດັບໜຶ່ງຂອງປະເທດ ແລະ ມໍລະດົກໂລກທົ່ງໄຫຫີນ, ແຂວງຊຽງຂວາງລວມເຖິງແຫຼ່ງທ່ອງທ່ຽວອື່ນໆ ເຊັ່ນ: ແຫຼ່ງທ່ອງທ່ຽວແຂວງອຸດົມໄຊ, ບໍ່ແກ້ວ, ຫຼວງນ້ຳທາ ແລະ ຜົ້ງສາລີ ຕາມລຳດັບ. ພິເສດແມ່ນການເປີດເສັ້ນທາງ ລົດໄຟລາວ-ຈີນ ທີ່ໄດ້ຊຸກຍູ້ໃຫ້ພາກການບໍລິການຂົນສົ່ງໂລຈິດສຕິກ ແລະ ການບໍລິການທ່ອງທ່ຽວຈາກພາກກາງສູ່ພາກເໜືອ ແລະ ເຊື່ອມຕໍ່ຊາຍແດນ ສປ ຈີນ ມີຄວາມຄຶກຄື້ນ ແລະ ຂະຫຍາຍຕົວໃນທ່າກ້າວກະໂດດຢ່າງໄວວາ.

❖ <u>ການພັດທະນາດ້ານສັງຄົມ</u>:

ດ້ານການສຶກສາ: ທັງພາກລັດ ແລະ ເອກະຊົນໄດ້ສືບຕໍ່ປະຕິບັດການຮຽນ-ການສອນ ເພື່ອໃຫ້ສາມາດບັນລຸບັນດາຄາດໝາຍຕົວຊີ້ວັດດ້ານການສຶກສາ, ທຸກຄົນສາມາດເຂົ້າເຖິງການສຶກສາໄດ້ຢ່າງທົ່ວເຖິງ ແລະ ມີຄຸນນະພາບ; ເຖິງແມ່ນວ່າໃນຊ່ວງການແຜ່ລະບາດຂອງພະຍາດໂຄວິດ-19 ຈຳເປັນຕ້ອງໄດ້ຢຸດການຮຽນ-ການສອນຊົ່ວຄາວ ເພື່ອປ້ອງກັນ ແລະສະກັດກັ້ນ ທີ່ສົ່ງຜົນກະທົບຕໍ່ການຮຽນ-ການສອນໃນທຸກລະດັບ ເຮັດໃຫ້ຂາດຄວາມຕໍ່ເນື່ອງ ແລະ ບໍ່ຄົບຕາມຫຼັກສູດການຮຽນ-ການສອນ; ແຕ່ພາຍຫຼັງການລະບາດຂອງພະຍາດເບົາບາງລົງ ໄດ້ມີການຮ່ວມມືກັນທັງພາກລັດ ແລະ ເອກະຊົນໃນການປັບປຸງລະບົບພື້ນຖານໂຄງລ່າງການສື່ສານທີ່ເອື້ອອຳນວຍໃຫ້ການຮຽນ-ການສອນ ເພື່ອຕອບສະໜອງໄດ້ການສຶກສາໄລຍະໃໝ່ ເຊັ່ນ: ລະບົບການສິດສອນແບບທາງໄກ, ລະບົບອິນເຕີເນັດ, ຄອມພິວເຕີ ຫຼື ໂທລະສັບສະມາດໂຟນ. ດ້ານສາທາລະນະສຸກ: ໄດ້ສືບຕໍ່ຂະຫຍາຍຕາໜ່າງສາທາລະນະສຸກ ແລະ ສະໜອງອຸປະກອນຕ່າງໆ ໂດຍສະເພາະໃນເຂດຊົນນະບົດຫ່າງໄກສອກຫຼີກ. ຄຽງຄູ່ກັນນັ້ນ, ກໍເອົາໃຈໃສ່ໃນການລົງໂຄສະນາຕິດຕາມ, ຊຸກຍູ້ ແລະ ແນະນຳ ເພື່ອປ້ອງກັນ ແລະ ສະກັດກັ້ນການລະບາດຂອງພະຍາດລະດູການ ແລະ ກຽມພ້ອມໃນການຮັບມືຢ່າງທັນການ. ດ້ານແຮງງານ ແລະ

ສະຫວັດດີການສັງຄົມ: ໄດ້ສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນທຸກຂັ້ນ ກວດກາ, ເກັບກຳ ແລະ ສັງລວມຂໍ້ມູນຂອງຜູ້ອອກແຮງງານລາວທີ່ກັບຈາກປະເທດເພື່ອນບ້ານໃນຊ່ວງການລະບາດຂອງພະຍາດໂຄວິດ-19 ແລະ ໄດ້ຈັດຫາວຽກເຮັດງານທຳໃຫ້ແຮງງານລາວທີ່ວ່າງງານ ແລະ ຜູ້ທີ່ໄດ້ຮັບຜົນກະທົບຍ້ອນຫຼຸດຜ່ອນແຮງງານໄດ້ປິດກິດຈະການຊົ່ວຄາວ ແລະ ຖາວອນໃນຫຼາຍຂົງເຂດການຜະລິດຢູ່ຂັ້ນທ້ອງຖິ່ນຕາມຕະຫຼາດແຮງງານ ເພື່ອເຮັດໃຫ້ຜູ້ອອກແຮງງານສາມາດກັບຄືນເຂົ້າສູ່ຕະຫຼາດແຮງງານທັງພາຍໃນ ແລະ ຕ່າງປະເທດ.

❖ <u>ການພັດທະນາພື້ນຖານໂຄງລ່າງ</u>:

ໄດ້ສືບຕໍ່ຊຸກຍູ້ ແລະ ຕິດຕາມການຈັດຕັ້ງປະຕິບັດບັນດາໂຄງການທີ່ເປັນເສັ້ນທາງເຊື່ອມຕໍ່ທີ່ຕິດພັນກັບຫຼາຍແຂວງໃນເຂດພາກເໜືອ ແລະ ຕິດຈອດກັບຊາຍແດນປະເທດເພື່ອນບ້ານ ເພື່ອບັນລຸເປົ້າໝາຍແຜນພັດທະນາເສດຖະກິດ-ສັງຄົມ ເປັນຕົ້ນ: ການເຊື່ອມໂຍງ-ເຊື່ອມຈອດ, ການຂົນສົ່ງສິນຄ້າໃຫ້ສາມາດເຂົ້າຫາເຂດການຜະລິດ, ການສັນຈອນໄປ-ມາຂອງປະຊາຊົນ, ເສັ້ນທາງຮັບໃຊ້ວຽກງານ ປກສ-ປກຊ ແລະ ແກ້ໄຂຄວາມທຸກຍາກ, ການສ້ອມປັບປຸງ ແລະ ສ້ອມແປງຊົນລະປະທານທີ່ເປ່ເພ່ໃຫ້ສາມາດນຳໃຊ້ຄືນໂດຍໄວເພື່ອຊຸກຍູ້ການຜະລິດ; ສືບຕໍ່ປັບປຸງ ແລະ ຍົກລະດັບບັນດາເສັ້ນທາງຫຼວງແຫ່ງຊາດ (ລວມທັງທາງເລກທີ 13), ເສັ້ນທາງຫຼວງຂອງແຂວງ ແລະ ຂອງເມືອງ ເພື່ອໃຫ້ສາມາດເຊື່ອມຕໍ່ກັບສະຖານີລົດໄຟ ແລະ ໃຫ້ເຂົ້າເຖິງເຂດການຜະລິດໄດ້; ປັບປຸງ ແລະ ຍົກລະດັບສະໜາມບິນຫ້ວຍຊາຍ, ສະໜາມບິນໜອງຄ້າງ ແລະ ບັນດາໂຄງການການກໍ່ສ້າງປ້ອງກັນຕາຝັ່ງເຈື່ອນ ແລະ ໂຄງການພັດທະນາຕົວເມືອງຕາມແລວອະນຸພາກພື້ນແມ່ນ້ຳຂອງ ໄລຍະ 2 ແລະ ອື່ນໆ.

**(2). ເຂດພາກກາງ**

ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຂອງບັນດາແຂວງໃນເຂດພາກກາງ ໃນໄລຍະ 2 ປີເຄິ່ງຜ່ານມາ ໄດ້ດຳເນີນໄປທ່າມກາງສະພາບການເສດຖະກິດຍັງມີການຜັນແປຢ່າງສັບສົນບວກກັບຜົນກະທົບທີ່ຕໍ່ເນື່ອງມາຈາກສະພາບການແຜ່ລະບາດຂອງພະຍາດໂຄວິດ-19 ທີ່ແກ່ຍາວ, ຊຶ່ງໄດ້ສົ່ງຜົນກະທົບຕໍ່ລະບົບເສດຖະກິດມະຫາພາກໂດຍລວມ ມີຄວາມຫຍຸ້ງຍາກ ແລະ ຄາດເດົາໄດ້ຍາກ ໂດຍສະເພາະຜົນກະທົບຢ່າງໜັກໜ່ວງໃນພາກການຜະລິດ ເປັນຕົ້ນ: ການຜະລິດສິນຄ້າກະສິກຳ, ການຜະລິດສິ້ນສ່ວນພາຫະນະ ແລະ ເຄື່ອງເອເລັກໂຕຣນິກ ແລະ ການຜະລິດອຸດສາຫະກຳປຸງແຕ່ງອື່ນໆ ລວມເຖິງການບໍລິການ ແລະ ທ່ອງທ່ຽວ ທີ່ມີທ່າອ່ຽງຫຼຸດລົງຫຼາຍສົມຄວນ ແລະ ການຂາດແຄນແຮງງານໃນພາກອຸດສາຫະກຳ ເຮັດໃຫ້ສະພາບການພັດທະນາໃນເຂດພາກກາງ ມີການຂະຫຍາຍຕົວໃນຈັງຫວະຊ້າລົງຫຼາຍໃນຊ່ວງຕົ້ນສະໄໝ, ແຕ່ມາໃນກາງປີ 2022 ທີ່ມີການເປີດປະເທດຄືນໃໝ່ ເຫັນວ່າສະພາບການຂະຫຍາຍຕົວຂອງເສດຖະກິດມີທ່າຂະຫຍາຍຕົວໃນຈັງຫວະທີ່ດີຂຶ້ນເລື້ອຍໆ ໂດຍສະເພາະການຜະລິດອຸດສາຫະກຳປຸງແຕ່ງໃນເຂດເສດຖະກິດພິເສດ, ການບໍລິການຂົນສົ່ງໂລຈິດສຕິກໃນເຂດທ່າບົກ ແລະ ການທ່ອງທ່ຽວແມ່ນມີນັກທ່ອງທ່ຽວເຂົ້າມາທ່ຽວໃນເຂດພາກກາງເພີ່ມຂຶ້ນໃນທ່າກ້າວກະໂດດ, ຊຶ່ງສາມາດຕີລາຄາໄດ້ດັ່ງນີ້:

❖ <u>ເຂດການຜະລິດກະສິກຳ</u>:

– ການຜະລິດພືດສະບຽງອາຫານ: ໃນໄລຍະຜ່ານມາ ທ່າແຮງການຜະລິດເຂົ້າລວມສະເລ່ຍຕໍ່ປີໃນເຂດພາກກາງສາມາດປະຕິບັດໄດ້ ປະມານ 513.509 ເຮັກຕາ, ຜົນຜະລິດ ປະມານ 2 ລ້ານກວ່າໂຕນ (ສະຖິຕິປີ 2022); ການປູກເຂົ້າທີ່ເປັນທ່າແຮງທີ່ສຸດໃນເຂດພາກກາງແມ່ນການປູກເຂົ້ານາປີ ກວມສູງເຖິງ 50% ຂອງຜົນຜະລິດເຂົ້າລວມໃນທົ່ວປະເທດ ແລະ ການປູກເຂົ້ານາແຊງ ກໍເປັນທ່າແຮງອັນດັບໜຶ່ງທຽບໃສ່ທຸກພາກ ກວມເອົາ 73% ຂອງຜົນຜະລິດລວມເຂົ້ານາແຊງຍ້ອນມີລະບົບຊົນລະປະທານທີ່ທັນສະໄໝ ສາມາດສະໜອງນ້ຳໄດ້ຢ່າງພຽງພໍ ແລະ ມີພື້ນທີ່ປູກເຂົ້າຂະໜາດໃຫຍ່. ແຂວງພົ້ນເດັ່ນໃນການຜະລິດເຂົ້າລວມໃນເຂດພາກກາງແມ່ນແຂວງສະຫວັນນະເຂດ, ຄຳມ່ວນ, ນະຄອນຫຼວງວຽງຈັນ ແລະ ແຂວງວຽງຈັນ ຕາມລຳດັບ. ນອກຈາກນັ້ນ, ຍັງມີການຜະລິດພືດສະບຽງອື່ນໆໃນເຂດພາກກາງ ເຊັ່ນ: ສາລີຫວານ, ເຜືອກມັນ, ພືດຜັກ, ໝາກໄມ້ ແລະ ພືດອື່ນໆ. ແຂວງທີ່ນິຍົມປູກຫຼາຍແມ່ນແຂວງສະຫວັນນະເຂດ, ບໍລິຄຳໄຊ, ຄຳມ່ວນ ແລະ ວຽງຈັນ ຕາມລຳດັບ.

– ການຜະລິດກະສິກຳເປັນສິນຄ້າ: ພົ້ນເດັ່ນໃນເຂດພາກກາງແມ່ນການປູກມັນຕົ້ນ ກວມເອົາເຖິງ 41,41% ຂອງຜົນຜະລິດມັນຕົ້ນລວມທັງໝົດ, ຢາສູບ, ຝ້າຍ, ອ້ອຍ, ໝາກໂມ ແລະ ພືດຕະກຸນຖົ່ວ. ແຂວງທີ່ນິຍົມປູກຫຼາຍແມ່ນແຂວງຄຳມ່ວນ, ສະຫວັນນະເຂດ, ບໍລິຄຳໄຊ, ວຽງຈັນ ແລະ ນະຄອນຫຼວງວຽງຈັນ ຕາມລຳດັບ. ສ່ວນການຜະລິດເປັນສິນຄ້າເພື່ອສົ່ງອອກພົ້ນເດັ່ນແມ່ນເຂົ້າຈ້າວຫອມສະຫວັນ ພັນທ່າເຊໂນ ໄປ ສປ ຈີນ ແລະ ປະເທດເຂດຢູໂລບ.

– ການລ້ຽງສັດ: ໄດ້ສົ່ງເສີມລ້ຽງແບບເປັນຟາມຢູ່ຫຼາຍທ້ອງຖິ່ນ ພົ້ນເດັ່ນແມ່ນຟາມໝູເພື່ອສົ່ງອອກໄປປະເທດຫວຽດນາມຢູ່ເມືອງສອງຄອນ ແລະ ເມືອງໄຊພູທອງ; ຟາມງົວ ຢູ່ເມືອງປາກຊັນ, ທ່າແຂກ, ໜອງບົກ ແລະ ເມືອງພີນ; ຟາມໄກ່ (ພັນໄຂ່ ແລະ ພັນຊີ້ນ) ແລະ ການລ້ຽງປາແມ່ນສາມາດຕອບສະໜອງການບໍລິໂພກໄດ້ຢ່າງພຽງພໍ. ເຖິງແມ່ນວ່າການຜະລິດກະສິກຳໂດຍລວມຢູ່ໃນເຂດພາກກາງ ຈະມີທ່າອ່ຽງທີ່ດີ ແຕ່ສັງເກດເຫັນວ່າຍັງມີບາງເຂດການຜະລິດທີ່ມີຄວາມຕ້ອງໃນການປັບປຸງການນຳໃຊ້ກົນຈັກ, ເຕັກນິກ-ເຕັກໂນໂລຊີໃນການລ້ຽງ, ນຳໃຊ້ວິທະຍາສາດເຂົ້າໃນການຜະລິດ, ຍົກລະດັບຄວາມຮູ້ຄວາມສາມາດຂອງຊາວກະສິກອນທາງດ້ານເຕັກນິກການປູກ-ການລ້ຽງ ແລະ ການປຸງແຕ່ງໃຫ້ຫຼາຍຂຶ້ນຕື່ມອີກ. ແຂວງທີ່ລ້ຽງສັດຫຼາຍກວ່າໝູ່ແມ່ນແຂວງສະຫວັນນະເຂດ, ຄຳມ່ວນ, ນະຄອນຫຼວງວຽງຈັນ, ວຽງຈັນ ແລະ ບໍລິຄຳໄຊ ຕາມລຳດັບ.

❖ <u>ເຂດອຸດສາຫະກຳ</u>:

ຂະແໜງອຸດສາຫະກຳປຸງແຕ່ງໃນບັນດາແຂວງພາກກາງ ຖືເປັນຂະແໜງການໜຶ່ງທີ່ໄດ້ຮັບຜົນກະທົບທີ່ສຸດຈາກການແຜ່ລະບາດຂອງພະຍາດໂຄວິດ-19 ຊຶ່ງສົ່ງຜົນເຮັດໃຫ້ການຜະລິດອຸດສາຫະກຳມີການຢຸດຊົ່ວຄາວໃນບາງຂະແໜງການຜະລິດ ໂດຍສະເພາະອຸດສາຫະກຳການຜະລິດສຳຄັນຫຼາຍແຫ່ງຢູ່ໃນເຂດເສດຖະກິດພິເສດ, ຫຼາຍທຸລະກິດແມ່ນດຳເນີນການຜະລິດ ແລະ ສົ່ງອອກສິນຄ້າຫຼຸດລົງ ເນື່ອງມາຈາກການຢຸດສັ່ງຊື້ສິນຄ້າຈາກຕະຫຼາດສາກົນ. ໃນເຂດພາກກາງມີໂຮງງານອຸດສາຫະກຳປຸງແຕ່ງ ທັງໝົດ 5.553 ແຫ່ງ ກວມເອົາອັດຕາສ່ວນສູງທີ່ສຸດ 62,43% ຂອງຈຳນວນໂຮງງານທັງໝົດໃນທົ່ວປະເທດ ຖືເປັນເຂດການຜະລິດອຸດສາຫະກຳປຸງແຕ່ງທີ່ມີທ່າແຮງອັນດັບໜຶ່ງຂອງປະເທດ; ແຂວງທີ່ມີການຜະລິດອຸດສາຫະກຳປຸງແຕ່ງພົ້ນເດັ່ນແມ່ນແຂວງສະຫວັນນະເຂດ, ນະຄອນຫຼວງວຽງຈັນ, ຄຳມ່ວນ, ວຽງຈັນ, ບໍລິຄຳໄຊ ແລະ ໄຊສົມບູນ ຕາມລຳດັບ. ຍ້ອນເປັນເຂດມີການລົງທຶນສູງຂອງພາກເອກະຊົນໃນພາກອຸດສາຫະກຳ ແລະ ມີເຂດເສດຖະກິດພິເສດຂະໜາດໃຫຍ່ທີ່ໄດ້ດຳເນີນການພັດທະນາແລ້ວ ແລະ ມີການຜະລິດສິນຄ້າອຸດສາຫະກຳສົ່ງອອກຈຳນວນຫຼາຍເປັນຕົ້ນ: ການຜະລິດເຄື່ອງເອເລັກໂຕຣນິກ, ສິ້ນສ່ວນອາໄຫຼ່ພາຫະນະ, ຜະລິດຕະພັນກ່ຽວກັບຮູບພາບ, ເຈ້ຍ ແລະ ຜະລິດຕະພັນເຈ້ຍ, ການຜະລິດໂລຫະຂັ້ນພື້ນຖານ, ອຸປະກອນໄຟຟ້າ ແລະ ອື່ນໆ.

❖ <u>ເຂດການຄ້າ, ບໍລິການ ແລະ ການທ່ອງທ່ຽວ</u>:

ເຂດການຄ້າ ແລະ ການບໍລິການຂົນສົ່ງໃນເຂດພາກກາງ ມີທ່າຂະຫຍາຍຕົວດີຂຶ້ນໃນກາງປີ 2022 ເນື່ອງຈາກການເປີດປະເທດຄືນໃໝ່ ໂດຍສະເພາະແມ່ນເຂດການຄ້າຊາຍແດນຕາມດ່ານສາກົນຕ່າງໆ ແລະ ດ່ານປະເພນີ, ລວມເຖິງການຂົນສົ່ງສິນຄ້າ-ໂດຍສານ ກໍມີຄວາມຄຶກຄື້ນຂຶ້ນ ເປັນຕົ້ນ: ດ່ານຂົວມິດຕະພາບແຫ່ງທີ 1, 2 ແລະ 3; ດ່ານສາກົນນ້ຳພາວ, ດ່ານນາເພົ້າ-ຈໍ່ຫລໍ, ດ່ານສາກົນສະຫວັນ-ລາວບາວ. ພົ້ນເດັ່ນແມ່ນການພັດທະນາດ້ານໂລຈິດສຕິກ ກໍຄື ການເປີດການນຳໃຊ້ທ່າບົກ 2 ແຫ່ງ ຄື: ທ່າບົກທ່ານາແລ້ງ, ນະຄອນຫຼວງວຽງຈັນ ແລະ ທ່າບົກສະຫວັນນະເຂດ, ແຂວງສະຫວັນນະເຂດ. ນອກນີ້, ກໍໄດ້ຊຸກຍູ້ບັນດາຜູ້ພັດທະນາເລັ່ງໃສ່ການພັດທະນາພື້ນຖານໂຄງລ່າງບັນດາທ່າບົກອື່ນໆ ເຊັ່ນ: ທ່າບົກທ່າແຂກມີຄວາມຄືບໜ້າ 15%. ດ້ານການທ່ອງທ່ຽວເຫັນວ່າຜູ້ປະກອບການຈຳນວນຫຼາຍໄດ້ເລັ່ງປັບປຸງບັນດາໂຮງແຮມ, ເຮືອນພັກ, ຮ້ານອາຫານ, ການບໍລິການທີ່ຕິດພັນ ແລະ ສະຖານທີ່ທ່ອງທ່ຽວ ເພື່ອຮອງຮັບນັກທ່ອງທ່ຽວທີ່ຫຼັ່ງໄຫຼເຂົ້າມາເລື້ອຍໆ ໂດຍສະເພາະສະຖານທີ່ທ່ອງທ່ຽວສຳຄັນທີ່ມີຊື່ສຽງຂອງປະເທດ. ແຂວງທີ່ມີທ່າແຮງດ້ານການທ່ອງທ່ຽວອັນດັບຕົ້ນໆຂອງປະເທດແມ່ນແຂວງຄຳມ່ວນ ແລະ ແຂວງວຽງຈັນ ທີ່ມີສະຖານທີ່ຂຶ້ນຊື່ດ້ານການທ່ອງທ່ຽວສີຂຽວ.

❖ <u>ການພັດທະນາດ້ານສັງຄົມ</u>:

ດ້ານການສຶກສາ: ໄດ້ສືບຕໍ່ປັບປຸງ ແລະ ຍົກລະດັບການຮຽນ-ການສອນໃນເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ໃຫ້ມີຄຸນນະພາບຢ່າງທົ່ວເຖິງ; ສ້າງເງື່ອນໄຂໃນການເຂົ້າເຖິງລະບົບການຮຽນແບບທາງໄກໃນຊ່ວງການແຜ່ລະບາດຂອງພະຍາດໂຄວິດ-19 ເພື່ອໃຫ້ມີການຮຽນ-ການສອນແບບຕໍ່ເນື່ອງ ແລະ ຫຼີກລ້ຽງການປະລະການຮຽນ ເພື່ອບັນລຸຕົວຊີ້ບອກຂອງຂະແໜງສຶກສາທີ່ກຳນົດໄວ້. ດ້ານສາທາລະນະສຸກ: ໄດ້ເອົາໃຈໃສ່ເປັນພິເສດໃນການປ້ອງກັນ, ສະກັດກັ້ນ ແລະ ຕອບໂຕ້ການແຜ່ລະບາດຂອງພະຍາດໂຄວິດ-19 ທີ່ສົ່ງຜົນກະທົບໂດຍກົງຕໍ່ການດຳລົງຊີວິດຂອງປະຊາຊົນ ແລະ ຕິດຕາມການລະບາດຂອງພະຍາດລະດູການ ເພື່ອກະກຽມແຜນຕອບໂຕ້ໄດ້ທັນເວລາ. ດ້ານແຮງງານ ແລະ ສະຫວັດດີການສັງຄົມ: ໄດ້ສຸມໃສ່ການເກັບກຳຈຳນວນແຮງງານທີ່ກັບຄືນມາປະເທດ ເພື່ອຊຸກຍູ້ໃຫ້ສາມາດກັບຄືນສູ່ຕະຫຼາດແຮງງານ. ນອກນີ້, ກໍໄດ້ຊຸກຍູ້ ແລະ ລະດົມໃຫ້ຫົວໜ່ວຍວິສາຫະກິດ ເອົາໃຈໃສ່ເຂົ້າຮ່ວມວຽກງານປະກັນສັງຄົມ.

❖ <u>ການພັດທະນາພື້ນຖານໂຄງລ່າງ</u>:

ສືບຕໍ່ປັບປຸງ ແລະ ບູລະນະບັນດາເສັ້ນທາງຫຼວງແຫ່ງຊາດ ເລກທີ 13 ໃຕ້, ບັນດາທາງຫຼວງຂອງແຂວງ ແລະ ຂອງເມືອງ ເພື່ອເຊື່ອມຕໍ່ເຂົ້າເຂດການຜະລິດທີ່ມີທ່າແຮງ ແລະ ໃຫ້ສາມາດເຊື່ອມໂຍງ-ເຊື່ອມຈອດພາຍໃນລະຫວ່າງທ້ອງຖິ່ນ ແລະ ຂົນສົ່ງສິນຄ້າໄປປະເທດໃກ້ຄຽງ ແລະ ພາກພື້ນ; ສືບຕໍ່ໃນການຊຸກຍູ້ ແລະ ຕິດຕາມການຈັດຕັ້ງປະຕິບັດບັນດາໂຄງການຂະໜາດໃຫຍ່ທີ່ສຳຄັນ ໃນການຂັບເຄື່ອນໃນການພັດທະນາເສດຖະກິດ-ສັງຄົມ ເປັນຕົ້ນ: ໂຄງການກໍ່ສ້າງປ້ອງກັນຕະຝັ່ງເຈື່ອນພັດທະນາແຄມຂອງ ໄລຍະ 2 ແຕ່ ຫຼັກ 3 ເມືອງສີນາກ ຫາ ບ້ານຫາດດອກແກ້ວ, ເມືອງຫາດຊາຍຟອງ, ນະຄອນຫຼວງວຽງຈັນ; ໂຄງການພັດທະນາເສັ້ນທາງແຕ່ເມືອງໄຊຈຳພອນ-ຊາຍແດນແຫ່ງທຸຍ ສສ.ຫວຽດນາມ; ໂຄງການກໍ່ສ້າງເສັ້ນທາງເທດສະບານເມືອງປາກຊັນ (ເບີ 1, 2, 3, 4); ໂຄງການກໍ່ສ້າງທາງປູຢາງ 2 ຊັ້ນເສັ້ນທາງຫຼວງແຫ່ງຊາດ 1G ຫາຊາຍແດນ, ແຂວງສາລະວັນ; ໂຄງການສົມທົບທຶນຍົກຍ້າຍສິ່ງກີດຂວາງພັດທະນາຕົວເມືອງແລວທາງອະນຸພາກພື້ນແມ່ນ້ຳຂອງ IV ແຂວງຄຳມ່ວນ (ADB ເງິນກູ້ຢືມດອກເບ້ຍຕໍ່າ); ໂຄງການພັດທະນາດ່ານສາກົນນາເພົ້າ-ຈໍ່ຫຼໍ່ ແຂວງຄຳມ່ວນ; ໂຄງການສົມທົບທຶນຕົວເມືອງຕາມແລວເສດຖະກິດອະນຸພາກພື້ນ ແຂວງສະຫວັນນະເຂດ (ADB ເງິນກູ້ຢືມດອກເບ້ຍຕໍ່າໄລຍະສືບຕໍ່).

**(3). ເຂດພາກໃຕ້**

ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຂອງບັນດາແຂວງໃນເຂດພາກໃຕ້ ໃນໄລຍະ 2 ປີເຄິ່ງຜ່ານມາ ໂດຍລວມຍັງສາມາດສືບຕໍ່ຂະຫຍາຍຕົວໃນຈັງຫວະທີ່ຟື້ນຕົວດີຂຶ້ນ ໂດຍສະເພາະບັນດາຂະແໜງການຜະລິດ, ການບໍລິການ ແລະ ການທ່ອງທ່ຽວ, ເຖິງແມ່ນວ່າຈະໄດ້ຮັບຜົນກະທົບຈາກຫຼາຍປັດໄຈທັງພາຍໃນ ແລະ ພາຍນອກກໍຕາມ ເປັນຕົ້ນ: ສະພາບການລະບາດຂອງພະຍາດໂຄວິດ-19 ທີ່ແກ່ຍາວ, ໄພພິບັດທຳມະຊາດ, ການລະບາດຂອງພະຍາດຕາມລະດູການ ແລະ ບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ທີ່ເປັນສິ່ງທ້າທາຍ ແລະ ເປັນແຮງກົດດັນຕໍ່ການຈັດຕັ້ງປະຕິບັດບັນດາຄາດໝາຍຕົ້ນຕໍ ແລະ ວຽກຈຸດສຸມຂອງແຜນພັດທະນາເສດຖະກິດ-ສັງຄົມຂອງບັນດາແຂວງໃນເຂດພາກໃຕ້, ຊຶ່ງສາມາດຕີລາຄາດັ່ງນີ້:

❖ <u>ເຂດການຜະລິດກະສິກຳ</u>:

– ການຜະລິດພືດສະບຽງອາຫານ: ໃນໄລຍະຜ່ານມາ ທ່າແຮງການຜະລິດເຂົ້າລວມສະເລ່ຍຕໍ່ປີໃນເຂດພາກໃຕ້ສາມາດປະຕິບັດໄດ້ 241.779 ເຮັກຕາ, ຜົນຜະລິດປະມານ 986.405 ໂຕນ (ສະຖິຕິປີ 2022); ພົ້ນເດັ່ນທີ່ສຸດແມ່ນການປູກເຂົ້ານາປີທີ່ເປັນທ່າແຮງຂອງພາກ ກວມເອົາເຖິງ 90% ຂອງຜົນຜະລິດເຂົ້າລວມ. ແຂວງພົ້ນເດັ່ນໃນການປູກເຂົ້າລວມໃນເຂດພາກໃຕ້ແມ່ນແຂວງຈຳປາສັກ, ສາລະວັນ ແລະ ອັດຕະປື ຕາມລຳດັບ. ນອກຈາກນັ້ນ, ຍັງມີການຜະລິດພືດສະບຽງອື່ນໆໃນເຂດພາກໃຕ້ ເຊັ່ນ: ສາລີຫວານ, ເຜືອກມັນ, ພືດຜັກຕ່າງໆ, ໝາກໄມ້ ແລະ ພືດເສດຖະກິດອື່ນໆ. ແຂວງທີ່ປູກຫຼາຍແມ່ນແຂວງຈຳປາສັກ, ສາລະວັນ, ອັດຕະປື ແລະ ເຊກອງ ຕາມລຳດັບ.

– ການຜະລິດກະສິກຳເປັນສິນຄ້າ: ໃນໄລຍະຜ່ານມາ ທ່າແຮງການຜະລິດພືດເປັນສິນຄ້າໃນເຂດພາກໃຕ້ແມ່ນ ມັນຕົ້ນ, ອ້ອຍ, ໝາກກ້ວຍ, ໝາກໂມ ແລະ ພືດສິນຄ້າທີ່ເປັນທ່າແຮງທີ່ສຸດຂອງພາກໃຕ້ແມ່ນການຜະລິດກາເຟ ສາມາດຜະລິດໄດ້ 167.000 ໂຕນຕໍ່ປີ ກວມເອົາ 97,79% ຂອງຜົນຜະລິດລວມຂອງກາເຟ. ແຂວງທີ່ປູກຫຼາຍແມ່ນແຂວງຈຳປາສັກ, ສາລະວັນ, ອັດຕະປື ແລະ ເຊກອງ ຕາມລຳດັບ. ນອກນັ້ນ, ໄດ້ມີການສົ່ງເສີມປູກພືດກະສິກຳເປັນສິນຄ້າຕາມສັນຍາເຈລະຈາເປີດເຕັກນິກຕະຫຼາດ ເປັນຕົ້ນ: ກາເຟ, ຢາງພາລາ, ມັນຕົ້ນ, ສາລີແຂງ, ໝາກກ້ວຍ, ອ້ອຍ, ຊາຕົ້ນນໍ້າ, ໝາກນ່ອດ, ໝາກເຜັດ ແລະ ພືດກະສິກຳອື່ນໆ ລວມເຖິງພືດທີ່ແຂວງຈຳປາສັກເຮັດສັນຍາກະສິກຳ Contract Farmming ເພື່ອປ້ອນໂຮງງານພາຍໃນ ແລະ ສົ່ງອອກຕ່າງປະເທດ. ການສົ່ງອອກຜົນຜະລິດກະສິກຳທີ່ເປັນສິນຄ້າ ແລະ ເປັນທີ່ຕ້ອງການຂອງຕະຫຼາດຈຳນວນຫຼາຍ ແມ່ນຜົນຜະລິດກາເຟ (ລວມທັງກາເຟສຳເລັດຮູບ), ເຂົ້າກິນ (ເຂົ້າໜຽວ ແລະ ເຂົ້າຈ້າວ) ເພື່ອສົ່ງອອກໄປ ສປ ຈີນ.

– ດ້ານການລ້ຽງສັດ: ແມ່ນມີການລ້ຽງແບບເປັນຟາມຢູ່ຫຼາຍເມືອງ ພົ້ນເດັ່ນແມ່ນການເຮັດຟາມໝູ ມີ 131 ຟາມ ມີໝູຈຳນວນ 170.444 ໂຕ, ຟາມງົວ ມີ 107 ຟາມ ມີງົວຈຳນວນ 29.429 ໂຕ, ຟາມໄກ່ (ໄກ່ພັນໄຂ່ ແລະ ໄກ່ພັນຊີ້ນ) ມີ 76 ຟາມ ມີໄກ່ທັງໝົດ ຈຳນວນ 1.125.850 ໂຕ ແລະ ປາ (ປາທຳມະຊາດ ແລະ ປາລ້ຽງ) ສາມາດຜະລິດໄດ້ 27.422 ໂຕນ(ສະຖິຕິປີ 2022), ຊຶ່ງສາມາດສະໜອງຊີ້ນ, ໄຂ່ ແລະ ປາ ຕໍ່ການບໍລິໂພກຂອງປະຊາຊົນໄດ້ດີພໍສົມຄວນ.

❖ <u>ເຂດອຸດສາຫະກຳ</u>:

ການພັດທະນາຂະແໜງອຸດສາຫະກຳປຸງແຕ່ງໃນເຂດພາກໃຕ້ ເຖິງແມ່ນວ່າໃນຊ່ວງປີຜ່ານມາຈະໄດ້ຮັບຜົນກະທົບຢ່າງໜັກໜ່ວງຈາກການລະບາດຂອງພະຍາດໂຄວິດ-19 ກໍຕາມ, ແຕ່ຍັງສາມາດສືບຕໍ່ດຳເນີນການຜະລິດໄດ້ຢ່າງຕໍ່ເນື່ອງ ໂດຍສະເພາະອຸດສາຫະກຳປຸງແຕ່ງອາຫານ ແລະ ເຄື່ອງດື່ມ ເປັນຕົ້ນ: ການປຸງແຕ່ງຈາກຜົນຜະລິດກະສິກຳ (ກາເຟເມັດ, ຢາງພາລາກ້ອນ, ມັນຕົ້ນອົບແຫ້ງ, ນໍ້າໝາກໄມ້ ແລະ ອື່ນໆ). ບັນດາເຂດເສດຖະກິດພິເສດ ແລະ ເຂດອຸດສາຫະກຳຫຼາຍແຫ່ງແມ່ນໄດ້ຮັບການພັດທະນາດ້ານພື້ນຖານໂຄງລ່າງຢ່າງຕໍ່ເນື່ອງ ເຊັ່ນ: ເຂດອຸດສາຫະກຳປາກເຊ-ຍີ່ປຸ່ນ, ເຂດເສດຖະກິດໃໝ່ສີພັນດອນ, ເຂດເສດຖະກິດວັງເຕົ່າ-ໂພນທອງ, ເຂດອຸດສາຫະກາຫຼັກ 16 ເມືອງບາຈຽງ, ເຂດອຸດສາຫະກຳຫຼັກ 30 ເມືອງຊະນະສົມບູນ ແລະ ເຂດສາມຫຼ່ຽມພັດທະນາແຂວງອັດຕະປື ເພື່ອຮອງຮັບການເຂົ້າມາລົງທຶນຂອງເອກະຊົນທັງພາຍໃນ ແລະ ຕ່າງປະເທດ. ປັດຈຸບັນໃນເຂດພາກໃຕ້ມີໂຮງງານອຸດສາຫະກຳປຸງແຕ່ງ ທັງໝົດ 1.558 ແຫ່ງ ກວມເອົາ 20% ຂອງຈຳນວນໂຮງງານທັງໝົດໃນທົ່ວປະເທດ ຖືເປັນເຂດການຜະລິດອຸດສາຫະກຳປຸງແຕ່ງທີ່ມີທ່າແຮງດ້ານການຜະລິດແປຮູບຜົນຜະລິດຈາກກະສິກຳຂອງປະເທດ ຍ້ອນເປັນເຂດທີ່ເປັນແຫຼ່ງມີວັດຖຸດິບຈາກຜົນຜະລິດກະສິກຳຈຳນວນຫຼາຍ; ແຂວງທີ່ພົ້ນເດັ່ນໃນການຜະລິດອຸດສາຫະກຳປຸງແຕ່ງແມ່ນແຂວງຈຳປາສັກ, ສາລະວັນ, ເຊກອງ ແລະ ອັດຕະປື ຕາມລຳດັບ.

❖ <u>ເຂດການຄ້າ, ບໍລິການ ແລະ ການທ່ອງທ່ຽວ</u>:

ດ້ານການຄ້າ ແລະ ການບໍລິການຂົນສົ່ງ ແມ່ນໄດ້ຮັບການພັດທະນາ ແລະ ມີທ່າອ່ຽງຂະຫຍາຍຕົວດີຂຶ້ນໃນຈັງຫວະຕໍ່ເນື່ອງ ໂດຍສະເພາະແມ່ນເຂດການຄ້າຕາມຊາຍແດນດ່ານສາກົນ ແລະ ດ່ານປະເພນີຕ່າງໆ ທີ່ຕິດຈອດກັບບັນດາປະເທດເພື່ອນບ້ານ; ການສົ່ງອອກສິນຄ້າກະສິກຳ, ສັດລ້ຽງ ແລະ ຜະລິດຕະພັນແປຮູບຈາກຜົນຜະລິດກະສິກຳ ຕາມສັນຍາເຈລະຈາເປີດເຕັກນິກຕະຫຼາດກັບຕ່າງປະເທດ ແລະ ການບໍລິການຂົນສົ່ງສິນຄ້າຜ່ານແດນໂດຍຜ່ານທ່າບົກ ກໍຄື ທ່າບົກຈຳປາສັກທີ່ໄດ້ເປີດນຳໃຊ້ແຕ່ທ້າຍປີ 2021 ເປັນຕົ້ນມາ ແລະ ການບໍລິການຂົນສົ່ງໂດຍສານທີ່ຫຼາຍສາຍການບິນໄດ້ກັບຄືນມາໃຫ້ບໍລິການເສັ້ນທາງຕ່າງໆຄືນໃໝ່ ເຮັດໃຫ້ຂະແໜງທ່ອງທ່ຽວ ແລະ ພາກສ່ວນບໍລິການອື່ນໆທີ່ຕິດພັນ ເຊັ່ນ: ໂຮງແຮມ, ຮ້ານອາຫານ, ສະຖານທີ່ທ່ອງທ່ຽວ ແລະ ບໍລິການອື່ນໆ ໄດ້ຮັບການປັບປຸງພື້ນຖານໂຄງລ່າງ ແລະ ການບໍລິການໃຫ້ໄດ້ມາດຕະຖານສາກົນ ແລະ ສາມາດກັບຄືນມາບໍລິການໄດ້ຢ່າງປົກກະຕິ. ແຂວງທີ່ມີທ່າແຮງພົ້ນເດັ່ນໃນການທ່ອງທ່ຽວທີ່ເປັນຈຸດໝາຍປາຍທາງໃນເຂດພາກໃຕ້ແມ່ນແຂວງຈຳປາສັກ, ຮອງລົງມາແມ່ນແຂວງສາລະວັນ, ອັດຕະປື ແລະ ເຊກອງ ຕາມລຳດັບ.

❖ <u>ການພັດທະນາດ້ານສັງຄົມ</u>:

ດ້ານການສຶກສາ: ໄດ້ເອົາໃຈໃສ່ເປັນພິເສດໃນການປ້ອງກັນ, ສະກັດກັ້ນ ແລະ ຕອບໂຕ້ການແຜ່ລະບາດຂອງພະຍາດໂຄວິດ-19 ເຊິ່ງສິ່ງຜົນກະທົບໂດຍກົງຕໍ່ຊີວິດຂອງລູກຫຼານ, ນັກຮຽນ-ນັກສຶກສາ ໂດຍການປັບປຸງການຮຽນ-ການສອນ ໃຫ້ມີຄວາມສອດຄ່ອງກັບສະພາບການປ່ຽນແປງໃໝ່ ດ້ວຍລະບົບການຮຽນ-ການສອນແບບທາງໄກ ແລະ ສະໜອງອຸປະກອນການສຶກສາຕ່າງໆ ເພື່ອຮອງຮັບການຮຽນ-ການສອນໃນຮູບແບບໃໝ່. ດ້ານສາທາລະນະສຸກ: ໄດ້ເອົາໃຈໃສ່ໃນການລົງເຜີຍແຜ່ມາດຕະການໃນການປ້ອງກັນ ແລະ ຄວບຄຸມການແຜ່ລະບາດຂອງພະຍາດໂຄວິດ-19 ໃຫ້ແກ່ພະແນກການ-ກົມກອງຂັ້ນແຂວງ, ສະຖານບັນການສຶກສາ, ບໍລິສັດ ແລະ ພາກເອກກະຊົນໃນບັນດາແຂວງພາກໃຕ້; ລະດົມປະຊາຊົນໃຫ້ໄດ້ຮັບການສັກວັກຊີນ ແລະ ຕິດຕາມເຝົ້າລະວັງພະຍາດຕາມລະດູການ ເພື່ອກະກຽມແຜນຕອບໂຕ້ໃຫ້ທັນເວລາ. ດ້ານແຮງງານ ແລະ ສະຫວັດດີການສັງຄົມ: ໄດ້ໃຫ້ການຊ່ວຍເຫຼືອ ແລະ ຈັດສົມຜູ້ວ່າງງານເຂົ້າໃສ່ຕໍາແໜ່ງງານຕາມຄວາມຕ້ອງການຂອງຜູ້ປະກອບການ ລວມທັງໄດ້ມີການໂຄສະນາ, ສຶກສາອົບຮົມແຮງງານທີ່ມາຈາກຕ່າງປະເທດໃຫ້ຮັບຮູ້ ແລະ ເຂົ້າໃຈແຈ້ງກ່ຽວກັບແນວທາງນະໂຍບາຍພັກ ແລະ ລັດ ເພື່ອຊຸກຍູ້ ແລະ ລະດົມໃຫ້ເຂົາເຈົ້າເຮັດວຽກພາຍໃນປະເທດຫຼາຍຂຶ້ນ ທົດແທນການນໍາເຂົ້າສີມືແຮງງານຈາກພາຍນອກ.

❖ <u>ການພັດທະນາພື້ນຖານໂຄງລ່າງ</u>:

ສືບຕໍ່ຊຸກຍູ້ການຈັດຕັ້ງປະຕິບັດບັນດາໂຄງການທີ່ສໍາຄັນ ເພື່ອບັນລຸເປົ້າໝາຍແຜນພັດທະນາເສດຖະກິດ-ສັງຄົມ, ການເຊື່ອມໂຍງ-ເຊື່ອມຈອດ, ການຂົນສົ່ງສິນຄ້າຈາກຖານການຜະລິດ, ການສັນຈອນໄປ-ມາຂອງປະຊາຊົນ, ເສັ້ນທາງຮັບໃຊ້ວຽກງານ ປກສ-ປກຊ ແລະ ແກ້ໄຂຄວາມທຸກຍາກ ດໍາເນີນການກໍ່ສ້າງໃຫ້ສໍາເລັດ ແລະ ນໍາໃຊ້ໄດ້ໄວ ເປັນຕົ້ນ: ໂຄງການສົມທົບທຶນພັດທະນາແຄມຂອງແຂວງຈໍາປາສັກ ທຶນຂອງ ສສ.ເກົາຫຼີໃຕ້ (ເງິນກູ້ດອກເບ້ຍຕໍ່າ); ໂຄງການກໍ່ສ້າງທາງປູຢາງສາມຂາ-ບ້ານຫຽງ-ຊ່ອງຕາອູ່, ເມືອງສຸຂຸມາ; ໂຄງການກໍ່ສ້າງດ່ານສາກົນວັງເຕົ່າ, ເມືອງໂພນທອງ (ຊາຍແດນລາວ-ໄທ); ໂຄງການກໍ່ສ້າງທາງປູຢາງ 2 ຊັ້ນ ເສັ້ນທາງເລກທີ 26905 (S3 ຫຼັກໝາຍ) ແຕ່ແຍກທາງ 15 (ດ່ານລະໄລ) ຫາຊາຍແດນລາວ-ຫວຽດນາມ, ແຂວງເທື່ອທຽນເຫ້ວ, ຄວາມຍາວ 22,55 ກມ; ໂຄງການກໍ່ສ້າງເສັ້ນທາງຫຼວງແຫ່ງຊາດ ເລກທີ 16B ເຊກອງ-ດາກຈຶງ ແລະ ແຕ່ດາກຈຶງ ຫາ ຊາຍແດນຫວຽດນາມ; ໂຄງການກໍ່ສ້າງຂົວເບຕົງ 7 ແຫ່ງ ເສັ້ນທາງເຊກອງ-ເມືອງກະລຶມໃໝ່; ໂຄງການກໍ່ສ້າງເສັ້ນທາງປູຢາງ 2 ຊັ້ນ ເລກທີ 18A ບ້ານປີນດົງ ຫາ ຂົວຫ້ວຍອຸກ, ເມືອງສະໜາມໄຊ ຈາກການຊົດເຊີຍເຂື່ອນເຊປຽນ-ເຊນໍ້ານ້ອຍ; ໂຄງການກໍ່ສ້າງເສັ້ນທາງຍຸດທະສາດລຽບຊາຍແດນລາວ-ຫວຽດນາມ-ກໍາປູເຈຍ ຟໍ 1 ຫາ ຟໍ 6/6; ໂຄງການຟື້ນຟູ ແລະ ສ້ອມແປງເສັ້ນທາງ 18B ເປັນເສັ້ນທາງຫຼວງແຫ່ງຊາດ (ດ່ານສາກົນພູເກືອ-ເບີອີ) ເພື່ອການສັນຈອນສະດວກສະບາຍ, ຮັບປະກັນການຂົນສົ່ງ ແລະ ຈໍລະຈອນສິນຄ້າ.

<u>ສິ່ງທ້າທາຍ</u>: ການພັດທະນາເຂດແຄວ້ນຍັງເຫັນວ່າການສະໜອງໂຄງລ່າງພື້ນຖານ ແລະ ສິ່ງອໍານວຍຄວາມສະດວກໃຫ້ສົມຄູ່ກັບການກາຍເປັນຕົວເມືອງ ຍັງມີຂໍ້ຈໍາກັດ; ຕົວຢ່າງໃນບັນດາຕົວເມືອງໃຫ່ຍຂອງແຂວງ ເຊັ່ນ: ນະຄອນຫຼວງວຽງຈັນ ຍັງບໍ່ສາມາດສະໜອງໂຄງລ່າງພື້ນຖານໃຫ້ພຽງພໍກັບການເພີ່ມຂຶ້ນຂອງພາຫະນະສ່ວນບຸກຄົນ ແລະ ການຂົນສົ່ງສາທາລະນະຍັງບໍ່ທັນຂະຫຍາຍໃຫ້ບໍລິການໄດ້ຄອບຄຸມໃນທຸກພື້ນທີ່ໃນຕົວເມືອງ. ນອກຈາກນີ້, ການຂະຫຍາຍຕາໜ່າງການສະໜອງນໍ້າປະປາ ແລະ ລະບົບສຸຂະອະນາໄມທີ່ເພີ່ມຂຶ້ນຢ່າງໄວວາ ແຕ່ການຈັດການນໍ້າເສຍ ຍັງບໍ່ເປັນລະບົບຄົບຊຸດເທົ່າທີ່ຄວນ;[6] ແຜນພັດທະນາຂອງທ້ອງຖິ່ນ ຍັງບໍ່ທັນມີແຜນລະອຽດໃນການພັດທະນາເທົ່າທີ່ຄວນ ລວມທັງແຜນການພັດທະນາຮ່ວມກັນລະຫວ່າງແຂວງກັບແຂວງ. ຊຶ່ງການວາງແຜນພັດທະນາທ້ອງຖິ່ນ ໂດຍອີງໃສ່ສະພາບການຂອງເຂດໃນພາກເໜືອ, ພາກກາງ ແລະ ພາກໃຕ້ ຈະຊ່ວຍປະກອບສ່ວນຢ່າງຫຼວງຫຼາຍໃຫ້ແກ່ການພັດທະນາແບບມີສ່ວນຮ່ວມ

[6] Access to improved water supply increased from 40 to 76 percent, while access to improved sanitation increased from 21 to 74 percent between 1995 and 2015. See WHO & UNICEF (2015) Progress on Sanitation and Drinking Water Report

ແລະ ຍືນຍົງຂອງ ສປປ ລາວ. ການພັດທະນາທ້ອງຖິ່ນນີ້ ຈະຕ້ອງໄດ້ສົ່ງເສີມ ແລະ ຮອງຮັບການຈັດສັນການພັດທະນາຕົວເມືອງຢ່າງເປັນລະບົບໃນອານາຄົດ.

## 5.4 ແຜນວຽກຈຸດສຸມທີ 4: ການພັດທະນາຕົວເມືອງ ແລະ ເຂດເສດຖະກິດພິເສດໃຫ້ກາຍເປັນຖານການຜະລິດ, ການລົງທຶນ, ການຄ້າ ແລະ ການທ່ອງທ່ຽວ

### 5.4.1 ການພັດທະນາຕົວເມືອງ:

1) ການຈັດຕັ້ງປະຕິບັດໂຄງການພັດທະນາຕົວເມືອງໃຫ້ສຳເລັດຢູ່ 3 ນະຄອນ, ຕົວເມືອງຕາມແລວອະນຸພາກພື້ນແມ່ນ້ຳຂອງ GMS ໃຫ້ສຳເລັດຢ່າງໜ້ອຍ 4 ຕົວເມືອງ ເພື່ອປັບປຸງທາງດ້ານໂຄງລ່າງພື້ນຖານ ແລະ ສິ່ງແວດລ້ອມຕົວເມືອງ:

+ ການພັດທະນາຕົວເມືອງ ແລະ ປັບປຸງສິ່ງແວດລ້ອມຢູ່ 3 ນະຄອນ: ສຳເລັດການປັບປຸງສິ່ງແວດລ້ອມນະຄອນປາກເຊ, ແຂວງຈຳປາສັກ ແລະ ສຳເລັດການພັດທະນາຕົວເມືອງນະຄອນໄກສອນພົມວິຫານ, ແຂວງສະຫວັນນະເຂດທີ່ນອນໃນໂຄງການພັດທະນາຕົວເມືອງຕາມແລວທາງເສດຖະກິດ ຕາເວັນອອກ-ຕາເວັນຕົກ ອະນຸພາກພື້ນແມ່ນ້ຳຂອງ (GMS1). ພ້ອມດຽວກັນນີ້, ກຳລັງກະກຽມໂຄງການພັດທະນາຕົວເມືອງ ແລະ ປັບປຸງສິ່ງແວດລ້ອມນະຄອນຫຼວງພະບາງ, ແຂວງຫຼວງພະບາງ ປັດຈຸບັນແມ່ນສຳເລັດການສຶກສາເສດຖະກິດ-ເຕັກນິກເບື້ອງຕົ້ນ (Pre-FS).

+ ການພັດທະນາຕົວເມືອງຕາມແລວອະນຸພາກພື້ນແມ່ນ້ຳຂອງ: ສຳເລັດໂຄງການ GMS1 ທີ່ນະຄອນໄກສອນພົມວິຫານ, ແຂວງສະຫວັນນະເຂດ; ໂຄງການ GMS2 ທີ່ເມືອງຫ້ວຍຊາຍ, ແຂວງບໍ່ແກ້ວ ແລະ ເມືອງນ້ຳທາ, ແຂວງຫຼວງນ້ຳທາ ແລະ ກຳລັງຈັດຕັ້ງປະຕິບັດໂຄງການ GMS4 ທີ່ເມືອງປາກຊັນ, ແຂວງບໍລິຄຳໄຊ ມີຄວາມຄືບໜ້າ 57,10% ແລະ ເມືອງທ່າແຂກ, ແຂວງຄຳມ່ວນ ມີຄວາມຄືບໜ້າ 41%.

2) ນະຄອນຫຼວງວຽງຈັນ, 3 ນະຄອນ ແລະ ຢ່າງໜ້ອຍ 4 ຕົວເມືອງຕາມແລວອະນຸພາກພື້ນແມ່ນ້ຳຂອງມີສະໜາມກຳຈັດຂີ້ເຫຍື້ອທີ່ໄດ້ມາດຕະຖານຖືກຫຼັກອະນາໄມ:

ສະໜາມກຳຈັດຂີ້ເຫຍື້ອ: (1) ນະຄອນຫຼວງວຽງຈັນ ມີ 1 ແຫ່ງ (ສະໜາມຂີ້ເຫຍື້ອ ຫຼັກ 32, ເມືອງໄຊທານີ) ປັດຈຸບັນກຳລັງສຶກສາຄວາມເປັນໄປໄດ້ໃນການປັບປຸງ ແລະ ພັດທະນາສະໜາມຂີ້ເຫຍືອດັ່ງກ່າວໃຫ້ໄດ້ມາດຕະຖານ; (2) ນະຄອນຫຼວງພະບາງ, ແຂວງຫຼວງພະບາງ ມີ 1 ແຫ່ງ (ສະໜາມຂີ້ເຫຍື້ອ ຫຼັກ 8) ເປັນສະໜາມຂີ້ເຫຍື້ອເປີດມີແຜນຈະປັບປຸງໃຫ້ເປັນສະໜາມຂີ້ເຫຍື້ອຖືກສຸຂະອະນາໄມຄືກັບສະໜາມຂີ້ເຫຍື້ອປິດ; (3) ນະຄອນໄກສອນພົມວິຫານ, ແຂວງສະຫວັນນະເຂດ ມີ 1 ແຫ່ງ ແລະ (4) ນະຄອນປາກເຊ, ແຂວງຈຳປາສັກ ມີ 1 ແຫ່ງ ເປັນສະໜາມຂີ້ເຫຍື້ອທີ່ຖືກສຸຂະອະນາໄມ ແລະ ໄດ້ປັບປຸງສຳເລັດໃນເດືອນທັນວາປີ 2021. ນອກຈາກນັ້ນ, ພາຍໃຕ້ໂຄງການ GMS ໄດ້ມີການປັບປຸງສະໜາມຂີ້ເຫຍື້ອຢູ່ບັນດາຕົວເມືອງໃຫ້ໄດ້ມາດຕະຖານ ເຊັ່ນ: ສຳເລັດການກໍ່ສ້າງສະໜາມຂີ້ເຫຍື້ອເມືອງຫ້ວຍຊາຍ, ແຂວງບໍ່ແກ້ວ ແລະ ເມືອງນ້ຳທາ, ແຂວງຫຼວງນ້ຳທາ; ກຳລັງຈັດຕັ້ງປະຕິບັດການກໍ່ສ້າງສະໜາມຂີ້ເຫຍື້ອເມືອງປາກຊັນ, ແຂວງບໍລິຄຳໄຊ ມີຄວາມຄືບໜ້າ 92,74% ແລະ ເມືອງທ່າແຂກ, ແຂວງຄຳມ່ວນມີຄວາມຄືບໜ້າ 43,12%.

3) ນະຄອນຫຼວງວຽງຈັນ, 3 ນະຄອນ ແລະ ຢ່າງໜ້ອຍ 4 ຕົວເມືອງຕາມແລວອະນຸພາກພື້ນແມ່ນ້ຳຂອງມີລະບົບການບຳບັດນ້ຳເປື້ອນທີ່ເໝາະສົມ: ສຸມໃສ່ຈັດຕັ້ງປະຕິບັດໂຄງການສ້າງຄວາມອາດສາມາດຄຸ້ມຄອງນ້ຳເປື້ອນ ແລະ ຂີ້ເຫຍື້ອສຳລັບປັບປຸງສິ່ງແວດລ້ອມຕົວເມືອງຢູ່ນະຄອນຫຼວງວຽງຈັນ ແລະ ນະຄອນປາກເຊ, ແຂວງຈຳປາສັກ (KOICA & GGGI) ຄວາມຄືບໜ້າ 86%; ໂຄງການບຳບັດນ້ຳເປື້ອນ (ນ້ຳປະປາ ແລະ ນ້ຳເປື້ອນ) ນະຄອນຫຼວງວຽງຈັນ ຄວາມຄືບໜ້າ 30% ແລະ ລະບົບບຳບັດນ້ຳເປື້ອນແບບບໍ່ລວມສູນ ນະຄອນໄກສອນພົມວິຫານ, ແຂວງສະຫວັນນະເຂດ.

4) <u>ສ້າງຕົວເມືອງນ້ອຍອັດສະລິຍະ Smart City ຕົ້ນແບບ ຢ່າງໜ້ອຍ 1 ເມືອງ</u>: ສຸມໃສ່ຊຸກຍູ້ສົ່ງເສີມບັນດານະຄອນທີ່ເປັນຕົວເມືອງສະມາຊິກໃນໂຄງການທົດລອງຂອງເຄືອຂ່າຍຕົວເມືອງທັນສະໄໝອາຊຽນ ASEAN Smart City Network ຄື ນະຄອນຫຼວງວຽງຈັນ ແລະ ນະຄອນຫຼວງພະບາງ ແລະ ຕົວເມືອງທັນສະໄໝອາຊຽນ-ອົດສະຕຣາລີ ຄື ນະຄອນໄກສອນພົມວິຫານ; ຊຸກຍູ້ສົ່ງເສີມບັນດາໂຄງການພັດທະນາຕົວເມືອງທັນສະໄໝ ທີ່ລັດຖະບານໄດ້ອະນຸມັດໃຫ້ພາກເອກະຊົນສຶກສາລົງທຶນ ລວມເຖິງບັນດາໂຄງການຊ່ວຍເຫຼືອຂອງຕ່າງປະເທດເຂົ້າໃສ່ການສ້າງໂຄງລ່າງພື້ນຖານຕົວເມືອງທັນສະໄໝ.

### 5.4.2 ການພັດທະນາເຂດເສດຖະກິດພິເສດ:

ມາຮອດປັດຈຸບັນ, ສປປ ລາວ ມີເຂດເສດຖະກິດພິເສດ ຈຳນວນທັງໝົດ 21 ເຂດ ຕັ້ງຢູ່ໃນ 7 ແຂວງ, ມີເນື້ອທີ່ດິນຕາມສັນຍາ ທັງໝົດ 37.938 ເຮັກຕາ (ເນື້ອທີ່ຕົວຈິງທີ່ໄດ້ພັດທະນາແລ້ວ ປະມານ 11.640 ເຮັກຕາ), ສາມາດດຶງດູດການລົງທຶນ ໄດ້ທັງໝົດ 1.430 ບໍລິສັດ (ພາຍໃນ 168 ບໍລິສັດ, ຕ່າງປະເທດ 1.191 ບໍລິສັດ ແລະ ພາຍໃນຮ່ວມທຶນກັບຕ່າງປະເທດ 71 ບໍລິສັດ) ມີທຶນທັງໝົດ 65 ຕື້ກວ່າໂດລາສະຫະລັດ ແລະ ທຶນຈົດທະບຽນ 20 ຕື້ກວ່າໂດລາສະຫະລັດ. ໃນໄລຍະ 2 ປີເຄິ່ງຜ່ານມາ ການພັດທະນາເຂດເສດຖະກິດພິເສດແມ່ນມີຄວາມຄືບໜ້າຫຼາຍດ້ານ ແລະ ສາມາດສືບຕໍ່ຈັດຕັ້ງປະຕິບັດໄປຕາມແຜນການທີ່ວາງໄວ້ ເປັນຕົ້ນ: ການສ້າງລາຍຮັບເຂົ້າງົບປະມານ, ການສ້າງວຽກເຮັດງານທຳ ແລະ ສີມືແຮງງານ, ການພັດທະນາພື້ນຖານໂຄງລ່າງໄດ້ຮັບການເຊື່ອມຈອດ-ເຊື່ອມໂຍງ ເປັນລະບົບຄົບຊຸດ ເຮັດໃຫ້ເກີດມີຕົວເມືອງໃໝ່ໃນເຂດຫ່າງໄກສອກຫຼີກ (ເຂດສາມຫຼ່ຽມຄຳ ແລະ ເຂດບໍ່ເຕັນແດນງາມ), ມີຖານການຜະລິດອຸດສາຫະກຳຂະແໜງໃໝ່ໆເກີດຂຶ້ນ ສາມາດເຊື່ອມໂຍງຕ່ອງໂສ້ການຜະລິດກັບພາກພື້ນ ແລະ ສາກົນ ພ້ອມທັງສາມາດສະໜອງແກ່ຕະຫຼາດພາຍໃນ ແລະ ສົ່ງອອກຕ່າງປະເທດ (ເຂດກວມລວມໄຊເຊດຖາ, ເຂດສະຫວັນ-ເຊໂນ, ເຂດວິຕ້າ ແລະ ເຂດອື່ນໆ), ມີສະໜາມບິນສາກົນແຂວງບໍ່ແກ້ວ, ທ່າບົກ 3 ແຫ່ງ (ທ່າບົກສະຫວັນນະເຂດ, ທ່າບົກທ່ານາແລ້ງ ແລະ ທ່າບົກວັງເຕົ່າ-ໂພນທອງ), ເຂດບໍລິການຄ່ຽນຖ່າຍສິນຄ້າ ICD ຈຳນວນ 2 ແຫ່ງ (ເຂດບໍ່ເຕັນ ແລະ ເຂດທ່າແຂກ), ຖະໜົນຫົນທາງ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ເພື່ອຮອງຮັບການລົງທຶນ ແລະ ການດຳເນີນທຸລະກິດພາຍໃນເຂດ ແລະ ອື່ນໆ, ຊຶ່ງການຈັດຕັ້ງປະຕິບັດໃນແຕ່ລະດ້ານພົ້ນເດັ່ນ ດັ່ງນີ້:

+ **ການດຶງດູດການລົງທຶນ:** ໄດ້ສຸມໃສ່ດຶງດູດ ແລະ ຂົນຂວາຍການລົງທຶນທັງພາຍໃນ ແລະ ຕ່າງປະເທດ ດ້ວຍຫຼາຍຮູບການ ເຊິ່ງໃນໄລຍະ 2 ປີເຄິ່ງຜ່ານມາ ສາມາດດຶງດູດການລົງທຶນທັງໝົດໄດ້ 277 ບໍລິສັດ, ຊຶ່ງສ່ວນໃຫຍ່ເປັນບໍລິສັດລົງທຶນໂດຍກົງຈາກຕ່າງປະເທດປະມານ 80% ຂອງການລົງທຶນທັງໝົດ (ໃນນີ້: ພາຍໃນ 43 ບໍລິສັດ, ຕ່າງປະເທດ 180 ບໍລິສັດ ແລະ ຮ່ວມທຶນພາຍໃນກັບຕ່າງປະເທດ 54 ບໍລິສັດ), ເທົ່າກັບ 39,06% ຂອງແຜນການ (ແຜນການ 5ປີ: 709 ບໍລິສັດ), ມີທຶນຈົດທະບຽນ 555 ລ້ານກວ່າໂດລາສະຫະລັດ ແລະ ແຜນການລົງທຶນທັງໝົດ 555 ລ້ານໂດລາສະຫະລັດ. ຂະແໜງບໍລິການເປັນຂະແໜງທີ່ມີນັກລົງທຶນຫຼາຍກວ່າໝູ່ ກວມເອົາ 63%, ຮອງລົງມາແມ່ນຂະແໜງການຄ້າ ກວມເອົາ 22% ແລະ ຂະແໜງອຸດສາຫະກຳ ກວມເອົາ 15%. ເຂດທີ່ມີການລົງທຶນຫຼາຍກວ່າໝູ່ແມ່ນເຂດສາມຫຼ່ຽມຄຳ, ເຂດບຶງທາດຫຼວງ, ເຂດພັດທະນາກວມລວມໄຊເຊດຖາ, ເຂດວຽງຈັນໂລຈິດສຕິກ, ເຂດສະຫວັນ-ເຊໂນ ແລະ ເຂດອື່ນໆ. ເຖິງແມ່ນວ່າການດຶງດູດການລົງທຶນໂດຍລວມຈະເພີ່ມຂຶ້ນກໍຕາມ ແຕ່ໃນບາງເຂດເສດຖະກິດພິເສດຍັງປະຕິບັດບໍ່ໄດ້ດີເທົ່າທີ່ຄວນ ເນື່ອງຈາກວ່າຄວາມພ້ອມດ້ານນິຕິກຳຕ່າງໆ, ນະໂຍບາຍ ກໍຄື ກົນໄກການອຳນວຍຄວາມສະດວກຍັງບໍ່ທັນມີຄວາມຄ່ອງຕົວ ແລະ ມີຂໍ້ຈຳກັດຫຼາຍດ້ານ ຍ້ອນຕິດພັນກັບນິຕິກຳຂອງຫຼາຍຂະແໜງການ ເປັນຕົ້ນ: ການອອກບັດແຮງງານ, ການຂໍວີຊ່າເຂົ້າ-ອອກຫຼາຍເທື່ອ, ການນຳເຂົ້າ-ສົ່ງອອກສິນຄ້າ ແລະ ບັນຫາອື່ນໆ ທີ່ຕິດພັນກັບການອະນຸມັດລົງທຶນໃນກິດຈະການທີ່ຢູ່ໃນບັນຊີຄວບຄຸມ.

+ **ການມອບພັນທະອາກອນ:** ໄດ້ສຳເລັດການຕິດຕັ້ງລະບົບ TaxRis ໂດຍມີເຈົ້າໜ້າທີ່ພາສີປະຈຳຢູ່ແຕ່ລະເຂດ (ເຂດນະຄອນຫຼວງວຽງຈັນ, ເຂດສາມຫຼ່ຽມຄຳ, ເຂດບໍ່ເຕັນແດນງາມ ແລະ ເຂດວັງເຕົ່າ-ໂພນທອງ) ເຊິ່ງສາມາດຈັດເກັບລາຍຮັບເຂົ້າງົບປະມານ ໄດ້ທັງໝົດ 410 ຕື້ກວ່າກີບ, ເທົ່າກັບ 33,68% ຂອງແຜນການ (ແຜນການ 5ປີ: 1.217 ຕື້ກີບ); ລາຍຮັບທີ່ເກັບໄດ້ຫຼາຍກວ່າໝູ່ແມ່ນອາກອນມູນຄ່າເພີ່ມ, ອາກອນກຳໄລ, ອາກອນເງິນເດືອນ, ຄ່າທຳນຽມ-ຄ່າບໍລິການ ແລະ ອາກອນອື່ນໆ ຕາມລຳດັບ. ເຂດທີ່ສາມາດຈັດເກັບພັນທະອາກອນໄດ້ຫຼາຍກວ່າໝູ່ແມ່ນເຂດພັດທະນາກວມລວມໄຊເຊດຖາ, ຮອງລົງມາແມ່ນເຂດສາມຫຼ່ຽມຄຳ, ເຂດສະຫວັນ-ເຊໂນ, ເຂດບໍ່ເຕັນແດນງາມ, ເຂດລ່ອງແຫ່ງ-ວຽງຈັນ ຕາມລຳດັບ.

+ **ການນຳເຂົ້າ-ສົ່ງອອກສິນຄ້າ:** ເຖິງແມ່ນວ່າໃນໄລຍະ 2 ປີເຄິ່ງຜ່ານມາ ຈະໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ-19 ກໍຕາມ ລວມທັງສະພາບເສດຖະກິດພາຍໃນ ແລະ ສາກົນມີຄວາມຜັນແປ, ແຕ່ບັນດາໂຮງຈັກໂຮງງານໃນເຂດອຸດສາຫະກຳ ກໍຍັງສືບຕໍ່ດຳເນີນການຜະລິດໄດ້ຢ່າງຕໍ່ເນື່ອງບວກກັບບັນດາຜູ້ລົງທຶນ ກໍສືບຕໍ່ພັດທະນາເຂດຂອງຕົນ ເຮັດໃຫ້ການນຳເຂົ້າວັດຖຸດິບ, ເຄື່ອງກົນຈັກ ແລະ ອຸປະກອນ ເພື່ອມາຮັບໃຊ້ການຜະລິດ ແລະ ການກໍ່ສ້າງພື້ນຖານໂຄງລ່າງ ຍັງສືບຕໍ່ຈັດຕັ້ງປະຕິບັດໄດ້ຕາມແຜນການ ເຊິ່ງມີມູນຄ່າລວມທັງໝົດ 1.367 ລ້ານກວ່າໂດລາສະຫະລັດ, ເທົ່າກັບ 58,19% ຂອງແຜນການ (ແຜນການ 5ປີ: 2.349 ລ້ານກວ່າໂດລາສະຫະລັດ); ເຊິ່ງເຂດທີ່ນຳເຂົ້າຫຼາຍກວ່າໝູ່ແມ່ນເຂດການຄ້າວຽງຈັນ-ໂນນທອງ, ເຂດສະຫວັນ-ເຊໂນ, ເຂດກວມລວມໄຊເຊດຖາ ແລະ ເຂດປາກເຊ-ຍີ່ປຸ່ນ. ການສົ່ງອອກສິນຄ້າ: ມີມູນຄ່າລວມທັງໝົດ 1.000 ລ້ານກວ່າໂດລາສະຫະລັດ, ເທົ່າກັບ 38,61% ຂອງແຜນການ (ແຜນການ 5ປີ: 2.626 ລ້ານກວ່າໂດລາສະຫະລັດ), ເຂດທີ່ສົ່ງອອກສິນຄ້າຫຼາຍກວ່າໝູ່ແມ່ນເຂດສະຫວັນ-ເຊໂນ, ເຂດກວມລວມໄຊເຊດຖາ, ເຂດການຄ້າວຽງຈັນ-ໂນນທອງ ແລະ ເຂດປາກເຊ-ຍີ່ປຸ່ນ.

+ **ການສ້າງວຽກເຮັດງານທຳ:** ການພັດທະນາເຂດເສດຖະກິດພິເສດ ໄດ້ຊ່ວຍຍົກສູງຄວາມອາດສາມາດແຮງງານລາວໂດຍສະເພາະຂົງເຂດອຸດສະຫະກຳ, ການຄ້າ ແລະ ບໍລິການ ພ້ອມທັງຊ່ວຍໜູນບັນດາວິສາຫະກິດຂະໜາດນ້ອຍ ແລະ ກາງ SMEs ເພີ່ມຂຶ້ນ; ເຊິ່ງປັດຈຸບັນມີແຮງງານໃນເຂດເສດຖະກິດພິເສດທັງໝົດ ຈຳນວນ 66,2 ພັນກວ່າຄົນ (ແຮງງານລາວ 33 ພັນກວ່າຄົນ ກວມເອົາທັງໝົດ 49,85%). ເຂດທີ່ມີແຮງງານຫຼາຍກວ່າໝູ່ແມ່ນເຂດສາມຫຼ່ຽມຄຳ ຈຳນວນ 15 ພັນກວ່າຄົນ, ຮອງລົງມາເຂດສະຫວັນ-ເຊໂນ 4,1 ພັນກວ່າຄົນ, ເຂດກວມລວມໄຊເສດຖາ 3,9 ພັນກວ່າຄົນ ແລະ ເຂດອື່ນໆ. ເຖິງແມ່ນວ່າຈຳນວນແຮງງານໃໝ່ຈະເພີ່ມຂຶ້ນຫຼາຍ ແຕ່ກໍຍັງບໍ່ພຽງພໍກັບຄວາມຕ້ອງການແຮງງານໃນເຂດເສດຖະກິດພິເສດໃນແຕ່ລະປີ, ການສະໜອງແຮງງານລາວຍັງເປັນອຸປະສັກຕໍ່ການພັດທະນາເຂດເສດຖະກິດພິເສດ ຍ້ອນຍັງມີຂໍ້ຈຳກັດຫຼາຍດ້ານ ເປັນຕົ້ນ: ແຮງງານລາວຍັງບໍ່ລຶ້ງເຄີຍກັບການເຮັດວຽກໃນພາກອຸດສາຫະກຳ, ການປະຕິບັດລະບຽບວິໄນເຂົ້າ-ອອກວຽກຍັງບໍ່ເປັນລະບົບ,  ທີ່ສຳຄັນແມ່ນແຮງງານທີ່ມີທັກສະສີມືຍັງບໍ່ພຽງພໍຕາມຄວາມຕ້ອງການຂອງອຸດສາຫະກຳທີ່ຕັ້ງຂຶ້ນໃໝ່ ແລະ ສາເຫດອັດຕາເງິນເຟີ້ທີ່ສູງຂຶ້ນ ເຮັດໃຫ້ແຮງງານພາຍໃນປະເທດຫຼັ່ງໄຫຼອອກໄປເຮັດວຽກນອກປະເທດຫຼາຍຂຶ້ນ ແລະ ແຮງງານລາວຍັງບໍ່ທັນຄົບເງື່ອນໄຂມາດຖານຂອງຫົວໜ່ວຍການຜະລິດໃນບາງຂະແໜງການ.

## 6. ເປົ້າໝາຍທີ 6 ການຄຸ້ມຄອງ-ບໍລິຫານລັດມີປະສິດທິພາບ, ສັງຄົມມີຄວາມສະເໝີພາບ, ຍຸຕິທໍາ ແລະ ໄດ້ຮັບການປົກປ້ອງຕາມທິດການປົກຄອງດ້ວຍກົດໝາຍທີ່ສັກສິດ ແລະ ເຂັ້ມງວດ

### 6.1 ແຜນວຽກຈຸດສຸມທີ 1: ຍົກສູງປະສິດທິພາບການປົກຄອງ-ການຄຸ້ມຄອງບໍລິຫານລັດໃຫ້ມີຄວາມກະທັດຮັດ, ວ່ອງໄວ ແລະ ເຂັ້ມງວດຕາມກົດໝາຍ ແລະ ວຽກງານສາມສ້າງໃຫ້ເຂົ້າສູ່ລວ່ງເລິກ ປະຕິບັດຕົວຈິງຢ່າງມີປະສິດທິຜົນສູງ

– ສໍາເລັດການປັບປຸງພາລະບົດບາດຂອງ 19 ກະຊວງ ແລະ ທຽບເທົ່າ (ຍົກເວັ້ນ ປກສ ແລະ ປກຊ); ຂັ້ນກົງຈັກຂອງລັດຖະບານ ສາມາດຫຼຸດຈາກ 21 ກະຊວງ, ອົງການລັດທຽບເທົ່າ ຍັງເຫຼືອ 19 ກະຊວງ, ອົງການລັດທຽບເທົ່າ; ຂັ້ນກະຊວງກົງຈັກຂັ້ນກົມ ຫຼຸດໄດ້ 43 ກົມ/ທຽບເທົ່າ (ຈາກ 493 ກົມ ມາເປັນ 450 ກົມ); ກົງຈັກຂັ້ນພະແນກຂອງບັນດາກະຊວງ, ອົງການ ສາມາດຫຼຸດໄດ້ 136 ພະແນກ (ຈາກ 2.349 ພະແນກ ມາເປັນ 2.213 ພະແນກ); ກົງຈັກຂັ້ນຂະແໜງຂອງພະແນກຂັ້ນແຂວງ ສາມາດຫຼຸດໄດ້ 308 ຂະແໜງ (ຈາກ 3.695 ຂະແໜງ ມາເປັນ 3.599 ຂະແໜງ); ໜ່ວຍງານຂອງພະແນກຂັ້ນແຂວງ ສາມາດຫຼຸດໄດ້ 406 ໜ່ວຍງານ (ຈາກ 421 ໜ່ວຍງານ ມາເປັນ 3.387 ໜ່ວຍງານ); ໜ່ວຍງານຂຶ້ນກັບຫ້ອງການຂັ້ນເມືອງ ສາມາດຫຼຸດໄດ້ 2.253 ໜ່ວຍງານ (ຈາກ 15.107 ໜ່ວຍງານ ມາເປັນ 12.854 ໜ່ວຍງານ). ອັນພິເສດແມ່ນໄດ້ຮັບການຊີ້ນໍາຂອງກົມການເມືອງສູນກາງພັກ ແລະ ການຕົກລົງຂອງສະພາແຫ່ງຊາດ ລັດຖະບານຈິ່ງໄດ້ປັບປຸງ, ສັບຊ້ອນບຸກຄະລະກອນທີ່ເປັນສະມາຊິກລັດຖະບານ ຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານຂອງແຕ່ລະໄລຍະ, ທັງມີການປັບປຸງ-ສ້າງຕັ້ງຄະນະສະເພາະກິດຕາມຄວາມຈໍາເປັນຂອງແຕ່ລະໄລຍະ ເພື່ອແກ້ໄຂວຽກງານທີ່ເຄັ່ງຮ້ອນ.

– ສໍາເລັດການຮັບຮອງເອົາຜົນການກໍານົດຕໍາແໜ່ງງານຂອງພາກສ່ວນຕ່າງໆ ໄດ້ 586 ຫົວໜ່ວຍ ໃນຈໍານວນທັງໝົດ 4.450 ຫົວໜ່ວຍ, ໃນນີ້: ຂັ້ນສູນກາງ ມີ 164 ຫົວໜ່ວຍ, ເທົ່າກັບ 36,44% ຂອງແຜນການ (ຈໍານວນ: 450 ຫົວໜ່ວຍຂັ້ນສູນກາງ); ຂັ້ນແຂວງ ມີ 129 ຫົວໜ່ວຍ, ເທົ່າກັບ 22,91% ຂອງແຜນການ (ຈໍານວນ: 563 ຫົວໜ່ວຍຂັ້ນແຂວງ) ແລະ ຂັ້ນເມືອງ ມີ 293 ຫົວໜ່ວຍ, ເທົ່າກັບ 8,52% ຂອງແຜນການ (ໃນຈໍານວນ 3.437 ຫົວໜ່ວຍຂັ້ນເມືອງ).

– ສໍາເລັດການນໍາສະເໜີລັດຖະບານຮັບຮອງ ແລະ ປະກາດໃຊ້ຍຸດທະສາດວຽກງານຄຸ້ມຄອງລັດຖະກອນຂອງ ສປປ ລາວ ຮອດປີ 2030 ສະບັບເລກທີ 200/ນຍ, ລົງວັນທີ 08 ພຶດສະພາ 2023; ໄດ້ຮ່າງບົດຄົ້ນຄວ້າກ່ຽວກັບການຫຼຸດຜ່ອນຈໍານວນພົນພະນັກງານ-ລັດຖະກອນໃນກົງຈັກການຈັດຕັ້ງລັດ ແລະ ບົດລາຍງານກ່ຽວກັບການຄົ້ນຄວ້າຕໍາແໜ່ງຜູ້ຊ່ວຍ ແລະ ທີ່ປຶກສາລັດຖະມົນຕີ; ໄດ້ຈັດກອງປະຊຸມທາບທາມຄໍາເຫັນໃສ່ຮ່າງກົດໝາຍວ່າດ້ວຍພະນັກງານ-ລັດຖະກອນຢູ່ຂັ້ນສູນກາງ ແລະ ຢູ່ຂັ້ນທ້ອງຖິ່ນຈໍານວນໜຶ່ງ.

– ສໍາເລັດການນໍາສະເໜີລັດຖະບານ ຮັບຮອງເອົາດໍາລັດວ່າດ້ວຍນະໂຍບາຍຕໍ່ພະນັກງານ-ລັດຖະກອນທີ່ປະຕິບັດວຽກງານຢູ່ເຂດຫ່າງໄກສອກຫຼີກ, ທຸລະກັນດານ (ສະບັບປັບປຸງ) ເລກທີ 292/ລບ, ລົງວັນທີ 5 ເມສາ 2021. ພ້ອມກັນນີ້, ກໍໄດ້ດໍາເນີນການປະເມີນ ປີ 2022 ສໍາເລັດ ຈໍານວນ 12 ແຂວງ, ລວມຈໍານວນລັດຖະກອນທັງໝົດ: 5.265 ຄົນ; ງົບປະມານທີ່ໃຊ້ຈ່າຍໃຫ້ລັດຖະກອນຕໍ່ເດືອນ ເຂດລະດັບ I ມີ 369.134.406 ກີບ, ລະດັບ II ມີ 1.113.050.823 ກີບ ແລະ ລັດຖະກອນລະດັບ III ມີ 1.086.119.213 ກີບ, ລວມທັງໝົດຈໍານວນເງິນທີ່ໄດ້ຈ່າຍ ມີ: 2.566.304.442 ກີບ.

– ສໍາເລັດການອະນຸມັດການຮັບບັນຈຸລັດຖະກອນໃໝ່ປີ 2021 ແລະ 2022 ຈໍານວນ 2.800 ຄົນ ໃຫ້ບັນດາກະຊວງ-ອົງການຂັ້ນສູນກາງ ແລະ ທ້ອງຖິ່ນ ພ້ອມທັງສະເໜີແຜນຄວາມຕ້ອງການລັດຖະກອນໃໝ່ປີ 2023 ຕໍ່ກອງປະຊຸມລັດຖະບານ, ຊຶ່ງລັດຖະບານອະນຸມັດ ຈໍານວນ 800 ຄົນ; ຄົ້ນຄວ້າປັບປຸງມູນຄ່າດັດສະນີເງິນເດືອນພື້ນຖານຈາກ ຈໍານວນ 7.200 ກີບ ມາເປັນ 7.350 ກີບ ໃນປີ 2022 ແລະ ເພີ່ມອຸດໜູນຄ່າຄອງຊີບໃຫ້ພະນັກງານ-ລັດຖະກອນ ຈໍານວນ 150.000 ກີບ/ເດືອນ/ຄົນ ໃນຕົ້ນປີ 2023.

– ສຳເລັດການມອບບັດໃຫ້ພະນັກງານ-ລັດຖະກອນຂັ້ນສູນກາງ ຈຳນວນ 47 ພາກສ່ວນ ມີທັງໝົດ 15.359 ບັດ; ຂັ້ນແຂວງ 14 ແຂວງ ມີທັງໝົດ 15.186 ບັດ ແລະ ຂັ້ນເມືອງຢູ່ແຂວງຫລວງນ້ຳທາ ມີ 5 ເມືອງ ຈຳນວນ 1.535 ບັດ ແລະ ນະຄອນຫລວງວຽງຈັນ ມີ 9 ເມືອງ ຈຳນວນ 2.387 ບັດ, ພ້ອມທັງອອກຂໍ້ຕົກລົງຮັບຮອງ ແລະ ເຊັນສັນຍາຮ່ວມກັບ 4 ທະນາຄານ (ທະນາຄານການຄ້າຕ່າງປະເທດລາວມະຫາຊົນ, ທະນາຄານສົ່ງເສີມກະສິກຳ, ທະນະຄານລາວ-ຫວຽດ ແລະ ທະນາຄານພັດທະນາລາວ) ເພື່ອເຂົ້າຮ່ວມໂຄງການອອກບັດພະນັກງານ-ລັດຖະກອນ; ສຳເລັດການເຊື່ອມຕໍ່ລະບົບລາຍຮັບ-ລາຍຈ່າຍ (RTIS) ຂອງກະຊວງການເງິນ ທີ່ຕິດພັນກັບລະບົບການຄິດໄລ່ເງິນເດືອນ ໃນຖານຂໍ້ມູນຄຸ້ມຄອງລັດຖະກອນ (PIMS).

– ໄດ້ທົດລອງຫັນຫົວໜ່ວຍວິຊາການທີ່ມີລາຍຮັບໄປສູ່ການກຸ້ມຕົນເອງດ້ານງົບປະມານ ຈຳນວນ 5 ພາກສ່ວນ ແລະ ຮັບຮອງເພີ່ມອີກ 2 ຫົວໜ່ວຍ (ກົມພາສີ ແລະ ກົມສ່ວຍສາອາກອນ); ໄດ້ເກັບກຳຂໍ້ມູນຫົວໜ່ວຍວິຊາການຈຳນວນໜຶ່ງເພື່ອກະກຽມຫັນໄປສູ່ກຸ້ມຕົນເອງດ້ານງົບປະມານທີ່ມີເງື່ອນໄຂໂດຍກຳນົດເປົ້າໝາຍຕື່ມອີກ ໃຫ້ໄດ້ 3 ກົມ/ກອງ ຄື: ກອງຄຸ້ມຄອງພາຫະນະ (ນະຄອນຫຼວງວຽງຈັນ), ກອງຄຸ້ມຄອງສະໜາມບິນ (ຍທຂ) ແລະ ກອງທຶນປົກປັກຮັກສາສິ່ງແວດລ້ອມ.

– ໄດ້ສຳເລັດຂັ້ນພື້ນຖານໃນການສ້າງຮ່າງດຳລັດ 2 ສະບັບ ເຊັ່ນ: ຮ່າງດຳລັດວ່າດ້ວຍການຫັນຫົວໜ່ວຍວິຊາການກຸ້ມຕົນເອງດ້ານງົບປະມານ ແລະ ຮ່າງດຳລັດວ່າດ້ວຍພາລະກອນ. ພ້ອມກັນນັ້ນ, ກໍໄດ້ສຳເລັດການລົງເກັບກຳຂໍ້ມູນຫົວໜ່ວຍວິຊາການ ຈຳນວນ 5 ຫົວໜ່ວຍ ທີ່ລັດຖະບານຕົກລົງທົດລອງຫັນໄປກຸ້ມຕົນເອງທາງດ້ານງົບປະມານ ຄື: ມະຫາວິທະຍາໄລແຫ່ງຊາດ, ວິທະຍາໄລເຕັກນິກປາກປ່າສັກ, ໂຮງໝໍມະໂຫສົດ, ໂຮງໝໍມິດຕະພາບ ແລະ ໂຮງໝໍເຊດຖາທິຣາດ. ນອກຈາກ 5 ຫົວໜ່ວຍດັ່ງກ່າວ ກໍໄດ້ສຳເລັດການລົງເກັບກຳຂໍ້ມູນຫົວໜ່ວຍວິຊາການທີ່ມີລາຍຮັບຢູ່ບັນດາກະຊວງ-ອົງການ ຈຳນວນ 17 ພາກສ່ວນ ມີ 105 ຫົວໜ່ວຍ, ຊຶ່ງຜ່ານການຄົ້ນຄວ້າ ມີຈຳນວນ 53 ຫົວໜ່ວຍທີ່ສາມາດຫັນໄປກຸ້ມຕົນເອງທາງດ້ານງົບປະມານ.

– ລັດຖະບານໄດ້ປັບປຸງກົນໄກການຄຸ້ມຄອງການລົງທຶນຂອງພາຍໃນ ແລະ ຕ່າງປະເທດ ໃຫ້ສອດຄ່ອງກວ່າເກົ່າ ໂດຍໄດ້ລົບລ້າງຄະນະຄຸ້ມຄອງການລົງທຶນພາຍໃນ ແລະ ຕ່າງປະເທດຂັ້ນສູນກາງ ແລະ ທ້ອງຖິ່ນ ພ້ອມທັງປັບປຸງດຳລັດ 02, 03 ທີ່ພົວພັນເຖິງການສ້າງເງື່ອນໄຂໃຫ້ແກ່ການລົງທຶນຂອງພາກສ່ວນຕ່າງໆ ໃຫ້ສະດວກວ່ອງໄວຂຶ້ນກວ່າເກົ່າ.

<u>ສິ່ງທ້າທາຍ</u>: (1) ການເປັນເສນາທິການໃຫ້ລັດຖະບານໃນການຄົ້ນຄວ້າປັບປຸງກົງຈັກລັດຍັງບໍ່ທັນເລິກເຊິ່ງເທົ່າທີ່ຄວນ ເຮັດໃຫ້ກົງຈັກຂອງບາງກະຊວງ-ອົງການຍັງບໍ່ແທດເໝາະກັບຕົວຈິງ ໂດຍສະເພາະສາຍຕັ້ງຢູ່ທ້ອງຖິ່ນ; ການປັບປຸງກົງຈັກຢູ່ຂັ້ນກະຊວງຍັງບໍ່ໄປຕາມທິດກະທັດຮັດ, ຍັງມີທ່າອ່ຽງໃຫຍ່ໂຕ ຫຼາຍບ່ອນຍັງຕ້ອງການໃຫ້ມີຫຼາຍໜ່ວຍງານກົມກອງ; ການສ້າງ ແລະ ປັບປຸງບັນດານິຕິກຳ-ລະບຽບບໍລິຫານຕ່າງໆຍັງບໍ່ທັນເລິກເຊິ່ງ ແລະ ບໍ່ຮັດກຸມ, ບາງນິຕິກຳທີ່ປະກາດໃຊ້ ບໍ່ສາມາດປະຕິບັດໄດ້ຍ້ອນບໍ່ສອດຄ່ອງ; ວຽກງານ 3 ສ້າງ ໄດ້ສຳເລັດການເຮັດທົດລອງແລ້ວ ແຕ່ການຜັນຂະຫຍາຍຍັງບໍ່ທັນເປັນລະບົບຢ່າງກວ້າງຂວາງ ບາງທ້ອງຖິ່ນຍັງຂາດຄວາມເຂົ້າໃຈເປັນເອກະພາບ; ການປັບປຸງລະບົບການຈັດຕັ້ງຢູ່ທ້ອງຖິ່ນ ຍັງບໍ່ທັນໄປຕາມທິດ 3 ສ້າງ ໃນການມອບສິດ, ມອບຄວາມຮັບຜິດຊອບໃຫ້ທ້ອງຖິ່ນ; (2) ໄດ້ມີກົດໝາຍ ແລະ ນິຕິກຳຫຼາຍສະບັບ ແຕ່ການປະຕິບັດຕົວຈິງຍັງບໍ່ທັນເຂັ້ມງວດ; ການຕິດຕາມກວດກາ ແລະການລົງວິໄນລັດຖະກອນຜູ້ທີ່ມີຄວາມຜິດ ຍັງບໍ່ໄດ້ຮັບການປະຕິບັດຢ່າງເດັດຂາດ; ການເຂົ້າ-ການອອກຂອງລັດຖະກອນບໍ່ໄປຕາມລະບົບ ຍັງມີຫາງສຽງຈົ່ມວ່າຈາກສັງຄົມ ໂດຍສະເພາະການຊື້ຈ້າງເຂົ້າເປັນລັດຖະກອນ ແລະ ສຳລັບລັດຖະກອນຜູ້ທີ່ເຖິງອາຍຸກະສຽນອອກພັກຜ່ອນຮັບນະໂຍບາຍອຸດໜູນບຳນານ ພັດຍັງບໍ່ທັນຢາກອອກ ແລະອື່ນໆ; ການປະເມີນຜົນງານຂອງລັດຖະກອນຍັງບໍ່ທັນປະຕິບັດເປັນເອກະພາບ ແລະ ການພັດທະນາລັດຖະກອນຍັງຂາດແຜນການລະອຽດ.

## 6.2 ແຜນວຽກຈຸດສຸມທີ 2: ປັບປຸງກົນໄກ, ລະບຽບການປະສານງານລະຫວ່າງພາກລັດດ້ວຍກັນ ໃຫ້ມີຄວາມເປັນເອກະພາບ ແລະ ວ່ອງໄວຂຶ້ນ

– ສໍາເລັດການປັບປຸງນິຕິກໍາການບໍລິຫານບ້ານ ແລະ ການຄົ້ນຄວ້າເຄື່ອງແບບນາຍບ້ານ-ຮອງນາຍບ້ານ ແລະ ການຄຸ້ມຄອງຄ່າບໍລິການເອກະສານຂອງອົງການປົກຄອງບ້ານ; ໄດ້ລົງເກັບກໍາຂໍ້ມູນກ່ຽວກັບກົນໄກການເຮັດວຽກ, ການພົວພັນປະສານງານລະຫວ່າງເມືອງ-ກຸ່ມບ້ານ/ເຂດພັດທະນາ-ບ້ານຢູ່ເມືອງປາກຊ່ອງ, ແຂວງຈໍາປາສັກ; ເມືອງສະໜາມໄຊ, ແຂວງອັດຕະປື; ເມືອງດາກຈຶງ, ແຂວງເຊກອງ; ເມືອງຕຸ້ມລານ, ແຂວງສາລະວັນ; ເມືອງໄຊສະຖານ, ແຂວງໄຊຍະບູລີ; ເມືອງປາກແຊງ, ແຂວງຫຼວງພະບາງ; ເມືອງຫົວເມືອງ, ແຂວງຫົວພັນ ແລະ ເມືອງໝອກ, ແຂວງຊຽງຂວາງ ເພື່ອເປັນບ່ອນອີງໃຫ້ແກ່ການສຶກສາຄົ້ນຄວ້າຄວາມເປັນໄປໄດ້ ໃນການສ້າງຕັ້ງກົງຈັກລະຫວ່າງເມືອງ ແລະ ບ້ານ ເປັນຕົ້ນແມ່ນການສ້າງຕັ້ງຕາແສງ.

– ສືບຕໍ່ປັບປຸງກົນໄກການຄຸ້ມຄອງການລົງທຶນຂອງພາຍໃນ ແລະ ຕ່າງປະເທດ ໃຫ້ສອດຄ່ອງກວ່າເກົ່າ ໂດຍໄດ້ລົບລ້າງຄະນະຄຸ້ມຄອງການລົງທຶນຂອງພາຍໃນ ແລະ ຕ່າງປະເທດຂັ້ນສູນກາງ ແລະ ທ້ອງຖິ່ນ ທັງປັບປຸງບາງເນື້ອໃນໃນດໍາລັດ 02/ນຍ ແລະ ດໍາລັດ 03/ນຍ ໃນການສ້າງເງື່ອນໄຂໃຫ້ແກ່ການລົງທຶນຂອງພາກສ່ວນຕ່າງໆໃຫ້ສະດວກວ່ອງໄວຂຶ້ນກວ່າເກົ່າ.

– ພາຍຫລັງທີ່ລັດຖະບານປະກາດສ້າງຕັ້ງ 3 ນະຄອນ ແຕ່ປີ 2018 ເປັນຕົ້ນມາ ເປັນເວລາ 5 ປີ, ໃນນີ້: ນະຄອນປາກເຊແມ່ນໄດ້ສໍາເລັດການປະເມີນການເຄື່ອນໄຫວວຽກງານຂອງຕົນ; ສໍາເລັດການນໍາສະເໜີລັດຖະບານຕົກລົງສ້າງຕັ້ງເທດສະບານທ່າແຂກ, ແຂວງຄໍາມ່ວນ ຕາມກົດໝາຍການປົກຄອງທ້ອງຖິ່ນ ເຊິ່ງກະຊວງພາຍໃນໄດ້ລົງໄປສົມທົບ ແລະ ແນະນໍາໃນການກະກຽມສ້າງຕັ້ງເທດສະບານດັ່ງກ່າວ; ສໍາເລັດການຈັດກອງປະຊຸມສະຫຼຸບຜົນການຈັດຕັ້ງປະຕິບັດວຽກງານ 3 ສ້າງ ໃນຂອບເຂດທົ່ວປະເທດ ນັບແຕ່ປີ 2016-2020; ຊຸກຍູ້ ແລະ ຕິດຕາມບັນດາກະຊວງ-ອົງການຂັ້ນສູນກາງ ແລະ ທ້ອງຖິ່ນໃນການຈັດຕັ້ງປະຕິບັດວຽກງານ 3 ສ້າງ ຢ່າງເປັນປົກກະຕິ ແລະ ກະກຽມປະເມີນແຂວງເປັນຫົວໜ່ວຍຍຸດທະສາດ, ເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ບ້ານເປັນຫົວໜ່ວຍພັດທະນາ ຕາມຂັ້ນຕອນ.

– ໄດ້ມອບຖານລາຍຮັບໃຫ້ແຂວງຄຸ້ມຄອງເອງທັງໝົດ 9 ແຂວງ, ຊຶ່ງມີ 5 ແຂວງທີ່ສາມາດມີລາຍຮັບເກີນດຸນ (ຫຼວງພະບາງ, ບໍລິຄໍາໄຊ, ສະຫວັນນະເຂດ, ຄໍາມ່ວນ ແລະ ອັດຕະປື) ພ້ອມນັ້ນໄດ້ອອກຂໍ້ຕົກລົງເຮັດທົດລອງມອບຫົວໜ່ວຍທຸລະກິດ ໃຫ້ 9 ແຂວງຄຸ້ມຄອງເອງ ໃນປີ 2023.

– ການປັບປຸງການບໍລິການຜ່ານກົນໄກປະຕູດຽວ ເພື່ອໃຫ້ປະຊາຊົນໄດ້ເຂົ້າເຖິງການບໍລິການໄດ້ວ່ອງໄວ, ສະດວກ ແລະ ງ່າຍດາຍ ແມ່ນເປັນບູລິມະສິດໜຶ່ງທີ່ກະຊວງພາຍໃນ ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດໃນໄລຍະຜ່ານມາ ຊຶ່ງໄດ້ມີການປັບປຸງ ແລະ ສາມາດຂະຫຍາຍສູນບໍລິການຜ່ານປະຕູດຽວ ເພີ່ມຕື່ມ 9 ແຫ່ງ, ຈາກ 43 ສູນ (ໃນປີ 2020) ມາເປັນ 55 ສູນໃນປີ 2023; ໃນນີ້: ຂັ້ນແຂວງ 20 ແຫ່ງ ແລະ ຂັ້ນເມືອງ 35 ແຫ່ງ, ເທົ່າກັບ 60% ຂອງແຜນການ (ແຜນການ 5ປີ: ໃຫ້ເພີ່ມຂຶ້ນ 15 ແຫ່ງ, ຈາກ 43 ແຫ່ງ ມາເປັນ 58 ແຫ່ງ ໃນປີ 2025).

– ສໍາເລັດການລົງເຜີຍແຜ່ກົດໝາຍວ່າດ້ວຍການສໍາຫຼວດວັດແທກ ແລະ ສ້າງແຜນທີ່ຢູ່ບັນດາແຂວງ; ສໍາເລັດການວັດແທກຈີພີເອັສ (GPS) ເພື່ອເຊື່ອມໂຍງກັບພາກພື້ນອາຊີ-ປາຊີຟິກ ຈໍານວນ 3 ຈຸດ ປະຈໍາປີ 2022; ໄດ້ສະໜອງຂໍ້ມູນແຜນທີ່ມາດຕາສ່ວນຕ່າງໆ (ເປັນເຈ້ຍ) ຈໍານວນ 2.302 ໃບ, ຂໍ້ມູນລະບົບຕົວເລກ 348 ນໍ້າເບີ, ຈຸດລະດັບ 12 ຈຸດ ແລະ ຂໍ້ມູນ GPS ຈໍານວນ 40 ຈຸດ, ແຜນທີ່ພາບຖ່າຍ 16 ໃບ ແລະ ໄດ້ສະໜອງຂໍ້ມູນແຜນທີ່ໃຫ້ແກ່ສັງຄົມ ເພື່ອປະກອບສ່ວນໃນການວາງແຜນພັດທະນາເສດຖະກິດ-ສັງຄົມ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບຈໍານວນໜຶ່ງ; ໄດ້ສ້າງແຜນທີ່ມາດຕາສ່ວນ 1/10.000 ທີ່ເມືອງຄໍາເກີດ ແລະ ເມືອງໄຊຈໍາພອນ, ແຂວງບໍລິຄໍາໄຊ; ຊຶ່ງໂຄງການດັ່ງກ່າວໄດ້ດໍາເນີນສໍາເລັດແລ້ວ 20%; ໄດ້ສ້າງແຜນທີ່ມາດຕາສ່ວນ 1/2.000 ຂອງເຂດເສດຖະກິດພິເສດສະຫວັນ-ເຊໂນ, ຊຶ່ງເປັນໂຄງການຊ່ວຍເຫຼືອລ້າຈາກລັດຖະບານ ສ.ເກົາຫຼີ ແລະ ຈັດຕັ້ງປະຕິບັດສໍາເລັດແລ້ວ 50%; ໄດ້ສ້າງປຶ້ມແຜນທີ່ (ATLAS) ຈໍານວນ 17 ແຂວງ ສາມາດຈັດຕັ້ງປະຕິບັດໄດ້ 98%.

<u>ສິ່ງທ້າທາຍ</u>: ກົນໄກການບໍລິການປະຊາຊົນຢູ່ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ຍັງບໍ່ທັນປັບປຸງໃຫ້ມີຄຸນນະພາບ ເປັນຕົ້ນ: ການບໍລິການຜ່ານປະຕູດຽວ, ຄວາມເຂົ້າໃຈຕໍ່ວຽກງານບໍລິການປະຕູດຽວຍັງບໍ່ທັນເປັນເອກະພາບ ບາງຂະແໜງການທີ່ມີການສະໜອງການບໍລິການ ບໍ່ຢາກເຂົ້າຮ່ວມກົນໄກການບໍລິການດັ່ງກ່າວ.

## 6.3 ແຜນວຽກຈຸດສຸມທີ 3: ຮັບປະກັນໃຫ້ມີສະຖຽນລະພາບທາງດ້ານການເມືອງ, ມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ, ສັງຄົມມີຄວາມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ

**1. ວຽກງານຍຸຕິທຳ:**

– ລັດຖະບານໄດ້ອອກມະຕິວ່າດ້ວຍການແບ່ງຄວາມຮັບຜິດຊອບ ໃນການຈັດຕັ້ງຜັນຂະຫຍາຍມະຕິຂອງສະພາແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ເລກທີ 07/ລບ, ລົງວັນທີ 4 ຕຸລາ 2021 ແລະ ກະຊວງຍຸຕິທຳໄດ້ຮັບຮອງ ແລະ ປະກາດໃຊ້ຄຳແນະນຳຂອງທ່ານລັດຖະມົນຕີກະຊວງຍຸຕິທຳ ກ່ຽວກັບການຜັນຂະຫຍາຍວາລະແຫ່ງຊາດທີ່ຕິດພັນກັບຂະແໜງການຍຸຕິທຳ ເລກທີ 377/ກຍ, ລົງວັນທີ 22 ມີນາ 2022 ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ທັງໃນຂັ້ນສູນກາງ ແລະ ທ້ອງຖິ່ນ; ຊຶ່ງໃນປີ 2022 ກະຊວງຍຸຕິທຳໄດ້ເປັນເຈົ້າການປະສານສົມທົບ ແລະ ຊຸກຍູ້ຂະແໜງການທີ່ກ່ຽວຂ້ອງ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ ສ້າງ ແລະ ປັບປຸງກົດໝາຍທີ່ຕິດພັນກັບ 2 ວາລະແຫ່ງຊາດ ໄດ້ຈຳນວນ 7 ສະບັບ ຄື: 1) ກົດໝາຍວ່າດ້ວຍຊັບສິນຂອງລັດ; 2) ກົດໝາຍວ່າດ້ວຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ; 3) ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍ ນ້ຳ ແລະ ຊັບພະຍາກອນນ້ຳ; 4) ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ; 5) ກົດໝາຍວ່າດ້ວຍທະບຽນສານ; 6) ກົດໝາຍວ່າດ້ວຍລັດວິສາຫະກິດ ແລະ 7) ກົດໝາຍວ່າດ້ວຍທຸລະກຳທາງເອເລັກໂຕຣນິກ.

– ສຳເລັດການສ້າງ ແລະ ປັບປຸງຄູ່ມືຮັບໃຊ້ວຽກງານໂຄສະນາເຜີຍແຜ່ກົດໝາຍ ຈຳນວນ 6 ເຫຼັ້ມ; ສຳເລັດການໂຄສະນາ ແລະ ເຜີຍແຜ່ກົດໝາຍຕາມແຜນການທີ່ວາງໄວ້ ໂດຍໄດ້ສຸມໃສ່ໂຄສະນາເຜີຍແຜ່ນິຕິກຳຂອງຍຸຕິທຳທີ່ຕິດພັນກັບ 2 ວາລະແຫ່ງຊາດຢູ່ 5 ແຂວງ ຄື: ແຂວງບໍລິຄຳໄຊ, ໄຊຍະບູລີ, ສະຫວັນນະເຂດ, ນະຄອນຫຼວງວຽງຈັນ ແລະ ວຽງຈັນ; ນອກນັ້ນ, ໄດ້ນຳເອົານິຕິກຳໃຕ້ກົດໝາຍລົງເວບໄຊ໌ຈົດໝາຍເຫດທາງລັດຖະການ ຈຳນວນ 34 ສະບັບ, ຜະລິດລາຍການວິທະຍຸພາສາລາວ ໄດ້ 252 ຄັ້ງ ແລະ ພາສາມົ້ງ 42 ຄັ້ງ; ຈັດຕັ້ງການເຄື່ອນໄຫວວຽກງານໂຄສະນາເຜີຍແຜ່ກົດໝາຍຢ່າງຕໍ່ເນື່ອງໃນຂັ້ນສູນກາງ ແລະ ສືບຕໍ່ໂຄສະນາເຜີຍແຜ່ກົດໝາຍ ຜ່ານໂທລະພາບປ້ອງກັນຄວາມສະຫງົບ ໃນລາຍການເພື່ອ "ສັງຄົມຍຸຕິທຳ" ຢ່າງເປັນປົກກະຕິ; ເກັບກຳຂ່າວ ແລະ ຂຽນບົດອະທິບາຍກົດໝາຍລົງໜັງສືພິມໄດ້ທັງໝົດ 36 ບົດ, ແຈກຢາຍປຶ້ມກົດໝາຍ ຈຳນວນ 699 ຫົວ, ວາລະສານ ຈຳນວນ 6.000 ຫົວ, ເອົານິຕິກຳລົງເວັບໄຊ໌ ຈຳນວນ 30 ສະບັບ. ສຳລັບຂັ້ນທ້ອງຖິ່ນ ໄດ້ເຜີຍແຜ່ກົດໝາຍທາງໂທລະພາບ ຈຳນວນ 84 ຄັ້ງ, ວິທະຍຸກະຈາຍສຽງເປັນພາສາລາວໄດ້ 654 ຄັ້ງ, ໂຄສະນາທາງໂທລະໂຄ່ງຂອງແຂວງ ໄດ້ 4.682 ຄັ້ງ, ໂຄສະນາທາງປາກເປົ່າຢູ່ບ້ານ 540 ບ້ານ, ກຸ່ມບ້ານ 42 ກຸ່ມ, ໂຮງຮຽນ 30 ຄັ້ງ, ສະຖານທີ່ອື່ນໆ 378 ຄັ້ງ; ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ ຈຳນວນ 56.395 ຄົນ, ເປັນຍິງ 26.555 ຄົນ.

– ໄດ້ປະກອບສ່ວນໃນການຄົ້ນຄວ້າກວດກາຄວາມສອດຄ່ອງຂອງຮ່າງກົດໝາຍ ຈຳນວນ 50 ສະບັບ (ສ້າງໃໝ່ ຈຳນວນ 16 ສະບັບ ແລະ ປັບປຸງ ຈຳນວນ 34 ສະບັບ ແລະ ນິຕິກຳໃຕ້ກົດໝາຍຈຳນວນໜຶ່ງ, ໃນນີ້: ກົດໝາຍທີ່ນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນ ເທື່ອທີ 2, 3 ແລະ 4 ຂອງສະພາແຫ່ງຊາດ ຊຸດທີ IX ຈຳນວນ 32 ສະບັບ ແລະ ມີກົດໝາຍທີ່ຕິດພັນກັບ 2 ວາລະແຫ່ງຊາດ ມີທັງໝົດ 17 ສະບັບ, ໃນນັ້ນ: 11 ສະບັບ ຕິດພັນກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໂດຍສະເພາະນິຕິກຳທີ່ຕິດພັນກັບຄຳສັ່ງເລກທີ 18/ນຍ. ພ້ອມດຽວກັນນີ້, ລັດຖະບານຍັງໄດ້ຄົ້ນຄ້ວາຍຸດທະສາດການພັດທະນາໃນຫຼາຍຂົງເຂດ ແລະ ນຳສະເໜີສະພາແຫ່ງຊາດຮັບຮອງ ເປັນຕົ້ນ: ຮ່າງຍຸດທະສາດພັດທະນາແຮ່ທາດ 10 ປີ (2021-2025) ແລະ ວິໄສທັດຮອດປີ 2035; ຍຸດທະສາດການຄຸ້ມຄອງນ້ຳ ແລະ

ຊັບພະຍາກອນນໍ້າແຫ່ງຊາດ ຮອດປີ 2030; ນອກຈາກນີ້, ຍັງມີຍຸດທະສາດຈຳນວນໜຶ່ງຕື່ມອີກ ທີ່ໄດ້ຮັບການຄົ້ນຄວ້າ ຮ່ວມກັນກັບຄູ່ຮ່ວມພັດທະນາເພື່ອຮອງຮັບໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IX (2021-2025).

– ມີຄຳຕັດສິນຂອງສານ ຈຳນວນທັງໝົດ 54.575 ເລື່ອງ, ສາມາດນຳມາຈັດຕັ້ງປະຕິບັດ ໄດ້ 43.660 ເລື່ອງ, ເທົ່າກັບ 80%; ຈັດຕັ້ງປະຕິບັດສຳເລັດ ແລະ ປິດສຳນວນຄະດີ ໄດ້ 4.658 ເລື່ອງ, ເທົ່າກັບ 8,53% ຂອງຄຳຕັດສິນຄະດີ ທີ່ມີທັງໝົດ ແລະ ເທົ່າກັບ 28,78% ຂອງຈຳນວນຄຳຕັດສິນຄະດີທີ່ເຂົ້າໃໝ່; ໄດ້ສົ່ງໃຫ້ໄອຍະການ ຈຳນວນ 267 ເລື່ອງ. ມາຮອດປັດຈຸບັນມີຄຳຕັດສິນຂອງສານທົ່ວປະເທດຍັງຄ້າງ ຈຳນວນທັງໝົດ 49.650 ເລື່ອງ (ແພ່ງ 9.393 ເລື່ອງ, ອາຍາ 36.472 ເລື່ອງ), ໃນນີ້: ມີຄະດີປະຕິບັດບໍ່ໄດ້ ຈຳນວນ 3.614 ເລື່ອງ (ແພ່ງ 513 ເລື່ອງ, ອາຍາ 3.101 ເລື່ອງ) ແລະ ໂຈະການປະຕິບັດໄວ້ທັງໝົດ 171 ເລື່ອງ (ແພ່ງ 43 ເລື່ອງ, ອາຍາ 128 ເລື່ອງ).

– ມີຂໍ້ຂັດແຍ່ງທາງດ້ານເສດຖະກິດທີ່ສະເໜີໃຫ້ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ຫ້ອງການແກ້ໄຂ ຂໍ້ຂັດແຍ່ງທາງດ້ານເສດຖະກິດໃນຂອບເຂດທົ່ວປະເທດ ມີທັງໝົດຈຳນວນ 164 ຂໍ້ຂັດແຍ່ງ, ແກ້ໄຂສຳເລັດ 91 ຂໍ້ຂັດແຍ່ງ ລວມມູນຄ່າ 169.475.163.166 ກີບ; 20.302.550 ໂດລາສະຫະລັດ; 121.882.795 ບາດ ແລະ 2.000.000 ຢວນ; ສົ່ງອອກ 31 ຂໍ້ຂັດແຍ່ງ, ພວມດຳເນີນ 42 ເລື່ອງ.

– ວຽກງານຍຸຕິທຳຮາກຖານພົ້ນເດັ່ນແມ່ນໄດ້ຮັບຮອງແຜນສ້າງຄວາມເຂັ້ມແຂງ ໃຫ້ແກ່ວຽກງານຍຸຕິທຳຮາກຖານ ໂດຍສະເພາະວຽກງານການສ້າງຄອບຄົວ ແລະ ບ້ານແບບຢ່າງປະຕິບັດກົດໝາຍ, ການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ແລະ ວຽກງານຍຸຕິທຳເດັກທີ່ຕິດພັນກັບ 2 ວາລະແຫ່ງຊາດ; ໄດ້ສຳເລັດການຄົ້ນຄວ້າສຳນວນຄຳຮ້ອງກ່ຽວກັບວຽກງານສັນຊາດ ລາວ ຈຳນວນ 12 ສຳນວນ, ຂໍສັນຊາດລາວຄືນ ຈຳນວນ 6 ສຳນວນ ແລະ ຂໍປະສັນຊາດລາວ ຈຳນວນ 1 ສຳນວນ; ຄົ້ນຄວ້າ ຄຳຮ້ອງຂໍເອົາເດັກນ້ອຍໄປເປັນລູກລ້ຽງຂອງຄົນຕ່າງປະເທດ ຈຳນວນ 1 ສະບັບ; ອອກໜັງສືຢັ້ງຢືນການເອົາເດັກໄປເປັນ ລູກລ້ຽງຂອງຄົນຕ່າງປະເທດ ຈຳນວນ 2 ສະບັບ ແລະ ຄົ້ນຄວ້າສຳນວນການຂໍເອົາເດັກລາວໄປເປັນລູກລ້ຽງຄົນຕ່າງປະເທດ ຈຳນວນ 4 ສຳນວນ.

ສິ່ງທ້າທາຍ: (1) ການພັດທະນາວຽກງານຍຸຕິທຳ ມີບາງດ້ານບໍ່ທັນໄດ້ຮັບຄວາມເອົາໃຈໃສ່, ສ່ວນໃຫຍ່ແມ່ນການ ແລ່ນນຳບັນຫາສະເພາະໜ້າ ອັນທີ່ເປັນລັກສະນະຍຸດທະສາດບາງດ້ານຍັງເຮັດບໍ່ທັນໄດ້ດີ, ແກ່ຍືດແກ່ຍາວ ແລະ ອື່ນໆ; ອັນທີ່ສັງຄົມຈົ່ມວ່າຫຼາຍກວ່າໝູ່ກໍແມ່ນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຊຶ່ງມີສະພາບຊັກຊ້າ, ແກ່ຍາວ ໂດຍບໍ່ສົມ ເຫດສົມຜົນ ເຮັດໃຫ້ຈຳນວນຄະດີນັບມື້ອັ່ງອໍຂຶ້ນ; (2) ການເຮັດພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນກ່ຽວກັບວຽກງານກົດໝາຍ ແລະ ຍຸຕິທຳບໍ່ໄດ້ຢ່າງເຕັມສ່ວນ ໂດຍສະເພາະຢູ່ຂັ້ນທ້ອງຖິ່ນ ສ່ວນໃຫຍ່ຍັງບໍ່ສາມາດເຮັດໜ້າທີ່ເປັນເສນາທິການໃນການສ້າງ, ການກວດການິຕິກຳທີ່ຄະນະພັກ ແລະ ອົງການປົກຄອງ ທ້ອງຖິ່ນວາງອອກ; (3) ການປະຕິບັດລະບອບສະຫຼຸບ, ລາຍງານ ແລະ ການສ່ອງແສງຂອງຫຼາຍພາກສ່ວນຍັງເຮັດບໍ່ທັນດີ, ເນື້ອໃນບໍ່ລະອຽດ, ຊັດເຈນ, ຊັກຊ້າ, ບໍ່ຖືກກັບກຳນົດເວລາ ແລະ ຄວາມເປັນຈິງ ອັນເປັນສາເຫດພາໃຫ້ການສະໜອງ ຂໍ້ມູນ ແລະ ເອກະສານຕ່າງໆບໍ່ທັນຮັບປະກັນ; ຂອດການບໍລິການຮັບໃຊ້ ແລະ ການສ້າງເງື່ອນໄຂເອື້ອອຳນວຍໃຫ້ແກ່ການ ເຄື່ອນໄຫວໃນທົ່ວຂະແໜງຍຸຕິທຳຍັງມີຄວາມຊັກຊ້າ, ບາງຄັ້ງຍັງຂາດຄວາມລະອຽດ ແລະ ບໍ່ມີແຜນລະອຽດຊັດເຈນ.

**2. ວຽກງານຂົງເຂດໄອຍະການ:**

- ອົງການໄອຍະການປະຊາຊົນທຸກຂັ້ນ ໄດ້ເພີ່ມທະວີການຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານ ໂດຍສະເພາະສຸມໃສ່ຈັດຕັ້ງປະຕິບັດຄຳສັ່ງ ເລກທີ 015/ອອປສ, ລົງວັນທີ 25 ສິງຫາ 2021 ວ່າດ້ວຍການເພີ່ມທະວີການ ຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານ ແລະ ໄດ້ລົງນາມບົດບັນທຶກຮ່ວມວ່າດ້ວຍການກຳນົດກົນໄກປະສານ ງານກ່ຽວກັບການຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານ ລະຫວ່າງ ອົງການໄອຍະການປະຊາຊົນສູງສຸດ ກັບກະຊວງຍຸຕິທຳ, ພ້ອມທັງໄດ້ອອກຄຳສັ່ງ ເລກທີ 003/ອອປສ, ລົງວັນທີ 17 ມັງກອນ 2023 ເພື່ອໃຫ້ບັນດາກົມ ແລະ ອົງການໄອຍະການປະຊາຊົນທ້ອງຖິ່ນຈັດຕັ້ງປະຕິບັດຢ່າງຖືກຕ້ອງ ແລະ ເຂັ້ມງວດກວ່າເກົ່າ, ຊຶ່ງປັດຈຸບັນບັນດາອົງການ

ໄອຍະການປະຊາຊົນແຂວງຈຳນວນໜຶ່ງ ກໍໄດ້ຈັດຕັ້ງຜັນຂະຫຍາຍຮ່ວມກັບພາກສ່ວນກ່ຽວຂ້ອງ ເຊັ່ນ: ແຂວງຫົວພັນ, ຫຼວງພະບາງ, ໄຊຍະບູລີ, ຊຽງຂວາງ, ຜົ້ງສາລີ, ບໍ່ແກ້ວ, ຄຳມ່ວນ, ບໍລິຄຳໄຊ, ສາລະວັນ, ສະຫວັນນະເຂດ ແລະ ຈຳປາສັກ ຜ່ານການຕິດຕາມກວດກາ ໃນໄລຍະ 2 ປີເຄິ່ງຜ່ານມາ ເຫັນວ່າມີຄຳຕັດສິນຄະດີອາຍາຢູ່ນຳອົງການຈັດຕັ້ງປະຕິບັດຄຳຕັດສິນ (ກະຊວງຍຸຕິທຳ) ມີຈຳນວນ 47.254 ເລື່ອງ, ປະຕິບັດສຳເລັດ 5.200 ເລື່ອງ, ເທົ່າກັບ 11% ແລະ ມີຄຳຕັດສິນຄະດີແພ່ງ 13.911 ເລື່ອງ, ປະຕິບັດສຳເລັດ 2.948 ເລື່ອງ, ເທົ່າກັບ 21,19%; ນອກຈາກນັ້ນ, ຍັງໄດ້ຈັດປະຕິບັດດຳລັດຂອງລັດຖະບານວ່າດ້ວຍຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດເລກທີ 07/ລບ ແລະ ເລກທີ 280/ລບ, ລົງວັນທີ 9 ສິງຫາ 2022 ຊຶ່ງໄດ້ແຕ່ງຕັ້ງພະນັກງານປະກອບເປັນຄະນະກຳມະການເຕົ້າໂຮມຊັບສິນ, ອາຍັດ ແລະ ສານຕັດສິນຮິບເປັນຂອງລັດ ຈຳນວນ 2 ຄັ້ງ, ຊຶ່ງກຳລັງຢູ່ໃນຂັ້ນຕອນການເກັບກຳ, ສັງລວມຂໍ້ມູນ ແລະ ເຕົ້າໂຮມຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບມາເປັນຂອງລັດ.

- ໄດ້ຫັນເອົາພະນັກງານໄອຍະການປະຊາຊົນໄປປະຈຳຢູ່ຄ້າຍຄຸມຂັງ-ດັດສ້າງ ເພື່ອຈັດຕັ້ງປະຕິບັດຄຳແນະນຳຮ່ວມລະຫວ່າງອົງການໄອຍະການປະຊາຊົນສູງສຸດ, ກະຊວງຍຸຕິທຳ ແລະ ກະຊວງປ້ອງກັນຄວາມສະຫງົບ ເລກທີ 015/ອອປສ.ກຍ.ປກສ, ລົງວັນທີ 9 ກັນຍາ 2019 ວ່າດ້ວຍການຫັນເອົາພະນັກງານໄອຍະການ ແລະ ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານປະຈຳຢູ່ຄ້າຍຄຸມຂັງ ແລະ ຄ້າຍກັກຂັງຊົ່ວຄາວ; ພ້ອມທັງຫັນລົງທ້ອງຖິ່ນເພື່ອຊຸກຍູ້ການເຄື່ອນໄຫວວຽກງານຕິດຕາມກວດກາຄ້າຍຄຸມຂັງ-ດັດສ້າງ ໂດຍຕິດພັນກັບວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ.

- ໄດ້ຍົກສູງຄຸນນະພາບການຕິດຕາມກວດກາການປະຕິບັດກົດໝາຍໃນການດຳເນີນຄະດີຢູ່ສານ ຕາມຄຳສັ່ງເລກທີ 010/ອອປສ, ລົງວັນທີ 30 ກໍລະກົດ 2021 ວ່າດ້ວຍການແຕ່ງຕັ້ງພະນັກງານໄອຍະການປະຊາຊົນ ຕິດຕາມກວດກາການດຳເນີນຄະດີອາຍາຢູ່ສານ ແລະ ເຂົ້າຮ່ວມປະຊຸມສານອາຍາ ເພື່ອກວດກາການປະຕິບັດກົດໝາຍໃນທີ່ປະຊຸມສານ.

- ໄດ້ລົງນາມບົດບັນທຶກຮ່ວມລະຫວ່າງອົງການໄອຍະການປະຊາຊົນສູງສຸດ ແລະ ສານປະຊາຊົນສູງສຸດ ວ່າດ້ວຍການກຳນົດກົນໄກປະສານງານ; ນັບແຕ່ປີ 2021 ຫາ ເດືອນມິຖຸນາ ປີ 2023 ອົງການໄອຍະການປະຊາຊົນທຸກຂັ້ນໄດ້ເອົາໃຈໃສ່ຄົ້ນຄວ້າ ແລະ ແກ້ໄຂຄະດີ ດັ່ງນີ້:

**1) <u>ຄະດີອາຍາ</u>:**

+ <u>ໄດ້ຮັບສຳນວນຄະດີອາຍາຂັ້ນຕົ້ນ</u>: ຈຳນວນ 27.848 ເລື່ອງ, ໃນນີ້: ຄະດີຄ້າງມາ 680 ເລື່ອງ, ໄດ້ແກ້ໄຂແລ້ວ 26.781 ເລື່ອງ, ເທົ່າກັບ 96,17% ແລະ ກຳລັງຄົ້ນຄວ້າ 1.067 ເລື່ອງ.ໃນຈຳນວນທີ່ແກ້ໄຂນັ້ນໄດ້ສັ່ງຟ້ອງ ແລະ ຖະແຫຼງໃນທີ່ປະຊຸມສານ 14.364 ເລື່ອງ; ສານຕັດສິນເອົາຕາມຄຳຖະແຫຼງຂອງໄອຍະການທັງໝົດ 14.295 ເລື່ອງ, ເທົ່າກັບ 99,52%; ສານຕັດສິນເອົາຕາມຄຳຖະແຫຼງບາງສ່ວນ 18 ເລື່ອງ ແລະ ບໍ່ເອົາຕາມຄຳຖະແຫຼງ 51 ເລື່ອງ ແລະ ໄອຍະການສະເໜີຄັດຄ້ານ 35 ເລື່ອງ.

+ <u>ສຳນວນຄະດີອາຍາຂັ້ນອຸທອນ</u>: ຈຳນວນ 985 ເລື່ອງ, ໃນນີ້: ແກ້ໄຂແລ້ວ 934 ເລື່ອງ, ເທົ່າກັບ 94,82% ແລະ ກຳລັງຄົ້ນຄວ້າ 51 ເລື່ອງ. ໃນຈຳນວນທີ່ແກ້ໄຂນັ້ນໄດ້ຖະແຫຼງໃນທີ່ປະຊຸມສານ 565 ເລື່ອງ; ສານຕັດສິນເອົາຕາມຄຳຖະແຫຼງ 499 ເລື່ອງ, ເທົ່າກັບ 88,32%; ສານພິພາກສາເອົາຕາມຄຳຖະແຫຼງບາງສ່ວນ 37 ເລື່ອງ ແລະ ບໍ່ເອົາຕາມຄຳຖະແຫຼງ 29 ເລື່ອງ ແລະ ໄອຍະການໄດ້ສະເໜີຄັດຄ້ານ 14 ເລື່ອງ.

+ <u>ສຳນວນຄະດີອາຍາຂັ້ນລົບລ້າງ</u>: ຈຳນວນ 423 ເລື່ອງ, ໃນນີ້: ແກ້ໄຂແລ້ວ 390 ເລື່ອງ, ເທົ່າກັບ 92,20% ແລະ ກຳລັງຄົ້ນຄວ້າ 33 ເລື່ອງ. ໃນຈຳນວນທີ່ແກ້ໄຂນັ້ນໄດ້ຖະແຫຼງໃນທີ່ປະຊຸມສານ 226 ເລື່ອງ; ສານພິພາກສາເອົາຕາມຄຳຖະແຫຼງ 183 ເລື່ອງ, ເທົ່າກັບ 96,82%; ສານພິພາກສາເອົາຕາມຄຳຖະແຫຼງບາງສ່ວນ 1 ເລື່ອງ ແລະ ບໍ່ເອົາຕາມຄຳຖະແຫຼງ 5 ເລື່ອງ ແລະ ໄອຍະການສະເໜີຄັດຄ້ານ 2 ເລື່ອງ.

+ <u>ໄດ້ຮັບຄຳຮ້ອງຂໍຣືຟື້ນຄະດີອາຍາ</u>: ຈຳນວນ 153 ເລື່ອງ, ໃນນີ້: ແກ້ໄຂແລ້ວ 138 ເລື່ອງ, ເທົ່າກັບ 90,20% ແລະ ກຳລັງຄົ້ນຄວ້າ 15 ເລື່ອງ.ໃນຈຳນວນທີ່ແກ້ໄຂນັ້ນໄດ້ຕົກລົງບໍ່ຮື້ຟື້ນຄະດີ 98 ເລື່ອງ; ທວງສຳນວນຄະດີມາກວດກາຄືນ 30 ເລື່ອງ; ແຈ້ງຕອບ 4 ເລື່ອງ, ສົ່ງໃຫ້ພາກສ່ວນອື່ນ 5 ເລື່ອງ ແລະ ຄູ່ຄວາມມາຖອນຄຳຮ້ອງ 1 ເລື່ອງ.

+ ໄດ້ຮັບສຳນວນຄະດອາຍາຂັ້ນຮື້ຟື້ນ: ຈຳນວນ 98 ເລື່ອງ, ໃນນີ້: ແກ້ໄຂແລ້ວ 87 ເລື່ອງ, ເທົ່າກັບ 88,78% ແລະ ກຳລັງຄົ້ນຄວ້າ 11 ເລື່ອງ. ໃນຈຳນວນທີ່ແກ້ໄຂນັ້ນໄດ້ສະເໜີຮື້ຟື້ນຄະດີ 16 ເລື່ອງ ແລະ ຕົກລົງບໍ່ຮື້ຟື້ນ 15 ເລື່ອງ; ອອກຄຳຕົກລົງລົບລ້າງບັນດາຄຳສັ່ງທີ່ບໍ່ຖືກຕ້ອງຕາມກົດໝາຍ ເປັນຕົ້ນ: ຄຳສັ່ງຊັດມ້ຽນຄະດີ ແລະ ຄຳສັ່ງບໍ່ເປີດການສືບສວນ-ສອບສວນ 14 ເລື່ອງ; ລາຍງານສະພາແຫ່ງຊາດຄືນ 24 ເລື່ອງ; ສົ່ງໃຫ້ອົງການໄອຍະການປະຊາຊົນທ້ອງຖິ່ນ 15 ເລື່ອງ ເພາະຄະດີດັ່ງກ່າວພວມດຳເນີນຢູ່ຂັ້ນທ້ອງຖິ່ນ ແລະ ແຈ້ງຕອບ 3 ເລື່ອງ.

**2) ຄະດີແພ່ງ:**

+ ໄດ້ຮັບສຳນວນຄະດີແພ່ງຂັ້ນຕົ້ນ: ຈຳນວນ 3.610 ເລື່ອງ, ໃນນີ້: ຄະດີຄ້າງມາ 46 ເລື່ອງ, ໄດ້ແກ້ໄຂແລ້ວ 3.514 ເລື່ອງ, ເທົ່າກັບ 97,3% ແລະ ກຳລັງຄົ້ນຄວ້າ 96 ເລື່ອງ. ໃນຈຳນວນທີ່ແກ້ໄຂນັ້ນໄດ້ຖະແຫຼງໃນທີ່ປະຊຸມສານ 1.892 ເລື່ອງ; ສານຕັດສິນຕາມຄຳຖະແຫຼງຂອງໄອຍະການ 1.874 ເລື່ອງ, ເທົ່າກັບ 99,05%; ສານຕັດສິນເອົາຕາມຄຳຖະແຫຼງບາງສ່ວນ 12 ເລື່ອງ; ບໍ່ເອົາຕາມຄຳຖະແຫຼງ 6 ເລື່ອງ ແລະ ໄອຍະການສະເໜີຄັດຄ້ານ 3 ເລື່ອງ.

+ ສຳນວນຄະດີແພ່ງຂັ້ນອຸທອນ: ຈຳນວນ 1.343 ເລື່ອງ, ໃນນີ້: ຄະດີຄ້າງມາ 28 ເລື່ອງ, ໄດ້ແກ້ໄຂແລ້ວ 1.287 ເລື່ອງ, ເທົ່າກັບ 95,83% ແລະ ກຳລັງຄົ້ນຄວ້າ 56 ເລື່ອງ. ໃນຈຳນວນທີ່ແກ້ໄຂນັ້ນໄດ້ຖະແຫຼງໃນທີ່ປະຊຸມສານ 1.072 ເລື່ອງ, ສານພິພາກສາເອົາຕາມຄຳຖະແຫຼງຂອງໄອຍະການ 933 ເລື່ອງ, ເທົ່າກັບ 87,03%; ສານພິພາກສາເອົາຕາມຄຳຖະແຫຼງບາງສ່ວນ 68 ເລື່ອງ ແລະ ບໍ່ເອົາຕາມຄຳຖະແຫຼງ 71 ເລື່ອງ ແລະ ໄອຍະການສະເໜີຄັດຄ້ານ 7 ເລື່ອງ.

+ ສຳນວນຄະດີແພ່ງຂັ້ນລົບລ້າງ: ຈຳນວນ 678 ເລື່ອງ, ໃນນີ້: ຄະດີຄ້າງມາ 23 ເລື່ອງ, ໄດ້ແກ້ໄຂແລ້ວ 634 ເລື່ອງ, ເທົ່າກັບ 96,99% ແລະ ກຳລັງຄົ້ນຄວ້າ 14 ເລື່ອງ. ສານພິພາກສາແລ້ວ 441 ເລື່ອງ, ໃນນັ້ນສານພິພາກສາຢັ້ງຢືນເອົາຕາມຄຳຖະແຫຼງຂອງໄອຍະການ 394 ເລື່ອງ, ເທົ່າກັບ 89,34%; ສານພິພາກສາເອົາຕາມຄຳຖະແຫຼງຂອງໄອຍະການບາງສ່ວນ 47 ເລື່ອງ, ເທົ່າກັບ 10,66%.

+ ຄຳຮ້ອງຂໍຮື້ຟື້ນຄະດີແພ່ງ: ຈຳນວນ 491 ເລື່ອງ, ໃນນີ້: ຄຳຮ້ອງຄ້າງມາ 50 ເລື່ອງ, ໄດ້ແກ້ໄຂແລ້ວ 476 ເລື່ອງ, ເທົ່າກັບ 96,94% ແລະ ກຳລັງຄົ້ນຄວ້າ 15 ເລື່ອງ. ໃນຈຳນວນທີ່ແກ້ໄຂນັ້ນໄດ້ຕົກລົງບໍ່ຮື້ຟື້ນຄະດີ 305 ເລື່ອງ; ທວງສຳນວນຄະດີມາກວດກາຄືນ 138 ເລື່ອງ; ສົ່ງໃຫ້ພາກສ່ວນອື່ນພິຈາລະນາ 28 ເລື່ອງ; ຄູ່ຄວາມມາຖອນຄຳຮ້ອງ 5 ເລື່ອງ.

+ ສຳນວນຄະດີແພ່ງຂັ້ນຮື້ຟື້ນ: ຈຳນວນ 244 ເລື່ອງ, ໃນນີ້: ໄດ້ແກ້ໄຂແລ້ວ 201 ເລື່ອງ, ເທົ່າກັບ 82,37% ແລະ ກຳລັງຄົ້ນຄວ້າ 15 ເລື່ອງ. ໃນຈຳນວນທີ່ແກ້ໄຂນັ້ນໄດ້ຕົກລົງຮື້ຟື້ນຄະດີຕາມແຈ້ງການຂອງສະພາແຫ່ງຊາດ 9 ເລື່ອງ; ຕົກລົງບໍ່ຮື້ຟື້ນຄະດີຕາມແຈ້ງການດັ່ງກ່າວ 30 ເລື່ອງ; ລາຍງານຄືນຕໍ່ສະພາແຫ່ງຊາດ 17 ເລື່ອງ; ສະເໜີຮື້ຟື້ນຄະດີຕາມຄຳຮ້ອງຂໍຮື້ຟື້ນ 58 ເລື່ອງ; ຕົກລົງບໍ່ຮື້ຟື້ນຄະດີຕາມຄຳຮ້ອງຂໍຮື້ຟື້ນ 69 ເລື່ອງ ແລະ ສົ່ງອົງການໄອຍະການປະຊາຊົນທ້ອງຖິ່ນຕິດຕາມກວດກາຕາມຂັ້ນຕອນຂອງກົດໝາຍ 18 ເລື່ອງ ເພາະຄະດີດັ່ງກ່າວພວມດຳເນີນຢູ່ຂັ້ນທ້ອງຖິ່ນ.

**3. ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ:**

ລັດຖະບານ ໄດ້ສືບຕໍ່ເອົາໃຈໃສ່ຊີ້ນຳສ້າງເງື່ອນໄຂໃໝ່ໃຫ້ແກ່ການຈັດຕັ້ງປະຕິບັດໜ້າທີ່ແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານຂອງພັກ ດ້ວຍທຸກມາດຕະການລວມທັງການສືບຕໍ່ສຸມໃສ່ສ້າງຮາກຖານການເມືອງ ແລະ ພັດທະນາເຂດຈຸດສຸມໃຈກາງ ຕິດພັນກັບການປັບປຸງກຳລັງປ້ອງກັນຊາດ, ປ້ອງກັນຄວາມສະຫງົບທຸກຂັ້ນຕາມ 4 ໜ້າທີ່ໃຫຍ່ 26 ແຜນງານຂອງວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະ ກຳລັງ ປກຊ, ປກສ ທຸກຂັ້ນກໍໄດ້ຮັບການປັບປຸງໜັກແໜ້ນ ແລະ ເຂັ້ມແຂງໃນທຸກດ້ານ ເຊິ່ງສາມາດປະຕິບັດໜ້າທີ່ການເມືອງຂອງຕົນໃນທຸກສະຖານະການ. ອັນພິເສດແມ່ນໄດ້ສຸມໃສ່ຊີ້ນຳການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍ ການແກ້ໄຂບັນຫາຢາເສບຕິດ ຕິດພັນກັບການແກ້ໄຂບັນຫາປະກົດການຫຍໍ້ທໍ້ໃນສັງຄົມ ດ້ວຍມາດຕະການຕ່າງໆຢ່າງເປັນປົກກະຕິ. ຜ່ານການຈັດຕັ້ງປະຕິບັດຕົວຈິງກໍມີຜົນສຳເລັດໃນຫຼາຍດ້ານ ຊຶ່ງຕົ້ນຕໍແມ່ນສາມາດສະກັດກັ້ນ ແລະ ແກ້ໄຂໄດ້ບັນດາໜໍ່ແໜງທີ່ຈະກໍ່ຄວາມ

ບໍ່ສະຫງົບຢ່າງທັນການ ເຮັດໃຫ້ປະເທດຊາດສືບຕໍ່ມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍໂດຍພື້ນຖານ.

<u>ສິ່ງທ້າທາຍ</u>: ຍັງມີປະກົດການຫຍໍ້ທໍ້ເກີດຂຶ້ນໃນສັງຄົມ ແລະ ໃນທຸກທ້ອງຖິ່ນໃນລະດັບແຕກຕ່າງກັນ ເປັນຕົ້ນ: ບັນຫາຢາເສບຕິດ, ປະກົດການຂີ້ລັກງັດແງະ, ການຄ້າຂາຍເຖື່ອນ ແລະ ການຄ້າມະນຸດເພີ່ມຂຶ້ນ ຊຶ່ງຄາດຄະເນວ່າຈຳນວນຜູ້ຖືກເຄາະຮ້າຍຈະເພີ່ມຂຶ້ນ ໂດຍສະເພາະແມ່ນການເຮັດວຽກຂ້າມຊາຍແດນ, ການເຄື່ອນຍ້າຍແຮງງານໄປເຮັດວຽກໃນເຂດຕ່າງໆ ແລະ ທ່າອ່ຽງເພີ່ມຂຶ້ນຂອງການວ່າຈ້າງງານທາງອອນລາຍທີ່ຜິດກົດໝາຍ ແລະ ການຂູດຮີດ (ສາຍສົນທະນາ, ສູນການໂທຫຼອກຫຼວງ ແລະ ອື່ນໆ).

# III. ການຈັດຕັ້ງປະຕິບັດເງື່ອນໄຂການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ LDC

\+ **ການປະເມີນ LDC ປີ 2021**: ສປປ ລາວ ສາມາດບັນລຸທັງໝົດ 3 ເງື່ອນໄຂຂອງການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ໂດຍອີງຕາມຜົນການປະເມີນຂອງຄະນະກຳມະການນະໂຍບາຍການພັດທະນາ (Committee for Development Policy: CDP) ສະຫະປະຊາຊາດ ພາຍໃຕ້ສະພາເສດຖະກິດ-ສັງຄົມ ສປຊ (UN Economic and Social Council: ECOSOC); ໃນປີ 2021 ເຊິ່ງຖືເປັນຄັ້ງທີ 2 ຕິດຕໍ່ກັນ ທີ່ ສປປ ລາວ ສາມາດບັນລຸໄດ້ ຫຼັງຈາກການຜົນປະເມີນ ໃນປີ 2018. ສຳລັບຜົນການປະເມີນ ໃນປີ 2021, ສປປ ລາວ ສາມາດບັນລຸໄດ້ ຄື:

1) <u>ຄ່າດັດຊະນີລາຍໄດ້ຕໍ່ຫົວຄົນ ຫຼື GNI</u>: ແມ່ນຄ່າວັດແທກຊີວິດການເປັນຢູ່ຂອງປະຊາຊົນລາວມີການປ່ຽນແປງທີ່ດີຂຶ້ນ ເຊິ່ງໃນປີ 2021 ສາມາດປະຕິບັດໄດ້ 2.449 ໂດລາສະຫະລັດ ເຫັນວ່າລື່ນຄາດໝາຍ 5 ປີ ທີ່ກຳນົດໄວ້ ຄືສູງກວ່າ 1.222 ໂດລາສະຫະລັດ ແລະ ສູງກວ່າ ການປະເມີນ GNI ໃນປີ 2018 ທີ່ ສປປ ລາວ ປະຕິບັດໄດ້ 1.996 ໂດລາສະຫະລັດ.

2) <u>ຄ່າດັດຊະນີຊັບສິນມະນຸດ ຫຼື HAI</u>: ຄ່າວັດແທກຄວາມສາມາດໃນການສ້າງຊັບພະຍາກອນມະນຸດທີ່ຈະເປັນກຳລັງໃນການພັດທະນາປະເທດ ເຊິ່ງລວມມີໂພຊະນາການ, ອັດຕາການເກີດ, ອັດຕາການຕາຍ, ອັດຕາການຮູ້ໜັງສື ແລະ ອັດຕາການເຂົ້າຮຽນຊັ້ນມັດທະຍົມ; ການປະເມີນ ໃນປີ 2021 ເຫັນວ່າຫຼຸດລົງໜ້ອຍໜຶ່ງ ໂດຍຫຼຸດລົງຈາກລະດັບ 72,8 ໃນປີ 2018 ມາເປັນ 72,7 ໃນປີ 2021 ແຕ່ຍັງຢູ່ໃນລະດັບເກີນຄາດໝາຍ 5 ປີ ທີ່ວາງໄວ້ ຄືສູງກວ່າລະດັບ 66.

3) <u>ຄ່າດັດຊະນີຄວາມບອບບາງທາງດ້ານເສດຖະກິດ ແລະ ສິ່ງແວດລ້ອມ ຫຼື EVI</u>: ຄ່າວັດແທກສະແດງເຖິງຄວາມບອບບາງຈາກຜົນກະທົບພາຍນອກ ແລະ ຄວາມສາມາດໃນການຮັບມືບັນດາຜົນກະທົບຕ່າງໆ ໃນການປະເມີນ ປີ 2018 ສປປ ລາວ ແມ່ນບໍ່ສາມາດບັນລຸເງື່ອນໄຂດັ່ງກ່າວ ດ້ວຍບາງເງື່ອນໄຂຂອງ EVI ບໍ່ສາມາດຄວບຄຸມໄດ້ ເປັນຕົ້ນ: ປັດໄຈດ້ານທີ່ຕັ້ງພູມສັນຖານ, ຄວາມຫຼາກຫຼາຍ ແລະ ຄວາມມີສະຖຽນລະພາບຂອງການສົ່ງອອກ ແລະ ທາງດ້ານກະສິກຳ. ໃນການປະເມີນ ໃນປີ 2021 ເຫັນວ່າ ບັນຫາດ້ານຕ່າງໆແມ່ນມີການປັບປຸງທີ່ດີຂຶ້ນ ໂດຍສະເພາະບັນດາພື້ນຖານໂຄງລ່າງທີ່ເຊື່ອມຈອດກັບປະເທດຄູ່ຄ້າ ແລະ ບັນດາອົງປະກອບທາງດ້ານເສດຖະກິດທີ່ຕິດພັນກັບນະໂຍບາຍ ແລະ ຄວາມບໍ່ສະຖຽນລະພາບທາງດ້ານການສົ່ງອອກ ແລະ ດ້ານກະສິກຳ ໄດ້ຮັບການປັບປຸງໃຫ້ມີປະສິດທິພາບທີ່ດີຂຶ້ນ ເຮັດໃຫ້ຄ່າດັດຊະນີ EVI ຂອງ ສປປ ລາວ ມີທ່າອ່ຽງດີຂຶ້ນຫຼາຍສົມຄວນ ຈາກລະດັບ 33,7 ໃນປີ 2018 ຫຼຸດລົງມາເປັນ 27 ໃນປີ 2021 ເຫັນວ່າບັນລຸຄາດໝາຍ 5 ປີ ກຳນົດໄວ້ ຄືຕ່ຳກວ່າລະດັບ 32.

\+ **ການກະກຽມປະເມີນ LDC ຄັ້ງທີ 3 ໃນປີ 2024:** ອີງຕາມສະພາບເງື່ອນໄຂຂອງການພັດທະນາ ເຫັນວ່າ ໃນປີ 2023 ການເຕີບໂຕເສດຖະກິດຂອງ ສປປ ລາວ ຍັງສືບຕໍ່ຂະຫຍາຍຕົວຕໍ່ເນື່ອງ. ຕົວເລກມາດຖານ ແລະ ດັດຊະນີຍ່ອຍທີ່ກຳນົດຢູ່ພາຍໃຕ້ 3 ເງື່ອນໄຂ ຍັງຢູ່ໃນລະດັບເກີນຄ່າມາດຕະຖານທີ່ດີ. ສະນັ້ນ, ເຖິງແມ່ນວ່າສະພາບເສດຖະກິດໃນປັດຈຸບັນຈະສົ່ງຜົນກະທົບຕໍ່ລາຍໄດ້ຕໍ່ຫົວຄົນ ແລະ ການພັດທະນາທາງດ້ານສັງຄົມກໍຕາມ ແຕ່ສຳລັບການປະເມີນ ໃນປີ 2024 ໂດຍຄະນະກຳມະການນະໂຍບາຍການພັດທະນາ (CDP) ຄາດວ່າ ສປປ ລາວ ຈະສາມາດສືບຕໍ່ບັນລຸໄດ້ 3 ເງື່ອນໄຂຂອງການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ.

\+ **ການສ້າງແຜນຍຸດທະສາດການຂ້າມຜ່ານ** (Smooth Transition Strategy: STS) ເພື່ອຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາຢ່າງໂລ່ງລ່ຽນຂອງ ສປປ ລາວ (2022-2026 ແລະ ຫຼັງປີ 2026) ຫຼື The Lao PDR's Smooth Transition Strategy for LDC Graduation 2022-2026 and Beyond 2026: ຂະບວນການຮ່າງຍຸດທະສາດ STS ໄດ້ລິເລີ່ມຕັ້ງແຕ່ທ້າຍປີ 2021 ເປັນຕົ້ນມາ ແລະ ໄດ້ດຳເນີນໂດຍຜ່ານກອງປະຊຸມປຶກສາຫາລືຮ່ວມກັບບັນດາຂະແໜງການພາກລັດ, ຄູ່ຮ່ວມພັດທະນາ, ອົງການຈັດຕັ້ງສາກົນ, ອົງການເຄືອຂ່າຍ ສປຊ ແລະ ຫຼາຍພາກສ່ວນໃນສັງຄົມ ລວມເຖິງອົງການຈັດຕັ້ງທາງສັງຄົມ ແລະ ພາກເອກະຊົນ. ມາຮອດປັດຈຸບັນ, ແຜນຍຸດທະສາດ STS ດັ່ງກ່າວແມ່ນໄດ້ຖືກຮັບຮອງໂດຍລັດຖະບານແລ້ວ ໃນທ້າຍປີ 2023 ຜ່ານມາ ແລະ ຈະຖືກສືບຕໍ່ເຊື່ອມສານເຂົ້າໃນບັນດາແຜນງານຂອງຂະແໜງການເພື່ອຈັດຕັ້ງປະຕິບັດໃນໄລຍະຕໍ່ໜ້າ.

## IV. ເປົ້າໝາຍການພັດທະນາແບບຍືນຍົງ SDGs

ສປປ ລາວ ໄດ້ສຸມໃສ່ການຈັດຕັ້ງປະຕິບັດ ປພຍ ຢ່າງຕັ້ງໜ້າໃນໄລຍະຜ່ານມາ ໂດຍຜ່ານການເຊື່ອມສານເຂົ້າໃນບັນດາບຸລິມະສິດ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນການຂະແໜງການຕ່າງໆ ເຊິ່ງສາມາດບັນລຸຄວາມຄືບໜ້າຫຼາຍດ້ານ. ໃນນັ້ນ, ການເຊື່ອມສານວຽກງານດັ່ງກ່າວ ເຂົ້າໃນແຜນການ 5 ປີ ຄັ້ງທີ VIII (2016-2020), ມີຈຳນວນ 46 ຕົວຊີ້ບອກ ຂອງ ທັງໝົດ 18 ປພຍ ແລະ ໄດ້ສືບຕໍ່ເຊື່ອມສານເຂົ້າໃນ ແຜນການ 5 ປີ ຄັ້ງທີ IX ລວມເຖິງວາລະແຫ່ງຊາດ ວ່າດ້ວຍ ການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໂດຍສະເພາະການສຸມທຶນຮອນເຂົ້າໃສ່ຂະແໜງການທີ່ຮີບດ່ວນ ແລະ ເປັນບູລິມະສິດ ຫຼື ເປົ້າໝາຍທີ່ມີຄວາມສ່ຽງບໍ່ບັນລຸ ເປັນຕົ້ນ: ວຽກງານການສະໜອງທຶນການບໍລິການດ້ານສາທາລະນະສຸກ, ການຫຼຸດອັດຕາການຕາຍຂອງແມ່, ອັດຕາການຕາຍຂອງເດັກລຸ່ມ 5 ປີ ທີ່ເຫັນວ່າຍັງມີຄວາມທ້າທາຍ.

ໃນໄລຍະຜ່ານມາ, ສປປ ລາວ ໄດ້ສົ່ງບົດລາຍງານແຫ່ງຊາດແບບສະໝັກໃຈ 2 ສະບັບ (ໃນປີ 2018 ແລະ 2021). ອີງຕາມບົດລາຍງານ ສະບັບທີ 2 ເຫັນວ່າ ຍັງມີສິ່ງທ້າທາຍທີ່ເປັນອຸປະສັກໃນການຈັດຕັ້ງປະຕິບັດ ປພຍ ຢູ່ພາຍໃນປະເທດກໍຄື ແຕ່ລະຂະແໜງການຕ່າງໆ ແຕ່ສູນກາງຮອດທ້ອງຖິ່ນ ແລະ ມີຫຼາຍໜ້າວຽກທີ່ຕິດພັນກັບ ປພຍ ປະສົບຄວາມຫຍຸ້ງຍາກ, ຫຼາຍກິດຈະກຳໄດ້ຖືກເລື່ອນການຈັດຕັ້ງປະຕິບັດອອກໄປ ແລະ ມີຄວາມຊັກຊ້າ ໂດຍສະເພາະໃນໄລຍະທີ່ມີການແຜ່ລະບາດຂອງພະຍາດໂຄວິດ-19. ອີງຕາມຂໍ້ມູນຈາກ ອົງການ ສປຊ ກໍຄື ບົດລາຍງານສາກົນ ກ່ຽວກັບ ປພຍ (Global Report on SDGs) ປະຈຳປີ 2023, ການຈັດຕັ້ງປະຕິບັດ ປພຍ ຂອງ ສປປ ລາວ ແມ່ນຖືກຈັດຢູ່ທີ່ລຳດັບ 115 ຈາກ 166 ປະເທດ (ຄະແນນ 63/100). ໃນນັ້ນ, ການວິເຄາະຂອງ ອົງການ ສປຊ ເຫັນວ່າ ສະຖານະພາບໃນປັດຈຸບັນທຸກ ປພຍ ແມ່ນຍັງມີສິ່ງທ້າທາຍຫຼາຍດ້ານ ສຳລັບ ສປປ ລາວ ທີ່ຈະສາມາດບັນລຸໄດ້. ແຕ່ຄາດຄະເນວ່າ ສປປ ລາວ ມີ

ທ່ວງທ່າທີ່ດີທີ່ຈະສາມາດບັນລຸ ປພຍ 3 ສຸຂະພາບ ແລະ ການເປັນຢູ່ທີ່ດີ, ປພຍ 6 ມີນໍ້າສະອາດ ແລະ ສຸຂະອະນາໄມ, ປພຍ 9 ອຸດສາຫະກໍາ, ນະວັດຕະກໍາ ແລະ ພື້ນຖານໂຄງລ່າງ ແລະ ປພຍ 11 ການສ້າງຕົວເມືອງ ແລະ ຊຸມຊົນທີ່ຍືນຍົງ. ເຖິງແນວໃດກໍຕາມ, ຂໍ້ມູນດັ່ງກ່າວ ແມ່ນການປະເມີນຂອງໜ່ວຍງານສາກົນ ເຊິ່ງອາດບໍ່ໄດ້ສ່ອງແສງເຖິງຄວາມຄືບໜ້າ ການຈັດຕັ້ງປະຕິບັດຕົວຈິງຢູ່ໃນປະເທດ ແລະ ໜ່ວຍງານສາກົນ ອາດຈະບໍ່ທັນໄດ້ເຂົ້າເຖິງຂໍ້ມູນທີ່ຄົບຖ້ວນ, ຖືກຕ້ອງ ແລະ ອັບເດດລ້າສຸດ ຈາກແຫຼ່ງຂໍ້ມູນທາງການຂອງ ສປປ ລາວ ເຊິ່ງອາດເປັນອົງປະກອບໜຶ່ງ ທີ່ສົ່ງຜົນເຮັດໃຫ້ການປະເມີນຂອງ ສາກົນຍັງບໍ່ທັນສອດຄ່ອງຕາມສະພາບຕົວຈິງຢູ່ໃນ ສປປ ລາວ.

ໂດຍລວມແລ້ວ ເຫັນວ່າການຈັດຕັ້ງປະຕິບັດມີຄວາມຄືບໜ້າດີ ພົ້ນເດັ່ນແມ່ນ ປພຍ 3: ຮັບປະກັນການມີສຸຂະພາບທີ່ດີ ແມ່ນໄດ້ສຸມໃສ່ການປັບປຸງການບໍລິການດ້ານສາທາລະນະສຸກ, ວຽກງານແມ່ ແລະ ເດັກ, ໂພຊະນາການເຫັນວ່າຫຼາຍຕົວຊີ້ບອກແມ່ນມີຄວາມຄືບໜ້າດີ ແລະ ມີທ່າອ່ຽງຈະບັນລຸຕາມແຜນການທີ່ວາງໄວ້ ສະແດງອອກ ອັດຕາສ່ວນການຕາຍຂອງແມ່ ຂອງ ສປປ ລາວ ເປັນ 1 ໃນ 10 ປະເທດອາຊຽນ ທີ່ມີອັດຕາຫຼຸດລົງໄວທີ່ສຸດ; ປພຍ 4: ຮັບປະກັນການສຶກສາໃຫ້ມີຄຸນນະພາບ, ເທົ່າທຽມ ແລະ ທົ່ວເຖິງ ໄດ້ສຸມໃສ່ພັດທະນາການສຶກສາໃນທຸກຂັ້ນ ເປັນຕົ້ນ ການສຶກສາກ່ອນໄວຮຽນ, ສາມັນສຶກສາ ແລະ ສ້າງຄູ ແລະ ໄດ້ມີການສໍາເລັດການສ້າງ ແລະ ປັບປຸງສໍານວນຂໍ້ມູນສະຖິຕິຂອງຂະແໜງສຶກສາໃນຈໍານວນ 34 ຕົວຊີ້ບອກ ເຫັນວ່າ ບາງຕົວຊີ້ບອກແມ່ນສາມາດບັນລຸຕາມຄາດໝາຍ ເຊັ່ນ: ອັດຕາການຈົບຊັ້ນປະຖົມ ບັນລຸຄາດໝາຍ 93,1%; ປພຍ 5: ຄວາມສະເໝີພາບຍິງ-ຊາຍ ໄດ້ສຸມໃສ່ຈັດຕັ້ງປະຕິບັດແຜນດໍາເນີນງານແຫ່ງຊາດ ເພື່ອຄວາມສະເໝີພາບຍິງ-ຊາຍ, ແມ່ ແລະ ເດັກ, ປ້ອງກັນ ແລະ ລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ຕໍ່ເດັກ ຊຶ່ງເຫັນວ່າມີຜົນສໍາເລັດທີ່ພົ້ນເດັ່ນ; ປພຍ 7: ການຮັບປະກັນການເຂົ້າເຖິງພະລັງງານທີ່ທັນສະໄໝ ເຫັນວ່າມີທ່າກ້າວຂະຫຍາຍຕົວດີສົມຄວນ ໂດຍສະເພາະການຂະຫຍາຍລະບົບຕາຂ່າຍໄຟຟ້າໃນເຂດຫ່າງໄກສອກຫຼີກຫຼາຍຂຶ້ນ ແລະ ການເພີ່ມອັດຕາການຊົມໃຊ້ໄຟຟ້າ ສະແດງອອກສາມາດບັນລຸການເຂົ້າເຖິງພະລັງງານໄຟຟ້າຂອງຄົວເຮືອນ 95,23% (ໃນປີ 2022). ໃນທາງກົງກັນຂ້າມມີ 1 ເປົ້າໝາຍ ຄື ປພຍ 15: ການອະນຸລັກ ແລະ ນໍາໃຊ້ສິ່ງມີຊີວິດເທິງໜ້າດິນແບບຍືນຍົງ ມີທ່າອ່ຽງທີ່ຖົດຖອຍລົງ. ນອກຈາກນີ້, ມີບາງຕົວຊີ້ບອກໃນບາງເປົ້າໝາຍເຫັນວ່າການຈັດຕັ້ງປະຕິບັດມີຄວາມຄືບໜ້າຊ້າ ແລະ ມີຄວາມສ່ຽງຄາດວ່າຈະບໍ່ບັນລຸ ເຊັ່ນ: ປພຍ 1: ລຶບລ້າງຄວາມທຸກຍາກທຸກຮູບແບບໃນທົ່ວໂລກ ແມ່ນຕົວຊີ້ບອກອັດຕາຄວາມທຸກຍາກ, ຕົວຊີ້ບອກການເພີ່ມອັດຕາສ່ວນປະຊາກອນຖືກປົກຄຸມດ້ວຍລະບົບປະກັນສັງຄົມ; ປພຍ 2: ລຶບລ້າງຄວາມອຶດຫິວ, ຄໍ້າປະກັນສະບຽງອາຫານ ແລະ ປັບປຸງໂພຊະນະການ ແມ່ນຕົວຊີ້ບອກອັດຕາສ່ວນເດັກນ້ອຍທີ່ມີນໍ້າໜັກ ແລະ ລວງສູງບໍ່ໄດ້ມາດຖານ; ປພຍ 4: ດ້ານການສຶກສາແມ່ນຕົວຊີ້ບອກອັດຕາການອອກໂຮງຮຽນ ແລະ ການປະລະການຮຽນ ແມ່ນມີເກນຫຼຸດຄາດໝາຍທີ່ຕັ້ງໄວ້ ແລະ 1 ເປົ້າໝາຍ ຄື ປພຍ 18: ວ່າດ້ວຍການເກັບກູ້ລະເບີດບໍ່ທັນແຕກທີ່ຕົກຄ້າງ ເຫັນວ່າມີຄວາມສ່ຽງບໍ່ສາມາດບັນລຸໄດ້ຕາມຄາດໝາຍ ເນື່ອງຈາກງົບປະມານທີ່ສຸມທຶນຮອນໃສ່ວຽກງານດັ່ງກ່າວ ມີຈໍາກັດ ແລະ ການຊ່ວຍເຫຼືອຈາກສາກົນກໍມີທ່າອ່ຽງຫຼຸດລົງ. ປັດຈຸບັນ, ກໍາລັງກະກຽມການທົບທວນກາງສະໄໝໃນການຈັດຕັ້ງປະຕິບັດ ປພຍ ຮອດປີ 2030 ແລະ ບົດລາຍງານແບບສະໝັກໃຈ ສະບັບທີ 3 ຂອງ ສປປ ລາວ ໃນປີ 2024.

## V. ຕີລາຄາລວມ

ໃນໄລຍະ 2 ປີເຄິ່ງຜ່ານມາ ເຖິງວ່າສະພາບການຂອງໂລກ, ພາກພື້ນ ສືບຕໍ່ຜັນແປຢ່າງສັບສົນ, ພາຍໃນປະເທດ ຄຽງຄູ່ກັບການມີກາລະໂອກາດຫຼາຍດ້ານ ກໍສືບຕໍ່ພົບຂໍ້ຫຍຸ້ງຍາກຫຼາຍດ້ານເຊັ່ນກັນ, ແຕ່ດ້ວຍຄວາມພະຍາຍາມ, ບຸກບືນຂອງທຸກພາກສ່ວນທຸກຂັ້ນໃນການຈັດຕັ້ງລະບົບການເມືອງປະຊາທິປະໄຕ ຈຶ່ງໄດ້ເຮັດໃຫ້ທຸກຄາດໝາຍ ແລະ ທຸກຕົວຊີ້ບອກຂອງແຜນການ 5 ປີ ຄັ້ງທີ IX ລ້ວນແຕ່ໄດ້ຮັບການຈັດຕັ້ງປະຕິບັດ, ເຊິ່ງໝາກຜົນໄດ້ຮັບຕົ້ນຕໍ ມີດັ່ງນີ້:

### 1. ຜົນສຳເລັດທີ່ພົ້ນເດັ່ນ

1) ປະເທດຊາດສືບຕໍ່ມີສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍໂດຍພື້ນຖານ, ບົນຈິດໃຈເສີມຂະຫຍາຍມູນເຊື້ອແຫ່ງຄວາມສາມັກຄີອັນປຶກແຜ່ນ, ເອື້ອເຟື້ອເພື່ອແຜ່ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ຂອງປະຊາຊົນບັນດາເຜົ່າ ໂດຍພາຍໃຕ້ການນຳພາຂອງພັກ, ຊຶ່ງແກນກາງແມ່ນກົມການເມືອງ ແລະ ຄະນະເລຂາທິການສູນກາງພັກ.
2) ພື້ນຖານການຜະລິດ ແລະ ການບໍລິການ ສືບຕໍ່ໄດ້ຮັບການພັດທະນາ ແລະ ເກີດມີໜໍ່ແໜງໃໝ່ຈຳນວນໜຶ່ງ ເປັນຕົ້ນ: ການຜະລິດພືດ-ສັດລ້ຽງ ເພື່ອເປັນສະບຽງອາຫານ ແລະ ເປັນສິນຄ້າສົ່ງອອກ ເຮັດໃຫ້ເສດຖະກິດໄດ້ຄ່ອຍໆຟື້ນຕົວ ແລະ ສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ; ການຄຸ້ມຄອງລາຍຮັບ, ລາຍຈ່າຍ ແລະ ເງິນຕາໄດ້ຮັບການປັບປຸງໃຫ້ດີຂຶ້ນເປັນກ້າວໆ, ສິ່ງສຳຄັນແມ່ນເສດຖະກິດຂອງປະເທດບໍ່ຕົກເຂົ້າສູ່ວິກິດການ.
3) ໂຄງລ່າງພື້ນຖານທີ່ສຳຄັນຮັບໃຊ້ໃຫ້ແກ່ການຜະລິດ, ທຸລະກິດ ແລະ ການເຊື່ອມໂຍງ-ເຊື່ອມຈອດກັບພາກພື້ນ ແລະ ສາກົນ ໄດ້ຮັບການພັດທະນາ ແລະ ຍົກລະດັບ ໂດຍການມີສ່ວນຮ່ວມຂອງທຸກພາກສ່ວນເສດຖະກິດ ເປັນຕົ້ນ: ສຳເລັດການກໍ່ສ້າງເສັ້ນທາງລົດໄຟລາວ-ຈີນ, ທາງດ່ວນ, ທ່າບົກ-ລະບົບໂລຈິດສຕິກ ແລະ ເສັ້ນທາງຫຼວງແຫ່ງຊາດຢູ່ບາງຊ່ວງທີ່ຈຳເປັນ.
4) ເຖິງວ່າຄວາມສາມາດສະໜອງທຶນ ແລະ ງົບປະມານມີອັນຈຳກັດ, ແຕ່ໂດຍມີສ່ວນຮ່ວມຂອງທຸກພາກສ່ວນເສດຖະກິດລວມທັງຂອງສັງຄົມໄດ້ເຮັດໃຫ້ຂົງເຂດວັດທະນະທຳ-ສັງຄົມ ໄດ້ສືບຕໍ່ເອົາໃຈໃສ່ພັດທະນາ ແລະ ມີຫຼາຍດ້ານມີຄວາມຄືບໜ້າດີຂຶ້ນກວ່າເກົ່າ; ການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຕາມດຳລັດ 348/ນຍ ຂອງທ້ອງຖິ່ນຕ່າງໆ ສືບຕໍ່ໄດ້ຮັບການເອົາໃຈໃສ່ຕາມເງື່ອນໄຂ ແລະ ຄວາມສາມາດທາງດ້ານງົບປະມານ ແລະ ມີຜົນສຳເລັດດີຢູ່ຫຼາຍບໍລິເວນ.
5) ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໄດ້ຮັບການປັບປຸງ ແລະ ສ້າງຂຶ້ນຫຼາຍສະບັບ ອັນໄດ້ເປັນເຄື່ອງມືທີ່ສຳຄັນໃຫ້ແກ່ການເຄື່ອນໄຫວຂອງການຈັດຕັ້ງລະບົບການເມືອງປະຊາທິປະໄຕ; ການປັບປຸງກົງຈັກການຈັດຕັ້ງ, ການບໍລິການ-ການລົງທຶນຂອງທຸກພາກສ່ວນເສດຖະກິດ ຕິດພັນກັບການຄຸ້ມຄອງລັດ-ສັງຄົມດ້ວຍກົດໝາຍ ນັບມື້ໄດ້ຮັບການປັບປຸງ ແລະ ມີການຫັນປ່ຽນທີ່ຕັ້ງໜ້າຂຶ້ນ.
6) ການພົວພັນຮ່ວມມືກັບຕ່າງປະເທດຕາມທິດທີ່ກຳນົດໄວ້ໃນ ມະຕິ XI ຂອງພັກ ສືບຕໍ່ດຳເນີນເປັນປົກກະຕິດ້ວຍຮູບການ ແລະ ວິທີການທີ່ສອດຄ່ອງກັບການຜັນແປຂອງສະພາບການໃນແຕ່ລະໄລຍະ ແລະ ນຳຜົນປະໂຫຍດມາໃຫ້ປະເທດຊາດໃນທຸກສະຖານະການ.

## 2. ສາເຫດທີ່ພາໃຫ້ມີຈຸດດີ ແລະ ຜົນສຳເລັດ

1) ຍ້ອນມີການນຳພາ-ຊີ້ນຳຂອງສູນກາງພັກທີ່ແທດຕົວຈິງ, ທັນການ ຊຶ່ງໂດຍກົງ ແລະ ເປັນປະຈຳແມ່ນກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ, ມີການຕິດຕາມ, ກວດກາຂອງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ນະຄອນຫຼວງວຽງຈັນ ຢ່າງໃກ້ຊິດ, ປົກກະຕິ ແລະ ເຂັ້ມງວດ.
2) ການບໍລິຫານຂອງລັດຖະບານ ກໍຄື ອົງການປົກຄອງທ້ອງຖິ່ນນັບມື້ໄດ້ຮັບການປັບປຸງຕາມທິດ ມີການຫັນປ່ຽນຢ່າງເລິກເຊິ່ງ, ຮອບດ້ານ ແລະ ຫຼາຍດ້ານໄດ້ມີການຫັນປ່ຽນທີ່ຕັ້ງໜ້າຂຶ້ນ; ທົ່ວພັກ, ທົ່ວປວງຊົນລາວບັນດາເຜົ່າລວມທັງພາກສ່ວນເສດຖະກິດຕ່າງໆໄດ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການປົກປັກຮັກສາ ແລະ ສ້າງສາປະເທດຊາດຢ່າງເປັນປົກກະຕິ.
3) ມີການຮ່ວມມື ແລະ ໃຫ້ການຊ່ວຍເຫຼືອຈາກປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນ, ຄູ່ຮ່ວມພັດທະນາໃນກອບການຮ່ວມມືສອງຝ່າຍ ແລະ ຫຼາຍຝ່າຍ ທັງໃນສະພາບປົກກະຕິ ແລະ ໃນສະພາບປະເຊີນກັບຄວາມຫຍຸ້ງຍາກຕ່າງໆ ພ້ອມການລະບາດພະຍາດ ກໍຄື ການເກີດມີໄພພິບັດທາງທຳມະຊາດຕ່າງໆ. ພິເສດແມ່ນມີການຮ່ວມມືຊ່ວຍເຫຼືອໃນທຸກດ້ານຈາກເພື່ອນມິດຍຸດທະຍາດຢ່າງສະເໝີຕົ້ນສະເໝີປາຍ.

## 3. ຈຸດອ່ອນ, ຂໍ້ຄົງຄ້າງ

1) ລວມຍອດຜະລິດຕະພັນພາຍໃນ (GDP) ແມ່ນເພີ່ມຂຶ້ນ, ແຕ່ການເຕີບໂຕຍັງບໍ່ທັນຮັບປະກັນຄວາມໝັ້ນທ່ຽງ; ໄດ້ປະຕິບັດວາລະແຫ່ງຊາດ ວ່າດ້ວຍ ການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ດ້ວຍຄວາມພະຍາຍາມ, ແຕ່ວຽກຈຸດສຸມຫຼາຍດ້ານມີຄວາມຄືບໜ້າຊ້າ, ໃນນີ້ລວມທັງການຂະຫຍາຍຖານລາຍຮັບ ຄຽງຄູ່ກັນກັບການເກັບລາຍຮັບຍັງບໍ່ທັນສົມຄູ່ກັບທ່າແຮງບົ່ມຊ້ອນ; ການຄຸ້ມຄອງລາຍຈ່າຍງົບປະມານ ເຖິງແມ່ນວ່າໄດ້ມີການປັບປຸງກົງຈັກ ແລະ ຫຼຸດຜ່ອນການອະນຸມັດຈຳນວນລັດຖະກອນລົງໃນແຕ່ລະປີ, ແຕ່ຖ້າທຽບໃສ່ບັນດາປະເທດອາຊຽນລາຍຈ່າຍໃນກົງຈັກຂອງປະເທດເຮົາແມ່ນຍັງສູງ; ສິ່ງທີ່ໜ້າເປັນຫ່ວງແມ່ນສະພາບອັດຕາເງິນເຟີ້, ອັດຕາແລກປ່ຽນ, ຄ່າຄອງຊີບມີການເຄື່ອນເໜັງຕີງແຮງທີ່ບໍ່ເປັນທ່າດີໃຫ້ແກ່ຄາດໝາຍຫຼາຍດ້ານທີ່ວາງໄວ້ ໂດຍສະເພາະອາດຈະກະທົບຕໍ່ຄາດໝາຍຕົ້ນຕໍຂອງແຜນການ 5 ປີ ຄັ້ງທີ IX (2021-2025) ລວມທັງການປະຕິບັດຄາດໝາຍ LDC ແລະ SDG; ການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດຈຳນວນໜຶ່ງຍັງບໍ່ທັນສາມາດປະຕິບັດກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ ເປັນຕົ້ນ: ການປະຕິບັດມາດຕາ 19 ຂອງກົດໝາຍການລົງທຶນຂອງລັດ; ການລົງທຶນຂອງລັດໃນຂົງເຂດຕ່າງໆບໍ່ທັນສາມາດຈັດສັນໄດ້ຕາມແຜນທີ່ກຳນົດໄວ້ ໂດຍສະເພາະໃນຂົງເຂດສັງຄົມ; ການປະຕິບັດຕາມຜົນການກວດສອບ-ກວດກາໃນແຕ່ລະປີ ມີຄວາມຄືບໜ້າຊ້າ.
2) ການຜະລິດສິນຄ້າ ແລະ ການບໍລິການ ເພື່ອທົດແທນການນຳເຂົ້າຍັງບໍ່ທັນແຂງແຮງ, ການສົ່ງອອກສ່ວນໃຫຍ່ແມ່ນວັດຖຸດິບ ແລະ ຄຸນນະພາບຍັງຕໍ່າ; ການພັດທະນາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ຍັງບໍ່ທັນແຂງແຮງ ເຮັດໃຫ້ວິສາຫະກິດດັ່ງກ່າວບໍ່ສາມາແຂ່ງຂັນກັບພາຍນອກ; ການປະຕິຮູບບັນດາລັດວິສາຫະກິດທີ່ເປັນຍຸດທະສາດຍັງມີຄວາມຊັກຊ້າ ທັງບໍ່ສາມາດສ້າງໄດ້ຫົວໜ່ວຍວິສາຫະກິດທີ່ເປັນຕົວແບບຕາມທິດທີ່ພັກເຮົາກຳນົດໄວ້.
3) ການຂຸດຄົ້ນ ແລະ ນຳໃຊ້ທ່າແຮງບົ່ມຊ້ອນທາງດ້ານຊັບພະຍາກອນທຳມະຊາດມີລັກສະນະຟ້າວຟັ່ງ ແລະ ບໍ່ປະຕິບັດຕາມຫຼັກວິທະຍາສາດ ຈຶ່ງເຮັດໃຫ້ການປະຕິບັດໂຄງການຈຳນວນໜຶ່ງມີປະສິດທິຜົນຕໍ່າ, ໃນນີ້ລວມທັງການຂຸດຄົ້ນແຮ່ທາດ, ການຜະລິດກະສິກຳ ແລະ ປ່າໄມ້ ກໍຄື ໂຄງການໃນຂະແໜງການຕ່າງໆ ແລະ ອາດມີຜົນກະທົບຕໍ່ສະພາບແວດລ້ອມທາງທຳມະຊາດ ແລະ ສັງຄົມໃນລະດັບຕ່າງໆກັນ. ໃນເວລາດຽວກັນນັ້ນ, ການຄຸ້ມຄອງອົງການບໍລິການລັດ

ແຕ່ລະຂັ້ນພັດຍັງບໍ່ທັນແຂງແຮງ ແລະ ເຂັ້ມງວດຕາມກົດໝາຍ, ທັງບໍ່ທັນຮັບປະກັນຕາມ 3 ຫຼັກການ (ເດັດຂາດ, ໂປ່ງໃສ, ເປັນມືອາຊີບ).

4) ການພັດທະນາຂົງເຂດສັງຄົມ ແລະ ການແກ້ໄຂຄວາມທຸກຍາກ, ເຖິງວ່າໄດ້ມີຄວາມພະຍາຍາມຈາກຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ, ແຕ່ຕົວຊີ້ບອກຈຳນວນໜຶ່ງຍັງບໍ່ທັນຮັບປະກັນທັງທາງດ້ານປະລິມານ ແລະ ຄຸນນະພາບ ທັງມີຄວາມສ່ຽງທີ່ຈະບໍ່ບັນລຸຄາດໝາຍທີ່ສະພາແຫ່ງຊາດຮັບຮອງ, ໃນນີ້ລວມທັງວຽກງານການສຶກສາ, ສາທາລະນະສຸກ, ແຮງງານ ແລະ ສະຫວັດດີການສັງຄົມ, ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ.

5) ລະບອບ, ລະບຽບ ແລະ ກົນໄກການຄຸ້ມຄອງ ກໍຄື ການບໍລິຫານງານລັດ ຕິດພັນກັບການປະຕິບັດກົນໄກການປະສານສົມທົບກັນລະຫວ່າງລັດຖະບານກັບຄະນະປະຈຳສະພາແຫ່ງຊາດ ເຖິງວ່າໄດ້ພະຍາຍາມປັບປຸງ, ແຕ່ບາງໄລຍະບໍ່ທັນສາມາດຕອບສະໜອງໄດ້ຄວາມຮຽກຮ້ອງຕ້ອງການຂອງວຽກງານໃນເງື່ອນໄຂໃໝ່; ກົດໝາຍທີ່ວາງອອກໃນບາງມາດຕາຍັງບໍ່ທັນສອດຄ່ອງກັບສະພາບການໃໝ່ ທັງມີອັນຂັດກັນ; ການຫັນເປັນທັນສະໄໝຍັງຊັກຊ້າ ແລະ ບໍ່ສາມາດຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງວຽກງານ; ການແບ່ງຂັ້ນຄຸ້ມຄອງຕາມທິດ 3 ສ້າງ ລວມທັງລະບອບການສ່ອງແສງສະພາບການຕ່າງໆຂອງຂະແໜງການ ແລະ ທ້ອງຖິ່ນຕ່າງໆ ບາງໄລຍະບໍ່ຖອງທັນກັບກຳນົດເວລາທີ່ໄດ້ກຳນົດໄວ້; ການຈັດວາງພະນັກງານລັດຖະກອນຈຳນວນໜຶ່ງ ຍັງບໍ່ຖືກກັບວິຊາສະເພາະທີ່ໄດ້ຮຽນມາ.

6) ການແກ້ໄຂປະກົດການຫຍໍ້ທໍ້ໃນສັງຄົມຕິດພັນກັບການແກ້ໄຂຢາເສບຕິດ, ເຖິງວ່າໄດ້ມີຄວາມພະຍາຍາມແຕ່ປະກົດການຫຍໍ້ທໍ້ດັ່ງກ່າວ ເປັນຕົ້ນ ຢາເສບຕິດ, ປະກົດການຂີ້ລັກງັດແງະ, ການຄ້າຂາຍເຖື່ອນ ແລະ ອື່ນໆຍັງເກີດຂຶ້ນໃນທຸກທ້ອງຖິ່ນໃນລະດັບແຕກຕ່າງກັນ, ອັນໄດ້ສ້າງຄວາມຫຍຸ້ງຍາກໃຫ້ແກ່ການຜະລິດ ແລະ ການດຳລົງຊີວິດຂອງປະຊາຊົນໃນທຸກບໍລິເວນ.

7) ການພົວພັນຮ່ວມມືກັບຕ່າງປະເທດ ເຖິງວ່າໄດ້ມີຄວາມພະຍາຍາມ ແຕ່ບັນຫາທີ່ຈະຕ້ອງສືບຕໍ່ເອົາໃຈໃສ່ແມ່ນຄວາມເປັນເຈົ້າການໃນດ້ານທີ່ໄດ້ຕົກລົງກັບສາກົນ ແລະ ປະເທດເພື່ອນມິດຕ່າງໆ ຂອງພວກເຮົາຍັງບໍ່ທັນສູງ ແລະ ມີຫຼາຍກໍລະນີແມ່ນດຳເນີນມີລັກສະນະຫຼົບໄປຫຼົບມາ ແລະ ແກ່ຍາວ.

## 4. ສາເຫດທີ່ພາໃຫ້ມີຈຸດອ່ອນ, ຂໍ້ຄົງຄ້າງ

1) ການນຳພາຊີ້ນຳຜັນຂະຫຍາຍແຜນການ 5 ປີ ຄັ້ງທີ IX ຕິດພັນກັບການປະຕິບັດມະຕິ XI ຂອງພັກ, ສອງວາລະແຫ່ງຊາດ ໃຫ້ເປັນອັນລະອຽດຢູ່ຂະແໜງການ, ອົງການ ແລະ ທ້ອງຖິ່ນຈຳນວນໜຶ່ງ ຍັງບໍ່ທັນໄດ້ດຳເນີນຢ່າງຈິງຈັງ, ທັງບໍ່ທັນໄດ້ເຜີຍແຜ່, ເຊື່ອມຊຶມໃຫ້ທຸກພາກສ່ວນລວມທັງປະຊາຊົນບັນດາເຜົ່າຮັບຮູ້, ເຂົ້າໃຈຢ່າງເລິກເຊິ່ງ ແລະ ທົ່ວເຖິງ ຈຶ່ງເຮັດໃຫ້ຄວາມຮັບຮູ້ເຂົ້າໃຈຂອງພະນັກງານ, ນັກຮົບ ແລະ ປະຊາຊົນບັນດາເຜົ່າຈຳນວນໜຶ່ງຕໍ່ແນວທາງນະໂຍບາຍຂອງພັກ-ລັດ ແລະ ນິຕິກຳຕ່າງໆທີ່ກ່ຽວຂ້ອງຂອງລັດຖະບານທີ່ພົວພັນເຖິງການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ກໍຄື ການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ຢາເສບຕິດຍັງບໍ່ທັນເລິກເຊິ່ງ ແລະ ເອກະພາບກັນສູງເທົ່າທີ່ຄວນ.

2) ກົດໝາຍ ແລະ ລະບຽບການທີ່ວາງອອກໃນຜ່ານມາ ມີບາງມາດຕາໃນບາງກົດໝາຍບໍ່ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງວຽກງານໃນສະພາບການໃໝ່. ສຳລັບອັນທີ່ຖືກຕ້ອງສອດຄ່ອງແລ້ວ, ແຕ່ການຈັດຕັ້ງປະຕິບັດຕົວຈິງຂອງການຈັດຕັ້ງ ແລະ ບຸກຄົນຈຳນວນໜຶ່ງຍັງບໍ່ທັນເຂັ້ມງວດ ໂດຍສະເພາະແມ່ນການນຳໃຊ້ຊັບພະຍາກອນທຳມະຊາດລວມທັງການປະຕິບັດວິໄນແຜນການ, ການເງິນ ແລະ ອື່ນໆ.

3) ການປະສານສົມທົບລະຫວ່າງຂະແໜງການດ້ວຍກັນ ແລະ ຂະແໜງການກັບທ້ອງຖິ່ນ ໃນວຽກງານຈຳນວນໜຶ່ງ ຍັງບໍ່ທັນກົມກຽວກັນດີ ທັງມີກົນໄກຫຼາຍຂັ້ນ-ຂອດຊ້ຳຊ້ອນກັນ, ຈຶ່ງເຮັດໃຫ້ການປະຕິບັດມະຕິ, ແຜນການຕ່າງໆ ທີ່ພັກ-ລັດ ກໍຄື ຄະນະພັກ-ອົງການປົກຄອງທຸກຂັ້ນວາງອອກໃນບາງໄລຍະ, ບາງກໍລະນີບໍ່ທັນເອກະພາບກັນສູງ ແລະ ມີປະສິດທິຜົນຕ່ຳ.

4) ການພັດທະນາເສດຖະກິດ-ສັງຄົມໃນແຕ່ລະໄລຍະແມ່ນຂາດຂໍ້ມູນທີ່ຊັດເຈນ ໂດຍສະເພາະແມ່ນຂໍ້ມູນໃນການນຳໃຊ້ທີ່ດິນປະເພດຕ່າງໆ, ຈຶ່ງເຮັດໃຫ້ການຈັດຕັ້ງປະຕິບັດຕົວຈິງພົບຄວາມຫຍຸ້ງຍາກ ແລະ ມີຄວາມຊັກຊ້າ, ໃນນີ້ລວມທັງການດຶງດູດການລົງທຶນຈາກພາຍໃນ ແລະ ຕ່າງປະເທດ; ການຫັນເປັນທັນສະໄໝໃນທຸກຂົງເຂດວຽກງານຂອງທຸກຂັ້ນ ແລະ ຂະແໜງບໍ່ທັນຈັດຕັ້ງປະຕິບັດຢ່າງຈິງຈັງເທື່ອ.

5) ການຕອບສະໜອງດ້ານງົບປະມານ ກໍຄື ທຶນຮອນທີ່ຈຳເປັນເພື່ອຮັບໃຊ້ໃຫ້ແກ່ການປະຕິບັດໜ້າທີ່ການເມືອງຂອງພາກສ່ວນຕ່າງໆໃນທຸກຂັ້ນ ກໍຄື ການພັດທະນາໃນທຸກຂົງເຂດວຽກງານບໍ່ທັນພຽງພໍກັບຄວາມຕ້ອງການຕົວຈິງ.

6) ພື້ນຖານການຜະລິດບໍ່ທັນແຂງແຮງ ແລະ ຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນໄດ້ສະສົມມາຫຼາຍປີ ບວກກັບພື້ນຖານເສດຖະກິດແຫ່ງຊາດຂອງພວກເຮົາຍັງອ່ອນນ້ອຍຫຼາຍ, ໃນເວລາດຽວກັນນັ້ນ ພັດໄດ້ຮັບຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19, ການຜັນຜວນທາງເສດຖະກິດ ແລະ ການເມືອງຂອງພາກພື້ນ ແລະ ສາກົນ ອັນໄດ້ເປັນຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍບໍ່ໜ້ອຍຕໍ່ການພັດທະນາເສດຖະກິດ-ສັງຄົມ ແລະ ການແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ.

## 5. ບົດຮຽນຖອດຖອນໄດ້

1) ການຮັບປະກັນສະຖຽນລະພາບທາງດ້ານການເມືອງ, ຄວາມເປັນລະບຽບຮຽບຮ້ອຍທາງສັງຄົມຕິດພັນກັບການຮັກສາຄວາມໝັ້ນທ່ຽງຂອງເສດຖະກິດມະຫາພາກ ບົນພື້ນຖານການເສີມຂະຫຍາຍມູນເຊື້ອຄວາມສາມັກຄີອັນເປັນປຶກແຜ່ນຂອງປະຊາຊົນບັນດາເຜົ່າ ພາຍໃຕ້ການນຳພາຂອງພັກແມ່ນເງື່ອນໄຂພື້ນຖານ ແລະ ສຳຄັນ ສຳລັບຜົນສຳເລັດການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມໃນແຕ່ລະໄລຍະ.

2) ການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ທີ່ມີຂໍ້ມູນສະຖິຕິທີ່ຖືກຕ້ອງ, ຊັດເຈນ, ສອດຄ່ອງກັບ ທ່າແຮງບົ່ມຊ້ອນ, ມີການປະສານງານກັນທີ່ກົມກຽວ ແລະ ເອກະພາບກັນແຕ່ຫົວທີ ຂອງພາກລັດ, ມີການຈັດຕັ້ງກຸ່ມການຜະລິດທີ່ເຂັ້ມແຂງແມ່ນເປັນກຳລັງແຮງສຳຄັນເຮັດໃຫ້ການພັດທະນາເສດຖະກິດ-ສັງຄົມ ມີການຂະຫຍາຍຕົວຕໍ່ເນື່ອງ ແລະ ມີຄວາມໝັ້ນທ່ຽງ.

3) ການພັດທະນາຊັບພະຍາກອນມະນຸດ ໃຫ້ມີຄວາມຮູ້, ຄວາມສາມາດ, ມີຄຸນສົມບັດສິນທຳປະຕິວັດ ແມ່ນກຸນແຈທີ່ສຳຄັນ ສຳລັບການຮອງຮັບໃຫ້ແກ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດແຕ່ລະໄລຍະ.

4) ການສ້າງ ແລະ ປັບປຸງກົດໝາຍລະບຽບການໃຫ້ທັນການ, ຮັດກຸມ, ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງການພັດທະນາແຕ່ລະໄລຍະໜ້າທີ່ການເມືອງຂອງແຕ່ລະພາກສ່ວນໃນເງື່ອນໄຂເຊື່ອມໂຍງ, ເຊື່ອມຈອດກັບພາຍນອກ ທັງມີການຄຸ້ມຄອງບໍລິຫານລັດຕາມລະບຽບກົດໝາຍຢ່າງເຂັ້ມງວດ, ໂປ່ງໃສ ປະຕິບັດຕາມທິດ **“ ເຮັດແທ້ທຳຈິງ ແລະ ບຸກທະລຸ ”** ແມ່ນປັດໄຈສຳຄັນແຫ່ງຄວາມຍຸຕິທຳໃນສັງຄົມ ແລະ ມີປະສິດທິພາບ, ປະສິດທິຜົນໃນການບໍລິຫານຂອງລັດ.

5) ການຮັບປະກັນຄວາມສອດຄ່ອງລະຫວ່າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ກັບບັນດາຍຸດທະສາດເພື່ອຮອງຮັບໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ, ວິໄສທັດຮອດປີ 2030, ເປົ້າໝາຍການຫຼຸດພົ້ນອອກຈາກການພັດທະນາແບບຍືນຍົງ ແມ່ນໃຈກາງ ແລະ ເປັນຫຼັກການຂອງການພັດທະນາແບບຕໍ່ເນື່ອງ.

6) ການສົມທົບແໜ້ນລະຫວ່າງການປະຕິບັດຍຸດທະສາດຍາວນານກັບການແກ້ໄຂບັນຫາຮີບດ່ວນສະເພາະໜ້າ ຢ່າງກົມກຽວກັນ ດ້ວຍມາດຕະການທີ່ເປັນລະບົບ, ຄົບຊຸດ, ມີການຕິດຕາມ, ກວດກາ ແລະ ການປະເມີນຜົນ ຂອງການຈັດຕັ້ງປະຕິບັດບັນດາທິດທາງ, ຄາດໝາຍສູ້ຊົນ ຂອງແຕ່ລະຂົງເຂດ ແລະ ລາຍງານໃຫ້ຂັ້ນເທິງກ່ຽວຂ້ອງ ຢ່າງເປັນປົກກະຕິ ແລະ ທັນການ ແມ່ນມາດຕະການທີ່ຈຳເປັນ ແລະ ສຳຄັນເຮັດໃຫ້ທຸກແຜນການ, ຄາດໝາຍທີ່ ກຳນົດອອກໄດ້ຮັບການຈັດຕັ້ງປະຕິບັດຄ່ອງຕົວດີ.

# ພາກທີ II

# ທິດທາງ ແລະ ແຜນວຽກງານຈຸດສຸມທ້າຍສະໄໝ ຮອດປີ 2025

## 1. ຄາດຄະເນສະພາບການຂອງພາກພື້ນ, ສາກົນ ແລະ ພາຍໃນປະເທດ

ໃນໄລຍະທ້າຍສະໄໝ ຮອດປີ 2025, ສະພາບແວດລ້ອມສາກົນ ແລະ ພາກພື້ນ ຄາດວ່າຍັງຈະສືບຕໍ່ຜັນແປ ຢ່າງສັບສົນ ແລະ ຄາດຄະເນໄດ້ຍາກ, ຊຶ່ງຈະຍັງມີສິ່ງທ້າທາຍ ແລະ ຄວາມຫຍຸ້ງຍາກຫຼາຍດ້ານເຊັ່ນກັນ ເປັນຕົ້ນ: ທາງດ້ານ ເສດຖະກິດ-ການເງິນ, ຄວາມຂັດແຍ່ງທາງດ້ານການເມືອງ, ການປ່ຽນແປງສະພາບອາກາດ ແລະ ບັນຫາອື່ນໆ; ແຕ່ຄຽງຄູ່ ກັນນັ້ນ ກໍຍັງມີໂອກາດຫຼາຍດ້ານ ເປັນຕົ້ນ: ເສດຖະກິດຫຼາຍປະເທດມີການຟື້ນຕົວ, ການປະຕິວັດທາງດ້ານເຕັກໂນໂລຊີ ແລະ ການຫັນເປັນເສດຖະກິດດີຈິຕອນ, ການຮ່ວມມືຂອງສາກົນເພື່ອຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ແລະ ອື່ນໆ. ສຳລັບພາຍໃນປະເທດເຮົາ ຄາດວ່າຍັງຈະສືບຕໍ່ພົບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ສະພາບການປ່ຽນແປງດິນຟ້າອາກາດ ແລະ ບັນຫາອື່ນໆ; ເຖິງແນວໃດກໍຕາມ, ພວກເຮົາກໍຍັງມີກາລະໂອກາດ ແລະ ທ່າແຮງຫຼາຍດ້ານ ເປັນຕົ້ນ: ການຟື້ນຕົວເສດຖະກິດຂອງປະເທດໃກ້ຄຽງ ໂດຍສະເພາະ ສສ ຫວຽດນາມ ແລະ ສປ ຈີນ; ການພັດທະນາບັນດາພື້ນຖານໂຄງລ່າງ ທາງລົດໄຟລາວ-ຈີນ, ບັນດາທ່າບົກ ແລະ ເຂດເສດຖະກິດພິເສດ; ທ່າແຮງບົ່ມຊ້ອນ ທາງດ້ານທຳມະຊາດ ແລະ ການຮ່ວມມືໃນດ້ານຕ່າງໆກັບສາກົນ ແລະ ເພື່ອນມິດຍຸດທະສາດ ເພື່ອນຳໃຊ້ເຂົ້າໃນ ການພັດທະນາ.

## 2. ທິດທາງລວມ

ແຕ່ນີ້ຮອດທ້າຍສະໄໝ ປີ 2025 ຕ້ອງໄດ້ສືບຕໍ່ຍຶດໝັ້ນ ແລະ ຈັດຕັ້ງປະຕິບັດບັນດາທິດທາງ, ຄາດໝາຍ ແລະວຽກ ງານຈຸດສຸມທີ່ກຳນົດໄວ້ໃນມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ຕິດພັນກັບການສືບຕໍ່ຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ບົນຈິດໃຈສືບຕໍ່ສ້າງການຫັນປ່ຽນ ໃໝ່ຢ່າງແຂງແຮງ ແລະ ເລິກເຊິ່ງໃນທຸກດ້ານ. ກ່ອນອື່ນໝົດ ແມ່ນຕ້ອງຮັບປະກັນໃຫ້ປະເທດຊາດສືບຕໍ່ມີຄວາມສະຖຽນ ລະພາບທາງດ້ານການເມືອງ; ສັງຄົມມີຄວາມເປັນລະບຽບຮຽບຮ້ອຍໂດຍພື້ນຖານ; ເສດຖະກິດສືບຕໍ່ຂະຫຍາຍຢ່າງຕໍ່ເນື່ອງ ໝັ້ນທ່ຽງ ສາມາດແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນໄດ້ເປັນກ້າວໆ; ຍົກສູງສະຕິປ້ອງກັນຊາດ-ປ້ອງກັນ ຄວາມສະຫງົບຕິດພັນກັບການພັດທະນາເສດຖະກິດ-ສັງຄົມ ແລະ ການພົວພັນຮ່ວມມືກັບຕ່າງປະເທດ ນັບມື້ໄດ້ຮັບການ ພັດທະນາຕາມທິດເຊື່ອມໂຍງ, ເຊື່ອມຈອດກັບພາກພື້ນ ແລະ ສາກົນ ໃນເງື່ອນໄຂໃໝ່ ແລະ ສາມາດສ້າງພື້ນຖານ ອັນໜັກແໜ້ນໃຫ້ແກ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030).

## 3. ຄາດໝາຍສູ້ຊົນ

– ຮັກສາລະດັບການຂະຫຍາຍຕົວຂອງເສດຖະກິດແຫ່ງຊາດ ໃຫ້ມີຄວາມຕໍ່ເນື່ອງ ແລະ ມີສະຖຽນລະພາບ ຕາມມະຕິ XI ຂອງພັກ ກໍຄື ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025).

– ສະກັດກັ້ນ ແລະ ແກ້ໄຂຜົນກະທົບຈາກຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ, ເງິນຕາຕໍ່ຊີວິດສັງຄົມ ແລະ ຊີວິດການເປັນຢູ່ປະຊາຊົນບັນດາເຜົ່າ ກໍຄື ຊາວຜູ້ອອກແຮງງານ ໂດຍຈຳກັດຢ່າງສຸດຂີດບໍ່ໃຫ້ເກີດບັນຫາຫຍໍ້ທໍ້ວຸ້ນວາຍໃນສັງຄົມ.

– ຫັນວິກິດການພາຍນອກໃຫ້ເປັນໂອກາດສຳລັບການປັບປຸງພາຍໃນ ໂດຍຍົກລະດັບຄວາມສາມາດ ແລະ ປະສິດທິພາບດ້ານການປະຕິບັດໜ້າທີ່ກ່ຽວຂ້ອງຂອງບໍລິຫານລັດ ກໍຄື ພາກທຸລະກິດ ຂຶ້ນອີກກ້າວໜຶ່ງ.

## 4. ເປົ້າໝາຍ ແລະ ແຜນວຽກຈຸດສຸມບູລິມະສິດທ້າຍສະໄໝ ຮອດປີ 2025

ສືບຕໍ່ຈັດຕັ້ງປະຕິບັດບັນດາຄາດໝາຍຕົ້ນຕໍ ແລະ ແຜນວຽກຈຸດສຸມບູລິມະສິດ ຕາມ 6 ເປົ້າໝາຍໃຫຍ່, 25 ໜ້າວຽກຈຸດສຸມຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025); ນອກຈາກນີ້, ຈະຕ້ອງສຸມໃສ່ກຳນົດຕົວຊີ້ບອກໃນທ້າຍສະໄໝຂອງແຜນການ 5 ປີ ຄັ້ງທີ IX ເປັນຕົ້ນ: ຕົວຊີ້ບອກການສ້າງລາຍຮັບ, ການຈັດສັນງົບປະມານ (ການເພີ່ມລາຍຮັບງົບປະມານ), ການຫຼຸດຜ່ອນຄວາມທຸກຍາກ (ຄວາມທຸກຍາກໃນເຂດຫ່າງໄກສອກຫຼີກ), ສົ່ງເສີມການສົ່ງອອກທີ່ສ້າງມູນຄ່າເພີ່ມ ແລະ ການເພີ່ມການຈ້າງງານ, ການຜະລິດສິນຄ້າທົດແທນ ເພື່ອຫຼຸດຜ່ອນການນຳເຂົ້າສິນຄ້າ ແລະ ການຄຸ້ມຄອງຈັດສັນຊັບພະຍາກອນທຳມະຊາດຢ່າງເຂັ້ມງວດ ເພື່ອຮັບປະກັນວ່າຈະສາມາດແກ້ໄຂສິ່ງທ້າທາຍໃນໄລຍະເຄິ່ງຕົ້ນສະໄໝຂອງແຜນການ 5 ປີ ຄັ້ງທີ IX ແລະ ຈະເປັນບ່ອນອີງໃຫ້ແກ່ການສ້າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030), ມີດັ່ງນີ້:

### 4.1 ເປົ້າໝາຍທີ 1: ເສດຖະກິດແຫ່ງຊາດຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄຸນນະພາບ, ໝັ້ນທ່ຽງ ແລະ ຍືນຍົງ

### 4.1.1 ແຜນວຽກຈຸດສຸມທີ 1: ການເຕີບໂຕເສດຖະກິດທີ່ມີຄຸນນະພາບ ແລະ ຍືນຍົງ

❖ **ຄາດໝາຍ:**

– ສູ້ຊົນເຮັດໃຫ້ລວມຍອດຜະລິດຕະພັນພາຍໃນ (GDP) ຂະຫຍາຍຕົວເພີ່ມຂຶ້ນ ສະເລ່ຍ 4% ຂຶ້ນໄປ ຕໍ່ປີ, ຄິດເປັນມູນຄ່າຕາມລາຄາໃນປີ 1.056.692 ຕື້ກີບ. GDP ສະເລ່ຍຕໍ່ຫົວຄົນໃຫ້ໄດ້ 2.880 ໂດລາສະຫະລັດ, GNI ຕໍ່ຫົວຄົນ ໃຫ້ໄດ້ 2.280 ໂດລາສະຫະລັດ ໃນປີ 2025, ໃນນີ້:
  + ຂະແໜງກະສິກຳ ຂະຫຍາຍຕົວ ສະເລ່ຍໃນລະດັບ 2,5%, ກວມເອົາ 15,3% ຂອງ GDP;
  + ຂະແໜງອຸດສາຫະກຳ ຂະຫຍາຍຕົວ ສະເລ່ຍໃນລະດັບ 4,1%, ກວມເອົາ 32,3% ຂອງ GDP;
  + ຂະແໜງບໍລິການ ຂະຫຍາຍຕົວ ສະເລ່ຍໃນລະດັບ 6%, ກວມເອົາ 40,7% ຂອງ GDP;
  + ພາສີ-ອາກອນ ຂະຫຍາຍຕົວ ສະເລ່ຍໃນລະດັບ 5,8%, ກວມເອົາ 11,7% ຂອງ GDP.

– ສູ້ຊົນການຜະລິດເຂົ້າເປືອກລວມ ໃຫ້ໄດ້ຢູ່ໃນລະດັບ 3-4 ລ້ານໂຕນ ຕໍ່ປີ;

– ການລ້ຽງສັດ: ການຂະຫຍາຍຝູງສັດ ໃຫ້ໄດ້ຢູ່ໃນລະດັບ 3-4% ຕໍ່ປີ;

– ປ່າໄມ້ ຂະຫຍາຍຕົວ 1,5% ຕໍ່ປີ;

– ການປະມົງ: ການລ້ຽງປາ ແລະ ສັດນ້ຳ ຂະຫຍາຍຕົວ 3-4% ຕໍ່ປີ;

– ສູ້ຊົນປູກພືດເປັນສິນຄ້າ ສະເລ່ຍຕໍ່ປີ: ກາເຟ ໃຫ້ໄດ້ 175.500 ໂຕນ/ປີ; ສາລີອາຫານສັດ ໃຫ້ໄດ້ 636.900 ໂຕນ/ປີ; ມັນຕົ້ນ ໃຫ້ໄດ້ 3,60 ລ້ານໂຕນ/ປີ; ອ້ອຍ ໃຫ້ໄດ້ 1,60 ລ້ານໂຕນ/ປີ; ໝາກກ້ວຍ ໃຫ້ໄດ້ 753.500 ໂຕນ/ປີ ແລະ ພືດຕະກຸນຖົ່ວ ໃຫ້ໄດ້ 74.750 ໂຕນ/ປີ.

- ການສົ່ງອອກຜະລິດຕະພັນກະສິກຳ ສະເລ່ຍໃຫ້ໄດ້ 1.200 ລ້ານໂດລາສະຫະລັດ ຕໍ່ປີ;
- ສູ້ຊົນສ້າງມູນຄ່າການຜະລິດອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃຫ້ໄດ້ 83.079,8 ຕື້ກີບ ຫຼື ຂະຫຍາຍຕົວສະເລ່ຍ 8-10% ຕໍ່ປີ;
- ການຜະລິດກະແສໄຟຟ້າ ໃຫ້ໄດ້ 276.096 ລ້ານ Kwh, ເພີ່ມຂຶ້ນສະເລ່ຍ 15,8% ຕໍ່ປີ;
- ການຜະລິດແຮ່ທາດ ໃຫ້ໄດ້ 7.832,10 ລ້ານໂດລາສະຫະລັດ;
- ສູ້ຊົນມູນຄ່າການຈໍລະຈອນສິນຄ້າ (ຂາຍຍົກ-ຂາຍຍ່ອຍ ແລະ ຄ່າບໍລິການສ້ອມແປງ) ບັນລຸໄດ້ 424.227,5 ຕື້ກີບ ຫຼື ຂະຫຍາຍຕົວສະເລ່ຍ 8-10% ຕໍ່ປີ;
- ສູ້ຊົນດຶງດູດນັກທ່ອງທ່ຽວສາກົນ ເຂົ້າມາທ່ອງທ່ຽວລາວ ໃຫ້ໄດ້ປະມານ 15 ລ້ານເທື່ອຄົນ, ສ້າງລາຍຮັບໃຫ້ໄດ້ 3.813 ລ້ານໂດລາສະຫະລັດ ຮອດປີ 2025, ສະເລ່ຍໄລຍະການພັກເຊົາແມ່ນ 7 ວັນ/ຄົນ;
- ສຳຫຼວດ, ຈັດສັນກຳນົດຂອບເຂດ, ປັກຫຼັກໝາຍ ແລະ ອອກໃບຢັ້ງຢືນຂອບເຂດແຫຼ່ງທ່ອງທ່ຽວ ໃຫ້ໄດ້ 30 ແຫ່ງ ຮອດປີ 2025;
- ສູ້ຊົນປະລິມານຂົນສົ່ງສິນຄ້າ: ທາງບົກ ຂະຫຍາຍຕົວ 7% ຕໍ່ປີ, ທາງນໍ້າ ຂະຫຍາຍຕົວ 5% ຕໍ່ປີ, ທາງອາກາດ ຂະຫຍາຍຕົວ 12% ຕໍ່ປີ ແລະ ທາງລົດໄຟ ຂະຫຍາຍຕົວ 7% ຕໍ່ປີ;
- ສູ້ຊົນປະລິມານຂົນສົ່ງໂດຍສານ: ທາງບົກ ຂະຫຍາຍຕົວ 7% ຕໍ່ປີ, ທາງນໍ້າ ຂະຫຍາຍຕົວ 5% ຕໍ່ປີ, ທາງອາກາດ ຂະຫຍາຍຕົວ 12% ຕໍ່ປີ ແລະ ທາງລົດໄຟ ຂະຫຍາຍຕົວ 10% ຕໍ່ປີ.

❖ **ວຽກງານຈຸດສຸມ:**

\+ <u>ຂະແໜງກະສິກຳ ແລະ ປ່າໄມ້</u>:

– ສ້າງແຜນການ ແລະ ມາດຕະການດຸນດ່ຽງການຜະລິດ ແລະ ການບໍລິໂພກ, ສົ່ງເສີມການຜະລິດກະສິກຳຕິດພັນກັບການປຸງແຕ່ງເພີ່ມມູນຄ່າ ແລະ ຍົກສູງຄຸນນະພາບຂອງຜະລິດຕະພັນກະສິກຳ; ຊຸກຍູ້ການເຂົ້າເຖິງສິນເຊື່ອ ແລະ ຕະຫຼາດການຂົນສົ່ງຈໍລະຈອນ ພ້ອມທັງມີມາດຕະການຊ່ວຍໜູນ ເພື່ອຫຼຸດຜ່ອນຜົນກະທົບຈາກໄພພິບັດຕ່າງໆ, ການລະບາດຂອງສັດຕູພືດ ແລະ ແມງໄມ້ໃນແຕ່ລະໆດູການ; ພ້ອມນັ້ນ, ກໍມີແຜນການ ແລະ ມາດຕະການຄຸ້ມຄອງພັດທະນາທີ່ດິນກະສິກຳ, ການພັດທະນາຊົນລະກະເສດ, ການຄົ້ນຄວ້າທົດລອງທາງວິທະຍາສາດດ້ານກະສິກຳ ແລະ ປ່າໄມ້, ພ້ອມທັງມີກົນໄກປະສານສົມທົບກັບຂະແໜງການກ່ຽວຂ້ອງຢ່າງໜັກແໜ້ນ ແລະ ມີປະສິດທິຜົນຫຼາຍຂຶ້ນກວ່າເກົ່າ.

– ສົມທົບກັບຂະແໜງການກ່ຽວຂ້ອງເຈລະຈາຕະຫຼາດໝາກໄມ້ ຈຳນວນ 17 ລາຍການ ເພື່ອຊຸກຍູ້ການສົ່ງອອກສິນຄ້າໄປ ສປ ຈີນ ແລະ ສືບຕໍ່ຊຸກຍູ້ສົ່ງເສີມວຽກງານການສົ່ງອອກ ເຂົ້າກົບ ໃນໂກຕ້າ ຈຳນວນ 50.000 ໂຕນ ໄປ ສປ ຈີນ ໃຫ້ສຳເລັດ. ນອກນີ້, ສຸມໃສ່ສົ່ງເສີມສິນຄ້າທ່າແຮງ ເປັນຕົ້ນ: ການສົ່ງອອກສັດໃຫຍ່ ໃຫ້ບັນລຸ 50.000 ໂຕ/ປີ ແລະ ເຈລະຈາເປີດຕະຫຼາດຜະລິດຕະພັນຊີ້ນສັດ (ຊີ້ນແຫ້ງ, ຊີ້ນແຊ່ແຂງ) ໃຫ້ສຳເລັດ.

– ຄົ້ນຄວ້າກຳນົດສິນຄ້າທີ່ມີທ່າແຮງສະເພາະທີ່ສາມາດສົ່ງອອກຕະຫຼາດປະເທດໃກ້ຄຽງ ໂດຍສ້າງຂີດຄວາມສາມາດແບບຈຸດສຸມ ແລະ ຈັດຕັ້ງກຸ່ມການຜະລິດທີ່ເຂັ້ມແຂງ ສາມາດແຂ່ງຂັນກັບພາກພື້ນ ແລະ ສາກົນ.

– ສ້າງ ແລະ ພັດທະນາລະບົບຕິດຕາມ, ກວດກາ ແລະ ຢັ້ງຢືນການນຳໃຊ້ກາໝາຍ ແລະ ການຜະລິດກະສິກຳສະອາດປອດໄພ ເພື່ອຮັບປະກັນສ້າງຄວາມເຊື່ອໝັ້ນໃຫ້ຜູ້ບໍລິໂພກ, ສົ່ງອອກກັບທີ່ (ຮັບໃຊ້ການທ່ອງທ່ຽວ) ແລະ ສົ່ງອອກຕ່າງປະເທດຕາມມາດຕະຖານ (SPS).

– ຊຸກຍູ້ສົ່ງເສີມ ແລະ ພັດທະນາໂຮງງານປຸງແຕ່ງກະສິກຳ ແລະ ປ່າໄມ້ ໃຫ້ເປັນລະບົບຕອງໂສ້ນັບແຕ່ການວາງແຜນການຜະລິດ, ການປຸງແຕ່ງ ແລະ ການຕະຫຼາດ ໃຫ້ມີຄວາມສອດຄ່ອງກົມກຽວ ແລະ ມີປະສິດທິຜົນ ດ້ວຍການສ້າງ ແລະ ປັບປຸງນິຕິກຳ, ດັດສົມ, ສົມທົບກັບບັນດາໂຮງງານ ແລະ ທ້ອງຖິ່ນ ກຳນົດຈັດສັນເຂດ ຜະລິດວັດຖຸດິບປ້ອນໂຮງງານ

ເພື່ອສ້າງເປັນຖານການຜະລິດທີ່ໝັ້ນຄົງຢູ່ຊົນນະບົດ ແລະ ເຂດທີ່ມີເງື່ອນໄຂ ເພື່ອຮັບປະກັນການສະໜອງວັດຖຸດິບໃຫ້ພຽງພໍຕິດພັນກັບການສ້າງວຽກເຮັດງານທຳ.

+ ຂະແໜງອຸດສາຫະກຳ:

– ສືບຕໍ່ຊຸກຍູ້ການຜະລິດ-ການບໍລິການ ຕາມທ່າແຮງບົ່ມຊ້ອນຂອງແຕ່ລະບໍລິເວນ ແລະ ທ້ອງຖິ່ນ ໂດຍເລັ່ງໃສ່ການຜະລິດກະສິກຳປຸງແຕ່ງເປັນສິນຄ້າ ເພື່ອທົດແທນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກ, ການສົ່ງເສີມອຸດສາຫະກຳປຸງແຕ່ງຕາມ 8 ອຸດສາຫະກຳເປົ້າໝາຍບູລິມະສິດທີ່ມີແລ້ວ ແລະ 4 ອຸດສາຫະກຳທ່າແຮງປາຍແຫຼມ ເຊັ່ນ: ອຸດສາຫະກຳວັດສະດຸກໍ່ສ້າງ (ຊີມັງ, ຍິບຊຳ); ອຸດສາຫະກຳເຄມີ (ປຸ໋ຍກາລີ, ໂບຣມມິນ, ໂຊດາໄຟ ແລະ ອື່ນໆ); ອຸດສາຫະກຳປຸງແຕ່ງແຮ່ທາດ (ຊີລີຄອນ, ເຫຼັກ) ແລະ ອຸດສາຫະກຳປຸງແຕ່ງອາຫານ ແລະ ຜະລິດຕະພັນຈາກກະສິກຳ (ຢາງພາລາ, ແປ້ງມັນຕົ້ນ, ຊາ ແລະ ກາເຟ).

– ສຸມໃສ່ການປັບປຸງສະພາບແວດລ້ອມໃນການສ້າງຕັ້ງ ແລະ ດຳເນີນກິດຈະການໂຮງງານ ເປັນຕົ້ນ: ການສ້າງຖານຂໍ້ມູນໂຮງງານອຸດສາຫະກຳ; ເຜີຍແຜ່ການນຳໃຊ້ຖານຂໍ້ມູນເຄມີແຫ່ງຊາດ, ນະໂຍບາຍອຸດສາຫະກຳສີຂຽວ ແລະ ສ້າງຍຸດທະສາດພັດທະນາພະລັງງານຊີວະລວມ.

– ເລັ່ງເກັບກຳຂໍ້ມູນລະອຽດລາຍການຜະລິດຕະພັນສຳຄັນທີ່ຜະລິດໄດ້ ແລະ ສະໜອງພາຍໃນ, ກຳລັງການຜະລິດ ແລະ ການຜະລິດຕົວຈິງ ເພື່ອສົມທົບກັບພາກສ່ວນກ່ຽວຂ້ອງກຳນົດມາດຕະການສົ່ງເສີມການນຳໃຊ້ຜະລິດຕະພັນພາຍໃນໃຫ້ຫຼາຍຂຶ້ນ.

– ສຸມໃສ່ພັດທະນາແຫຼ່ງພະລັງງານໂຄງການໄຟຟ້າພະລັງງານນ້ຳ, ພະລັງງານລົມ, ພະລັງງານແສງຕາເວັນ ແລະ ພະລັງງານສະອາດອື່ນໆ ທີ່ນອນໃນແຜນການ 5 ປີ ຄັ້ງທີ IX ໃຫ້ກໍ່ສ້າງສຳເລັດ; ພ້ອມນີ້, ກໍຊຸກຍູ້ໃຫ້ບັນດາໂຄງການແຫຼ່ງພະລັງງານທີ່ສຳເລັດແລ້ວ ດຳເນີນການຜະລິດໃຫ້ເຕັມກຳລັງຕາມແຜນທີ່ໄດ້ກຳນົດໄວ້.

– ສືບຕໍ່ສຶກສາຕະຫຼາດຈຳໜ່າຍໄຟຟ້າທີ່ແນ່ນອນ ໂດຍເຈລະຈາຂາຍໄຟຟ້າ ກັບປະເທດເພື່ອນບ້ານ ແລະ ບັນດາປະເທດອາຊຽນໃຫ້ປະກົດຜົນເປັນຈິງ.

– ຊຸກຍູ້ໂຄງການບໍ່ແຮ່ທີ່ຢູ່ໃນໄລຍະຂຸດຄົ້ນ-ສຳຫຼວດ, ສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກໃຫ້ກ້າວສູ່ການຂຸດຄົ້ນ-ປຸງແຕ່ງ; ຊຸກຍູ້ໃຫ້ນັກລົງທຶນຜູ້ພັດທະນາໂຄງການບໍ່ແຮ່ ໃຫ້ມີການສ້າງຕັ້ງໂຮງງານປຸງແຕ່ງແຮ່ທາດ (Processing Plant) ແລະ ຫຼໍ່ຫຼອມແຮ່ທາດ (Smelting Plant) ທີ່ມີທ່າແຮງພາຍໃນປະເທດ ສຳລັບແຮ່ທາດພື້ນຖານເປັນຕົ້ນ: ແຮ່ຄຳ, ທອງ, ຊືນ, ສັງກະສີ, ກົ່ວ, ເຫຼັກ ...

– ສຸມໃສ່ການສຳຫຼວດສ້າງແຜນທີ່ທໍລະນີສາດ-ແຮ່ທາດ ມາດຕາສ່ວນ 1/200.000 ໃນເຂດທີ່ຍັງບໍ່ໄດ້ປະຕິບັດໃນເນື້ອທີ່ 74.696 ກມ$^2$ ໃຫ້ສຳເລັດ.

+ ຂະແໜງບໍລິການ:

– ສົ່ງເສີມການຜະລິດພາຍໃນໃຫ້ຫຼາກຫຼາຍ ເພື່ອຫຼຸດຜ່ອນການນຳເຂົ້າ ໂດຍການສ້າງໃຫ້ໄດ້ສິນຄ້າທີ່ຜະລິດຈາກລາວ (Made in Lao) ໃຫ້ເປັນທີ່ຍອມຮັບຂອງຜູ້ຊົມໃຊ້ ແລະ ສົ່ງເສີມການຜະລິດສິນຄ້າທ່າແຮງ ທີ່ສາມາດເຂົ້າເຖິງທັງຕະຫຼາດພາຍໃນ ແລະ ຕ່າງປະເທດ; ກຳນົດສິນຄ້າບູລິມະສິດ ແລະ ສິນຄ້າທ່າແຮງໃຫ້ຂາດຕົວ ເພື່ອມີເປົ້າໝາຍສົ່ງເສີມຜະລິດເປັນສິນຄ້າທີ່ຊັດເຈນ ແລະ ມີລັກສະນະຍຸດທະສາດ ລວມໄປເຖິງການສຸມໃສ່ສົ່ງເສີມຜູ້ຜະລິດ ຕາມແນວທາງຂອງລັດຖະບານທີ່ວາງອອກ.

– ສ້າງຄວາມເຂັ້ມແຂງໃຫ້ແກ່ການພັດທະນາຍີ່ຫໍ້ສິນຄ້າລາວ ດ້ວຍການສົ່ງເສີມພັດທະນາປັບປຸງການຜະລິດ; ການໃຫ້ຄວາມຮູ້ກ່ຽວກັບຕະຫຼາດຈຳໜ່າຍໃຫ້ແກ່ທຸລະກິດ; ການພັດທະນາສິນຄ້າ ເພື່ອເຂົ້າເຖິງຕະຫຼາດ; ການຈັດສຳມະນາ, ອົບຮົມ, ທັດສະນະສຶກສາແລກປ່ຽນດ້ານເຕັກນິກວິຊາການ ແລະ ອື່ນໆ.

– ສຸມໃສ່ພັດທະນາຕະຫຼາດສິນຄ້າທີ່ມີລັກສະນະທັນສະໄໝ ເຊັ່ນ: ສູນການຄ້າ ແລະ ຮ້ານສັບພະສິນຄ້າ; ຕະຫຼາດຊີນນະບົດ ແລະ ຕະຫຼາດຊຸມຊົນ ຢູ່ເຂດຕົວເມືອງໃຫຍ່, ເຂດຊຸມຊົນ ແລະ ເຂດທ່ອງທ່ຽວ ພັດທະນາໄປຄຽງຄູ່ກັບການຜະລິດຂອງກຸ່ມຜູ້ຜະລິດຊຸມຊົນ, ການທ່ອງທ່ຽວ ແລະ ຄົວເຮືອນຂອງແຕ່ລະທ້ອງຖິ່ນ (ສິນຄ້າພູມປັນຍາ-ສິນຄ້າໂອດ໋ອບ) ເພື່ອຂະຫຍາຍການຈຳໜ່າຍສິນຄ້າໂດຍກົງ.

– ສົ່ງເສີມການຜະລິດ ODOP ເປັນສິນຄ້າ ໃຫ້ຕິດພັນກັບການຕະຫຼາດ, ການຂາຍ ແລະ ການຊົມໃຊ້ຜະລິດຕະພັນຫັດຖະກຳ ເພື່ອຕອບສະໜອງຄວາມຕ້ອງການຂອງການທ່ອງທ່ຽວ ແລະ ການສົ່ງອອກໃຫ້ນັບມື້ນັບເພີ່ມຂຶ້ນ ເຊັ່ນ: ການຕ່ຳຫູກທໍໄໝ, ການຍ້ອມສີທຳມະຊາດ, ການຕີໂລຫະ (ເຄື່ອງປະດັບ), ເຄື່ອງປັ້ນດິນເຜົາ, ການແກະສະຫຼັກໄມ້, ການຈັກສານ, ການຕີເຫຼັກ, ການປຸງແຕ່ງອາຫານພື້ນເມືອງ, ເຄື່ອງປະດັບເອ້ຍ້ອງ ແລະ ອື່ນໆ.

– ປັບປຸງລະບົບຂົນສົ່ງຕ່າງໆ ໃຫ້ມີຄວາມສະດວກ ປອດໄພ ວ່ອງໄວ, ມີຄຸນນະພາບ ແລະ ໄດ້ມາດຕະຖານດີກວ່າເກົ່າ ເພື່ອເອື້ອອຳນວຍໃຫ້ການຄ້າ ແລະ ການລົງທຶນ.

– ສຸມໃສ່ການໂຄສະນາສົ່ງເສີມການທ່ອງທ່ຽວ ແລະ ກິດຈະກຳທ່ອງທ່ຽວລາວ ປີ 2024 ຜ່ານສື່ຕ່າງໆເພື່ອດຶງດູດນັກທ່ອງທ່ຽວຕ່າງປະເທດ, ຈັດກິດຈະກຳການທ່ອງທ່ຽວລາວໃຫ້ມີຄວາມຫຼາກຫຼາຍ ແລະ ຊຸກຍູ້ໃຫ້ພາກເອກະຊົນເຂົ້າມາມີສ່ວນຮ່ວມໃນການພັດທະນາວຽກງານນີ້ຫຼາຍຂຶ້ນ; ກະກຽມຈັດກອງປະຊຸມລັດຖະມົນຕີທ່ອງທ່ຽວອາຊຽນ ຄັ້ງທີ 27, ກອງປະຊຸມທີ່ກ່ຽວຂ້ອງ ແລະ ງານວາງສະແດງການທ່ອງທ່ຽວອາຊຽນ ATF 2024 ແລະ ຊຸກຍູ້ສົ່ງເສີມຈັດກິດຈະກຳການທ່ອງທ່ຽວ “ບຸນປະເພນີ” ຢູ່ພາຍໃນປະເທດ.

– ສືບຕໍ່ປັບປຸງແຜນແມ່ບົດການພັດທະນາ ແລະ ຄຸ້ມຄອງຕົວເມືອງທ່ອງທ່ຽວເມືອງວັງວຽງ, ແຂວງວຽງຈັນ ສຳລັບປີ 2023-2030; ສ້າງແຜນພັດທະນາການທ່ອງທ່ຽວໃນລະດັບພາກເໜືອ, ພາກກາງ ແລະ ພາກໃຕ້; ແຜນພັດທະນາການທ່ອງທ່ຽວແບບອະນຸລັກຂອງ ສປປ ລາວ ສຳລັບປີ 2024-2030 ແລະ ແຜນຍຸດທະສາດການທ່ອງທ່ຽວເຊື່ອມໂຍງ ສປປ ລາວ ແລະ ປະເທດໄທ ສຳລັບປີ 2024-2028.

– ສືບຕໍ່ພັດທະນາບັນດາໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກດ້ານການທ່ອງທ່ຽວ ແລະ ກິດຈະກຳທີ່ໄດ້ຮັບການອະນຸມັດຢູ່ບັນດາແຂວງເປົ້າໝາຍ ຂອງການພັດທະນາໂຄງລ່າງພື້ນຖານເພື່ອສົ່ງເສີມການທ່ອງທ່ຽວ ໄລຍະ 2 ຢູ່ແຂວງຫຼວງພະບາງ, ວຽງຈັນ ແລະ ຈຳປາສັກ ໃຫ້ສຳເລັດຕາມແຜນການ.

– ຈັດຕັ້ງປະຕິບັດການຈັດລະດັບມາດຕະຖານສະຖານທີ່ທ່ອງທ່ຽວໃນຂອບເຂດທົ່ວປະເທດ ໂດຍເລີ່ມຕົ້ນຈາກແຂວງທີ່ມີທ່າແຮງ ເປັນຕົ້ນ: ແຂວງຈຳປາສັກ (ວັດພູ) ແລະ ນະຄອນຫຼວງວຽງຈັນ (ທາດຫຼວງ, ພະທາດຫຼວງ ແລະ ປະຕູໄຊ); ຈັດຕັ້ງປະຕິບັດລົງປະເມີນ ແລະ ຄັດເລືອກມາດຕະຖານເມືອງທ່ອງທ່ຽວສະອາດອາຊຽນ ແລະ ລາງວັນການທ່ອງທ່ຽວແບບຍືນຍົງອາຊຽນຢູ່ບັນດາແຂວງເປົ້າໝາຍ ເພື່ອຮັບລາງວັນໃນປີ 2024 ແລະ ປີ 2025.

– ສືບຕໍ່ຜັນຂະຫຍາຍບົດຄົ້ນຄວ້າການທ່ອງທ່ຽວກະສິກຳຂອງ ສປປ ລາວ ໃຫ້ເປັນແຜນງານລະອຽດ ແລະ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດບັນດາແຜນງານດັ່ງກ່າວ; ສືບຕໍ່ສ້າງແຜນພັດທະນາການທ່ອງທ່ຽວແບບອະນຸລັກ 4 ແຂວງພາກໃຕ້ ແລະ ແຂວງອື່ນໆໃນຂອບເຂດທົ່ວປະເທດ.

– ສົມທົບກັບບັນດາແຂວງລົງສຳຫຼວດ, ຈັດສັນ, ກຳນົດຂອບເຂດ, ອອກໃບຕາດິນ ແລະ ປັກຫຼັກໝາຍແຫຼ່ງທ່ອງທ່ຽວບູລິມະສິດ ໃຫ້ສຳເລັດ.

### 4.1.2 ແຜນວຽກຈຸດສຸມທີ 2: ເສດຖະກິດມະຫາພາກມີຄວາມເຂັ້ມແຂງ ແລະ ໝັ້ນທ່ຽງ

❖ **ຄາດໝາຍ:**

\+ <u>ດ້ານການເງິນ</u>:

– ສູ້ຊົນເກັບລາຍຮັບງົບປະມານທັງໝົດ ໃຫ້ໄດ້ບໍ່ໃຫ້ຫຼຸດ 179.500 ຕື້ກີບ ຫຼື ເທົ່າກັບ 17% ຂອງ GDP; ໃນນີ້: ລາຍຮັບພາຍໃນ ໃຫ້ໄດ້ 166.753 ຕື້ກີບ ຫຼື ເທົ່າກັບ 15,8% ຂອງ GDP;

– ສູ້ຊົນປະຕິບັດລາຍຈ່າຍ ບໍ່ໃຫ້ເກີນ 190.000 ຕື້ກີບ ຫຼື 18% ຂອງ GDP;

– ຂາດດຸນງົບປະມານທັງໝົດ ສະເລ່ຍໃນ 5 ປີ 10.500 ຕື້ກີບ ຫຼື ໃຫ້ຢູ່ໃນລະດັບຕໍ່າກວ່າ 1% ຂອງ GDP ຫຼື ສູງສຸດບໍ່ເກີນ 2% ຂອງ GDP.

\+ <u>ດ້ານເງິນຕາ</u>:

– ປະລິມານເງິນລວມ M2 ຂະຫຍາຍຕົວບໍ່ເກີນ 20% ຕໍ່ປີ;

– ສູ້ຊົນໃຫ້ອັດຕາເງິນເຟີ້ ຢູ່ໃນລະດັບບໍ່ເກີນ 9% ໃນທ້າຍປີ 2025;

– ຄຸ້ມຄອງອັດຕາແລກປ່ຽນໃຫ້ເໝັ້ງຕີງສອດຄ່ອງກັບດຸນຍະພາບທາງດ້ານເສດຖະກິດ-ເງິນຕາ ແລະ ບໍ່ສ້າງແຮງກົດດັນຕໍ່ເງິນເຟີ້;

– ຍອດເຫຼືອເງິນຝາກຂອງທະນາຄານທຸລະກິດ ໃຫ້ຢູ່ໃນລະດັບ 60% ຂອງ GDP;

– ຍອດເຫຼືອສິນເຊື່ອຂອງຂະແໜງການທະນາຄານ ໃຫ້ຢູ່ໃນລະດັບ 49% ຂອງ GDP;

– ສູ້ຊົນໃຫ້ຄັງສຳຮອງເງິນຕາຕ່າງປະເທດ ໃຫ້ສາມາດກຸ້ມການນຳເຂົ້າ ໄດ້ບໍ່ຫຼຸດ 3 ເດືອນ;

– ຄວບຄຸມອັດຕາສ່ວນໜີ້ບໍ່ເກີດດອກອອກຜົນ (NPLs) ສະເລ່ຍໃຫ້ຢູ່ໃນລະດັບບໍ່ເກີນ 3% ຂອງຍອດສິນເຊື່ອທັງໝົດ.

\+ <u>ດ້ານການສົ່ງອອກ-ນຳເຂົ້າສິນຄ້າ</u>:

– ສູ້ຊົນໃຫ້ມູນຄ່າການສົ່ງອອກສິນຄ້າ ບັນລຸໄດ້ 38.043,5 ລ້ານໂດລາສະຫະລັດ ຫຼື ຂະຫຍາຍຕົວສະເລ່ຍ 8-10% ຕໍ່ປີ.

– ມູນຄ່າການນຳເຂົ້າສິນຄ້າ ໃຫ້ໄດ້ 32.927,3 ລ້ານໂດລາສະຫະລັດ ຫຼື ຂະຫຍາຍຕົວສະເລ່ຍ ບໍ່ເກີນ 9% ຕໍ່ປີ.

❖ **ວຽກຈຸດສຸມ:**

– ເລັ່ງຮີບຮ້ອນຄົ້ນຄວ້າມາດຕະການ ແລະ ນະໂຍບາຍ ເພື່ອແກ້ໄຂ, ຕ້ານ ແລະ ສະກັດກັ້ນການເພີ່ມຂຶ້ນຂອງເງິນເຟີ້, ການອ່ອນຄ່າຂອງເງິນກີບ, ອັດຕາແລກປ່ຽນທີ່ເພີ່ມຂຶ້ນແບບກ້າວກະໂດດ, ຄ່າຄອງຊີບທີ່ເພີ່ມສູງຂຶ້ນ, ບັນຫາໜີ້ສິນສາທາລະນະ ແລະ ໜີ້ສິນໂຄງການລົງທຶນຂອງລັດ ເພື່ອບໍ່ໃຫ້ສ້າງແຮງກົດດັນຕໍ່ຂັ້ນຄຸ້ມຄອງດ້ານການເງິນ-ເງິນຕາ ແລະ ກັບຄືນສູ່ສະພາບປົກກະຕິໂດຍໄວ.

– ສຸມໃສ່ຄຸ້ມຄອງເສດຖະກິດມະຫາພາກດ້ານເງິນຕາໃຫ້ມີສະຖຽນລະພາບ ໂດຍສະເພາະອັດຕາເງິນເຟີ້, ອັດຕາແລກປ່ຽນ; ດຳເນີນນະໂຍບາຍເງິນຕາໃຫ້ຮັດກຸມກວ່າເກົ່າ, ສ້າງຄວາມເຂັ້ມແຂງຄັງເງິນສຳຮອງເງິນຕາຕ່າງປະເທດ ດ້ວຍການຄຸ້ມເງິນຕາໃຫ້ເຂົ້າສູ່ລະບົບທະນາຄານ ແລະ ເຂັ້ມງວດການຕິດຕາມລາຄາສິນຄ້າຢ່າງເປັນປົກກະຕິ.

– ຄຸ້ມຄອງລາຍຮັບຈາກການສົ່ງອອກຜ່ານລະບົບທະນາຄານ ໃຫ້ໄດ້ບໍ່ຫຼຸດ 70% ຂອງການສົ່ງອອກທັງໝົດ (ບໍ່ລວມເອົາບາງຫົວໜ່ວຍທຸລະກິດ ທີ່ໄດ້ຮັບການຍົກເວັ້ນປະຕິບັດບາງມາດຕະການຂອງກົດໝາຍວ່າດ້ວຍ ການຄຸ້ມຄອງເງິນຕາຕ່າງປະເທດ ໃນໄລຍະຜ່ານມາ).

– ສືບຕໍ່ສຸມໃສ່ການຈັດເກັບລາຍຮັບຈາກບັນດາຖານລາຍຮັບທີ່ມີ ໃຫ້ໄດ້ຕາມແຜນ 17% ຂອງ GDP ດ້ວຍການຂະຫຍາຍຖານລາຍຮັບອາກອນໃຫ້ເພີ່ມຂຶ້ນ ດ້ວຍການທົບທວນຄືນບັນດາອັດຕາສ່ວຍສາອາກອນ (ອາກອນກໍາໄລ, ອາກອນຊົມໃຊ້ ແລະ ອາກອນມູນຄ່າເພີ່ມ), ຄົ້ນຄວ້າປະເມີນຄືນການຍົກເວັ້ນພາສີ-ອາກອນ ທີ່ຕິດພັນກັບການສົ່ງເສີມການລົງທຶນບັນດາໂຄງການຂະໜາດໃຫຍ່ ແລະ ຂະຫຍາຍຖານລາຍຮັບໃໝ່ທີ່ຫຼາກຫຼາຍ ແລະ ມີຄວາມໝັ້ນຄົງ; ສຸມໃສ່ການຫັນເປັນທັນສະໄໝໃນການຈັດເກັບລາຍຮັບເພີ່ມຂຶ້ນ.

– ເລັ່ງທວງ ແລະ ມີມາດຕະການ ໃນການເກັບກູ້ຄືນໜີ້ຕ້ອງຮັບ, ການແກ້ໄຂຜົນການກວດສອບ ແລະ ກວດກາທີ່ຍັງຄ້າງມາຫຼາຍປີ ເຂົ້າໃນແຜນງົບປະມານໃຫ້ຄົບຖ້ວນ, ສອດຄ່ອງກັບກົດໝາຍ ແລະ ວິໄນການເງິນຢ່າງເຄັ່ງຄັດ.

– ສຸມໃສ່ການສໍາຫຼວດ, ການຄົ້ນຄວ້າ ແລະ ສ້າງລະບົບຂໍ້ມູນດ້ານສະຖິຕິລາຍຮັບ ລວມທັງຖານຂໍ້ມູນລາຍຮັບຈາກພາກສ່ວນເສດຖະກິດທີ່ບໍ່ເປັນທາງການ ເຂົ້າສູ່ລະບົບ TaxRis ໃຫ້ຄົບຖ້ວນຫຼາຍຂຶ້ນ; ເພີ້ມທະວີການຄຸ້ມຄອງແບບລວມສູນ ແລະ ການແບ່ງຂັ້ນການຄຸ້ມຄອງລະຫວ່າງສູນກາງ ແລະ ທ້ອງຖິ່ນ ໃຫ້ມີຄວາມຈະແຈ້ງ ແລະ ຊັດເຈນ.

– ສືບຕໍ່ເພີ້ມທະວີການຄຸ້ມຄອງລາຍຈ່າຍ ຕາມມາດຕະການປະຢັດມັດທະຍັດ ແລະ ຕ້ານການຟຸມເຟືອຍຂອງລັດຖະບານ, ຍົກສູງປະສິດທິພາບ ແລະ ປະສິດທິຜົນການຈັດຕັ້ງປະຕິບັດແຜນລາຍຈ່າຍງົບປະມານແຫ່ງລັດ ໃຫ້ສອດຄ່ອງຕາມກົດໝາຍ ແລະ ມະຕິສະພາແຫ່ງຊາດຮັບຮອງ.

– ເອົາໃຈໃສ່ປະຕິບັດແຜນຊໍາລະໜີ້ສິນສາທາລະນະ ທັງພາຍໃນ ແລະ ຕ່າງປະເທດ ໃຫ້ທັນຕາມກໍານົດເວລາ, ພ້ອມທັງຄົ້ນຄວ້າແຫຼ່ງດຸນດ່ຽງງົບປະມານແບບຍືນຍົງ, ຫຼຸດຜ່ອນການກູ້ຢືມຈາກຕ່າງປະເທດ, ເລື່ອນອາຍຸໜີ້ສິນອອກໄປຕື່ມດ້ວຍການເຈລະຈາເລື່ອນໜີ້ກັບບັນດາເຈົ້າໜີ້ຕ່າງໆ ແລະ ຂຸດຄົ້ນແຫຼ່ງລາຍຮັບທີ່ບົ່ມຊ້ອນພາຍໃນປະເທດ.

– ຄົ້ນຄວ້າແຫຼ່ງດຸ່ນດ່ຽງງົບປະມານ ແລະ ທົດແທນເງິນກູ້ຢືມໃຫ້ຈະແຈ້ງຊັດເຈນ ດ້ວຍການຫຼຸດຜ່ອນແຫຼ່ງດຸ່ນດ່ຽງຈາກການກູ້ຢືມຕ່າງປະເທດ, ສ້າງແຜນຍຸດທະສາດກູ້ຢືມຈາກພາຍໃນໃຫ້ຫຼາຍຂຶ້ນ.

### 4.1.3 ແຜນວຽກຈຸດສຸມທີ 3: ຍົກສູງການລົງທຶນໃຫ້ມີຄຸນນະພາບ ແລະ ມີປະສິດທິຜົນສູງ

❖ **ຄາດໝາຍ:**

– ການລົງທຶນລວມທົ່ວສັງຄົມ ໃຫ້ຢູ່ໃນລະດັບບໍ່ຫຼຸດ 204.599 ຕື້ກີບ ຫຼື ເທົ່າກັບ 19,4% ຂອງ GDP; ໃນນີ້:

+ ການລົງທຶນຈາກງົບປະມານພາຍໃນ ໃຫ້ໄດ້ 22.950 ຕື້ກີບ, ເທົ່າກັບ 11% ຂອງການລົງທຶນທັງໝົດ;

+ ການຊ່ວຍເຫຼືອທາງການເພື່ອການພັດທະນາ ODA ໃຫ້ໄດ້ 37.344 ຕື້ກີບ, ເທົ່າກັບ 18% ຂອງການລົງທຶນທັງໝົດ;

+ ການລົງທຶນຂອງພາກເອກະຊົນພາຍໃນ ແລະ ຕ່າງປະເທດ ໃຫ້ໄດ້ 100.000 ຕື້ກີບ, ເທົ່າກັບ 49% ຂອງການລົງທຶນທັງໝົດ;

+ ການລົງທຶນອື່ນໆ ໃຫ້ໄດ້ 44.305 ຕື້ກີບ, ເທົ່າກັບ 22% ຂອງການລົງທຶນທັງໝົດ.

❖ **ວຽກຈຸດສຸມ:**

– ສືບຕໍ່ແກ້ໄຂໜີ້ສິນສາທາລະນະໃຫ້ຫຼຸດລົງ ຕາມແຜນຍຸດທະສາດທີ່ໄດ້ຮັບຮອງ.

– ສືບຕໍ່ປັບປຸງກົນໄກ ແລະ ລະບຽບການຕ່າງໆ ໃຫ້ມີຄວາມຈະແຈ້ງ ແລະ ສະໜັບສະໜູນເຊິ່ງກັນ ແລະ ກັນດ້ວຍການປັບປຸງຂອດຂັ້ນທີ່ເປັນອຸປະສັກແກ່ການດຶງດູດການລົງທຶນຂອງພາກເອກະຊົນ ລວມທັງປຸກລະດົມທຸກພາກສ່ວນໃນສັງຄົມປະກອບສ່ວນໃນການພັດທະນາປະເທດ ໃຫ້ສາມາດບັນລຸຄາດໝາຍທີ່ກໍານົດໄວ້.

– ສົ່ງເສີມການຮ່ວມມືລະຫວ່າງພາກລັດ ແລະ ພາກເອກະຊົນ (PPP) ຊຶ່ງເປັນວິທີການທີ່ດີໃນການປັບປຸງໂຄງລ່າງພື້ນຖານ, ການຂົນສົ່ງ ແລະ ການບໍລິການສາທາລະນະພາກລັດໃນຕໍ່ໜ້າ. ສະນັ້ນ, ການທີ່ຈະບັນລຸບູລິມະສິດຂອງເປົ້າໝາຍ

ແຕ່ລະຂະແໜງການເປັນຕົ້ນ: ການລົງທຶນໃສ່ການພັດທະນາຊັບພະຍາກອນມະນຸດ, ການປ່ຽນແປງດິນຟ້າອາກາດ, ການປົກປັກຮັກສາສິ່ງແວດລ້ອມ ແລະ ການຄຸ້ມຄອງບໍລິຫານລັດແມ່ນຕິດພັນກັບແຫຼ່ງລາຍຮັບຂອງລັດ.

– ຈັດຕັ້ງຜັນຂະຫຍາຍຍຸດທະສາດການເງິນ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ດ້ວຍການລົງເລິກ 4 ແຫຼ່ງທຶນຕາມຫຼັກການສາກົນ ເພື່ອກຳນົດ 54 ມາດຕະການຈັດຕັ້ງປະຕິບັດ ແລະ ຂອບຕິດຕາມປະເມີນຜົນຄົບຊຸດ ໃຫ້ສາມາດຕີລາຄາ ແລະ ລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດແຫຼ່ງທຶນຕ່າງໆເພື່ອການພັດທະນາ ໄດ້ຢ່າງຊັດເຈນ ແລະ ທັນການ[7].

– ເພີ່ມລາຍຮັບງົບປະມານພາກລັດ ເພື່ອຮັບປະກັນການລົງທຶນເຂົ້າໃນຂົງເຂດສັງຄົມໃຫ້ຫຼາຍຂຶ້ນ ເປັນຕົ້ນ: ຂະແໜງການສຶກສາ, ສາທາລະນະສຸກ ແລະ ການປະກັນສັງຄົມ ເພື່ອຫຼີກລ່ຽງການຫຼຸດລົງຂອງການພັດທະນາຊັບພະຍາກອນມະນຸດ.

### 4.1.4 ແຜນວຽກຈຸດສຸມທີ 4: ການພັດທະນາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ມີຄວາມເຂັ້ມແຂງ ແລະ ສາມາດແຂ່ງຂັນກັບພາກພື້ນ ແລະ ສາກົນ

❖ **ຄາດໝາຍ:**

– ສືບຕໍ່ເຮັດໃຫ້ຕົວຊີ້ບອກ "ການເລີ່ມຕົ້ນທຸລະກິດ" ຂອງ ສປປ ລາວ ໃຫ້ດີຂຶ້ນເລື້ອຍໆ ຮອດປີ 2025.

– ສູ້ຊົນໃຫ້ການປະກອບສ່ວນຂອງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (ຈນກ) ຕໍ່ GDP ກວມເອົາ 18% ໃນປີ 2025.

– ສູ້ຊົນເຮັດໃຫ້ການເພີ່ມຂຶ້ນຂອງຈຳນວນຜູ້ປະກອບການໃໝ່ ຂອງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (ຈນກ) ເພີ່ມຂຶ້ນ 2% ຕໍ່ປີ.

❖ **ວຽກຈຸດສຸມ:**

– ສືບຕໍ່ສ້າງນິຕິກຳຜັນຂະຫຍາຍ ກົດໝາຍວ່າດ້ວຍວິສາຫະກິດ ສະບັບປັບປຸງ ປີ 2022.

– ປັບປຸງສະພາບແວດລ້ອມການດຳເນີນທຸລະກິດ ເພື່ອແກ້ໄຂຄວາມຫຍຸ້ງຍາກທີ່ຕິດພັນກັບຕົວຊີ້ວັດການເລີ່ມຕົ້ນທຸລະກິດ ໂດຍສືບຕໍ່ການປັບປຸງຂະບວນການຈົດທະບຽນວິສາຫະກິດ ແລະ ອອກໃບອະນຸຍາດດຳເນີນທຸລະກິດຕ່າງໆໃຫ້ມີຄວາມໂປ່ງໃສ ແລະ ມີປະສິດທິພາບກວ່າເກົ່າ ເພື່ອຊ່ວຍຫຼຸດຜ່ອນຄ່າໃຊ້ຈ່າຍທີ່ບໍ່ຈຳເປັນ ໂດຍສະເພາະ SMEs.

– ສະໜັບສະໜູນຄວາມໂປ່ງໃສດ້ານລະບຽບການທີ່ຕິດພັນກັບຂະແໜງການຄ້າ ແລະ ພາກເອກະຊົນ ພ້ອມທັງສ້າງຄວາມເຂັ້ມແຂງໃຫ້ແກ່ຂະບວນການປຶກສາຫາລືລະຫວ່າງພາກລັດ ແລະ ທຸລະກິດ ພາຍໃຕ້ກອງປະຊຸມທຸລະກິດລາວ ຫຼື Lao Business Forum ແລະ ສະໜັບສະໜູນການດຳເນີນງານຂອງໜ່ວຍງານຂະແໜງ ການຄ້າ ແລະ ພາກເອກະຊົນ.

– ສ້າງ ແລະ ປັບປຸງກົນໄກການຊຸກຍູ້ ແລະ ສົ່ງເສີມການຖືບັນຊີຂອງ ຈນກ ໂດຍສະເພາະສືບຕໍ່ຊຸກຍູ້ ຈນກ ທີ່ໄດ້ຮັບສິນເຊື່ອບ້ວງອັດຕາດອກເບ້ຍ 3% ຕໍ່ປີ ຂອງ ທສວ ໃຫ້ສາມາດຖືບັນຊີໄດ້ຖືກຕ້ອງຕາມລະບຽບກົດໝາຍ ເພື່ອສົ່ງເສີມການເຂົ້າເຖິງແຫຼ່ງທຶນໃຫ້ຫຼາຍຂຶ້ນ; ລົງຕິດຕາມ ຈນກ ທີ່ໄດ້ຮັບສິນເຊື່ອບ້ວງເງິນຕ່າງໆຂອງ ທສວ ໃຫ້ໄດ້ບໍ່ຫຼຸດ 60 ຫົວໜ່ວຍ; ສືບຕໍ່ສະໜອງສິນເຊື່ອ ໃຫ້ໄດ້ 840 ຕື້ກວ່າກີບ ປ່ອຍກູ້ໃຫ້ໄດ້ 530 ຫົວໜ່ວຍ ໂດຍການສົມທົບກັບທະນາຄານທຸລະກິດ ເພື່ອສະໜອງສິນເຊື່ອບ້ວງເງິນຕ່າງໆ ໃຫ້ທຸລະກິດທີ່ມີທ່າແຮງການຜະລິດເປັນສິນຄ້າ ທີ່ຈຳເປັນຕໍ່ຊີວິດການເປັນຢູ່ຂອງປະຊາຊົນ.

– ຄົ້ນຄວ້າກຳນົດນະໂຍບາຍດ້ານສິນເຊື່ອທະນາຄານ, ດ້ານງົບປະມານ ແລະ ດ້ານພາສີ-ອາກອນ ທີ່ມີລັກສະນະຜ່ອນຜັນ.

---

[7] https://rtm.org.la/wp-content/uploads/2023/01/Advanced draft FS clean with exec summary DOP-2401.pdf

– ສ້າງສູນຕະວັດຕະກຳສະຕາດອັບ ແລະ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (ຈນກ); ຈັດງານແຂ່ງຂັນ Startup ECOTHON ປະຈຳປີ ຢ່າງໜ້ອຍໃຫ້ໄດ້ 2 ຄັ້ງ ພາຍໃຕ້ໂຄງການແຜນງານຮ່ວມມື ສະຕາດອັບ ອາຊຽນ-ສ.ເກົາຫຼີ.

– ສືບຕໍ່ຈັດຝຶກອົບຮົມ "ການວາງແຜນທຸລະກິດ, ການວາງແຜນການເງິນ ແລະ ການບັນຊີເງິນສົດ" ພາຍໃຕ້ໂຄງການ ຢັ້ງຢືນການຝຶກອົບຮົມໃຫ້ ຈນກ ເພື່ອເຂົ້າເຖິງແຫຼ່ງທຶນໃຫ້ກັບຫົວໜ່ວຍ ຈນກ ໃນ 18 ແຂວງທົ່ວປະເທດ.

– ສົ່ງເສີມການປັບໂຄງສ້າງເສດຖະກິດ ຕິດພັນກັບການສ້າງວຽກເຮັດງານທຳໃນຂະແໜງ MSME; ສົ່ງເສີມການ ຜະລິດຕ່ອງໂສ້ມູນຄ່າເພີ່ມ ແລະ ການສົ່ງອອກສິນຄ້າໃຫ້ໄດ້ມາດຕະຖານສາກົນ, ໃນຂະນະດຽວກັນ ກໍຫຼຸດຜ່ອນການນຳເຂົ້າ ສິນຄ້າ ແລະ ການເອື່ອຍອີງໃສ່ຊັບພະຍາກອນທຳມະຊາດ.

### 4.1.5 ແຜນວຽກຈຸດສຸມທີ 5: ການພັດທະນາວິສາຫະກິດຂອງລັດ ແລະ ເສດຖະກິດຮ່ວມໝູ່ຂອງປະຊາຊົນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ

❖ **ວຽກຈຸດສຸມ:**

– ສືບຕໍ່ເລັ່ງຈັດຕັ້ງປະຕິບັດການປະຕິຮູບລັດວິສາຫະກິດໃຫ້ສຳເລັດຕາມແຜນການໂດຍໄວ ໂດຍສະເພາະການ ປະຕິຮູບ 5 ຫົວໜ່ວຍລັດວິສາຫະກິດທີ່ເປັນຍຸດທະສາດ ເພື່ອໃຫ້ສາມາດດຳເນີນທຸລະກິດໄດ້ຢ່າງມີປະສິດທິພາບ ແລະ ມີຜົນກຳໄລ.

– ຄົ້ນຄວ້ານິຕິກຳໃຕ້ກົດໝາຍຈຳນວນໜຶ່ງ ເພື່ອຄຸ້ມຄອງລັດວິສາຫະກິດ ເຊັ່ນ: ການຄຸ້ມຄອງ ແລະ ອອກ ໃບອະນຸຍາດດຳເນີນທຸລະກິດ, ການກຳນົດໝາຍເງິນເດືອນ, ເງິນອຸດໜູນ, ນະໂຍບາຍ ແລະ ລາຍຈ່າຍບໍລິຫານ ໃຫ້ເປັນ ເອກະພາບ, ເປັນລະບົບ ແລະ ມີມາດຖານຄຸ້ມຄອງໃຫ້ຮັດກຸມກວ່າເກົ່າ.

– ສ້າງລະບຽບການຄຸ້ມຄອງຂອງສະພາບໍລິຫານ ແລະ ຄະນະອຳນວຍການ ທີ່ຖືກແຕ່ງຕັ້ງ ແລະ ວ່າຈ້າງຈາກລັດ ໃຫ້ໄປບໍລິຫານ ເພື່ອເປັນບ່ອນອີງໃນການນຳພາ-ຊີ້ນຳ ໃຫ້ລັດວິສາຫະກິດເຄື່ອນໄຫວໄດ້ຕາມເປົ້າໝາຍ.

– ສ້າງຕັ້ງ ບໍລິສັດບໍລິຫານຊັບສິນຂອງລັດ ເພື່ອຄຸ້ມຄອງການລົງທຶນຂອງລັດ ໃຫ້ລັດວິສາຫະກິດເຄື່ອນໄຫວຢ່າງ ມີປະສິດທິຜົນ.

– ຄົ້ນຄວ້າລະບົບຕິດຕາມ ແລະ ຄຸ້ມຄອງຂໍ້ມູນທາງການເງິນ ແລະ ບໍ່ແມ່ນທາງການເງິນ ທີ່ທັນສະໄໝ ເພື່ອສາມາດ ຕິດຕາມ ແລະ ປະເມີນຜົນລັດວິສາຫະກິດ ໄດ້ຢ່າງທ່ວງທັນ.

– ຍົກລະດັບຄວາມຮູ້-ຄວາມສາມາດຂອງພະນັກງານ ໃຫ້ກາຍເປັນຊ່ຽວຊານທີ່ມີຄວາມເຂັ້ມແຂງໃນວຽກງານການ ປະຕິຮູບລັດວິສາຫະກິດ ເນື່ອງຈາກການປະຕິຮູບລັດວິສາຫະກິດມີຫຼາຍຂະແໜງການ.

– ສົ່ງເສີມຈັດຕັ້ງການຜະລິດຂອງຄອບຄົວປະຊາຊົນທີ່ມີແລ້ວໃຫ້ເປັນສິນຄ້າ ກ້າວຂຶ້ນເປັນກຸ່ມສະຫະກອນ, ເປັນ ຟາມແບບຫົວໜ່ວຍ MSMEs ແລະ ເປັນເຄືອຂ່າຍສະມາຄົມສະເພາະ ໃຫ້ເພີ່ມຂຶ້ນ 50% ໂດຍຕິດພັນກັບການສົ່ງເສີມ ຕ່ອງໂສ້ມູນຄ່າເພີ່ມ ໃນການຜະລິດກະສິກຳເປັນສິນຄ້າ ແລະ ເປັນມິດຕໍ່ສິ່ງແວດລ້ອມ.

– ກຳນົດຈຸດສຸມ, ປັບປຸງກຳລັງການຜະລິດ, ກຸ່ມ, ສະຫະກອນ ແລະ ສະມາຄົມ ເພື່ອຍົກສູງຜະລິດຕະພາບໂດຍເລີ່ມ ຈາກໃຫ້ບູລິມະສິດການຜະລິດເປັນສິນຄ້າ, ເສດຖະກິດຮ່ວມ ດ້ວຍຮູບແບບການຈັດຕັ້ງກຳລັງການຜະລິດ ເປັນຕົ້ນ: ກຸ່ມການຜະລິດ, ສະມາຄົມ ແລະ ສະຫະກອນແບບໃໝ່; ພ້ອມດຽວກັນນັ້ນ, ຊຸກຍູ້ໃຫ້ກຸ່ມ, ສະຫະກອນ ແລະ ສະມາຄົມ ເຂົ້າເຖິງນະໂຍບາຍສິນເຊື່ອ SME, ກອງທຶນຕ່າງໆທີ່ມີດອກເບ້ຍເໝາະສົມ ຕິດພັນກັບການສ້າງເຄືອຂ່າຍເຊື່ອມໂຍງ ລະຫວ່າງກຸ່ມຜູ້ປູກ-ຜູ້ລ້ຽງກັບກຸ່ມໂຮງງານປຸງແຕ່ງ ດ້ວຍການຜູກພັນສອງສົ້ນ.

## 4.2 ເປົ້າໝາຍທີ 2: ຊັບພະຍາກອນມະນຸດມີຄຸນນະພາບສູງຂຶ້ນ ສາມາດຕອບສະໜອງຄວາມຕ້ອງການຂອງການພັດທະນາ, ມີຄວາມສາມາດຄົ້ນຄວ້າ ແລະ ນຳໃຊ້ວິທະຍາສາດ-ເຕັກໂນໂລຊີ ເພື່ອຍົກສູງປະສິດທິພາບ ແລະ ສ້າງມູນຄ່າເພີ່ມການຜະລິດ ແລະ ການບໍລິການ

### 4.2.1 ແຜນວຽກຈຸດສຸມທີ 1: ການປັບປຸງການບໍລິການດ້ານສາທາລະນະສຸກ ແລະ ໂພສະນາການຢ່າງທົ່ວເຖິງ ແລະ ມີຄຸນນະພາບສູງຂຶ້ນ

❖ **ຄາດໝາຍ:**

- ອັດຕາສ່ວນເດັກນ້ອຍລຸ່ມ 5 ປີ ທີ່ມີນ້ຳໜັກຫຼຸດມາດຕະຖານ ໃຫ້ຍັງເຫຼືອ 15% ຂອງປະຊາກອນກຸ່ມເປົ້າໝາຍ;
- ອັດຕາເດັກນ້ອຍລຸ່ມ 5 ປີ ທີ່ມີລວງສູງບໍ່ໄດ້ມາດຕະຖານ ໃຫ້ຍັງເຫຼືອ 27% ຂອງປະຊາກອນເປົ້າໝາຍ;
- ອັດຕາການຕາຍຂອງເດັກນ້ອຍລຸ່ມ 1 ປີ ໃຫ້ຍັງເຫຼືອ 20/1.000 ຄົນຂອງເດັກນ້ອຍເກີດມີຊີວິດ;
- ອັດຕາການຕາຍຂອງເດັກນ້ອຍລຸ່ມ 5 ປີ ໃຫ້ຍັງເຫຼືອ 30/1.000 ຄົນຂອງເດັກນ້ອຍເກີດມີຊີວິດ;
- ອັດຕາສ່ວນການຕາຍຂອງແມ່ ໃຫ້ຍັງເຫຼືອ 110/100.000 ຄົນຂອງເດັກນ້ອຍເກີດມີຊີວິດ;
- ອັດຕາເກີດລູກມີແພດຊ່ວຍ ໃຫ້ໄດ້ 85% ຂອງປະຊາກອນເປົ້າໝາຍ;
- ອັດຕາໃຫ້ວັກຊີນກັນພະຍາດໃນເດັກລຸ່ມ 1 ປີ ໃຫ້ໄດ້ 95% ຂອງປະຊາກອນເປົ້າໝາຍ;
- ອັດຕາຊົມໃຊ້ນ້ຳສະອາດ ໃຫ້ໄດ້ 95% ຂອງປະຊາກອນທັງໝົດ;
- ອັດຕາຊົມໃຊ້ວິດຖ່າຍຄອບຄົວ ໃຫ້ໄດ້ 85% ຂອງຄອບຄົວທັງໝົດ;
- ອັດຕາປົກຄຸມປະກັນສຸຂະພາບທົ່ວປວງຊົນ ໃຫ້ໄດ້ 94,5% ຂອງປະຊາກອນທັງໝົດ;
- ອັດຕາການປະກາດ ແລະ ຮັບຮອງບ້ານສາທາລະນະສຸກແບບຢ່າງ ໃຫ້ໄດ້ 85% ຂອງຈຳນວນບ້ານທັງໝົດ;
- ເພີ່ມອາຍຸຍືນສະເລ່ຍ ໃຫ້ໄດ້ສູງກວ່າ 73 ປີ.

❖ **ວຽກຈຸດສຸມ:**

– ສືບຕໍ່ຈັດຕັ້ງປະຕິບັດຍຸດທະສາດແຫ່ງຊາດ ແລະ ແຜນປະຕິບັດງານ ສຳລັບການບໍລິການແບບເຊື່ອມສານສຸຂະພາບຈະເລີນພັນ, ແມ່, ເດັກເກີດ ແລະ ເດັກນ້ອຍ ແລະ ຍຸດທະສາດໂພຊະນາການ ໂດຍສຸມໃສ່ບັນດາແຂວງ, ເມືອງ ແລະ ໂຮງໝໍນ້ອຍທີ່ຍັງຫຍຸ້ງຍາກ ດ້ວຍທັນວິຊາການ, ງົບປະມານ ແລະ ເງື່ອນໄຂຄວາມສະດວກດ້ານຕ່າງໆ, ພ້ອມທັງລະດົມການມີສ່ວນຮ່ວມຂອງອຳນາດການປົກຄອງ ແລະ ຊຸມຊົນທ້ອງຖິ່ນໃຫ້ຫຼາຍຂຶ້ນ.

– ປັບປຸງ ແລະ ຂະຫຍາຍການບໍລິການສຸຂະພາບແມ່ ແລະ ເດັກ ແລະ ໄວໜຸ່ມໃຫ້ທົ່ວເຖິງ ແລະ ເຂັ້ມແຂງ ໃຫ້ມີຄຸນນະພາບ ແລະ ປົກຄຸມທົ່ວປະເທດ ໂດຍສຸມໃສ່ຕົວຊີ້ບອກທີ່ຕິດພັນກັບຂະແໜງການ ເປັນຕົ້ນ: ການນຳໃຊ້ວັກຊີນກັນພະຍາດ, ການກວດກ່ອນເກີດ/ເກີດລູກມີແພດຊ່ວຍ, ການກວດຫຼັງເກີດ, ວາງແຜນຄອບຄົວ, ສຸຂະພາບເດັກລຸ່ມ 5 ປີ, ສຸຂະພາບໄວໜຸ່ມ ແລະ ປະເມີນຄຸນນະພາບການບໍລິການແບບເຊື່ອມສານແມ່ ແລະ ເດັກ.

– ສືບຕໍ່ສ້າງຄວາມອາດສາມາດໃນການຕິດຕາມ, ເຝົ້າລະວັງ, ຊອກຄົ້ນເຫດການສຸກເສີນດ້ານສາທາລະນະສຸກ, ການປະເມີນຄວາມສ່ຽງ ແລະ ໂຕ້ຕອບຕໍ່ການລະບາດຢ່າງມີປະສິດທິພາບ ແລະ ປະສິດທິຜົນ; ສ້າງຄວາມເຂັ້ມແຂງການເຝົ້າລະວັງສາຍພັນຂອງພະຍາດ (NGS) ເປັນຕົ້ນ: ພະຍາດໂຄວິດ-19 ແລະ ພະຍາດໄຂ້ຍຸງລາຍ, ພ້ອມທັງຊຸກຍູ້ໃຫ້ມີການນຳໃຊ້ເຊື້ອຈຸລິນຊີ ໂວນບັກເກຍ (Wolbachia) ເຂົ້າໃນການຄວບຄຸມການຂະຫຍາຍພັນຂອງຍຸງ ແລະ ຮັບປະກັນການຄວບຄຸມ ແລະ ການເຂົ້າເຖິງບໍລິການປິ່ນປົວພະຍາດວັນນະໂລກ, ພະຍາດເອດ ແລະ ພະຍາດຕິດຕໍ່ທາງເພດສຳພັນ ແລະ ພະຍາດໄຂ້ມາລາເລຍ.

– ສືບຕໍ່ປັບປຸງຍົກລະດັບການບໍລິການຂອງໂຮງໝໍຂັ້ນຕ່າງໆໃຫ້ມີຄຸນນະພາບ ດ້ວຍການຍົກລະດັບພື້ນຖານໂຄງລ່າງໃຫ້ໄດ້ມາດຖານ, ປະກອບຢາ ແລະ ອຸປະກອນການແພດທີ່ຈຳເປັນ; ປັບປຸງການບໍລິການຕາມນະໂຍບາຍ 5 ດີ, 1 ພໍໃຈໃຫ້ມີຮູບປະທຳ ແລະ ມີຜົນສຳເລັດ.

– ສືບຕໍ່ດຳເນີນການປະເມີນການເຮັດທົດລອງ ຫັນໂຮງໝໍກຸ້ມຕົນເອງດ້ານການເງິນ ຂອງ 3 ໂຮງໝໍ ແລະ ຂະຫຍາຍໄປສູ່ໂຮງໝໍອື່ນໆທີ່ມີຄວາມພ້ອມ ແນໃສ່ສ້າງຄວາມເຂັ້ມແຂງໃນການຄຸ້ມຄອງການເງິນ ແລະ ຫຼຸດຜ່ອນການເພິ່ງພາຈາກງົບປະມານຂອງພາກລັດ.

– ເພີ່ມທະວີການຕິດຕາມຄຸນນະພາບ ແລະ ເຝົ້າລະວັງຄວາມປອດໄພຂອງອາຫານ, ຢາ ແລະ ຜະລິດຕະພັນການແພດ ນັບແຕ່ຂອດຂອງການນຳເຂົ້າ, ການຜະລິດ ແລະ ການຈໍລະຈອນແຈກຢາຍ ເພື່ອຈຳກັດການນຳເຂົ້າອາຫານ, ຢາ ແລະ ຜະລິດຕະພັນການແພດທີ່ບໍ່ຖືກຕ້ອງ ແລະ ຕົກມາດຕະຖານ; ບຳລຸງຮັກສາມາດຕະຖານ ISO 17025 ຂອງສູນວິໄຈອາຫານ ແລະ ຢາແຫ່ງຊາດ ແລະ ສືບຕໍ່ພັດທະນາໃຫ້ສູນໄດ້ຖືກຮັບຮອງມາດຕະຖານຄຸນນະພາບຈາກອົງການອະນາໄມໂລກ (WHO PQ); ປັບປຸງ ແລະ ພັດທະນາໜ່ວຍງານວິໄຈຂອງບັນດາແຂວງ ໃຫ້ສາມາດວິໄຈຄຸນນະພາບຂອງອາຫານ ແລະ ຢາ ຂັ້ນພື້ນຖານໄດ້.

– ສືບຕໍ່ພັດທະນາຫຼັກສູດ, ການຮຽນ-ການສອນການແພດ ແລະ ການຢາພື້ນເມືອງ ໂດຍການຮ່ວມມືລະຫວ່າງສະຖາບັນການແພດ ແລະ ການຢາພື້ນເມືອງຂອງມະຫາວິທະຍາໄລວິທະຍາສາດສຸຂະພາບ.

### 4.2.2 ແຜນວຽກຈຸດສຸມທີ 2: ປັບປຸງຄຸນນະພາບການສຶກສາໃນທຸກລະດັບໃຫ້ສູງຂຶ້ນ ພ້ອມທັງສ້າງເງື່ອນໄຂການເຂົ້າເຖິງການສຶກສາເພື່ອໃຫ້ມີຄວາມພ້ອມໃນການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ທັງເປັນການຮອງຮັບອຸດສາຫະກຳຍຸກ 4.0

❖ **ຄາດໝາຍ:**

– ອັດຕາເຂົ້າຮຽນຂອງເດັກ 5 ປີ ໃນຂັ້ນການສຶກສາກ່ອນໄວຮຽນສະເລ່ຍທົ່ວປະເທດ ບໍ່ໃຫ້ຫຼຸດ 83% ໃນປີ 2025;
– ອັດຕານັກຮຽນເຂົ້າໃໝ່ ປ.1 ທຽບໃສ່ເດັກ 6 ປີ ໃຫ້ບັນລຸໄດ້ 98% ຂຶ້ນໄປ;
– ອັດຕາເຂົ້າຮຽນໃໝ່ລວມ ປ.5 ໃຫ້ບັນລຸໄດ້ 97% ຂຶ້ນໄປ;
– ອັດຕາປະລະການຮຽນຂອງນັກຮຽນ ປ.1 ໃຫ້ຫຼຸດລົງຍັງເຫຼືອ 4%;
– ອັດຕາຈົບຊັ້ນປະຖົມສຶກສາ ໃຫ້ບັນລຸໄດ້ 94% ຂຶ້ນໄປ;
– ອັດຕາເລື່ອນຊັ້ນ ປ.5 ຂຶ້ນ ມ.1 ໃຫ້ບັນລຸໄດ້ 85% ຂຶ້ນໄປ;
– ອັດຕາປະລະການຮຽນຂອງນັກຮຽນຊັ້ນປະຖົມ ບໍ່ໃຫ້ເກີນ 4%;
– ດັດສະນີຄວາມສະເໝີພາບຍິງ-ຊາຍ ອັດຕາເລື່ອນຊັ້ນ ປ.5 ຂຶ້ນ ມ.1 ໃຫ້ບັນລຸໄດ້ລະຫວ່າງ 0,97-1,03;
– ອັດຕາເຂົ້າຮຽນໃໝ່ລວມຂັ້ນ ມ.4 ໃຫ້ບັນລຸໄດ້ 68% ຂຶ້ນໄປ;
– ອັດຕາປະລະການຮຽນຂອງນັກຮຽນຊັ້ນມັດທະຍົມຕອນຕົ້ນ ບໍ່ໃຫ້ເກີນ 11%;
– ປະຊາກອນໜຸ່ມ ແລະ ຜູ້ປະລະການຮຽນໃຫ້ໄດ້ບຳລຸງຜ່ານການສຶກສານອກໂຮງຮຽນ ແລະ ຝຶກອົບຮົມວິຊາຊີບໃຫ້ໄດ້ຫຼາຍກວ່າ 25.000 ຄົນ ໃນແຕ່ລະປີ (ແຜນການ 5ປີ: ໃຫ້ໄດ້ 150.000 ຄົນ);
– ຄູຊັ້ນປະຖົມ ແລະ ມັດທະຍົມສຶກສາ ໄດ້ຮັບການຝຶກອົບຮົມ ບໍ່ໃຫ້ຫຼຸດ 10% ຕໍ່ປີ ຂອງຈຳນວນຄູສອນທັງໝົດ;

– ອັດຕາສ່ວນນັກຮຽນທີ່ຮຽນຈົບຊັ້ນມັດທະຍົມຕອນຕົ້ນໄດ້ເຂົ້າຮຽນຕໍ່ໃນສາຍອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ໃຫ້ໄດ້ 3% ທຽບໃສ່ຈໍານວນນັກຮຽນທີ່ຮຽນຈົບມັດທະຍົມຕອນຕົ້ນທັງໝົດ;
– ສົ່ງເສີມໃຫ້ນັກສຶກສາທີ່ສະໝັກເຂົ້າຮຽນລະດັບມະຫາວິທະຍາໄລ ໄດ້ເຂົ້າຮຽນໃນສາຍວິທະຍາສາດທໍາມະຊາດ, ເຕັກໂນໂລຊີ, ວິສະວະກໍາ ແລະ ຄະນິດສາດ ໃຫ້ໄດ້ 2.500 ຄົນ ແຕ່ລະປີ (ແຜນການ 5ປີ: ໃຫ້ໄດ້ 12.500 ຄົນ);
– ສົ່ງເສີມມວນຊົນທຸກເພດ ທຸກໄວ ເຂົ້າຮ່ວມການຫັດກາຍຍະບໍລິຫານ, ການອອກກໍາລັງກາຍ ແລະ ການຫຼິ້ນກິລາກາຍຍະກໍາ ໃຫ້ບັນລຸໄດ້ 50% ຂອງພົນລະເມືອງທັງໝົດ.

❖ **ວຽກຈຸດສຸມ:**

– ສົ່ງເສີມ ແລະ ຂະຫຍາຍການສຶກສາກ່ອນໄວຮຽນ ດ້ວຍຫຼາຍຮູບແບບທີ່ເໝາະສົມກັບສະພາບຄວາມເປັນຈິງໃນແຕ່ລະທ້ອງຖິ່ນ ເປັນຕົ້ນ: ການກຽມຄວາມພ້ອມຜ່ານການຮຽນຮູ້ໃນຊຸມຊົນ, ການສອນຄວບອາຍຸ, ການຂະຫຍາຍຫ້ອງກຽມປະຖົມ ແລະ ສົ່ງເສີມໃຫ້ຊຸມຊົນ ແລະ ເອກະຊົນມີສ່ວນຮ່ວມໃນການສະໜອງການສຶກສາກ່ອນໄວຮຽນ.

– ສືບຕໍ່ປັບປຸງຜົນການຮຽນຂອງນັກຮຽນຊັ້ນປະຖົມສຶກສາ ໂດຍສະເພາະທັກສະດ້ານພາສາລາວ ແລະ ຄະນິດສາດ ໂດຍເອົາໃຈໃສ່ການຝຶກອົບຮົມ, ຕິດຕາມ ແລະ ຊຸກຍູ້ການສິດສອນຂອງຄູສອນ ແລະ ການປະຕິບັດໜ້າທີ່ຂອງຜູ້ອໍານວຍການໂຮງຮຽນ.

– ສືບຕໍ່ແກ້ໄຂບັນຫາການປະລະການຮຽນຂອງນັກຮຽນໃນສາຍສາມັນສຶກສາ ໂດຍເອົາໃຈໃສ່ເຮັດວຽກກັບພໍ່ແມ່ຜູ້ປົກຄອງ, ຊຸມຊົນ ແລະ ສັງຄົມ ເພື່ອສົ່ງເສີມໃຫ້ເດັກໃນເກນອາຍຸໄດ້ສືບຕໍ່ຮຽນຈົນຈົບການສຶກສາຂັ້ນພື້ນຖານ ກໍຄືການສຶກສາພາກບັງຄັບ.

– ສືບຕໍ່ແກ້ໄຂບັນຫາການຂາດແຄນຄູສອນ ແລະ ສ້າງຍຸດທະສາດແຫ່ງຊາດໄລຍະກາງ ໃນການບັນຈຸລັດຖະກອນຄູໃນໂຮງຮຽນ ເພື່ອຍົກສູງຄວາມເທົ່າທຽມ ແລະ ປະສິດທິພາບການນໍາໃຊ້ຄູ ເພື່ອສະໜັບສະໜູນການຮຽນການສອນໃຫ້ມີປະສິດທິຜົນ.

– ສ້າງຄວາມເຂັ້ມແຂງໃຫ້ແກ່ການສຶກສາສາຍອາຊີວະສຶກສາ ໂດຍເພີ່ມການຮ່ວມມືຢ່າງມີຍຸດທະສາດ ແລະ ເປັນລະບົບລະຫວ່າງກະຊວງສຶກສາທິການ ແລະ ກິລາ ແລະ ຜູ້ປະກອບການໃຫ້ຫຼາຍຂຶ້ນ, ໂດຍສະເພາະແມ່ນສ້າງຄວາມສອດຄ່ອງຂອງການສຶກສາໃນສະຖານອາຊີວະສຶກສາກັບມາດຕະຖານຂອງຜູ້ປະກອບການ ແລະ ເພີ່ມການມີສ່ວນຮ່ວມໃນການອອກແບບຫຼັກສູດ.

– ສືບຕໍ່ຄົ້ນຄວ້າການສະໜອງການສຶກສາຫຼາຍຮູບແບບ, ຫຼາຍທາງເລືອກ ແລະ ຍືດຢຸ່ນ ເພື່ອໃຫ້ສອດຄ່ອງກັບຜູ້ຮຽນຫຼາຍຂຶ້ນ; ປັບປຸງຄຸນນະພາບການສິດສອນໃນສະຖາບັນການສຶກສາຊັ້ນສູງ, ພ້ອມທັງສົ່ງເສີມການຄົ້ນຄວ້າວິທະຍາສາດ.

– ສືບຕໍ່ສຶກສາຄວາມເປັນໄປໄດ້ ແລະ ຄວາມອາດສາມາດໃນການສະໜອງນະໂຍບາຍສິນເຊື່ອແກ່ນັກຮຽນ-ນັກສຶກສາທີ່ມີຄວາມຕັ້ງໃຈຮຽນແຕ່ຂາດທຶນຮອນ ໂດຍສະເພາະການເຂົ້າຮຽນໃນສາຂາວິຊາທີ່ເປັນບູລິມະສິດຂອງລັດຖະບານ.

– ສືບຕໍ່ສົ່ງເສີມວຽກງານກິລາ-ກາຍຍະກໍາໃຫ້ກວ້າງຂວາງ; ກໍ່ສ້າງ ແລະ ພັດທະນາບຸກຄະລາກອນກິລາ-ກາຍຍະກໍາທີ່ເປັນທ່າແຮງຢ່າງມີຈຸດສຸມ.

– ສືບຕໍ່ຮ່ວມມືກັບພາກສ່ວນຕ່າງໆໃນສັງຄົມ ໃນການຄົ້ນຄວ້າ-ວິໄຈທາງດ້ານວິທະຍາສາດ, ທໍາລະນີສາດ ແລະ ສົ່ງເສີມການສ້າງນະວັດຕະກໍາໃໝ່ໆ.

### 4.2.3 ແຜນວຽກຈຸດສຸມທີ 3: ກໍາລັງແຮງງານໄດ້ຮັບການພັດທະນາດ້ານສີມື, ຄວາມສໍານານງານ ແລະ ມີລະບຽບວິໄນສູງຂຶ້ນ ທັງມີຄວາມຫຼາກຫຼາຍວິຊາຊີບ ແລະ ມີວຽກເຮັດງານທໍາທີ່ໝັ້ນຄົງ ແລະ ມີລາຍໄດ້ສູງຂຶ້ນ, ສາມາດຕອບສະໜອງຕາມຄວາມຕ້ອງການພັດທະນາເສດຖະກິດ-ສັງຄົມ

❖ **ຄາດໝາຍ:**

– ພັດທະນາສີມືແຮງງານຢູ່ສະຖາບັນ ແລະ ສູນພັດທະນາສີມືແຮງງານໃນລະດັບຕ່າງໆ ໃຫ້ໄດ້ 10.000 ຄົນ ແລະ ຝຶກເຄື່ອນທີ່ຕາມສາຂາອາຊີບຕ່າງໆ ໃຫ້ໄດ້ 5.000 ຄົນ;

– ສົ່ງເສີມບັນດາຫົວໜ່ວຍແຮງງານ ພັດທະນາສີມືແຮງງານຕາມສາຂາອາຊີບຕ່າງໆ ໃຫ້ໄດ້ 25.000 ຄົນ;

– ທົດສອບມາດຕະຖານສີມືແຮງງານ ໃນ 32 ສາຂາອາຊີບ ໃຫ້ໄດ້ຢ່າງໜ້ອຍ 2.000 ຄົນ;

– ພັດທະນາສີມືແຮງງານຂອງຫົວໜ່ວຍແຮງງານເປັນມາດຕະຖານສີມືແຮງງານແຫ່ງຊາດ ໃຫ້ໄດ້ 10 ສາຂາອາຊີບ; ປະສານສົມທົບກັບກຸ່ມອາຊີບທີ່ກ່ຽວຂ້ອງໃນການຮັບຮູ້ມາດຕະຖານສີມືແຮງງານແຫ່ງຊາດ 32 ສາຂາອາຊີບທີ່ມີແລ້ວ ແລະ ສົມທຽບມາດຕະຖານສີມືແຮງງານລາວ ແລະ ໄທ ໃຫ້ໄດ້ 4 ສາຂາອາຊີບ;

– ຊຸກຍູ້ ແລະ ສົ່ງເສີມການຈັດແຂ່ງຂັນສີມືແຮງງານລະດັບທ້ອງຖິ່ນໃຫ້ຫຼາຍຂຶ້ນ, ລະດັບສະຖາບັນ 5 ຄັ້ງ, ລະດັບຊາດ 2 ຄັ້ງ ແລະ ເຂົ້າຮ່ວມລະດັບອາຊຽນ 2 ຄັ້ງ;

– ສ້າງຫຼັກສູດຝຶກສີມືແຮງງານ ໃຫ້ໄດ້ 11 ສາຂາອາຊີບ ແລະ ພັດທະນາຫຼັກສູດ ໃຫ້ໄດ້ 7 ສາຂາອາຊີບ;

– ສົ່ງເສີມການຈັດຫາວຽກເຮັດງານທໍາໃຫ້ຕະຫຼາດແຮງງານພາຍໃນ ແລະ ຕ່າງປະເທດ ໃຫ້ໄດ້ 392.197 ຄົນ;

– ຄວບຄຸມອັດຕາການວ່າງງານ ສູງສຸດບໍ່ເກີນ 5% ໃນປີ 2025.

❖ **ວຽກຈຸດສຸມ:**

– ສືບຕໍ່ພັດທະນາລະບົບຖານຂໍ້ມູນ-ຂ່າວສານ ໃນການພັດທະນາສີມືແຮງງານໃຫ້ມີຄວາມເຂັ້ມແຂງ ແລະ ເປັນລະບົບ ເພື່ອສາມາດເກັບກໍາ ແລະ ສະໜອງຂໍ້ມູນແຮງງານທີ່ມີສີມືໃຫ້ແກ່ຕະຫຼາດແຮງງານ ແລະ ມີຂໍ້ມູນພື້ນຖານໃນການສ້າງແຜນພັດທະນາສີມືແຮງງານ ຕາມຄວາມຮຽກຮ້ອງຕ້ອງການໃຫ້ມີຄວາມຄ່ອງຕົວດີຂຶ້ນ.

– ສ້າງນະໂຍບາຍການດຶງດູດສົມມະຫາພາກການພັດທະນາສີມືແຮງງານ ເພື່ອຕອບສະໜອງແຮງງານທີ່ມີຄຸນນະພາບຕາມຄວາມຕ້ອງການຂອງຕະຫຼາດແຮງງານໃນຂະແໜງການເສດຖະກິດ.

– ປະສານສົມທົບໃນການສ້າງ, ປັບປຸງໂຄງລ່າງພື້ນຖານ ແລະ ກົນໄກການພັດທະນາສີມືແຮງງານ ໂດຍການມີສ່ວນຮ່ວມລະຫວ່າງພາກລັດ, ພາກເອກະຊົນ, ຫົວໜ່ວຍແຮງງານ ແລະ ໂຄງການລົງທຶນເອກະຊົນພາຍໃນ ແລະ ຕ່າງປະເທດໃຫ້ມີຄວາມກົມກຽວ; ສົ່ງເສີມໃຫ້ພາກເອກະຊົນໃຫ້ມີການແຂ່ງຂັນໃນການດໍາເນີນທຸລະກິດ ເພື່ອສ້າງກົນໄກຕະຫຼາດແຮງງານທີ່ມີປະສິດທິພາບ ແລະ ລະບົບການພັດທະນາທັກສະແຮງງານທີ່ດີ ແລະ ສົ່ງເສີມການພັດທະນາຂະແໜງ MSME ເພື່ອສະໜັບສະໜູນໃຫ້ມີການຈ້າງງານ[8].

– ສຸມໃສ່ສ້າງຫຼັກສູດ ແລະ ມາດຕະຖານສີມືແຮງງານ ແລະ ຝຶກສີມືແຮງງານຕາມສາຂາອາຊີບຕ່າງໆ ໃຫ້ຫຼາຍຂຶ້ນ ແລະ ເໝາະສົມກັບແຮງງານຂອງແຕ່ລະກຸ່ມ, ພ້ອມທັງເຮັດທົດສອບ ແລະ ອອກໃບຢັ້ງຢືນສີມືແຮງງານໃຫ້ກຸ່ມເປົ້າໝາຍຕ່າງໆ ໃຫ້ສາມາດຕອບສະໜອງກັບຄວາມຕ້ອງການຂອງຕະຫຼາດແຮງງານ ຕາມຂະແໜງການເສດຖະກິດ.

– ສ້າງຄວາມເຂັ້ມແຂງໃຫ້ບຸກຄະລາກອນທີ່ຮັບຜິດຊອບຕາໜ່າງການບໍລິການຈັດຫາງານ ໃຫ້ສາມາດເຮັດໜ້າທີ່ໃຫ້ບໍລິການທີ່ມີຄຸນນະພາບສູງຂຶ້ນ, ພ້ອມທັງປັບປຸງກົນໄກສົ່ງເສີມໃຫ້ຜູ້ອອກແຮງງານນອກລະບົບໄປສູ່ໃນລະບົບເພື່ອກ້າວໄປສູ່ການມີວຽກເຮັດງານທໍາທີ່ມີຄຸນຄ່າ ແລະ ເປັນທໍາ.

---

[8] Lao National Chamber of Commerce and Industry, Interview, October 2023

– ສຸມໃສ່ຈັດຕັ້ງປະຕິບັດຍຸດທະສາດການສົ່ງເສີມວຽກເຮັດງານທຳໃນຊົນນະບົດ ເພື່ອໃຫ້ແຮງງານໃນຊົນນະບົດມີວຽກເຮັດງານທຳ ໂດຍຕິດພັນຢ່າງສະໜິດແໜ້ນກັບການຜະລິດກະສິກຳ, ຫັດຖະກຳ, ຜະລິດຕະພັນໃຊ້ສອຍປະຈຳວັນ, ສະບຽງອາຫານ, ທຸລະກິດຂະໜາດໜ້ອຍ, ການບໍລິການ ແລະ ການທ່ອງທ່ຽວທຳມະຊາດ ໃຫ້ມີວຽກເຮັດທີ່ໝັ້ນທ່ຽງ, ຍົກສູງຜະລິດຕະພາບແຮງງານ ແລະ ມີລາຍໄດ້ສູງຂຶ້ນ.

### 4.2.4 ແຜນວຽກຈຸດສຸມທີ 4: ສົ່ງເສີມການຄົ້ນຄ້ວາ ແລະ ນຳໃຊ້ຜົນການຄົ້ນຄ້ວາວິທະຍາສາດ, ເຕັກໂນໂລຊີ, ເຕັກນິກວິຊາການ, ນະວັດຕະກຳໃໝ່ ແລະ ພູມປັນຍາ ເຂົ້າໃນການຊຸກຍູ້ການພັດທະນາເສດຖະກິດ-ສັງຄົມ

❖ **ວຽກຈຸດສຸມ:**

– ຄົ້ນຄວ້າປັບປຸງ, ດັດແກ້ ແລະ ສ້າງຂໍ້ກຳນົດ, ລະບຽບການ ລວມທັງບັນດານິຕິກຳທີ່ກ່ຽວຂ້ອງກັບການກວດສອບຄຸນນະພາບຂອງຜະລິດຕະພັນ ແລະ ສິນຄ້າ ໃຫ້ສອດຄ່ອງກັບມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ ເພື່ອການແຂ່ງຂັນທາງດ້ານການຄ້າ.

– ສ້າງລະບົບການຄຸ້ມຄອງລະບົບກວດກາຄຸນນະພາບຜະລິດຕະພັນ ແລະ ສິນຄ້າ ໃຫ້ສອດຄ່ອງກັບລະບົບມາດຕະຖານສາກົນ ISO/AEC 17065, ISO 9001 ແລະ ປັບປຸງໂຄງສ້າງລະບົບການຄຸ້ມຄອງ, ການກວດສອບ ແລະ ການທົດສອບຕາມມາດຕະຖານ ISO/AEC 17025.

– ເພີ້ມທະວີການນຳໃຊ້ລະບົບຊັບສິນທາງປັນຍາ ເຂົ້າໃສ່ໃນທຸກໆດ້ານການພັດທະນາເສດຖະກິດ-ສັງຄົມ ແລະ ວັດທະນະທຳ ໂດຍສະເພາະສະຖາບັນການສຶກສາ; ການຄົ້ນຄວ້າ ແລະ ການພັດທະນາວິທະຍາສາດ; ການຖ່າຍທອດເຕັກໂນໂລຊີ; ດ້ານອຸດສາຫະກຳ, ກະສິກຳ, ການຄ້າ, ການບໍລິການ, ການລົງທຶນພາຍໃນ ແລະ ຕ່າງປະເທດ.

– ສ້າງ ແລະ ພັດທະນາເຄືອຂ່າຍກ່ຽວກັບລະບົບການບໍລິການ ຊັບສິນທາງປັນຍາ ຂອງ ສປປ ລາວ ຜ່ານລະບົບເອເລັກໂຕຣນິກ ຊຶ່ງລວມເຖິງການຄົ້ນຄວ້າ ແລະ ການຍື່ນຄຳຮ້ອງຂໍຈົດທະບຽນຊັບສິນອຸດສາຫະກຳ, ພັນພືດໃໝ່, ການແຈ້ງຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ເພື່ອປະກອບສ່ວນເຂົ້າໃນການເຊື່ອມໂຍງເສດຖະກິດກັບພາກພື້ນ ແລະ ສາກົນ.

– ສ້າງຄວາມເຂັ້ມແຂງວຍກງານຊັບສິນທາງປັນຍາ ເພື່ອຊ່ວຍກຸ່ມຜະລິດ, ວິສາຫະກິດ ໃນການສ້າງມູນຄ່າເພີ່ມຜ່ານການສ້າງເຄື່ອງໝາຍການຄ້າ ແລະ ເຄື່ອງໝາຍລວມໝູ່ ເພື່ອເປັນຍີ່ຫໍ້ສິນຄ້າຂອງລາວ ໂດຍສະເພາະສິນຄ້າໂອດ໋ອບ ແລະ ສິນຄ້າກະສິກຳ (ເຂົ້າ, ຊີ້ນສັດແປຮູບ ແລະ ອື່ນໆ); ສົ່ງເສີມການຈົດທະບຽນຖິ່ນກຳເນີດສິນຄ້າທີ່ເປັນເອກະລັກປະຈຳທ້ອງຖິ່ນ ແລະ ພູມປັນຍາອັນເປັນມູນເຊື້ອ ເປັນຕົ້ນ: ໂສມເມືອງດາກຈຶງ, ແຂວງເຊກອງ, ຊາພູສັນ ແລະ ເສັ້ນໄໝແຂວງຊຽງຂວາງ.

## 4.3 ເປົ້າໝາຍທີ 3: ຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນ ໄດ້ຮັບການຍົກລະດັບໃຫ້ດີຂຶ້ນເທື່ອລະກ້າວ

### 4.3.1 ແຜນວຽກຈຸດສຸມທີ 1: ເຂດຊົນນະບົດ ແລະ ເຂດຫ່າງໄກສອກຫຼີກທີ່ຍັງທຸກຍາກ ໄດ້ຮັບການພັດທະນາຊີວິດການເປັນຢູ່ຂອງປະຊາຊົນ, ຄຸນຄ່າດ້ານວັດທະນະທຳ ແລະ ວຽກງານສື່ມວນຊົນ ໄດ້ຮັບການປັບປຸງດີຂຶ້ນ

❖ **ຄາດໝາຍ:**

– ອີງຕາມຜົນການສຳຫຼວດການໃຊ້ຈ່າຍ ແລະ ຊົມໃຊ້ຄົວເຮືອນ ຄັ້ງທີ 6 (LECS6): ອັດຕາຄວາມທຸກຍາກ ໃຫ້ຍັງເຫຼືອ 13,9% ຂອງປະຊາກອນທັງໝົດ, ອັດຕາຄົວເຮືອນທຸກຍາກ ໃຫ້ຍັງເຫຼືອ 9,5% ຂອງຄົວເຮືອນທັງໝົດ.

– ອີງຕາມດຳລັດວ່າດ້ວຍມາດຕະຖານພົ້ນທຸກ ແລະ ມາດຕະຖານພັດທະນາ ເລກທີ 348/ລບ:

+ ສ້າງຄອບຄົວພົ້ນທຸກ ໃຫ້ໄດ້ 204.360 ຄອບຄົວ;
+ ສ້າງບ້ານພົ້ນທຸກ ໃຫ້ໄດ້ 3.104 ບ້ານ;
+ ສ້າງເມືອງພົ້ນທຸກ ໃຫ້ໄດ້ 69 ເມືອງ;
+ ສ້າງຄອບຄົວພັດທະນາ ໃຫ້ໄດ້ 245.754 ຄອບຄົວ;
+ ສ້າງບ້ານພັດທະນາ ໃຫ້ໄດ້ 4.420 ບ້ານ;
+ ສ້າງຕົວແບບບ້ານໃຫຍ່ເປັນຕົວເມືອງໃນຊົນນະບົດ ໃຫ້ໄດ້ 10 ບ້ານ.

– ສູ້ຊົນຈັດສັນພູມລຳເນົາຄົງທີ່ ແລະ ອາຊີບໝັ້ນຄົງໃຫ້ປະຊາຊົນຢູ່ 25 ຈຸດສຸມ;
– ສູ້ຊົນຂະຫຍາຍກອງທຶນພັດທະນາບ້ານ ບ້ວງ 500 ລ້ານກີບຕໍ່ເມືອງທຸກຍາກ ໃຫ້ໄດ້ 64 ບ້ານ;
– ສ້າງ ແລະ ຂະຫຍາຍວິທະຍຸກະຈາຍສຽງຂັ້ນເມືອງ ໃຫ້ໄດ້ 36 ຈຸດ ແລະ ຂະຫຍາຍລະບົບໂທລະໂຄ່ງຢູ່ຂັ້ນບ້ານ ໃຫ້ໄດ້ 2.800 ບ້ານ;
– ຂະຫຍາຍລະບົບເຕັກນິກໃຫ້ທັນສະໄໝ ຈາກລະບົບອານາລ໋ອກໄປສູ່ລະບົບດິຈິຕອນ ໃຫ້ໄດ້ 22 ຈຸດ;
– ສ້າງຄອບຄົວວັດທະນະທຳ ໃຫ້ໄດ້ 130.000 ຄອບຄົວ ແລະ ສ້າງບ້ານວັດທະນະທາ ໃຫ້ໄດ້ 750 ບ້ານ;
– ສືບຕໍ່ສະເໜີມໍລະດົກແຫ່ງຊາດທາງດ້ານທຳມະຊາດ 1 ແຫ່ງ (ອຸທິຍານແຫ່ງຊາດຫີນໜາມໜໍ່, ແຂວງຄຳມ່ວນ) ເຂົ້າເປັນມໍລະດົກໂລກທາງດ້ານທຳມະຊາດ;
– ສຳຫຼວດ, ເກັບກຳຂໍ້ມູນ ແລະ ຂຶ້ນທະບຽນແຫຼ່ງບູຮານວິທະຍາ ໃຫ້ໄດ້ 35 ແຫ່ງ; ຂຶ້ນທະບຽນບັນຊີວັດຖຸບູຮານ ແລະ ພຣະພຸດທະຮູບ ໃຫ້ໄດ້ 5 ແຫ່ງ; ຂຶ້ນບັນຊີມໍຣະດົກວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດຈາກລະດັບທ້ອງຖິ່ນໃຫ້ເປັນລະດັບຊາດ ໃຫ້ໄດ້ 20 ແຫ່ງ ແລະ ຂຶ້ນທະບຽນບັນຊີບູຮານພຸດທະສິນ ໃຫ້ໄດ້ 5 ແຫ່ງ.

❖ **ວຽກຈຸດສຸມ:**

+ <u>ວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ</u>:

– ສືບຕໍ່ຜັນຂະຫຍາຍທິດທາງນະໂຍບາຍຂອງພັກ-ລັດ ເປັນແຜນງານ, ໂຄງການ ແລະ ມາດຕະການອັນລະອຽດສະເພາະ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານສົ່ງເສີມການຜະລິດກະສິກຳຂອງຊາວກະສິກອນໃນເຂດຊົນນະບົດ ແລະ ການຄຸ້ມຄອງປ່າໄມ້ ຕິດພັນກັບການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ເປັນໜ້າທີ່ສຳຄັນ.

– ສ້າງຄວາມຮັບຮູ້ເຂົ້າໃຈທີ່ເປັນເອກະພາບກັນໃນວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຕາມທິດສ້າງຊົນນະບົດໃໝ່ ແລະ ຕ້ອງດຳເນີນໄປຢ່າງຮອບດ້ານ, ຕໍ່ເນື່ອງ, ມີຈຸດສຸມ, ມີກົນໄກ, ມີວິທີການຈັດຕັ້ງປະຕິບັດທີ່ສອດຄ່ອງ ແລະ ມີປະສິດທິຜົນ ແລະ ມີນະໂຍບາຍຊຸກຍູ້ສົ່ງເສີມການຜະລິດຢູ່ເຂດຊົນນະບົດທີ່ລະອຽດຈະແຈ້ງ; ພ້ອມທັງສຸມທຶນຮອນ ແລະ ກຳລັງຄົນ ຢ່າງແທດເຖິງ.

– ສົ່ງເສີມພາກສ່ວນເສດຖະກິດຕ່າງໆໃນສັງຄົມ ປະກອບສ່ວນໃນການພັດທະນາຊົນນະບົດຕິດພັນກັບການສ້າງໂອກາດດ້ານເສດຖະກິດ, ການສ້າງວຽກເຮັດງານທຳທີ່ເໝາະສົມ ແລະ ສ້າງລາຍໄດ້ໃຫ້ກັບປະຊາຊົນທີ່ໝັ້ນຄົງເພື່ອຫຼຸດຜ່ອນການເຄື່ອນຍ້າຍແຮງງານຈາກຊົນນະບົດສູ່ຕົວເມືອງ.

– ສືບຕໍ່ຈັດຕັ້ງປະຕິບັດກອງທຶນຫຼຸດຜ່ອນຄວາມທຸກຍາກ ແລະ ທຶນພັດທະນາຊາຍແດນ.

– ສືບຕໍ່ຈັດສັນພູມລຳເນົາຄົງທີ່ ແລະ ບ່ອນທຳມາຫາກິນຖາວອນໃຫ້ປະຊາຊົນ ໃນເຂດເປົ້າໝາຍ ແລະ ແກ້ໄຂບັນຫາການເຄື່ອນຍ້າຍຂອງພົນລະເມືອງແບບຊະຊາຍ ໃຫ້ສຳເລັດໂດຍພື້ນຖານ.

+ ວຽກງານຖະແຫຼງຂ່າວ ແລະ ວັດທະນະທຳ:

– ສືບຕໍ່ໂຄສະນາແນວທາງນະໂຍບາຍຂອງພັກ-ລັດໃນການພັດທະນາເສດຖະກິດ-ສັງຄົມ ໂດຍນຳໃຊ້ສື່ພາຫະນະທາງໂທລະພາບ, ວິທະຍຸກະຈາຍສຽງ, ຂ່າວສານ, ສື່ສິ່ງພິມ ແລະ ສື່ເອເລັກໂຕຣນິກ, ສື່ແບບໃໝ່ຜ່ານທາງອອນລາຍໃນທົ່ວສັງຄົມ ເປັນຕົ້ນ: ເອົາໃຈໃສ່ຄຸ້ມຄອງ ແລະ ຕິດຕາມການສົ່ງສັນຍານວິທະຍຸແຫ່ງຊາດລະບົບ AM ແລະ FM; ສັນຍານໂທລະພາບແຫ່ງຊາດຜ່ານດາວທຽມຕະຫຼອດ 24 ຊົ່ວໂມງ ຢ່າງເປັນປົກກະຕິ.

– ສຸມໃສ່ໂຄສະນາການເປັນປະທານອາຊຽນຂອງ ສປປ ລາວ ໃນປີ 2024 ແລະ ກອງປະຊຸມລັດຖະມົນຕີປະຊາຄົມວັດທະນະທຳ-ສັງຄົມອາຊຽນ, ກອງປະຊຸມລັດຖະມົນຕີທ່ອງທ່ຽວອາຊຽນ, ງານວາງສະແດງທ່ອງທ່ຽວອາຊຽນ ແລະ ກິດຈະກຳປີທ່ອງທ່ຽວລາວ ປີ 2024.

– ພັດທະນາຜະລິດຕະພັນສື່ມວນຊົນຄໍລຳໜັງສືພິມ, ລາຍການວິທະຍຸ, ລາຍການໂທລະພາບ ແລະ ວີດີໂອຄລິບໃຫ້ມີຄວາມຫຼາກຫຼາຍຕາມກົນໄກຕະຫຼາດ, ມີເນື້ອໃນຖືກຕ້ອງຄົບຖ້ວນ, ຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບເພື່ອຕອບສະໜອງໃຫ້ໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງສັງຄົມ ແລະ ສ້າງລາຍຮັບວິຊາການ.

– ສູ້ຊົນຂະຫຍາຍການຮ່ວມມືດ້ານວຽກງານຖະແຫຼງຂ່າວ-ສື່ມວນຊົນ ກັບ ບັນດາປະເທດເພື່ອນມິດຍຸດທະສາດ, ບັນດາປະເທດອາຊຽນ, ປະເທດຄູ່ຮ່ວມເຈລະຈາ ແລະ ບັນດາອົງການຈັດຕັ້ງສື່ມວນຊົນສາກົນ ເພື່ອຮັບປະກັນສະຖຽນລະພາບດ້ານຂໍ້ມູນ-ຂ່າວສານ.

– ສົມທົບກັບກະຊວງສຶກສາທິການ ແລະ ກິລາ ປັບປຸງຫຼັກສູດການຮຽນ-ການສອນລະດັບວິຊາຊີບ, ສ້າງຫຼັກສູດລະບົບຊັ້ນກາງກ້າວຂຶ້ນລະບົບຊັ້ນສູງ ໃຫ້ສຳເລັດ; ສ້າງປຶ້ມຕຳລາ, ຄູ່ມື ແລະ ເອກະສານການສອນໃຫ້ພຽງພໍ.

– ສຸມໃສ່ປະດິດຄິດແຕ່ງບົດຟ້ອນ, ບົດເພງ ແລະ ຂັບລຳ, ດົນຕີພື້ນເມືອງ ແລະ ສາກົນ; ປັບປຸງການສະແດງສິລະປະກາຍະສິນ ແລະ ບົດລະຄອນ ໃຫ້ມີຮູບແບບໃໝ່.

– ສູ້ຊົນສ້າງກິດຈະກຳຕ່າງໆ ແລະ ໂຄສະນາເຜີຍແຜ່ວຽກງານວັດທະນະທຳ ໂດຍສະເພາະການຈັດງານມະຫາກຳງານມະໂຫລານວັດທະນະທຳ, ຈັດງານແຂ່ງຂັນສິລະປະບັນດາເຜົ່າໃນຂອບເຂດທົ່ວປະເທດ, ງານບຸນມະໂຫລານຕຸກກະຕາ, ງານວັດທະນະທຳເດັກ, ກິດຈະກຳສົ່ງເສີມການອ່ານ, ບຸນມະໂຫລານຮູບເງົາດອກຈຳປາ, ງານວາງສະແດງຜະລິດຕະພັນວັດທະນະທຳ, ຮູບພາບ, ຮູບແຕ້ມ, ປຶ້ມ-ສິ່ງພິມ ແລະ ວັດຖຸພັນ, ພ້ອມທັງເຜີຍແຜ່ຜ່ານຫຼາຍສື່ໂຄສະນາຢ່າງກວ້າງຂວາງ.

### 4.3.2 ແຜນວຽກຈຸດສຸມທີ 2: ໂຄງລ່າງພື້ນຖານການບໍລິການດ້ານສາທາລະນຸປະໂພກ ໄດ້ຮັບການປັບປຸງ ແລະ ສະໜອງໃຫ້ປະຊາຊົນຢ່າງທົ່ວເຖິງ ເພື່ອຫຼຸດຜ່ອນຄວາມແຕກໂຕນດ້ານການເຂົ້າເຖິງໂຄງລ່າງພື້ນຖານ ແລະ ການບໍລິການຕ່າງໆ

❖ **ຄາດໝາຍ:**

– ສູ້ຊົນຂະຫຍາຍອັດຕາການຊົມໃຊ້ໄຟຟ້າຂອງຄົວເຮືອນ ໃຫ້ໄດ້ 98% ຂອງຄົວເຮືອນທົ່ວປະເທດ;

– ຂະຫຍາຍລະບົບຕາຂ່າຍໄຟຟ້າ ໃຫ້ໄດ້ 2,26% (28.000 ຄອບຄົວ) ແລະ ໄຟຟ້ານອກລະບົບ 0,74% (9.000 ກວ່າຄອບຄົວ);

– ຂະຫຍາຍລະບົບຕາຂ່າຍໄຟຟ້າຢູ່ 3 ແຂວງ (ແຂວງຜົ້ງສາລີ, ຫົວພັນ ແລະ ເຊກອງ) ທີ່ມີອັດຕາການຊົມໃຊ້ໄຟຟ້າຕໍ່າສຸດໃນຂອບເຂດທົ່ວປະເທດ ໃຫ້ສຳເລັດ.

– 98% ຂອງຄອບຄົວທັງໝົດ ແມ່ນສາມາດເຂົ້າເຖິງລະບົບບໍລິການສາທາລະນະສຸກ;

– ອັດຕາການຕາຍຂອງແມ່ໃນເຂດຊົນນະບົດ ໃຫ້ຫຼຸດລົງ 30%;

– ອັດຕາການຕາຍຂອງເດັກເກີດໃໝ່ໃນເຂດຊົນນະບົດ ໃຫ້ຫຼຸດລົງ 30%.

❖ **ວຽກຈຸດສຸມ:**

– ສືບຕໍ່ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຢ່າງຕັ້ງໜ້າ ດ້ວຍການສະໜອງພື້ນຖານໂຄງລ່າງທີ່ຈຳເປັນ ໃນເຂດຈຸດສຸມຂອງລັດຖະບານ, ຂອງທ້ອງຖິ່ນ ແລະ ວຽກງານຈັດສັນພູມລຳເນົາ ແລະ ອາຊີບຄົງທີ່ ເປັນຕົ້ນ: ເສັ້ນທາງ ແລະ ລະບົບຂົນສົ່ງໃຫ້ເຂົ້າເຖິງບ້ານ, ເຂດທຳການຜະລິດຂອງປະຊາຊົນ, ໃຈກາງຂອງແຕ່ລະຈຸດສຸມ ແລະ ເຊື່ອມຈອດກັບແຕ່ລະບ້ານ; ຂະຫຍາຍລະບົບໂທລະຄົມມະນາຄົມ ແລະ ການສື່ສານ ໃຫ້ທົ່ວເຖິງ; ຂະຫຍາຍຕາໜ່າງໄຟຟ້າຊົນນະບົດທັງໃນລະບົບ ແລະ ນອກລະບົບ ລົງສູ່ເຂດຊົນນະບົດຫ່າງໄກສອກຫຼີກ; ຂະຫຍາຍການສຶກສາໃຫ້ທົ່ວເຖິງ ແລະ ມີຄຸນນະພາບ; ຂະຫຍາຍການໃຫ້ບໍລິການດ້ານສາທາລະນະສຸກ ເຮັດໃຫ້ທຸກໂຮງໝໍນ້ອຍ ມີພະນັກງານແພດ ແລະ ມີອຸປະກອນການແພດທີ່ພຽງພໍ ເພື່ອຮັບປະກັນການປິ່ນປົວໃຫ້ໄດ້ຂັ້ນພື້ນຖານ; ລະດົມແຫຼ່ງທຶນຊ່ວຍເຫຼືອຈາກສາກົນ, ທຸກພາກສ່ວນໃນສັງຄົມປະກອບສ່ວນ ແລະ ສົ່ງເສີມການລົງທຶນຂອງພາກເອກະຊົນ ໃຫ້ຕິດພັນກັບການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ.

### 4.3.3 ແຜນວຽກຈຸດສຸມທີ 3: ສົ່ງເສີມໃຫ້ແມ່ຍິງ ແລະ ເດັກ ໄດ້ເຂົ້າເຖິງການພັດທະນາ, ມີຄວາມສະເໝີພາບຍິງ-ຊາຍ ແລະ ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດຢ່າງເຕັມສ່ວນຈາກການພັດທະນາເສດຖະກິດ-ສັງຄົມ

❖ **ຄາດໝາຍ:**

– ດັດຊະນີຄວາມບໍ່ສະເໝີພາບຍິງ-ຊາຍ ໃຫ້ຫຼຸດລົງມາເປັນ 0,430 ໃນປີ 2025;

– ດັດຊະນີການພັດທະນາຄວາມສະເໝີພາບຍິງ-ຊາຍ ໃຫ້ເພີ່ມຂຶ້ນມາເປັນ 0,984 ໃນປີ 2025;

– ດັດຊະນີການພັດທະນາແມ່ຍິງ ໃຫ້ເພີ່ມຂຶ້ນ 0,675 ໃນປີ 2025;

– ແມ່ຍິງລາວບັນດາເຜົ່າ ໄດ້ຄົ້ນຄວ້າເຊື່ອມຊຶມແນວທາງນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນພັດທະນາແມ່ຍິງລາວ, ມູນເຊື້ອສຳຄັນຕ່າງໆຂອງຊາດ ຂອງພັກ ແລະ ຂອງແມ່ຍິງ ກວມເອົາ 80% ຂຶ້ນໄປ ຂອງແມ່ຍິງໃນເກນອາຍຸ 15 ຂຶ້ນໄປ;

– ການຈັດຕັ້ງສະຫະພັນແມ່ຍິງໃນແຕ່ລະຂັ້ນ ໄດ້ຮັບການປັບປຸງໃຫ້ມີຄວາມໜັກແໜ້ນເຂັ້ມແຂງດ້ານການເມືອງ-ແນວຄິດ ແລະ ແບບແຜນວິທີນຳພາ, ຂະຫຍາຍການຈັດຕັ້ງ ແລະ ສະມາຊິກສະຫະພັນແມ່ຍິງໃຫ້ກວ້າງຂວາງໃນທຸກຂົງເຂດ, ຂະຫຍາຍສະມາຊິກສະຫະພັນແມ່ຍິງໃນເກນອາຍຸ 15 ປີຂຶ້ນໄປ ໃຫ້ກວມ 70% ຂອງຈຳນວນເປົ້າໝາຍ ແລະ ຂະຫຍາຍສະມາຊິກສະຫະພັນແມ່ຍິງໃນຂົງເຂດທຸລະກິດ ໃຫ້ໄດ້ 5 ຫົວໜ່ວຍ ໃນແຕ່ລະປີ;

– ແມ່ຍິງທີ່ເປັນລັດຖະກອນ ກວມເອົາ 50% ຂຶ້ນໄປ; ຊຸກຍູ້ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ແມ່ຍິງ ໄດ້ບັນຈຸສັບຊ້ອນເຂົ້າໃນຕຳແໜ່ງນຳພາ-ຄຸ້ມຄອງ, ຕັດສິນບັນຫາໃນຂັ້ນຕ່າງໆສະເລ່ຍກວມ 20% ຂຶ້ນໄປ, ໃນນັ້ນ: ສະມາຊິກສະພາແຫ່ງຊາດ (ສສຊ) ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ) ທີ່ເປັນເພດຍິງ ກວມເອົາ 30% ຂຶ້ນໄປ; ການນຳທີ່ເປັນເພດຍິງຂັ້ນສູນກາງ ກວມເອົາ 30% ຂຶ້ນໄປ; ໃນຂັ້ນແຂວງ, ນະຄອນຫຼວງວຽງຈັນ ແລະ ຂັ້ນເມືອງ/ນະຄອນ ກວມເອົາ 20% ຂຶ້ນໄປ ແລະ ການນຳທີ່ເປັນເພດຍິງຂັ້ນບ້ານ ກວມເອົາ 10% ຂຶ້ນໄປ;

– ສືບຕໍ່ຊຸກຍູ້ແມ່ຍິງຜູ້ທຸກຍາກ ແລະ ດ້ອຍໂອກາດຢູ່ບັນດາແຂວງ ໄດ້ຮັບການຝຶກອົບຮົມວິຊາຊີບໄລຍະສັ້ນ ແລະ ໄລຍະຍາວ ໃຫ້ສຳເລັດຕາມແຜນທີ່ວາງໄວ້ (ແຜນການ 5ປີ: 1.500 ຄົນ);

– ປະກອບສ່ວນຊຸກຍູ້ໃຫ້ແມ່ຍິງ ແລະ ເດັກນ້ອຍ ໄດ້ເຂົ້າເຖິງຂະບວນຍຸຕິທຳ, ໄດ້ຮັບການປົກປ້ອງສິດຜົນປະໂຫຍດ ແລະ ຊ່ວຍເຫຼືອຈາກພັກ-ລັດ, ອົງການຈັດຕັ້ງສະຫະພັນແມ່ຍິງ ແລະ ສັງຄົມ ໃຫ້ມີຈຳນວນເພີ່ມຂຶ້ນ ເຮັດໃຫ້ປະກົດການຫຍໍ້ທໍ້ໃນສັງຄົມນັບມື້ຫຼຸດລົງເທື່ອລະກ້າວ;

– ອັດຕາຂອງແມ່ຍິງທີ່ຖືກຄວາມຮຸນແຮງຈາກຄູ່ຮ່ວມນອນຂອງຕົນ ຢ່າງໜ້ອຍ 1 ໃນ 3 ປະເພດຂອງຄວາມຮຸນແຮງ (ຮ່າງກາຍ, ເພດ ແລະ ຈິດໃຈ) ໃຫ້ຫຼຸດລົງຈາກ 30,3% ມາເປັນ 15%;

– ອັດຕາສ່ວນແມ່ຍິງທີ່ຖືກຄວາມຮຸນແຮງໃນຊ່ວງຊີວິດ ຫຼຸດລົງຈາກ 15,3% ເປັນ 6% (ຂໍ້ມູນຈາກການສຳຫຼວດການໃຊ້ຄວາມຮຸນແຮງຕໍ່ແມ່ຍິງຢູ່ ສປປ ລາວ ປີ 2014);

– ຫຼຸດຜ່ອນການໃຊ້ຄວາມຮຸນແຮງຕໍ່ເດັກ (ຂໍ້ມູນຈາກການສຳຫຼວດການໃຊ້ຄວາມຮຸນແຮງຕໍ່ເດັກຢູ່ ສປປ ລາວ ປີ 2015):

  + ທາງດ້ານຮ່າງກາຍ: ເດັກຍິງ ຈາກ 15% ມາເປັນ 10% ແລະ ເດັກຊາຍ ຈາກ 16,9% ມາເປັນ 10%.

  + ທາງດ້ານຈິດໃຈ: ເດັກຍິງ ຈາກ 24,2% ມາເປັນ 20% ແລະ ເດັກຊາຍ ຈາກ 17,7% ມາເປັນ 12%.

– ເປີເຊັນຂອງເດັກທີ່ຂາດເຂີນໃນຫຼາຍມິຕິ ໂດຍອີງໃສ່ນິຍາມແຫ່ງຊາດກ່ຽວກັບຄວາມຂາດເຂີນໃຫ້ເຫຼືອ 30% (ຈາກການວິເຄາະຄວາມທຸກຍາກຂອງເດັກໃນຫຼາຍມິຕິ ໃນປີ 2019).

❖ **ວຽກຈຸດສຸມ:**

– ເພີ່ມທະວີການສຶກສາອົບຮົມການເມືອງ-ແນວຄິດ ໃຫ້ສະມາຊິກສະຫະພັນແມ່ຍິງ ແລະ ແມ່ຍິງລາວບັນດາເຜົ່າໃນການຜັນຂະຫຍາຍປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ແລະ ມະຕິກອງປະຊຸມໃຫ່ຍຜູ້ແທນແມ່ຍິງລາວທົ່ວປະເທດ ຄັ້ງທີ VIII, ແຜນພັດທະນາແມ່ຍິງແຫ່ງຊາດ 5 ປີ (2021-2025) ຕິດພັນກັບແຜນພັດທະນາຂະແໜງການ ແລະ ທ້ອງຖິ່ນ ໃຫ້ບັນລຸຕາມແຜນການທີ່ວາງໄວ້.

– ປັບປຸງ, ຂະຫຍາຍການຈັດຕັ້ງ ແລະ ຂະຫຍາຍສະມາຊິກສະຫະພັນແມ່ຍິງໃນແຕ່ລະຂັ້ນ ໃຫ້ມີຄວາມເຂັ້ມແຂງ ແລະ ມີຈຳນວນເພີ່ມຂຶ້ນ.

– ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງເພື່ອປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງແມ່ຍິງ ແລະ ເດັກນ້ອຍ; ບໍລິການໃຫ້ຄຳປຶກສາ ແລະ ເຂົ້າຮ່ວມປຶກສາຫາລື ແລະ ແກ້ໄຂບັນຫາທີ່ເກີດຂຶ້ນກັບແມ່ຍິງ ແລະ ເດັກນ້ອຍ; ສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ແລະ ສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍໃນຄອບຄົວ ແລະ ສັງຄົມ.

– ສະຫຼຸບ ແລະ ປະເມີນຜົນການຈັດຕັ້ງປະຕິບັດຄຳຂວັນ ແລະ ຂໍ້ແຂ່ງຂັນ 3 ດີ ຂອງສະຫະພັນແມ່ຍິງລາວໃນແຕ່ລະໄລຍະ; ຊຸກຍູ້ ແລະ ຕິດຕາມການປະເມີນຜົນການສ້າງຄອບຄົວ ແລະ ບ້ານແມ່ຍິງ 3 ດີ ຕິດພັນກັບບ້ານພັດທະນາ ຕາມທິດ 3 ສ້າງ.

– ຊຸກຍູ້ສົ່ງເສີມໃຫ້ສະມາຊິກສະຫະພັນແມ່ຍິງ ແລະ ແມ່ຍິງບັນດາເຜົ່າໃນກຸ່ມເປົ້າໝາຍ ເຂົ້າເຖິງຂໍ້ມູນ-ຂ່າວສານທີ່ເປັນປະໂຫຍດຕໍ່ການພັດທະນາແມ່ຍິງ ແລະ ເດັກນ້ອຍ ແລະ ຜູ້ຮັບຜິດຊອບວຽກງານຂ່າວສານ ຮູ້ນຳໃຊ້ເຕັກນິກວິທະຍາສາດທີ່ທັນສະໄໝ ເຂົ້າໃນການປະຕິບັດໜ້າທີ່ວຽກງານທີ່ມີປະໂຫຍດຕໍ່ການພັດທະນາແມ່ຍິງ ແລະ ຄອບຄົວ.

### 4.3.4 ແຜນວຽກຈຸດສຸມທີ 4: ສົ່ງເສີມ ແລະ ພັດທະນາຊັບພະຍາກອນໜຸ່ມໃຫ້ມີຄຸນນະພາບ ແລະ ມີວຽກເຮັດງານທຳຫຼາຍຂຶ້ນ

❖ **ວຽກຈຸດສຸມ:**

– ສົ່ງເສີມການພັດທະນາຊັບພະຍາກອນມະນຸດໄວໜຸ່ມ ໃຫ້ເປັນວຽກບູລິມະສິດຮີບດ່ວນ ແລະ ຈຳເປັນ, ເນື່ອງຈາກມີຈຳນວນແຮງງານ ຫຼາຍກວ່າ 80.000 ຄົນຕໍ່ປີ ຊອກຫາວຽກເຮັດງານທຳໃນຊ່ວງທົດສະວັດຕໍ່ໄປ; ສະນັ້ນ, ຄວນມີການກະກຽມຄວາມພ້ອມໃນການລົງທຶນໃນຊັບພະຍາກອນມະນຸດ.[9]

[9] Ibid

– ຜັນຂະຫຍາຍຍຸດທະສາດການພັດທະນາໄວໜຸ່ມ ແລະ ເຍົາວະຊົນແຫ່ງຊາດ ແລະ ນະໂຍບາຍແຫ່ງຊາດວ່າດ້ວຍປະຊາກອນເຊື່ອມສານເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດແຕ່ລະໄລຍະ ເພື່ອຮັບປະກັນວ່າ ສປປ ລາວ ຈະໄດ້ຮັບຜົນປະໂຫຍດຈາກປະຊາກອນໜຸ່ມ.

– ສ້າງຄະນະກຳມະການປະສານງານຂອງວຽກງານປະຊາກອນ ແລະ ການພັດທະນາໄວໜຸ່ມ ຕາມແຜນທີ່ກຳນົດໄວ້ໃນນະໂຍບາຍແຫ່ງຊາດວ່າດ້ວຍປະຊາກອນ ແລະ ການພັດທະນາ (2019-2030).[10]

– ເພີ່ມທັກສະສີມືແຮງງານຂອງໄວໜຸ່ມ ແລະ ພັດທະນາຫຼັກສູດການຮຽນວິຊາຊີບທີ່ສອດຄ່ອງ, ລວມທັງທັກສະທົ່ວໄປ ແລະ ຫຼັກສູດການຮຽນ ເພື່ອໃຫ້ໄວໜຸ່ມຜູ້ດ້ອຍໂອກາດສາມາດເຂົ້າເຖິງການຝຶກອົບຮົມໄດ້ຫຼາຍກວ່າເກົ່າ.

– ສືບຕໍ່ໃຫ້ຄວາມຮູ້ກ່ຽວກັບເພດສຶກສາແບບຮອບດ້ານ ແລະ ທັກສະພື້ນຖານຂອງການໃຊ້ຊີວິດ ທັງໃນ ແລະ ນອກໂຮງຮຽນແກ່ໄວໜຸ່ມ ແລະ ສະໜັບສະໜູນການມີສ່ວນຮ່ວມຂອງໄວໜຸ່ມ ໂດຍສະເພາະການສະໜອງການຊ່ວຍເຫຼືອທາງການເງິນ ແລະ ທີ່ຢູ່ອາໄສ ເພື່ອໃຫ້ເດັກຍິງສືບຕໍ່ເຂົ້າຮຽນ.

– ໃຫ້ຄຳປຶກສາແກ່ຊາວໜຸ່ມ-ເຍົາວະຊົນ ທີ່ຜິດຫວັງ, ເສຍໃຈ, ບໍ່ມີທາງອອກໃນຊີວິດ ແລະ ບັນຫາອື່ນໆ ເພື່ອເຮັດໃຫ້ວຽກງານພັດທະນາຊັບພະຍາກອນໜຸ່ມໄດ້ຮັບໝາກຜົນຫຼາຍຍິ່ງຂຶ້ນ ຊຶ່ງເນັ້ນໜັກໃສ່ການໂຄສະນາ.

### 4.3.5 ແຜນວຽກຈຸດສຸມທີ 5: ປະຊາຊົນ ແລະ ຜູ້ອອກແຮງງານພາກວິສາຫະກິດ, ຜູ້ປະກອບອາຊີບອິດສະຫຼະເຂົ້າເຖິງການບໍລິການປົກປ້ອງສັງຄົມທີ່ມີປະສິດທິພາບດີຂຶ້ນ

❖ **ຄາດໝາຍ:**

- ຂະຫຍາຍອັດຕາການປົກຄຸມປະກັນສັງຄົມ ໃຫ້ໄດ້ 157.500 ຄົນ, ໃນນີ້: ພາກລັດ 7.500 ຄົນ, ວິສາຫະກິດ 135.000 ຄົນ ແລະ ຜູ້ສະໝັກໃຈ 15.000 ຄົນ;
- ສືບຕໍ່ປະຕິບັດນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ຄຸນງາມຄວາມດີ ໃນພາລະກິດປະຕິວັດຊາດປະຊາທິປະໄຕ ໃນ 5 ເປົ້າໝາຍບູລິມະສິດ ໃຫ້ໄດ້ 14.229 ທ່ານ, ລວມເປັນເງິນ 375,83 ຕື້ກີບ;
- ຂະຫຍາຍການຄຸ້ມຄອງຫົວໜ່ວຍວິສາຫະກິດໃໝ່ ໃຫ້ໄດ້ 439 ຫົວໜ່ວຍ; ຂຶ້ນທະບຽນຜູ້ປະກັນຕົນໃໝ່ ແລະ ຈ່າຍເງິນສົມທົບ ໃຫ້ໄດ້ 78.750 ຄົນ;
- ກວດກາການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການແຮງງານຂອງຫົວໜ່ວຍແຮງງານ ໃຫ້ໄດ້ 7.464 ຫົວໜ່ວຍ; ຊຸກຍູ້ຫົວໜ່ວຍແຮງງານໃຫ້ໄດ້ມາດຕະຖານແຮງງານແຫ່ງຊາດ ໃຫ້ໄດ້ 90 ແຫ່ງ; ສ້າງ ແລະ ປັບປຸງກົດລະບຽບພາຍໃນ ໃຫ້ໄດ້ຕື່ມ 500 ແຫ່ງ; ຊຸກຍູ້ໃຫ້ຫົວໜ່ວຍແຮງງານສ້າງສັນຍາແຮງງານກັບຜູ້ອອກແຮງງານໃຫ້ໄດ້ 208 ແຫ່ງ;
- ຊຸກຍູ້ຫົວໜ່ວຍແຮງງານ ໃຫ້ຜູ້ອອກແຮງງານໄດ້ຮັບການກວດສຸຂະພາບປະຈຳປີ ໃຫ້ໄດ້ຕື່ມ 100 ແຫ່ງ; ສ້າງຕັ້ງໜ່ວຍງານຄວາມປອດໄພ ແລະ ສຸຂະພາບແຮງງານໃນສະຖານທີ່ເຮັດວຽກ ໃຫ້ໄດ້ 60 ແຫ່ງ ແລະ ສ້າງຕັ້ງຄະນະກຳມະການສາຍພົວພັນແຮງງານຂັ້ນແຂວງ-ນະຄອນຫຼວງ ໃຫ້ໄດ້ 1 ແຂວງ;
- ຕັ້ງໜ້າແກ້ໄຂຂໍ້ຂັດແຍ່ງແຮງງານທີ່ໄດ້ຮັບການຮ້ອງຮຽນ ໃຫ້ໄດ້ຮັບການໄກ່ເກ່ຍ 80% ໃນແຕ່ລະປີ;
- ໃຫ້ຄຳປຶກສາດ້ານນິຕິກຳ ແລະ ລະບຽບການໃຫ້ຜູ້ອອກແຮງງານ ແລະ ຜູ້ໃຊ້ແຮງງານ ໃຫ້ໄດ້ 2.000 ຄັ້ງ.

❖ **ວຽກຈຸດສຸມ:**

– ສືບຕໍ່ໂຄສະນາປະຊາສຳພັນວຽກປະກັນສັງຄົມ ດ້ວຍພາຫານະສື່ມວນຊົນຫຼາຍຮູບແບບຢ່າງກວ້າງຂວາງ ແລະ ສືບຕໍ່ກວດກາການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການແຮງງານຂອງຫົວໜ່ວຍແຮງງານໃຫ້ເປັນປົກກະຕິ.

[10] Ibid

– ສືບຕໍ່ສ້າງລະບົບຖານຂໍ້ມູນການປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ແລະ ຄຸນງາມຄວາມດີໃນພາລະກິດປະຕິວັດຊາດປະຊາທິປະໄຕ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ໃຫ້ສຳເລັດ.

– ຄົ້ນຄ້ວາ ແລະ ວິໄຈຂໍ້ມູນຄົນພິການ ແລະ ຜູ້ອາຍຸສູງ ໃຫ້ສຳເລັດ.

– ສືບຕໍ່ປັບປຸງລະບົບຖານຂໍ້ມູນໃນການຂຶ້ນທະບຽນ ແລະ ເກັບກຳຂໍ້ມູນດ້ານແຮງງານ ເພື່ອເຊື່ອມໂຍງກັບ ລະບົບຖານຂໍ້ມູນຄຸ້ມຄອງລາຍຮັບສ່ວຍສາອາກອນ (TaxRIS) ໃຫ້ສຳເລັດ.

– ປັບປຸງລະບົບການເກັບລາຍຮັບ-ການຈ່າຍເງິນອຸດໜູນປະເພດຕ່າງໆຫັນໄປສູ່ລະບົບທັນໄໝ ເພື່ອໃຫ້ການບໍລິການແກ່ຜູ້ປະກັນຕົນ ແລະ ຜູ້ເກີດສິດ ມີຄວາມວ່ອງໄວ ແລະ ທັນການ.

– ພັດທະນາລະບົບປະກັນສັງຄົມໃຫ້ມີຄວາມເຂັ້ມແຂງ ດ້ວຍການປັບປຸງ ແລະ ຂະຫຍາຍອັດຕາການປົກຄຸມປະກັນສັງຄົມພາກທຸລະກິດ ແລະ ຜູ້ສະໝັກໃຈໃຫ້ກວ້າງຂວາງ; ປັບປຸງການບໍລິຫານຄຸ້ມຄອງ ແລະ ການບໍລິການໃຫ້ວ່ອງໄວ; ຂະຫຍາຍການບໍລິຫານສູ່ບັນດາເມືອງຈຳນວນໜຶ່ງ ແລະ ບໍລິການເຄື່ອນທີ່.

– ເອົາໃຈໃສ່ພັດທະນາວຽກງານປົກປ້ອງທາງສັງຄົມໃຫ້ກວ້າງຂວາງຫຼາຍຂຶ້ນ ເພື່ອໃຫ້ກຸ່ມຄົນດ້ອຍໂອກາດຕ່າງໆໄດ້ຮັບການຊ່ວຍເຫຼືອຢ່າງສົມເຫດສົມຜົນ.

– ສ້າງຄວາມເຂັ້ມແຂງໃຫ້ລະບົບປະກັນສັງຄົມ ເພື່ອສະໜອງການຊ່ວຍເຫຼືອດ້ານການເງິນ ແລະ ດ້ານເສດຖະກິດ, ສ້າງຄວາມໝັ້ນຄົງທາງດ້ານສັງຄົມ ແລະ ໂອກາດການພັດທະນາໃນໄລຍະຍາວໃຫ້ເທົ່າທຽມ ສຳລັບແມ່ຍິງ ແລະ ເດັກຍິງ, ຜູ້ເສຍອົງຄະ, ຜູ້ດ້ອຍໂອກາດ ແລະ ຜູ້ສູງອາຍຸ.

### 4.3.6 ແຜນວຽກຈຸດສຸມທີ 6: ການເກັບກູ້ລະເບີດບໍ່ທັນແຕກ ແລະ ຊີວິດຂອງປະຊາຊົນມີຄວາມປອດໄພຈາກລະເບີດບໍ່ທັນແຕກ ເພີ່ມຂຶ້ນເທື່ອລະກ້າວ

❖ **ວຽກຈຸດສຸມ:**

- ຫຼຸດຜ່ອນຈຳນວນຜູ້ໄດ້ຮັບເຄາະຮ້າຍລະເບີດບໍ່ທັນແຕກ ໃຫ້ຕ່ຳກວ່າ 40 ຄົນ/ປີ.
- ຈັດຕັ້ງການໂຄສະນາຜົນຮ້າຍ ແລະ ທີ່ມາຂອງລະເບີດບໍ່ທັນແຕກຕາມກຸ່ມບ້ານເປົ້າໝາຍ ໃຫ້ໄດ້ 3.000 ເທື່ອບ້ານ ແລະ ຂະຫຍາຍການສິດສອນຫຼັກສູດລະເບີດຕົກຄ້າງໃນສະຖາບັນການສຶກສາຕ່າງໆ ໃຫ້ໄດ້ 500 ແຫ່ງ.
- ຈັດຕັ້ງການສຳຫຼວດບໍ່ແມ່ນວິຊາການ ເພື່ອຊອກຫາຈຸດຫຼັກຖານລະເບີດບໍ່ທັນແຕກ ໃຫ້ໄດ້ 2.182 ບ້ານ ແລະ ສຳຫຼວດແບບວິຊາການ ເພື່ອກຳນົດພື້ນທີ່ລະເບີດບໍ່ທັນແຕກຕົກຄ້າງ ໃຫ້ໄດ້ 188.706 ເຮັກຕາ.
- ກວດກູ້ລະເບີດບໍ່ທັນແຕກອອກຈາກເນື້ອທີ່ທຳການຜະລິດ ແລະ ເຂດຊຸມຊົນ, ເຂດຈຸດສຸມທຸລະກິດ ໃຫ້ໄດ້ 38.121 ເຮັກຕາ.
- ພັດທະນາຊີວິດການເປັນຢູ່ຂອງຜູ້ຖືກເຄາະຮ້າຍຈາກລະເບີດບໍ່ທັນແຕກຕົກຄ້າງ ໃຫ້ໄດ້ 5.551 ຄົນ.

– ສຸມໃສ່ຊຸກຍູ້ວຽກງານແກ້ໄຂລະເບີດບໍ່ທັນແຕກໃຫ້ມີຄວາມຄ່ອງຕົວກວ່າເກົ່າ ຕິດພັນກັບການບັນລຸຄາດໝາຍ ແລະ ຕົວຊີ້ບອກຕາມເປົ້າໝາຍການພັດທະນາແບບຍືນຍົງ ທີ 18.

## 4.4 ເປົ້າໝາຍທີ 4 ປົກປັກຮັກສາສິ່ງແວດລ້ອມໃຫ້ມີຄວາມສົມດຸນ ແລະ ຫຼຸດຜ່ອນຄວາມສ່ຽງໄພພິບັດຕ່າງໆ

### 4.4.1 ແຜນວຽກຈຸດສຸມທີ 1: ການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດໃຫ້ມີຄວາມຍືນຍົງ

❖ **ຄາດໝາຍ:**

- ສູ້ຊົນໃຫ້ເນື້ອທີ່ດິນປ່າໄມ້ ເພີ່ມຂຶ້ນໃຫ້ໄດ້ 70% ແລະ ການປົກຫຸ້ມປ່າໄມ້ ບໍ່ໃຫ້ຫຼຸດ 70% ຂອງເນື້ອທີ່ທົ່ວປະເທດ ໃນປີ 2025.

– ຍົກລະດັບປ່າສະຫງວນແຫ່ງຊາດຂຶ້ນເປັນອຸທິຍານແຫ່ງຊາດ ໃຫ້ໄດ້ 5 ແຫ່ງ ໃນປີ 2025.
– ສູ້ຊົນສືບຕໍ່ຂຶ້ນທະບຽນອອກໃບຕາດິນ ໃຫ້ສຳເລັດ 1.600.000 ຕອນ ໃນຂອບເຂດທົ່ວປະເທດ ໃນປີ 2025.
– ປູກປ່າໄມ້ ໃຫ້ໄດ້ 200.000 ເຮັກຕາ ແລະ ຟື້ນຟູປ່າໄມ້ ໃຫ້ໄດ້ 1.800.000 ເຮັກຕາ.
– ສ້າງສະຖານີວັດແທກຄຸນນະພາບອາກາດ ຢ່າງໜ້ອຍໃຫ້ໄດ້ 9 ແຫ່ງ ໃນຂອບເຂດທົ່ວປະເທດ.
– ສືບຕໍ່ສ້າງແຜນຄຸ້ມຄອງອ່າງຮັບນ້ຳຂະໜາດໃຫຍ່ ໃຫ້ໄດ້ 14 ແຫ່ງ ແລະ ອ່າງຮັບນ້ຳຫຼັກຂອງແຂວງ (ອ່າງຮັບນ້ຳຂະໜາດກາງ) ໃນຂອບເຂດທົ່ວປະເທດ ໃຫ້ສຳເລັດ.

❖ **ວຽກຈຸດສຸມ:**

– ສືບຕໍ່ຂຶ້ນທະບຽນອອກໃບຕາດິນໃຫ້ສຳເລັດຕາມຄາດໝາຍໃນປີ 2025, ພ້ອມທັງສືບຕໍ່ຫັນລະບົບການຄຸ້ມຄອງທີ່ດິນໃຫ້ເປັນທັນສະໄໝ ໂດຍນຳໃຊ້ລະບົບດີຈີຕອນໃນການຄຸ້ມຄອງສຳມະໂນທີ່ດິນ, ພັດທະນາລະບົບຄຸ້ມຄອງຂໍ້ມູນທີ່ດິນ ເພື່ອເຊື່ອມຖານຂໍ້ມູນຈຳນວນຕອນດິນກັບລະບົບການເກັບລາຍຮັບຈາກທີ່ດິນຂອງຂະແໜງການເງິນ ແລະ ຂະແໜງທະນາຄານ.

– ຊຸກຍູ້ການສ້າງຍຸດທະສາດການນຳໃຊ້ທີ່ດິນຂັ້ນສູນກາງ ແລະ ຂັ້ນແຂວງ ພ້ອມທັງປັບປຸງນິຕິກຳ, ລະບຽບການຕ່າງໆ ໃນການປະເມີນມູນຄ່າທີ່ດິນ, ໄລ່ລຽງຜົນໄດ້-ຜົນເສຍຂອງການນຳໃຊ້ທີ່ດິນ, ການຫັນດິນເປັນທຶນ, ການຄຸ້ມຄອງຕະຫຼາດທີ່ດິນ, ຂຶ້ນທະບຽນຄອນໂດມິນຽມ, ການຈົດທະບຽນຊັບສິນ ລວມທັງຂັ້ນຕອນກຳນົດເວລາຕາມການຫັນປ່ຽນເປັນທັນສະໄໝ ເພື່ອສ້າງລາຍຮັບຈາກທີ່ດິນ, ການຊື້-ຂາຍຜ່ານລະບົບທະຄານ ແລະ ການເສຍຄ່າທຳນຽມພາສີທີ່ດິນ, ອາກອນລາຍໄດ້ທີ່ດິນ, ການເຊົ່າ ແລະ ສຳປະທານທີ່ດິນ ເພື່ອຈັດເກັບລາຍຮັບເຂົ້າງົບປະມານແຫ່ງລັດໃຫ້ຄົບຖ້ວນ ແລະ ຮັດກຸມ.

– ປັບປຸງກົນໄກ ແລະ ຂັ້ນຕອນການລົງທຶນໃນການຈັດສັນ ແລະ ຕິດຕາມກວດກາການນຳໃຊ້ທີ່ດິນຂອງລັດໃນໂຄງການລົງທຶນຕ່າງໆ ທີ່ຈັບຈອງໄວ້ບໍ່ມີການພັດທະນາ ໂດຍສະເພາະໂຄງການເຊົ່າ-ສຳປະທານທີ່ດິນ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ; ເອົາໃຈໃສ່ແກ້ໄຂປະກົດການຫຍໍ້ທໍ້ກ່ຽວກັບບັນຫາທີ່ດິນໃຫ້ຫຼຸດລົງຢ່າງຕໍ່ເນື່ອງ.

– ສືບຕໍ່ຜັນຂະຫຍາຍແຜນແມ່ບົດທີ່ດິນແຫ່ງຊາດ ເພື່ອແນໃສ່ການຮັກສາເນື້ອທີ່ດິນປ່າໄມ້ ໃຫ້ໄດ້ 70% ຂອງເນື້ອທີ່ທົ່ວປະເທດໃນປີ 2025 ໂດຍເລັ່ງໃສ່ຊຸກຍູ້ໃນການສ້າງແຜນຈັດສັນທີ່ດິນເມືອງ ແລະ ບ້ານໃຫ້ສຳເລັດ.

– ຕິດຕາມຄຸນນະພາບສິ່ງແວດລ້ອມໃນທົ່ວປະເທດ ໂດຍສະເພາະຕິດຕາມກວດກາຄຸນນະພາບນ້ຳ, ຄຸນນະພາບອາກາດ ແລະ ສານເຄມີອັນຕະລາຍ ພ້ອມທັງປະເມີນຄວາມໜາແໜ້ນ ແລະ ສ້າງແຜນທີ່ການກະຈາຍຂອງມົນລະພິດໃນເຂດທີ່ມີຄວາມສ່ຽງ ເປັນຕົ້ນ: ນະຄອນຫຼວງວຽງຈັນ, ນະຄອນຫຼວງພະບາງ, ນະຄອນໄກສອນພົມວິຫານ, ນະຄອນປາກເຊ ແລະ ເມືອງວັງວຽງ.

– ສືບຕໍ່ປັບປຸງກົນໄກການປະສານງານ ລະຫວ່າງ ຂະແໜງການກ່ຽວຂ້ອງຈັດຕັ້ງປະຕິບັດສົນທິສັນຍາສາກົນທີ່ຕິດພັນກັບຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໂດຍຍົກສູງບົດບາດການຄຸ້ມຄອງມະຫາພາກ ແລະ ຮັດແໜ້ນການປະສານງານການຈັດຕັ້ງປະຕິບັດກັບຂະແໜງການທີ່ກ່ຽວຂ້ອງ ແລະ ທ້ອງຖິ່ນ ເພື່ອສ້າງເງື່ອນໄຂໃນການເຂົ້າເຖິງແຫຼ່ງທຶນສະໜັບສະໜູນຂອງສາກົນ.

### 4.4.2 ແຜນວຽກຈຸດສຸມທີ 2: ການເຕີບໂຕສີຂຽວ ແລະ ການແກ້ໄຂບັນຫາຕໍ່ກັບການປ່ຽນແປງດິນຟ້າອາກາດ

❖ **ຄາດໝາຍ:**

- ສືບຕໍ່ສ້າງແຜນງານແຫ່ງຊາດການປະກອບສ່ວນແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ (National Adaptation Plan: NAP) ສະບັບທີ 3 ໃຫ້ສໍາເລັດ ເພື່ອນໍາສະເໜີພິຈາລະນາຮັບຮອງ ໃນປີ 2025;
- ສຶກສາຄວາມເປັນໄປໄດ້ໃນການສ້າງແຜນຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວໃຫ້ເປັນສູນ ໃນປີ 2050 (Net Zero Emission Plan 2050);
- ຫຼຸດຜ່ອນທາດອາຍເຮືອນແກ້ວຈາກການທໍາລາຍປ່າໄມ້ ໃຫ້ໄດ້ປະມານ 30 ລ້ານໂຕນອາຍກາກໂບນິກ ($tCO_{2e}$) ແລະ ຂາຍກາກບອນປ່າໄມ້ ບໍ່ໃຫ້ຫຼຸດ 95 ລ້ານໂດລາສະຫະລັດ.
- ສ້າງສະຖານີສາກລົດໄຟຟ້າ/ປໍ້ານໍ້າມັນຊີວະພາບ ໃຫ້ໄດ້ຫຼາຍກວ່າ 100 ສະຖານີ ໃນຂອບເຂດທົ່ວປະເທດ;
- ກໍ່ສ້າງ ແລະ ປັບປຸງໂຄງລ່າງພື້ນຖານສະໜາມຂີ້ເຫຍື້ອທີ່ໄດ້ມາດຕະຖານໃນຂອບເຂດທົ່ວປະເທດ, ໃນນີ້ຢ່າງໜ້ອຍໃຫ້ໄດ້ 5 ຈຸດໃນຕົວເມືອງໃຫຍ່.

❖ **ວຽກຈຸດສຸມ:**

- ສ້າງດໍາລັດ ວ່າດ້ວຍ ການຄຸ້ມຄອງການຊື້-ຂາຍກາກບອນ ໃຫ້ສໍາເລັດ.

– ສືບຕໍ່ເຊື່ອມສານຫຼັກການພັດທະນາຕາມທິດສີຂຽວ ແລະ ຍືນຍົງ ໂດຍຍົກສູງຄວາມເປັນເຈົ້າການໃນການປົກປັກຮັກສາຊັບພະຍາກອນທໍາມະຊາດໃຫ້ມີຄວາມຍືນຍົງ, ສົ່ງເສີມເສດຖະກິດໝູນວຽນ, ການຜະລິດກະສິກໍາສີຂຽວ, ການທ່ອງທ່ຽວສີຂຽວ ແລະ ໂຄງການພະລັງງານສະອາດ.

– ສືບຕໍ່ຈັດຕັ້ງປະຕິບັດວຽກງານການຄຸ້ມຄອງການປ່ຽນແປງດິນຟ້າອາກາດ ແນໃສ່ບັນລຸຄາດໝາຍການຫຼຸດຜ່ອນການປ່ອຍ ແລະ ເພີ່ມການດູດຊັບທາດອາຍເຮືອນແກ້ວໃຫ້ເປັນສູນ ໃນປີ 2050, ພ້ອມທັງສົ່ງເສີມການສ້າງຄວາມທົນທານ ແລະ ການປັບຕົວເຂົ້າກັບສະພາບການປ່ຽນແປງດິນຟ້າອາກາດ ລວມທັງການຊື້-ຂາຍສິນເຊື່ອກາກບອນ.

– ສືບຕໍ່ປະສານສົມທົບກັບຄູ່ຮ່ວມພັດທະນາສາກົນ ຜ່ານກົນໄກການສ້າງຄວາມສາມາດໃຫ້ ສປປ ລາວ ເພື່ອເຂົ້າເຖິງແຫຼ່ງທຶນດ້ານສິ່ງແວດລ້ອມ ແລະ ການປ່ຽນແປງດິນຟ້າອາກາດ (Green Climate Fund, Global Environment Facility, Adaptation Fund) ເພື່ອຮັບປະກັນການສ້າງຄວາມສາມາດໃຫ້ແກ່ ສປປ ລາວ ໃນການຄຸ້ມຄອງສິ່ງແວດລ້ອມ ແລະ ຮັບມືຕໍ່ກັບການປ່ຽນແປງດິນຟ້າອາກາດ.

– ຜັນຂະຫຍາຍທິດທາງການຈັດຕັ້ງປະຕິບັດນະໂຍບາຍການນໍາໃຊ້ລົດໄຟຟ້າ ໂດຍການສົມທົບກັບທຸກຂະແໜງການທີ່ກ່ຽວຂ້ອງ ກໍານົດຂໍ້ແນະນໍາ ເພື່ອກໍາຈັດ, ການຈັດການກັບໝໍ້ໄຟທີ່ເສື່ອມຄຸນນະພາບ ແລະ ສິ່ງເສດເຫຼືອຈາກກິດຈະການລົດໄຟຟ້າ.

– ຍັ້ງຢືນຄວາມຖືກຕ້ອງທາງດ້ານວິທະຍາສາດ ຕໍ່ກັບ ຄຸນນະພາບສິ່ງແວດລ້ອມ ເພື່ອນໍາໃຊ້ເຂົ້າໃນການຈັດຕັ້ງປະຕິບັດຕໍ່ຜູ້ລະເມີດ ບັນດານິຕິກໍາ ແລະ ລະບຽບການດ້ານສິ່ງແວດລ້ອມ; ສົ່ງເສີມການຈັດຕັ້ງປະຕິບັດມາດຕະຖານ ISO ແລະ ລະບົບການຄຸ້ມຄອງສິ່ງແວດລ້ອມໃນຂະແໜງການອຸດສາຫະກໍາຂະໜາດກາງ ແລະ ຂະໜາດໃຫຍ່ ໃນຂອບເຂດທົ່ວປະເທດ.

– ປະສານສົມທົບ ແລະ ສະໜັບສະໜູນຂະແໜງການກ່ຽວຂ້ອງ ກໍ່ສ້າງ ແລະ ປັບປຸງໂຄງລ່າງພື້ນຖານສະໜາມຂີ້ເຫຍື້ອທີ່ໄດ້ມາດຕະຖານໃນຂອບເຂດທົ່ວປະເທດ ໃຫ້ໄດ້ຢ່າງໜ້ອຍ 5 ຈຸດໃນຕົວເມືອງໃຫຍ່.

### 4.4.3 ແຜນວຽກຈຸດສຸມທີ 3: ການປ້ອງກັນ, ຄວບຄຸມ ແລະ ຟື້ນຟູຫຼັງໄພພິບັດຕ່າງໆ

❖ **ຄາດໝາຍ:**

– ສືບຕໍ່ສ້າງສະຖານີອຸຕຸນິຍົມໃໝ່ ໃຫ້ໄດ້ 45 ແຫ່ງ ແລະ ສະຖານີອຸທົກກະສາດໃໝ່ ໃຫ້ໄດ້ 25 ແຫ່ງໃນຂອບເຂດທົ່ວປະເທດ;

– ສືບຕໍ່ຊຸກຍູ້ສ້າງກອງທຶນຄຸ້ມຄອງໄພພິບັດ ໃຫ້ໄດ້ 9 ແຂວງ, 1 ນະຄອນຫຼວງ ແລະ 17 ເມືອງ;

– ຊຸກຍູ້ສ້າງ ແລະ ປັບປຸງຄະນະກຳມະການຄຸ້ມຄອງໄພພິບັດຂັ້ນເມືອງ ແລະ ຂັ້ນບ້ານທີ່ມີຄວາມສ່ຽງໄພພິບັດສູງ ໃຫ້ໄດ້ຕື່ມ 50 ເມືອງ ແລະ 100 ບ້ານ ໃນ 7 ແຂວງ ແລະ 1 ນະຄອນຫຼວງ, ພ້ອມທັງສ້າງຄວາມເຂັ້ມແຂງວຽກຄຸ້ມຄອງໄພພິບັດໃຫ້ຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານດັ່ງກ່າວ ໃຫ້ໄດ້ 700 ຄົນ;

– ປັບປຸງຂໍ້ມູນຄວາມສ່ຽງໄພພິບັດຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອປະເມີນຄວາມສ່ຽງ ແລະ ສ້າງແຜນທີ່ຄວາມສ່ຽງໄພພິບັດ; ຊຸກຍູ້ສ້າງແຜນຍຸດທະສາດຫຼຸດຜ່ອນຄວາມສ່ຽງໄພພິບັດຂັ້ນແຂວງ ລວມທັງສ້າງແຜນການກຽມພ້ອມຕອບໂຕ້ໄພພິບັດສະເພາະແຂວງທີ່ມີຄວາມສ່ຽງສູງຕໍ່ໄພພິບັດ ໃຫ້ໄດ້ 3 ແຂວງ, 20 ເມືອງ ແລະ 80 ບ້ານ;

– ຈັດຝຶກຊ້ອມການຕອບໂຕ້ຊ່ວຍເຫຼືອໄພພິບັດສຸກເສີນອາຊຽນ 1 ຄັ້ງ, ລະດັບຊາດ 2 ຄັ້ງ ແລະ ທ້ອງຖິ່ນ 4 ຄັ້ງ;

– ສ້າງທີມງານປະເມີນ ແລະ ຊ່ວຍເຫຼືອສຸກເສີນຂັ້ນສູນກາງ ໃຫ້ໄດ້ 30 ຄົນ, ຂັ້ນແຂວງ ໃຫ້ໄດ້ 100 ຄົນ ແລະ ຂັ້ນເມືອງ ໃຫ້ໄດ້ 300 ຄົນ, ພ້ອມທັງຍົກລະດັບຂີດຄວາມສາມາດໃຫ້ທີມງານດັ່ງກ່າວ.

❖ **ວຽກຈຸດສຸມ:**

– ສືບຕໍ່ສຸມໃສ່ກໍ່ສ້າງ ແລະ ຍົກລະດັບສະຖານີອຸຕຸນິຍົມ, ສະຖານີອຸທົກກະສາດ ແລະ ລະບົບເຕືອນໄພລ່ວງໜ້າ ພ້ອມດ້ວຍປັບປຸງລະບົບຫັນເປັນສະຖານີອັດຕະໂນມັດທີ່ທັນສະໄໝ; ປັບປຸງຄຸນນະພາບການລາຍງານພະຍາກອນອາກາດ ແລະ ການແຈ້ງເຕືອນ ໄດ້ທັນການ ແລະ ຊັດເຈນ.

– ສ້າງຄວາມທົນທານຂອງຕົວເມືອງ ແລະ ຊົນນະບົດ ເພື່ອປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ໂດຍການຄຸ້ມຄອງ ແລະ ນຳໃຊ້ທ່າແຮງຂອງລະບົບນິເວດ ແລະ ຄວາມຫຼາກຫຼາຍຂອງຊີວະນາໆພັນ ເປັນຕົວຊ່ວຍເພື່ອຮັບມື ແລະ ປ້ອງກັນນໍ້າຖ້ວມ ໃຫ້ໄດ້ 6 ເມືອງ.

– ເພີ້ມທະວີຊຸກຍູ້ຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ ແລະ ຂັ້ນເມືອງ ໃຫ້ສ້າງກອງທຶນຄຸ້ມຄອງໄພພິບັດຕາມກົດໝາຍທີ່ກຳນົດໄວ້.

– ເພີ່ມການປະສານສົມທົບ ແລະ ຮ່ວມມືກັນລະຫວ່າງພາກລັດ, ພາກເອກະຊົນ, ຊຸມຊົນ ແລະ ຄູ່ຮ່ວມພັດທະນາ ເພື່ອຫຼຸດຜ່ອນຄວາມສ່ຽງ ແລະ ຜົນກະທົບຈາກໄພພິບັດທາງທຳມະຊາດ ເພື່ອຮັບປະກັນຄວາມປອດໄພ ແລະ ຄວາມຍືນຍົງຂອງການພັດທະນາເສດຖະກິດ-ສັງຄົມ.

– ເພີ້ມທະວີປະສິດທິພາບການເຮັດວຽກຂອງໜ່ວຍງານຄຸ້ມຄອງຄວາມປອດໄພຂອງເຂື່ອນໄຟຟ້າ ແລະ ສ້າງນິຕິກຳທີ່ກ່ຽວຂ້ອງ ເພື່ອຍົກສູງຄວາມປອດໄພເຂື່ອນໄຟຟ້າ; ສ້າງຄວາມທົນທານຂອງຊຸມຊົນ ແລະ ຄຸ້ມຄອງລະບົບນິເວດລຸ່ມນໍ້າ.

## 4.5 ເປົ້າໝາຍທີ 5 ການສ້າງໂຄງລ່າງພື້ນຖານທີ່ມີຄວາມເຂັ້ມແຂງ, ນໍາໃຊ້ທ່າແຮງ, ການະໂອກາດທີ່ຕັ້ງ, ເຂົ້າຮ່ວມຂະບວນການຮ່ວມມື ແລະ ການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ຢ່າງເປັນເຈົ້າການ

### 4.5.1 ແຜນວຽກຈຸດສຸມທີ 1: ໂຄງລ່າງພື້ນຖານໄດ້ຮັບການພັດທະນາເພື່ອເຊື່ອມໂຍງ-ເຊື່ອມຈອດພາຍໃນ, ພາກພື້ນ ແລະ ສາກົນ

❖ **ຄາດໝາຍ:**

- ດັດຊະນີການດໍາເນີນວຽກງານໂລຈິດສຕິກຂອງ ສປປ ລາວ ໄດ້ຮັບການຈັດອັນດັບດີຂຶ້ນ;
- ສູ້ຊົນປະລິມານຂົນສົ່ງສິນຄ້າ: ທາງບົກ ຂະຫຍາຍຕົວ 7% ຕໍ່ປີ, ທາງນໍ້າ ຂະຫຍາຍຕົວ 5% ຕໍ່ປີ, ທາງອາກາດ ຂະຫຍາຍຕົວ 12% ຕໍ່ປີ ແລະ ທາງລົດໄຟ ຂະຫຍາຍຕົວ 7% ຕໍ່ປີ;
- ສົ່ງເສີມໃຫ້ທຸກຂະແໜງການ ທັງພາກລັດ ແລະ ພາກເອກະຊົນ ນໍາໃຊ້ສູນຂໍ້ມູນດິຈິຕອນ ໃຫ້ເພີ່ມຂຶ້ນ 40%;
- ຫັນທຸກບໍລິການພື້ນຖານທີ່ຈໍາເປັນຂອງພາກລັດ ເປັນການບໍລິການຜ່ານອອນລາຍ ໃຫ້ສໍາເລັດ 50% ເພື່ອຍົກລະດັບ ດັດຊະນີຕົວຊີ້ບອກແຕ່ລະໜ່ວຍດ້ານການບໍລິຫານລັດດ້ວຍເອເລັກໂຕຣນິກ ແລະ ດ້ານການພັດທະນາໄອຊີທີ ໃຫ້ດີຂຶ້ນ;
- ສູ້ຊົນຂະຫຍາຍການນໍາໃຊ້ລະບົບກອງປະຊຸມທາງໄກ (VC) ໃຫ້ແກ່ຫ້ອງການລັດຢູ່ສູນກາງ ແລະ ທ້ອງຖິ່ນ ໃຫ້ໄດ້ຕື່ມ 5 ພາກສ່ວນ; ສ້າງບັນຊີຜູ້ນໍາໃຊ້ ແລະ ຂະຫຍາຍການນໍາໃຊ້ລະບົບອີເມວ (Email) ຂອງພາກລັດ ໃຫ້ໄດ້ເພີ່ມ 27 ຫ້ອງການລັດຢູ່ສູນກາງ ແລະ ທ້ອງຖິ່ນ;
- ຂະຫຍາຍການນໍາໃຊ້ບັນດາລະບົບຫ້ອງການທັນສະໄໝ (e-office) ຂອງພາກລັດຢູ່ສູນກາງ ແລະ ທ້ອງຖິ່ນ ໃຫ້ໄດ້ຕິດຕັ້ງໃຫ້ບັນດາພະແນກການອ້ອມຂ້າງແຂວງ 17 ຫ້ອງການ ແລະ ບັນດາອົງການຈັດຕັ້ງທຽບເທົ່າຢູ່ສູນກາງ 10 ພາກສ່ວນ;
- ສ້າງສູນບໍລິການຂໍ້ມູນ-ຂ່າວສານແບບເອເລັກໂຕຣນິກຢູ່ທ້ອງຖິ່ນ ໃຫ້ໄດ້ຕື່ມ 2 ພາກ (ພາກເໜືອ ແລະ ພາກໃຕ້);
- ສູ້ຊົນຂະຫຍາຍ ແລະ ນໍາໃຊ້ຕາໜ່າງອິນເຕີເນັດຄວາມໄວສູງແບບມີສາຍ FTTx ໃຫ້ໄດ້ 148 ເມືອງ ແລະ 50% ຂອງບ້ານໃນທົ່ວປະເທດ;
- ຂະຫຍາຍສະຖານີຮັບ-ສົ່ງສານຍານໂທລະສັບມືຖື ລະບົບ 3G ຄວບຄຸມໃຫ້ໄດ້ 100%, 4G ໃຫ້ໄດ້ 90% ແລະ ລະບົບ 5G ຄວບຄຸມໃຫ້ໄດ້ ຕົວເມືອງໃຫຍ່ ໃນ 18 ແຂວງທົ່ວປະເທດ;
- ສູ້ຊົນສ້າງສູນຂໍ້ມູນສໍາຮອງ ໃຫ້ໄດ້ 2 ແຫ່ງ (ພາກເໜືອ 1 ແຫ່ງ ແລະ ພາກໃຕ້ 1 ແຫ່ງ);
- ຂະຫຍາຍອັດຕາສ່ວນປະຊາຊົນຮູ້ນໍາໃຊ້ຄອມພິວເຕີ ບັນລຸໄດ້ 70% ແລະ ຮູ້ນໍາໃຊ້ອິນເຕີເນັດແບບມີສາຍ ແລະ ບໍ່ມີສາຍ ໃຫ້ໄດ້ 60% ຂອງພົນລະເມືອງ; ອັດຕາສ່ວນຂອງຄົວເຮືອນນໍາໃຊ້ຄອມພິວເຕີ, ສະມາດໂຟນ, ສະມາດທີວາຍ ໃຫ້ບັນລຸ 60% ຂອງຄົວເຮືອນທັງໝົດ; ອັດຕາສ່ວນຂອງຜູ້ລົງທະບຽນນໍາໃຊ້ໂທລະສັບຕັ້ງໂຕະແບບມີສາຍ ແລະ ບໍ່ມີສາຍ ໃຫ້ບັນລຸ 100% ຂອງປະຊາກອນທັງໝົດທີ່ມີການນໍາໃຊ້; ນໍາໃຊ້ອິນເຕີເນັດຄວາມໄວສູງແບບມີສາຍ ແລະ ບໍ່ມີສາຍ ໃຫ້ບັນລຸ 100% ຂອງປະຊາກອນທັງໝົດທີ່ຊົມໃຊ້.

❖ **ວຽກຈຸດສຸມ:**

– ສືບຕໍ່ພັດທະນາໂຄງລ່າງພື້ນຖານດ້ານເສັ້ນທາງຄົມມະນາຄົມຂົນສົ່ງທາງບົກ, ທາງລົດໄຟ, ທາງນໍ້າ, ທາງອາກາດ ໃຫ້ສໍາເລັດຕາມແຜນງານ ແລະ ໂຄງການທີ່ໄດ້ກໍານົດໄວ້ ໂດຍສະເພາະທາງດ່ວນ, ທາງລົດໄຟ ແລະ ທ່າບົກຕ່າງໆ.

– ຍົກລະດັບເສັ້ນທາງຄົມມະນາຄົມທາງບົກສາຍຫຼັກທີ່ເປັນບູລິມະສິດຢ່າງມີຈຸດສຸມ ຕາມບັນດາແລວທາງເສດຖະກິດຂອງອະນຸພາກພື້ນແມ່ນ້ຳຂອງ ແລະ ແລວເຊື່ອມຈອດອາຊຽນທີ່ເປັນບູລິມະສິດ; ເພີ່ມທະວີການບູລະນະຮັກສາ ແລະ ສ້ອມແປງເສັ້ນທາງທີ່ໄດ້ຮັບຜົນກະທົບຈາກໄພພິບັດທຳມະຊາດ ໃຫ້ສາມາດນຳໃຊ້ໄດ້ເປັນປົກກະຕິ.

– ສືບຕໍ່ຄຸ້ມຄອງທ່າບົກທີ່ພັດທະນາແລ້ວ ໃຫ້ມີຄວາມສະດວກ, ວ່ອງໄວ ແລະ ມີຄຸນນະພາບ ຄື: ທ່າບົກທ່ານາແລ້ງ, ນະຄອນຫຼວງວຽງຈັນ; ທ່າບົກສະຫວັນນະເຂດ ແລະ ທ່າບົກຈຳປາສັກ. ຊຸກຍູ້ຕິດຕາມ ແລະ ຄຸ້ມຄອງການກໍ່ສ້າງບັນດາທ່າບົກ ທີ່ກຳລັງດຳເນີນການພັດທະນາໃຫ້ສຳເລັດຕາມແຜນການທີ່ວາງໄວ້ ຄື: ທ່າບົກທ່າແຂກ, ແຂວງຄຳມ່ວນ; ທ່າບົກນາເຕີຍ, ແຂວງຫຼວງນ້ຳທາ; ທ່າບົກຫຼັກຊາວ, ແຂວງບໍລິຄຳໄຊ; ທ່າບົກຫ້ວຍຊາຍ, ແຂວງບໍ່ແກ້ວ; ທ່າບົກຫຼວງພະບາງ, ນະຄອນຫຼວງພະບາງ ແລະ ທ່າບົກເມືອງໄຊ, ແຂວງອຸດົມໄຊ; ພ້ອມທັງຄົ້ນຄວ້າລະບຽບການຄຸ້ມຄອງ, ການຈັດຕັ້ງ ແລະ ການເຄື່ອນໄຫວຂອງເຂດໂລຈິດສຕິກ ໃຫ້ມີຄວາມຄ່ອງຕົວ.

– ສ້າງເງື່ອນໄຂທີ່ເອື້ອອຳນວຍຄວາມສະດວກດ້ານການຄົມມະນາຄົມໃຫ້ມີຄວາມໂລ່ງລ່ຽນ ເພື່ອດຶງດູດການລົງທຶນ ແລະ ຊຸກຍູ້ການພັດທະນາໃນເຂດອຸດສາຫະກຳ, ເຂດຕົວເມືອງ Smart City, ເຂດບໍລິການໂລຈິດສຕິກ ແລະ ເຂດທ່າບົກເຂດບໍລິການ ການຄ້າປອດພາສີ ຢູ່ຕາມແລວທາງເສດຖະກິດລາວ-ຈີນ ແລະ ເຂດການຄ້າຊາຍແດນ ໃຫ້ສຳເລັດໂດຍໄວ.

– ເພີ່ມທະວີການລົງທຶນເຂົ້າໃສ່ໂຄງລ່າງພື້ນຖານການເຊື່ອມໂຍງ-ເຊື່ອມຈອດ ເພື່ອບັນລຸເປົ້າໝາຍການພັດທະນາແບບມີສ່ວນຮ່ວມ ແລະ ຍືນຍົງ; ປັບປຸງການເຊື່ອມໂຍງ-ເຊື່ອມຈອດລະຫວ່າງພາກພື້ນ ແລະ ພາຍໃນ ເພື່ອເອື້ອອຳນວຍການເຂົ້າເຖິງຕະຫຼາດ, ການບໍລິການສາທາລະນະພາກລັດ ແລະ ການບໍລິການຂົນສົ່ງ ຊຶ່ງຈະຊ່ວຍກະຕຸ້ນໃຫ້ມີການຂະຫຍາຍຕົວການລົງທຶນຂອງພາກເອກະຊົນ, ການຄ້າ ແລະ ການສ້າງວຽກເຮັດງານທຳ.

– ສືບຕໍ່ປັບປຸງ ແລະ ຂະຫຍາຍວຽກງານການຫັນເປັນທັນສະໄໝໃຫ້ກວ້າງຂວາງຕື່ມ ໂດຍສະເພາະການຫັນເປັນເສດຖະກິດດິຈິຕອນ ເພື່ອປະກອບເຂົ້າໃນການພັດທະນາເສດຖະກິດ-ສັງຄົມ.

– ສືບຕໍ່ປັບປຸງ ແລະ ຂະຫຍາຍລະບົບເຄືອຂ່າຍເຊື່ອມໂຍງບັນດາອົງການຈັດຕັ້ງລັດ ເຂົ້າຫາລະບົບບໍລິຫານ ແລະ ບໍລິການລັດດ້ວຍເອເລັກໂຕຣນິກ ໃຫ້ສາມາດເຊື່ອມໂຍງກັນໄດ້ຢ່າງສະດວກ, ວ່ອງໄວ, ປະຢັດ ແລະ ຮັບປະກັນປອດໄພທັງສູນກາງ ແລະ ທ້ອງຖິ່ນ, ພ້ອມທັງສ້າງລາຍຮັບເຂົ້າງົບປະມານລັດ ໄດ້ຫຼາຍຂຶ້ນ.

– ສຸມໃສ່ສ້າງ ແລະ ພັດທະນາໂຄງລ່າງພື້ນຖານໂທລະຄົມມະນາຄົມ ແລະ ໄອຊີທີ ແລະ ດິຈິຕອນ ໃຫ້ໄດ້ມາດຕະຖານສາກົນ ຮັບປະກັນໄດ້ຄວາມຍືນຍົງ ແລະ ມີຄວາມປອດໄພ, ມີເຄື່ອງມືຄຸ້ມຄອງທີ່ທັນສະໄໝ ແລະ ສະໜອງບໍລິການໃນທຸກເມືອງທົ່ວປະເທດ ເພື່ອຮອງຮັບການຫັນເປັນດິຈິຕອນ ແລະ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

– ຊຸກຍູ້ ແລະ ສົ່ງເສີມການພັດທະນາອຸດສາຫະກຳດິຈິຕອນ, ການຄົ້ນຄວ້ານຳໃຊ້ເຕັກໂນໂລຊີລະດັບສູງ ແລະ ອັດສະລິຍະ; ສົ່ງເສີມການສ້າງຫົວໜ່ວຍວິສາຫະກິດທີ່ນຳໃຊ້ນະວັດຕະກຳໃໝ່ (Startup), ສ້າງນະວັດຕະກຳດ້ານໄອຊີທີ, ການໃຫ້ບໍລິການ ການເງິນເອເລັກໂຕຣນິກເທິງໂທລະສັບມືຖື (Mobile Money) ເພື່ອສະໜັບສະໜູນການຂະຫຍາຍຕົວທາງດ້ານເສດຖະກິດໃນຍຸກແຫ່ງດິຈິຕອນ, ຮອງຮັບການຫັນເປັນດິຈິຕອນ, ເສດຖະກິດດິຈິຕອນ, ສົ່ງເສີມບັນດາຂະແໜງການສ້າງນະວັດຕະກຳຮັບໃຊ້ຂະແໜງການຂອງຕົນ ຜ່ານໂຄງລ່າງພື້ນຖານ ແລະ ການບໍລິການໂທລະຄົມມະນາຄົມໄອຊີດີ, ດິຈິຕອນ, ນະວັດຕະກຳດ້ານໄອຊີທີຂອງຄົນລາວ ໃຫ້ໄດ້ຮັບການຍອມຮັບຈາກສາກົນ ຫຼຸດຜ່ອນຄວາມແຕກໂຕນທາງດ້ານດິຈິຕອນ.

### 4.5.2 ແຜນວຽກຈຸດສຸມທີ 2: ການພົວພັນຮ່ວມມື, ການເຊື່ອມໂຍງການຄ້າ ແລະ ການລົງທຶນກັບພາກພື້ນ ແລະ ສາກົນ

❖ **ຄາດໝາຍ:**

– ອັດຕາການເຊື່ອມໂຍງການຄ້າທັງໝົດຕໍ່ລວມຍອດຜະລິດຕະພັນພາຍໃນ (ອັດຕາການເປີດປະເທດ) ໃຫ້ໄດ້ຫຼາຍກວ່າ 70% ໃນປີ 2025.

– ສູ້ຊົນເຮັດໃຫ້ມູນຄ່າການສົ່ງອອກສິນຄ້າອຸດສາຫະກຳປຸງແຕ່ງ ກວມເອົາ 50% ໃນປີ 2025.

❖ **ວຽກຈຸດສຸມ:**

– ສືບຕໍ່ສຸມໃສ່ສົ່ງເສີມ ແລະ ດຶງດູດການຄ້າ, ການລົງທຶນລະຫວ່າງປະເທດ, ການເຂົ້າສູ່ຕະຫຼາດສົ່ງອອກຂອງສິນຄ້າຂອງລາວ ໂດຍສະເພາະປະເທດຄູ່ຄ້າຫຼັກໃນພາກພື້ນ ເປັນຕົ້ນ: ສປ ຈີນ, ຫວຽດນາມ, ໄທ, ຍີ່ປຸ່ນ, ອິນເດຍ ແລະ ປະເທດອື່ນໆ; ສ້າງຄວາມເຂັ້ມແຂງໃຫ້ໜ່ວຍງານພາກລັດ ແລະ ທຸລະກິດທີ່ກ່ຽວຂ້ອງ ເພື່ອສາມາດປະຕິບັດເງື່ອນໄຂ ແລະ ຂໍ້ຜູກພັນຕ່າງໆທີ່ໄດ້ຕົກລົງກັນໃນຂອບການຮ່ວມມືສອງຝ່າຍ, ອະນຸພາກພື້ນ, ພາກພື້ນ ແລະ ຫຼາຍຝ່າຍ; ເຊື່ອມໂຍງໃນການຍົກລະດັບດ້ານມາດຕະຖານ ແລະ ຄຸນນະພາບຜະລິດຕະພັນອຸດສາຫະກຳ ແລະ ເຄືອຂ່າຍການຜະລິດກັບພາກພື້ນ ແລະ ສາກົນ ໂດຍສະເພາະການເຂົ້າຮ່ວມຕ່ອງໂສ້ການສະໜອງຂອງພາກພື້ນ, ລວມເຖິງການສົ່ງເສີມ ແລະ ພັດທະນາການຄ້າຊາຍແດນ ແລະ ການບໍລິການ ການຄ້າຜ່ານແດນ ຕິດພັນກັບການພັດທະນາດ້ານໂລຈິດສຕິກ ໃນຍຸກແຫ່ງການເຊື່ອມໂຍງ-ເຊື່ອມຈອດ.

– ເພີ້ມທະວີປັບປຸງສະພາບແວດລ້ອມໃນການລົງທຶນ ແລະ ການເຮັດທຸລະກິດ; ສ້າງແຮງຈູງໃຈໃນການດຶງດູດການລົງທຶນຈາກຕ່າງປະເທດ ເພື່ອສະໜັບສະໜູນຄວາມໝັ້ນຄົງດ້ານເສດຖະກິດມະຫາພາກ, ການໃຊ້ຈ່າຍເຂົ້າໃນຂະແໜງການສັງຄົມ, ວຽກງານສົ່ງເສີມເສດຖະກິດສີຂຽວ ແລະ ສ້າງຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ.

– ສົ່ງເສີມໃຫ້ການລົງທຶນຂອງພາກເອກະຊົນ ໄດ້ຮັບຜົນປະໂຫຍດຈາກສະພາບແວດລ້ອມໃນການດຳເນີນທຸລະກິດທີ່ໄດ້ຮັບການປັບປຸງ, ແນໃສ່ປັບປຸງສະພາບແວດລ້ອມການດຳເນີນທຸລະກິດໃນ ສປປ ລາວ ແລະ ເພີ່ມປະລິມານການຄ້າໃນທຸກກອບການຮ່ວມມືຂອງ ສປປ ລາວ ກັບ ສະຫະພາບເອີລົບ ກໍຄື ໃນຂົງເຂດພາກພື້ນ ໂດຍສະເພາະແມ່ນການເຊື່ອມໂຍງທີ່ແໜ້ນແຟ້ນຂຶ້ນຂອງສະມາຄົມເສດຖະກິດອາຊຽນ.

### 4.5.3 ແຜນວຽກຈຸດສຸມທີ 3: ການພັດທະນາເຂດແຄວ້ນ ແລະ ທ້ອງຖິ່ນໃຫ້ມີຄວາມເຂັ້ມແຂງ ແລະ ສອດຄ່ອງກັບທ່າແຮງບົ່ມຊ້ອນ

❖ **ວຽກຈຸດສຸມ:**

ສືບຕໍ່ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5ປີ ຂອງບັນດາແຂວງ ຕາມທິດທາງ, ໜ້າທີ່ລວມ, ຄາດໝາຍສູ້ຊົນ ແລະ ວຽກຈຸດສຸມຂອງແຜນການທີ່ໄດ້ກຳນົດໄວ້ ເພື່ອຮັບປະກັນໄດ້ໃນທິດທາງລວມຂອງການພັດທະນາ ເປັນຕົ້ນ: ຮັກສາສະຖຽນລະພາບດ້ານການເມືອງ, ສັງຄົມມີຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ, ປະຊາຊົນບັນດາເຜົ່າມີແນວຄິດອຸ່ນອ່ຽນທຸ່ນທ່ຽງ, ເປັນເຈົ້າການໃນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ສ້າງຄວາມສົມດຸນກັນລະຫວ່າງເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ສິ່ງແວດລ້ອມ; ຫັນໄປສູ່ການສ້າງເສດຖະກິດດີຈີຕອນຕາມທິດຍືນຍົງເທື່ອລະກ້າວ ໂດຍເນັ້ນໃສ່ວຽກງານພັດທະນາຊັບພະຍາກອນມະນຸດ ເປັນໃຈກາງ; ພັດທະນາອຸດສະຫະກຳ ແລະ ຫັດຖະກຳພາຍໃນທີ່ມີທ່າແຮງ ໃຫ້ເປັນສິນຄ້າຕິດພັນກັບຕ່ອງໂສ້ການຜະລິດມູນຄ່າເພີ່ມ ແລະ ທົດແທນການນຳເຂົ້າສິນຄ້າທີ່ບໍ່ຈຳເປັນ; ພັດທະນາຂົງເຂດກະສິກຳໃຫ້ມີການຂະຫຍາຍຕົວສູງ ເພື່ອຫັນເປັນສິນຄ້າປາຍແຫຼມຂອງແຕ່ລະທ້ອງຖິ່ນຮັບປະກັນໄດ້ການສະໜອງການບໍລິໂພກພາຍໃນໃຫ້ພຽງພໍ ແລະ ສົ່ງອອກເປັນສິນຄ້າຕາມສັນຍາການເຈລະຈາເປີດຕະຫຼາດກັບບັນດາປະເທດຄູ່ຄ້າ; ສົ່ງເສີມການບໍລິການຂົນສົ່ງໂລຈິດສຕິກ ໃນບັນດາທ່າບົກຕ່າງໆ, ຕາມແລວທາງເສດຖະກິດ,

ຕາມແລວທາງລົດໄຟລາວ-ຈີນ ແລະ ຈຸດທ່າແຮງອື່ນໆ; ສົ່ງເສີມການຄ້າຊາຍແດນ ແລະ ການສຳພັນເສດຖະກິດລະຫວ່າງແຂວງກັບແຂວງ; ສົ່ງເສີມການທ່ອງທ່ຽວຕິດພັນກັບການພັດທະນາແຫຼ່ງທ່ອງທ່ຽວທີ່ສຳຄັນ ແລະ ເປັນເອກະລັກຂອງແຕ່ລະທ້ອງຖິ່ນໃຫ້ມີຄວາມແທດເໝາະ ບໍ່ວ່າຈະເປັນສະຖານທີ່ທ່ອງທ່ຽວທາງປະຫວັດສາດ, ບູຮານວັດຖຸ, ບູຮານສະຖານ ແລະ ແຫຼ່ງທ່ອງທ່ຽວໃນຮູບແບບຕ່າງໆ ໃຫ້ມີຄວາມສະອາດ ແລະ ປອດໄພ ສາມາດດຶງດູດນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ. ເຊິ່ງທັງໝົດເຫຼົ່ານີ້, ອີງການປົກຄອງທຸກຂັ້ນຕ້ອງໄດ້ເອົາໃຈໃສ່ປຸກລະດົມ ແລະ ຊຸກຍູ້ການຜະລິດເປັນສິນຄ້າຂອງປະຊາຊົນ ແລະ ບັນດາຫົວໜ່ວຍທຸລະກິດ ໃຫ້ມີສ່ວນຮ່ວມຢ່າງຕັ້ງໜ້າ; ພ້ອມດຽວກັນນັ້ນ, ບັນດາພື້ນຖານໂຄງລ່າງດ້ານເສດຖະກິດກໍຕ້ອງໄດ້ຮັບການປັບປຸງຢ່າງວ່ອງໄວ ແນໃສ່ເຮັດໃຫ້ເສດຖະກິດຂອງບັນດາແຂວງສືບຕໍ່ຂະຫຍາຍຕົວ ແລະ ຫັນເຂົ້າສູ່ວຽກງານລະອຽດໃນແຕ່ລະຂົງເຂດຢ່າງແທ້ຈິງ ໂດຍສຸມໃສ່ການຫັນລົງຮາກຖານຢູ່ຂັ້ນເມືອງ ແລະ ຂັ້ນບ້ານ ຕິດພັນກັບການພັດທະນາຊົນນະບົດ, ການແກ້ໄຂຄວາມທຸກຍາກ ແລະ ການຈັດສັນອາຊີບຄົງທີ່ໃຫ້ປະຊາຊົນ ລວມທັງຍູ້ໜູນໃຫ້ວຽກງານສ້າງບ້ານພັດທະນາ, ສ້າງບ້ານນ້ອຍໃຫ້ເປັນບ້ານໃຫຍ່ ເພື່ອສ້າງເປັນຕົວເມືອງໃນຊົນນະບົດ ໃຫ້ປະກົດຜົນເປັນຈິງ ເພື່ອເປັນພື້ນຖານໃຫ້ເສດຖະກິດມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ໝັ້ນທ່ຽງ.

### 4.5.4 ແຜນວຽກຈຸດສຸມທີ 4: ການພັດທະນາຕົວເມືອງ ແລະ ເຂດເສດຖະກິດພິເສດໃຫ້ກາຍເປັນຖານການຜະລິດ, ການລົງທຶນ, ການຄ້າ ແລະ ການທ່ອງທ່ຽວ

❖ **ຄາດໝາຍ:**

– ການຈັດຕັ້ງປະຕິບັດໂຄງການພັດທະນາຕົວເມືອງ ໃຫ້ສຳເລັດຢູ່ 3 ນະຄອນ, ຕົວເມືອງຕາມແລວອະນຸພາກພື້ນແມ່ນ້ຳຂອງ (GMS) ໃຫ້ສຳເລັດຢ່າງໜ້ອຍ 4 ຕົວເມືອງ ເພື່ອປັບປຸງທາງດ້ານໂຄງລ່າງພື້ນຖານ ແລະ ສິ່ງແວດລ້ອມຕົວເມືອງ;

– ນະຄອນຫຼວງວຽງຈັນ, 3 ນະຄອນ ແລະ ຢ່າງໜ້ອຍ 4 ຕົວເມືອງ ຕາມແລວອະນຸພາກພື້ນແມ່ນ້ຳຂອງ ມີສະໜາມກຳຈັດຂີ້ເຫຍື້ອ ທີ່ໄດ້ມາດຕະຖານຖືກຫຼັກອະນາໄມ;

– ນະຄອນຫຼວງວຽງຈັນ, 3 ນະຄອນ ແລະ ຢ່າງໜ້ອຍ 4 ຕົວເມືອງ ຕາມແລວອະນຸພາກພື້ນແມ່ນ້ຳຂອງ ມີລະບົບການບຳບັດນ້ຳເປື້ອນທີ່ເໝາະສົມ;

– ການບໍລິການກຳຈັດຂີ້ເຫຍື້ອຢູ່ນະຄອນຫຼວງວຽງຈັນ, 3 ນະຄອນ ແລະ ຢ່າງໜ້ອຍ 4 ຕົວເມືອງ ຕາມແລວທາງອະນຸພາກພື້ນແມ່ນ້ຳຂອງ ກວມຫຼາຍກວ່າ 80% ສຳລັບຂີ້ເຫຍື້ອທົ່ວໄປ ແລະ ຂີ້ເຫຍື້ອຕິດເຊື້ອ ແລະ ອັນຕະລາຍ;

– ສ້າງຕົວເມືອງນ້ອຍອັດສະລິຍະ Smart City ຕົ້ນແບບ ຢ່າງໜ້ອຍ 1 ເມືອງ.

❖ **ວຽກຈຸດສຸມ:**

\+ <u>ການພັດທະນາຕົວເມືອງ</u>:

– ສຸມໃສ່ການສຶກສາປະເມີນ ແລະ ກຳນົດໄດ້ທິດທາງໃນການພັດທະນາ ຕົວເມືອງທັນສະໄໝ ຕາມທ່າແຮງຂອງປະເທດ ໂດຍການຮ່ວມມື, ຖອດຖອນບົດຮຽນ, ຮຽນຮູ້ ແລະ ຍາດແຍ່ງເອົາການຊ່ວຍເຫຼືອຈາກຕ່າງປະເທດ; ຮ່ວມມືກັບບັນດາເຄືອຂ່າຍຕົວເມືອງທັນສະໄໝ ແລະ ຄູ່ຮ່ວມພັດທະນາໃນພາກພື້ນ ແລະ ສາກົນ ລວມທັງພາກເອກະຊົນ ເພື່ອຂຸດຄົ້ນແຫຼ່ງທຶນເຂົ້າໃສ່ການພັດທະນາອົງປະກອບຕົວເມືອງທັນສະໄໝ ຢ່າງມີຈຸດສຸມ ແລະ ເຊື່ອມສານກັນ.

– ສຸມໃສ່ຊຸກຍູ້ສົ່ງເສີມບັນດານະຄອນ ທີ່ເປັນຕົວເມືອງສະມາຊິກໃນໂຄງການທົດລອງຂອງເຄືອຂ່າຍຕົວເມືອງທັນສະໄໝອາຊຽນ (ASEAN Smart City Network) ຄື: ນະຄອນຫຼວງວຽງຈັນ ແລະ ນະຄອນຫຼວງຫຼວງພະບາງ ແລະ ຕົວເມືອງທັນສະໄໝ ອາຊຽນ-ອົກສະຕຣາລີ (ນະຄອນໄກສອນພົມວິຫານ) ໃຫ້ສາມາດຈັດຕັ້ງປະຕິບັດຕົວຈິງ.

– ສຸມໃສ່ພັດທະນາ ນະຄອນຫຼວງ, ນະຄອນ ແລະ ເມືອງຕ່າງໆທີ່ມີທ່າແຮງ ທາງດ້ານເສດຖະກິດ ເພື່ອໃຫ້ກາຍເປັນສູນກາງທີ່ສາມາດຍູ້ໜູນການພັດທະນາດ້ານຕ່າງໆ ຂອງຕົວເມືອງອື່ນທີ່ຢູ່ອ້ອມຂ້າງ.

– ຊຸກຍູ້ສົ່ງເສີມໃຫ້ທຸກພາກສ່ວນເສດຖະກິດຂອງທັງພາກລັດ ແລະ ພາກເອກະຊົນ ລວມທັງປະຊາຊົນທົ່ວສັງຄົມ ມີສ່ວນຮ່ວມໃນການບໍລິການເກັບມ້ຽນ, ຂົນສົ່ງ ແລະ ກໍາຈັດຂີ້ເຫຍື້ອ ຢູ່ໃນຕົວເມືອງຕ່າງໆ; ໄປຄຽງຄູ່ກັບການປົກປັກຮັກສາສິ່ງແວດລ້ອມ ແລະ ການຫຼຸດຜ່ອນມົນລະພິດຈາກສິ່ງເສດເຫຼືອ ເພື່ອຮັບປະກັນໃຫ້ລະບົບນິເວດມີຄວາມສົມດຸນ.

– ສຸມໃສ່ປັບປຸງໂຄງລ່າງພື້ນຖານ ໃຫ້ຕົວເມືອງໃນທຸກລະດັບສາມາດເຂົ້າເຖິງການຄຸ້ມຄອງ ແລະ ບໍລິຫານນໍ້າເປື້ອນດ້ວຍເຕັກໂນໂລຊີທີ່ເໝາະສົມ, ທຸກຄົວເຮືອນສາມາດຈ່າຍໄດ້ ແລະ ສົ່ງເສີມສິ່ງແວດລ້ອມໃຫ້ຍືນຍົງ.

+ <u>ການພັດທະນາເຂດເສດຖະກິດພິເສດ</u>:

– ສືບຕໍ່ຈັດຕັ້ງບັນດາຄາດໝາຍສູ້ຊົນໃນການພັດທະນາ ແລະ ຄຸ້ມຄອງເຂດເສດຖະກິດພິເສດ ໃຫ້ສໍາເລັດຕາມແຜນການທີ່ວາງໄວ້ ເປັນຕົ້ນ: ສົ່ງເສີມການດຶງດູດການລົງທຶນ ໃຫ້ໄດ້ 709 ຫົວໜ່ວຍ, ສ້າງວຽກເຮັດງານທໍາໃຫ້ຫຼາຍຂຶ້ນກວ່າເກົ່າ ໂດຍເນັ້ນໃສ່ແຮງງານລາວເປັນສ່ວນໃຫຍ່, ຊຸກຍູ້ການຈັດເກັບລາຍຮັບເຂົ້າງົບປະມານຂອງລັດ ໃຫ້ໄດ້ຕາມແຜນ, ເອົາໃສ່ໃຈການສົ່ງອອກສິນຄ້າ ໃຫ້ໄດ້ 340 ລ້ານໂດລາສະຫະລັດ ຮອດປີ 2025.

– ປະເມີນ ແລະ ຕິດຕາມການຈັດຕັ້ງປະຕິບັດສັນຍາຂອງບັນດາເຂດເສດຖະກິດພິເສດ ເປັນແຕ່ລະໄລຍະ; ສືບຕໍ່ແກ້ໄຂບັນຫາຄົງຄ້າງຕ່າງໆ ໂດຍສະເພາະການແກ້ໄຂ 6 ກຸ່ມບັນຫາຄົງຄ້າງຂອງເຂດສາມຫຼ່ຽມຄໍາ ແລະ ເຂດບໍ່ເຕັນແດນງາມ; ພ້ອມດຽວກັນນັ້ນ, ສືບຕໍ່ຜັນຂະຫຍາຍຂໍ້ຕົກລົງຂອງທ່ານນາຍົກລັດຖະມົນຕີ ເລກທີ 60/ນຍ, ລົງວັນທີ 28 ເມສາ 2023 ກ່ຽວກັບກົນໄກການຄຸ້ມຄອງເຂດສາມຫຼ່ຽມຄໍາ.

– ປັບປຸງການບໍລິການປະຕູດຽວຂອງບັນດາເຂດເສດຖະກິດພິເສດ ໃຫ້ມີຄວາມສະດວກໃນການບໍລິຫານ, ທັນເປັນທັນສະໄໝດ້ານການຈັດເກັບລາຍຮັບ ແລະ ສາມາດອອກອະນຸຍາດຕ່າງໆຢູ່ກັບທີ່ໄດ້ ແນໃສ່ບຸກທະລຸດ້ານກົນໄກລະບົບລະບຽບການບໍລິຫານຄຸ້ມຄອງ ທີ່ຍັງກີດໜ່ວງອັດຕັນການຜະລິດ, ການຄ້າ ແລະ ການບໍລິການ.

– ສືບຕໍ່ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ທັງພາກລັດ ແລະ ຫົວໜ່ວຍທຸລະກິດພາຍໃນເຂດ ຂື້ນແຜນຄວາມຕ້ອງການແຮງງານ ໃນແຕ່ລະໄລຍະ ແລະ ຈັດຝຶກອົບຮົມເພື່ອສະໜອງແຮງງານລາວເຂົ້າໃນເຂດໃຫ້ພຽງພໍ ໃຫ້ຮັບປະກັນທັງດ້ານປະລິມານ ແລະ ຄຸນນະພາບ. ພ້ອມນັ້ນ, ສົ່ງເສີມ SMEs ຂອງລາວມີສ່ວນຮ່ວມໃນການພັດທະນາໃຫ້ຫຼາຍຂຶ້ນ.

## 4.6 ເປົ້າໝາຍທີ 6 ການຄຸ້ມຄອງ-ບໍລິຫານລັດມີປະສິດທິພາບ, ສັງຄົມມີຄວາມສະເໝີພາບ, ຍຸຕິທໍາ ແລະ ໄດ້ຮັບການປົກປ້ອງຕາມທິດການປົກຄອງດ້ວຍກົດໝາຍທີ່ສັກສິດ ແລະ ເຂັ້ມງວດ

### 4.6.1 ແຜນວຽກຈຸດສຸມທີ 1: ຍົກສູງປະສິດທິພາບການປົກຄອງ-ການຄຸ້ມຄອງບໍລິຫານລັດໃຫ້ມີຄວາມກະທັດຮັດ, ວ່ອງໄວ ແລະ ເຂັ້ມງວດຕາມກົດໝາຍ ແລະ ວຽກງານສາມສ້າງໃຫ້ເຂົ້າສູ່ລວງເລິກ ປະຕິບັດຕົວຈິງຢ່າງມີປະສິດທິຜົນສູງ

❖ **ຄາດໝາຍ:**

– ສູ້ຊົນການບໍລິຫານລັດເປັນທັນສະໄໝ ແລະ ປັບປຸງການບໍລິຫານລັດເປັນ e-government;

– ກົງຈັກການຈັດຕັ້ງບໍລິຫານລັດທຸກຂັ້ນ ໄດ້ຮັບການປັບປຸງໃຫ້ກະທັດຮັດຕາມທິດ 3 ສ້າງ; ສູ້ຊົນໃຫ້ຈໍານວນຫົວໜ່ວຍການຈັດຕັ້ງຂັ້ນກົມ ແລະ ພະແນກຢູ່ກະຊວງ-ອົງການຕ່າງໆ ໃຫ້ໄດ້ 20% ຂອງຈໍານວນທີ່ມີໃນປັດຈຸບັນ ແລະ ຂັ້ນຂະແໜງ, ໜ່ວຍງານ ແລະ ຈຸງານ ຢູ່ຫົວໜ່ວຍບໍລິຫານຂັ້ນທ້ອງຖິ່ນ ໃຫ້ໄດ້ 30% ຂອງຈໍານວນທີ່ມີໃນປັດຈຸບັນ.

– ສ້າງແຂວງເປັນຫົວໜ່ວຍຍຸດທະສາດ ໃຫ້ໄດ້ 4 ແຂວງ; ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ໃຫ້ໄດ້ 20 ເມືອງ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ ໃຫ້ໄດ້ 1.028 ບ້ານ.

❖ **ວຽກຈຸດສຸມ:**

– ສືບຕໍ່ສ້າງ ແລະ ປັບປຸງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຕາມແຜນການທີ່ສະພາຮັບຮອງ.

– ສ້າງແຜນຍຸດທະສາດກ່ຽວກັບວຽກງານການປັບປຸງ ແລະ ພັດທະນາກົງຈັກການຈັດຕັ້ງຂອງລັດໃນຂອບເຂດທົ່ວປະເທດ ຮອດປີ 2030 ໃຫ້ສຳເລັດ.

– ສືບຕໍ່ປັບປຸງກົງຈັກ ແລະ ພາລະບົດບາດຂອງບັນດາກະຊວງ, ອົງການທຽບເທົ່າ ແລະ ທ້ອງຖິ່ນ ໃຫ້ມີຄວາມກະທັດຮັດວ່ອງໄວ ແລະ ທັນສະໄໝ; ຄົ້ນຄວ້າປັບປຸງພາລະບົດບາດ, ໜ້າທີ່, ຂອບເຂດສິດ ແລະ ການແບ່ງຂັ້ນຄຸ້ມຄອງຂອງຂະແໜງການຕ່າງໆ ທີ່ມີລັກສະນະເຕັກນິກວິຊາການ.

– ສືບຕໍ່ປັບປຸງ ແລະ ຂະຫຍາຍການຫັນຫົວໜ່ວຍງົບປະມານທີ່ມີລາຍຮັບວິຊາການໄປກຸ້ມຕົນເອງທາງດ້ານງົບປະມານ ແລະ ການຫັນເປັນພາລະກອນ; ຄົ້ນຄ້ວາຫັນຫົວໜ່ວຍວິຊາການ ຫຼື ກິດຈະການຈຳນວນໜຶ່ງຂອງລັດໄປສູ່ການໄລ່ລຽງ ແລະ ເປັນເຈົ້າຕົນເອງດ້ານງົບປະມານຈາກລາຍຮັບວິຊາການເທື່ອລະກ້າວ.

– ສ້າງຄວາມເຂັ້ມແຂງ, ຕິດຕາມ ແລະ ຊຸກຍູ້ວຽກງານການກຳນົດຕຳແໜ່ງງານຂັ້ນສູນກາງ ແລະ ທ້ອງຖິ່ນ; ສ້າງຖານຂໍ້ມູນວຽກງານກົງຈັກ ແລະ ຕຳແໜ່ງງານ; ຄົ້ນຄວ້າປັບປຸງກົງຈັກການຈັດຕັ້ງ ແລະ ກຳນົດຕຳແໜ່ງງານຂອງຂະແໜງການພາຍໃນ; ຄົ້ນຄວ້າປັບປຸງກົງຈັກຂອງຂະແໜງການພາຍໃນຄືນໃໝ່ ທັງຂັ້ນກະຊວງ ແລະ ທ້ອງຖິ່ນ ເພື່ອຫຼຸດຜ່ອນຈຳນວນກົງຈັກແຕ່ລະຂັ້ນໃຫ້ເໝາະສົມ, ພ້ອມທັງກຳນົດຕຳແໜ່ງງານໃຫ້ສຳເລັດທົ່ວຂະແໜງພາຍໃນ.

– ຫັນເປັນທັນສະໄໝໃນວຽກງານການບໍລິຫານລັດ ໃນຍຸກອຸດສາຫະກຳ 4.0 ໂດຍການຫັນເປັນການບໍລິຫານລັດແບບເອເລັກໂຕຣນິກ (e-government ຫຼື Digital government).

– ສືບຕໍ່ບຳລຸງຮັກສາ ແລະ ປັບປຸງຖານຂໍ້ມູນຄຸ້ມຄອງລັດຖະກອນ ດ້ວຍລະບົບຄອມພິວເຕີ ແລະ ເຕັກໂນໂລຊີທີ່ທັນສະໄໝ (PIMS) ໃຫ້ເປັນລະບົບເອກະພາບໃນທົ່ວປະເທດ ແລະ ສາມາດເຊື່ອມຕໍ່ກັບລະບົບອື່ນໆ; ຊຸກຍູ້ບັນດາພະແນກພາຍໃນຂັ້ນແຂວງ ແລະ ຫ້ອງການພາຍໃນຂັ້ນເມືອງ ດຳເນີນການຈົດທະບຽນຄອບຄົວ ໂດຍສະເພາະການຈົດທະບຽນ ແລະ ອອກໃບຢັ້ງຢືນການເກີດໃຫ້ແກ່ພົນລະເມືອງລາວ ແລະ ເດັກນ້ອຍ ໃຫ້ບັນລຸໄດ້ 70% ຂຶ້ນໄປ.

– ປັບປຸງລະບົບການຕິດຕາມຂໍ້ມູນ-ຂ່າວສານໃຫ້ເປັນລະບົບຄົບຊຸດ, ແນໃສ່ສະໜອງຂໍ້ມູນສະເພາະ, ຂໍ້ມູນແຍກ ແລະ ຂໍ້ມູນທີ່ຕົງຕາມເວລາ ເພື່ອໃຫ້ລັດຖະບານສາມາດຕັດສິນນຳໃຊ້ມາດຕະການທີ່ຈຳເປັນໄດ້ທ່ວງທັນເວລາ[11]; ປັບປຸງແຜນການພັດທະນາຊັບພະຍາກອນມະນຸດ ເພື່ອປັບປຸງປະສິດທິພາບໃນການບໍລິການຂອງລັດ.

### 4.6.2 ແຜນວຽກຈຸດສຸມທີ 2: ປັບປຸງກົນໄກ, ລະບຽບການປະສານງານລະຫວ່າງພາກລັດດ້ວຍກັນ ໃຫ້ມີຄວາມເປັນເອກະພາບ ແລະ ວ່ອງໄວຂຶ້ນ

❖ **ຄາດໝາຍ:**

– ສູ້ຊົນສ້າງໜ່ວຍງານບໍລິການຜ່ານປະຕູດຽວຂັ້ນທ້ອງຖິ່ນ ໃຫ້ໄດ້ 15 ແຫ່ງ (ສະເລ່ຍໃຫ້ເພີ່ມຂຶ້ນ 3 ແຫ່ງ/ປີ) ຫຼື ເພີ່ມຂຶ້ນຈາກທີ່ມີຢູ່ໃນປັດຈຸບັນ (2023) ຈຳນວນທັງໝົດ 52 ແຫ່ງ ໃຫ້ເປັນ 58 ແຫ່ງ;

– ສ້າງເທດສະບານ/ນະຄອນ ເຊິ່ງເປັນອົງການປົກຄອງທ້ອງຖິ່ນໃນຕົວເມືອງ ໃຫ້ໄດ້ຢ່າງໜ້ອຍ 3 ແຫ່ງ.

❖ **ວຽກຈຸດສຸມ:**

– ຄົ້ນຄ້ວາປັບປຸງ ແລະ ສ້າງນິຕິກຳ ເພື່ອການຄຸ້ມຄອງ-ບໍລິຫານອົງການພັດທະນາ ແລະ ບໍລິຫານຕົວເມືອງ (ອພບ/ອພບຕ) ແລະ ຕິດຕາມການເຄື່ອນໄຫວຂອງອົງການດັ່ງກ່າວ.

[11] A Joint Programme on ‘High-Frequency Data’ October 2022 (Issue 1)

– ຄົ້ນຄວ້າປັບປຸງ ແລະ ສ້າງນິຕິກຳ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ບັນດາອົງການປົກຄອງທ້ອງຖິ່ນຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານ; ຄົ້ນຄວ້າຈັດຕັ້ງການປະເມີນ 3 ນະຄອນທີ່ໄດ້ຮັບການສ້າງຕັ້ງຂຶ້ນແລ້ວ, ພ້ອມທັງປັບປຸງ ແລະ ສ້າງກົນໄກການປະສານງານລະຫວ່າງເມືອງ, ນະຄອນ ແລະ ບ້ານ; ແລະ ຄົ້ນຄວ້າສ້າງຕັ້ງຕາແສງ.

– ປະເມີນການຈັດຕັ້ງປະຕິບັດວຽກງານ 3 ສ້າງ ຕາມເງື່ອນໄຂມາດຕະຖານການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ບ້ານເປັນຫົວໜ່ວຍພັດທະນາ.

– ປັບປຸງຂອດຂັ້ນການອະນຸຍາດການສົ່ງເສີມການລົງທຶນ ແລະ ການດຳເນີນທຸລະກິດໃຫ້ມີຄວາມສະດວກວ່ອງໄວ.

– ນຳໃຊ້ຂໍ້ມູນພາບຖ່າຍດາວທຽມ ເພື່ອສ້າງແຜນທີ່ລະບົບຂໍ້ມູນ-ຂ່າວສານພູມສາດ (GIS) ແລະ ການຄົ້ນຄ້ວາວິໄຈພື້ນທີ່ ທີ່ມີຄວາມສ່ຽງເກີດໄພພິບັດ ພາຍໃຕ້ໂຄງການສ້າງແຜນທີ່, ອອກແບບຕົກແຕ່ງແຕ້ມແຜນທີ່ວຽກສະເພາະ ແລະ ແຜນທີ່ພູມສັນຖານ ມາດຕາສ່ວນຕ່າງໆ ເຊັ່ນ: ມາດຕາສ່ວນ 1/10.000; 1/25.000; 1/50.000 ແລະ 1/100.000 ໃນເຂດຈຸດສຸມພັດທະນາຂອງບັນດາເມືອງ ແລະ ແຂວງ ໃນຂອບເຂດທົ່ວປະເທດ.

### 4.6.3 ແຜນວຽກຈຸດສຸມທີ 3: ຮັບປະກັນໃຫ້ມີສະຖຽນລະພາບທາງດ້ານການເມືອງ, ມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ, ສັງຄົມມີຄວາມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ

❖ **ຄາດໝາຍ:**

– ສູ້ຊົນຈັດຕັ້ງປະຕິບັດຄຳຕັດສິນທີ່ຍັງຄ້າງ ແລະ ຄຳຕັດສິນເຂົ້າໃໝ່ ໃຫ້ໄດ້ 80%, ໃນນັ້ນ: 20% ແມ່ນໃຫ້ຈັດຕັ້ງປະຕິບັດສຳເລັດ ແລະ ປິດສຳນວນຄະດີ;

– ສ້າງກົນໄກການດຳເນີນຄະດີແບບໃໝ່ ເຮັດໃຫ້ມີຄວາມໂປ່ງໃສໃນທຸກຂັ້ນຕອນໃນການດຳເນີນຄະດີຢູ່ສານ ເພື່ອຮັບປະກັນໃຫ້ການພິຈາລະນາຄະດີມີຄວາມວ່ອງໄວ ໃຫ້ບັນລຸ 85% ຂຶ້ນໄປ, ທັງຮັບປະກັນຄຸນນະພາບ ອັດຕາການຂໍອຸທອນ ບໍ່ໃຫ້ເກີນ 15% ແລະ ການຂໍລົບລ້າງໃຫ້ໜ້ອຍລົງໃນແຕ່ລະປີ;

– ປັບປຸງກົດໝາຍທີ່ມີຢູ່ໃນຄວາມຮັບຜິດຊອບຂອງສານປະຊາຊົນສູງສຸດ ໃຫ້ສຳເລັດ 3 ສະບັບ;

– ຮັກສາຄຸນນະພາບການຕິດຕາມກວດກາການເຄົາລົບ, ປະຕິບັດກົດໝາຍ ແລະ ສັ່ງຟ້ອງຜູ້ຖືກຫາຂຶ້ນສານ ໃຫ້ບັນລຸ 95% ຂຶ້ນໄປຂອງການຄົ້ນຄວ້າແກ້ໄຂຄະດີ ແລະ ໃຫ້ບັນລຸ 95% ທີ່ສານຕັດສິນເອົາຕາມຄຳສັ່ງຟ້ອງ ແລະ ຄຳຖະແຫຼງຂອງໄອຍະການ.

❖ **ວຽກຈຸດສຸມ:**

+ ວຽກງານຍຸຕິທຳ:

– ຄົ້ນຄວ້າ ແລະ ສ້າງນິຕິກຳໃຕ້ກົດໝາຍ ເພື່ອຜັນຂະຫຍາຍກົດໝາຍວ່າດ້ວຍການສ້າງນິຕິກຳ (ສະບັບປັບປຸງ ປີ 2021) ໃຫ້ເປັນອັນລະອຽດ; ສືບຕໍ່ສ້າງປຶ້ມຄູ່ມືການສ້າງນິຕິກຳໃຫ້ສຳເລັດ; ສືບຕໍ່ຈັດຝຶກອົບຮົມວຽກງານສ້າງນິຕິກຳ ແລະ ເຕັກນິກສ້າງນິຕິກຳ ໃຫ້ໜ່ວຍງານທີ່ຮັບຜິດຊອບວຽກງານສ້າງ ແລະ ປັບປຸງນິຕິກຳຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ.

– ເພີ່ມທະວີເອົາໃຈໃສ່ ແລະ ຍົກສູງຄຸນນະພາບການເປັນເສນາທິການໃຫ້ອົງການປົກຄອງທ້ອງຖິ່ນ ໃນການກວດກາຄວາມສອດຄ່ອງທາງດ້ານກົດໝາຍຂອງຮ່າງນິຕິກຳຂັ້ນທ້ອງຖິ່ນ ເພື່ອສະເໜີຕໍ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ ແລະ ອົງການປົກຄອງທ້ອງຖິ່ນ ພິຈາລະນາ.

– ເອົາໃຈໃສ່ຍູ້ແຮງວຽກງານໂຄສະນາເຜີຍແຜ່ກົດໝາຍໃຫ້ເລິກເຊິ່ງ ແລະ ກວ້າງຂວາງ ດ້ວຍຫຼາຍຮູບການ, ວິທີການມີສີສັນ ແລະ ແທດເໝາະກັບລະດັບຄວາມຮັບຮູ້ ແລະ ວິຖີຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ, ທັງສ້າງຄວາມສົນໃຈຂອງສັງຄົມຫຼາຍຂຶ້ນ; ດຳເນີນການປະເມີນຄວາມຮັບຮູ້ ແລະ ສະຕິເຄົາລົບກົດໝາຍ ເພື່ອປັບປຸງເນື້ອໃນ, ຮູບການ

ແລະ ວິທີການໂຄສະນາເຜີຍແຜ່ກົດໝາຍ; ສ້າງ ແລະ ຜະລິດລາຍການໂຄສະນາເຜີຍແຜ່ນິຕິກຳ ເຊັ່ນ: ໂປດເຕີ, ສະຕິກເກີ, ແຜ່ນພັບ, ສະປອດໂຄສະນາວິທະຍຸ, ລະຄອນສັ້ນ, ລະຄອນ Sitcom ແລະ ສາລະຄະດີ; ຄົ້ນຄວ້າ ແລະ ຫັນວຽກງານການໂຄສະນາເຜີຍແຜ່ກົດໝາຍ ໃຫ້ເປັນຄວາມຮັບຜິດຊອບຂອງທົ່ວພັກ, ທົ່ວລັດ ແລະ ທົ່ວປວງຊົນ ໃຫ້ພົນລະເມືອງຮັບຮູ້ກົດໝາຍ, ເຮັດຕາມກົດໝາຍ ແລະ ຮັບຜິດຊອບຕໍ່ໜ້າກົດໝາຍ ເພື່ອຕ້ານ ແລະ ສະກັດກັ້ນປະກົດການຫຍໍ້ທໍ້ໃນສັງຄົມ.

– ສືບຕໍ່ຄົ້ນຄ້ວາ ແລະ ຫັນກົດໝາຍເປັນນິຕິກຳໃຕ້ກົດໝາຍ ລວມທັງປັບປຸງປຶ້ມຄູ່ມື ກ່ຽວກັບ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານໃຫ້ເປັນລະບົບຄົບຊຸດ; ຄົ້ນຄວ້າ ແລະ ແຕ່ງຕັ້ງຄະນະຮັບຜິດຊອບຊ່ວຍລັດຖະມົນຕີ ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ມີຄວາມວ່ອງໄວ, ເຂັ້ມງວດ ແລະ ສັກສິດ ເຮັດໃຫ້ຈຳນວນຄຳຕັດສິນຂອງສານມີທ່າອ່ຽງຫຼຸດລົງເທື່ອລະກ້າວ ທັງຮັບປະກັນການຈັດຕັ້ງປະຕິບັດໃຫ້ບັນລຸຕົວເລກຄາດໝາຍທີ່ສະພາແຫ່ງຊາດຮັບຮອງ.

– ເພີ້ມທະວີຄວາມເອົາໃຈໃສ່ສ້າງ ແລະ ປັບປຸງລະບົບຖານຂໍ້ມູນສະຖິຕິຄຳຕັດສິນຂອງສານໃນທົ່ວປະເທດ ໃຫ້ເປັນລະບົບ; ຊຸກຍູ້ການພິມຂໍ້ມູນຄຳຕັດສິນຂອງສານເຂົ້າໃນໂປຣແກມສະຖິຕິ ໃຫ້ສຳເລັດ ແລະ ແຍກເປັນແຕ່ລະປະເພດຄຳຕັດສິນໃຫ້ຊັດເຈນ, ບົນພື້ນຖານນັ້ນກໍຄົ້ນຄວ້າ ແລະ ຊອກຫາສາເຫດ ເພື່ອກຳນົດວິທີການຈັດຕັ້ງປະຕິບັດຄຳຕັດສິນແຕ່ລະປະເພດ, ແຕ່ລະກໍລະນີໃຫ້ແທດເໝາະຕົວຈິງ ແລະ ມີການຫັນປ່ຽນໃໝ່ທີ່ຕັ້ງໜ້າ.

– ເພີ່ມທະວີການໂຄສະນາເຜີຍແຜ່ວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດໃຫ້ສັງຄົມຮັບຮູ້, ເຂົ້າໃຈບົດບາດຂອງວຽກງານດັ່ງກ່າວໃຫ້ກວ້າງຂວາງຂຶ້ນກວ່າເກົ່າ; ເອົາໃຈໃສ່ຄຸ້ມຄອງ ແລະ ບໍລິການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດໃຫ້ມີປະສິດທິຜົນຂຶ້ນຕື່ມ; ສືບຕໍ່ປັບປຸງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເປັນອົງການຄຸ້ມຄອງມະຫາພາກທີ່ນັບມື້ເຂັ້ມແຂງເທື່ອລະກ້າວ; ສືບຕໍ່ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອປັບປຸງກົນໄກປະສານງານ ແລະ ບໍລິການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃຫ້ມີຄວາມວ່ອງໄວ, ໂປ່ງໃສ ແລະ ຍຸຕິທຳ ສາມາດຕອບສະໜອງກັບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ.

+ <u>ວຽກງານໄອຍະການ</u>:

– ສືບຕໍ່ເພີ້ມທະວີການຕິດຕາມກວດກາການປະຕິບັດກົດໝາຍ ໂດຍເອົາໃຈໃສ່ຈັດຕັ້ງປະຕິບັດຄຳສັ່ງກ່ຽວກັບການເພີ້ມທະວີວຽກງານຕິດຕາມກວດກາທົ່ວໄປ, ການຄົ້ນຄວ້າ ແລະ ສ້າງກົນໄກການປະສານງານກັບພາກສ່ວນກ່ຽວຂ້ອງກ່ຽວກັບການຄົ້ນຄວ້າສ້າງນິຕິກຳ, ປຶ້ມຄູ່ມື, ການຂຽນຄຳຖະແຫຼງຄະດີປົກຄອງ, ການຕິດຕາມກວດກາ ແລະ ແກ້ໄຂຄຳຮ້ອງຂອງອົງການຈັດຕັ້ງລັດ, ລວມໝູ່, ສັງຄົມ ແລະ ພົນລະເມືອງ; ຍົກສູງຄຸນນະພາບການຕິດຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນ ໂດຍສະເພາະການປະຕິບັດ 7 ມາດຕະການສະກັດກັ້ນ.

– ເອົາໃຈໃສ່ຕິດຕາມກວດກາການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໂດຍສະເພາະໃນກໍລະນີຜູ້ປະຕິບັດໂທດພົ້ນໂທດທາງອາຍາ ແຕ່ການປະຕິບັດຄ່າເສຍຫາຍທາງແພ່ງບໍ່ທັນສຳເລັດ ເພື່ອຮັບປະກັນເຮັດໃຫ້ຄຳຕັດສິນ ຫຼື ຄຳພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ໄດ້ຮັບການຈັດຕັ້ງປະຕິບັດຢ່າງຖືກຕ້ອງ ແລະ ເຂັ້ມງວດ; ສ້າງກົນໄກຕິດຕາມກວດກາ ແລະ ກົນໄກລາຍງານກ່ຽວກັບການຊຳລະທາງແພ່ງ, ການເກັບ ແລະ ການມອບຄ່າທຳນຽມສານ, ຄ່າອາກອນ ແລະ ຄ່າປັບໃໝເຂົ້າງົບປະມານ, ການຮິບຊັບ ແລະ ການຮິບວັດຖຸສິ່ງຂອງເຂົ້າເປັນຂອງລັດ.

– ສ້າງກົນໄກໃຫ້ປະຊາຊົນໄດ້ເຂົ້າເຖິງການບໍລິການທາງດ້ານກົດໝາຍຢູ່ອົງການໄອຍະການປະຊາຊົນທ້ອງຖິ່ນ ແລະ ສືບຕໍ່ຫັນເອົາພະນັກງານຂັ້ນຫົວໜ້າຫ້ອງການ, ຫົວໜ້າກົມ ແລະ ຫົວໜ້າສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມໄອຍະການລົງຕິດຕາມຊີ້ນຳ ແລະ ຊຸກຍູ້ການຈັດຕັ້ງປະຕິບັດໜ້າທີ່ວຽກງານຢ່າງຮອບດ້ານຂອງອົງການໄອຍະການປະຊາຊົນທ້ອງຖິ່ນ ເພື່ອຮັບປະກັນການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງອົງການໄອຍະການປະຊາຊົນມີຄຸນນະພາບສູງຂຶ້ນ.

+ <u>ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ</u>:

– ສືບຕໍ່ຈັດຕັ້ງປະຕິບັດວຽກງານການກໍ່ສ້າງຮາກຖານການເມືອງຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ໃຫ້ມີຄວາມເຂັ້ມແຂງ ແລະ ໜັກແໜ້ນທາງດ້ານການເມືອງ-ແນວຄິດ, ສ້າງຂະບວນການຮັກຊາດ ແລະ ພັດທະນາທົ່ວປວງຊົນຢ່າງເປັນເຈົ້າການ.

– ສຸມໃສ່ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍ ການແກ້ໄຂບັນຫາຢາເສບຕິດ ຕິດພັນກັບການແກ້ໄຂບັນຫາປະກົດການຫຍໍ້ທໍ້ໃນສັງຄົມ ດ້ວຍມາດຕະການຕ່າງໆຢ່າງເປັນປົກກະຕິ.

– ເພີ້ມທະວີການຕໍ່ຕ້ານການຄ້າມະນຸດດ້ວຍການບັງຄັບທຸກຮູບແບບ (trafficking-in[person) ດ້ວຍການເພີ່ມຄວາມສາມາດການເຂົ້າເຖິງລະບົບປ້ອງກັນສັງຄົມ ໂດຍສະເພາະຜູ້ທີ່ຕົກເປັນເຫຍື່ອ ຫຼື ຜູ້ທີ່ໄດ້ຮັບເຄາະຮ້າຍ; ຕ້ານການຄ້າຂາຍຢາເສບຕິດ, ຂີ້ລັກງັດແງະ, ການຄ້າຂາຍເຖື່ອນ ແລະ ປະກົດການຫຍໍ້ທໍ້ອື່ນໆໃນສັງຄົມ ທີ່ເປັນຜົນກະທົບທາງລົບຕໍ່ການພັດທະນາເສດຖະກິດ-ສັງຄົມ ແລະ ຄວາມໝັ້ນຄົງຂອງປະເທດ.

## 5. ມາດຕະການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ທ້າຍສະໄໝ ຮອດປີ 2025

1) ຂະແໜງການ ແລະ ທ້ອງຖິ່ນຕ່າງໆ ຕ້ອງເຜີຍແຜ່ ແລະ ເຊື່ອມຊຶມທິດທາງ, ຄາດໝາຍ ແລະ ວຽກງານຈຸດສຸມໃນທ້າຍສະໄໝຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ໃຫ້ຢ່າງທົ່ວເຖິງ ທັງຫັນເປັນແຜນການ, ໂຄງການ ແລະ ກຳນົດມາດຕະການຈັດຕັ້ງປະຕິບັດອັນລະອຽດ ທີ່ສອດຄ່ອງກັບສະພາບຈຸດພິເສດຂອງຂະແໜງການ ແລະ ທ້ອງຖິ່ນຕົນ, ພ້ອມທັງນຳພາ-ຊີ້ນຳການຈັດຕັ້ງປະຕິບັດໃຫ້ເປັນຮູບປະທຳຕົວຈິງ; ສືບຕໍ່ຈັດຕັ້ງປະຕິບັດມາດຕະການທີ່ກຳນົດໄວ້ໃນແຜນການ 5 ປີ ຄັ້ງທີ IX, ໃນນີ້: ໃຫ້ເອົາໃຈໃສ່ເພີ້ມທະວີການລະດົມທຶນຂອງທຸກພາກສ່ວນໃນສັງຄົມຢ່າງແຂງແຮງ ເພື່ອປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນໄລຍະ 5 ປີ ຄັ້ງທີ IX ຕາມຍຸດທະສາດການເງິນ ໄລຍະ 2023-2025.

2) ສືບຕໍ່ປັບປຸງກົດໝາຍ, ນິຕິກຳ ແລະ ລະບຽບການຕ່າງໆທີ່ກ່ຽວຂ້ອງ ເພື່ອຄຸ້ມຄອງເສດຖະກິດ-ສັງຄົມ ໃຫ້ມີຄວາມສອດຄ່ອງ ທັງເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານຈຸດສຸມຂອງບັນດາຂະແໜງການ ແລະ ທ້ອງຖິ່ນ ໃຫ້ມີຄວາມເປັນເອກະພາບ ຕາມທິດທັນການຄຸ້ມຄອງລັດ ຕາມກົດໝາຍເທື່ອລະກ້າວ.

3) ສືບຕໍ່ປັບປຸງກົນໄກການປະສານງານລະຫວ່າງຂັ້ນ ແລະ ຂະແໜງການ ໃຫ້ມີຄວາມກົມກຽວກວ່າເກົ່າ ໂດຍໃຫ້ຕິດພັນກັບການຫັນເປັນທັນສະໄໝ, ພ້ອມທັງປັບປຸງຖານຂໍ້ມູນສະຖິຕິ ແລະ ການເຊື່ອມໂຍງຂໍ້ມູນໃຫ້ເປັນລະບົບໃນແຕ່ລະຂະແໜງການ ແລະ ທ້ອງຖິ່ນ ເພື່ອສາມາດຮັບໃຊ້ໃຫ້ແກ່ການຊ່ວຍຍູ້ໜູນເຊິ່ງກັນ ແລະ ກັນ ທັງມີຄວາມສະດວກໃຫ້ແກ່ການສະຫຼຸບ ແລະ ລາຍງານແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດແຕ່ລະໄລຍະ.

4) ບັນດາຂະແໜງການ ແລະ ທ້ອງຖິ່ນ ຕ້ອງໄດ້ສືບຕໍ່ເອົາໃຈໃສ່ການຕິດຕາມ, ກວດກາ, ປະເມີນ ແລະ ສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ເປັນແຕ່ລະໄລຍະ (ປະຈຳເດືອນ, ປະຈຳໄຕມາດ ແລະ ປະຈຳປີ) ໃຫ້ເປັນລະບົບ ແລະ ລາຍງານພາກສ່ວນກ່ຽວຂ້ອງທັນກຳນົດເວລາ.